ໝວດວິຊາເລືອກ

ສ້າງຄູມັດທະຍົມປະຫວັດສາດ

# ປະຫວັດສາດໂລກ



ລະບົບ 4 ປີ

**ປີທີ 4**

ວິທະຍາໄລຄູສາລະວັນ

**2022**

ໝວດວິຊາເລືອກ

# ປະຫວັດສາດໂລກ

ສ້າງຄູມັດທະຍົມ

ສາຍປະຫວັດສາດ

ລະບົບ 4 ປີ **ປີທີ 4**

ຮຽບຮຽງໂດຍ: ຊອ ປທ ນ ສີງອຳໄພ ພິມພາພອນ

ກວດແກ້ໂດຍ: ວັດທະນາ ໝັ້ນວິໄລ

ປທ ນ ລຸ້ງຟ້າ ຂັນຕິວົງ

ຊອ ອິນປອນ ເພັງສຸວັນ

ວິທະຍາໄລຄູສາລະວັນ

**2022**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ ເລກທີ 96.......ສພ.ວຄ

# ເອກະສານຮັບຮອງ

ອະນຸມັດຜ່ານການຮັບຮອງການຮຽບຮຽງປຶ້ມວິຊາປະຫວັດສາດໂລກ ລະບົບ 12+4 ປະຫວັດສາດ ປີທີ 4

- **ອີງຕາມ:** ຂໍ້ຕົກລົງວ່າດ້ວຍການຈັດຕັ້ງການເຄື່ອນໄຫວກິດຈະກຳສະພາວິທະຍາສາດຂອງໂຮງຮຽນວິທະຍາໄລຄູສາລະວັນປະຈຳປີ 2022.

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາຄະນະກຳມະການ ເຫັນວ່າ ບົດຮຽບຮຽງປຶ້ມມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳ. ສະນັ້ນ, ສະພາວິທະຍາສາດຈຶ່ງໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ - ການສອນໃນໂຮງຮຽນວິທະຍາໄລຄູສາລະວັນ.

| ຄະນະກຳມະການກວດສອບ | ລາຍເຊັນ |
|---|---|
| 1. ຊອ ປອ ໄຊທອງ ພົງສິງຄາມ | |
| 2. ຊອ ປທ ມອນໄຊ ອິນທະຈັກ | |
| 3. ອຈ ປທ ບ ຄຳສິງ ຈັນທະວົງສັກ | |

**ທີ່ສາລະວັນ, ວັນທີ** 2 6 APR 2022

ປະທານສະພາວິທະຍາສາດ

ອຈ. ນ. ສົມປອງ ແສນທະວີສຸກ

Sompong SENTHAVISOUK

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການແລະກິລາ

ກົມສ້າງຄູ

ວິທະຍາໄລຄູສາລະວັນ ເລກທີ..............ວຄວ

## ເອກະສານຮັບຮອງ

ອະນຸມັດຜ່ານການຮັບຮອງການຮຽບຮຽງປຶ້ມປະຫວັດສາດໂລກ ລະບົບ 12+4 ປະຫວັດສາດ ປີທີ 4

| ລຳດັບ | ຊື່ຫົວຂໍ້ | ຫ້ອງການ | ຜູ້ຄົ້ນຄວ້າວິໄຈ | ຜູ້ກວດແກ້ |
|---|---|---|---|---|
| 1 | ປະຫວັດສາດໂລກ | ວິທະຍາສາດສັງຄົມ | ຊອ ປທ ນ.ສີງອຳໄພ ພົມພາພອນ | ທ່ານ ວັດທະນາ ທັມວິໄລ<br>ທ່ານ ຊອ ອິນປອນ ເພັງສຸວັນ<br>ທ່ານ ປທ ນ ລຸ່ງຟ້າ ສັນຕິວົງ |

| ຄະນະກຳມະການກວດສອບ | ລາຍເຊັນ |
|---|---|
| 1. ທ່ານ ວັດທະນາ ທັມວິໄລ | (signature) |
| 2. ທ່ານ ຊອ ນ ອິນປອນ ເພັງສຸວັນ | (signature) |
| 3. ທ່ານ ປທ ນ ລຸ່ງຟ້າ ສັນຕິວົງ | (signature) |

ທີ່, ສາລະວັນ, ວັນທີ 18/01/2022

ຫົວໜ້າຫ້ອງການວິທະຍາສາດສັງຄົມ

(signature)

# ຄຳນຳ

ປຶ້ມປະຫວັດສາດໂລກເຫຼັ້ມຮຽບຮຽງຂຶ້ນເພື່ອເປັນເອກະສານປະກອບການສອນສຳລັບນັກສຶກສາຄູປະຫວັດສາດລະດັບປະລິນຍາຕີສອນໄດ້ແຕ່ ມ1-ມ7 ແລະ ຜູ້ທີ່ມີຄວາມສົນໃຈໃນການຄົ້ນຄວ້າກ່ຽວກັບປະຫວັດສາດໂລກ, ເນື້ອໃນບົດຮຽນແມ່ນຖືກສັບຊ້ອນເຂົ້າຕາມເນື້ອໃນຫຍໍ້ຂອງລາຍວິຊາປະຫວັດສາດໂລກທີ່ບັນຈຸເຂົ້າໃນຫຼັກສູດການສ້າງຄູປະຫວັດສາດລະດັບປະລິນຍາຕີ ໝວດວິຊາເລືອກ.

ການຮຽບຮຽງແມ່ນໄດ້ມີການສັງລວມ, ຄັດເລືອກເນື້ອໃນບົດຮຽນຈາກເອກະສານຫຼາຍແຫຼ່ງທີ່ໜ້າເຊື່ອຖືມີການນຳໃຊ້ຮູບພາບເຂົ້າມາປະກອບການນຳສະເໜີເນື້ອໃນເພື່ອໃຫ້ຜູ້ຊົມໃຊ້ມີມະໂນພາບ ແລະ ມີຄວາມເຂົ້າໃຈກະຈ່າງແຈ້ງຂຶ້ນກວ່າເກົ່າ.

ເນື້ອໃນບົດຮຽນແບ່ງອອກເປັນ 14 ບົດ ທີ່ບັນຈຸເນື້ອໃນກ່ຽວກັບວິວັດທະນາການ ແລະ ເຫດການຕ່າງໆຂອງໂລກນັບແຕ່ກຳເນີດມະນຸດຈົນເຖິງປັດຈຸບັນ. ຫວັງວ່າປື້ມເຫຼັ້ມນີ້ຈະເປັນປະໂຫຍດແກ່ທ່ານຜູ້ອ່ານບໍ່ຫຼາຍກໍ່ໜ້ອຍ.ປື້ມເຫຼັ້ມນີ້ເປັນການຮຽບຮຽງຂຶ້ນໃໝ່ຂໍໃຫ້ຜູ້ອ່ານປະກອບຄຳຄິດເຫັນເພື່ອໃຫ້ປື້ມເຫຼັ້ມນີ້ສົມບູນ ແລະ ສາມາດນຳໃຊ້ໄດ້

# ສາລະບານ

## Table of Contents


ຄຳນຳ ........ a

ສາລະບານ ........ b

ບົດທີ 1 ........ 1

ລະບອບສັງຄົມປະຖົມບູຮານ ແລະ ສັງຄົມເຈົ້າທາດ ........ 1

1. ລະບອບສະຫະຊີບປະຖົມບູຮານ ........ 1

2.ລະບອບເຈົ້າທາດ ........ 4

ບົດທີ 2 ........ 9

ອະລິຍະທຳບູຮານຂອງໂລກ ........ 9

1. ຄວາມໝາຍຂອງອະລິຍະທຳ ແລະ ປັດໄຈພື້ນຖານໃນການກຳເນີດອະລິຍະທຳ ........ 9

2. ອະລິຍະທຳຕາເວັນອອກ ........ 11

3.ອະລິຍະທຳຕາເວັນຕົກ ........ 19

ບົດທີ 3 ........ 40

ລະບອບກຳເນີດ ແລະ ການຂະຫຍາຍຕົວຂອງລະບອບສັກດີນາ ........ 40

1.ການກຳເນີດ ແລະ ຂະຫຍາຍຕົວຂອງລະບອບສັກດີນາ ........ 40

2.ການເຊື່ອມໂຊມຂອງລະບອບສັກດີນາ ........ 42

ບົດທີ 4 ........ 52

ການປະຕິວັດນາຍທຶນ ........ 52

1. ການປະຕິວັດນາຍທຶນອັງກິດສະຕະວັດທີ XVII ແລະ ຄວາມໝາຍປະຫວັດສາດ ........ 52

2. ສົງຄາມຍາດເອົາຄວາມເປັນເອກະລາດຢູ່ອາເມຣິກາເໜືອ ........ 54

3.ການປະຕິວັດນາຍທຶນຢູ່ຝຣັ່ງ 1789 ........ 56

ລັດທິທຶນນິຍົມໃນສະຕະວັດທີ XVIII-XIX ແລະ ການກຳເນີດລັດທິມາກ-ອັງແກນ ........ 63

1. ການປະຕິວັດອຸດສາຫະກຳ ແລະ ລະບົບທຶນນິຍົມໂລກ ........ 63

2. ຂະບວນກຳມະກອນໃນໄລຍະ ປີ ຄ. ສ 1760-1848 ........ 65

3.ການກຳເນີດລັດທິມາກ-ອັງແກນ ........ 66
ບົດທີ6 ........ 69
ການລ່າຫົວເມືອງຂຶ້ນຂອງຈັກກະພັດທ້າຍສະຕະວັດທີ 19ຫາ ຕົ້ນສະຕະວັດທີ 20 ........ 69
1.ການລ່າຫົວເມືອງຂຶ້ນຂອງພວກຈັກກະພັດຢູ່ອາຊີ ........ 69
2.ການລ່າເມືອງຂຶ້ນຂອງຈັກກະພັດຢູ່ທະວີບອາຟຣິກາ ........ 71
3.ການລ່າເມືອງຂຶ້ນຂອງຈັກກະພັດຢູ່ທະວີບອາເມລິກາລາຕິນ ........ 73
ບົດທີ 7 ........ 76
ຂະບວນການປົດປ່ອຍຊາດໃນໂລກແຕ່ 1800-1914 ........ 76
1. ຂະບວນການປົດປ່ອຍຊາດຢູ່ອາຊີ ........ 76
2. ຂະບວນການປົດປ່ອຍຊາດຢູ່ອາຟຣິກາ ........ 83
3. ຂະບວນການປົດປ່ອຍຊາດໃນອາເມຣິກາລາຕິນ ........ 84
ບົດທີ 8 ........ 89
ຂະບວນກຳມະກອນຢູ່ເອີຣົບ ແລະ ອາເມຣິກາໃນທ້າຍສະຕະວັດທີ 19 ........ 89
ຫາຕົ້ນສະຕະວັດທີ20 ........ 89
1.ຂະບວນກຳມະກອນເອີຣົບ ........ 89
2. ຂະບວນກຳມະກອນຢູ່ອາເມຣິກາ ........ 92
3. ສາກົນທີ II ........ 92
ບົດທີ9 ........ 94
ທະວີບອາຊີໃນຕອນທ້າຍສະຕະວັດທີ XIX ຫາ ຕົ້ນສະຕະວັດທີ XX ........ 94
1.ປະເທດຍີ່ປຸ່ນ ........ 94
2. ປະເທດຈີນ ........ 95
3. ປະເທດອິນເດຍ ........ 96
4. ປະເທດຕ່າງໆໃນອາຊີອາຄະເນ ........ 98
ບົດທີ 10 ........ 99
ສົງຄາມໂລກຄັ້ງທີ 1 ແລະ ການປະຕິວັດເດືອນຕຸລາຣັດເຊຍ ........ 99

1. ສາເຫດ ແລະ ທາດແທ້ຂອງສົງຄາມໂລກຄັ້ງທີ1 .................... 99
2.ການຜັນແປຂອງສົງຄາມ .................... 99
4. ການກະກຽມໃຫ້ແກ່ການປະຕິວັດສັງຄົມນິຍົມເດືອນ ຕຸລາ ປີ 1917 .................... 103
5.ການປະຕິວັດສັງຄົມນິຍົມເດືອນ ຕຸລາ 1917 .................... 104
ບົດທີ 11 .................... 106
ສະພາບການຂອງໂລກແຕ່ປີ 1918-1939 .................... 106
1.ສະພາບການຂອງໂລກຫຼັງສົງຄາມໂລກຄັ້ງທີ 1 .................... 106
2.ສະຫະພາບໂຊວຽດແຕ່ປີ ຄ.ສ 1918-1939 .................... 107
ບົດທີ 12 .................... 113
ຂະບວນການປະຕິວັດຢູ່ບັນດາປະເທດນາຍທຶນໃນເອີຣົບ, ອາເມຣິກາ, ການສ້າງຕັ້ງສາກົນທີ III ແລະ ຂະບວນການປະຕິວັດໂລກແຕ່ປີ 1918-1939 .................... 113
1. ຂະບວນການປະຕິວັດຢູ່ບັນດາປະເທດນາຍທຶນໃນເອີຣົບ ແລະ ອາເມຣິກາ .................... 113
2. ການສ້າງຕັ້ງສາກົນ III. .................... 114
3. ຂະບວນການປົດປ່ອຍຊາດແຕ່ປີ 1918-1939 .................... 115
4. ຂະບວນການປະຊາທິປະໄຕ .................... 118
5.ສະພາບຂອງສັງຄົມນຍົມກ່ອນສົງຄາມໂລກຄັ້ງທີ II .................... 120
6. ການກຳເນີດລັດທິຟາຊິດ .................... 120
ບົດທີ 13 .................... 122
ສົງຄາມໂລກຄັ້ງທີ II ປີ ຄສ 1939-1945 .................... 122
1.ສາເຫດຂອງສົງຄາມ .................... 122
2. ການດຳເນີນສົງຄາມ .................... 123
3. ຜົນຂອງສົງຄາມ .................... 127
4.ສະຫະພາບໂຊວຽດຄສ 1945-1970 .................... 128
5.ບັນດາປະເທດເອີຣົບຕາເວັນອອກຫຼັງສົງຄາມໂລກຄັ້ງທີ 2 .................... 133
ບົດທີ 14 .................... 136

ສະພາບການຂອງໂລກຫຼັງສົງຄາມໂລກຄັ້ງທີ2 ........ 136

1.ສະພາບການຂອງໂລກຫຼັງສົງຄາມໂລກຄັ້ງທີ II ........ 136

2. ອົງການສະຫະປະຊາຊາດ ........ 137

3. ສົງຄາມເຢັນ ........ 144

ເອກະສານອ້າງອີງ ........ 148

# ບົດທີ 1

# ລະບອບສັງຄົມປະຖົມບູຮານ ແລະ ສັງຄົມເຈົ້າທາດ

## 1. ລະບອບສະຫະຊີບປະຖົມບູຮານ

### 1.1. ການກຳເນີດຂອງມະນຸດ

ຫ່າງຈາກນີ້ຫຼາຍສິບລ້ານປີ, ໃນໂລກນີ້ມີສັດຊະນິດຫນຶ່ງ ທີ່ມີຮູບຮ່າງລັກສະນະຄ້າຍຄືທະນີ ແຕ່ເປັນປະເພດ ທີ່ມີການພັດທະນາກວ່າທະນີປະເພດອື່ນ, ຜ່ານຂະບວນການທຳມາຫາກິນ, ທະນີຊະນິດນີ້ໄດ້ຄ່ອຍໆ ພັດທະນາຄື: ຍ່າງດ້ວຍສອງຂາຫຼັງ, ໃຊ້ສອງຂາຫນ້າເພື່ອຈັບສິ່ງຂອງ ແລະ ຮູ້ນຳໃຊ້ກ້ອນຫີນ, ງ່າໄມ້ເປັນເຄື່ອງມືໃນການຫາກິນ. ສັດທີ່ມີຮູບຮ່າງຄ້າຍຄືທະນີນັ້ນເພິ່ນເອີ້ນວ່າ: ຄົນປະຖົມບູຮານ ຫຼື ທະນີຄົນ ເຊິ່ງກຳເນີດຂຶ້ນຫ່າງຈາກນີ້ ປະມານ 3-4 ລ້ານປີ. ບັນດາຮ່ອງຮອຍ ກະດູກຂອງຄົນປະຖົມບູຮານໄດ້ຄົ້ນພົບຢູ່ຫຼາຍບ່ອນຄື: ພາກຕາເວັນອອກຂອງທະວີບອາຟຣິກາ, ທະວີບເອີຣົບ, ເທິງເກາະຊາວາທີ່ປະເທດອິນໂດເນເຊຍ, ປັກກິ່ງປະເທດຈີນ ແລະ ບ່ອນອື່ນໆ.




ແຜນທີ່ການຄົ້ນພົບແຫຼ່ງກຳເນີດຂອງມະນຸດ

ສ່ວນຢູ່ປະເທດລາວເຮົານັກຄົ້ນຄວ້າໄດ້ພົບເຄື່ອງມື, ເຄື່ອງໃຊ້ ທີ່ເຮັດດ້ວຍຫີນ, ເປືອກຫອຍ, ເຫຼັກ, ທອງ, ຄຳ ແລະ ຮ່ອງຮອຍທີ່ຢູ່ອາໄສ, ຂຸມຝັງສົບ ຂອງຄົນບູຮານຢູ່ຫຼາຍແຫ່ງເຊັ່ນ: ຂອບເຂດຖ້ຳຮາງ. ຖ້ຳປາລອຍ, ຈ້າຍພູເລີຍທີ່ແຂວງຫົວພັນ. ຜາຊຽງທອງ, ຖ້ຳປອງທີ່ແຂວງຫຼວງພະບາງ, ບ້ານກວານ ຜາຊ້າງ, ບ້ານຢາງ, ຖ້ຳມະຫາໄຊ, ຖ້ຳຍົມມະລາດ ທີ່ແຂວງຄຳມ່ວນ, ແຂວງຈຳປາສັກ, ແຂວງຊຽງຂວາງ....

ຄົນປະຖົມບູຮານດຳລົງຊີວິດເປັນຫມູ່ ຫຼື ເປັນກຸ່ມປະມານສິບກວ່າຄົນ. ຕອນກາງເວັນ, ເຂົາເຈົ້າເກັບເດັດຜັກປ່າ, ຫມາກໄມ້ ແລະ ລ່າສັດເພື່ອເປັນອາຫານ, ຕອນກາງຄືນເຂົາເຈົ້ານອນຢູ່ໃນຖ້ຳ. ເງີບຜາຫີນ ຫຼື ນອນໃນຕູບເຮັດດ້ວຍງ່າໄມ້, ມຸງດ້ວຍໃບໄມ້ ຫຼື ຫຍ້າແຫ້ງ, ເຂົາເຈົ້າຮູ້ຈັກທັບຕ່ອຍຫີນເປັນອາວຸດ ແລະ ອຸປະກອນ; ຮູ້ນຳໃຊ້ໄຟ

ຝົງເພື່ອໃຫ້ຄວາມອົບອຸ່ນ, ປີ້ງຈີ່ອາຫານ ແລະ ໄລ່ສັດປ່າ. ຊີວິດການເປັນຢູ່ຫຍຸ້ງຍາກລໍາບາກ, ອາຫານບໍ່ພຽງພໍຊໍ້າພັດອາໄສ ໃນຖໍ້າ, ໃນຮູ. ການດໍາລົງຊີວິດແບບນີ້ແກ່ຍາວເປັນເວລາຫຼາຍລ້ານປີ.



ວິວັດທະນາການຂອງມະນຸດ

**1.2.ສັງຄົມສະຫະຊີບປະຖົມບູຮານ ແລະ ການພັງທະລາຍຂອງສັງຄົມສະຫະຊີບປະຖົມບູຮານ**

**1) ສັງຄົມສະຫະຊີບປະຖົມບູຮານ**

ຜ່ານຫຼາຍລ້ານປີ, ຄົນປະຖົມບູຮານ ໄດ້ມີການພັດທະນາ ແລະ ຂະຫຍາຍຕົວກາຍມາເປັນຄົນທີ່ມີຄວາມສະຫຼາດ ແລະ ມີຮູບຮ່າງສົມບູນຂຶ້ນຄ້າຍຄືຄົນປັດຈຸບັນ, ໂຄງກະດູກນ້ອຍ, ຝາມື ແລະ ນິ້ວມືນ້ອຍ ຄ່ອງແຄ້ວ, ມັນສະຫມອງຂະຫຍາຍຕົວ, ຫນ້າຜາກສູງ, ໃບຫນ້າພຽງ, ໄດ້ຄົ້ນພົບຮ່າງກະດູກຂອງຄົນຊະນິດນີ້ຢູ່ທຸກທະວີບໃນໂລກ ເຊິ່ງມີອາຍຸຫ່າງຈາກນີ້ປະມານ 40 ພັນປີ. ພວກເຂົາເຈົ້າດໍາລົງຊີວິດຢູ່ເປັນກຸ່ມນ້ອຍລວມມີປະມານສິບປາຍຄອບຄົວທີ່ເປັນຍາດຕິພີ່ນ້ອງໃກ້ສິດກັນ, ກຸ່ມຄົນເຫຼົ່ານີ້ ເຊິ່ງໄລຍະທໍາອິດດໍາລົງຊີວິດແບບກົກເຫຼົ່າມານດາ ຫຼື ກົກມານດາສິດທິລາດ (ຜູ້ຍິງເປັນຫົວຫນ້າ). ຄົນໃນກົກເຫຼົ່າດຽວກັນລ້ວນແຕ່ເຮັດວຽກ, ທໍາມາຫາກິນແບບລວມຫມູ່, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນເວລາເຮັດວຽກ, ໃນຂະບວນການດໍາລົງຊີວິດ, ຄົນບູຮານໄດ້ຮູ້ປູກຜັກ, ປູກເຂົ້າ, ລ້ຽງສັດ, ຜະລິດເຄື່ອງປັ້ນດິນເຜົາ, ຕໍ່າຜ້າຈາກການນໍາໃຊ້ເປືອກໄມ້, ຮູ້ຜະລິດເຄື່ອງເອ້ຄື: ສາຍແຂນ, ສາຍຄໍ. ຄົນບູຮານບໍ່ສະເພາະແຕ່ຊອກອາຫານໄດ້ຫຼາຍຂຶ້ນກວ່າເກົ່າເທົ່ານັ້ນ ເຂົາເຈົ້າຍັງມີຄວາມເບີກບານມ່ວນຊື່ນ ແລະ ມີຊີວິດທີ່ດີຂຶ້ນເລື້ອຍໆ.





ເຄື່ອງມືເຮັດດ້ວຍຫີນ





ເຄື່ອງມືທີ່ເຮັດຈາກກະດູກສັດ



ການດຳລົງຊີວິດຂອງມະນຸດປະຖົມບູຮານ

**2) ການພັງທະລາຍສັງຄົມສະຫະຊີບປະຖົມບູຮານ**

ການດຳລົງຊີວິດຂອງຄົນບູຮານເບື້ອງຕົ້ນມີການພັດທະນາດີກວ່າທະນີຄົນ ແຕ່ຄົນບູຮານກໍພຽງແຕ່ຮູ້ນຳໃຊ້ຫີນ ເພື່ອຜະລິດເຄື່ອງມືໃນການອອກແຮງງານ. ເຖິງແມ່ນວ່າເຄື່ອງມືທີ່ເຮັດດ້ວຍຫີນ, ຈະໄດ້ຮັບການປະດິດຄິດສ້າງ ແລະ ພັດທະນາຢ່າງບໍ່ຢຸດຢັ້ງກໍຕາມ, ແຕ່ມັນກໍຍັງບໍ່ມີຄຸນະພາບທີ່ທົນທານ, ແຂງແກ່ນ. ສະນັ້ນ, ຈຶ່ງເຮັດໃຫ້ຜົນຜະລິດຕ່ຳ. ປະມານສະຫະສະວັດທີ່ IV ກ່ອນ ຄ.ສ, ມະນຸດຈຶ່ງຄົ້ນພົບໂລຫະ ແລະ ນຳໃຊ້ໂລຫະເພື່ອຜະລິດເຄື່ອງອຸປະກອນ. ຍ້ອນເຄື່ອງມືທີ່ເຮັດດ້ວຍໂລຫະມີຄຸນນະພາບ, ມະນຸດຈຶ່ງສາມາດຂຸດຊ່ອງດິນ, ເພີ່ມເນື້ອທີ່ການປູກຝັງ, ຜ່າໄມ້ເຮັດເຮືອ, ຜ່າຫີນເຮັດເຮືອນ. ຜະລິດອາຫານໄດ້ຫຼາຍກວ່າເກົ່າ ພຽງພໍໃນການກິນຢູ່ ແລະ ມີສ່ວນເຫຼືອແຮໄວ້. ຍ້ອນຄວາມສາມາດໃນການອອກແຮງງານ ຫຼື ຍຶດເອົາຜົນຜະລິຂອງຄົນອື່ນ ທີ່ແຮໄວ້ນັ້ນມາເປັນຂອງຕົນ, ກຸ່ມຄົນຈຳນວນໜຶ່ງຈຶ່ງນັບມື້ນັບຮັ່ງມີກວ່າຄົນໃນກົກເຫຼົ່າມາຮອດຈຸດນີ້ ບໍ່ສາມາດເຮັດວຽກລວມກັນ, ຮັບຜົນຜະລິດລວມອີກແລ້ວ. ສະນັ້ນ, ສັງຄົມສະຫະຊີບປະຖົມບູຮານໄດ້ຄ່ອຍໆ ພັງທະລາຍລົງ



ເຄື່ອງມືທີ່ເຮັດຈາກໂລຫະ

## 2.ລະບອບເຈົ້າທາດ

### 2.1. ການກຳເນີດຂອງສັງຄົມເຈົ້າທາດ ແລະ ລັກສະນະຂອງສັງຄົມເຈົ້າທາດ

ສັງຄົມເຈົ້າທາດເປັນສັງຄົມທີ່ສອງຖັດຈາກສັງຄົມສະຫະຊີບປະຖົມບູຮານ. ສັງຄົມນີ້ກຳເນີດຂຶ້ນ ເມື່ອປະມານ 5.000 – 4.000 ປີ ກ່ອນ ຄ.ສ. ສັງຄົມຂ້າທາດເປັນສັງຄົມທີ່ຍຶດຖື "ຄົນ ເປັນເຄື່ອງມືວັດແທກຖານະຂອງຄົນໃນສັງຄົມ; ຜູ້ໃດມີຄົນຫຼາຍຜູ້ນັ້ນເປັນຜູ້ມີອິດທິພົນໃນສັງຄົມ. ດ້ວຍເຫດນັ້ນ, ຄົນໃນສັງຄົມນີ້ຈຶ່ງມີການແຂ່ງຂັນກັນເພື່ອຄອບຄອງຄົນມາເປັນຊັບສົມບັດ ຫຼື ມາເປັນຂ້າທາດ ປັດໄຈທີ່ເຮັດໃຫ້ສັງຄົມເຈົ້າທາດກຳເນີດຂຶ້ນມາຈາກປັດໄຈຕ່າງໆດັ່ງນີ້:

#### 1) ການກຳເນີດມີກຳມະສິດສ່ວນບຸກຄົນ

ການທີ່ມະນຸດຮູ້ຈັກນຳເອົາໂລຫະມາປະດິດເປັນເຄື່ອງມື, ເຄື່ອງໃຊ້ເພື່ອນຳໃຊ້ເຂົ້າໃນການຜະລິດນັ້ນໄດ້ສົ່ງຜົນເຮັດໃຫ້ຂະແໜງການວິຊາຊີບຕ່າງໆເກີດຂຶ້ນຢ່າງຫຼວງຫຼາຍ. ແຕ່ລະກຸ່ມຄົນບໍ່ພຽງແຕ່ຜະລິດ ເພື່ອຕອບສະໜອງການລ້ຽງຊີບຕົນເອງເທົ່ານັ້ນ, ຫາກຍັງມີການຜະລິດເຫຼືອເປັນສ່ວນເກີນໄວ້ອີກເພື່ອຄົນອື່ນໃນສັງຄົມ. ຜົນຂອງການຜະລິດເຫຼືອນີ້ເຮັດໃຫ້ຄົນໃນສັງຄົມເກີດມີແນວຄິດໃນການສະສົມຊັບສົມບັດເກີດຂຶ້ນ. ຈາກນັ້ນ, ຄອບຄົວທີ່ເປັນຫົວໜ້າກໍຄ່ອຍໆມີຖານະທາງເສດຖະກິດດີຂຶ້ນຈາກການສະສົມຜົນຜະລິດທີ່ເຫຼືອ.

ມາຮອດເວລານີ້ບັນດາສິ່ງວັດຖຸທີ່ເປັນຊັບສົມບັດຂອງສ່ວນລວມໃນເມື່ອກ່ອນໄດ້ຄ່ອຍໆກາຍມາເປັນຊັບສົມບັດສ່ວນຕົວເທື່ອລະໜ້ອຍ ແລະ ກ້າວໄປເຖິງການຢຶດຈອງພາຫານະການຜະລິດທັງໝົດ, ຜົນແຫ່ງການສະ

ສິມຊັບສິນບັດນີ້ໄດ້ເຮັດໃຫ້ການຜະລິດທັງລະບົບໃນສັງຄົມກາຍມາເປັນຂອງສ່ວນບຸກຄົນ ເຊິ່ງເປັນຈຸດເລີ່ມຕົ້ນຂອງການກຳເນີດກຳມະສິດສ່ວນບຸກຄົນ.

**2) ການແຕກມ້າງຂອງກົກເຫຼົ່າ**

ໃນໄລຍະທ້າຍຂອງຍຸກຫີນໃຫມ່ ລະຫວ່າງ 3.000 ຫາ 2.500 ປີ ກ່ອນ ຄ.ສ ການຜະລິດໄດ້ມີການຂະຫຍາຍຕົວ ແລະ ມີການສະສົມຊັບສິນບັດມາເປັນກຳມະສິດສ່ວນຕົວ, ການກຳເນີດກຳມະສິດສ່ວນຕົວຂອງບຸກຄົນຜູ້ທີ່ເປັນຫົວຫນ້າໄດ້ເຮັດໃຫ້ລະບົບການພົວພັນຂອງຄົນໃນສັງຄົມມີການປ່ຽນແປງ, ພາຍໃນສັງຄົມມີຄວາມບໍ່ສະເຫມີພາບເກີດມີຜູ້ທຸກຍາກ, ຜູ້ຮັ່ງ ແລະ ມີການຂູດຮີດແຮງງານ ເຊິ່ງນຳໄປສູ່ການຂັດແຍ່ງກັນໃນສັງຄົມອັນເປັນສາເຫດຫນຶ່ງ ເຮັດໃຫ້ສັງຄົມກົກເຫຼົ່າທີ່ມີຄວາມສະເຫມີພາບຖືກແຕກມ້າງ. ການແຕກມ້າງຂອງກົກເຫຼົ່າເປັນຈຸດເລີ່ມຕົ້ນຂອງສັງຄົມໃຫມ່ຄື "ສັງຄົມເຈົ້າທາດ ຫຼື ລະບອບເຈົ້າທາດ".

**3) ລັກສະນະໂຄງສ້າງຂອງສັງຄົມເຈົ້າທາດ**

ສັງຄົມເຈົ້າທາດເປັນສັງຄົມທີ່ມີການຜັນແຍກຄົນອອກເປັນຜູ້ທຸກຍາກ ແລະ ຜູ້ຮັ່ງມີ. ພາຍໃນສັງຄົມມີຄວາມເປັນປໍລະປັກກັນເປັນເທື່ອທຳອິດໃນປະຫວັດສາດຂອງສັງຄົມມະນຸດຄືພວກຂຸນນາງເຈົ້າທາດ ແລະ ຂ້າທາດ.




ລັກສະນະໂຄງສ້າງຂອງສັງຄົມເຈົ້າພາດ

ພວກເຈົ້າທາດເປັນຊັ້ນຄົນປົກຄອງທີ່ມາຈາກບຸກຄົນຜູ້ທີ່ເປັນຫົວຫນ້ານຳພາ ຫຼື ຫົວຫນ້າຄອບຄົວທີ່ມີອິດທິພົນໃນວົງຕະກຸນ ຫຼື ກົກເຫຼົ່າ, ກຸ່ມຄົນນີ້ເປັນຜູ້ທີ່ມີກຳມະສິດເດັດຂາດໃນຊັບສິນບັດສ່ວນລວມເຊັ່ນ: ຄົນ, ສັດ , ສິ່ງຂອງ ແລະ ເນື້ອທີ່ທຳການຜະລິດ.

ເພື່ອປົກປັກຮັກສາຊັບສົມບັດ,    ອຳນາດ ແລະ ອິດທິພົນ ຊັ້ນຄົນນີ້ໄດ້ຈັດຕັ້ງກົງຈັກຫນຶ່ງຂຶ້ນ ເອີ້ນວ່າ "ກົງຈັກລັດ ໂດຍມີ "ສະຫະພັນລັດ"ເຮັດຫນ້າທີ່ເປັນຕົວແທນໃນການປົກປັກຮັກສາສິດຜົນປະໂຫຍດຂອງເຈົ້າທາດ ແລະ ຜູ້ຮັ່ງມີ, ເວົ້າລວມແລ້ວພວກຂຸນນາງ ເຈົ້າທາດເປັນກຸ່ມຄົນທີ່ມີບົດບາດໃນສັງຄົມ, ເປັນຜູ້ມີສິດອຳນາດຢ່າງເດັດຂາດທາງດ້ານການເມືອງ ແລະ ເສດຖະກິດ. ສຳລັບພວກຂ້າທາດໃນສັງຄົມເຈົ້າທາດນັ້ນມີທີ່ມາຈາກສອງພາກສ່ວນຄື: ຂ້າທາດຊະເລີຍ ແລະ ຂ້າທາດຫນີ້ສິນ.

❖ **ຂ້າທາດຊະເລີຍ**

ຫມາຍເຖິງຂ້າທາດທີ່ໄດ້ມາຈາກຊະເລີຍເສິກໃນສົງຄາມລະຫວ່າງກົກເຫຼົ່າຕ່າງໆ ທີ່ຜູ້ຊະນະນຳມາໂດຍບໍ່ໄດ້ມີການຂ້າຖິ້ມຄືໃນເມື່ອກອນ. ກົງກັນຂ້າມພັດໄດ້ຖືກຮັກສາໄວ້ ເພື່ອເປັນແຮງງານຜະລິດໃນຕອນດິນໃຫຍ່ຂອງເຈົ້າທາດທີ່ເອີ້ນວ່າ "ລາຕິຟູນເດຍ (Latifundia) (ຫມາຍເຖິງນິຄົມກະສິກຳຂະຫນາດໃຫຍ່ຂອງພວກເຈົ້າທາດທີ່ໃຊ້ກຳລັງແຮງງານຂອງພວກຂ້າທາດຢ່າງຫຼວງຫຼາຍ. ພວກເຂົາເຈົ້າຕ້ອງອອກແຮງງານຢ່າງຫນັກຫນ່ວງ ແລະ ດຳລົງຊີວິດດ້ວຍຄວາມທຸກຍາກລຳບາກ ໂດຍບໍ່ມີຄ່າຕອບແທນ ແຕ່ປະການໃດ).

❖ **ຂ້າທາດຫນີ້ສິນ**

ເປັນພວກຂ້າທາດທີ່ໄດ້ມາຈາກການຕິດໜີ້ ຫຼື ມີຫນີ້ສິນທີ່ບໍ່ສາມາດໃຊ້ແທນຄືນໄດ້. ພວກຂ້າທາດໃນລັກສະນະນີ້ສ່ວນໃຫຍ່ເປັນກຸ່ມຄອບຄົວທຸກຍາກທີ່ແຍກຕົວອອກໄປສ້າງເສດຖະກິດໃຫມ່, ແຕ່ບໍ່ສາມາດກຸ້ມຕົນເອງໄດ້ ດ້ວຍເຫດນັ້ນ, ກຸ່ມຄົນເຫຼົ່ານີ້ຈຳເປັນຕ້ອງໄປກູ້ຢືມຈາກຜູ້ທີ່ຮັ່ງມີກໍຄືເຈົ້າທາດ. ແຕ່ພັດບໍ່ສາມາດທົດແທນໄດ້ຕາມກຳນົດເວລາຈຳເປັນກຸ່ມຄົນນີ້ຕ້ອງກາຍມາເປັນຜູ້ຮັບໃຊ້ເຊິ່ງເປັນທີ່ມາຂອງ ຂ້າທາດຫນີ້ສິນ"



ພວກຂ້າທາດໃນສັງຄົມເຈົ້າທາດ

ພວກຂ້າທາດເຫຼົ່ານີ້ເປັນກຸ່ມຄົນທີ່ມີຈຳນວນພົນຢ່າງຫຼວງຫຼາຍໃນສັງຄົມ, ເປັນຜູ້ອອກແຮງງານ ຕົ້ນຕໍເພື່ອຜະລິດລ້ຽງສັງຄົມ. ແຕ່ພວກເຂົາເຈົ້າພັດເປັນກຸ່ມຄົນທີ່ຖືກປະຕິເສດຈາກສັງຄົມ.

ສັງຄົມເຈົ້າທາດເປັນລະບອບທີ່ສອງຂອງສັງຄົມມະນຸດທີ່ມີໄລຍະເວລາການກຳເນີດຂຶ້ນມາຕັ້ງແຕ່ 4000 ປີກ່ອນ ຄ.ສ. ເຖິງແມ່ນວ່າປະຫວັດສາດສັງຄົມເຈົ້າທາດຈະເປັນປະຫວັດສາດທີ່ມີການແບ່ງຖານະຄົນ ໃນສັງຄົມອອກເປັນຊັ້ນຄົນດ້ວຍການຍຶດຖື "ຄົນ ເປັນເຄື່ອງວັດແທກຖານະຄົນໃນສັງຄົມກໍຕາມ ແຕ່ໃນປະຫວັດສັງຄົມມະນຸດ, ຄົນໃນສະໄຫມຂ້າທາກໍ່ໄດ້ປະກອບສ່ວນຊ່ວຍສ້າງຄວາມສີວິໄລທຳອິດຂອງມວນມະນຸດ. ບັນດາຄວາມສີວິໄລ

ດັ່ງກ່າວນັ້ນ ລ້ວນແຕ່ມີອິດທິພົນຕໍ່ການພັດທະນາສັງຄົມໂລກໃນຍຸກປັດຈຸບັນ. ດັ່ງຄໍາເວົ້າຂອງທ່ານ ມາກ-ອັງແກນ ທີ່ວ່າ: "ມີລະບອບເຈົ້າທາດ ຈຶ່ງມີການແບ່ງງານຂະໜາດກວ້າງລະຫວ່າງການກະສິກໍາກັບອຸດສາຫະກໍາ".

ລັດເຈົ້າທາດໃນໂລກແບ່ງອອກເປັນ 2 ຂົງເຂດໃຫຍ່ ຄືລັດເຈົ້າທາດຕາເວັນຕົກ ແລະ ລັດເຈົ້າທາດຕາເວັນອອກ. ຕົວແທນລັດຂ້າທາດຕາເວັນອອກໄດ້ແກ່: ລັດເຈົ້າທາດອິນເດຍ, ລັດເຈົ້າທາດຈີນ, ລັດເຈົ້າທາດເອຢິບ ສ່ວນລັດເຈົ້າທາດຕາເວັນຕົກໄດ້ແກ່: ລັດເຈົ້າທາດເກຼັກ ແລະ ລັດເຈົ້າທາດໂຣແມັງເຊິ່ງລັດເຈົ້າທາດຕາເວັນຕົກ ແລະ ລັດເຈົ້າທາດຕາເວັນອອກມີຄວາມແຕກຕ່າງກັນຄື:

ຕາຕະລາງປຽບທຽບລັດເຈົ້າທາດຕາເວັນອອກ ແລະ ຕາເວັນຕົກ

| ລດ | ຈຸດພິເສດຂອງລັດເຈົ້າທາດ | ຕາເວັນອອກ | ຕາເວັນຕົກ |
|---|---|---|---|
| 1 | ເວລາ | - ເກີດຂຶ້ນໄວ<br>- ຂະຫຍາຍຕົວຊ້າ<br>- ການສິ້ນສຸດຊ້າ ແລະ ບໍ່ຊັດເຈນ | - ກໍາເນີດຊ້າ<br>- ຂະຫຍາຍຕົວໄວ<br>- ສິ້ນສຸດໄວ ແລະ ຊັດເຈນ |
| 2 | ຮູບແບບການປົກຄອງ | ຮູບແບບດຽວຄື: ລາຊາທິປະໄຕ | ຫຼາຍຮູບແບບເຊັ່ນ:<br>- ລາຊາທິປະໄຕ<br>- ຄະນະທິປະໄຕ<br>- ປະຊາທິປະໄຕ |
| 3 | ກໍາມະສິດເອກະຊົນ | - ທີ່ດິນບໍ່ຂະຫຍາຍຕົວ<br>- ການນໍາໃຊ້ແຮງງານຂ້າທາດມີລັກສະ ນະບໍ່ລວມສູນ | - ທີ່ດິນຂະຫຍາຍຕົວສູງ<br>- ການນໍາໃຊ້ແຮງງານຂ້າທາດມີລັກສະນະລວມສູນ |
| 4 | ການຕໍ່ສູ້ຂອງຂ້າທາດ | - ທໍາມະດາບໍ່ຮຸນແຮງ | - ຮຸນແຮງ |

## 2.2. ການພັງທະລາຍຂອງສັງຄົມຂ້າທາດ

ກ້າວເຂົ້າສູ່ສັດຕະວັດທີ 5 ສັງຄົມເຈົ້າທາດຕາເວັນຕົກກ້າວເຂົ້າສູ່ໄລຍະຊຸດໂຊມເຊິ່ງມີສາເຫດມາຈາກຫຼາຍປັດໄຈ

ໃນຕອນທ້າຍຂອງລະບອບຂ້າທາດຕາເວັນຕົກໂດຍສະເພາະແມ່ນຢູ່ເກຼັກ ແລະ ໂຣແມັງ ການຜະລິດແບບຕາລີຟຸນເດຍໃນນິຄົມຜູກຝັງຂະໜາດໃຫຍ່ຂອງພວກເຈົ້າທາດຖືກຢຸດສະງັກ. ເຂດກະສິກໍາຂອງພວກເຈົ້າທາດສ່ວນຫຼາຍພົບກັບບັນຫາຂາດເຂີນແຮງງານ ເນື່ອງຈາກການປ່ຽນແປງສະຖານະພາບພວກຂ້າທາດທີ່ເກີດຂຶ້ນຍ້ອນການລຸກຮື້ຂຶ້ນ

ຕໍ່ສູ້ຂອງພວກຂ້າທາດດ້ວຍຫຼາຍຮູບການເຊັ່ນ: ໂຕນໜີ, ບໍ່ຍອມອອກແຮງງານຕາມຄໍາສັ່ງຂອງເຈົ້າທາດ, ການທໍາລາຍເຄື່ອງມືອອກແຮງງານ ແລະ ຈັບອາວຸດລຸກຂຶ້ນຕໍ່ສູ້ ເພື່ອຮຽກຮ້ອງສິດທິໃນສັງຄົມ.

ໃນທ້າຍສະຕະວັດທີ 3 -ສະຕະວັດທີ 4 ສະພາບການທາງດ້ານສັງຄົມຂອງລະບອບເຈົ້າທາດຕາເວັນຕົກໄດ້ກ້າວເຂົ້າສູ່ຄວາມຫຍຸ້ງຍາກ ບັນດາຂຸນນາງທ້ອງຖິ່ນປະກາດແຍກຕົວບໍ່ຂຶ້ນກັບສູນກາງ ແລະ ດໍາເນີນການປົກຄອງເປັນເອກະລາດ ພວກຂຸນນາງທ້ອງຖິ່ນດໍາເນີນການບຽດຢຶດຍາດດິນແດນເຊິ່ງກັນ ແລະ ກັນເຮັດໃຫ້ສົງຄາມພາຍໃນທ້ອງຖິ່ນກາຍເປັນສົງຄາມກາງເມືອງທີ່ມີລັກສະນະແກ່ຍາວເປັນເວລາດົນນານ. ນອກຈາກນີ້ຍັງມີຂະບວນການລຸກຂຶ້ນຕໍ່ສູ້ເພື່ອຄວາມເປັນອິດສະຫຼະພາບຂອງພວກຂ້າທາດທີ່ອອກແຮງງານຢູ່ຕາມນິຄົມປູກຝັງຕ່າງໆຢ່າງເນື່ອງນິດລຽນຕິດ ແລະ ມີລັກສະນະຮຸນແຮງ.

ຕົວຢ່າງ: ຂະບວນການຕໍ່ສູ້ຂອງພວກຂ້າທາດຢູ່ກຸງໂຣມ ທີ່ນໍາພາໂດຍ ສະປາກຕາກຸດເກີດຂຶ້ນໃນປີ 37 ກ່ອນ ຄ.ສ ດ້ວຍການໂຕນໜີອອກຈາກຄ້າຍຝຶກແອບກໍາລັງຂອງພວກເຈົ້າທາດພ້ອມກັນ 70 ຄົນ. ຈາກນັ້ນກໍ່ມີກໍາລັງຂອງຂ້າທາດ ແລະ ຄົນທຸກຍາກມາສົມທົບເຖິງ 7.000 ຄົນ ເປົ້າໝາຍຂະບວນການຕໍ່ສູ້ແມ່ນເພື່ອບຸກໂຈມຕີກອງທະຫານ ແລະ ເຮືອສິນຄ້າຂອງພວກເຈົ້າທາດ ແລ້ວນໍາເອົາຊັບສິນເງິນຄໍາມາແບ່ງປັນໃຫ້ແກ່ຜູ້ທຸກຍາກ. ຂະບວນການຕໍ່ສູ້ຂອງພວກຂ້າທາດທີ່ນໍາພາໂດຍສະປາກຕາກຸດແກ່ຍາວເປັນເວລາ 3 ປີ ຈຶ່ງຖືກກໍາລັງຂອງພວກເຈົ້າທາດປາບປາມລົງ.

ສະຫຼຸລລວມແລ້ວ: ສັງຄົມເຈົ້າທາດເປັນລະບອບທີ 2 ຂອງສັງຄົມມະນຸດທີ່ມີເວລາກໍາເນີດແຕ່ 4.000 ປີກ່ອນຄ.ສ ເປັນສັງຄົມທີ່ມີການແບ່ງຖານະຄົນໃນສັງຄົມອອກເປັນຊັ້ນຄົນດ້ຍການຢຶດຖືຄົນເປັນເຄື່ອງວັດແທກຖານະຄົນໃນສັງຄົມ. ເຖິງຢ່າງໃດກໍ່ຕາມກຸ່ມຄົນທີ່ຢູ່ໃນສັງຄົມເຈົ້າທາດກໍ່ໄດ້ອຸທິດ ແລະ ປະກອບສ່ວນຜົນງານ ແລະ ສ້າງຄວາມສີວິໄລທໍາອິດຂອງມວນມະນຸດຂຶ້ນເພື່ອໄວ້ໃຫ້ຄົນລຸ້ນຫຼັງໄດ້ສືບທອດ. ບັນດາຜົນງານການຄົ້ນຄິດ ແລະ ປະຕິມະກໍາຕ່າງໆໄດ້ແຈກຍາຍຢູ່ໃນສ່ວນຕ່າງໆຂອງໂລກ ເຊິ່ງມີອິດທິພົນຕໍ່ກັບການພັດທະນາສັງຄົມໂລກໃນຍຸກປັດຈຸບັນ.

ລະບອບຂ້າທາດໃນເອີຣົບມີຄວາມເຂັ້ມແຂງທີ່ສຸດ ໂດຍສະ ເພາະແມ່ນຈັກກະພັດໂ ແມັງບູຮານ ເປັນຈັກກະພັດທີ່ຍິ່ງໃຫຍ່ ແລະ ມີຄວາມເຂັ້ມແຂງກວ່າໝູ່ໃນໂລກມາເປັນເວລາຫຼາຍສະຕະວັດ ຈົນມາເຖິງສະຕະວັດທີ III ຈຶ່ງໄດ້ເສື່ອມໂຊມລົງ ເນື່ອງຈາກວ່າພວກຂຸນນາງ ຫຼື ເຈົ້າໜ້າທີ່ລະດັບຕ່າງໆທັງຫຼາຍເກີດມີການຕໍ່ສູ້ຊ່ວງຊີງຄວາມເປັນໃຫຍ່ເຊິ່ງກັນ ແລະ ກັນ. ພື້ນຖານເສດຖະກິດເກີດມີຄວາມຊຸດໂຊມຢ່າງໜັກ ໂດຍສະເພາະການກະສິກໍາ, ຫັດຖະກໍາ ແລະ ການຄ້າ ບໍ່ສາມາດດໍາເນີນການໄດ້ ເພາະຂາດກໍາລັງແຮງງານຕົ້ນຕໍ (ແຮງງານຂ້າທາດ ຖືກເຈົ້າທາດທຸບຕີທໍລະມານຢ່າງໜັກຈົນເຖິງຂັ້ນເສຍຊີວິດ ແລະ ອີກຈໍານວນໜຶ່ງກໍໂຕນໜີ). ຂະບວນການຕໍ່ສູ້ຂອງຊາວຂ້າທາດ ແລະ ຊາວເມືອງຜູ້ທຸກຍາກໄດ້ເກີດຂຶ້ນຢ່າງຮຸນແຮງເຮັດໃຫ້ສັງຄົມເກີດມີຄວາມສັບສົນວຸ້ນວາຍ. ໃນປີ ຄ.ສ 476 ໂອໂດອາເຊີ (Odoacer) ຫົວໜ້າເຜົ່າ ແຊກແມັງ ທີ່ເປັນໜຶ່ງໃນບັນດາກຸ່ມຄົນປ່າເຖື່ອນທັງຫຼາຍທີ່ອາໄສຢູ່ທາງພາກເໜືອຂອງທະວີບເອີຣົບໄດ້ບຸກຕີໂຣແມັງ ສາມາດໂຄ່ນລົ້ມໂຣມູຣຸດ ທີ່ເປັນກະສັດອົງສຸດທ້າຍ ແລະ ລົບລ້າງກົງຈັກການປົກຄອງເກົ່າຂອງຈັກກະພັດຢ່າງສິ້ນເຊີງ ເຮັດໃຫ້ລະບອບຂ້າທາດໃນຂົງເຂດທະເລ ເມດິແຕຣາເນ ໄດ້ສິ້ນສຸດລົງໃນປີ ຄ.ສ 476 ອັນເປັນຂີດໝາຍແຫ່ງການສິ້ນສຸດຂອງລະບອບຂ້າທາດສະໄໝບູຮານ.

# ບົດທີ 2

# ອະລິຍະທຳບູຮານຂອງໂລກ

## 1. ຄວາມໝາຍຂອງອະລິຍະທຳ ແລະ ປັດໃຈພື້ນຖານໃນການກຳເນີດອະລິຍະທຳ

### 1.1. ຄວາມໝາຍຂອງອະລິຍະທຳ ແລະ ຖິ່ນກຳເນີດອະລິຍະທຳ

ຄຳວ່າ ອະລິຍະທຳ"  ຄືຫມາກຜົນຂອງພັດທະນາການດ້ານວັດທະນະທຳທີ່ຈະເລີນສູງສຸດ. ອະລິຍະທຳເປັນຄຳສັບທີ່ມີເຄົ້າມາຈາກພາສາບາລີ ເຊິ່ງກົງກັບຄຳສັບໃນພາສາອັງກິດວ່າ  "civilization  ທີ່ມີຄວາມຫມາຍ ໃນພາສາລາວວ່າ ຄວາມຈະເລີນຮຸ່ງເຮືອງ ຫຼື ຄວາມສີວິໄລ".

ພາກຕາເວັນອອກເປັນດິນແດນຫນຶ່ງທີ່ມີພັດທະນາການຂອງຊຸມຊົນມາແຕ່ບູຮານນະການ ແລະ ຖືກຈັດໃຫ້ເປັນແຫຼ່ງອະລິຍະທຳທີ່ເກົ່າແກ່ແຫ່ງຫນຶ່ງຂອງໂລກ. ບັນດາແຫຼ່ງອະລິຍະທຳບູຮານໃນພາກຕາເວັນອອກນັ້ນລ້ວນແຕ່ມີຖິ່ນຖານກຳເນີດໃນບໍລິເວນດິນແດນ ເປັນທົ່ງພຽງແຄມນ້ຳໃຫຍທີ່ສຳຄັນຕ່າງໆເຊັ່ນ:

- ດິນແດນລ້ອງແມ່ນ້ຳຕີກເຣີ-ເອີຟຣັດ (Tige-Eurthrates) ໃນເຂດອາຊີຕາເວັນຕົກສ່ຽງໃຕ້.
- ດິນແດນລ້ອງແມ່ນ້ຳນິ້ນ (Nil) ໃນພາກຕາເວັນອອກສ່ຽງເຫນືອຂອງທະວີບອາຟຣິກາ.
- ດິນແດນລ້ອງແມ່ນ້ຳຮວງ ໂຫ (Yellow River) ໃນເຂດອາຊີຕາເວັນອອກ (ຢູ່ປະເທດຈີນ).
- ດິນແດນລ້ອງແມ່ນ້ຳສິນທຸ (Indus River) ໃນເຂດອາຊີໃຕ້ (ຢູ່ປະເທດອິນເດຍ).



ແຫຼ່ງອາລິຍະທຳບູຮານຕາເວັນອອກ

### 1.2. ປັດໄຈພື້ນຖານໃນການກຳເນີດອະລິຍະທຳ

ອະລິຍະທຳຄືພັດທະນາການຂອງວັດທະນະທຳທີ່ຈະເລີນສູງສຸດ ນັບຕັ້ງແຕ່ຍຸກສະໄຫມທີ່ມະນຸດຍັງດຳລົງຊີວິດແບບເຄື່ອນທີ່ໄປມາຕາມເຂດທີ່ມີອາຫານດ້ວຍການເກັບເຄື່ອງປ່າຂອງດົງ ແລະ ລ່າສັດ ມີການສ້າງສາອະລິຍະທຳເປັນຂອງຕົນເອງແລ້ວ. ແຕ່ການທີ່ມະນຸດຈະສ້າງຄວາມຈະເລີນຈົນເຖິງຂັ້ນເປັນອະລິຍະທຳໄດ້ນັ້ນກໍຕ້ອງມີກົດລະບຽບແບບແຜນທີ່ແນ່ນອນ ໂດຍອາໄສປັດໄຈຕ່າງໆ ທີ່ສຳຄັນເພື່ອເອື້ອອຳນວຍຕໍ່ການສ້າງດັ່ງນີ້:

**1) ປັດໄຈທາງດ້ານພູມສາດ**

ສະພາບພູມສັນຖານບໍລິເວນທີ່ເປັນບ່ອນຢູ່ອາໄສຂອງຊຸມຊົນໃນສະໄຫມບູຮານທີ່ກາຍເປັນແຫຼ່ງກຳເນີດອະລິຍະທຳບູຮານຂອງພາກຕາເວັນອອກລ້ວນແຕ່ຕັ້ງຢູ່ໃນດິນແດນບໍລິເວນທົ່ງພຽງແຄມແມ່ນ້ຳ. ເພາະເປັນດິນແດນທີ່ອຸດົມສົມບູນເຫມາະສົມແກ່ການກະສິກຳ, ການຄ້າ ແລະ ການຄົມມະນາຄົມ. ນອກຈາກແມ່ນ້ຳແລ້ວຍັງມີພູຜາ ແລະ ທະເລຊາຍທີ່ເປັນປັດໄຈທີ່ເອື້ອອຳນວຍຕໍ່ການສ້າງອະລິຍະທຳ ໃນດ້ານທີ່ເປັນກຳແພງທຳມະຊາດ ເພື່ອປ້ອງກັນການຮຸກຮານຈາກບຸກຄົນພາຍນອກ. ຈາກສະພາບພູມສາດແບບນີ້ຈຶ່ງເຮັດໃຫ້ຊຸມຊົນທີ່ດຳລົງຊີວິດໃນແຖບນີ້ ມີເວລາພໍທີ່ຈະສ້າງສາ, ສະສົມ ແລະ ພັດທະນາ ອະລິຍະທຳທີ່ມີລັກສະນະສະເພາະຂອງຕົນຂຶ້ນມາ.

**2) .ປັດໄຈທາງດ້ານເສດຖະກິດ.**

ດິນແດນທີ່ເປັນແຫຼ່ງອະລິຍະທຳບູຮານພາກຕາເວັນອອກນັ້ນ ລ້ວນແຕ່ເປັນແຫຼ່ງທີ່ຊຸມຊົນມີການດຳລົງຊີວິດດ້ວຍການກະສິກຳ. ພວກເຂົາເຈົ້າຮູ້ຈັກນຳເອົາພືດນາໆຊະນິດມາປູກ ແລະ ນຳເອົາສັດບາງ ປະເພດມາລ້ຽງເພື່ອເປັນອາຫານ ແລະ ຝຶກແອບນຳໃຊ້ເຂົ້າຊ່ວຍແຮງງານຄົນ. ການທີ່ມະນຸດຮູ້ຈັກ ພັດທະນາການຜະລິດກະສິກຳເຮັດໃຫ້ມີຜົນຜະລິດເຫຼືອຈາກການບໍລິໂພກ ຈຶ່ງນຳໄປແລກປ່ຽນກັບຜົນຜະລິດ ອື່ນຈົນພັດທະນາມາເປັນການຄ້າ, ການກຳເນີດການແລກປ່ຽນດັ່ງກ່າວໄດ້ກາຍເປັນປັດໄຈສຳຄັນທີ່ເຮັດໃຫ້ສັງຄົມມີການຂະຫຍາຍຕົວຢ່າງວ່ອງໄວໄປພ້ອມໆກັບການພັດທະນາອະລິຍະທຳດ້ານອື່ນໆອີກດ້ວຍ.

**3) ປັດໄຈທາງດ້ານສັງຄົມ**

ດິນແດນທີ່ເປັນບ່ອນກຳເນີດແຫຼ່ງອະລະລິຍະທຳບູຮານຂອງພາກຕາເວັນອອກນັ້ນລ້ວນແຕ່ເປັນທີ່ຊຸມຊົນ ໃນຂົງເຂດນີ້ມີການຈັດລະບຽບສັງຄົມ ແລະ ຮູບແບບການປົກຄອງເພື່ອຄວາມສັນຕິ ແລະ ສະຫງົບສຸກຂອງຄົນໃນສັງຄົມ. ຕະຫລອດຮອດການສະແຫວງຫາຄວາມຮູ້ຕ່າງໆ ເຊັ່ນ: ວິທີການປິ່ນປົວຄົນເຈັບ, ການປະດິດຕົວອັກສອນເພື່ອໃຊ້ໃນການຕິດຕໍ່ພົວພັນ ແລະ ເຕັກນິກ, ຄວາມຮູ້ວິທະຍາການຕ່າງໆ. ນອກຈາກນີ້ຍັງມີການສະແຫວງຫາຄວາມຫມັ້ນຄົງ ທາງດ້ານຈິດໃຈເພື່ອເປັນກຳລັງແຮງທາງດ້ານຈິດໃຈ ເພື່ອຜ່ານຜ່າອຸປະສັກໃນການດຳເນີນຊີວິດ ສິ່ງຜົນໃຫ້ເກີດລັດທິຄວາມເຊື່ອຂຶ້ນ ເຊິ່ງໄດ້ກາຍເປັນປັດໄຈສຳຄັນຢ່າງຫນຶ່ງກໍ່ໃຫ້ເກີດຜົນງານການສ້າງສາທາງດ້ານປະເພນີ, ສິລະປະ ແລະ ວັດທະນະທຳ.

## 2. ອະລິຍະທຳຕາເວັນອອກ

### 2.1.ອະລິຍະທຳເມໂຊໂປຕາມີ

ເມໂຊໂປຕາມີ ( Mesopotamia) ເປັນດິນແດນທີ່ຕັ້ງຢູ່ເຂດຕາເວັນອອກກາງລະຫວ່າງກາງແມ່ນ້ຳ ຕີກເກຣີ (Tigre) ແລະ ເອີຟຣັດສ (Euphrates) ທີ່ໄຫຼມາຈາກພູອາກເມນີລົງສູ່ອ່າວເປີເຊຍ, ເປັນດິນແດນລ້ອງແມ່ນ້ຳທີ່ອຸດົມສົມບູນ, ແຕ່ກໍເປັນດິນແດນທີ່ອ້ອມຮອບໄປດ້ວຍຄວາມທຸລະກັນດານ, ຍາມຮ້ອນອາກາດຮ້ອນຈົນແຫ້ງແລ້ງ, ຍາມຝົນມີຝົນຕົກຈົນນ້ຳຖ້ວມ, ໃນລະດູໃບໄມ້ປົ່ງແມ່ນ້ຳທັງສອງ ຈະພັດພາເອົາຝຸ່ນທຳມະຊາດມາທັບຖົມຕາມແຄມຝັ່ງທັງສອງເຮັດໃຫ້ດິນແດນແຫ່ງນີ້ກາຍເປັນຕອນດິນທີ່ອຸດົມສົມບູນ ນັກປະຫວັດສາດ ເອີ້ນຊື່ດິນແດນນີ້ວ່າ: "ດິນແດນວົງໂຄ້ງແຫ່ງຄວາມອຸດົມສົມບູນ".




ແຜນທີ່ອະລິຍະທຳເມໂຊໂປຕາມີ

ປັດຈຸບັນດິນແດນແຫ່ງນີ້ເປັນສ່ວນຫນຶ່ງຂອງປະເທດຊີຣີ ແລະ ປະເທດອີຣັກ. ອະລິຍະທຳເມໂຊໂປຕາມີເລີ່ມຕົ້ນຂຶ້ນເມື່ອປະມານ 6.000-5.000 ປີ ກ່ອນ ຄ.ສ ເປັນອະລິຍະທຳຂອງຫຼາຍກຸ່ມຄົນ. ເພາະວ່າດິນແດນແຫ່ງນີ້ເປັນດິນແດນທີ່ມີຫຼາຍກຸ່ມຄົນຜັດປ່ຽນກັນເຂົ້າມາອາໄສ ແລະ ຄອບຄອງ ດັ່ງນັ້ນ, ປະຫວັດສາດຂອງຂົງເຂດນີ້ ຈຶ່ງເປັນປະຫວັດສາດກ່ຽວກັບຄວາມຈະເລີນຂອງຄົນແຕ່ລະກຸ່ມທີ່ແຍກຕົວອອກຈາກກັນ, ບໍ່ແມ່ນຄວາມຈະເລີນຂອງອານາຈັກທີ່ເປັນປຶກແຜ່ນຫມັ້ນຄົງຕໍ່ເນື່ອງເປັນອັນຫນຶ່ງອັນດຽວກັນຄື ປະຫວັດສາດຂອງຄົນເອຢິບ ແລະ ອິນເດຍ.

### 2.2.ກຸ່ມຄົນທີ່ສຳຄັນໃນການສ້າງສາອະລິຍະທຳໃນຂົງເຂດນີ້ແມ່ນ:

### ກ. ກຸ່ມຄົນສຸແມຣຽງ

ເປັນກຸ່ມຄົນທຳອິດທີ່ເຂົ້າມາມີບົດບາດໃນການຕັ້ງຖິ່ນຖານຮ່ວມຕົວກັນເປັນຊຸມຊົນເມືອງຂະຫນາດໃຫຍ່ໃນຮູບຂອງນະຄອນລັດຫຼາຍແຫ່ງເທິງດິນແດນເມໂຊໂປຕາມີ, ພວກເຂົາເຈົ້າຮູ້ຈັກກໍ່ສ້າງສິ່ງຖາວອນ, ວັດຖຸຂະຫນາດໃຫຍ່ດ້ວຍດິນຫນຽວຕາກແຫ້ງທີ່ມີລັກສະນະຄ້າຍຄື ປີຣະມິດ ເພື່ອເປັນສະຖານທີ່ປະກອບພິທີກຳທາງ

ສາສະໜາ, ຜົນງານວັດທະນະທຳທີ່ສຳຄັນຂອງຊາວສຸແມຣຽງ ທີ່ປະໄວ້ໃຫ້ແກ່ຊາວໂລກຄື: ດ້ານຄະນິດສາດ ແລະ ເລຂາຄະນິດ ຄື: ຮູ້ຈັກການໃຊ້ເລກສູນ (o), ເລກຫານ (:) ແລະ ການໃຊ້ ເລກຖານ 60.



ຕົວເລກສຸແມຣຽງ



ຕົວອັກສອນຄູນີຟອມ Cuneiform ຫຼື ຕົວອັກສອນລີ້ມ ທີ່ບັນທຶກໃສ່ແຜ່ນດິນໜຽວ

ມີອາຍຸປະມານ ມີອາຍຸ 4000 ປີ ຄົ້ນພົບທີ່ເມືອງ Uruk

ໃນດ້ານດາລາສາດພວກເຂົາເຈົ້າຮູ້ຈັກສ້າງປະຕິທິນອອກມານຳໃຊ້ຕາມລະບົບປະຕິທິນທາງຈັນທະລະຄະຕິ (Make up Noon calendar) ຄືກຳນົດປີໜຶ່ງມີ 12 ເດືອນ, ໜຶ່ງເດືອນມີ 29 ກັບ 1/2 ມື້ ແລະ ປີໜຶ່ງມີ 365 ວັນ.

ໃນດ້ານການກະສິກຳຊາວສຸແມຣຽງຮູ້ຈັກນຳໃຊ້ແຮງງານຂອງສັດເຂົ້າຊ່ວຍໃນການປູກຝັງຄື: ການໃຊ້ສັດເຂົ້າໃນການລາກແກ່ໄຖ. ນອກຈາກນັ້ນເຂົາເຈົ້າຍັງໄດ້ຊື່ວ່າເປັນຜູ້ສ້າງລະບົບຊົນລະປະທານແບບຄົບຊຸດຂຶ້ນໃຊ້ທຳອິດຂອງໂລກ ເຊິ່ງປະກອບມີເຂື່ອນກັ້ນນ້ຳ, ອ່າງເກັບນ້ຳ, ຮ່ອງລະບາຍນ້ຳ ແລະ ປະຕູນ້ຳ.

ດ້ານສະຖາປັດຕະຍະກຳ ສ່ວນໃຫຍ່ຂອງຊາວສຸແມຣຽງຈະເຮັດດ້ວຍດິນຈີ່ ຊາວສູແມຣຽງຖືວ່າ ເປັນຊົນຊາດທຳອິດທີ່ໃຊ້ດິນເຂົ້າໃນການກໍ່ສ້າງ, ດິນຈີ່ຂອງຊາວສແມຣຽງ ທຳອິດເຮັດຈາກດິນໜຽວຕາກແຫ້ງ ເອີ້ນວ່າດິນຈີ່ຕາກແຫ້ງ ເຊິ່ງຕໍ່ມາໄດ້ມີການນຳໄປອົບໄຟ ຈຶ່ງເຮັດໃຫ້ດິນນີ້ມີຄວາມແຂງແກ່ນ ແລະ ທົນທານເອີ້ນວ່າ "ດິນຈີ່ເຜົາ". ຕົວແທນຂອງສິ່ງກໍ່ສ້າງດ້ວຍດິນຈີ່ທີ່ມີຄວາມເດັ່ນກວ່າໝູ່ກໍຄື ວັດທີ່ມີຮູບຮ່າງລັກສະນະການກໍ່ສ້າງຄ້າຍຄືກັບ ປີຣະມິດ ທີ່ເປັນຊັ້ນໆເອີ້ນວ່າ “ຊິກາກູແຣັດ".

### ຂ. ກຸ່ມຄົນອັກກາດຽງ

ເປັນກຸ່ມຄົນທີ່ອາໄສຕົວອັກສອນຮູບລີ້ມຂອງຊາວສຸແມຣຽງເພື່ອເຜີຍແຜ່ຄວາມສາມາດກ່ຽວກັບອະລິຍະທຳພາກຕາເວັນອອກໄປສູ່ພາກຕາເວັນຕົກ. ດັ່ງນັ້ນ, ຜົນງານວັດທະນະທຳຂອງຄົນອັກກາດຽງກໍຄື ເປັນຜູ້ທີ່ເປີດໂລກຕາເວັນອອກໄປສູ່ໂລກຕາເວັນຕົກ.

### ຄ. ກຸ່ມຄົນບາບີໂລນຽງ ຫຼື ຊາວບາບີລອນ

ເປັນກຸ່ມຄົນທີ່ເຂົ້າມາແທນທີ່ກຸ່ມຄົນອັກກາດຽງ ແລະ ເປັນກຸ່ມຄົນທີ່ມີຜົນງານເດັ່ນທີ່ປະໄວ້ແກ່ຊາວໂລກຄື: ປະມວນກົດໝາຍທີ່ແຕ່ງຂຶ້ນຈາກຮີດຄອງປະເພນີແບບດັ້ງເດີມຂອງຊາວສຸແມຣຽງກັບຂະນົບທຳນຽມຂອງເຜົ່າຊົນເຊມິດຕິກ ທີ່ເອີ້ນວ່າ "ກົດໝາຍຮາມມູຮາບີ". ກົດໝາຍນີ້ມີບົດກຳນົດການລົງໂທດໃນລັກສະນະແບບ ຕາຕໍ່ຕາ ແຂນຕໍ່ແຂນ... ຜົນງານທີ່ເດັ່ນອີກປະເພດໜຶ່ງຄືການປະດິດຕົວເລກ.



ຕົວເລກຂອງຊາວບາບີລອນ

ງ. ກຸ່ມຄົນຄານດຽງ

ກຸ່ມຄົ້ນຄານດຽງຄືກຸ່ມຄົນທີ່ເປັນຜູ້ສືບທອດຄວາມຈະເລີນທາງອະລິຍະທໍາຂອງຊາວສຸແມຣຽງ ແລະ ບາບີໂຣນຽງ, ຜົນງານທີ່ສໍາຄັນຄືການສ້າງສິ່ງກໍ່ສ້າງທີ່ຈັດເຂົ້າໃນ 1 ໃນ ເຈັດຂອງສິ່ງມະຫັດສະຈັນ ໂລກບູຮານຄື: ສວນອຸທິຍານລອຍ ເຊິ່ງປັດຈຸບັນຍັງເຫຼືອພຽງແຕ່ເປັນຕໍານານເລົ່າຂານໄວ້ເທົ່ານັ້ນ. ນອກຈາກນີ້, ຊາວຄານດຽງຍັງເປັນກຸ່ມຄົນທໍາອິດທີ່ຮູ້ຈັກແຕ້ມແຜນທີ່ທ້ອງຟ້າ ແລະ ດວງດາວທີ່ສາມາດທໍານາຍການເກີດກົບກິນຕາເວັນໄດ້ (ສຸຣິຍະຄາດ).



ສວນອຸທິຍານລອຍແຫ່ງກຸງບາບີລອນ

**2.2. ອະລິຍະທໍາເອຢິບ**

ເອຢິບຄືຫນຶ່ງໃນບັນດາແຫຼ່ງກໍາເນີດອະລິຍະທໍາຂອງມະນຸດຊາດແຫ່ງທໍາອິດຂອງໂລກ. ເອຢິບຕັ້ງຢູ່ພາກຕາເວັນອອກສ່ຽງເຫນືອຂອງທະວີບອາຟຣິກາ ຍາວຢຽດໄປຕາມລ້ອງ ແມ່ນໍ້ານິນ, ດ້ວຍຄວາມອຸດົມສົມບູນຂອງແມ່ນໍ້ານິນນີ້ໄດ້ດຶງດູດເອົາຜູ້ຄົນເຂົ້າມາດໍາລົງຊີວິດ ແລະ ຕັ້ງຖິ່ນຖານຈົນກາຍເປັນແຫຼ່ງຊຸມຊົນກະສິກໍາບູຮານຂຶ້ນເມື່ອປະມານ 4,000-3,500 ປີ ກ່ອນ ຄ.ສ.

ການລວມຕົວເຂົ້າກັນຂອງປະຊາຊົນຊາວເອຢິບບູຮານນັ້ນມີລັກສະນະກ້າວຫນ້າໄປໄກກວ່າການລວມຕົວເຂົ້າກັນຂອງປະຊາຊົນຊາວສູແມຣຽງໃນດິນແດນເມໂຊໂປຕາມີ. ການລວມຕົວເຂົ້າກັນຂອງ ຊາວເອຢິບເປັນການລວມດິນແດນທີ່ກວ້າງໃຫຍເຂົ້າກັນເປັນອານາຈັກຫນຶ່ງອານາຈັກສຸວພາຍໃຕ້ກະສັດ ອົງດຽວປົກຄອງທີ່ຊາວເອຢິບເອີ້ນວ່າ ຟາຣາອົງ (Pharaon). ຟາຣາອົງຄື: ນາມມະຍົດຂອງຜູ້ປົກຄອງ ທີ່ເອີ້ນວ່າ ກະສັດ ແລະ ເປັນຜູ້ສະຖາປະນາເອຢິບຂຶ້ນເປັນ ລາຊະອານາຈັກແຫ່ງທໍາອິດຂອງ ໂລກ” ທີ່ມີປະຫວັດສາດ ຄວາມເປັນມາຢ່າງຕໍ່ເນື່ອງເປັນເວລານານ 3,000 ກວ່າປີ.




ແຜນທີ່ເອຢິບ

ຜົນງານເດັ່ນທາງດ້ານວັດທະນະທຳຂອງຊາວເອຢິບທີ່ປະໄວ້ໃຫ້ແກ່ຊາວໂລກໄດ້ແກ່ຄວາມຮູ້ທາງດ້ານວິທະຍາສາດ. ຫາກພິຈາລະນາຈາກການກໍ່ສ້າງປີຣະມິດພຽງຢ່າງດຽວກໍສາມາດເຫັນຄວາມຈະເລີນ ທາງວິທະຍາສາດ-ວິທະຍາການຂອງຊາວເອຢິບບູຮານໄດ້ຢ່າງຫຼວງຫຼາຍເຊັ່ນ: ຄວາມຮູ້ໃນການຄຳນວນ, ເຄື່ອງຜ່ອນແຮງປະເພດລູກລໍ້, ເທັກນິກໃນການເຄື່ອນຍ້າຍກ້ອນຫີນ, ເຄື່ອງມືສະກັດຫີນ, ການເກັບຮັກສາ ຊາກສົບບໍ່ໃຫ້ເນົ່າເປື່ອຍ ແລະ ອື່ນໆ.



ປີລະມິດ ເອຢິບ

ຕົວຢ່າງ: ວິທີການຮັກສາຮ່າງກາຍຂອງຜູ້ຕາຍໄວ້ບໍ່ໃຫ້ເນົ່າເປື່ອຍດ້ວຍສານເຄມີບາງຢ່າງແລ້ວ ໃຊ້ຜ້າຫຸ້ມຫໍ່ຮ່າງກາຍໄວ້. ຊາກສົບທີ່ຮັກສາໄວ້ນີ້ເອີ້ນວ່າ: ມຳມີ້ (Mummy).



ມຳມີ້

ຜົນງານທີ່ສຳຄັນອີກປະເພດຫນຶ່ງທີ່ເຮັດໃຫ້ຄົນຮຸ່ນຫຼັງໄດ້ຮູ້ເລື່ອງຄວາມເປັນມາຂອງຊາວເອຢິບ ບູຮານຄືການປະດິດຕົວອັກສອນແທນສຽງໄດ້ເມື່ອປະມານ 4,000 ປີ ກ່ອນ ຄ.ສ ເຊິ່ງມີທັງຫມົດ 3 ແບບຄື: ແບບເຮຍໂຣກຣິບຟິກ, ແບບເຮຍຣາຕິກ ແລະ ແບບເດໂມຕິກ.




ຕົວອັກສອນເຮຍໂຣກຣິບຟິກ (Hieroglyphic)



ຕົວອັກສອນແບບເຮຍຣາຕິກ(Hieratic)

ຜົນງານອີກດ້ານຫນຶ່ງທີ່ຊາວເອຢິບບູຮານປະໄວ້ແກ່ຊາວໂລກຄື: ງານປະຕິມາກຳທີ່ພັດທະນາໄປພ້ອມກັບວຽກງານສະຖາປັດຕະຍະກຳເຊັ່ນ: ການຄວັດ, ການປັ້ນ, ປະຕິມາກຳ ທີ່ສຳຄັນຂອງຊາວເອຢິບບູຮານຄື: ແຜ່ນຫີນນາເມີ" ທີ່ເປັນຮູບຟາຣາອົງ ໃສ່ມົງກຸດ, ແຜ່ນຫີນ ນີ້ປະດິດຂຶ້ນເມື່ອປະມານ 3,000 ປີ ກ່ອນ ຄ.ສ ແລະ ກາຍເປັນຕົວແບບຂອງວຽກງານປະຕິມາກຳຂອງເອຢິບໃນໄລຍະຕໍ່ມາ.



ສະຟິງແຫ່ງກີເຊ

## 2.3. ອະລິຍະທຳຈີນບູຮານ

ບໍລິເວນດິນແດນລ້ອງແມ່ນ້ຳຮ່ວງໂຫ ແລະ ເຂດທົ່ງພຽງທາງພາກເຫນືອຂອງປະເທດຈີນໃນປັດຈຸບັນຄືແຫຼ່ງກຳເນີດອະລິຍະທຳຈີນໃນສະໄຫມທຳອິດເມື່ອປະມານ 4.000-3.000 ປີ ກ່ອນ ຄ.ສ. ຈາກນັ້ນຈຶ່ງຂະຫຍາຍລົງມາທາງພາກກາງ ແລະ ພາກໃຕ້ຂອງປະເທດ.

ອະລິຍະທຳຈີນເປັນອະລິຍະທຳທີ່ມີພັດທະນາການຕໍ່ເນື່ອງມາຕັ້ງແຕ່ສະໄຫມຫີນຈົນເຖິງສະຕະວັດທີ XXI ແລະ ເປັນອະລິຍະທຳທີ່ມີອິດທິພົນຕໍ່ກັບບັນດາປະເທດໃນອາຊີຕາເວັນອອກ ແລະ ຕາເວັນອອກສ່ຽງໃຕ້. ຫຼັກຖານທີ່ບົ່ງບອກເຖິງດິນແດນຈີນທີ່ມີມະນຸດອາໄສມາແຕ່ດຶກດຳບັນຄື: ການຄົ້ນພົບໂຄງກະດູກມະນຸດບຸຮານ ທີ່ເອີ້ນວ່າ "ມະນຸດປັກກິ່ງ” ທີ່ມີອາຍຸປະມານ 600.000-500.000 ປີກ່ອນຄ.ສ ແລະ ເຄື່ອງມືໃນຍຸກຫີນເກົ່າ.

ຜົນງານເດັ່ນທາງວັດທະນະທຳແມ່ນຄວາມເຊື່ອ ແລະ ສາສະຫນາເຊັ່ນ: ຄວາມເຊື່ອກ່ຽວກັບທຳມະຊາດ, ການບູຊາບັນພະບຸລຸດ, ການສ່ຽງທວາຍ ຫຼື ການທຳນາຍ, ຄວາມເຊື່ອກ່ຽວກັບສະຫວັນ. ໂດຍສະເພາະຄວາມເຊື່ອກ່ຽວກັບການສ່ຽງທວາຍນັ້ນຄົນຈີນມີຄວາມເຊື່ອຢ່າງຫຼວງຫຼາຍໃນຊີວິດປະຈຳວັນ. ດັ່ງນັ້ນ, ຄົນຈີນຈຶ່ງນຳເອົາກະດູກມາຂຽນເປັນຄຳຖາມແລ້ວນຳໄປເຜົາໄຟແລ້ວກໍທຳນາຍໄປຕາມຮອຍແຕກຂອງກະດູກນັ້ນ.

ທາງດ້ານອັກສອນສາດຄືການປະດິດຕົວອັກສອນແບບຮູບພາບເຊິ່ງມີປະມານ 2.000 ກວ່າໂຕ ດ້ານດາລາສາດການແຕ້ມແຜນທີ່ ບອກຕຳແຫນ່ງດວງດາວຕ່າງໆໃນທ້ອງຟ້າ, ການປະດິດປະຕິທິນ, ການປະດິດເຂັມຊີ້ທິດ(ເຂັມທິດ) ແລະ ເຄື່ອງວັດແທກແຜ່ນດິນໄຫວ.

ນອກຈາກນີ້ ຄົນຈີນຍັງມີຄວາມໂດດເດັ່ນທາງດ້ານສະຖາປັດຕະຍະກຳຄືການສ້າງຫໍປາສາດລາຊະວັງ, ວັດ ແລະ ສຸສານທີ່ໃຫຍ່ໂຕມະໂຫຖານ, ໃນນັ້ນ ສິ່ງທີ່ເດັ່ນກວ່າຫມູ່ ຄືການສ້າງກຳແພງເມືອງຈີນໃນສະໄຫມພະເຈົ້າຫສິນຊີຮອງເຕ້ (Tsin-Chi-Houang ti) ທີ່ມີຄວາມຍາວທັງຫມົດ 2.400 ກິໂລແມັດ



ກຳແພງເມືອງຈີນ



ສຸສານບູຮານ

### 3.4. ອະລິຍະທຳອິນເດຍ

ອະລິຍະທຳອິນເດຍບູຮານເປັນອະລິຍະທຳທີ່ເກີດຂຶ້ນໃນດິນແດນອັນກວ້າງໃຫຍ່ໄພສານໃນແຖບອາຊີໃຕ້ ແລະ ເປັນຮາກຖານແຫ່ງອະລິຍະທຳຂອງຄົນຫຼາຍພັນລ້ານຄົນທີ່ດຳລົງຊີວິດໃນແຖບອາຊີໃຕ້, ຕາເວັນອອກສ່ຽງໃຕ້ ແລະ ອາຊີຕາເວັນອອກໃນປັດຈຸບັນ. ອະລິຍະທຳອິນເດຍບູຮານເປັນອະລິຍະທຳທີ່ສ້າງໂດຍຄົນສອງກຸ່ມຄື: ພວກດຣາວິດຽງ ແລະ ພວກອາຣະຍັນ.

ອະລິຍະທຳທີ່ສ້າງໂດຍກຸ່ມຄົນດຣາວິດຽງເອີ້ນວ່າ: "ສະລິຍະທຳສິນທຸ" ເຊິ່ງເກີດຂຶ້ນເມື່ອປະມານ 4.500 ປີ ກ່ອນ ຄ.ສ ຄົງຕົວມາຮອດ 1.500 ປີ ກ່ອນ ຄ.ສ ຈຶ່ງໄດ້ສູນຫາຍໄປ. ການຫາຍໄປຂອງອະລິຍະທຳ ສິນທຸນັກປະຫວັດສາດເຊື່ອວ່າ ມີສາເຫດມາຈາກໄພທຳມະຊາດ ຫຼື ໄພສົງຄາມ.

ລັກສະນະຂອງອະລິຍະທຳສິນທຸຄືການທຸ້ມເທກຳລັງຊັບ, ກຳລັງແຮງງານ ແລະ ສະຕິປັນຍາ ເພື່ອກິດຈະການໃນການກໍ່ສ້າງທີ່ເນັ້ນຜົນປະໂຫຍດໃຊ້ສອຍ, ຄວາມເປັນລະບຽບ ແລະ ສຸຂະອະນາໄມເປັນສິ່ງສຳຄັນ. ເວົ້າລວມແລ້ວ ພູມປັນຍາທີ່ຊາວສິນທຸປະໄວ້ໃຫ້ແກ່ຊາວໂລກ ກໍຄືຄວາມຮູ້ທີ່ໄດ້ຈາກການວາງ ຜັງເມືອງ, ການກໍ່ສ້າງທີ່ຄຳນຶງເຖິງຫຼັກສຸຂະອະນາໄມ. ສິ່ງດັ່ງກ່າວພິສູດໄດ້ຈາກການຄົ້ນພົບຊາກ ຕົວເມືອງ 2 ແຫ່ງທີ່ມີລັກສະນະຄ້າຍຄືກັນ

ທີ່ເມືອງ ໂມແຮນໂຈດາໂຣ ( Mohenjo Daro) ແລະ ເມືອງຮາຣັບປາ (Haragra) ເປັນຫຼັກຖານສໍາຄັນທີ່ສະແດງເຖິງເມືອງທີ່ມີການອອກແບບວາງຜັງເມືອງ ແລະ ເນັ້ນຄວາມສະອາດ ເປັນສິ່ງສໍາຄັນ. ອະລິຍະທໍາທີ່ສ້າງໂດຍຊາວອາຣະຍັນເອີ້ນວ່າ: "ອະລິຍະທໍາອາຣະຍັນ". ອະລິຍະທໍານີ້ເກີດຂຶ້ນເມື່ອປະມານ 1.500 ປີ ກ່ອນ ຄ.ສ. ລັກສະນະເດັ່ນຂອງອະລິຍະທໍາອາຣະຍັນຄື: ລະບົບການແບ່ງຊັ້ນວັນນະ.

ລະບົບວັນນະເກີດຂຶ້ນ ເມື່ອຄົນອາຣະຍັນເຂົ້າມາຮ່ວມກັນກັບກຸ່ມຄົນພື້ນເມືອງເດີມຄືພວກດຣາວິດຽງ. ຈຸດປະສົງຂອງການຈັດລະບົບຊັ້ນວັນນະກໍເພື່ອຈັດຖານະຄົນຕາມສາຂາອາຊີບອອກເປັນໂຄງສ້າງຂອງສັງຄົມ ແລະ ເພື່ອສະກັດກັ້ນການປະສົມປະສານກັນຂອງກຸມຊົນ ໂດຍສະເພາະກຸ່ມຄົນອາຣະຍັນ ແລະ ດຣາວິດຽງ.

ຜົນງານເດັ່ນຂອງອະລິຍະທໍາອິນເດຍບູຮານ ທີ່ປະໄວ້ໃຫ້ແກ່ຊາວໂລກ ແມ່ນຄວາມເຊື່ອ ຫຼື ສາສະໜາ ເຊັ່ນ ສາສະໜາຮິນດູ ແລະ ສາສະໜາພຸດ...

ຕົວຢ່າງ: ໃນປັດຈຸບັນມີປະຊາກອນທີ່ເຊື່ອຖືສາສະໜາພຸດປະມານ 500 ກວ່າລ້ານຄົນ ແລະ ເຊື່ອຖືສາສະໜາຮິນດູປະມານ 300 ລ້ານກວ່າຄົນ.



ເມືອງບູຮານ ໂມແຮນໂຈດາໂຣ Mohenjo Dar



ເມືອງບູຮານ ຮາຣັບປາ

ໃນດ້ານອັກສອນສາດນັ້ນຖືວ່າຊາວອິນເດຍເປັນກຸມຄົນໜຶ່ງໃນອາຊີທີ່ມີຜົນງານອັນໃຫຍ່ຫຼວງໃນການຄົ້ນຄິດ ແລະ ປະດິດຕົວອັກສອນໃຫ້ຂຶ້ນຫຼາຍຊາດໄດ້ນໍາໄປໃຊ້ຢ່າງກວ້າງຂວາງ ຄືພາສາສັນສະກຣິດ ແລະ ພາສາບາລີ ຜົນງານອີກດ້ານໜຶ່ງທີ່ສໍາຄັນຄືການປະດິດຕົວເລກທີ່ເຮົາໃຊ້ກັນໃນປັດຈຸບັນຄື: “ຕົວເລກສາກົນ: 1, 2, 3" ເຊິ່ງຮູ້ຈັກກັນດີໃນນາມ "ເລກອາຣັບ ແລະ ການປະດິດເລກສູນ 0 ອອກໃຊ້.

## 3.ອະລິຍະທໍາຕາເວັນຕົກ

### 3.1. ອະລິຍະທໍາເກຼັກບູຮານ

ດິນແດນຂອງກະເຣັກໃນສະໄໝບູຮານກໍ່ຄືປັດຈຸບັນຕັ້ງຢູ່ໃນແຫຼມບານກັງ (Balkan) ໃນທະເລອີຈຽນ (Aegean Sea) ທາງພາກໃຕ້ຂອງທະວີບເອີຣົບ ເຊິ່ງມີອານາເຂດກວມເອົາທັງແຜ່ນດິນໃຫຍ່ (Contiental) ແລະ ເກາະດອນ (Island). ພູມສັນຖານໃນແຜ່ນດິນໃຫຍ່ຈະເຕັມໄປດ້ວຍພູຫີນປູນເປັນຈໍານວນຫຼາຍ ຈຶ່ງໄດ້ກາຍເປັນອຸປະສັກ ຕໍ່ການທໍາມາຫາກິນຂອງຊາວກະເຣັກພໍສົມຄວນ. ສ່ວນຕອນດິນທີ່ຢູ່ກາງທະເລ ປະກອບມີບັນດາໝູ່ເກາະດອນນ້ອຍໃຫຍ່ຕ່າງໆເປັນຈໍານວນຫຼວງຫຼາຍ ຢູ່ໃນບໍລິເວນທະເລເມດີແຕຣາເນ ເຊິ່ງໄດ້ກາຍເປັນເງື່ອນໄຂສະດວກໃຫ້ແກ່ການຕິດຕໍ່ພົວພັນກັບໂລກພາຍນອກໄດ້ເປັນຢ່າງດີ.

ເນື່ອງຈາກເນື້ອທີ່ສ່ວນໃຫຍ່ຂອງປະເທດປະກອບໄປດ້ວຍພູ ແລະ ສະພາບຂອງດິນທີ່ບໍ່ມີຄວາມອຸດົມສົມບູນສຳລັບການທຳມາຫາກິນ ຊາວກະເຣັກບູຮານສ່ວນຫຼາຍຈຶ່ງມີອາຊີບລ່າສັດ ແລະ ລ້ຽງສັດພຽງເລັກນ້ອຍ. ຊາວກະເຣັກຈຳນວນບໍ່ໜ້ອຍໄດ້ອາໄສຢູ່ໃນຮ່ອມພູ ແລະ ທົ່ງພຽງແຄບໆ ທີ່ອ້ອມຮອບໄປດ້ວຍພູນັ້ນ ບໍ່ຄ່ອຍຈະໄດ້ພົບເຫັນຄົນຕ່າງຖິ່ນ ແລະ ການ ຕິດຕໍ່ທາງຄົມມະນາຄົມລະຫວ່າງເມືອງ ຫຼື ນະຄອນລັດຕ່າງໆ ກໍ່ມີຄວາມຫຍຸ້ງຍາກລຳບາກ ຈຶ່ງບໍ່ສາມາດຈະເຕົ້າໂຮມເຂົ້າເປັນລັດອັນໜຶ່ງອັນດຽວກັນໄດ້ ເຮັດໃຫ້ມີການປົກຄອງຕົນເອງ ແບບອິດສະຫຼະພໍໃຜພໍລາວ. ແຕ່ເມື່ອປະຊາກອນໄດ້ເພີ່ມຂຶ້ນ ກະເຣັກຈຶ່ງປະສົບບັນຫາການຂາດເຂີນອາຫານ ແລະ ເປັນສາເຫດເຮັດໃຫ້ນະຄອນລັດຕ່າງໆຕ້ອງກໍ່ສົງຄາມ, ຂ້າຟັນກັນເອງ ເພື່ອຍາດແຍ່ງທີ່ດິນສຳລັບການກະສິກຳ.

**1) ກຸ່ມຄົນທີ່ເຂົ້າມາອາໄສຢູ່ໃນດິນແດນກະເຣັກ**

ປະຊາກອນໃນດິນແດນຂອງກະເຣັກເປັນຊາວອິນໂດ-ເອີຣົບ ໃນສະຕະວັດທີ XII ກ່ອນ ຄ.ສ ພວກດໍຣຽນ (Dorian) ເປັນກຸ່ມຄົນທຳອິດທີ່ໄດ້ບຸກລຸກເຂົ້າໃນບໍລິເວນແຫຼມບານກັງ (Balkan) ແລະ ໄດ້ທຳລາຍອາລິຍະທຳຂອງຊາວມີເຊນຽນ (Myceneans). ຈາກນັ້ນກໍໄດ້ຂະຫຍາຍການຮຸກຮານເຂົ້າທາງພາກໃຕ້ຂອງກະເຣັກໂດຍໄດ້ຍຶດຄອງນະຄອນຕ່າງໆເຊັ່ນ: ສະປາກຕາ (Sparta), ຄໍຣິນ (Carint), ເມກາຣາ (Megara) ແລະ ອາກ໋ອດ (Argos), ພວກເຂົາໄດ້ກົດຂີ່ຂູດຮີດຊາວພື້ນເມືອງດ້ວຍການນຳມາເປັນຂ້າທາດຮັບໃຊ້ ແລະ ພວກດໍຣຽນບາງກຸ່ມໄດ້ໄປຕັ້ງຖິ່ນຖານຢູ່ເກາະຄີຣດ (Cretc) ແລະ ໃນບໍລິເວນອາຊີນ້ອຍ (Asia Minor).

ກຸ່ມທີ 2 ເປັນພວກໄອໂອນຽນ (lonian) ທີ່ມາຈາກທິດຕາເວັນຕົກຂອງທະເລດຳ (Black Sea) ເຊິ່ງສ່ວນຫຼາຍຕັ້ງຖິ່ນຖານຢູ່ເຂດບໍລິເວນແອດຕິກາ (Attica) ໂດຍມີນະຄອນເອເທນ (Athens) ເປັນເມືອງສຳຄັນ ແລະ ບາງກຸ່ມຍັງໄດ້ໄປຕັ້ງຖິ່ນຖານໃນໝູ່ເກາະອີຈຽນ (Aege Islans) ແລະ ແຄມຝັ່ງທະເລອາຊີນ້ອຍເຊັ່ນກັນ.

ກຸ່ມຄົນທັງສອງທີ່ເຂົ້າມາອາໄສຢູ່ໃນດິນແດນດັ່ງກ່າວ ລ້ວນແຕ່ໄດ້ຮັບອິດທິພົນຈາກອາລິຍະທຳຂອງກຸ່ມຄົນມີເຊນຽນ ທີ່ອາໄສຢູ່ ແລະ ສ້າງສາລິຍະທຳຂຶ້ນໃນເກາະຄຣີດ ໃນ ທະເລອີຈຽນ ເຊິ່ງນັກປະຫວັດສາດເອີ້ນຊື່ກຸ່ມຄົນທັງສອງ ທີ່ອາໄສຢູ່ໃນນະຄອນລັດຕ່າງໆວ່າ ຊາວກະເຣັກ. ໃນແຕ່ລະນະຄອນລັດມີການແຍກອອກຈາກກັນໂດຍມີພູ ແລະ ທະເລຂັ້ນເອົາໄວ້ ຈຶ່ງມີການປົກຄອງຕົນເອງແບບອິດສະຫຼະແຕ່ກໍມີການຂັດແຍ່ງ ແລະ ກໍ່ສົງຄາມຮຸກຮານເຊິ່ງກັນ ແລະ ກັນຕະຫຼອດເວລາ. ເຖິງຢ່າງໃດກໍຕາມປະຊາຊົນໃນນະຄອນລັດຕ່າງໆ ກໍຄິດ ສະເໝີວ່າຕົນເປັນຄົນເຊື້ອສາຍດຽວກັນຄື: ເປັນຊາວກະເຣັກ ຫຼື ເຮວເລນ (Hellenes) ທີ່ໃຊ້ພາສາ, ມີຂະນົບທຳນຽມ ແລະ ມີພະເຈົ້າອົງດຽວກັນ.

**2) ການຄົ້ນຫາດິນແດນໃໝ່**

ເນື່ອງຈາກສະພາບພູມີປະເທດທີ່ບໍ່ໄດ້ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການທຳມາຫາກິນເພື່ອລ້ຽງຊີບ ຊາວກະເຣັກ ຈຶ່ງມັກປະສົບກັບບັນຫາການຂາດແຄນອາຫານໃນການດຳລົງຊີວິດມາໂດຍຕະຫຼອດ, ດັ່ງນັ້ນ, ຊາວກະເຣັກຜູ້ທຸກຍາກຈຳນວນໜຶ່ງຈຶ່ງໄດ້ໜີອອກຈາກບ້ານເດີມຜ່ານທາງທະເລໄປຫາສະຖານທີ່ແຫ່ງໃໝ່ເພື່ອຊີວິດທີ່ດີກວ່າ, ແຕ່ການດຳລົງຊີວິດຢູ່ແຄມຝັ່ງທະເລກໍເປັນເລື່ອງຍາກລຳບາກທີ່ສຸດເຊັ່ນກັນ ເພາະວ່າຊາວກະເຣັກບໍ່ເຄີຍຮູ້ຈັກການສ້າງເຮືອ ແລະ ພະຈົນໄພໃນທະເລເລີກມາກ່ອນ.

ເມື່ອປະມານປີ 800 ກ່ອນ ຄ.ສ ເຮືອໃຫຍ່ລຳທຳອິດຂອງກະເຣັກໄດ້ອອກຈາກແຜ່ນດິນໃຫຍ່ເດີນທາງຜ່ານທະເລມາເຖິງບໍລິເວນຕອນໃຕ້ຂອງອີຕາລີ ເຊິ່ງເປັນດິນແດນທີ່ຮາບພຽງ, ມີຄວາມອຸດົມສົມບູນໄປດ້ວຍປ່າໄມ້ ແລະ ແມ່ນ້ຳລຳເຊ. ຊາວກະເຣັກຈຶ່ງໄດ້ພາກັນປັກຫຼັກຕັ້ງບ້ານເຮືອນຢູ່ທີ່ນັ້ນ ແລະ ຕໍ່ມາປະຊາກອນກໍໄດ້ເພີ່ມທະວີຂຶ້ນຢ່າງໄວວາຈົນໃນທີ່ສຸດນິຄົມຂອງຊາວກະເຣັກກໍຂະຫຍາຍຕົວເປັນຕົວເມືອງໃຫຍ່ຄືດັ່ງນະຄອນໃນກະເຣັກທີ່ພວກຕົນປະຖິ້ມມາ.

ເມື່ອຊາວກະເຣັກໄດ້ຮຽນຮູ້ໂລກອ້ອມຕົວໄດ້ຫຼາຍຂຶ້ນໂດຍສະເພາະການສ້າງເຮືອ, ການເດີນເຮືອ ແລະ ການພະຈົນໄພໃນທະເລ ພວກເຂົາເຈົ້າຈຶ່ງມີການຂະຫຍາຍນິຄົມຢູ່ແຫ່ງໃຫມ່ ເຊັ່ນ: ບໍລິເວນຝັ່ງທະເລອາຊີນ້ອຍ, ອາຟຣິກາເຫນືອ, ບໍລິເວນທະເລດຳ, ປະເທດຝຣັ່ງ, ແອັດສະປາຍ ແລະ ບໍລິເວນແຄມຝັ່ງທະເລຕວກກີ (Turkey) ເຊິ່ງຕໍ່ມາອະນານິຄົມຂອງກະເຣັກກໍ່ຕັ້ງຢູ່ທົ່ວບໍລິເວນທະເລເມດິແຕຣາເນ ລວມທັງມີການພັດທະນາທາງດ້ານການຄ້າ ແລະ ອຸດສາຫະກຳຂອງຕົນຂຶ້ນມາ, ພ້ອມນັ້ນຮຍັງໄດ້ມີການຕິດຕໍ່ພົວພັນກັບຕ່າງປະເທດອີກ.

**3) ການສ້າງຕັ້ງນະຄອນລັດ ແລະ ຮູບແບບການປົກຄອງ**

ນະຄອນລັດກົງກັບຄຳສັບໃນພາສາອັງກິດທີ່ວ່າ City State ເຊິ່ງຫມາຍເຖິງສູນກາງການປົກຄອງ, ເສດຖະກິດ ແລະ ສັງຄົມຂອງຊາວກະເຣັກໃນສະໄຫມບູຮານສ່ວນຊາວກະເຣັກເອີ້ນນະຄອນລັດຂອງຕົນເອງວ່າ "ໂປລິດ" (Polis). ນະຄອນລັດເປັນຫົວຫນ່ວຍພື້ນຖານການດຳລົງຊີວິດຂອງຊາວກະເຣັກ ເຊິ່ງປະກອບໄປດ້ວຍສ່ວນທີ່ເປັນຕົວເມືອງ ຫຼື ນະຄອນ ແລະ ຊານເມືອງ. ຕົວເມືອງ ຫຼື ນະຄອນ ເປັນທີ່ຕັ້ງຂອງບັນດາສຳນັກງານ, ອົງການ, ໂບດ, ວິຫານ ແລະ ສະຖານທີ່ສຳຄັນອື່ນໆ. ສ່ວນທີ່ເປັນຊານເມືອງຈະເປັນດິນອ້ອມຮອບໃຈກາງເມືອງ, ເປັນທີ່ຢູ່ອາໄສຂອງພວກສາມັນຊົນ, ເປັນບ່ອນດຳເນີນການຜະລິດເຊັ່ນ: ປູກຝັງ ແລະ ລ້ຽງສັດ, ເປັນສູນກາງການຄ້າ ແລະ ເສດຖະກິດ. ບຸກຄົນທີ່ມີສິດເປັນສະມາຊິກຂອງນະຄອນລັດຕ້ອງເປັນພົນລະເມືອງຂອງລັດນັ້ນໂດຍກຳເນີດ ສ່ວນຊາວຕ່າງນະຄອນ, ຂ້າທາດ ແລະ ຜູ້ຍິງ ບໍ່ມີສິດເປັນສະມາຊິກຂອງນະຄອນຢ່າງເດັດຂາດ.

ພົນລະເມືອງທຸກຄົນໃນລັດມີຄວາມເຊື່ອວ່າ ພວກເຂົາເປັນຍາດພີ່ນ້ອງກັນ ແລະ ມີເທບພະເຈົ້າອົງດຽວກັນເປັນຜູ້ໃຫ້ກຳເນີດປະຊາຊົນຂອງແຕ່ລະລັດ, ການໃຫ້ຄົນຕ່າງຖິ່ນເຂົ້າມາຮ່ວມໃນວົງຄະນາຍາດ ແລະ ຮ່ວມປະກອບພິທີກຳທາງສາສະຫນາໃນລັດດຽວກັນຈະເປັນບາບຢ່າງຫນັກ. ດ້ວຍເຫດນັ້ນນະຄອນລັດຕ່າງໆຈຶ່ງບໍ່ຍອມຮັບຄົນຕ່າງລັດເຂົ້າເປັນພົນລະເມືອງ ແລະ ບໍ່ຍອມລວມກັບລັດອື່ນ ເພື່ອໃຫ້ເປັນລັດໃຫຍ່ຄືກັບພາກຕາເວັນອອກ. ນອກຈາກນັ້ນ, ພູມີປະເທດທີ່ມີຄວາມສະຫຼັບຊັບຊ້ອນ ກໍເປັນສາເຫດອັນຫນຶ່ງທີ່ເຮັດໃຫ້ມີການແບ່ງແຍກທ້ອງຖິ່ນຕ່າງໆອອກເປັນຫຼາຍເຂດແຄວ້ນຢັ່ງຢາຍຢູ່ຕາມຫວ່າງພູຈຶ່ງກາຍເປັນທີ່ຕັ້ງຂອງນະຄອນລັດນ້ອຍໆທີ່ປົກຄອງຕົນເອງໂດຍອິດສະຫຼະ.

ໃນເບື້ອງຕົ້ນລະບົບການປົກຄອງຂອງຊາວກະເຣັກຈະໃຊ້ວິທີການປົກຄອງແບບພໍ່ບ້ານ ແຕ່ເມື່ອກາຍເປັນນະຄອນລັດແລ້ວແຕ່ລະລັດຈະມີຮູບແບບການປົກຄອງທີ່ແຕກຕ່າງກັນເຊັ່ນ: ການປົກຄອງແບບລະບອບລາຊາທິປະໄຕ (Monarchy), ຄະນາທິປະໄຕ ຫຼື ກຸ່ມຄົນຮັ່ງມີ (Oligarchy), ປະຊາທິປະໄຕ (Democracy) ແລະ ລະບອບທໍຣະຣາດ Tyrany (ທໍຣະຣາດ ແປວ່າການປົກຄອງແບບກົດຂີ່ຂູດຮີດ ຫຼື ການປົກຄອງແບບຜະເດັດການ) ເຊິ່ງແຕ່ລະນະຄອນລັດ ໄດ້ມີການນຳໃຊ້ຮູບແບບການປົກຄອງດັ່ງກ່າວນັ້ນຕາມຄວາມເຫມາະສົມ ແລະ ຄວາມຕ້ອງການຂອງຕົນເຊັ່ນ:

### ກ. ນະຄອນລັດເອທານອາແຕນ (Athens)

ເອເທນ ຕັ້ງຢູ່ແຫຼມ ແອດຕິກາ (Attica) ມີເນື້ອທີ່ປະມານ 1/3 ຂອງນະຄອນສະປາກຕາ ກໍຄືປະມານ 98.47 ກິໂລແມັດມົນທົນ ເປັນດິນແດນທີ່ແຫ້ງແລ້ງທີ່ສຸດ ບໍ່ເຫມາະສົມໃນການຜະລິດທາງດ້ານການກະສິກຳ ແຕ່ຢູ່ໃກ້ທະເລ ຊາວເອເທນຈຶ່ງຫັນໄປສູ່ການຄ້າຂາຍ ແລະ ການເດີນເຮືອຫຼາຍກວ່ານະຄອນອື່ນໆ. ດັ່ງນັ້ນ, ນະຄອນເອເທນ ຈຶ່ງກາຍເປັນສັງຄົມເມືອງ ເພາະພົນລະເມືອງທີ່ມີອາຊີບທາງການຄ້າຂາຍມັກຈະລວມກັນຢູ່ໃນເມືອງເປັນສ່ວນຫຼາຍ.

ໃນໄລຍະຕົ້ນການປົກຄອງຂອງເອເທນຕົກຢູ່ໃນກຳມືຂອງພວກຂຸນນາງທີ່ເປັນເຈົ້າຂອງທີ່ດິນໃຫຍ່ ໂດຍມີການສືບທອດກັນມາຫຼາຍຊົ່ວອາຍຸຄົນ ແຕ່ມາໃນສະຕະວັດທີ VII ກ່ອນ ຄ.ສ ຖານະຂອງຄົນໃນສັງຄົມໄດ້ມີການປ່ຽນແປງໄປ ເຮັດໃຫ້ພວກຂຸນນາງເລີ່ມຫມົດຄວາມສຳຄັນລົງ, ເນື່ອງຈາກການປ່ຽນແປງທາງດ້ານເສດຖະກິດ ໂດຍສະເພາະການຄ້າ ແລະ ອຸດສາຫະກຳໄດ້ຂະຫຍາຍຕົວຢ່າງໄວອາຈຶ່ງເຮັດໃຫ້ພວກພໍ່ຄ້າເລີ່ມຮັ່ງມີຂຶ້ນ, ສິ່ງຜົນເຮັດໃຫ້ຜູ້ທີ່ມີຕຳແຫນ່ງສູງໃນທາງການເມືອງກາຍເປັນພວກທີ່ມີຊັບສິນເງິນຄຳ.

ໃນໄລຍະຕໍ່ມາລະບົບການປົກຄອງໃນເອເທນກໍໄດ້ມີການປັບປຸງ ແລະ ພັດທະນາມາເປັນລຳດັບ.ພາຍຫຼັງໂຊລອນ (Solon) ຂຶ້ນກຳອຳນາດໃນປີ 594 ກ່ອນ ຄ.ສ ໄດ້ມີການກຳນົດເອົາຖານະທາງດ້ານເສດຖະກິດ ແລະ ຊັບສົມບັດເປັນເຄື່ອງບົ່ງສິດໃນການຮັບຕຳແຫນ່ງທາງການປົກຄອງໂດຍບໍ່ໄດ້ຈຳກັດວ່າ ມີລາຍໄດ້ຈາກທີ່ດິນ ຫຼື ຈາກການຄ້າຂາຍ; ມີການປັບປຸງລະບຽບການປົກຄອງບ້ານເມືອງໃຫ້ດີຂຶ້ນ ເພື່ອປະໂຫຍດຂອງພົນລະເມືອງທຸກຊັ້ນຄົນ ໂດຍໄດ້ອອກກົດຫມາຍປົດຫນີ້ສິນ ແລະ ຄວາມເປັນທາດຂອງຄົນທຸກຍາກພ້ອມທັງເອົາທີ່ດິນຂອງຜູ້ທຸກຍາກທີ່ເອົາໄປຈຳນຳໄວ້ກັບພວກຮັ່ງມີນັ້ນສົ່ງຄືນ ເພື່ອໄປທຳມາຫາກິນ, ຈັດຕັ້ງສານສູງສຸດຂອງປະຊາຊົນຂຶ້ນໃຫມ່ປະກອບດ້ວຍພົນລະເມືອງທີ່ມີອາຍຸສູງກວ່າ 30 ປີໂດຍບໍ່ໄດ້ຈຳກັດຄົນທຸກ ຫຼື ຮັ່ງມີ ແລະ ມີການຈັບສະຫຼາກກັນໃຫ້ເປັນຕຸລາການຕັດສິນຄະດີ.

ການປະຕິຮູບດັ່ງກ່າວເຖິງວ່າຈະຍຶດຖືທີ່ດິນ ຫຼື ຊັບສົມບັດເປັນຫຼັກໃນການກຳນົດສິດທິ ແລະ ຫນ້າທີ່ການເມືອງກໍຕາມ ແຕ່ກໍມີສ່ວນເປັນປະຊາທິປະໄຕຫຼາຍພໍສົມຄວນ ຖືໄດ້ວ່າເປັນການເລີ່ມຕົ້ນໃນການກ້າວໄປສູ່ລະບອບປະຊາທິປະໄຕ. ໃນປີ 509 ກອນ ຄ.ສ ຄະເລດຕິນິດ (Cleisthenes) ໄດ້ທຳການປັບປຸງລະບົບການປົກຄອງນະຄອນລັດເພື່ອໃຫ້ເປັນປະຊາປະທິໄຕຫຼາຍຂຶ້ນໂດຍມີຈຸດປະສົງໃຫຍ່ 2 ຢ່າງຄື:

1. ລວມຄົນທຸກຊັ້ນຄົນເຂົ້າໄວ້ໃນທະບຽນສຳມະໂນຄົວດຽວກັນ (ທັງຄົນຊັ້ນຕ່ຳ ແລະ ຊັ້ນສູງ) ໂດຍໃຫ້ສິດທິອອກສຽງສະເຫມີກັນ.
2. ຍົກເລີກການຈຳແນກກຸ່ມຄົນຕ່າງໆ (ຊາວພູດອຍ, ຊາວທົ່ງພຽງ ແລະ ຊາວທະເລ) ໂດຍໃຫ້ທຸກກຸ່ມລວມເຂົ້າເປັນອັນຫນຶ່ງອັນດຽວກັນ.

ເພື່ອບັນລຸຕາມຈຸດປະສົງດັ່ງກ່າວຄະເລດຕິນິດໄດ້ດຳເນີນການປະຕິຮູບການປົກຄອງຄືນໃຫມ່ເຊັ່ນ:

- ແບ່ງເຂດນະຄອນລັດເອເທນອອກເປັນເຂດນ້ອຍເຖິງ 100 ເຂດໃຫ້ມີການປົກຄອງທ້ອງຖິ່ນຂອງຕົນເອງໂດຍໃຫ້ມີສະພາ, ເຈົ້າຫນ້າທີ່ ແລະ ໄດ້ແບ່ງພົນລະເມືອງໃຫ້ຂຶ້ນກັບເຂດໃດເຂດຫນຶ່ງຢ່າງສິ້ນເຊີງ.

- ລວມເຂດນ້ອຍເຂົ້າກັນເປັນ 10 ເຂດໃຫຍ່ ໂດຍອີງໃສ່ການແບ່ງຕາມເຂດທີ່ຕັ້ງເປັນຫຼັກ ເຊິ່ງພົນລະເມືອງທຸກຄົນມີສິດສະເຫມີພາບກັນ ເຮັດໃຫ້ຂໍ້ຂັດແຍ່ງທີ່ເຄີຍມີມາໃນເມື່ອກ່ອນໄດ້ຍຸດຕິລົງ.
- ໄດ້ຈັດຕັ້ງສະພາຫ້າຮ້ອຍ (Council of Five Hundred) ຂຶ້ນສະມາຊິກສະພາດັ່ງກ່າວຄັດເລືອກມາຈາກ 10 ເຂດໃຫຍ່ ເຂດລະ 50 ຄົນ. ຄະນະສະພາມີ 10 ຄົນເພື່ອໃຫ້ແຕ່ລະເຂດ ມີຜູ້ແທນໃນສະພາ 1 ຄົນ, ສ່ວນກອງທັບກໍໄດ້ແບ່ງອອກເປັນ 10 ກອງທັບ ໂດຍມີແມ່ທັບ 10 ຄົນເປັນຜູ້ບັນຊາ ແລະ ແມ່ທັບທັງ 10 ລວມກັນເປັນສະພາການສົງຄາມ ເຊິ່ງມີຜູ້ບັນຊາການ ທະຫານໃນຄະນະສະພາເປັນປະທານ.

ໃນສະຕະວັດທີ V ກ່ອນ ຄ.ສ ເອເທນ ໄດ້ກາຍເປັນສູນກາງທາງດ້ານເສດຖະກິດຂອງກະເຣັກ ແລະ ໂລກຕາເວັນຕົກ. ການກະສິກຳ ໄດ້ມີການປູກຫມາກອະຫງຸ່ນ ແລະ ຫມາກໂອລິວ (ຫມາກກອກ) ເພື່ອເປັນສິນຄ້າຂາອອກ. ຫັດຖະກຳກໍມີການຂະຫຍາຍຕົວໄວເກີດມີໂຮງຊ່າງ ຫັດຖະກຳໃຫຍ່ຫຼາຍແຫ່ງ, ມີການແບ່ງງານກັນ ແລະ ບາງໂຮງຊ່າງນຳໃຊ້ແຮງງານຂ້າທາດຕັ້ງ ແຕ່ 50-100 ຄົນ ລວມມີຫຼາຍຂະແຫນງການຄື: ການຫຼອມໂລຫະ, ກຳປັ່ນ, ອາວຸດ, ເຄື່ອງດົນຕີ, ເຄື່ອງປັ້ນດິນເຜົາ ແລະ ເຄື່ອງເຄືອບ. ສ່ວນການຄ້າໄດ້ມີການຂະຫຍາຍຕົວຢ່າງກວ້າງຂວາງ ຊາວກະເຣັກໄດ້ທຳການຄ້າຂາຍກັບເຂດຕ່າງໆໃນທົ່ວບໍລິເວນທະເລເມດີແຕຣາເນ ເຊັ່ນ: ພໍ່ຄ້າກະເຣັກໄດ້ຊື້ສິນຄ້າປະເພດໂລຫະຫຼາຍຊະນິດຈາກ ແອັດສະປາຍ, ສາລີຈາກອີຕາລີ ແລະ ທະເລດຳ, ງາຊ້າງ ແລະ ເຈ້ຍຈາກເອຢິບ ແລະ ໄຫມຈາກອາຊີ ໃນຂະນະດຽວກັນກໍຂາຍສິນຄ້າປະເພດນ້ຳມັນຫມາກກອກ, ເຫຼົ້າວາຍ, ໂຖ ແລະ ສິນຄ້າທີ່ສຳຄັນແມ່ນຂ້າທາດ ເອເທນ ຈຶ່ງກາຍເປັນຕະຫຼາດຈຳຫນ່າຍຂ້າທາດທີ່ໃຫຍ່ຂອງໂລກບູຮານ.

ເອເທນ ໄດ້ກາຍເປັນນະຄອນລັດ ແລະ ດຳເນີນການປົກຄອງຕາມລະບອບປະຊາທິປະໄຕ ເຊິ່ງໃນອຸດົມການຂອງລັດຈະໃຫ້ຄວາມສຳຄັນໃນການເຄົາລົບສິດທິສ່ວນບຸກຄົນ ແລະ ຖືເອົາການແລກປ່ຽນຄຳຄິດເຫັນເປັນບັນຫາໃຈກາງ ໂດຍສະເພາະແມ່ນກ່ອນທີ່ຈະຮັບຮອງ ຫຼື ເຊື່ອໃນເລື່ອງໃດຫນຶ່ງຕ້ອງໄດ້ຜ່ານ 3 ຂັ້ນຕອນຄື: ການລວບລວມຂໍ້ມູນ, ການຄົ້ນຫາເຫດຜົນ ແລະ ການທົດລອງ, ນອກຈາກນັ້ນ, ຍັງມີການສົນທະນາ, ຖົກຖຽງ ແລະ ແລກປ່ຽນຂໍ້ຄິດເຫັນ ເພື່ອຫາຄຳຕອບທີ່ຊັດເຈນກ່ຽວກັບເລື່ອງໃດຫນຶ່ງໃຫ້ກັບສັງຄົມ ແລະ ມີຫນ້າທີ່ສ້າງນະຄອນລັດໃຫ້ມີຄວາມສວຍງາມ.

**ຂ. ນະຄອນລັດສະປາກຕາ (Sparta)**

ສະປາກຕາຕັ້ງຢູ່ທາງພາກໃຕ້ຂອງກະເຣັກໃນແຫຼມ ເປໂລໂປນິດສ (Peloponnese) ໃນບໍລິເວນທົ່ງພຽງລາໂຄເນຍ (Plain of Laconia) ເປັນເຂດແຜ່ນດິນແຄບ ແຕ່ກໍມີຄວາມອຸດົມສົມບູນທີ່ສຸດແຫ່ງຫນຶ່ງໃນກະເຣັກ.

ໃນລະຫວ່າງປີ 1.100 ກ່ອນ ຄ.ສ ພວກດໍຣຽນ (Dorian) ເຊິ່ງເປັນກຸ່ມຄົນທີ່ມາຈາກບໍລິເວນແມ່ນ້ຳດານູບ ຢູ່ທາງຕອນໃຕ້ຂອງ ຣັດເຊຍ ໄດ້ບຸກລຸກເຂົ້າໃນບໍລິເວນແຫຼມບານກັງ ແລະ ໄດ້ທຳລາຍອາລິຍະທຳຂອງຊາວມີເຊນຽນ. ຫຼັງຈາກນັ້ນ, ຊາວດໍຣຽນ ໄດ້ປັກຫຼັກຕັ້ງຖິ່ນຖານ ແລະ ດຳລົງຊີວິດຢູ່ທີ່ນັ້ນຈຶ່ງກາຍເປັນຊາວສະປາກຕາຈົນເຖິງປັດຈຸບັນ.

ເຖິງວ່າພູມີປະເທດຈະມີຄວາມອຸດົມສົມບູນກວ່າລັດອື່ນໆແຕ່ສະປາກຕາກໍຍັງປະສົບກັບບັນຫາທາງດ້ານອາຫານ ໂດຍສະເພາະຜົນຜະລິດທາງດ້ານກະສິກຳບໍ່ພຽງພໍສຳລັບການບໍລິໂພກ ເພາະວ່າປະຊາກອນນັບມື້ມີການເພີ່ມຂຶ້ນເລື້ອຍໆ. ດັ່ງນັ້ນ, ສະປາກຕາ ຈຶ່ງແກ້ບັນຫາດັ່ງກ່າວດ້ວຍການບຸກລຸກເຂົ້າໄປຍຶດຄອງດິນແດນຂອງຄົນອື່ນ ແລະ ນຳເອົາຄົນມາເປັນທາດຮັບໃຊ້ ແຕ່ພວກທາດມັກຈະລຸກຮື້ຂຶ້ນຕໍ່ສູ້ເລື້ອຍໆ ດ້ວຍເຫດນີ້ຊົນຊັ້ນປົກຄອງຂອງ ສະປາກຕາ ຈຶ່ງສ້າງຕັ້ງກອງທັບໃຫ້ມີຄວາມເຂັ້ມແຂງຢູ່ສະເໝີ ເພື່ອດຳເນີນການປາບປາມພວກຂ້າທາດ ແລະ ພວກກະບົດດິນແດນ.

ນະໂຍບາຍສັງຄົມໄດ້ເນັ້ນໜັກທາງການທະຫານເຮັດໃຫ້ ສະປາກຕາ ເປັນນະຄອນລັດ ມີກອງທັບເຂັ້ມແຂງ, ເປັນການປົກຄອງປະເທດດ້ວຍກຳລັງທະຫານ ແຕ່ກອງທັບ ສະປາກຕາ ບໍ່ຮູ້ເລື່ອງໂລກພາຍນອກ ເນື່ອງຈາກວ່າບໍ່ມັກອອກໄປນອກເຂດແດນຂອງຕົນ ເພາະຢ້ານວ່າ ພວກຂ້າທາດຈະລຸກຂຶ້ນຕໍ່ສູ້. ອີກຢ່າງໜຶ່ງ, ກໍຍ້ອນວ່າບໍ່ມັກການປ່ຽນແປງຈາກວິຖີຊີວິດແບບເດີມຂອງຕົນທີ່ເຄີຍເປັນມາ.

ລະບົບການປົກຄອງຂອງ ສະປາກຕາ ມີຄວາມແຕກຕ່າງຈາກລັດອື່ນໆຂອງກະເຣັກຄື: ສະປາກຕາປົກຄອງດ້ວຍກະສັດ 2 ອົງ ທີ່ມີອຳນາດເທົ່າໆກັນ (ຄະນາທິປະໄຕ), ມີສະພາຜູ້ອາວຸດໂສ ແລະ ສະມັດຊາປະຊາຊົນ ແຕ່ສະມັດຊາບໍ່ມີການສະແດງຄວາມຄິດເຫັນ ແຕ່ເມື່ອກະສັດຂໍຄວາມເຫັນກໍຈະຕອບພຽງແຕ່ "ເຫັນດີ" ຫຼື "ບໍ່ເຫັນດີ" ເທົ່ານັ້ນ. ໃນອຸດົມການລັດຈະເນັ້ນ ຫຼື ໃຫ້ຄວາມສຳຄັນທາງດ້ານລະບຽບວິໄນຫຼາຍກວ່າເສລີພາບ ສ່ວນໜ້າທີ່ຂອງປະຊາກອນແມ່ນພະຍາຍາມອຸທິດທັງກຳລັງກາຍ, ກຳລັງໃຈ ໃຫ້ແກ່ຄວາມຈະເລີນ ແລະ ຄວາມເຂັ້ມແຂງຂອງລັດ.

**4) ຜົນງານອາລິຍະທຳກະເຣັກບູຮານ**

ຊາວກະເຣັກຈຳນວນບໍ່ໜ້ອຍທີ່ໄດ້ອາໄສ, ດຳລົງຊີວິດຢູ່ໃນແຜ່ນດິນໃຫຍ່ ແລະ ບັນດາໝູ່ເກາະດອນຕ່າງໆໃນທະເລເມດິແຕຣາເນ ເຊິ່ງໄດ້ເປັນການສ້າງເງື່ອນໄຂໃຫ້ແກ່ການຕິດຕໍ່ພົວພັນກັບພື້ນແຜ່ນດິນອື່ນ ດ້ວຍທາງທະເລໄດ້ງ່າຍ ແລະ ມີຄວາມສະດວກ, ໂດຍສະເພາະແມ່ນທະວີບ ອາຟຣິກາ, ເອຢິບ ແລະ ອາຊີ. ດ້ວຍເຫດນັ້ນ, ຈຶ່ງມີເຮືອທີ່ມາຈາກພາກຕາເວັນອອກມາຕິດຕໍ່ ແລະ ນຳເອົາອາລິຍະທຳຕາເວັນອອກມາສູ່ກະເຣັກ. ດັ່ງນັ້ນ, ຊາວກະເຣັກຈຶ່ງເປັນພວກທຳອິດໃນບັນດາຊາວເອີຣົບທີ່ມີການຕິດຕໍ່ກັບຊາວຕາເວັນອອກ.

ດິນແດນຂອງກະເຣັກເປັນບໍ່ເກີດແຫ່ງອາລິຍະທຳຂອງ ເອີຣົບຕາເວັນຕົກ ແລະ ເປັນອາລິຍະທຳຂອງໂລກສະໄໝໃໝ່, ໃນສະໄໝບູຮານກະເຣັກເປັນຊາດໜຶ່ງທີ່ໄດ້ສ້າງຜົນງານທາງດ້ານອາລິຍະທຳທີ່ມີຄຸນຄ່າໃນຫຼາຍດ້ານໃຫ້ຊາວໂລກເຊັ່ນ:

**ກ ດ້ານຄວາມເຊື່ອ**

ຊາວກະເຣັບູຮານມີຄວາມສັດທາ ແລະ ມີຄວາມຜູກພັນຕໍ່ສິ່ງສັກສິດທີ່ສະຖິດຢູ່ໃນທຳມະຊາດຫຼາຍທີ່ສຸດ ແລະ ສິ່ງນັ້ນແມ່ນເທບພະເຈົ້າ. ເທບພະເຈົ້າໃນຄວາມຮູ້ສຶກນຶກຄິດຂອງຊາວກະເຣັກບູຮານແມ່ນມີຮູບຮ່າງໜ້າຕາ, ຄວາມຮູ້ສຶກ, ອາລົມ, ຄວາມຜູກພັນ ແລະ ຄອບຄົວທີ່ຄ້າຍຄືມະນຸດ ແຕ່ສິ່ງທີ່ແຕກຕ່າງໄປຈາກມະນຸດແມ່ນ ເທບພະເຈົ້າມີຄວາມເປັນອຳມະຕະ ແລະ ມີພະລັງອຳນາດເໜືອມະນຸດ, ເທບພະເຈົ້າສູງສຸດຂອງກະເຣັກແມ່ນ ເຊອຸດ (Zeus) ທັງເປັນບິດາຂອງເທບພະເຈົ້າທັງຫຼາຍ (ເທບພະເຈົ້າທ້ອງຟ້າ, ຝົນ ແລະ ພາຍຸ) ແລະ ມະນຸດ ເຊິ່ງມີມະເຫສີ

ຊື່ວ່າ ເຮຣາ (Hera) ເທພີແຫ່ງການແຕ່ງງານ, ຜູ້ຄຸ້ມຄອງພັນລະຍາ ແລະ ເດັກນ້ອຍ, ຊາວກະເຣັກເຊື່ອວ່າບັນດາເທບພະເຈົ້າທັງຫຼາຍໄດ້ສະຖິດຢູ່ໃນພູໂອລິມປິກ ແຕ່ມີການເຄື່ອນໄຫວ ແລະ ຜູກພັນຢູ່ກັບມະນຸດຢ່າງເປັນປົກກະຕິ.




ຮູບປັ້ນເທບພະເຈົ້າເຊອຸດ ຮູບປັ້ນ ເຮຣາ(Hera) ເທພີແຫ່ງການແຕ່ງງານ

**ຂ. ປັດຊະຍາ**

ກະເຣັກ ເປັນຜູ້ໃຫ້ກຳເນີດວິຊາ ປັດຊະຍາ ຂອງໂລກຕາເວັນຕົກ ແລະ ໄດ້ມີການຂະຫຍາຍຕົວຂຶ້ນໃນສະຕະວັດທີ V ກອນ ຄ.ສ ເຊິ່ງເປັນໄລຍະທີ່ອາລິຍະທຳກະເຣັກກຳລັງເສື່ອມໂຊມລົງ ໂດຍສະເພາະແມ່ນນັບຕັ້ງແຕ່ເກີດສົງຄາມເປໂລໂປເນຊຽນ.

ຄຳວ່າ ປັດຊະຍາ (Phylosophy ) ຫມາຍເຖິງ “ຄວາມຮັກໃນຄວາມຮູ້” ຊາວກະເຣັກໃຫ້ຄວາມສຳຄັນ ແລະ ເຫັນຄຸນຄ່າຂອງການຄົ້ນຄິດ ແລະ ຜົນຂອງການຄົ້ນຄວ້າເປັນຢ່າງຍິ່ງເຫັນໄດ້ຈາກແນວຄວາມຄິດຂອງບັນດານັກປັດຊະຍາທີ່ມີຊື່ສຽງຂອງກະເຣັກເຊັ່ນ:

ໂຊຄະເຣດຕິດ (Socrates) ໄດ້ຊື່ວ່າບິດາແຫ່ງປັດຊະຍາມີຊີວິດຢູ່ໃນລະຫວ່າງປີ 469- 388 ກ່ອນ ຄ.ສ ໄດ້ດຳເນີນການສອນລູກສິດຢ່າງບໍ່ຮູ້ອິດເມື່ອຍ ແລະ ບໍ່ຫວັງຜົນຕອບແທນ ເຊິ່ງທ່ານບໍ່ໄດ້ຖືຕົນເອງເປັນຜູ້ສອນຄົນອື່ນ ແຕ່ຖືຕົນເປັນຜູ້ສະແຫວງຫາຄວາມຮູ້ຄືກັນກັບລູກສິດທັງຫຼາຍ ແລະ ໄດ້ຊັກຊວນໃຫ້ຄົນມີການຄົ້ນຄິດບັນຫາຕ່າງໆໂດຍສະເພາະແມ່ນທາງດ້ານສິນລະທຳ-ຈາລິຍະທຳ ຈົນສາມາດສະຫຼຸບໄດ້ຄຳຕອບທີ່ຖືກຕ້ອງ ຈາກຄຳຖາມ-ຄຳຕອບນີ້ຈະເຮັດໃຫ້ແຕ່ລະຄົນເຂົ້າໃຈດ້ວຍຕົວເອງວ່າ ຄວາມຄິດຂອງຕົນຕື້ນ- ເລິກສໍ່າໃດ ແລະ ມີເຫດຜົນພຽງໃດ ອັນເປັນການກໍ່ໃຫ້ເກີດຄວາມຮູ້ ແລະ ການເຝິກຝົນສະຕິປັນຍາ, ນອກຈາກນັ້ນ, ທ່ານ ຍັງໄດ້ສັ່ງສອນວ່າ ຄວາມອຸດົມຮັ່ງມີ, ຄວາມສຳເລັດ ແລະ ການກາຍເປັນຈັກກະພັດນັ້ນ ມີຄວາມສຳຄັນຫນ້ອຍກວ່າຄວາມດີຂອງແຕ່ລະຄົນ, ຄົນເຮົາແຕ່ລະຄົນຖ້າມີຄວາມຊື່ສັດ ແລະ ປະພຶດຕົນຢູ່ໃນສິນລະທຳດີແລ້ວ ຍ່ອມເປັນບຸກຄົນທີ່ສະຫຼາດທີ່ສຸດ.



ຮູບປັ້ນໂຊຄະເຣດຕິດ (Socrates) ບິດາແຫ່ງປັດຊະຍາ (469-366 ກ່ອນ ຄ.ສ)

ພາຍຫຼັງສົງຄາມ ເປໂລໂປແນຊຽນ ໄດ້ເກີດການຈາລະຈົນກໍ່ວຸ້ນວາຍໃນກະເຣັກ ເຮັດໃຫ້ ຄົນຫັນມາສົນໃຈວ່າ ຈະຈັດລະບົບການເມືອງການປົກຄອງແນວໃດ ຈຶ່ງຈະລົບລ້າງຄວາມວຸ້ນວາຍໃນອະນາຄົດໄດ້. ຕໍ່ບັນຫາດັ່ງກ່າວ, ນັກປັດຊະຍາທີ່ສຳຄັນຂອງກະເຣັກ 2 ທ່ານຄື ປລາໂຕ (Plato) ແລະ ອາຣິດສະໂຕເທິນ (Aristotle) ທີ່ເປັນນັກປັດຊະຍາຈິດຕະນິຍົມຝ່າຍດຽວກັບ ໂຊຄະເຣດຕິດ ໄດ້ໃຫ້ຂໍ້ຄິດເຫັນທີ່ແຕກຕ່າງກັນໃນການທີ່ຈະເຮັດໃຫ້ຄວາມສະຫງົບສຸກເກີດຂຶ້ນໃນສັງຄົມມະນຸດ.

ພລາໂຕ (427-347 ກ່ອນ ຄ.ສ) ຊາວເອເທນເປັນລູກສິດຄົນສຳຄັນຂອງ ໂຊຄະເຣດຕິດ ໄດ້ສະແດງແນວຄວາມຄິດຂອງຕົນກ່ຽວກັບການເມືອງການປົກຄອງໄວ້ໃນປຶ້ມເລື່ອງ: ສາທາລະນະ (Republic) ວ່າ "ກະແຈທີ່ຈະນຳສັງຄົມມະນຸດໄປສູ່ຄວາມສະຫງົບສຸກໄດ້ກໍຄືການທີ່ຜູ້ປົກຄອງເປັນຜູ້ມີຄວາມຮູ້, ຊົນຊັ້ນປົກຄອງ ບໍ່ໄດ້ມີພາລະໜ້າທີ່ພຽງແຕ່ບໍລິຫານກິດຈະການຂອງລັດໄປໃນແຕ່ລະມື້ເທົ່ານັ້ນ ແຕ່ຈະຕ້ອງມີສ່ວນໃນການສ້າງຄຸນນະພາບໃນທາງຈິດໃຈອີກດ້ວຍ". ໝາຍຄວາມວ່າລັດທີ່ມີຄວາມສຸກສົມບູນທີ່ສຸດບໍ່ແມ່ນລັດທີ່ຈະເລີນກ້າວໜ້າ ທາງດ້ານວັດຖຸເທົ່ານັ້ນ ແຕ່ຕ້ອງຈະເລີນທາງຈິດໃຈ. ນອກຈາກນັ້ນ, ຜູ້ປົກຄອງທີ່ມີຄວາມຮັບຜິດຊອບຕ້ອງເປັນຜູ້ທີ່ມີຄວາມຮູ້, ຄວາມຊ່ຽວຊານໃນດ້ານການປົກຄອງ, ມີຄຸນສົມບັດທາງດ້ານສິນລະທຳ, ດຳເນີນການປົກຄອງເພື່ອຜົນປະໂຫຍດ ແລະ ຄວາມສຸກຂອງປະຊາຊົນ.

ອາຣິດສະໂຕເຕິນ ມີຊີວິດຢູ່ລະຫວ່າງ 384-322 ກ່ອນ ຄ.ສ ເປັນຜູ້ທີ່ມີຄວາມສົນໃຈໃນວິຊາຄວາມຮູ້ເກືອບທຸກຂະແໜງ ຈົນໄດ້ຮັບການຍ້ອງຍໍວ່າເປັນຜູ້ທີ່ມີມັນສະໝອງຮອບຮູ້ ແລະ ໄດ້ຮັບສາຍານາມວ່າເປັນບິດາແຫ່ງວິທະຍາສາດສະໄໝໃໝ່.



ອາຣິດສະໂຕເທິນ (Aristotle384-322 ກ່ອນ ຄ.ສ ບິດາແຫ່ງປະຫວັດສາດ)

ພລາໂຕ ແລະ ອາຣິດສະໂຕເຕິນ ມີຄວາມເຫັນກົງກັນໃນຫົວຂໍ້ທີ່ວ່າ ລັດ ຫຼື ສັງຄົມເປັນສິ່ງທີ່ເກີດຂຶ້ນໂດຍທຳມະຊາດ ເພາະມະນຸດມີຄວາມຕ້ອງການຢູ່ຮ່ວມກັນແຕ່ເຮັດແນວໃດຈຶ່ງຈະຈັດລະບຽບຄວາມສຳພັນລະຫວ່າງສະມາຊິກໃນສັງຄົມບໍ່ໃຫ້ເກີດຂໍ້ຂັດແຍ່ງກັນໄດ້.

ພລາໂຕ ມີວິທີແກ້ໄຂບັນຫາດັ່ງກ່າວໂດຍພະຍາຍາມຄັດເລືອກບຸກຄົນພິເສດຈຳນວນຫນ້ອຍທີ່ສຸດທີ່ມີຄຸນສົມບັດດີເຂົ້າມາແກ້ໄຂບັນຫາສັງຄົມ. ສ່ວນ ອາຣິດສະໂຕເຕິນ ໄດ້ກ່າວວ່າ ສັງຄົມທີ່ດີແມ່ນສັງຄົມທີ່ທຸກຄົນມີຄວາມຮູ້ສຶກເປັນມິດກັນ ແລະ ຄວາມຮູ້ສຶກແບບນີ້ຈະເກີດຂຶ້ນໄດ້ ເມື່ອສະມາຊິກຂອງສັງຄົມທຸກຄົນມີຄວາມຮູ້ສຶກວ່າຕົນມີຖານະເທົ່າທຽມກັນ. ຄວາມສະເຫມີພາບຕາມທັດສະນະຂອງອາຣິດສະໂຕເຕິນ ບໍ່ໄດ້ຫມາຍເຖິງຄວາມເທົ່າທຽມກັນໃນທຸກໆດ້ານ ໂດຍສະເພາະແມ່ນສະຕິປັນຍາ, ດັ່ງນັ້ນ, ການຈະໄດ້ຮັບຫນ້າທີ່, ກຽດສັກສີ ແລະ ການປະຕິບັດຫນ້າທີ່ຈະໄດ້ຮັບຜົນສຳເລັດຫຼາຍ ຫຼື ຫນ້ອຍກໍຂຶ້ນຢູ່ກັບສະຕິປັນຍາ ແລະ ຄວາ ສາມາດຂອງບຸກຄົນ.

ອາຣິດສະໂຕເຕິນ ໄດ້ຊີ້ແຈງວ່າປະຊາຊົນສາມັນ ບໍ່ມີສະຕິປັນຍາທີ່ຈະມາຮັບຜິດຊອບໃນການບໍລິຫານແລະ ບໍ່ສາມາດພິຈາລະນາບັນຫາຕ່າງໆດ້ວຍຕົວເອງໄດ້ ແຕ່ຖ້າຫາກາປະຊາຊົນຈຳນວນຫຼວງຫຼາຍ ມີການລວມກຳລັງກັນກໍຈະສາມາດແກ້ບັນຫາຮ່ວມກັນໄດ້. ນອກນັ້ນ, ຍັງມີຄຳເຫັນອີກວ່າ ລັດຄວນຈະລະວັງກ່ຽວກັບການຂັດແຍ່ງທາງດ້ານເສດຖະກິດ ແລະ ລັດທີ່ມີຄວາມຫມັ້ນຄົງຄວນມີຊົນຊັ້ນກາງຫຼາຍກວ່າຊົນຊັ້ນຮັ່ງມີ ແລະ ຊົນຊັ້ນທຸກຍາກເຊິ່ງ ອາຣິດສະໂຕເຕິນ ເຊື່ອວ່າ ການຍຶດຫຼັກສາຍກາງສັງຄົມຈະມີຄວາມສະຫງົບ ແລະ ມີຄວາມສຸກ.

ອາຣິດດສະໂຕເຕິນ ບໍ່ເຫັນດີກັບ ພລາໂຕ ທີ່ວ່າ ການປົກຄອງທີ່ດີທີ່ສຸດນັ້ນແມ່ນລະບົບທີ່ໃຫ້ອຳນາດໃນການປົກຄອງຂຶ້ນຢູ່ກັບຕົວບຸກຄົນ ເພາະການກະທຳຂອງຕົວບຸກຄົນຂຶ້ນຢູ່ກັບທັງເຫດຜົນ ແລະ ອາລົມ ຖ້າໃຫ້ອຳນາດສູງສຸດຢູ່ກັບບຸກຄົນ ອາດຈະເຮັດໃຫ້ການໃຊ້ອຳນາດບໍ່ເປັນໄປຕາມກົດຫມາຍສະເຫມີໄປ. ດັ່ງນັ້ນ,ໃນທັດສະນະຂອງອາຣິດສະໂຕເຕິນນັ້ນ ການປົກຄອງທີ່ດີຈະຕ້ອງໃຊ້ກົດຫມາຍບໍ່ແມ່ນຕົວບຸກຄົນເປັນຫຼັກ ເພາະກົດຫມາຍເກີດຈາກເຫດຜົນຂອງຄວາມຄິດຢ່າງຮອບຄອບ.

**ຄ.ວິທະຍາສາດ**

ຊາວກະເຣັກບູຮານເປັນຄົນທີ່ມີເຫດຜົນ, ກ້າຄິດ, ກ້າເຮັດ ແລະ ມີຄວາມສົນໃຈໃນການຊອກຮູ້ກ່ຽວກັບວິທະຍາສາດໃນສາຂາຕ່າງໆ ຈຶ່ງກາຍເປັນຜູ້ວາງຮາກຖານໃນການຂະຫຍາຍຄວາມຮູ້ ແລະ ການສ້າງຫຼັກທິດສະດີພື້ນຖານຕ່າງໆກ່ຽວກັບການຄົ້ນຄວ້າວິທະຍາສາດໄວ້ໃຫ້ແກ່ໂລກປັດຈຸບັນ. ດັ່ງນັ້ນ, ຊາວກະເຣັກຈະຮັບຮູ້ ຫຼື ຍອມຮັບສິ່ງໃດສິ່ງຫນຶ່ງນັ້ນວ່າມີຄວາມຈິງ ຫຼື ບໍ່ນັ້ນຢ່າງຫນ້ອຍຕ້ອງໄດ້ຜ່ານການຄົ້ນຄວ້າ 3 ຂັ້ນຕອນທີ່ສຳຄັນດັ່ງນີ້:

- ຂັ້ນຕອນຂອງການຄົ້ນຫາເຫດ ແລະ ຜົນ
- ຂັ້ນຕອນຂອງການລວບລວມຂໍ້ມູນ
- ຂັ້ນຕອນຂອງການວິເຄາະ ແລະ ການທົດລອງ

ດັ່ງນັ້ນ, ໃນສະໄຫມບູຮານຊາວກະເຣັກ ຈຶ່ງໄດ້ສ້າງຜົນງານທີ່ສຳຄັນ ແລະ ມີຊື່ສຽງໃນຫຼາຍສາຂາວິຊາທີ່ສາມາດນຳມາໃຊ້ຈົນເຖິງປັດຈຸບັນເຊັ່ນ:

- ວິຊາຟີຊິກສາດ: ອາກຊິແມັດ (Archimede) ນັກຟີຊິກສາດທີ່ມີຊື່ສຽງໄດ້ຄົ້ນຄວ້າບັນດາຫຼັກເກນ ຫຼື ທິດສະດີກ່ຽວກັບວັດຖຸ, ໄມ້ງັດ ແລະ ທິດສະດີສະທ້ອນແສງ.
- ວິຊາເລຂາຄະນິດ: ນັກເລຂາຄະນິດ ທີ່ມີຊື່ສຽງຂອງກະເຣັກນັ້ນປະກອບມີ: ເອີກລິດ (Euclide) ເປັນຜູ້ຮອບຮອມຄວາມຮູ້ທາງດ້ານເລຂາຄະນິດຢ່າງມີຫຼັກເກນ ແລະ ໃຫ້ເປັນລະບົບຕາມຫຼັກວິທະຍາສາດ, ປີຕາກໍ (Pytha gore) ເປັນຜູ້ຄົ້ນພົບຫຼັກເກນຂອງຮູບສາມແຈສາກ. ສ່ວນຕາແລັດ (Thales) ເປັນທັງນັກຄະນິດສາດ, ນັກເລຂາຄະນິດ ແລະ ເປັນຜູ້ຄົ້ນພົບຫຼັກເກນ ກ່ຽວກັບອັດຕາສ່ວນພົວພັນຂອງທ່ອນຊື່.
- ວິຊາດາລາສາດ-ພູມີສາດ: ວິຊາດາລາສາດໄດ້ກຳເນີດຂຶ້ນໃນດິນແດນ ບາບີລອນ ແລະ ເອຢິບ ໃນຊ່ວງຕໍ່ມາຊາວກະເຣັກບູຮານ ໄດ້ນຳເອົາຄວາມຮູ້ ໃນສາຂາດັ່ງກ່າວມາຜັນຂະຫຍາຍ ໃຫ້ມີຄວາມກ້າວຫນ້າຈົນກາຍເປັນວິຊາຫນຶ່ງ ທີ່ມີການນຳໃຊ້ຢ່າງກວ້າງຂວາງຈົນເຖິງປັດຈຸບັນ. ຕາແລັດ ເປັນບຸກຄົນສຳຄັນທີ່ໄດ້ນຳເອົາຄວາມຮູ້ທາງດາລາສາດຈາກພາກຕາເວັນອອກມາຄິດໄລ່ ແລະ ມີການພະຍາກອນລ່ວງຫນ້າກ່ຽວກັບ



ອາກຊິແມັດ (Archimede)



ເອີກລິດ (Euclide)

ປາກົດການຈັນທະຄາດ ແລະ ສຸລິຍະຄາດ. ສຳລັບອະລິດຕາກ (Aristaque) ເປັນຜູ້ທີ່ຄົ້ນພົບທິດສະດີກ່ຽວກັບ “ໜ່ວຍໂລກໝູນອ້ອມດວງຕາເວັນ” ແລະ ໄດ້ມີການກຳນົດວ່າ "ໜ່ວຍໂລກປິ່ນອ້ອມດວງຕາເວັນໜຶ່ງຮອບເປັນປີໜຶ່ງ”.

❖ ການແພດ ແລະ ຊີວະວິທະຍາ: ວິຊາການແພດ ກໍຄືວິຊາອື່ນໆສ່ວນຫຼາຍຈະເກີດຂຶ້ນໃນດິນແດນພາກຕາເວັນອອກກ່ອນໝູ່ ແຕ່ຊາວກະເຣັກມັກຈະເປັນຜູ້ນຳມາປະຕິບັດ ແລະ ມີການພັດທະນາໃຫ້ມີຄວາມກ້າວໜ້າຈົນກາຍເປັນພື້ນຖານໃຫ້ແກ່ວິທະຍາສາດໃນຍຸກໃໝ່.ຮິບໂປກຣັດ (Hipppocrate) ເປັນຜູ້ທີ່ມີຄວາມຊ່ຽວຊານທາງດ້ານການແພດໃນຍຸກນັ້ນ ທີ່ໄດ້ມີການສຶກສາຄົ້ນຄວ້າກ່ຽວກັບຫຼັກການຂອງວິຊາການແພດ, ຮູ້ຈັກວິທີການປິ່ນປົວ ແລະ ປ້ອງກັນພະຍາດ. ສ່ວນ ກາເລນ (Galent) ກໍເປັນອີກຜູ້ໜຶ່ງທີ່ໄດ້ນຳເອົາຄວາມຮູ້ທາງການແພດຈາກພາກຕາເວັນອອກມານຳໃຊ້ ໂດຍສະເພາະໄດ້ອີງໃສ່ວິທີການຜ່າຕັດຊາກສົບຂອງຄົນພາກຕາເວັນອອກນຳມາຜ່າຕັດຄົນ ແລະ ລິງໃຫຍ່ ແລ້ວຈຶ່ງຂຽນເປັນທິດສະດີກ່ຽວກັບລະບົບຫາຍໃຈ, ການໄຫຼວຽນຂອງເລືອດ ແລະ ອະໄວຍະວະຕ່າງໆໃນຮ່າງກາຍຂອງມະນຸດ.





ຮິບໂປກຣັດ (Hipppocrate) ກາເລນ (Galent)

❖ ປະຫວັດສາດ: ວິຊາປະຫວັດສາດ ກໍເປັນອີກວິຊາໜຶ່ງທີ່ມີຕົ້ນກຳເນີດໃນດິນແດນຂອງກະເຣັກ, ເຮໂຣດົດ (Herodote) ເປັນບຸກຄົນທຳອິດທີ່ໄດ້ມີການບັນທຶກເຫດການທີ່ເກີດຂຶ້ນຢ່າງມີຫຼັກການ ແລະ ເປັນລະບົບໂດຍສະເພາະ ທ່ານໄດ້ສຶກສາ ແລະ ຂຽນປະຫວັດຄວາມເປັນມາຂອງກຸ່ມຄົນຕ່າງໆຈຶ່ງກາຍມາເປັນຫຼັກ ແລະ ທິດສະດີທາງປະຫວັດສາດທີ່ມີການນຳໃຊ້ຈົນເຖິງປັດຈຸບັນ.

**໑. ສະຖາປັດຕະຍະກຳ**

ສະຖາປັດຕະຍະກຳຂອງກະເຣັກມີລັກສະນະໂດດເດັ່ນເປັນພິເສດທາງດ້ານຄວາມງາມຂອງຮູບຮ່າງ ແລະ ຄວາມກົມກືນໃນຊັດສ່ວນຕ່າງໆຂອງວິຫານ, ນອກຈາກນັ້ນ, ຮູບແບບ ແລະ ລວດລາຍຕ່າງໆທີ່ຫົວເສົາຂອງວິຫານ

ຍັງເປັນການບົ່ງບອກເຖິງເອກະລັກສະເພາະຂອງສະຖາປັດຕະຍະກຳຂອງກະເຣັກ ເຊິ່ງສາມາດຈຳແນກອອກເປັນ 3 ລັກສະນະຄື: ດໍຣິກ, ໄອໂອນິກ ແລະ ຄໍຣິນທຽນ.

❖ ດໍຣິກ (Doric) ເປັນສິລະປະແບບດັ້ງເດີມ, ຫົວຂອງເສົາດ້ານລຸ່ມໃຫຍ່ ສ່ວນດ້ານເທິງ ມີແຜ່ນຫີນວາງທັບຫົວເສົາ ເພື່ອຮອງຮັບການຂອງຕົວອາຄານ, ມີລັກສະນະກ້ຽງໂດຍປາສະຈາກລວດລາຍຕ່າງໆ ແຕ່ກໍມີຄວາມແຂງແຮງ.

❖ ໄອໂອນິກ (Ionic) ລັກສະນະຂອງເສົານ້ອຍຮຽວ ແລະ ສວຍງາມ ຕັ້ງຢູ່ເທິງຖານທີ່ເຮັດຂຶ້ນເພື່ອຮອງຮັບເສົາ ແລະ ຫົວເສົາມີການຕົບແຕ່ງດ້ວຍສິລະປະລວດລາຍຕ່າງໆ.

❖ ຄໍຣິນທຽນ (Corinthian) ເສົາແບບນີ້ຕັ້ງຢູ່ເທິງຖານເຊັ່ນດຽວກັນ, ຫົວເສົາມີການຕົບແຕ່ງປະດັບປະດາໄປດ້ວຍລວດລາຍຢ່າງລະອຽດງົດງາມ ໂດຍສ່ວນຫຼາຍຈະເປັນຊໍ່ດອກໄມ້ ແລະ ໃບໄມ້




.

❖ ສິລະປະການຕົບແຕ່ງໃນແຕ່ລະແບບລ້ວນແຕ່ມີຄວາມງາມ ແລະ ມີສະເໜ່ຢູ່ໃນຕົວຂອງມັນອັນເປັນການເສີມສ້າງຄວາມໂດດເດັ່ນຂອງຕົວອາຄານໄດ້ດີທີ່ສຸດ. ສະຖາປັດຕະຍະກຳວິຫານທີ່ງົດງາມ ແລະ ມີຊື່ສຽງທີ່ສຸດຄື: ພາເທນອນ (Pathernon) ເຖິງວ່າຈະມີການເປ່ເພ ແຕ່ເບິ່ງແລ້ວກໍມີຄວາມງົດງາມຢ່າງໜ້າເຫຼືອເຊື່ອ ວິຫານດັ່ງກ່າວໄດ້ສ້າງຂຶ້ນເພື່ອຖວາຍໃຫ້ແກ່ ເທພີ ອາເທນາ ຢູ່ທີ່ນະຄອນເອເທນນ ກໍ່ສ້າງໃນປີ 477 ກ່ອນ ຄສ ແລະ ສຳເລັດໃນປີ 432 ກ່ອນ ຄ.ສ ມີຄວາມກວ້າງ 30 ແມັດ, ຍາວ 96 ແມັດ ແລະ ສູງ 19.5 ແມັດ ເປັນສິລະປະແບບດໍຣິກ.



ພາເທນອນ (Pathernon)

ນອກຈາກນັ້ນ, ຍັງມີການສ້າງບ້ານເຮືອນ ແລະ ອາຄານຕ່າງໆຕາມແບບວິຫານເຊັ່ນ: ຫໍປະຊຸມ ສະພາ, ຕະຫຼາດ, ສານ ແລະ ອື່ນໆ

**ຈ. ສິລະປະ-ວັນນະຄະດີ**

- ❖ ສິລະປະໃນຂະແໜງການຕ່າງໆຂອງກະເຣັກ ຈະມີຈຸດພົ້ນເດັ່ນຢູ່ໃນຕົວຂອງມັນຄື: ລັກສະນະຕົວຈິງ ໂດຍສະເພາະການຄວັດ, ການແຕ້ມ ແລະ ການປັ້ນ. ສິ່ງເຫຼົ່ານັ້ນໄດ້ສະແດງອອກໃນຮູບແບບທີ່ອີງໃສ່ເທບພະເຈົ້າເປັນຫຼັກ ເນື່ອງຈາກວ່າສ່ວນຫຼາຍໄດ້ຮັບອິດທິພົນທາງດ້ານແນວຄວາມຄິດມາຈາກບົດປະພັນຂອງ ໂຮແມ (Homer) ທີ່ວ່າເທບພະເຈົ້າຈະມີລັກສະນະຄ້າຍຄືມະນຸດ. ແຕ່ໃນຊ່ວງຕໍ່ມາສິລະປະຂອງກະເຣັກ ໄດ້ມີການປ່ຽນແປງຈາກລັກສະນະຕົວຈິງໄປສູ່ລັກສະນະທຳມະຊາດຫຼາຍຂຶ້ນ ມີການປະສົມປະສານກັນເຂົ້າລະຫວ່າງລັກສະນະລຽບງ່າຍ ແລະ ຄວາມອ່ອນຊ້ອຍຕາມຄວາມງາມຂອງທຳມະຊາດ.
- ❖ ປະຕິມາກຳ ໝາຍເຖິງການຄວັດ, ການແກະສະຫຼັກ, ການປັ້ນ, ການແຕ້ມ ແລະ ອື່ນໆ ເຊິ່ງເປັນຂະແໜງໜຶ່ງທີ່ມີຊື່ສຽງໂດ່ງດັງມາຕັ້ງແຕ່ສະໄໝບູຮານ ແລະ ກາຍເປັນຕົ້ນແບບຂອງປະຕິມາກຳໃນຍຸກປັດຈຸບັນ, ປະຕິມາກຳຂອງກະເຣັກ ຈະເນັ້ນໃຫ້ເຫັນເຖິງຮູບແບບ ແລະ ລັກສະນະຂອງການເຄື່ອນໄຫວທີ່ມີຊີວິດຊີວາ , ຄວາມງົດງາມ, ຄວາມນິ້ມນວນ, ຄວາມກົມກືນ ຕາມສັດສ່ວນ ແລະ ຄວາມເປັນຈິງຂອງທຳມະຊາດ ເຊິ່ງຈະເຫັນໄດ້ຢ່າງຊັດເຈນໃນຮູບຄວັດ ສ່ວນຫົວຂອງພະເຈົ້າ ອາເລັກຊານເດີມະຫາຣາດ, ຮູບນັກກິລາທີ່ຢູ່ໃນທ່າແກວ່ງຈານ...
- ❖ ວັນນະຄະດີ: ກະເຣັກບູຮານ ໄດ້ກາຍເປັນຕົ້ນກຳເນີດຂອງວັນນະຄະດີເອີຣົບໃນຍຸກປັດຈຸບັນ ເຊິ່ງເປັນວັນນະຄະດີທີ່ມີຄຸນຄ່າທາງດ້ານເນື້ອໃນ ແລະ ໂຄງສ້າງທີ່ສະທ້ອນໃຫ້ເຫັນເຖິງຮູບແບບການດຳລົງຊີວິດໃນສັງຄົມ ແລະ ແອບແຝງໄປດ້ວຍອາລົມທີ່ນິ້ມນວນ, ເລິກເຊິ່ງໄດ້ເປັນຢ່າງດີ, ນັກປະພັນທີ່ສຳຄັນ ແລະ ມີຊື່ສຽງຂອງກະເຣັກ ໄດ້ແກ່: ທ່ານ ໂຮແມ (Hormer) ເປັນຜູ້ຂຽນບົດປະພັນ ອີດີອັດ ແລະ ໂອດີເຊ ເປັນບົດເລື່ອງທີ່ໄດ້ກ່າວເຖິງການຍ້ອງຍໍຜົນງານ ແລະ ການພະຈົນໄພຂອງວິລະຊົນໃນສະໜາມຮົບເມືອງຕຣົວ ແລະ ອື່ນໆ.



ໂຮແມ (Hormer)

**ສ. ດ້ານກິລາ**

ກະເຣັກເປັນຕົ້ນກຳເນີດຂອງວິງການກິລາໂລກຫຼາຍປະເພດທີ່ມີຊື່ສຽງມາຕັ້ງແຕ່ສະໄຫມບູຮານ ໂດຍສະເພາະ ແມ່ນກິລາໂອລິມປິກ, ຊາວກະເຣັກອາໄສ ແລະ ດຳລົງຊີວິດຢູ່ແບບກະແຈກກະຈາຍບໍ່ເຄີຍເຕົ້າໂຮມປະເທດຊາດໃຫ້ເປັນເອກະພາບກັນໄດ້ເນື່ອງຈາກຄວາມສັບສົນ, ທຸລະກັນດານຂອງສະພາບທາງພູມີສາດ ແລະ ແຕ່ລະລັດມີລະບອບການປົກຄອງທີ່ແຕກຕ່າງກັນ ແຕ່ຊາວກະເຣັກ ກໍມີຈຸດລວມຮ່ວມກັນນັ້ນກໍຄື ພວກເຂົາເຈົ້າເປັນເຊື້ອຊາດດຽວກັນ, ໃຊ້ພາສາດຽວກັນ ແລະ ນັບຖືສາສະໜາດຽວກັນ, ດັ່ງນັ້ນ, ເພື່ອເປັນການເຕົ້າໂຮມຄວາມສາມັກ ຄີ ແລະ ມິດຕະພາບ ຊາວກະເຣັກຈຶ່ງມີການຈັດງານຢູ່ເມືອງໂອລິມເປຍ ແລະ ງານດັ່ງກ່າວ ເອີ້ນວ່າ “ກິລາໂອລິມປິກ”.

ການແຂ່ງຂັນກິລາໂອລິມປິກຄັ້ງທຳອິດໄດ້ຈັດຂຶ້ນໃນປີ 776 ກ່ອນ ຄ.ສ ແລະ ໄດ້ດຳ ເນີນການແຂ່ງຂັນ 4 ປີຕໍ່ຄັ້ງ. ປະເພດກິລາທີ່ຈັດການແຂ່ງຂັນປະກອບມີ: ການແລ່ນ, ການຊັດຫຼາວ, ການແກວ່ງຈານ, ການແຂ່ງລົດມ້າ, ມອຍນໍ້າ, ການແລ່ນມາລາທອນ ແລະ ອື່ນໆ.

**3.2.ໂຣແມັງບູຮານ**

ລັດໂຣແມັງບູຮານ ຕັ້ງຢູ່ແຫຼມອາເປແນັງ (Apenin) ທາງພາກໃຕ້ຂອງທະວີບເອີຣົບ ປັດຈຸບັນໄດ້ກາຍມາເປັນປະເທດ ອີຕາລີ (Italy) ໂດຍມີຊາຍແດນຕິດກັບປະເທດຕ່າງໆດັ່ງນີ້: ທິດເຫນືອຕິດກັບປະເທດຝຣັ່ງ (France), ສະວິດເຊີແລນ (Switzerland), ໂອຕຣິດ (Austria), ສະໂລເວນີ (slavenia), ຢູໂກສະລາວີ (Ugosalava), ທິດໃຕ້ຕິດກັບທະເລ ໄອໂຊນຽນ (lonean Sea). ທິດຕາເວັນອອກຕິດກັບທະເລ ເອດຣີເອຕິກ (Adriatic Sea) ແລະ ທິດຕາເວັນ ຕົກຕິດກັບທະເລ ເທີເຣນຽນ

ເມື່ອທຽບກັບພູມີປະເທດຂອງກະເຣັກແລ້ວເຫັນວ່າໂຣແມັງມີທົ່ງພຽງທີ່ກວ້າງໃຫຍ່ ແລະ ປ່າໄມ້ທີ່ມີຄວາມອຸດົມສົມບູນກວ່າ ເຊິ່ງມີຄວາມເຫມາະສົມແກ່ການປູກຝັງ-ລ້ຽງສັດ, ນອກຈາກນັ້ນ, ການຕິດຕໍ່ພົວພັນກັບໂລກພາຍນອກກໍມີຄວາມສະດວກສະບາຍກວ່າ.



ແຫຼມອາເປແນັງ (Apenin)

ໃນດິນແດນຂອງໂຣແມັງມີເຜົ່າພື້ນເມືອງເລີ່ມດຳລົງຊີວິດຢູ່ເປັນເວລາດົນນານແລ້ວແຕ່ ເມື່ອປະມານປີ 2.000 ກ່ອນ ຄ.ສ. ເຜົ່າອິຕາລີ ເປັນກຸ່ມຊາວອິນດູ-ເອີຣົບ ທີ່ອາໄສຢູ່ໃນບໍລິເວນ ແມ່ນ້ຳດານູບ ທາງພາກໃຕ້ຂອງ ຣັດເຊຍ ໄດ້ເຂົ້າມາຕັ້ງຖິ່ນຖານຕາມລ້ອງແມ່ນ້ຳໂປ (Po) ທາງພາກເຫນືອຂອງ ອິຕາລີ ເປັນພວກທີ່ມີອາລະຍະທຳສູງກວ່າເຜົ່າພື້ນເມືອງ, ກຸ່ມທີ 2 ເປັນພວກ ອິທຣັດສະກັນ (Etruscan) ໄດ້ເຂົ້າມາອິຕາລີ ແລະ ດຳລົງຊີວິດຢູ່ທາງເຫນືອຂອງແມນ້ຳໄທເບີ (Tiber River) ເປັນພວກທີ່ມາຈາກທາງທະເລມີອາຊີບເປັນຊ່າງປັ້ນດິນເຜົາ, ຊ່າງເພັດ ແລະ ຊ່າງໂລຫະ, ເມື່ອປະມານປີ 735 ກ່ອນ ຄ.ສ ເຜົ່າ ອິຕາລີ ອີກກຸ່ມຫນຶ່ງທີ່ຢູ່ພາກໃຕ້ ຣັດເຊຍ ໄດ້ ເຂົ້າມາຕັ້ງບ້ານເຮືອນຢູ່ໃກ້ກັບແມ່ນ້ຳ ໄທເບີ ໃນຕອນກາງຂອງ ໂຣແມັງ ແລະ ພວກເຂົາເອີ້ນຫມູ ບ້ານຂອງຕົນວ່າ: ກຸງໂຣມ. ສ່ວນທາງພາກໃຕ້ເປັນທີ່ຢູ່ອາໄສຂອງພວກຄາເທັກ ແລະ ກະເຣັກ.



ສະໜາມກິລາ ຮ່ອງຮອຍ ກຸງໂຣມບູຮານ

**1) ການພັດທະນາການ**

**ກ. ສະໄຫມກຸງໂຣມ**

ໃນດິນແດນທີ່ເປັນປະເທດ ອິຕາລີ ປັດຈຸບັນ ໄດ້ມີຄົນພື້ນເມືອງອາໄສຢູ່ມາຕັ້ງແຕ່ຍຸກຫີນ ພວກເຂົາເຈົ້າປະກອບອາຊີບດ້ວຍການປູກຝັງ-ລ້ຽງສັດ, ເມື່ອທຽບກັບ ເອຢິບ, ດິນແດນໃນຕາເວັນອອກກາງ, ບໍລິເວນແຄມຝັ່ງທະເລ ເມດິແຕຣາເນ ແລະ ແຄມຝັ່ງທະເລອາຟຣິກາເຫນືອແລ້ວເຫັນວ່າ ອິຕາລີ ຍັງເປັນດິນແດນທີ່ມີຄວາມທຸກຍາກ ແລະ ດ້ອຍພັດທະນາທີ່ສຸດ.

ຕໍ່ມາເຜົ່າ ອິຕາລີ ໄດ້ຕັ້ງບ້ານທີ່ກຸງໂຣມຂຶ້ນຢູ່ໃກ້ກັບແມ່ນ້ຳໄທເບີ ໃນຕອນກາງຂອງ ອິຕາລີ. ເຜົ່າອິທຣັດສະກັນ ໄດ້ຕັ້ງນະຄອນລັດຂອງຕົນຂຶ້ນຢູ່ທາງເຫນືອຂອງກຸງໂຣມ ສ່ວນກະເຣັກ ໄດ້ມີການສ້າງເມືອງການຄ້າທີ່ຮັ່ງມີຄື: ເມືອງເນເປີ (Naple) ຢູ່ທາງໃຕ້ຂອງໂຣມ ດັ່ງນັ້ນ, ພໍ່ຄ້າທີ່ມາຈາກທາງເຫນືອ ແລະ ທາງໃຕ້ຕ້ອງເດີນທາງຜ່ານຫມູ່ບ້ານກຸງໂຣມເປັນປະຈຳ. ນີ້ເປັນຈຸດເລີ່ມຕົ້ນຂອງຄວາມຈະເລີນຮຸ່ງເຮືອງຂອງກຸງໂຣມ ເພາະວ່າມີທີ່ຕັ້ງຢູ່ເມືອງການຄ້າທີ່ຮັ່ງມີລະຫວ່າງພາກເຫນືອ ແລະ ພາກໃຕ້.

ໃນລະຫວ່າງປີ 600 ກ່ອນ ຄ.ສ ໂຣມ ມີຄວາມຈະເລີນເຕີບໂຕ ແລະ ເຂັ້ມແຂງທາງດ້ານເສດຖະກິດຫຼາຍຂຶ້ນ. ພວກອິທຣັດສະກັນ ໄດ້ສົ່ງກອງທະຫານເຂົ້າຍຶດຄອງກຸງໂຣມ. ຈາກນັ້ນ, ກໍເຂົ້າມາຄອບຄອງໂຣມທັງຫມົດ ໃນ

ຖານະທີ່ຊາວອີທຣັດສະກັນ ເປັນຜູ້ທີ່ມີຄວາມຮູ້ທາງດ້ານສະຖາປານິກ ແລະ ວິສະວະກອນ ຈຶ່ງໄດ້ດຳເນີນການສ້າງໂຣມໃຫ້ກາຍເປັນເມືອງທີ່ໃຫຍ່ໂຕ ແລະ ສວຍງາມ ເຊິ່ງປະກອບໄປດ້ວຍອາຄານບ້ານເຮືອນ, ຕະຫຼາດ, ໂບດ... ແລະ ໄດ້ຈັດຕັ້ງກະສັດຂອງຕົນປົກຄອງໂຣມ ນັບແຕ່ນັ້ນມາຫມູ່ບ້ານໂຣມໄດ້ກາຍເປັນກຸງໂຣມ ເຊິ່ງໃຊ້ເວລາການກໍ່ສ້າງປະມານ 250 ປີ 753-500 ກ່ອນ ຄ.ສ.

**ຂ. ສະໄຫມສາທາລະນະລັດໂຣມ**

ໃນຂະນະທີ່ກຸງໂຣມ ພວມມີຄວາມເຂັ້ມແຂງທາງດ້ານເສດຖະກິດ ຊາວໂຣແມັງກໍສະແຫວງຫາເສລີພາບດ້ວຍການນຳພາກຸ່ມຄົນລ່າຄົນໂຄ່ນລົ້ມອຳນາດຂອງພວກ ອີທຣັດສະກັນ ທີ່ເຂົ້າມາປົກຄອງໂຣມໄດ້ເປັນຜົນສຳເລັດໃນປີ 510 ກ່ອນ ຄ.ສ ຈາກນັ້ນ, ຊາວໂຣແມັງໄດ້ເລືອກເອົາການປົກຄອງແບບປະຊາທິປະໄຕຂອງກະເຣັກມາປົກຄອງປະເທດ ແລະ ເອີ້ນປະເທດຕົນເອງວ່າສາທາລະນະລັດໂຣມ (Republic of Rome) ການປົກຄອງແບບປະຊາທິປະໄຕ ໄດ້ແກ່ຍາວເຖິງ 500 ປີ (ປ 510 ກ່ອນ ຄ.ສ ເຖິງຕົ້ນຄຣິດຕະສັກຣາດ).

ລະບົບການປົກຄອງພາຍໃຕ້ລະບອບປະຊາທິປະໄຕນີ້ ມີຜູ້ດຳລົງຕຳແຫນ່ງດຽວກັນເຖິງ 2 ຄົນ (ພາຍໃຕ້ຮູບແບບຄະນາທິປະໄຕ) ໃນໄລຍະເວລາ 1 ປີເປັນທັງປະມຸກລັດ ແລະ ຜູ້ບັນຊາກອງທັບ ເຊິ່ງບຸກຄົນທັງ 2 ມີອຳນາດເທົ່າທຽມກັນ ແຕ່ໃນຍາມສົງຄາມຈະມອບອຳນາດ ເດັດຂາດໃຫ້ຄົນໃດຫນຶ່ງເປັນຜູ້ບໍລິຫານປະເທດ ໂດຍຜ່ານການເຫັນດີຈາກສະພາ, ໂຣແມັງບູຮານປະກອບມີລະບົບສະພາ 2 ສະພາຄື:

- ❖ ສະພາເຊເນດ (Senate) ເປັນສະພາສູງ (ສະພາຂຸນນາງ) ປະກອບມີສະມາຊິກ 300 ຄົນ ສ່ວນຫຼາຍຈະມາຈາກພວກປາຕຣິຊຽນ (Patrician) ໂດຍແມ່ນປະມຸກລັດເປັນຜູ້ແຕ່ງຕັ້ງສະມາຊິກສະພາ ແລະ ປະມຸກລັດຈະຖືກແຕ່ງຕັ້ງໃຫ້ເປັນສະມາຊິກສະພາ ເຊເນດ ຫຼັງຈາກທີ່ຢູ່ໃນຕຳແຫນ່ງຄົບວາລະແລ້ວ.
- ❖ ສະພາເຊນຈູຣິດ (Centureate) ແມ່ນສະພາຕ່ຳ ປະກອບມີສະມາຊິກ 100 ຄົນ ທີ່ມາຈາກທັງພວກປາຕຣິຊຽນ ແລະ ປະເລບຽນ (Plebians) ແຕ່ພວກປາຕຣິຊຽນຈະມີສຽງຫຼາຍກວ່າ, ສະພາເຊນຈູຣິດ ມີຫນ້າທີ່ໃນການອອກກົດຫມາຍ, ແຕ່ງຕັ້ງປະມຸກລັດ, ເຈົ້າຫນ້າທີ່ບໍລິຫານ ແລະ ມີສິດໃນການຮອງຮັບທີ່ປະຕິເສດກົດຫມາຍທີ່ສະເຫນີໂດຍປະມຸກລັດ ແລະ ສະພາເຊເນດ. ໂຣແມັງໄດ້ມີການຈັດແບ່ງລະບົບການປົກຄອງທາງສັງຄົມອອກເປັນ 2 ຊັ້ນຄົນຄື:

ພວກປາຕຣິຊຽນ ໃນພາສາລາຕົນວ່າ “ປາແຕ Thater" ຫມາຍເຖິງ ບິດາ ເປັນພົນລະເມືອງຂອງໂຣມທີ່ແທ້ຈິງ ເຊິ່ງມີປະຊາກອນປະມານ 10% ຂອງພົນລະເມືອງທັງຫມົດ, ເປັນພວກທີ່ມີທີ່ດິນເປັນຂອງຕົນເອງ ແລະ ມີຖານະຮັ່ງມີຈຶ່ງມີສິດໃນສັງຄົມ ແລະ ການປົກຄອງ.

ພວກ ປະເລບຽນ ໃນພາສາລາຕົນວ່າ "ປະແລມ Plebs” ຫມາຍເຖິງຈຳນວນຫຼາຍມີເຖິງ 80% ຂອງພົນລະເມືອງທັງຫມົດອັນປະກອບໄປດ້ວຍຊາວຄ້າຂາຍ, ກຳມະກອນ, ຊາວນາທຸກຍາກ ແລະ ພວກມີຫນີ້ສິນ ຫຼື ຂ້າທາດ. ເຖິງວ່າກຸ່ມຄົນດັ່ງກ່າວເປັນຜູ້ມີບົດບາດໃນການຜະລິດຮັບໃຊ້ສັງຄົມ ແຕ່ບໍ່ມີສິດໃນທາງດ້ານການເມືອງການປົກຄອງ ໂດຍສະເພາະພວກຂ້າທາດຈະຖືກກົດຂີ່ຂົ່ມເຫັງດ້ວຍການອອກແຮງງານທຳການຜະລິດຢ່າງຫນັກຫນ່ວງ. ດັ່ງນັ້ນ, ພວກຂ້າທາດຈຶ່ງໂຕນຫນີໄປຮ່ວມມືກັບຂະບວນການຕໍ່ສູ້ຢູ່ຕາມຊົນນະບົດ ແລະ ໄດ້ດຳເນີນການປະຕິວັດ

ຫຼາຍຄັ້ງ ໃນນັ້ນຂະບວນການທີ່ເດັ່ນ ແລະ ມີຊື່ສຽງທີ່ສຸດແມ່ນຂະບວນທີ່ນຳໂດຍສະປາກຕາກຸດ (Spartacus) ທີ່ສາມາດຕີເອົາຊະນະກອງທັບໂຣແມັງຫຼາຍຄັ້ງແຕ່ສຸດທ້າຍກໍຖືກຍິງເສຍຊີວິດໃນຂະນະທີ່ສູ້ຮົບໃນປີ 74 ກ່ອນ ຄ.ສ.





ສະປາກຕາກຸດ (Spartacus)

ຕະຫຼອດໄລຍະການປົກຄອງແບບປະຊາທິປະໄຕ ໂຣແມັງໄດ້ດຳເນີນການຕໍ່ສູ້ຕ້ານການຮຸກຮານຂອງພວກອີທຣັດສະກັນທີ່ຢູ່ທາງເໜືອໂຣມ ແລະ ພວກກ່ອຕ (Cauth) ທີ່ມາຈາກຝຣັ່ງ. ນອກຈາກນັ້ນ, ໂຣແມັງຍັງດຳເນີນການຂະຫຍາຍອານາເຂດໄປທົ່ວແຫຼມອາເປແນັງ (ແຫຼມອີຕາລີ) ແລະ ບໍລິເວນທະເລເມດິແຕຣາເນ ດ້ວຍການເຮັດສົງຄາມກັບຄາເທັກ Carthech ຫຼື ກາກຕເຊີ (ຄາເທັກເປັນເມືອງທີ່ຊາວຟີນີເຊຍສ້າງຕັ້ງຂຶ້ນແຄມຝັ່ງທະເລອາຟຣິກາເໜືອໃນປີ 814 ກ່ອນ ຄ.ສ) ໃນປີ 264-146 ກ່ອນ ຄ.ສ ເອີ້ນວ່າ ສົງຄາມປູນິກ Punic War ແກ່ຍາວເຖິງ 120 ປີ ໂດຍແມ່ນໂຣແມັງໄດ້ໄຊຊະນະ ແລະ ເປັນສົງຄາມຂົມຂື່ນທີ່ສຸດໃນປະຫວັດສາດຂອງມະນຸດ ເນື່ອງຈາກວ່າຊາວເມືອງຖືກດັບສູນ ແລະ ອານາຈັກ ຄາເທັກ ທີ່ເຄີຍຮຸ່ງເຮືອງຕ້ອງຖືກທຳລາຍທັງຫມົດ





**ສົງຄາມປູນິກ Punic War**

**ຄ.ສະໄຫມຈັກກະພັດໂຣແມັງ.**

ນັບແຕ່ປີ 27 ກອນ ຄ.ສ ເປັນຕົ້ນມາໂຣມ ໄດ້ກາຍເປັນຈັກກະພັດໂຣແມັງ (Roman Empire) ທີ່ຍິ່ງໃຫຍ່ ແລະ ເຂັ້ມແຂງທີ່ສຸດໃນໂລກກວມເອົາດິນແດນສ່ວນຕ່າງໆຂອງໂລກເຖິງ 3 ທະວີບໂດຍສະເພາະໃນເອີຣົບຕາເວັນຕົກ, ເອີຣົບຕາເວັນອອກສຽງໃຕ້, ພາກເຫນືອອາຟຣິກາ ແລະ ອາຊີຕາເວັນອອກໃກ້ ໂດຍແມ່ນອອດຕາວຽນ ຫຼື ອໍກຸດຕຸດ ຊີຊ່າ (Augustus Caesar) ເປັນເຈົ້າຈັກກະພັດອົງທໍາອິດຂອງຈັກກະພັດໂຣແມັງ.



ອໍກຸດຕຸດ ຊີຊ່າ (Augustus Caesar)

ສະໄຫມຈັກກະພັດໂຣແມັງ ໄດ້ເກີດມີຄວາມວຸ້ນວາຍ ໂດຍສະເພາະຜູ້ປົກຄອງທັງຝ່າຍ ພົນລະເຮືອນ ແລະ ທະຫານ ໄດ້ມີການຍາດຊີງກັນຂຶ້ນກໍາອໍານາດຢ່າງຕໍ່ເນື່ອງ ແລະ ຮຸນແຮງ. ໃນລະຫວ່າງ ປີ ຄ.ສ 211-284 ອໍານາດໄດ້ຕົກໃນກໍາມືຂອງຝ່າຍທະຫານ ເຮັດໃຫ້ຈັກກະພັດຖືກລອບສັງຫານເຖິງ 20 ພະອົງ ແລະ ຖືກໂຄ່ນລົ້ມ 6 ພະອົງ, ນອກຈາກນັ້ນ, ຍັງມີພວກເປີເຊຍ ແລະ ພວກ໋ອດ Cauth ດໍາເນີນການຮຸກຮານເປັນປະຈໍາເຮັດໃຫ້ເສດຖະກິດ-ສັງຄົມມີຄວາມອ່ອນແອ ແລະ ນັບມື້ຊຸດໂຊມຢ່າງຫນັກ.

ເພື່ອແກ້ໄຂບັນຫາດັ່ງກ່າວ, ຈັກກະພັດດີໂອເຄລີດຽນ (Deocledian, ຄ.ສ 284-305) ໄດ້ແບ່ງຈັກກະພັດໂຣແມັ່ງອອກເປັນ 2 ອານາຈັກຄື: ອານາຈັກໂຣແມັງຕາເວັນອອກ ແລະ ອານາຈັກໂຣແມັງຕາເວັນຕົກເພື່ອຊ່ວຍກັນບໍລິຫານບ້ານເມືອງໃຫ້ຫຼຸດພົ້ນຈາກສະພາບວິກິດການ. ໃນນັ້ນໂຣແມັງຕາເວັນອອກມີຄວາມເຂັ້ມແຂງສາມາດຄວບຄຸມດິນແດນຂອງຈັກກະພັດໂຣແມັງໄດ້ທັງຫມົດ. ແຕ່ມາເຖິງປີ ຄ.ສ 395 ຈັກກະພັດໂຣແມັງໄດ້ແບ່ງອອກເປັນ 2 ອານາຈັກອີກ ຄື: ອານາຈັກໂຣແມັງຕາເວັນອອກມີສູນກາງຢູ່ທີ່ຄອນສະແຕນຕິໂນເປີ ເຊິ່ງເປັນປະເທດຕວກກີ ໃນປັດຈຸບັນ ແລະ ອານາຈັກໂຣແມັງຕາເວັນຕົກມີສູນກາງຢູ່ທີ່ໂຣມ. ພາຍຫຼັງໆມາໂຣແມັງທັງສອງເຂດກໍຖືກກຸ່ມຄົນເຖື່ອນທີ່ເຜົ່າຕ່າງໆເຂົ້າມາແຊກແຊງເລື້ອຍໆ ໂດຍສະເພາະປີ ຄ.ສ 455 ພວກແວນດັນ (Vanduls) ຈາກນະຄອນ ຄາເທັກ ໄດ້ແລ່ນເຮືອໄປຕາມແມ່ນໍ້າໄທເບີບຸກຕີ ໂຣມ ແລ້ວຂົນຊັບສົມບັດ ແລະ ປະຊາຊົນປະມານ 30.000 ຄົນໄປເປັນຂ້າທາດ ນັບແຕ່ນັ້ນເປັນຕົ້ນມາຈັກກະພັດໂຣແມັງເລີ່ມອ່ອນກໍາລັງ ຈຶ່ງເປັນຜົນໃຫ້ບັນດາເຂດແຄວ້ນຕ່າງໆຖືກຍຶດຄອງໂດຍກຸ່ມຄົນຕ່າງໆ

ເມື່ອມາເຖິງປີ ຄ.ສ 476 ໂອໂດອາເຊີ Odoacer ຫົວໜ້າເຜົ່າເຢຍລະມັນໄດ້ຍົກກຳລັງມາຍຶດຄອງໂຣມ ແລ້ວເຮັດໃຫ້ອານາຈັກໂຣແມັງຕາເວັນຕົກສິ້ນສຸດລົງ, ສ່ວນອານາຈັກໂຣແມັງຕາເວັນອອກ ໄດ້ຫລຸດພົ້ນຈາກການທຳລາຍມາເປັນເວລາ 1.100 ປີ ຈົນມາເຖິງປີ ຄ.ສ 1453 ພວກເຕີກ ຈຶ່ງໄດ້ທຳລາຍນະຄອນສະແຕນຕິໂນເປີແລ້ວປ່ຽນມາເປັນອິດສະຕັນບູ lstonbul ຈົນເຖິງທຸກວັນນີ້.

**2) ຜົນງານອາລິຍະທຳ**

**ດ້ານຄວາມເຊື່ອ**

ໃນໄລຍະຕົ້ນ ຊາວໂຣແມັງສ່ວນຫຼາຍມີຄວາມເຊື່ອເລື່ອງເທບພະເຈົ້າເປັນຫຼັກ ເຊິ່ງຈະມີການຈັດພິທີເຄົາລົບເທບພະເຈົ້າເປັນປະຈຳ. ເທບພະເຈົ້າຂອງຊາວໂຣແມັງ ເປັນເທບພະເຈົ້າຄ້າຍຄືກັບຊາວກະເຣັກ ລວມມີເທບພະເຈົ້າຈູປິເຕີ Jupiter ເຊິ່ງເປັນຜູ້ປົກຄອງເທບພະເຈົ້າ ແລະ ເທພີທັງຫຼາຍ ສ່ວນເທພີຈຸໂນ Juno ເປັນມະເຫສີຂອງເທບພະເຈົ້າ ຈູປິເຕີ. ນອກຈາກນັ້ນຍັງມີເທບພະເຈົ້າມາດ Mars ເປັນເທບພະເຈົ້າແຫ່ງສົງຄາມ, ເພາະພະເຈົ້າເນັບຈູນ Neptune ເປັນເທບພະເຈົ້າແຫ່ງທະເລ, ເທບພະເຈົ້າເມຄິວຣີ Mercury ເປັນເທບພະເຈົ້າ ແຫ່ງການສື່ສານ, ເທພີເຈົ້າວີນັດ Venus ເປັນເທພີເຈົ້າແຫ່ງຄວາມຮັກ ແລະ ອື່ນໆ.

ຫຼັກຄຸນນະທຳທີ່ຊາວໂຣແມັງທຸກຄົນຕ້ອງປະຕິບັດ ແລະ ສັ່ງສອນລູກຫຼານຂອງຕົນແມ່ນ ການເຄົາລົບເທບພະເຈົ້າ, ການເຊື່ອຟັງຜູ້ອາວຸໂສ, ການປະຕິບັດຕາມກົດໝາຍ, ການມີໜ້າທີ່ປະຕິບັດຕໍ່ໂຣມ ແລະ ການຮັບໃຊ້ໂຣມ ໂດຍການເຂົ້າຮ່ວມກອງທັບ, ຫຼັກຄຸນນະທຳດັ່ງກ່າວ ໄດ້ກາຍເປັນອຸດົມການຂອງຊາວໂຣແມັງທຸກຄົນ. ການທີ່ໂຣແມັງ ມີຄວາມຈະເລີນຮຸ່ງເຮືອງນັ້ນ ຜົນກໍມາຈາກການທີ່ຊາວໂຣແມັງມີຄວາມຈິງໃຈ, ຊື່ສັດ ແລະ ກ້າຫານໂດຍຍຶດໝັ້ນໃນອຸດົມການດັ່ງກ່າວ.



ເທພີຈຸໂນ Juno

ໃນສະຕະວັດທີ IV ຊາວໂຣແມັງໄດ້ມີການປ່ຽນຈາກການເຊື່ອຖືເທບພະເຈົ້າມາເປັນ ການເຊື່ອຖືສາສະໜາ ໂດຍສະເພາະແມ່ນສາສະໜາຄຣິດທີ່ໄດ້ແຜ່ອິດທິພົນເຂົ້າຄອບຄຸມທົ່ວຈັກກະພັດໂຣແມັງ ແລະ ໄດ້ມີການ

ຂະຫຍາຍຕົວຮຸ່ງເຮືອງ, ພະເຈົ້າຄອນສະແຕນຕິນໄດ້ປະກາດພະຣາດກົດດີກາຂຶ້ນໃນປີ ຄ.ສ 313 ວ່າຈະບໍ່ກົດໜ່ວງສາສະນາຄຣິດສະຕຽນອີກຕໍ່ໄປ.

**ປັດຊະຍາ**

ແນວຄິດພື້ນຖານທາງດ້ານປັດຊະຍາຂອງຊາວໂຣແມັງ ມີຄວາມໃກ້ຄຽງກັບປັດຊະຍາ ຂອງກະເຣັກ ເຊິ່ງໄດ້ມີການແບ່ງອອກເປັນ 2 ຝ່າຍ: ຝ່າຍວັດຖຸນິຍົມ ແລະ ຝ່າຍຈິດຕະນິຍົມ.

**ກົດໝາຍ**

ກົດໝາຍພື້ນຖານຂອງໂຣແມັງ ໄດ້ເນັ້ນການຄຸ້ມຄອງສິດຜົນປະໂຫຍດຂອງຄົນໃນສັງຄົມເປັນບັນຫາສຳຄັນ ໂດຍສະເພາະການໃຫ້ຄວາມເປັນທຳ ແລະ ສິດທິຂອງບຸກຄົນໃນສັງຄົມ. ທຸກຄົນຕ້ອງດຳລົງຊີວິດຕາມກົດໝາຍຢ່າງເຂັ້ມງວດ ແລະ ດ້ວຍຄວາມສະເໝີພາບ ເຫັນໄດ້ຈາກບາງຫຼັກການເຊັ່ນ: ທຸກຄົນຕ້ອງໄດ້ຮັບສິດທິເທົ່າທຽມກັນ, ຫ້າມມີການທຸບຕີທໍລະມານຜູ້ຕ້ອງຫາ, ນັບຖືຜູ້ຕ້ອງຫາຄືກັບຜູ້ບໍລິສຸດ ຖ້າຍັງບໍ່ທັນໄດ້ມີການຕັດສິນຄວາມຜິດ ແລະ ອື່ນໆ. ຈາກຄວາມກ້າວໜ້າດັ່ງກ່າວ, ຫຼັກການພື້ນຖານຂອງກົດໝາຍໂຣແມັງຈຶ່ງຖືກນຳມາປະຍຸກໃຊ້ໃນສັງຄົມສະໄໝໃໝ່ຢູ່ຫຼາຍປະເທດໃນໂລກ.

**ວິທະຍາສາດ**

ຜົນງານການຄົ້ນຄວ້າ ໃນຂະແໜງວິທະຍາສາດຂອງຊາວໂຣແມັງ ບໍ່ຄ່ອຍພົ້ນເດັ່ນ ແລະ ປາກົດໃຫ້ເຫັນເທົ່າທີ່ຄວນ ສ່ວນຫຼາຍຊາວໂຣແມັງ ມັກຈະເປັນຜູ້ສືບທອດໂດຍການນຳເອົາຜົນງານການຄົ້ນຄວ້າຂອງຄົນອື່ນມານຳໃຊ້. ເຖິງຢ່າງໃດກໍຕາມຊາວໂຣແມັງເປັນຜູ້ທີ່ມີຄວາມສົນໃຈໃນການຮຽນຮູ້ ແລະ ສືບທອດຜົນງານໃຫ້ເກີດປະໂຫຍດໄດ້ເປັນຢ່າງດີ.

**ການແພດ ແລະ ສາທາລະນະສຸກ**

ຊາວໂຣແມັງ ເປັນຜູ້ສົ່ງເສີມຄວາມກ້າວໜ້າທາງການແພດ ໂດຍການຂະຫຍາຍຄວາມຮູ້ ທາງວິຊາການແພດອອກຢ່າງກວ້າງຂວາງ ຈົນສາມາດສ້າງເປັນຫຼັກການ ແລະ ທິດສະດີນຳມາ ອນກັນຈົນກາຍເປັນໂຮງຮຽນສອນວິຊາການແພດ ແລະ ບ່ອນປິ່ນປົວຄົນເຈັບ, ຮູ້ຈັກການນຳໃຊ້ເຄື່ອງມືທາງການແພດປະເພດປາກຄີບ, ຄີມ ແລະ ເຄື່ອງມືອື່ນໆເຂົ້າໃນການຜ່າຕັດຄໍຫນຽງ. ເອົາລູກອອກ, ໝໍ້ອ ແລະ ອື່ນໆ.

ສ່ວນສາທາລະນະສຸກ ຊາວໂຣແມັງບູຮານ ໄດ້ເອົາໃຈໃສ່ການຮັກສາຄວາມສະອາດ ແລະ ສຸຂະອະນາໄມໄດ້ດີກວ່າປະເທດອື່ນໆໃນເອີຣົບ ໂດຍສະເພາະໄດ້ມີການສ້າງລະບົບ ລະບາຍນໍ້າເປື້ອນ ແລະ ສິ່ງສົກກະປົກອອກຈາກຕົວເມືອງຢ່າງກວ້າງຂວາງ, ໃນຕົວເມືອງມີນໍ້າສະອາດໃຊ້, ສະນໍ້າສາທາລະນະໃຫຍ່ສຳລັບລອຍ ເຊິ່ງມີທັງລະບົບນໍ້າເຢັນ ແລະ ນໍ້າອຸ່ນໃຫ້ປະຊາຊົນໄດ້ພັກຜ່ອນ.

**ສະຖາປານິກ**

ຊາວໂຣແມັງເປັນຜູ້ມັກສ້າງສິ່ງອຳນວຍຄວາມສະດວກສະບາຍ ໃຫ້ແກ່ການດຳລົງຊີວິດຂອງຕົນ ຈຶ່ງໄດ້ມີການທຸ່ມເທເຫື່ອແຮງເຂົ້າໃນການກໍ່ສ້າງສິ່ງຕ່າງໆ ທີ່ມີຊື່ສຽງຢ່າງຫຼວງຫຼາຍ ຊາວໂຣແມັງ ໄດ້ຮັບການຍອມຮັບວ່າເປັນນັກກໍ່ສ້າງທີ່ມີຄວາມສາມາດ ແລະ ມີສີມືທີ່ດີເລີດ ເຊັ່ນ: ກໍ່ສ້າງຖະໜົນ, ທໍ່ລະບາຍນໍ້າ, ທໍ່ສົ່ງນໍ້າ, ສະອາບນໍ້າ, ສະໜາມກິລາ ແລະ ປະຕູໄຊ ເປັນຕົ້ນ. ສິ່ງເຫຼົ່ານັ້ນລ້ວນແຕ່ມີຄວາມໃຫຍ່ໂຕ, ໜັ້ນຄົງ, ແໜ້ນໜາ ແລະ ມີການ

ຕົກແຕ່ງຢ່າງຫຼູຫຼາ ເຊິ່ງເປັນສັນຍະລັກທີ່ສະທ້ອນໃຫ້ເຫັນເຖິງຄວາມຍິ່ງໃຫຍ່ ແລະ ຫມັ້ນຄົງຂອງຈັກກະພັດ.

**ວັນນະຄະດີ**

ວັນນະຄະດີຂອງໂຣແມັງ ຖືກນໍາມາໃຊ້ສໍາລັບການອ່ານໃນບັນດາກຸ່ມຄົນຜູ້ທີ່ມີຄວາມຮູ້ ແລະ ໃຊ້ສອນໃນມະຫາວິທະຍາໄລຫຼາຍແຫ່ງໃນເອີຣົບ, ນັກປະພັນທີ່ຍິ່ງໃຫຍ່ ແລະ ມີຊື່ສຽງ ແມ່ນ ຊິເຊໂຣ Cicero ໄດ້ຂຽນເອກະສານທີ່ມີເນື້ອໃນສໍາຄັນທາງດ້ານການເມືອງ ແລະ ຊີວິດຂອງຄົນໃນສັງຄົມ, ເປັນເອກະສານທີ່ມີຄຸນຄ່າທາງປະຫວັດສາດ ແລະ ສະທ້ອນເຖິງຄຸນລັກສະນະຂອງຊາວໂຣແມັງໄດ້ເປັນຢ່າງດີ.

# ບົດທີ 3

# ລະບອບກຳເນີດ ແລະ ການຂະຫຍາຍຕົວຂອງລະບອບສັກດີນາ

## 1.ການກຳເນີດ ແລະ ຂະຫຍາຍຕົວຂອງລະບອບສັກດີນາ

ລະບອບສັກດີນາ ກຳເນີດຂື້ນກ່ອນຫມູ່ໃນດິນແດນຕາເວັນອອກຂອງທະວີບອາຊີ ໂດຍ ສະເພາະແມ່ນ ປະເທດຈີນໃນລາຊະວົງຫານຕອນຕົ້ນ ລະຫວ່າງສະຕະວັດທີ III ກ່ອນ ຄ.ສ ສ່ວນທະວີບເອີຣົບລະບອບສັກດີນາ ກຳເນີດຂຶ້ນພາຍຫຼັງຈາກຈັກກະພັດໂຣແມັງພັງທະລາຍໃນ ປີ ຄ.ສ 476.

ພາຍຫຼັງຈັກກະພັດໂຣແມັງຖືກພັງທະລາຍດິນແດນຕ່າງໆທີ່ເຄີຍຕົກຢູ່ໃຕ້ອຳນາດຂອງຈັກກະພັດໂຣແມັງ ໃນເມື່ອກ່ອນໄດ້ແຍກຕົວອອກເປັນເອກະລາດ ແລ້ວສະຖາປະນາເປັນອານາຈັກນ້ອຍກະຈາຍຢູ່ທົ່ວໄປ ແຕ່ອານາຈັກ ເຫຼົ່ານັ້ນຄົງຕົວຢູ່ບໍ່ໄດ້ດົນ ເນື່ອງຈາກມີການສູ້ຮົບກັນເອງ. ອານາຈັກທີ່ກຸ່ມຄົນ ບາກບາ ສ້າງຕັ້ງຂຶ້ນ ຕໍ່ມາໄດ້ກາຍເປັນ ອານາຈັກຝຣັ່ງ, ອັງກິດ, ອີຕາລີ, ແອັດສະປາຍ ແລະ ອື່ນໆ.

ໃນນັ້ນອານາຈັກທີ່ສຳຄັນກວ່າຫມູ່ແມ່ນອານາຈັກ ແຟຣັງ Franks ທີ່ຕັ້ງຢູ່ທາງທິດເຫນືອ ຂອງອານາຈັກ ໂກນ Gaul ປັດຈຸບັນແມ່ນປະເທດ ຝຣັ່ງ. ອານາຈັກນີ້ສ້າງຕັ້ງຂຶ້ນໂດຍ ຄະໂລວິດ (Clovis, ຄ.ສ 481-511) ມີສູນ ກາງການປົກຄອງຢູ່ ປາຣີ ແລະ ປະກາດຕົວເອງເປັນລາຊະວົງ ເມີໂຣວິເກນ Merovigien ທີ່ມີອຳນາດສູງສຸດແຫ່ງ ອານາຈັກ ແຟຣັງ ໂດຍໄດ້ຮັບການສະຫນັບສະຫນູນຈາກສາສະຫນາຄຣິດ ໂດຍສະເພາະແມ່ນ ສັນທະປາປາ ແລະ ນັກບວດໃນແຄວ້ນໂກນ. ແຕ່ພາຍຫຼັງການເສຍຊີວິດຂອງ ຄະໂລວິດ ແລ້ວ ອານນາຈັກແຟຣັງ ໄດ້ມີກາ ແຕກແຍກ ເນື່ອງຈາກຄວາມຂັດແຍ່ງພາຍໃນ, ແຕ່ມາຮອດປີ ຄ.ສ 771-814 ພາຍໃຕ້ການ ປົກຄອງຂອງພະເຈົ້າ ໆຊາກເລີມານ ອານາຈັກແຟຣັງ ໄດ້ກັບຄືນມາສູ່ຄວາມເຂັ້ມແຂງ ແລະ ຮຸ່ງເຮືອງອີກຄັ້ງຫນຶ່ງ, ໃນສະໄຫມຊາກເລີມານ ນີ້ອຳນາດສູນ ກາງໄດ້ມີສາຍສຳພັນກັບສາສະຫນາຈັກ, ພະສັນຕະປາປາ ໄດ້ຕັ້ງສາຍານາມໃຫ້ ຊາກເລີມານ ວ່າເປັນ “ຈັກກະພັດໂຣ ແມັງຕາເວັນຕົກ".

### 2.1.ລະບົບການປົກຄອງສັກດີນາໃນເອີຣົບ

ພາຍຫຼັງຈັກກະພັດໂຣແມັງຕາເວັນຕົກຖືກພັງທະລາຍໃນປີ ຄ.ສ 476 ເອີຣົບຕາເວັນຕົກກ້າວເຂົ້າສູ່ຍຸກແຫ່ງ ຄວາມສັບສົນວຸ້ນວາຍ ເນື່ອງຈາກເກີດມີການຍາດແຍ່ງອານາເຂດເຊິ່ງກັນ ແລະ ກັນ. ໃນຊ່ວງເວລາດັ່ງກ່າວນັ້ນໄດ້ ເກີດມີຮູບແບບການປົກຄອງຫນຶ່ງຂຶ້ນໃນ ເອີຣົບ ເອີ້ນວ່າ ລະບົບສັກດີນາ Feudal System ເຊິ່ງເກີດຂຶ້ນໃນຝຣັ່ງ ກ່ອນຫມູ່ປະມານສະຕະວັດທີ V ແລະ ຫຼັງຈາກນັ້ນກໍຂະຫຍາຍໄປທົ່ວເອີຣົບ.

ຮູບແບບການປົກຄອງໃຫມ່ນັ້ນມີການແບ່ງຕອນດິນໃຫ້ແກ່ຜູ້ເຂົ້າຮ່ວມສົງຄາມ ເມື່ອກະສັດໄດ້ຮັບໄຊຊະນະ ໃນສົງຄາມ. ນັບແຕ່ສະຕະວັດທີ VI ເປັນຕົ້ນມາກະສັດແຟຣັງ Franks ໄດ້ກຳນົດເປັນຫຼັກການ ໂດຍໃຫ້ຂຸນນາງທຸກ ຄົນຕ້ອງມີຄວາມຈົງຮັກພັກດີຕໍ່ກະສັດ ແລະ ສູ້ຮົບເພື່ອກະສັດ, ດັ່ງນັ້ນ, ເພື່ອອຳນາດພວກຂຸນນາງຈຶ່ງໄດ້ມີການສ້າງ ກອງທັບຂອງຕົນໃຫ້ມີຄວາມເຂັ້ມແຂງ ເຂົ້າຮ່ວມການສູ້ຮົບເພື່ອຜົນປະໂຫຍດດັ່ງກ່າວ. ສ່ວນຂຸນນາງຜູ້ໃຫຍ່ ເມື່ອ ໄດ້ຄອບຄອງດິນແດນທີ່ກວ້າງໃຫຍ່ກໍຈະແບ່ງດິນແດນບາງສ່ວນໃຫ້ກັບນັກຮົບ (ຜູ້ຮັບໃຊ້ ຫຼື ອັດສະວິນ) ຄົນສຳຄັນ

ເພື່ອເປັນການຕອບແທນທີ່ເຂົາໄດ້ຮັບໃຊ້ຕົນເອງ ໃນລັກສະນະດຽວກັນນັກຮົບກໍຈະແບ່ງທີ່ດິນໃຫ້ທະຫານຊັ້ນຮອງລົງໄປອີກ.

ໃນສະໄຫມກາງ ຍັງບໍ່ມີການລວມປະເທດເປັນປຶກແຜ່ນແຫນ້ນຫນາ ເຊິ່ງແຕ່ລະປະເທດໄດ້ມີການແບ່ງອອກເປັນແຄວ້ນເລັກແຄວ້ນນ້ອຍ ທີ່ປົກຄອງໂດຍຊາວຕ່າງຊາດ ປະຊາຊົນຈຶ່ງມີຄວາມຜູກພັນ ແລະ ຈົ່ງຮັກພັກດີຕໍ່ຜູ້ປົກຄອງໃນແຜ່ນດິນທີ່ຕົນເອງອາໄສຢູ່ໂດຍກົງ.

ໂຄງສ້າງທີ່ມີຮູບຮ່າງແບບນີ້ ຖ້າຫາກຂຸນນາງໃຫຍ່ມີພັກພວກ ແລະ ມີຈຳນວນຫຼາຍກໍອາດສາມາດໂຄ່ນລົ້ມກະສັດລົງໄດ້, ດັ່ງນັ້ນ, ກະສັດຈະຕ້ອງມີອຳນາດຫຼາຍ ແລະ ເຂັ້ມແຂງເທົ່ານັ້ນຈຶ່ງຈະຄວບຄຸມບັນດາຂຸນນາງໄດ້ ແລະວິທີທີ່ດີທີ່ສຸດໃນການຄວບຄຸມຂຸນນາງເຫຼົ່ານັ້ນກໍຄືຕ້ອງເຮັດສົງຄາມກັບປະເທດໃກ້ຄຽງ.

**1.2. ສັງຄົມເອີຣົບສະໄຫມສັກດີນາ**

ໃນລະຫວ່າງ ປີ ຄ.ສ 1100-1350 ຂອບເຂດຊາຍແດນຂອງບັນດາປະເທດໃນເອີຣົບມີຄວາມແຕກຕ່າງໄປຈາກປັດຈຸບັນ ແລະ ປະຊາກອນຈະຖືວ່າຕົນເອງເປັນຄົນຊົນຊັ້ນໃດຊົນຊັ້ນຫນຶ່ງຂອງສັງຄົມເຊັ່ນ: ຊົນຊັ້ນຊາວນາ, ຊົນຊັ້ນກາງ, ນັກຮົບ (ອັດສະວິນ) ຫຼື ຈະຖືວ່າຕົນເອງ ເປັນຊາວ ຝຣັ່ງ ຫຼື ເຢຍລະມັນ ກໍໄດ້ເພາະວ່າໃນຊ່ວງນັ້ນມີແຕ່ອັງກິດປະເທດດຽວເທົ່ານັ້ນ ທີ່ມີຖານະເປັນປະເທດໂດຍຊັດເຈນຫຼາຍກວ່າປະເທດຕ່າງໆໃນເອີຣົບ ເນື່ອງຈາກວ່າປະເທດອັງກິດປະກອບໄປດ້ວຍເກາະດອນ ແລະ ລາຊະສຳນັກກະສັດອັງກິດໃຫ້ຄວາມຍຸດຕິທຳກັບປະຊາຊົນໄດ້ດີກວ່າດິນແດນສ່ວນອື່ນໆຂອງເອີຣົບ, ຄົນອັງກິດຈຶ່ງມີເສລີພາບ ແລະ ບໍ່ຕົກຢູ່ໃຕ້ອຳນາດຂອງພວກຂຸນນາງ, ແຕ່ຢ່າງໃດກໍດີ, ອັງກິດກໍຕົກຢູ່ໃຕ້ລະບົບສັກດີນາຄວບຄຸມວິຖີຊີວິດຂອງຜູ້ຄົນຄືກັບເຂດອື່ນໆ. ເອີຣົບໃນສະໄຫມກາງທັງຫມົດໄດ້ຕົກເປັນທາດຂອງສັກດີນ ເຊິ່ງເປັນຊົນຊັ້ນປົກຄອງ ແລະ ເຈົ້າທີ່ດິນ. ໃນກາງສະຕະວັດທີ IX, ຂະບວນການຈັບຈອງ ແລະ ຍຶດຄອງທີ່ດິນຂອງຊາວນາມ ເປັນກຳມະສິດສ່ວນຕົວຂອງພວກຂຸນນາງໄດ້ປະສົບຜົນສຳເລັດ, ດັ່ງນັ້ນ, ໃນສັງຄົມສັກດີນາ ຈຶ່ງໄດ້ຈັດແບ່ງອອກເປັນ 2 ຊົນຊັ້ນຢ່າງຊັດເຈນຄື: ຊົນຊັ້ນສັກດີນາ ແລະ ຊົນຊັ້ນຊາວນາ.

1) ຊົນຊັ້ນສັກດີນາ: ໄດ້ມີການຈັດແບ່ງອອກເປັນ 2 ຂັ້ນດ້ວຍກັນຄື:

- ເຈົ້າຊີວິດ (ກະສັດ) ເປັນຜູ້ມີອຳນາດສູງສຸດ, ເປັນຜູ້ໃຫ້ຄວາມຍຸດຕິທຳ ແລະ ເປັນຜູ້ໃຫ້ຜືນແຜ່ນດິນແກ່ບັນດາຂຸນນາງທັງຫຼາຍ, ຂຸນນາງຜູ້ເປັນບໍລິວານຂອງກະສັດຈະຕ້ອງໃຫ້ຄຳຫມັ້ນຄື: "ໃຫ້ຄວາມຊ່ວຍເຫຼືອ ແລະ ໃຫ້ຄຳປຶກສາ" ຕໍ່ກະສັດ ຫມາຍວ່າ ໃຫ້ຄວາມຊ່ວຍເຫຼືອທາງການທະຫານຈຶ່ງກາຍເປັນຂໍ້ປະຕິບັດທີ່ສືບທອດກັນໄປເຖິງຊົ່ວລູກຫຼານ
- ພວກຂຸນນາງ: ໄດ້ແບ່ງເປັນ 2 ລະດັບຄື: ຂຸນນາງຊັ້ນສູງ (Lord, ເຈົ້າຖິ່ນໃຫຍ່) ເຊິ່ງ ເປັນພວກທີ່ມີເຮືອນໃຫຍ່ໂຕ ແລະ ມີທີ່ດິນຄອບຄອງຈຳນວນມະຫາສານ ຕໍ່ມາແມ່ນຂຸນນາງ ຊັ້ນຕ່ຳ (Vassal, ຜູ້ຮັບໃຊ້ ຫຼື ອັດສະວິນ) ໂດຍອາໄສຢູ່ໃນບ້ານຂອງຕົນ ແຕ່ມີຫນ້າທີ່ຮັບໃຊ້ເຈົ້າ ນາຍຂອງຕົນດ້ວຍການເຮັດສົງຄາມກັບອານາຈັກອື່ນໆ ຊຶ່ງໄດ້ຮັບທີ່ດິນມາຄອບຄອງຈາກເຈົ້າ ນາຍຂອງຕົ້ນ.

ສັກດີນາທຸກຂັ້ນລ້ວນແຕ່ມີທີ່ດິນ ແລະ ອຳນາດຜູກຂາດໃນດິນຕອນນັ້ນຄ້າຍຄືກັບອານາຈັກໂດຍມີກອງທັບ, ກົດຫມາຍ ແລະ ພື້ນຖານເສດຖະກິດເປັນຂອງຕົນເອງ ເຊິ່ງໃນທີ່ດິນດັ່ງກ່າວໄດ້ແບ່ງອອກເປັນ 2 ສ່ວນຄື: ດິນຂອງ

ເຈົ້າຖິ່ນປະກອບມີຫໍໂຮງ, ໂບດ, ສາງເຄື່ອງ, ຄອກສັດ, ທົ່ງຫຍ້າ, ແມ່ນ້ຳລຳເຊ, ປ່າໄມ້... ແລະ ດິນເຊົ່າ ເປັນດິນທີ່ມອບໃຫ້ບ່າວນາເຊົ່າເພື່ອດຳເນີນການຜະລິດ.

2) ຊົນຊັ້ນຊາວນາ: ເປັນກຳລັງແຮງຕົ້ນຕໍໃນການລ້ຽງສັງຄົມ ໂດຍມີໜ້າທີ່ທຳການຜະລິດ ເທິງຕອນດິນຂອງຂຸນນາງ ແລະ ຕອບແທນຄືນດ້ວຍການສົ່ງຜົນຜະລິດໃຫ້ແກ່ຂຸນນາງ ຫຼື ເຈົ້າທີ່ດິນ 1/2 ຂອງຜົນຜະລິດ ແລະ ຍັງມີພັນທະເສຍພາສີຕ່າງໆເຊັ່ນ: ພາສີຄ່າຫົວ, ພາສີແຕ່ງງານ ແລະ ອື່ນໆ. ນອກນັ້ນ, ບ່າວນາຍັງຈຳຕ້ອງອອກແຮງຮັບໃຊ້ເຈົ້ານາຍດ້ວຍການສ້າງຫໍໂຮງ, ທີ່ພັກອາໄສ ແລະ ວຽກງານອື່ນໆ.

ເຖິງວ່າບ່າວນາຈະຖືກກົດຂີ່ຂູດຮີດໃນຫຼາຍຮູບແບບ ແຕ່ສະຖານະພາບຂອງພວກເຂົາກໍດີກວ່າຊາວຂ້າທາດເລັກນ້ອຍ ເນື່ອງຈາກພວກເຂົາມີກຳມະສິດສ່ວນຕົວໃນການຍຶດຖືຊັບສິນບັດເຊັ່ນ: ເຄື່ອງມືອອກແຮງງານ, ສັດລ້ຽງ, ຕູບນ້ອຍ ແລະ ມີສິດໃນການຄອບຄອງຄອບຄົວ. ພິເສດ, ບ່າວນາ ຍັງມີເວລາຈຳນວນໜຶ່ງສຳລັບສ້າງເສດຖະກິດຂອງຕົນເອງ. ດ້ວຍເຫດນັ້ນ, ບ່າວນາ ຈິ່ງໄດ້ເອົາໃຈໃສ່ໃນການຜະລິດ ແລະ ຮູ້ນຳໃຊ້ເຕັກນິກໃຫມ່ເຊັ່ນ: ການນຳໃຊ້ຝຸ່ນ, ປູກຝັງຕາມລະດູການ, ດັດແປງຄາດໄຖ, ເອົານ້ຳເຂົ້ານາ ແລະ ອື່ນໆ.

ນອກຈາກນີ້, ຍັງມີພວກນັກບວດໃນສາສະໜາຄຣິດ ເຊິ່ງມີອຳນາດໃນຕອນດິນທີ່ເຈົ້າຊີວິດແບ່ງປັນໃຫ້ເນື່ອງຈາກເຈົ້າຊີວິດ ແລະ ນັກບວດມີການອຸ້ມຊູ, ສະໜັບສະໜູນເຊິ່ງກັນ ແລະ ກັນຄື: ເຈົ້າຊີວິດອີງໃສສາສະໜາ ເພື່ອປົກຄອງປະເທດເພາະວ່າປະຊາຊົນຈະເຊື່ອຟັງນັກບວດຫຼາຍກວ່າເຈົ້າໜ້າທີ່ປົກຄອງ. ສ່ວນນັກບວດກໍອາໄສອຳນາດຂອງເຈົ້າຊີວິດ ເພື່ອເຜີຍແຜ່ອິດທິພົນ ແລະ ສ້າງຄວາມຮັ່ງມີໃຫ້ແກ່ຕົນເອງ.

## 2.ການເຊື່ອມໂຊມຂອງລະບອບສັກດີນາ

ເນື່ອງຈາກຄວາມກ້າວໜ້າທາງວິທະຍາສາດ, ຄວາມຈິງຫຼາຍເລື່ອງທີ່ເຄີຍຖືກປິດບັງໃນຍຸກມືດໄດ້ມີການເປີດເຜີຍອອກສູ່ສັງຄົມ ແລະ ສິ່ງປະດິດໃຫມ່ໆທີ່ເກີດຂຶ້ນໄດ້ສົ່ງຜົນກະທົບຕໍ່ລະບົບສັງຄົມຢ່າງໃຫຍ່ຫຼວງ ເຮັດໃຫ້ໜໍ່ແໜງຂອງສັງຄົມໃຫມ່ຄ່ອຍໆຈະເລີນເຕີບໂຕຂຶ້ນ ໃນຂະນະດຽວກັນຮູບແບບການຜະລິດເກົ່າ (ສັກດີນາ) ກໍເລີ່ມມີການເສື່ອມໂຊມ ແລະ ໄດ້ສິ້ນສຸດລົງ ດ້ວຍຫຼາຍສາເຫດທີ່ແຕກຕ່າງກັນ.

### 2.1. ການຄົ້ນພົບທາງພູມີສາດ

ພາຍຫຼັງທີ່ສິລະປະ-ວິທະຍາສາດ ໄດ້ຮັບການຟື້ນຟູ ໄດ້ສົ່ງຜົນໃຫ້ຂະແໜງການຕ່າງໆ ໂດຍສະເພາະຂະແໜງອຸດສາຫະກຳ ແລະ ການຄ້າໄດ້ມີການເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ. ເມື່ອການຄ້າມີການຂະຫຍາຍຕົວສູງ ພໍ່ຄ້າຊາວເອີຣົບ ຈິ່ງຕ້ອງການຕະຫຼາດເພື່ອຫນ່າຍສິນຄ້າ ແລະ ໃນຂະນະດຽວກັນກໍຕ້ອງການວັດຖຸດິບນຳເຂົ້າມາພາຍໃນປະເທດ ເຊິ່ງຕະຫຼາດການຄ້າ ແລະ ແຫຼ່ງວັດຖຸດິບທີ່ສຳຄັນຂອງເອີຣົບໃນເວລານັ້ນແມ່ນປະເທດອິນເດຍ ແລະ ປະເທດຕ່າງໆໃນອາຊີພາກຕາເວັນອອກ ແຕ່ເສັ້ນທາງຄົມມະນາຄົມ ທີ່ຜ່ານອາຊີຕາເວັນຕົກ ແລະ ທະເລເມດິແຕຣາເນນັ້ນເຕັມໄປດ້ວຍພວກໂຈນທີ່ຄອຍປຸ້ນຊາວພໍ່ຄ້າຜ່ານໄປມາຢ່າງເປັນປະຈຳ.

ດ້ວຍເຫດນັ້ນ, ພໍ່ຄ້າຊາວເອີຣົບຈິ່ງພະຍາຍາມຫາເສັ້ນທາງສາຍໃຫມ່ ເພື່ອໄປສູ່ພາກຕາເວັນອອກດ້ວຍການຮຽນຮູ້ກ່ຽວກັບສັງຄົມ, ທຳມະຊາດນັບມື້ຫຼາຍຂຶ້ນຈິ່ງສາມາດຄົ້ນພົບ ແລະ ຫາຄຳຕອບກ່ຽວກັບເລື່ອງຕ່າງໆ ທີ່ເປັນປິດສະໜາຈົນສາມາດນຳມາເປີດເຜີຍອອກສູ່ສັງຄົ ຢ່າງກວ້າງຂວາງ ໂດຍສະເພາະແມ່ນຄວາມຮູ້ກ່ຽວກັບຫນ່ວຍໂລກມົນກົມ, ວິທະຍາການໃນການເດີນເຮືອ ແລະ ການສ້າງເຮືອເດີນທະເລ, ເຂັມທິດ ແລະ ອື່ນໆ ທັງຫມົດເຫຼົ່ານັ້ນ

ໄດ້ກາຍເປັນເງື່ອນໄຂທີ່ສໍາຄັນໃຫ້ຊາວ ເອີຣົ ບໍ່ສາມາດຄົ້ນພົບເສັ້ນທາງສາຍໃຫມ່ໄດ້, ດັ່ງນັ້ນ, ການຄົ້ນພົບຄັ້ງໃຫຍ່ໄດ້ເລີ່ມຂຶ້ນໃນສະຕະວັດທີ XV-XVII ເຊິ່ງຜູ້ນໍາໃນການຄົ້ນພົບແຜ່ນດິນໃຫມນັ້ນ ແມ່ນ ປັອກຕຸຍການ Portugal.

ໃນປີ ຄ.ສ 1427 ຂະບວນເດີນເຮືອລໍາທໍາອິດທີ່ນໍາໂດຍ ເຈົ້າຊາຍເຮນຣີ Henry ແຫ່ງປັອກຕຸຍການໄດ້ເດີນທາງສໍາຫຼວດ ແລະ ໄດ້ຈັບຈອງບັນດາຫມູ່ເກາະຕ່າງໆໃນມະຫາສະຫມຸດອັດລັງຕິກ. ຕໍ່ມາໃນປີ ຄ.ສ 1486 ບາໂທໂລມິວ ໄດອັດ Bartholomew Diaz ໄດ້ອອກເດີນທາງຈາກນະຄອນຫຼວງລິດບອນ Lisbon ໄປທາງຝັ່ງຕາເວັນຕົກຂອງອາຟຣິກາ ຈົນເຖິງປາຍສຸດຂອງທະວີບ ໂດຍຜ່ານແຫຼມຫວັງດີ Cape of Good Hope ເຊິ່ງສາມາດຮູ້ທາງໃຕ້ສຸດຂອງທະວີບອາຟຣິກາ ແລະ ກໍມີຄວາມຫວັງທີ່ຈະພົບເສັ້ນທາງອອກໄປສູ່ທະວີບອາຊີ.

ໃນປີ ຄ.ສ 1497 ວາສະໂກ ດາກາມາ Vasco Da Garna ໄດ້ເດີນທາງອອກຈາກຝັ່ງຕາເວັນອອກຂອງອາຟຣິກາໄປເຖິງຝັ່ງຕາເວັນຕົກຂອງອິນເດຍໄດ້ສໍາເລັດ ເປັນອັນວ່າຊາວເອີຣົບໄດ້ຄົ້ນພົບເສັ້ນທາງເດີນເຮືອສາຍໃຫມ່ລະຫວ່າງທະວີບເອີຣົບກັບທະວີບອາຊີ.

ເມື່ອປັອກຕຸຍການເປັນເຈົ້າຂອງເສັ້ນທາງໄປອິນເດຍທາງຕາເວັນອອກແລວ ໃນປີ ຄ.ສ 1492 ຄຣິສະຕົບເຟີໂຄລົມບັດ Christopher Columbus ນໍາພາລູກເຮືອ 30 ຄົນອອກເດີນທາງຈາກ ແອັດສະປາຍ ຂ້າມມະຫາສະຫມຸດອັດລັງຕິກໄປທາງພາກຕາເວັນຕົກ ເຊິ່ງໄດ້ອອກເດີນທາງສໍາຫຼວດເຖິງ 4 ຄັ້ງ ສ່ວນຄັ້ງທີ 4 ໃນປີ ຄ.ສ 1502 ໄດ້ອອກໄປໄກເຖິງ ອາເມຣິກາກາງ ຮອດປະເທດຮອນດູຣັດ ແລະ ຄອດສະຕາຣິກາ ແລະ ເປັນກຸ່ມຄົນທໍາອິດທີ່ໄປເຖິງທະວີບອາເມຣິກາ ແຕ່ເມື່ອເຫັນຊາວພື້ນເມືອງທີ່ອາໄສຢູ່ທີ່ນັ້ນຊໍ້າພັດເຂົ້າໃຈວ່າແມ່ນພາກຕາເວັນອອກຂອງອິນເດຍ ຈຶ່ງເອີ້ນຊາວພື້ນເມືອງວ່າ ຊາວອິນເດຍແດງ.

ນັກເດີນເຮືອຊາວປັອກຕຸຍການຊື່ວ່າ ເຟີນັນໂດ ມາແຊນລັງ Fernando Magellan ໄດ້ນໍາພາຊາວແອັດສະປາຍ ພ້ອມດ້ວຍເຮືອ 5 ລໍາອອກຈາກ ແອັດສະປາຍໃນປີ ຄ.ສ 1519 ສໍາຫຼວດອ້ອມປາຍແຫຼມສຸດຂອງທະວີບອາເມຣິກາໃຕ້ ຫຼັງຈາກນັ້ນກໍໄດ້ນໍາພາເຮືອຂ້າມມະຫາສະຫມຸດປາຊີຟິກ ແລະ ໄປເຖິງຫມູ່ເກາະຟີລິບປິນໃນເດືອນເມສາ ປີ ຄ.ສ 1521 ແຕ່ກໍເກີດມີການປະທະກັນກັບຊາວພື້ນເມືອງ ຈຶ່ງເຮັດໃຫ້ ມາແຊນລັງ ເສຍຊີວິດ, ເຊບາສະຕຽນ ເດວຄາໂນ Sabastian Del Cano ຜູ້ຊ່ວຍ ມາແຊນລັງ ໄດ້ນໍາພາຂະບວນເຮືອທີ່ເຫຼືອເດີນທາງກັບຄືນ ໂດຍຜ່ານເຂົ້າມາທາງອິນເດຍ ອ້ອມແຫຼມຄວາມຫວັງດີກັບຄືນແອັດສະປາຍໃນປີ ຄ.ສ 1522 ເຊິ່ງ ພວກເຂົາເຈົ້າສາມາດນໍາສິນຄ້າມາໄດ້ເປັນຈໍານວນຫຼວງຫຼາຍ. ການເດີນທາງຂອງ ມາແຊນລັງ ແລະ ເດວ ຄາໂນ ນັບວ່າເປັນການເດີນເຮືອຮອບໂລກຄັ້ງທໍາອິດທີ່ປະສົບຜົນສໍາເລັດອັນໃຫຍ່ຫຼວງໃນປະຫວັດສາດຂອງມະນຸດ. ຜົນສໍາເລັດຂອງການຄົ້ນພົບທາງດ້ານພູມີສາດເຮັດໃຫ້ຊາວປັອກຕຸຍການ ແລະ ແອັດສະປາຍເກີດມີຄວາມຮູ້ກ່ຽວກັບສິ່ງໃຫມ່ຫຼາຍຢ່າງເຊັ່ນ: ການຄົ້ນພົບເສັ້ນທາງການຄ້າສາຍໃຫມ່, ດິນແດນແຫ່ງໃຫມ່, ປະຊາຊາດໃຫມ່ ແລະ ຊັບພະຍາກອນທໍາມະຊາດຈໍານວນມະຫາສານ ທີ່ມີຢູ່ໃນໂລກໃຫມ່ ໂດຍສະເພາະເງິນ ແລະ ຄໍາ ເຊິ່ງພວກເຂົາເຈົ້າໄດ້ກອບໂກຍໄປສ້າງຮັ່ງຄູນມີ ເຮັດໃຫ້ໂສມຫນ້າຂອງສັງຄົມເອີຣົບມີການປ່ຽນແປງໄປສູ່ຄວາມຈະເລີນກ້າວຫນ້າ ແລະ ເສດຖະກິດມີຄວາມເຂັ້ມແຂງຂຶ້ນ.

 

ຄຣິສະຕົບເຟີ ໂຄລົມບັດ Christopher Columbus

**2.2.ການກຳເນີດເສດຖະກິດທຶນນິຍົມ**

ປ໊ອກຕຸຍການ ແລະ ແອັດປາຍ ປະສົບຜົນສຳເລັດຄັ້ງໃຫຍ່ໃນການຄົ້ນພົບທາງສາຍໃໝ່ ການສ້າງຄວາມລ້ຳລອຍທາງດ້ານຊັບສິນເງິນ-ຄຳ ແລະ ວັດຖຸດິບທີ່ໄດ້ຈາກບັນດາປະເທດຕ່າງໆຕາມເສັ້ນທາງການຄ້າທີ່ພົບໃໝ່ໄດ້ເຮັດໃຫ້ທັງ 2 ປະເທດຄື: ແອັດສະປາຍ ແລະ ປ໊ອກຕຸຍການ ມີຄວາມເຂັ້ມແຂງ ແລະ ກາຍເປັນມະຫາອຳນາດໃນໂລກ. ແຕ່ວ່າການຜະລິດແບບທຶນນິຍົມຢູ່ປະເທດທັງສອງຊ້ຳພັດຍັງຫຼ້າຫຼັງກວ່າປະເທດອື່ນໆໃນເອີຣົບ ພວກຂຸນນາງຈິ່ງ ສັ່ງຊື້ສິນຄ້າຈາກປະເທດຝຣັ່ງ, ອັງກິດ, ໂຮນລັງ ແລະ ອື່ນໆ. ຜົນສຸດທ້າຍຊັບສິນເງິນ-ຄຳທີ່ຊາວປ໊ອກຕຸຍການ ແລະ ແອັດສະປາຍປຸ້ນສະດົມມາຈິ່ງຕົກຢູ່ໃນກຳມືຂອງຊົນຊັ້ນໃໝ່ (ນາຍທຶນ) ແລະ ເຈົ້າຂອງໂຮງງານຂອງບັນດາປະເທດທີ່ມີເສດຖະກິດເຂັ້ມແຂງກວ່າ, ດັ່ງນັ້ນ, ຈິ່ງເວົ້າໄດ້ວ່າແຫຼ່ງທຶນທຳອິດທີ່ຊົນຊັ້ນໃໝ່ສະສົມ ແມ່ນໄດ້ມາຈາກການປຸ້ນສະດົມຊັບສິນເງິນຄຳຂອງຕ່າງຊາດ.

ຫນໍ່ແຫນງເສດຖະກິດທຶນນິຍົມ ໄດ້ກໍ່ຕົວຂຶ້ນບົນພື້ນຖານຂອງການສະສົມທຶນ ທີ່ໄດ້ມາດ້ວຍການປຸ້ນສະດົມຈາກປະເທດອິນເດຍ ແລະ ປະເທດຕ່າງໆໃນຂົງເຂດອາຊີ ບວກກັບປັດໄຈດ້ານອື່ນໆເຊັ່ນ: ກຳລັງແຮງງານ, ທີ່ດິນ, ເຄື່ອງມື ແລະ ອື່ນໆ. ດ້ວຍເຫດນັ້ນ, ບັນດາຊົນຊັ້ນໃໝ່ ຫຼື ຊົນຊັ້ນນາຍທຶນທີ່ກຳລັງເກີດຂຶ້ນໃໝ່ ຈິ່ງໃຊ້ອຳນາດຍຶດເອົາທີ່ດິນຂອງຊາວນາມາສ້າງເປັນນິຄົມປູກຝັງ ເພື່ອຄວາມຮັ່ງມີຂອງຕົນເອງ. ສ່ວນຊາວນາຈຳນວນຫຼວງຫຼາຍທີ່ຖືກຍຶດ ດິນນາກໍກາຍເປັນຜູ້ສິ້ນເນື້ອປະດາຕົວ. ສະນັ້ນ, ເມື່ອຢູ່ຊົນນະບົດບໍ່ມີທີ່ເພິ່ງພາອາໄສ, ບໍ່ມີບ່ອນທຳມາຫາກິນ ແລະ ເພື່ອເອົາຊີວິດໃຫ້ພົ້ນຈາກຄວາມອຶດຫິວ ພວກເຂົາເຈົ້າຈິ່ງພາກັນຫຼັ່ງໄຫຼເຂົ້າສູ່ຕົວເມືອງໃຫຍ່ ແລະ ຈຳຕ້ອງຂາຍແຮງງານ ຍອມໄປເປັນລູກຈ້າງຂອງຊົນຊັ້ນໃໝ່ຢູ່ຕາມໂຮງຈັກໂຮງງານ.

ໃນເມື່ອມີທຶນ, ແຮງງານ, ເຄື່ອງມື ແລະ ອື່ນໆນັບມື້ຫຼາຍຂຶ້ນ ຮູບແບບການດຳເນີນທຸລະກິດທຶນນິຍົມກໍໄດ້ເກີດຂຶ້ນພ້ອມໆກັນ ໂດຍສະເພາະໂຮງຊ່າງຫັດຖະກຳ ຫຼື ໂຮງງານອຸດສາຫະກຳໄດ້ເຂົ້າມາປ່ຽນແທນສະມາຄົມຮ່ວມອາຊີບ , ການຜະລິດຢູ່ໃນໂຮງຊ່າງຫັດຖະກຳໄດ້ມີການແບ່ງງານກັນຢ່າງຊັດເຈນ ຈິ່ງເຮັດໃຫ້ສະມັດຖະພາບຂອງການເຮັດວຽກເພີ່ມຂຶ້ນຢ່າງໄວວາ, ຜະລິດຕະພັນອຸດສາຫະກຳນັບມື້ຫຼາຍຂຶ້ນ ແລະ ລາຄາສິນຄ້າຖືກກວ່າເມື່ອກ່ອນ. ສ່ວນການພົວພັນລະຫວ່າງເຈົ້າຂອງໂຮງຊ່າງຫັດຖະກຳ ແລະ ນາຍຊ່າງກໍໄດ້ປ່ຽນມາເປັນການພົວພັນລະຫວ່າງນາຍຈ້າງ ແລະ ລູກຈ້າງເທື່ອລະກ້າວ ເຊິ່ງນາຍຈ້າງໄດ້ກາຍເປັນຜູ້ທີ່ມີລາຍໄດ້ສູງ ສ່ວນລູກຈ້າງຖືກນາຍຈ້າງດຳເນີນການກົດຂີ່ຂູດຮີດຢ່າງຫນັກ ແຕ່ມີລາຍໄດ້ຕ່ຳ ແລະ ມີສະພາບການດຳລົງຊີວິດທີ່ທຸກຍາກລຳບາກ, ນອກຈາກນັ້ນ, ຂະແຫນງການຄ້າທີ່ເຄີຍມີສະມາຄົມການຄ້າເປັນຕົວຫຼັກໃນການດຳເນີນການຄ້າພາຍໃນກໍໄດ້ຖືກປ່ຽນແທນດ້ວຍບໍລິສັດການຄ້າ.

ສັງລວມແລ້ວ, ໃນຕອນທ້າຍຂອງສະໄຫມກາງສັງຄົມເອີຣົບໄດ້ມີການປ່ຽນແປງຢ່າງໃຫຍ່ຫຼວງ, ໂດຍສະເພາະເຈົ້າຂອງໂຮງຊ່າງຫັດຖະກຳ ແລະ ພໍ່ຄ້າທີ່ຮັ່ງມີໄດ້ກາຍເປັນຊົນຊັ້ນນາຍທຶນ, ສ່ວນລູກຈ້າງໄດ້ກາຍເປັນຊົນຊັ້ນກຳມະກອນ, ຊົນຊັ້ນນາຍທຶນທີ່ຫາກຳເກີດຂຶ້ນ ແລະ ພວມຈະເລີນເຕີບໂຕນັ້ນ ໄດ້ມີອຳນາດ ແລະ ທ່າແຮງທາງດ້ານເສດຖະກິດ ແຕ່ບໍ່ມີອຳນາດທາງດ້ານການເມືອງແຕ່ຢ່າງໃດເລີຍ. ດັ່ງນັ້ນ, ພວກເຂົາເຈົ້າຈຶ່ງພະຍາຍາມບືນຕົວຂຶ້ນເພື່ອກຳອຳນາດທາງດ້ານການເມືອງ ແລະ ສ້າງເງື່ອນໄຂສະດວກໃຫ້ຕົນເອງໄດ້ມີໂອກາດຂະຫຍາຍທາງດ້ານເສດຖະກິດ ແລະ ສັງຄົມດ້ວຍການລຸກຂຶ້ນຕໍ່ສູ້ຕ້ານຊົນຊັ້ນສັກດີນາຈົນສາມາດຍາດ ໄດ້ໄຊຊະນະໃນໄລຍະຕໍ່ມາ.

**2.3.ການຟື້ນຟູວັດທະນະທຳ**

ພາຍຫຼັງການລົ້ມລະລາຍຂອງຈັກກະພັດໂຣແມັງ Decline of the Roman Empire ໃນປີ ຄ.ສ 476 ຈົນເຖິງສະຕະວັດທີ XV, ສັງຄົມ-ວັດທະນະທຳໃນເອີຣົບຕົກຢູ່ໃນສະພາບທີ່ເສື່ອມໂຊມ ເຊິ່ງນັກປະຫວັດສາດເອີ້ນໄລຍະນີ້ວ່າ: "ຍຸກມືດ Dark Ages". ໃນສະໄຫມກາງ, ຄວາມຢ້ານກົວອິດທິພົນ ແລະ ອຳນາດຂອງສັກດີນາປະກອບກັບຄວາມເຊື່ອງົມງວາຍເຮັດໃຫ້ຊາວເອີຣົບເບິ່ງເພື່ອນມະນຸດດ້ວຍກັນໃນແງ່ຮ້າຍ ເພາະໄດ້ຮັບການສັ່ງສອນກັນມາຕັ້ງແຕ່ສະໄຫມບູຮານວ່າມະນຸດເປັນຄົນບາບຈຶ່ງເຮັດໃຫ້ໂລກຕົກຢູ່ໃຕ້ຍຸກມືດເປັນເວລາຫຼາຍສະຕະວັດ.

ພາຍໃຕ້ຍຸກມືດ ທຸກຢ່າງໄດ້ຕົກຢູ່ໃຕ້ອຳນາດ ແລະ ອິດທິພົນຂອງພວກຂຸນນາງສັກດີນາ ແລະ ຫມໍຜີ; ໂດຍສະເພາະພວກເຂົາເຈົ້າໄດ້ຫ້າມເຜີຍແຜ່ສາສະຫນາຄຣິດ, ຫ້າມເປີດເຜີຍ ຫຼື ເວົ້າຄວາມຈິງກ່ຽວກັບວິທະຍາສາດ ຫຼື ຄວາມຈິງກ່ຽວກັບທຳມະຊາດ. ຖ້າຜູ້ໃດເຜີຍແຜ່ ຫຼື ເປີດເຜີຍຄວາມຈິງຈະຖືກລົງໂທດດ້ວຍກຳລະນີຕ່າງໆເຊັ່ນ: ປີເຕີ Peter ແລະ ພອລ Paul ເປັນລູກສິດຄົນສຳຄັນຂອງເຍຊູ Jesu ທີ່ໄດ້ທຳການເຜີຍແຜ່ສາສະຫນາຄຣິດຢ່າງກວ້າງຂວາງທັງສອງຈຶ່ງຖືກກ່າວຫາວ່າມີຄວາມຜິດຢ່າງຫນັກ ແລະ ຖືກລົງໂທດຄື: ພອລ ທີ່ເປັນຊາວໂຣແມັງຖືກຂ້າດ້ວຍການຕັດຫົວ, ປີເຕີ ຖືກຂ້າດ້ວຍການມັດຄຶງຕິດໄມ້ກາງເຂນແຕ່ເອົາຫົວປີ້ນລົງລຸ່ມ. ສ່ວນກາລີ ເລໂອ Galileo ຜູ້ທີ່ເປີດເຜີຍວ່າ ຫນ່ວຍໂລກເປັນຫນ່ວຍມົນກົມກໍຖືກເຜົາທັງເປັນ ແລະ ຜູ້ ອື່ນໆ.

ຄຳວ່າ ການຟື້ນຟູວັດທະນະທຳ Renaissance ແປຕາມພາສາຝຣັ່ງວ່າ ການເກີດໃຫມ່ ຫມາຍເຖິງການຮື້ຟື້ນວັດທະນະທຳດັ້ງເດີມຂອງກະເຣັກ ແລະ ໂຣແມັງຄືນມາອີກຄັ້ງຫນຶ່ງເພື່ ປ່ຽນແປງປັບປຸງແນວຄວາມຄິດໃນສະໄຫມກາງມາສູ່ແນວຄວາມຄິດທີ່ກ້າວຫນ້າ, ທັນສະໄຫມຄື ກັບປັດຈຸບັນ. ການຟື້ນຟູວັດທະນະທຳຂອງເອີຣົບໄດ້ເລີ່ມຕົ້ນຂຶ້ນໃນສະຕະວັດທີ XV ແລະ ສິ້ນສຸດລົງໃນສະຕະວັດທີ XVII.

ເມື່ອຊົນຊັ້ນນາຍທຶນເປັນຊົນຊັ້ນກຳເນີດຂຶ້ນໃຫມ່ ແລະ ກຳລັງຂະຫຍາຍຕົວໄວທັງເປັນຕົວແທນໃຫ້ແກ່ການຜະລິດ ແລະ ສັງຄົມໃຫມ່ ມີຄວາມປາຖະຫນາທີ່ຈະດຳລົງຊີວິດຢູ່ຢ່າງເສລີພາບທາງດ້ານແນວຄິດ, ເສີມສ້າງວຸດທິປັນຍາ, ຄວາມສາມາດ, ການຄ້າຂາຍ ແລະ ການຂະຫຍາຍວັດທະນະທຳ, ດັ່ງນັ້ນ, ຈຶ່ງໄດ້ຄົ້ນຄວ້າພື້ນຖານວັດທະນະທຳບູຮານຂອງກະເຣັກ ແລະ ໂຣແມັງຂຶ້ນມາໃຫມ່ເພາະເຫັນວ່າວັດທະນະທຳດັ່ງກ່າວເປັນວັດທະນະທຳທີ່ມີຄຸນຄ່າ ແລະ ເປັນ ຄັງສະສົມຄວາມຮູ້ທີ່ຍອດຍິ່ງໃຫ້ແກ່ພື້ນຖານວັດທະນະທຳໂລກ ພ້ອມທັງສອດຄ່ອງກັບຄວາມມຸ່ງມາດປາຖະຫນາຂອງຕົນອີກດ້ວຍ.

ການຟື້ນຟູວັດທະນະທຳ ໄດ້ມີການຂະຫຍາຍໄປຢ່າງກວ້າງຂວາງ ແລະ ວ່ອງໄວເພາະຄວາມກ້າວຫນ້າທາງດ້ານເຕັກນິກ ໂດຍສະເພາະແມ່ນແມ່ພິມທີ່ເຮັດດ້ວຍໂລຫະສາມາດພິມ ປຶ້ມຄວາມຮູ້ກ່ຽວກັບຄວາມເປັນຈິງຂອງໂລກໄດ້ເປັນຈຳນວນຫຼາຍ ແລະ ສາມາດເຜີຍແຜ່ອອກສູ່ໂລກພາຍນອກໄດ້ຢ່າງກວ້າງຂວາງ, ຂະບວນການຟື້ນຟູວັດທະນະທຳໄດ້ກຳເນີດຂຶ້ນໃນປະເທດ ອິຕາລີ ກ່ອນຫມູ່ ແລະ ຫຼັງຈາກນັ້ນກໍແຜ່ຂະຫຍາຍອອກໄປສູ່ປະເທດອື່ນໆ ເຊັ່ນ: ຝຣັ່ງ, ເຢຍລະມັນ ແລະ ປະເທດອື່ນໆ

ນັກສິລະປະສາດຂອງປະເທດຕ່າງໆໃນເອີຣົບ ໄດ້ມີບົດບາດສຳຄັນໃນຂະບວນການຟື້ນຟູວັດທະນະທຳ ເຊັ່ນ: ຝຣັ່ງຊື່ວ ຣາເບີແລ Francois Rabelais ເປັນທັງນັກປະພັນ ແລະ ນັກການແພດທີ່ມີຊື່ສຽງຂອງຝຣັ່ງ, ເດກາກເຕີ Descarte ເປັນທັງນັກຄະນິດສາດ ແລະ ນັກປັດຊະຍາຜູ້ມີບົດບາດຂອງຝຣັ່ງ, ລີໂອນາໂດ ດາວິນຊີ Leonardo da Vinci ເປັນນັກແຕ້ມ ແລະ ນັກວິສະວະກຳຊາວ ອິຕາລີ ທີ່ມີຊື່ສຽງ, ເຊັກສະເປຍ Shakespeare ເປັນນັກຂຽນລະຄອນຊາວ ອັງກິດ ຜູ້ມີຊື່ສຽງ ແລະ ຜູ້ອື່ນໆ, ບັນດານັກວິຊາການເຫຼົ່ານີ້ໄດ້ໃຊ້ເນື້ອໃນບົດ ປະພັນ, ບົດຂຽນຂອງຕົນດຳເນີນການວິຈານ, ກ່າວປະນາມ, ໂຈມຕີຊົນຊັ້ນສັກດີນາ, ນັກບວດ ໃນສາສະຫນາຄຣິດ ທີ່ເປັນຜູ້ກີດຂວາງ ແລະ ກີດຫນ່ວງການຂະຫຍາຍຕົວຂອງຊົນຊັ້ນນາຍທຶນ. ນອກຈາກນັ້ນ, ຂະບວນການຟື້ນຟູວັດທະນະທຳໄດ້ຍົກສູງ ແລະ ສັນລະເສີນຄຸນຄ່າຂອງມະນຸດ, ທວງເອົາສິດທິມະນຸດໃຫ້ແກ່ບຸກຄົນ, ຍົກສູງບົດບາດຂອງວິທະຍາສາດທຳມະຊາດ ແລະ ສ້າງໂລກະທັດວັດຖຸນິຍົມທີ່ກ້າວຫນ້າໃຫ້ແກ່ສັງຄົມອີກດ້ວຍ.

ສ່ວນນັກວິທະຍາສາດໄດ້ມີການຄົ້ນພົບ ແລະ ປະດິດສິ່ງໃຫມ່ໆເຮັດໃຫ້ມະນຸດມີຄວາມຢາກຮູ້ຢາກເຫັນໃນເລື່ອງໂລກທີ່ຕົນອາໄສຢູ່ຫຼາຍຂຶ້ນ, ນັກວິທະຍາສາດທີ່ສຳຄັນໃນເວລານັ້ນ ແມ່ນ ໂຄເປີນິຄັດ Copernicusຊາວໂປໂລຍ ທີ່ເປັນຜູ້ສ້າງທິດສະດີທີ່ວ່າ: ດວງຕາເວັນເປັນ ສູນກາງຂອງຈັກກະວານ ແລະ ໂລກຫມູນອ້ອມດວງ



William Shakespeare ນັກປະພັນຊາວອັງກິດ

ຕາເວັນ; ກາລິເລໂອ Galileo ຊາວໂຣແມັງເປັນຜູ້ປະດິດກ້ອງດາລາສາດ ແລະ ສະຫນັບສະຫນູນຄວາມຄິດຂອງໂຄເປີນິຄັດ; ເຄບເລີ Kepler ຊາວເຢຍລະມັນ ເປັນຜູ້ຄົ້ນພົບກົດການຄຳນວນທີ່ຄວບຄຸມການເຄື່ອນໄຫວຂອງ ດາວເຄາະຕ່າງໆ; ນິວເຕິນ Newton ຊາວອັງກິດຄົ້ນພົບກົດເກນຂອງການໂນ້ມຖ່ວງ ແລະ ຮາວີ Harvey ເປັນຜູ້ຄົ້ນພົບການໄຫຼວຽນຂອງເລືອດ ແລະ ຜູ້ອື່ນໆ.

ຂະບວນການຟື້ນຟູວັດທະນະທຳ ແມ່ນຂະບວນການຕໍ່ສູ້ໃນຂົງເຂດວັດທະນະທຳແນວຄິດຄັ້ງທຳອິດຂອງຊົນຊັ້ນນາຍທຶນ ໂດຍແມ່ນນັກວິຊາການເປັນກຳລັງຕົ້ນຕໍໃນການຕໍ່ຕ້ານກັບຊົນຊັ້ນສັກດີນາທີ່ກຳລັງຢູ່ໃນທ່າເສື່ອມ

ໂຊມ ທັງເປັນປັດໄຈ ແລະ ກໍາລັງແຮງຊຸກດັນໃຫ້ພື້ນຖານວັດທະນະທໍາເອີຣົບສາມາດຂະຫຍາຍຕົວກ້າວຂຶ້ນສູ່ລະດັບສູງ.



ລີໂອນາໂດດາວິນຊີ ນັກແຕ້ມຂອງ ອີຕາລີ



ຮູບພາບທີ່ລີໂອນາໂດແຕ້ມ

**2.3. ການປະຕິຮູບສາສະໜາ**

**1) ຄວາມໝາຍ**

ການປະຕິຮູບສາສະໜາ ໝາຍເຖິງຂະບວນການຂອງຊາວຄຣິດໃນທະວີບເອີຣົບ ທີ່ບໍ່ຍອມຮັບນັບຖືຄໍາພີ ແລະ ປະຕິບັດຕາມຄໍາສັ່ງສອນຂອງສາສະໜາຈັກ ໂດຍສະເພາະຄະນະສົງກາໂຕລິກ ດ້ວຍການດໍາເນີນການຕໍ່ຕ້ານ ແລະ ປະຕິຮູບຄໍາສັ່ງສອນໃຫ້ແທດເໝາະກັບການຂະຫຍາຍຕົວຂອງສັງຄົມ ຈົນກ້າວໄປສູ່ການກໍາເນີດນິກາຍໃໝ່ຂຶ້ນໃນສາສະໜາຄຣິດ. ເວົ້າລວມແລ້ວ, ການປະຕິຮູບສາສະໜາແມ່ນຂະບວນການຕໍ່ສູ້ລະຫ່ວາງແນວຄິດເກົ່າກັບແນວຄິດໃໝ່ ເພື່ອໃຫ້ແທດເໝາະກັບສັງຄົມໃໝ່ຄືສັງຄົມເຈົ້າຫົວ.

**2)ສາເຫດຂອງການປະຕິຮູບສາສະໜາ**

ການປະຕິຮູບສາສະໜາໃນສັງຄົມຂອງເອີຣົບເກີດຂຶ້ນມາຈາກຫຼາຍປັດໄຈດັ່ງນີ້:

**ກ. ຄວາມບົກຜ່ອງຂອງສາສະໜາ:**

ໃນສະຕະວັດທີ XVI ສາສະໜາຄຣິດໄດ້ເກີດມີຈຸດດ່າງ ແລະ ຂໍ້ບົກຜ່ອງໃນຫຼາຍປະການທີ່ເຮັດໃຫ້ສາສະໜາ ຫຼື ຄຣິດຕະຈັກ ເສື່ອມໂຊມລົງ ແລະ ມະຫາຊົນໝົດສັດທາຕໍ່ການເຊື່ອຖື, ເຫດຜົນດັ່ງກ່າວນັ້ນມາຈາກປະມຸກຂອງສາສະນາຈັກຄື: ສັນຕະປາປາ ແຕ່ລະອົງ ໄດ້ຫັນໄປສົນໃຈ ແລະ ຫຍຸ້ງກ່ຽວກັບວຽກງານຂອງລັດຫຼາຍ

ກວ່າການປະຕິບັດທຳທາງສາສະໜາໃນຖານະເປັນຜູ້ນຳ ຫຼື ປະມຸກຂອງຄຣິດຕະຈັກ. ປະກອບກັບການປະພຶດບາງຢ່າງທີ່ບໍ່ເໝາະສົມຂອງ ຄະນະສົງ ແລະ ນັກບວດບາງອົງເຊັ່ນ: ການຂາຍໃບບຸນສ່ວນກຸສົນ ຫຼື ໃບລ້າງບາບ, ການຊື້ຕຳແໜ່ງໜ້າທີ່ທາງສາສະໜາ, ການດຳລົງຊີວິດຢ່າງຟຸ່ມເຟືອຍແບບຂຸນນາງຊັ້ນຜູ້ໃຫຍ່ ແລະ ການແຕ່ງຕັ້ງຍາດພີ່ນ້ອງເຂົ້າດຳລົງຕຳແໜ່ງທາງສາສະໜາໂດຍບໍ່ຄຳນຶງເຖິງຄວາມສາມາດ.

**ຂ. ສະພາບການເມືອງ ເສດຖະກິດ ແລະ ສັງຄົມ**

ການດຳເນີນຂະບວນການມະນຸດນິຍົມທີ່ປ່ຽນແປງທາງດ້ານແນວຄວາມຄິດທີ່ວ່າ: "ມະນຸດແມ່ນຕົວການຂອງບັນຫາ; ໂລກຈະດີ ຫຼື ຮ້າຍ ກໍແມ່ນມະນຸດເປັນຜູ້ສ້າງບໍ່ແມ່ນນັ່ງລໍຖ້າຫວັງໃຫ້ເທບພະເຈົ້າປະທານຄວາມສຸກໃຫ້ໃນໂລກພາຍຂ້າງໜ້າ" ນັ້ນໄດ້ເຮັດໃຫ້ຄົນເອີຣົບໃນສະໄໝກາງ ເລີ່ມມີການຮຽກຮ້ອງຄວາມເປັນອິດສະຫຼະພາບປະຊາທິປະໄຕຂອງຄົນໃນສັງຄົມ ແລະ ໄດ້ເປັນເງື່ອນໄຂໜຶ່ງເຮັດໃຫ້ຊົນຊັ້ນກາງເຊັ່ນ: ພໍ່ຄ້າ, ນັກທຸລະກິດ ກາຍມາເປັນຜູ້ມີບົດບາດທາງດ້ານເສດຖະກິດແທນພວກຂຸນນາງ. ພວກຄົນຊັ້ນກາງນີ້ໄດ້ເພີ່ມທະວີການລົງທຶນໃສ່ການຜະລິດດ້ວຍການສ້າງພື້ນຖານການຜະລິດໃໝ່ທີ່ເອີ້ນວ່າ: ເສດຖະກິດນາຍທຶນ. ແຕ່ວ່າທັງໝົດກິດຈະການເຫຼົ່ານັ້ນເຊັ່ນ: ກິດຈະການການຄ້າ ຫຼື ການຂະຫຍາຍຕາໜ່າງເສດຖະກິດໄດ້ຖືກ ວັດ ແລະ ກະສັດກີດຂວາງ. ດັ່ງນັ້ນ, ເພື່ອຕໍ່ສູ້ຕ້ານກັບສັງຄະສະມາຄົມກາໂຕລິກ ພວກນາຍທຶນ ຈຶ່ງໄດ້ໃຊ້ຮູບການຕໍ່ສູ້ແບບນິ້ມນວນ ເພື່ອຕໍ່ຕ້ານກັບວັດ ແລະ ສັກດິນາ ເຊິ່ງເອີ້ນວ່າ: "ການດັດແປງສາສະໜາ" ເພື່ອໃຫ້ແທດເໝາະກັບຊົນຊັ້ນຂອງຕົນ.

**ຄ. ການກຳເນີດແນວຄວາມຄິດແບບເຫດຜົນນິຍົມ**

ຜົນຂອງການຟື້ນຟູວັດທະນະທຳໃນທະວີບເອີຣົບ ໄດ້ເປັນຈຸດກຳເນີດໃນປັນຍາຊົນທີ່ມີຄວາມກ້າວໜ້າທາງວິຊາການຢ່າງຫຼວງຫຼາຍ ເຊິ່ງເອີ້ນວ່າ: "ນັກມະນຸດນິຍົມ" ທີ່ໃຊ້ຫຼັກແນວຄວາມຄິດແບບເຫດຜົນນິຍົມເປັນທີ່ຕັ້ງໃນການເບິ່ງ ແລະ ອະທິບາຍບັນຫາ. ແນວຄວາມຄິດນີ້ ໄດ້ມີອິດທິພົນຢ່າງຫຼວງຫຼາຍ ໃນການສັ່ງສອນໃຫ້ຄົນໃນສັງຄົມເອີຣົບ ຮູ້ຈັກເສລີພາບ ແລະ ເຄົາລົບນັບຖືສິດສ່ວນບຸກຄົນ. ການກຳເນີດແນວຄວາມຄິດແບບເຫດຜົນນິຍົມນີ້ ໄດ້ເປັນການຍົກສູງບົດບາດ ແລະ ສົ່ງເສີມການຄົ້ນຄິດຂອງມະນຸດໃນການປະກອບສ່ວນພັດທະນາສັງຄົມບໍ່ແມ່ນນັ່ງລໍຖ້າໃຫ້ພະເຈົ້າມາຊ່ວຍຕາມຄຳສອນຂອງສາສະໜາຈັກ. ດັ່ງນັ້ນ, ການກຳເນີດແນວ ຄວາມຄິດນີ້ ຈຶ່ງເຮັດໃຫ້ນັກປັນຍາຊົນພາກັນຕຳນິວິຈານການປະພຶດທີ່ບໍ່ຖືກຕ້ອງ ແລະ ບໍ່ເໝາະ ສົມຂອງນັກບວດໃນຄຣິດຕະສາສະໜາແລ້ວສົ່ງຜົນໃຫ້ຄົນໃນສັງຄົມໝົດສັດທາຕໍ່ການເຊື່ອຖື ສາສະໜາ ຈົນນຳໄປສູ່ການປ່ຽນແປງຄຳພີສັ່ງສອນໃນຫຼາຍຮູບແບບ ເຊິ່ງເອີ້ນວ່າ: ການປະຕິຮູບສາສະໜາ.

### 3) ການດຳເນີນການປະຕິຮູບສາສະໜາ

ຂະບວນການປະຕິຮູບສາສະໜາ ໄດ້ກຳເນີດເກີດຂຶ້ນທຳອິດໃນປະເທດເຢຍລະມັນພາຍໃຕ້ການນຳພາຂອງມາຕິນ ລູເຕີ Martin Lutler ຄ.ສ 1483-1546 ເຊິ່ງເປັນຊາວ ເຢຍລະມັນ, ເກີດໃນຄອບຄົວທີ່ທຸກຍາກ, ແຄວ້ນເຊັກໂຊນີ Saxony. ດ້ວຍຄວາມສົນໃຈກ່ຽວກັບສາສະໜາ ແລະ ເລື່ອງການພົ້ນບາບລາວຈຶ່ງໄດ້ເຂົ້າບວດເປັນພະສັງກັດຄະນະໂອກຸດສະຕິນຽນ (Augustinian) ໃນປີ ຄ.ສ 1505 ແລະ ໄດ້ສ້າງຊື່ສຽງໃນຖານະນັກເທວະວິທະຍາຈົນໄດ້ເປັນອາຈານສອນໃນສາຂາວິຊານີ້ທີ່ມະຫາວິທະຍາໄລວິກເຕັມເບີກໃນປີ ຄ.ສ 1521.



ມາຕິນ ລູເຕີ Martin Lutler

ການປະຕິຮູບສາສະໜາຂອງ ລູເຕີ ໄດ້ເລີ່ມຂຶ້ນໃນປີ ຄ.ສ 1517 ຫຼັງຈາກທີ່ສັນຕະປາປາລີໂອທີ X ຕ້ອງການເງິນຈຳນວນຫຼາຍເພື່ອປະຕິສັງຂອນ ແລະ ຕົກແຕ່ງວິຫານ ແຊັງປີເຕີ ທີ່ກຸງໂຣມ ແລ້ວດຳເນີນການແລກຈຳໜ່າຍຂາຍບັດໄຖ່ບາບທົ່ວທຸກຫົນແຫ່ງໃນປະເທດເຢຍລະມັນ, ການກະທຳນີ້ເຮັດໃຫ້ລູເຕີເກີດຄວາມບໍ່ພໍໃຈ ເພາະລູເຕີເຊື່ອວ່າເສັ້ນທາງທີ່ມະນຸດຈະພົ້ນບາບໄດ້ແມ່ນຕົນເອງຕ້ອງໝັ່ນສຶກສາຫຼັກການທາງສາສະໜາ ແລະ ປະຕິບັດຕາມຄຳສັ່ງສອນຂອງ ພະເຈົ້າຢ່າງເຄັ່ງຄັດ, ດັ່ງນັ້ນ, ລາວຈຶ່ງຂຽນບົດວິຈານກ່າວປະນາມການຂາຍບັດໄຖ່ບາບເປັນພາສາລາແຕັງ ຈຳນວນ 95 ຂໍ້ ໂດຍນຳໄປຕິດປະກາດໜ້າປະຕູໂບດຂອງຜາສາດ ແຫ່ງວິກເຕັມເບີກ ໃນວັນທີ 31 ຕຸລາ ປີ ຄ.ສ 1517. ຫຼັງຈາກນັ້ນ, ມີການພິມເປັນພາສາເຢຍລະມັນ ເຜີຍແຜ່ອອກໄປໃນສະຖານທີ່ອັນກວ້າງຂວາງ. ເຫດການນີ້ ໄດ້ຮຸນແຮງຂຶ້ນຈົນເຮັດໃຫ້ລູເຕີ ແລະ ສັນຕະປາປາເກີດມີຄວາມອາຄາດບາດໝາງກັນຂຶ້ນ, ສັນຕະປາປາ ລີໂອທີ X ໄດ້ປະກາດຈະຂັບໄລ່ລູແຕ ອອກຈາກສາສະໜາ ແລະ ໃຫ້ອຳນາດລັດລົງໂທດ, ຖ້າຫາກບໍ່ຢຸດເຊົາການກ່າວໂຈມຕີ ແລະ ສາລະພາບບາບພາຍໃນ 60 ວັນ, ດັ່ງນັ້ນ, ລູເຕີ ຈຳເປັນຕ້ອງປະກາດແຍກຕົວອອກຈາກວັດ ທີ່ກຸງໂຣມຢ່າງເດັດຂາດ ດ້ວຍການເຜົາຄຳສັ່ງຂອງພະສັງຄະລາດໂຣແມັງທີ່ໂບດແຫ່ງວິກເຕັມເບີກ ຕໍ່ໜ້ານັກສຶກສາມະຫາວິທະຍາໄລກຸ່ມໜຶ່ງ ໃນເດືອນທັນວາ ປີ ຄ.ສ 1520. ໃນວັນທີ 3 ມັງກອນ ປີ ຄ.ສ 1521 ສັນຕະປາປາລີໂອທີ X ກໍປະກາດຂັບໄລ່ລູເຕີ ອອກຈາກສາສະໜາ ແລະ ອີກ 4 ເດືອນຕໍ່ມາລັດຖະສະພາແຫ່ງຈັກກະພັດ ໂຣແມັງອັນສັກສິດກໍປະກາດວ່າ: ລູດເຕີເປັນຄົນນອກກົດໝາຍ.

ແຕ່ເນື່ອງຈາກວ່າ ລູເຕີ ໄດ້ຮັບການຄຸ້ມຄອງຈາກພະເຈົ້າ ເຟຣເດີຣິກ Frederick ຜູ້ຄອງລັດເຊັກໂຊນີ ລາວຈຶ່ງໄດ້ແປຄຳພີສາສະໜາໃຫມ່ອອກເປັນພາສາເຢຍລະມັນ ເຊິ່ງຄຳພີໃຫມ່ນີ້ ໄດ້ເປີດໂອກາດໃຫ້ຄົນທົ່ວໄປສຶກສາຫຼັກການທາງສາສະນາດ້ວຍຕົນເອງຢ່າງສະດວກສະບາຍຍິ່ງຂຶ້ນ ແລະ ຍັງມີຄວາມສຳຄັນທາງດ້ານວັນນະຄະດີ ເພາະເປັນວັນນະກຳທີ່ຂຽນເປັນພາສາ ພື້ນເມືອງທຳອິດຂອງເຢຍລະມັນ, ຈາກນັ້ນມາແນວຄວາມຄິດຂອງລູເຕີ ຫຼື "ລັດທິລູເຕ ກໍຖືກເຜີຍແຜ່ຕັ້ງແຕ່ປີ ຄ.ສ 1515 ເປັນຕົ້ນມາ.



ພະເຈົ້າ ເຟຣເດີຣິກ Frederick

ຕາມແນວຄວາມຄິດຂອງລູດເຕີການນັ່ງສູດມົນພາວະນາເພື່ອພົ້ນທຸກ ຫຼື ບາບທີ່ໄດ້ກະທຳໄວ້ຈະບໍ່ສາມາດນຳມາເຊິ່ງຄວາມສະຫງົບ ຫຼື ຊ່ວຍມະນຸດໃຫ້ພົ້ນບາບໄດ້ ມີແຕ່ນຳຄຳສອນຂອງພະເຈົ້າໄປປະຕິບັດໃນສິ່ງທີ່ດີຈິ່ງສາມາດພົ້ນບາບໄດ້, ເພື່ອໃຫ້ວັດ ຫຼື ສາສະໜາປະຕິຮູບໄປສູ່ສະພາບບໍລິສຸດນັ້ນ ລູເຕີ ໄດ້ດັດແປງບາງອັນແຕກຕ່າງກັບອັນເກົ່າຄື: ລູເຕີໄດ້ສັ່ງສອນ ໃຫ້ຄົນມີຄວາມເຊື່ອໝັ້ນໃນຄວາມຄິດຂອງຕົນ, ລົບລ້າງທຸກຮູບການຕ່າງໆ ເປັນຕົ້ນແມ່ນພິທີການທາງສາສະໜາທີ່ສັບສົນ, ເປືອງເວລາ ແລະ ລາຍຈ່າຍ, ລົບລ້າງກ່ຽວກັບກຳມະສິດທີ່ດິນ, ຊັບສິນຂອງລັດ, ພິທີການທາງສາສະໜາທີ່ ລູເຕີຍັງຮັກສາໄວ້ຄືເກົ່າແມ່ນພິທີສິນລ້າງບາບ. ສະຫຼຸບແລ້ວ, ການປະຕິບັດທາງສາສະໜາຕາມການປະຕິຮູບຂອງລູເຕີເອີ້ນວ່າ: "ໂປຣເຕດສະແຕນ" Protestant. ການປະຕິຮູບສາສະໜາຂອງລູເຕີ ໄດ້ຮັບການສະໜັບສະໜູນຈາກເຈົ້າຄອງນະຄອນລັດຕ່າງໆໃນເຢຍລະມັນ ໂດຍສະເພາະພວກຄົນຊັ້ນກາງ ແລະ ຊາວນາ, ເຖິງຢ່າງ ໃດກໍຕາມ, ລູເຕີກໍບໍ່ເຫັນດີກັບຂະບວນການຕໍ່ສູ້ເພື່ອປົດປ່ອຍຕົນເອງຂອງຊາວນາທີ່ໃຊ້ກຳລັງຮຸນແຮງ, ລາວເຫັນດີໃຫ້ໃຊ້ວິທີໂດຍສັນຕິ.

ການປະຕິຮູບສາສະໜາຂອງລູແຕນີ້ ຍັງໄດ້ມີອິດທິພົນເຮັດໃຫ້ເກີດມີຂະບວນການປະຕິຮູບສາສະໜາຂຶ້ນໃນດິນແດນອື່ນໆອີກເຊັ່ນ: ຂະບວນການປະຕິຮູບສາສະໜາຂອງຈອນ ການວິນ (John Calvin ຄ.ສ 1500-1564) ໃນປະເທດສະວິດເຊີແລນ ທີ່ເອີ້ນວ່າ: "ລັດທິການວິນ" ແລະ ຂະບວນການປະຕິຮູບສາສະໜາຂອງ ຈອນນອກ John knox ໃນປະເທດ ສະກັອດແລນ ທີ່ເອີ້ນວ່າ: "ເພຣດໄປເທີຣີນິດຊຶມ" Fresbyterianism.

**4) ຜົນຂອງການປະຕິຮູບສາສະໜາ**

ຂະບວນການປະຕິຮູບສາສະໜາທີ່ເກີດຂຶ້ນໃນເອີຣົບນີ້ ໄດ້ສົ່ງຜົນກະທົບທັງດ້ານດີ ແລະ ດ້ານລົບໃຫ້ແກ່ສັງຄົມເອີຣົບ ເຊັ່ນ: ໃນດ້ານດີ ເຖິງແມ່ນວ່າການປະຕິຮູບຈະພາໃຫ້ເກີດນິກາຍໃໝ່ ທີ່ມີແນວຄຳສອນແຕກຕ່າງກັນໄປຈາກລັດທິນິກາຍໂຣມັນກາໂຕຣິກເດີມກໍຕາມ, ແຕ່ມັນ ກໍມີຜົນດີເຮັດໃຫ້ສາສະໜາຄຣິດນິກາຍໂຣມັນກາໂຕຣິກເດີມມີການປັບປຸງໃຫ້ສອດຄ່ອງ ແລະ ຄົງຕົວມາຈົນຮອດປັດຈຸບັນ, ນອກຈາກນັ້ນ, ຜົນຂອງການປະຕິຮູບສາສະໜານີ້ຍັງເຮັດໃຫ້ເສດຖະກິດຂອງລັດຕ່າງໆມີຄວາມເຂັ້ມແຂງ ເນື່ອງຈາກວ່າ ວັດກໍເປັນສ່ວນໜຶ່ງທີ່ຕ້ອງເສຍພາສີໃຫ້ແກ່ລັດ ແລະ ຊັບສົມບັດຂອງວັດຈຳນວນໜຶ່ງກໍຖືກຖ່າຍໂອນມາເປັນຂອງລັດ, ປະເດັນສຳຄັນໃນການປະຕິຮູບສາສະໜານີ້ ສ່ວນຫຼາຍເຮັດໃຫ້ປະຊາຊົນທົ່ວໄປມີໂອກາດໄດ້ຮັບການສຶກສາ ອັນເປັນການປົດປ່ອຍມະນຸດອອກຈາກການເຊື່ອຖືແບບງົມງວາຍ, ເຮັດໃຫ້ມະນຸດເພີ່ມຄວາມເຊື່ອໝັ້ນໃນຕົນເອງ, ການທີ່ທຸກຄົນສາມາດອ່ານຄຳພີໄດ້

ດ້ວຍຕົນເອງນັ້ນ ເປັນການວາງພື້ນຖານຄວາມຮູ້ໃຫ້ແກ່ມະນຸດ ທີ່ຈະກ້າວຂຶ້ນຍຸກໃຫມ່ຂອງທະວີບເອີຣົບ ເພາະເຮັດໃຫ້ວິທະຍາສາດ-ວິທະຍາການທັງຫຼາຍໄດ້ກຳເນີດຂຶ້ນມາ ແລະ ຂະຫຍາຍຕົວຄວບຄູ່ກັນໄປກັບທາງດ້ານການຄ້າ.

ໃນດ້ານລົບນັ້ນການປະຕິຮູບສາສະຫນາມີສ່ວນໃນການສ້າງຜົນກະທົບເຖິງຄວາມສຳພັນລະຫວ່າງປະເທດເປັນເວລາດົນນານ ຈົນເຖິງກາງສະຕະວັດທີ XVI ພາໃຫ້ເກີດສົງຄາມສາສະຫນາຂຶ້ນໃນທະວີບເອີຣົບຫຼາຍຄັ້ງເຊັ່ນ: ສົງຄາມລະຫວ່າງພະເຈົ້າຊາກເລີທີ v ກັບ ຜູ້ປົກຄອງບັນດາລັດຢູ່ເຢຍລະມັນ ແລະ ອື່ນໆອີກ, ນອກຈາກນີ້, ການປະຕິຮູບສາສະຫນາຍັງກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍທາງດ້ານຊັບສິນກໍຄືຊີວິດເຊັ່ນ: ສົງຄາມສາສະຫນາກໍ່ໃຫ້ເກີດຄວາມວຸ່ນວາຍທົ່ວໃນສັງຄົມເອີຣົບ, ຄົນທີ່ມີຄວາມຮູ້ ຫຼື ຄົນດີຕ້ອງຖືກປະຫານຊີວິດ ຍ້ອນຂາດການພິຈາລະນາທີ່ມີເຫດຜົນ.

ສະຫຼຸບລວມແລ້ວ, ການປະຕິຮູບສາສະຫນາ ແມ່ນການຕໍ່ສູ້ລະຫວ່າງລະບົບແນວຄິດເກົ່າກັບແນວຄິດໃຫມ່ເພື່ອໃຫ້ແທດເຫມາະກັບສັງຄົມໃຫມ່ຄືສັງຄົມນາຍທຶນ, ການປະຕິຮູບສາສະຫນາ ນີ້ຍັງເປັນການສ່ອງແສງໃຫ້ເຫັນເຖິງຄວາມບົກຜ່ອງຂອງຮູບການປົກຄອງລະບອບສັກດີນາ ທັງເປັນປັດໄຈຫນຶ່ງ ທີ່ເຮັດໃຫ້ລະບອບການປົກຄອງທີ່ຍຶດຖືຕອນດິນ ເປັນເຄື່ອງວັດແທກຖານະຄົນໃນສັງຄົມ ກ້າວສູ່ຄວາມອ່ອນເພຍ ແລະ ຊຸດໂຊມ, ການປະຕິຮູບສາສະຫນານີ້ໄດ້ເຮັດໃຫ້ ສາສະຫນາກາໂຕລິກ ມີການປ່ຽນແປງກົດລະບຽບຄຳພີສ່ວນໃດສ່ວນຫນຶ່ງ ເພື່ອປັບປຸງຄືນໃຫ້ແທດເຫມາະກວ່າເກົ່າຈຶ່ງຈະສາມາດຮຽກຮ້ອງສັດທາ ແລະ ຄວາມເຊື່ອຖືຈາກມະຫາຊົນຄືນມາໄດ້. ນອກຈາກນີ້, ການດັດແປງສາສະຫນາຍັງຍົກໃຫ້ເຫັນເຖິງຄຸນຄ່າຂອງຄວາມເປັນມະນຸດຈະຕ້ອງມີຄວາມເຊື່ອທີ່ມີເຫດຜົນ ໂດຍຜ່ານການພິນິດພິຈາລະນາໃຫ້ຮອບຄອບເສຍກ່ອນ.

# ບົດທີ 4

# ການປະຕິວັດນາຍທຶນ

## 1. ການປະຕິວັດນາຍທຶນອັງກິດສະຕະວັດທີ XVII ແລະ ຄວາມໝາຍປະຫວັດສາດ

### 1.1. ການປະຕິວັດນາຍທຶນຢູ່ອັງກິດ

ໃນສະພາບລວມຂອງການຂະຫຍາຍຕົວຢູ່ເອີຣົບ, ການພົວພັນແບບທຶນນິຍົມຢູ່ອັງກິດໄດ້ເຕີບໃຫຍ່ເຂັ້ມແຂງ, ກ່ອນອື່ນແມ່ນຢູ່ທາງພາກຕາເວັນອອກສ່ຽງໃຕ້ ເຊິ່ງມີໂຮງງານຫັດຖະກໍາຫຼາຍກວ່າພາກອື່ນ: ໂຮງງານຫຼອມເຫຼັກ, ການຜະລິດກົນຈັກ, ເຄື່ອງປັ້ນດິນເຜົາ, ຕໍ່າແຜ່ນແພ... ກໍາເນີດຂຶ້ນເພື່ອຮັບໃຊ້ຢູ່ພາຍໃນປະເທດ ແລະ ສົ່ງອອກຂາຍໃຫ້ປະເທດ ໂຮນລັງ, ຝຣັ່ງ, ເຢຍລະມັນ, ອີຕາລີ.

ສູນກາງໃຫຍ່ທາງດ້ານອຸດສາຫະກໍາ, ການຄ້າ, ການເງິນ ແລະ ອື່ນໆໄດ້ສ້າງຕັ້ງຂຶ້ນເດັ່ນກວ່າຫມູ່ ແມ່ນຢູ່ລອນດອນ, ໄດ້ມີການຄົ້ນພົບໃຫມ່ທາງດ້ານເຕັກນິກ, ມີຮູບການຈັດຕັ້ງການອອກແຮງງານທີ່ສອດຄ່ອງ ແລະ ເຫມາະສົມກັບສະພາບເຮັດໃຫ້ຜົນຜະລິດເພີ່ມຂຶ້ນໄວ້. ແຕ່ປີ ຄ.ສ 1551 ເຖິງປີ ຄ.ສ 1651, ປະລິມານຖ່ານຫີນທີ່ຂຸດຄົ້ນໄດ້ເພີ່ມຂຶ້ນສະເລ່ຍ 14 ໂຕນ/ປີ. ຕົ້ນສະຕະວັດທີ່ XVII ຢູ່ອັງກິດມີ ໂຮງງານຫຼອມເຫຼັກ 800 ແຫ່ງ, ແຕ່ລະອາທິດ ຜະລິດໄດ້ 3-4 ໂຕນ. ໂຮງງານຕໍາຜ້າແລນບາງແຫ່ງມີກໍາມະກອນເຖິງພັນໆຄົນ, ບໍລິສັດການຄ້າຫຼາຍແຫ່ງຢູ່ຫຼາຍປະເທດໄດ້ເຄື່ອນໄຫວຢ່າງແຂງແຮງ. ມີຊື່ສຽງກວ່າຫມູ່ແມ່ນບໍລິສັດອິນເດຍຕາເວັນອອກ.

ສ່ວນຫຼາຍເຈົ້າທີ່ດິນແມ່ນຂຸນນາງລະດັບປານກາງ ແລະ ຂະຫນາດນ້ອຍໄດ້ຫັນປ່ຽນທຸລະກິດຕາມທິດຂອງທຶນນິຍົມ ຫັນທົ່ງນາເປັນທົ່ງຫຍ້າຈ້າງຄົນລ້ຽງແກະ ເພື່ອສະຫນອງຂົນແກະໃຫ້ຕະຫຼາດ. ເຂົາເຈົ້າໄດ້ກາຍເປັນຊັ້ນຂຸນນາງໃຫມ່, ມີອໍານາດສູງທາງດ້ານເສດຖະກິດ ຊາວນາກາຍເປັນຊັ້ນຄົນທີ່ທຸກຍາກ, ບໍ່ມີວຽກເຮັດງານທໍາ ຈຶ່ງໄດ້ພາກັນຍົກຍ້າຍໄປສູ່ຕົວເມືອງ ຫຼື ຍົກຍ້າຍໄປທໍາມາຫາກິນຢູ່ຕ່າງປະເທດ,

ການປ່ຽນແປງທາງດ້ານເສດຖະກິດ ຄວາມຂັດແຍ່ງຢ່າງຮຸນແຮງລະຫວ່າງນາຍທຶນຂຸນນາງໃຫມ່ ກັບລະບອບລາຊາທິປະໄຕອໍານາດເດັດຂາດ (ຄຽງຄູ່ກັບຄວາມຂັດແຍ່ງເກົ່າລະຫວ່າງຊາວນາກັບເຈົ້າທີ່ດິນ, ຂຸນນາງ, ເຊິ່ງພາໃຫ້ເກີດມີການປະຕິວັດໂຄ່ນລົ້ມລະບອບສັກດີນາ, ສ້າງຕັ້ງການພົວພັນການຜະລິດແບບທຶນນິຍົມ.

**ໄລຍະ 1 ( 1642-1640)**

ໃນສະພາທີ່ໄດ້ຮັບການສ້າງຕັ້ງຂຶ້ນ ແຕ່ສະຕະວັດທີ່ XIII ຮອດປີ ຄ.ສ 1640, ຈໍານວນຄົນສ່ວນຫລາຍແມ່ນຂຸນນາງໃຫມ່. ບັນດາຜູ້ແທນໄດ້ກ່າວປະນາມນະໂຍບາຍການປົກຄອງຂອງເຈົ້າຊີວິດ ຊາກເລີ . ສະພາໄດ້ຮຽກຮ້ອງໃຫ້ລົບລ້າງສິດທິວາງລະບຽບພາສີຂອງເຈົ້າຊີວິດ, ບໍ່ມີສິດຈັບກຸມ, ລົບລ້າງສິດທິຈັບກຸມຄຸມຂັງຜູ້ໃດຕາມລໍາພັງໃຈ ໂດຍບໍ່ໄດ້ຮັບການສືບສວນຈາກສານ. ຄໍາສະເຫນີນີ້ໄດ້ຮັບການສະຫນັບສະຫນູນຈາກປະຊາຊົນ ແລະ ພ້ອມກັນໄດ້ກ່າວປະນາມເຈົ້າຊີວິດ ຕໍ່ເຫດການດັ່ງກ່າວຊາກເລີ 1 ບໍ່ພໍໃຈ ຈຶ່ງປົບຫນີໄປເຕົ້າໂຮມກໍາລັງຢູ່ທາງພາກເຫນືອຂອງລອນດອນເພື່ອຕ້ານສະພາ ແລະ ປະຊາຊົນ.

ມາຮອດເດືອນສິງຫາປີ ຄ.ສ 1642, ສົງຄາມພາຍໃນໄດ້ລະເບີດຂຶ້ນ, ທະຫານຂອງຝ່າຍສະພາ ໂດຍແມ່ນ ໂອລີເວີ ໂຄຣມແວນ Oliver Cromwel ເປັນຜູ້ນໍາພາ, ສາມາດຕີເອົາຊະນະກັບທະຫານຂອງເຈົ້າຊີວິດ. ໄລຍະທີ I ຂະບວນການຕໍ່ສູ້ໄດ້ສິ້ນສຸດລົງໃນປີ ຄ.ສ 1648.



**ແຜນທີ່ຂະບວນການຕໍ່ສູ້ຢູ່ອັງກິດ**

**ໄລຍະທີ2 ປີ ຄ ສ 1649-1688**

ຕໍ່ກັບການບີບຮັດຂອງທະຫານ ແລະ ປະຊາຊົນ, ໂອລີເວີໂຄຣມແວນໄດ້ຈັບກຸມເອົາເຈົ້າຊີວິດຊາກເລີ 1 ມາປະຫານຊີວິດ ຢູ່ຕໍ່ໜ້າມະຫາຊົນ ໃນວັນທີ່ 30 ເດືອນ ມັງກອນ ປີ ຄ.ສ 1644 ປະເທດອັງກິດກາຍເປັນປະເທດສາທາລະນະລັດ, ອໍານາດການປົກຄອງທຸກຢ່າງຂຶ້ນກັບຊຸນນາງໃຫມ່ ແລະ ນາຍທຶນ. ສ່ວນຊາວນາ ແລະ ທະຫານບໍ່ໄດ້ຮັບສິດຜົນປະໂຫຍດຫຍັງ. ສະນັ້ນ, ເຂົາເຈົ້າໄດ້ສືບຕໍ່ລຸກຂຶ້ນຕໍ່ສູ້. ໂອລີເວີໂຄຣມແວນ ໄດ້ສ້າງຕັ້ງລະບອບຜະເດັດການທະຫານສັກດີນາຂຶ້ນ.

**1.2. ຄວາມໝາຍປະຫວັດສາດຂອງການປະວັດນາຍທືນຢູ່ອັງກິດໃນສະຕະວັດທີ XVII**

ການປະຕິວັດນາຍທຶນຢູ່ອັງກິດໄດ້ຮັບຜົນສໍາເລັດ, ຕົ້ນຕໍແມ່ນໄດ້ຮັບການສະໜັບສະໜູນຈາກມະຫາຊົນທີ່ເຂົ້າຮ່ວມການຕໍ່ສູ້. ການປະຕິວັຕໄດ້ເປີດເສັ້ນທາງໃຫ້ລັດທິທຶນນິຍົມຂະຫຍາຍຕົວເຂັ້ມແຂງຂຶ້ນ, ນໍາເອົາໄຊຊະນະມາໃຫ້ຊົນຊັ້ນນາຍທຶນ ແລະ ຊຸນນາງໃຫມ່. ແຕ່ສິດຜົນປະໂຫຍດຂອງປະຊາຊົນຊາວຜູ້ອອກແຮງງານຍັງບໍ່ໄດ້ຮັບການຕອບສະໜອງ, ຕໍ່ກັບຄວາມໝາຍປະຫວັດສາດຂອງການປະຕິວັດ ນາຍທຶນອັງກິດໃນສະຕະວັດທີ່ XVII ນີ້

, ທ່ານ ກາກມາກ ໄດ້ຂຽນໄວ້ວ່າ: ໄຊຊະນະຂອງຊົນຊັ້ນນາຍທຶນຫມາຍວ່າ ແມ່ນໄຊຊະນະຂອງລະບອບສັງຄົມໃຫມ່ ແລະ ໄຊຊະນະຂອງລະບອບກຳມະສິດລັດທິທຶນນິຍົມຕໍ່ກັບລະບອບສັກດີນາ.



ໂອລີເວີ ໂຄຣມແວນ Oliver Cromwel

## 2. ສົງຄາມຍາດເອົາຄວາມເປັນເອກະລາດຢູ່ອາເມຣິກາເຫນືອ

### 2.1. ສະພາບການຂອງຫົວເມືອງຂຶ້ນ ແລະ ສາເຫດຂອງສົງຄາມ

ພາຍຫຼັງທີ່ ໂກລຳບັດສ ຄົ້ນພົບທະວີບອາເມຣິກາ, ຫຼາຍປະເທດໃນທະວີບເອີຣົບໄດ້ທະຍອຍກັນຍຶດ ແລະ ແບ່ງປັນດິນແດນທີ່ຄົ້ນພົບໃຫມນີ້ເປັນຫົວເມືອງຂຶ້ນ. ເລີ່ມແຕ່ຕົ້ນສະຕະວັດທີ XVII ເຖິງຕົ້ນສະຕະວັດທີ XVIII, ອັງກິດມີຫົວເມືອງຂຶ້ນທັງຫມົດ 13 ແຫ່ງຢູ່ອາເມຣິກາເຫນືອ.



ແຜນທີ່ຫົວເມືອງຂຶ້ນຂອງອັງກິດຢູ່ອາເມຣິກາເຫນືອ

ດິນແດນທີ່ເປັນຫົວເມືອງຂຶ້ນຂອງອັງກິດນັ້ນເປັນເຂດດິນທີ່ມີຄວາມອຸດົມສົມບູນ, ຮັ່ງມີໄປດ້ວຍຊັບ ພະຍາກອນ, ແຕ່ເດີມນັ້ນເປັນດິນແດນຂອງຄົນອິນດຽນ, ໃນລະຫວ່າງ ສະຕະວັດ XVII-XVIII, ພວກລ່າເມືອຂຶ້ນອັງກິດໄດ້ ປະຫານຊີວິດ ຫຼື ຍົກຍ້າຍຄົນອິນດຽນໄປສູ່ດິນແດນພາກຕາເວັນຕົກທີ່ແສນໄກ ແລະ ແຫ້ງແລ້ງ. ພວກລ່າເມືອງຂຶ້ນ

ອັງກິດ ໄດ້ຈັບຄົນຜິວດຳຢູ່ທະວີບອາຟຣິກາໄປເປັນຂ້າທາດເພື່ອບຸກເບີກດິນເຮືອ, ສ້າງປ້ອມ ແລະ ຫໍໂຮງຕ່າງໆ, ເສດຖະກິດຂອງຫົວເມືອງຂຶ້ນເຫຼົ່ານັ້ນກໍຂະຫຍາຍຕົວຕາມແບບທຶນນິຍົມ. ແຕ່ລັດຖະບານອັງກິດຊອກທຸກວິທີທາງກີດກັ້ນການຂະຫຍາຍຕົວທາງດ້ານອຸດສາຫະກຳ, ການຄ້າຂອງບັນດາເມືອງຂຶ້ນຢູ່ອາເມຣິກາເຫນືອ, ໂດຍໃຊ້ວິທີເກັບພາສີຫນັກ, ຕໍ່ Indian ຫລື ຄົນອິນເດຍແດງ) ບັນດາຫົວເມືອງຂຶ້ນທັງບໍ່ໃຫ້ມີສິດຄ້າຂາຍທັງພາຍໃນ ແລະ ຕ່າງປະເທດ, ພົນລະເມືອງ ທີ່ຢູ່ບັນດາຫົວເມືອງຂຶ້ນໃນອາເມຣິກາເຫນືອນັ້ນສ່ວນຫຼາຍແມ່ນລູກຫຼານຂອງຄົນອັງກິດທີ່ຍົກຍ້າຍໄປຢູ່. ຄວາມຂັດແຍ່ງນັບມື້ນັບຮຸນແຮງ, ບັນດາຊັ້ນຄົນປະຊາຊົນທີ່ເປັນເມືອງຂຶ້ນລວມມີນາຍທຶນເຈົ້າຂອງໂຮງງານ, ກຳມະກອນ, ຂ້າທາດລ້ວນແຕ່ຕໍ່ຕ້ານການປົກຄອງຂອງລ່າເມືອງຂຶ້ນອັງກິດ.

**2.2. ການຜັນແປຂອງສົງຄາມ**

ເດືອນ 12 ປີ ຄ.ສ 1773, ປະຊາຊົນຢູ່ທ່າເຮືອ ໂບສເຕິນ ໃຕ້ບຸກໂຈມຕີເຮືອບັນທຸກຊາຂອງອັງກິດ ແລະ ຖິ້ມຖັງຊາລົງທະເລ ເພື່ອຄັດຄ້ານຕໍ່ລະບອບການເກັບພາສີຂອງລ່າເມືອງຂຶ້ນອັງກິດຢູ່ອາເມຣິກາເຫນືອ. ນັບແຕ່ວັນທີ່ 5 ເດືອນ ກັນຍາ ເຖິງວັນທີ່ 26 ເດືອນ ຕຸລາ ປີ ຄ.ສ 1774, ຜູ້ແທນຈາກບັນດາເມືອງຂຶ້ນໄດ້ເປີດກອງປະຊຸມຢູ່ ຟີລາແດນເຟຍ, ຮຽກຮ້ອງໃຫ້ເຈົ້າຊີວິດອັງກິດ ລົບລ້າງກົດຫມາຍບັງຄັບຫົວເມືອງຂຶ້ນ, ແຕ່ເຈົ້າຊີວິດບໍ່ຍອມຮັບການແກ້ໄຂ. ເດືອນເມສາ ປີ ຄ.ສ 1775, ສົງຄາມລະຫວ່າງອັງກິດ ແລະ ບັນດາຫົວເມືອງຂຶ້ນຢູ່ອາເມຣິກາເຫນືອໄດ້ລະເບີດຂຶ້ນ. ໂດຍ ຈອດວໍຊິງຕັນ ເປັນຜູ້ນຳພາ (ວໍຊິງຕັນແມ່ນ ເຈົ້າທາດທີ່ຮັ່ງມີ, ມີຄວາມເກັ່ງກ້າສາມາດທາງດ້ານການທະຫານ ແລະ ຈັດຕັ້ງ, ໄດ້ຖືກຄັດເລືອກເປັນຜູ້ບັນຊາການທະຫານ). ວັນທີ 4 ເດືອນ ກໍລະກົດ ປີ ຄ.ສ 1776, ໄດ້ປະກາດເອກະລາດ, ກຳນົດສິດທິຂອງຄົນ ແລະ ສິດເອກະລາດຂອງບັນດາຫົວເມືອງຂຶ້ນ.



ຈອດ ວໍຊິງຕັນ

ການປະກາດເອກະລາດໄດ້ຢືນຢັນວ່າ: ທຸກຕົ້ນເກີດມາລ້ວນແຕ່ມີສິດສະເຫມີພາບ, ສິດມີຊີວິດ, ມີສິດເສລີພາບ, ແຕ່ສົງຄາມຍັງສືບຕໍ່ຍ້ອນຈຳນວນພົນ ແລະ ກຳລັງປະກອບອາວຸດຍັງອ່ອນນ້ອຍ ສະນັ້ນ ຂະບວນການລຸກຮື້ຂຶ້ນຢູ່ບາງບ່ອນຖືກປະລາໄຊ. ເຖິງຢ່າງໃດກໍຕາມກຳລັງທະຫານຍັງຄົງຮັກສາກຳລັງ ແລະ ຕີຊະນະການບຸກໂຈມຕີຂອງທະຫານລັດຖະບານອັງກິດ.

ວັນທີ 17 ເດືອນ ຕຸລາ ປີ ຄ.ສ 1777, ກຳລັງທະຫານຝ່າຍຫົວເມືອງຂຶ້ນໄດ້ຮັບໄຊຊະນະຢ່າງໃຫຍ່ຫຼວງຢູ່ ຊາຣາໂຕກາ ແລະ ຈັບຊະເລີຍເສິກໄດ້ 5.000 ຄົນ, ເຮັດໃຫ້ທະຫານອັງກິດພົບຄວາມຫຍຸ້ງຍາກ, ບໍ່ມີກຳລັງໃຈສູ້ຮົບ, ກຳລັງທະຫານຫົວເມືອງຂຶ້ນໄດ້ບຸກໂຈມຕີທະຫານອັງກິດນັບມື້ນັບຮຸນແຮງ ແລະ ຍາດໄດ້ໄຊຊະນະຫຼາຍບັ້ນຮົບ, ອັງກິດຈຳຕ້ອງເຊັນສັນຍາແຕກຊາຍ ໃນປີ ຄ.ສ 1783.

### 2.3. ຜົນໄດ້ຮັບ ແລະ ຄວາມຫມາຍປະຫວັດສາດຄອງສົງຄາມ

ຕາມການເຊັນສັນຍາທີ່ແວກຊາຍ (ປະເທດຝຣັ່ງ) ປີ ຄ.ສ 1783, ອັງກິດຈຳຕ້ອງຮັບຮອງເອົາຄວາມເປັນເອກະລາດຂອງຫົວເມືອງຂຶ້ນທັງຫມົດ 13 ແຫ່ ແລະ ປະເທດສະຫະລັດອາເມຣິກາກໍໄດ້ຮັບການສ້າງຕັ້ງຂຶ້ນ, ຕາມລັດຖະທຳມະນູນ ປີ ຄ.ສ 1787, ປະທານາທິບໍດີມີສິດອຳນາດທາງດ້ານກົດຫມາຍ 4 ປີ ໃດມີການເລືອກຕັ້ງເທື່ອຫນຶ່ງ, ຜູ້ຫນຶ່ງມີສິດສະຫມັກພຽງຄັ້ງດຽວ. ໃນສະພາມີສະພາສູງ ແລະ ສະພາຕ່ຳ. ຜູ້ມີສິດສະຫມັກເລືອກຕັ້ງຕ້ອງເປັນຄົນຜິວຂາວ, ມີຊັບສິນບັດ, ເສຍພາສີຕາມກຳນົດ. ສ່ວນຜູ້ຍິງບໍ່ມີສິດ ເລືອກຕັ້ງ, ຊາວຂ້າທາດຜິວດຳ ແລະ ຄົນອິນເດຍແດງ ບໍ່ມີສິດທາງດ້ານການເມືອງ, ແຕ່ຍັງຖືວ່າເປັນເຈົ້ານໍລະດົກທີ່ດິນຢູ່ຕາມເດີມບາງແຫ່ງ.

ສົງຄາມຍາດເອົາເອກະລາດຂອງບັນດາເເມືອງຂຶ້ນອັງກິດຢູ່ອາເມຣິກາເຫນືອ ໄດ້ປົດປ່ອຍປະຊາຊົນຢູ່ພາກເຫນືອອາເມຣິກາພົ້ນອອກຈາກການຄອບຄອງຂອງລັດທິລ່າເມືອງຂຶ້ນ, ເຮັດໃຫ້ເສດຖະກິດທຶນນິຍົມ ອາເມຣິກາຂະຫຍາຍຕົວ ດັ່ງນັ້ນ, ສົງຄາມຍາດເອົາເອກະລາດຄັ້ງນັ້ນທັງແມ່ນຂະບວນການປະຕິວັດນາຍທຶນ, ຍັງມີຜົນສະທ້ອນເຖິງຂະບວນການຕໍ່ສູ້ຍາດເອົາຄວາມເປັນເອກະລາດຂອງຫຼາຍປະເທດ ໃນທ້າຍສະຕະວັດທີ່ XVIII ຫາ ຕົ້ນສະຕະວັດທີ່ XIX ໃນທົ່ວໂລກ.

## 3.ການປະຕິວັດນາຍທຶນຢູ່ຝຣັ່ງ 1789

### 3.1. ສະພາບການຂອງປະເທດຝຣັ່ງກ່ອນການປະຕິວັດ

ດ້ານເສດຖະກິດ: ການກະສິກຳ, ອຸປະກອນ ແລະ ວິທີການຜະລິດຫຼ້າຫຼັງຕົ້ນຕໍແມ່ນໃຊ້ຈົກ, ຊວ້ານ, ໄຖສະນັ້ນ ຜົນຜະລິດຕ່ຳ, ໄຮ່ນາຖືກປະຣິກເຮື້ອຫຼາຍ, ໄພແຫ້ງແລ້ງ ແລະ ໄພອຶດຫິວເກີດຂຶ້ນລຽນຕິດ. ສ່ວນອຸດສາຫະກຳ, ການຄ້າໄດ້ມີການຂະຫຍາຍຕົວ, ເຄື່ອງຈັກໄດ້ນຳໃຊ້ເຂົ້າໃນການຜະລິດ. ໂຮງງານຕ່ຳຜ້າ, ໂຮງງານຫຼອມໂລຫະໄດ້ກຳເນີດຂຶ້ນ, ບັນດາທ່າເຮືອໃຫຍ່ຄື: ມາກໄຊ. ບອກໂດ... ໄດ້ເຕົ້າໂຮມເພື່ອຄ້າຂາຍເຂົ້າອອກຢ່າງຟົດຟື້ນ, ບັນທຸກເຄື່ອງສົ່ງອອກ (ເຫຼົ້າແວງ, ແຜ່ນແພ, ເຄື່ອງນຸ່ງຫົ່ມ, ເຄື່ອງແກ້ວ... ໄປສູ່ປະເທດຕ່າງໆ ແລະ ນຳເອົາເຄື່ອງຈັກ, ນ້ຳຕານ , ກາເຟຈາກປະເທດອັງກິດ, ທະວີບ ອາເມຣິກາ ແຕ່ລະບອບສັກດີນາກີດຫນ່ວງການຂະຫຍາຍຕົວທາງດ້ານອຸດສາຫະກຳ, ການຄ້າ, ເກັບຄ່າພາສີຫນັກ ບາງເຂດຂອງປະເທດບໍ່ມີຫົວຫນ່ວຍວັດແທກເງິນຕາເອກະພາບ, ການຊື້ເຄື່ອງຂອງປະຊາຊົນ, ຜູ້ທຸກຍາກຈຳກັດທີ່ສຸດ ສະຫຼຸບແລ້ວສະພາບຊີວິດການເປັນຢູ່ຂອງຊາວຜູ້ອອກແຮງງານທຸກຍາກທີ່ສຸດ

ດ້ານການເມືອງ-ສັງຄົມ: ກ່ອນການປະຕິວັດ, ຝຣັ່ງແມ່ນປະເທດລາຊາທິປະໄຕອຳນາດເດັດຂາດ. ເຈົ້າຊີວິດເປັນຜູ້ກຳອຳນາດທັງຫມົດ. ສັງຄົມສັກດີນາຝຣັ່ງແບ່ງອອກເປັນ 3 ຊັ້ນວັນນະເຊັ່ນ ນັກບວດ, ຂຸນນາງ ແລະ ຊັ້ນວັນນະທີ່ 3. ພວກຂຸນນາງມີສິດກຳອຳນາດ ແລະ ມີຫນ້າທີ່ຕຳແໜ່ງສູງໃນກົງຈັກການປົກຄອງ. ການທະຫານ, ນັກບວດ ແລະ ຂຸນນາງແມ່ນຊັ້ນວັນນະທີ່ໄດ້ຮັບສິດຜົນປະໂຫຍດທຸກຢ່າງທາງດ້ານເສດຖະກິດ, ແຕ່ບໍ່ໄດ້ເສຍພາສີ

ໃຫ້ເຈົ້າຊີວິດ ຊັ້ນວັນນະທີ3 ລວມມີ ຫຼາຍຊົນຊັ້ນ ແລະ ຊັ້ນຄົນຄື ນາຍທຶນ, ຊາວນາ, ສາມັນຊົນໃນຕົວເມືອງ. ເຂົ້າເຈົ້າບໍ່ມີສິດທາງດ້ານການເມືອງ. ຊາວນາກວມ 90% ຂອງ ພົນລະເມືອງ (ປະມານ 24 ລ້ານຄົນ), ເປັນຊົນຊັ້ນທີ່ທຸກຍາກທີ່ສຸດຍ້ອນວ່າ ບໍ່ມີດິນນາ, ຖືກຫຼາຍຊັ້ນຄົນກົດຂີ່ຂູດຮີດ, ນາຍທຶນເປັນຜູ້ນຳຫນ້າຊັ້ນວັນນະທີ່ 3, ມີທ່າແຮງທາງດ້ານເສດຖະກິດ, ແຕ່ກໍບໍ່ມີສິດຫຍັງທາງດ້ານການເມືອງ.




ແຜນວາດຊັ້ນວັນນະໃນສະໄໝສັກດີນາຢູ່ປະເທດຝຣັ່ງ



ການຕໍ່ສູ້ທາງດ້ານແນວຄິດ: ລະບອບລາຊາທິປະໄຕອຳນາດເດັດຂາດກໍຖືກກ່າວປະນາມ, ວິຈານ ຢ່າງດຸເດືອດຮຸນແຮງໃນຂົງເຂດວັດທະນະທຳ, ແນວຄິດ ພົ້ນເດັ່ນກວ່າຫມູ່ໃນຂະບວນການນີ້ແມ່ນນັກປັດຊະຍາຂອງຊົນຊັ້ນນາຍທຶນ ຄື ຊາກເລີ ມົງແຕສະກິເອີ "ເສລີພາບທາງດ້ານການເມືອງຂອງປະຊາຊົນ ສະແດງອອກຢູ່ບ່ອນວ່າ: ປະຊາຊົນບໍ່ຢ້ານກົວ, ກົງກັນຂ້າມຍາມໃດກໍມີຄວາມຮູ້ສຶກປອດໄພ. ເພື່ອໃຫ້ມີເສລີພາບທາງດ້ານການເມືອງ, ລັດຖະບານຕ້ອງຈັດຕັ້ງເພື່ອບໍ່ໃຫ້ຜູ້ໃດຂົ່ມຂູ່ຜູ້ອື່ນ", ໂວນແຕ (ຝຣັ່ງຊວາ ມາຣີອາຣຸເອ "ຈົ່ງທັບມ້າງເຮືອນຮັງຂອງພວກຫຼອກລວງ". ຊັງຊັກຣຸດໂຊໄດ້ເວົ້າວ່າ: "ທຸກຄົນເກີດມາ ມີສິດເສລີພາບ, ເສລີພາບແມ່ນສິດທິຂອງທຸກຄົນ".

**3.2. ການເປັນໄປຂອງການປະຕິວັດ**

**1) ວິກິດການຂອງລະບົບລາຊາທີ່ປະໄຕອຳນາດເດັດຂາດ**

ເຈົ້າຊີວິຫລຸຍ 16 ຂຶ້ນຄອງລາດປີ ຄ.ສ 1774, ລະບອບສັກດີນານັບມື້ນັບອ່ອນເພຍ. ຍ້ອນຫນີ້ສິນ ຂອງລັດ ປືມນາຍທຶນນັ້ນບໍ່ສາມາດໃຊ້ແທນໄດ້ (ຮອດປີ ຄສ 1789 ຫນີ້ຂຶ້ນຮອດ 5 ຕື້ ລີບເວີ (Livers) ສະກຸນເງິນຝຣັ່ງ ໃນ ເມື່ອກ່ອນ). ສະນັ້ນ ເຈົ້າຊີວິດຈຳຕ້ອງເກັບພາສີສູງຈາກໂຮງງານອຸດສາຫະກຳ, ການຄ້າເຮັດໃຫ້ກຳມະກອນ ແລະ ຊ່າງ ຫັດຖະກຳວ່າງງານ. ຕໍ່ສະພາບການດັ່ງກ່າວ ໄດ້ຊຸກດັນໃຫ້ປະຊາຊົນຕໍ່ສູ້ຕ້ານສັກດີນາຢ່າງເຂັ້ມແຂງ, ປີ ຄ.ສ 1788, ການລຸກຮື້ຂຶ້ນຕໍ່ສູ້ຂອງຊາວນາມີຫຼາຍຂະບວນລະເບີດຂຶ້ນທົ່ວທຸກບ່ອນ. ສະເພາະໃນລະດູບານໃຫມ່ ປີ ຄ.ສ 1789 ໄດ້ມີຫຼາຍຮ້ອຍຂະບວນການຕໍ່ສູ້ຂອງຊາວນາ ແລະ ສາມັນຊົນໃນຕົວເມືອງລະເບີດຂຶ້ນ.

**2) ໄຊຊະນະເບື້ອງຕົ້ນຂອງການປະຕິວັດ**

ກອງປະຊຸມ 3 ຊັ້ນວັນນະໄດ້ຈັດຂຶ້ນໃນວັນທີ່ 5 ເດືອນ ພຶດສະພາ ປີ ຄ.ສ 1789 ໂດຍການເຕົ້າໂຮມຂອງ ເຈົ້າຊີວິດ ຢູ່ທີ່ພະລາຊະວັງແວກໄຊ, ໂດຍມີຜູ້ແທນຂອງສາມຊັ້ນວັນນະເຂົ້າຮ່ວມກອງປະຊຸມໄດ້ດຳເນີນໄປຢ່າ ເຄັ່ງ ຕຶງຍ້ອນວ່າຜູ້ແທນຂອງຂຸນນາງ ແລະ ນັກບວດໃຫ້ການສະຫນັບສະຫນູນເຈົ້າຊີວິດເພີ່ມພາສີ, ສ່ວນຜູ້ແທນ ຊັ້ນ ວັນນະທີສາມອອກແຮງຄັດຄ້ານມະຕິດັ່ງກ່າວ.

ວັນທີ 17 ເດືອນ ມີຖຸນາ ບັນດາຜູ້ແທນຊັ້ນວັນນະທີສາມໄດ້ເປີດປະຊຸມສະພາປະຊາຊົນ, ຫຼັງຈາກນັ້ນ ກໍ ປະກາດເປັນສະພານິຕິບັນຍັດ, ມີສິດອອກຮ່າງລັດຖະທຳມະນູນ, ຜ່ານບັນດາດຳລັດຕໍ່ກັບການເງິນ. ເຈົ້າຊີວິດ ແລະ ຂຸນນາງໄດ້ໃຊ້ກຳລັງທະຫານປາບປາມສະພາຢ່າງຮຸນແຮງ,

ມວນຊົນຊາວຜູ້ອອກແຮງງານ ແລະ ນາຍທຶນປະຕິວັດໄດ້ປະກອບອາວຸດລຸກຂຶ້ນຕໍ່ສູ້ຕ້ານເຈົ້າຊີວິດ. ທະຫານ ສ່ວນຫຼາຍກໍສະຫນັບສະຫນູນ ແລະ ຮ່ວມມືຕໍ່ສູ້ນຳຝ່າຍປະຊາຊົນ, ວັນທີ 14 ເດືອນ ກໍລະກົດ ປີ ຄ.ສ 1788 (ໄດ້ກາຍເປັນວັນຊາດຂອງຝຣັ່ງຈົນເຖິງທຸກວັນນີ້) ປວງຊົນປະກອບອາວຸດພາກັນຫຼັ່ງໄຫ ບຸກໂຈມຕີ ຢ່າງ ດຸເດືອດຍຶດປ້ອມທີ່ຫມັ້ນ ແລະ ຄ້າຍຄຸມຂັງ ບາສຕິນ ຫຼັງຈາກນັ້ນບັນດາສຳນັກງານ ແລະ ສະຖານທີ່ສຳຄັນໃນຕົວ ເມືອງປາຣີ ໄດ້ຕົກຢູ່ໃນກຳມືຂອງກຳລັງປະຕິວັຕ. ຂະບວນການບຸກໂຈມຕີປ້ອມທີ່ຫມັ້ນຄ້າຍ ຄຸມຂັງ ບາສຕີ ເປັນ ລະຄັງປ່າວເຕືອນໃຫ້ຮູ້ວ່າການປະຕິວັດ ນາຍທຶນຢູ່ປະເທດຝຣັ່ງໄດ້ລະເບີດຂຶ້ນທັງເປັນໄຊຊະນະເປີດສາກໃຫ້ການ ປະຕິວັດນາຍທຶນຝຣັ່ງທ້າຍສະຕະວັດທີ XVII.

**3.3. ການຂະຫຍາຍຕົວຂອງການປະຕິວັດ**

**1) ຕະບອບລາຊາທີ່ປະໄຕໃຫ້ມຕິປັນບົຕ (ແຕ່ວັນທີ 14 ກໍລະກົດ 1789 ຫາ ວັນທີ 10 ສິງຫາ 1792)**

ໄຊຊະນະຂອງການປະຕິວັດຢູ່ປາຣີ ໄດ້ແຜ່ລາມຢ່າງວ່ອງໄວໄປທົ່ວທຸກບ່ອນ. ຝ່າຍນິຕິບັນຍັດຂອງຊົນຊັ້ນ ນາຍທຶນຂຶ້ນກຳອຳນາດ, ແຕ່ຫລຸຍ XVI ກໍຍັງຄົງຄອງລາດ, ເຖິງແມ່ນວ່າຈະບໍ່ມີສິດຫຍັງ. ທ້າຍເດືອນ ປີ .ສ 1704, ສະພາໄດ້ຜ່ານຖະແຫຼງການສິດທິມະນຸດ ແລະ ສິດທິພົນລະເມືອງ, ໄດ້ຍົກຄຳຂວັນທີ່ມີຊື່ສຽງອອກຄື: “ເສລີພາບ- ສະເຫມີພາບ- ພາລາດອນພາບ”.

ເດືອນ ກັນຍາ ປີ ຄ.ສ 1791, ໄດ້ຜ່ານລັດຖະທຳມະນູນ, ສ້າງຕັ້ງລະບອບລາຊາທິປະໄຕພາຍໃຕ້ລັດຖະທຳມະນູນ: ເຈົ້າຊີວິດບໍ່ໄດ້ກຳອຳນາດ, ອຳນາດທຸກຢ່າງຂຶ້ນກັບສະພາ. ເຖິງຢ່າງນັ້ນກໍຕາມ, ເຈົ້າຊີວິດໄດ້ຮ່ວມມືກັບພວກປະຕິການຂາຍຊາດເພື່ອປາບປາມຂະບວນການປະຕິວັດ.

ເດືອນ 4 ປີ ຄ.ສ 1792, ສອງປະເທດ ໂອຕຣິດ ແລະ ປຣັດເຊຍສຳພັນທະມິດຮ່ວມກັນ, ພ້ອມກັບພວກຂາຍຊາດຢູ່ຝຣັ່ງຕ້ານການປະຕິວັດ. ເດືອນ 8 ປີ ຄ.ສ 1792, ທະຫານປຣັດເຊຍ 80 ພັນຄົນລຸຫຼັ່ງເຂົ້າໄປປະເທດຝຣັ່ງ. ຕໍ່ສະພາບການທີ່ "ປະເທດຊາດມີໄພອັນຕະລາຍ", ວັນທີ່ 10 ເດືອນ 8 ປີ ຄ.ສ 1792, ປະຊາຊົນປາຣີ ພ້ອມດ້ວຍທະຫານອາສາສະຫມັກທ້ອງຖິ່ນລຸກຂຶ້ນ ໂຄ່ນລົ້ມຝ່າຍນິຕິບັນຍັດ, ພ້ອມກັນນັ້ນ ກໍລົບລ້າງລະບອບສັກດີນາ.



ການບຸກຕີຄຸກບັດສຕິນ

### 3.2 ສາທາລະນະລັດເບື້ອງຕົ້ນຢູ່ຝຣັ່ງ

ພາຍຫຼັງຂະບວນການລຸກຮື້ຂຶ້ນຂອງປະຊາຊົນໂຄ່ນລົ້ມຝ່າຍນິຕິບັນຍັດ, ອຳນາດຕົກຢູ່ໃນມືຂອງນາຍທຶນອຸດສາຫະກຳ-ການຄ້າ ເຊິ່ງເອີ້ນວ່າຝ່າຍ ຊີຣົງແດັງ ສະພາໃຫມ່ໄດ້ຖືກເລືອກຕັ້ງຂຶ້ນ ຜູ້ຊາຍອາຍຸ ແຕ່ 21 ປີຂຶ້ນໄປ ມີສິດເລືອກຕັ້ງ, ບໍ່ຈຳກັດລະດັບການເສຍພາສີ. ວັນທີ 21/9/1782, ສາທາລະນະລັດເບື້ອງຕົ້ນຢູ່ຝຣັ່ງໄດ້ກຳເນີດຂຶ້ນ. ວັນທີ 21/1/1793, ເຈົ້າຊີວິດຫລຸຍ XVI ໄດ້ຖືກລົງໂທດປະຫານຊີວິດຍ້ອນການຂາຍຊາດ.



ເຈົ້າຊີວິດຫລຸຍ XVI

ລະດູບານໃຫມ່ ປີ ຄສ 1793, ທະຫານອັງກິດ ແລະ ທະຫານບັນດາປະເທດສັກດີນາເອີຣົບ ບຸກໂຈມຕີການປະຕິວັດຢູ່ປະເທດຝຣັ່ງ. ພາຍໃນປະເທດພວກຂາຍຊາດໄດ້ລຸກຂຶ້ນປັ່ນປ່ວນຢູ່ເຂດວັງເດ ແລະ ເຂດຕາເວັນຕົກສ່ຽງເຫນືອ. ສະພາບການຄັບຂັນ, ລາຄາສິນຄ້າໃນຕະຫຼາດເພີ່ມຂຶ້ນ. ຊີວິດການເປັນຢູ່ຂອງປະຊາຊົນພົບຄວາມທຸກຍາກລຳບາກ. ໃນເວລານັ້ນ, ຝ່າຍຊີຣົງແດັງ ບໍ່ສົນໃຈນຳການຈັດຕັ້ງຕໍ່ສູ້ຕ້ານກັບສັດຕູຕ່າງດ້າວ, ພວກປະຕິການ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນແຕ່ປະການໃດ ມີແຕ່ເປັນຫວງຕໍ່ການປັບປຸງສິດອຳນາດເທົ່ານັ້ນ. ຕໍ່ຫນ້າສະພາບການດັ່ງກ່າວ, ວັນທີ 2/8/1793, ປະຊາຊົນປາລີ, ພາຍໃຕ້ການນຳພາຂອງ ໂອແບສຟໍແສ, ໄດ້ລຸກຮື້ຂຶ້ນຕໍ່ສູ້ຈົນໄດ້ຮັບໄຊຊະນະພ້ອມທັງໂຄ່ນລົ້ມຝ່າຍ ຊີຣົງແດັງ.

**1) ຜະເດັດການປະຊາທິປະໄຕປະຕໍ່ວັດຊາໂກແບັງ (ແຕ່ວັນທີ 26-1793-27a1794)**

ພາຍຫຼັງຝາຍຊີຣົງແດັງຖືກໂຄ່ນລົ້ມ, ອຳນາດການປະຕິວັດຂຶ້ນກັບຝ່າຍຊາໂກແບັງ, ປະກອບມີຄົນປະຊາທິປະໄຕທີ່ມວນຊົນສະຫນັບສະຫນູນ, ໃນສະພາຝ່າຍຊາໂກແບັງກວມຈຳນວນຄົນສ່ວນຫຼາຍ, ເລືອກຕັ້ງຄະນະກຳມະການກູ້ຊາດ, ນຳຫນ້າໂດຍ ໂຣເບີດປີແອ. ໂຣເບີດປີແອ ເປັນທະນາຍຄວາມຜູ້ຫນຸ່ມນ້ອຍ, ເປັນຜູ້ແທນສະພາ, ມີວິຊາຄວາມຮູ້ທີ່ເກັ່ງກ້າ. ໃນສະພາທ່ານໄດ້ອອກແຮງປົກປ້ອງສິດຜົນປະໂຫຍດຂອງປະຊາຊົນ. ໂຣເບີດປີແອ ກາຍເປັນຜູ້ນຳທີ່ດີເລີດ ແລະ ມີຊື່ສຽງຂອງຝ່າຍຊາໂກແບັງ.

ອຳນາດການປະຕິວັດໄດ້ຊ່ວງເສັງຫຼາຍວິທີການຕັດສິນໃຈເພື່ອລົງໂທດພວກຝືນປະຕິວັດ ແລະ ແກ້ໄຂຄວາມຮຽກຮ້ອງຕ້ອງການຂອງປະຊາຊົນ. ຕອນດິນທີ່ພວກຂຸນນາງສັກດີນາຍຶດໃນເມື່ອກ່ອນນັ້ນອຳນາດການປະຕິວັດໄດ້ເອົາຂຶ້ນມາແບ່ງປັນໃຫ້ຊາວນາ, ສ່ວນຕອນດິນຂອງຄະນະສົງ ແລະ ຂຸນນາງທີ່ໂຕນຫນີໄປຕ່າງປະເທດນັ້ນໄດ້ແບ່ງອອກເປັນຕອນນ້ອຍໆແລ້ວຂາຍໃຫ້ຊາວນາ, ຄະນະກຳມະການກູ້ຊາດຍັງ ເກັບຊື້ເຂົ້າບາເລ, ກຳນົດລາຄາຂາຍສິນຄ້າທີ່ຈຳເປັນໃຫ້ປະຊາຊົນຜູ້ທຸກຍາກ, ພ້ອມທັງກຳນົດລະດັບເງິນເດືອນສູງສຸດໃຫ້ກຳມະກອນ.

ມະຫາຊົນເພິ່ງພໍໃຈຕໍ່ກັບຄະນະກຳມະການກູ້ຊາດ. ຈາກນັ້ນກອງທັບປະຕິວັດໄດ້ຮັບການສ້າງຕັ້ງຂຶ້ນ ແລະ ໄດ້ປະກອບອາວຸດຢ່າງດີ ທັງມີນ້ຳໃຈຕໍ່ສູ້ອັນສູງສົ່ງ, ສຳພັນທະມິດຕ້ານຝຣັ່ງຖືກປະລາໄຊ ແລະ ເລີ່ມພັງທະລາຍແຕ່

ວັນທີ 26/6/1794. ພາຍຫຼັງຕໍ່ສູ້ຕ້ານສັດຕູພາຍນອກ ແລະ ພາຍໃນໄດ້ຮັບໄຊຊະນະ, ພາຍໃນຂອງຝ່າຍ ຊາໂກແບັງ ພັດຖືກແບ່ງແຍກ. ປະຊາຊົນກໍບໍ່ສະໜັບສະໜູນອຳນາດການປົກຄອງອີກເພາະວ່າຜົນປະໂຫຍດຂອງປະຊາຊົນບໍ່ໄດ້ຮັບປະກັນກັບອຳນາດ ຊາໂກແບັງ ໄດ້ສັນຍາເອົາໄວ້.




ແຜນທີ່ກຳລັງຝົນປະຕິວັດທີ່ບຸກໂຈມຕີຝຣັ່ງໃນປີ 1793

ວັນທີ່ 27/7/1794, ນາຍທຶນທີ່ກະບົດຕໍ່ການປະຕິວັດໄດ້ດຳເນີນການລັດຖະປະຫານ. ໂຣເບີດປີແອ ພ້ອມນັກຕໍ່ສູ້ຫຼາຍຄົນໄດ້ຖືກຈັບ ແລະ ປະຫານຊີວິດ. ລະບອບຜະເດັດການຂອງ ຊາໂກແບັງ ໄດ້ສິ້ນສຸດລົງ.

**4) ຄວາມໝາຍປະຫວັດສາດ**

ການປະຕິວັດນາຍທຶນຝຣັ່ງໃນທ້າຍສະຕະວັດທີ XVII ໄດ້ໂຄ່ນລົ້ມລະບອບສັກດີນາ, ເຮັດໃຫ້ຊົນຊັ້ນນາຍທຶນຂຶ້ນກຳອຳນາດ, ລົບລ້າງສິ່ງກີດຂວາງຫຼາຍຢ່າງຂອງລະບອບສັກດີນາ ທີ່ບໍ່ຢາກໃຫ້ລັດທິທຶນນິຍົມຂະຫຍາຍຕົວ, ປວງຊົນແມ່ນກຳລັງຕົ້ນຕໍພາໃຫ້ການປະຕິວັດກ້າວຂຶ້ນລະດັບສູງສຸດ ນັ້ນແມ່ນລະບອບຜະເດັດການປະຊາປະໄຕຊາໂກແບັງ.

ເຖິງຢ່າງນັ້ນກໍຕາມ, ການປະຕິວັດນາຍທຶນຝຣັ່ງກໍຍັງມີຂໍ້ຈໍາກັດຄື: ຍັງບໍ່ທັນຕອບສະໜອງຢ່າງຄົບຖ້ວນຕໍ່ສິດຜົນປະໂຫຍດອັນພື້ນຖານຂອງປະຊາຊົນ, ຄືບໍ່ໄດ້ແກ້ໄຂເຖິງຖອງຕໍ່ບັນຫາທີ່ດິນໃຫ້ຊາວນາ, ບໍ່ລົບລ້າງໄດ້ທັງໝົດລະບອບກົດຂີ່ຂູດຮີດຂອງສັກດີນາ.... ຊີວິດການເປັນຢູ່ຂອງຊາວນາຝຣັ່ງຍັງທຸກຍາກລໍາບາກເພາະຊົນຊັ້ນນາຍທຶນກໍາອໍານາດພຽງແຕ່ປ່ຽນລະບອບ ແລະ ຮູບການກົດຂີ່ຂູດຮີດເທົ່ານັ້ນ. ເຖິງຢ່າງໃດກໍດີການປະຕິວັດຝຣັ່ງ ແມ່ນການປະຕິວັດນາຍທຶນທີ່ເຖິງຖອງກວ່າໝູ່ ໃນສະໄໝນັ້ນ ແລະ ສົ່ງຜົນສະທ້ອນໃຫຍ່ຫຼວງຕໍ່ປະເທດຕ່າງໆໃນໂລກໃນໄລຍະຕໍ່ມາອີກດ້ວຍ.

ບົດທີ 5

# ລັດທິທຶນນິຍົມໃນສະຕະວັດທີ XVIII-XIX ແລະ ການກຳເນີດລັດທິມາກ-ອັງແກນ

ລັດທິທຶນນິຍົມເປັນລະບອບທີ 4 (ຖັດຈາກລະບອບສະຫະຊີບປະຖົມບູຮານ, ຂ້າທາດ, ສັກດີນາ). ການປ່ຽນຜ່ານຕັ້ງແຕ່ລະບອບ 1 ໄປເຖິງລະບອບທີ 4 ມີລັກສະນະຄ່ອຍເປັນຄ່ອຍໄປ ເຊິ່ງແຕ່ລະລະບອບເກີດຂຶ້ນຈາກທ້ອງຂອງລະບອບກ່ອນເລື້ອຍໆມາເຊັ່ນ ລະບອບທຶນນິຍົມກຳເນີດມາຈາກລະບອບສັກດີນາ ໃນນັ້ນສ່ວນໃຫຍ່ຊາວນາໄດ້ກາຍມາ ເປັນກຳມະກອນ ແລະ ສັກດີນາໄດ້ກາຍມາເປັນນາຍທຶນ.

## 1. ການປະຕິວັດອຸດສາຫະກຳ ແລະ ລະບົບທຶນນິຍົມໂລກ

### 1.1. ການປະຕິວັດອຸດສາຫະກຳ

ການປະຕິວັດອຸດສາຫະກຳຫມາຍເຖິງການປ່ຽນແປງຮູບແບບ ແລະ ເຕັກນິກການຜະລິດຈາກການ ນຳໃຊ້ເຄື່ອງມືທີ່ຫຼ້າຫຼັງ ຫຼື ຮູບແບບດັ້ງເດີມທີ່ໃຫ້ຜົນຜະລິດຕ່ຳຫັນໄປສູ່ການຜະລິດດ້ວຍເຄື່ອງກົນຈັກ ຫຼື ເຕັກນິກທີ່ທັນສະໄຫມ ແລະ ໃຫ້ປະສິດຕິຜົນຫຼາຍກວ່າ.

ກ່ອນຫນ້າສະຕະວັດທີ XVII, ຜົນຜະລິດທີ່ຜະລິດມາຈາກເຄື່ອງຫັດຖະກຳໄດ້ມີບົດບາດສຳຄັນຕໍ່ກັບເສດຖະກິດຂອງບັນດາປະເທດທີ່ມີນາຍຊ່າຫັດຖະກຳໄດ້ກາຍເປັນກຳລັງແຮງຕົ້ນຕໍ ແລະ ເປັນຜູ້ມີບົດບາດໃນການກະຕຸກຊຸກຍູ້ໃຫ້ເສດຖະກິດມີການຂະຫຍາຍຕົວມາ ໃນລະດັບຫນຶ່ງ ແຕ່ຜົນຜະລິດ ທີ່ໄດ້ມາຍັງບໍ່ສາມາດຕອບສະຫນອງກັບຄວາມຕ້ອງການຂອງສັງຄົມ (ຜູ້ຊົມໃຊ້) ຫຼື ຄວາມຕ້ອງການຂອງຕະຫຼາດຢ່າງພຽງພໍຕະຫຼອດເຖິງຜົນຜະລິດທີ່ອອກມາກໍຍັງມີຄຸນະພາບທີ່ຕ່ຳ ຫຼື ຍັງບໍ່ໄດ້ມາດຕະຖານທີ່ເພິ່ງພໍໃຈຂອງນສ່ວນໃຫຍໃນສັງຄົມ.

ການປະດິດເຄື່ອງກົນຈັກເພື່ອມາທົດແທນແຮງງານຂອງຄົນເປັນຄັ້ງທຳອິດ ໄດ້ເກີດຂຶ້ນ ທີ່ປະເທດອັງກິດກ່ອນຫມູ່ເລີ່ມຕັ້ງແຕ່ປີ ຄ.ສ 1760 ເປັນຕົ້ນມາ ອັນເປັນຜົນໃຫ້ຄວາມລ້ຳລວຍແກ່ ຊົນຊັ້ນນາຍທຶນ. ໃນປີ ຄ.ສ 1764 ວິລຽມ ຮານຣິເວີ (William Halre Rivers) ໄດ້ປະດິດ ເຄື່ອງຈັກປັ່ນຝ້າຍ, ປີ ຄ.ສ 1784 ເຈມວັດ (Jams Watt) ໄດ້ປະດິດຈັກອາຍນ້ຳເພື່ອຮັບໃຊ້ການຜະລິດອຸດສາຫະກຳ ແລະ ຕໍ່ມາອີກ ປີ ຄ.ສ 1785 ແອດມອນກາກລາຍ (Edmon Cacrai) ໄດ້ປະດິດເຄື່ອງຈັກຕ່ຳແຜ່ນ.




ເຈມວັດ (Jams Watt)

ນັກປະດິດເຄື່ອງຈັກທັງຫຼາຍໄດ້ເລັ່ງໃສ່ການອຸດສາຫະກຳຕ່ຳແຜ່ນເປັນສ່ວນໃຫຍ່ ຈຶ່ງເຮັດໃຫ້ຂະແໜງຕ່ຳຜ້າໄໝມມີການຂະຫຍາຍຕົວຢ່າງກວ້າງຂວາງກວ່າຂະແໜງການອື່ນໆ. ເບື້ອງຕົ້ນເຄື່ອງຈັກທີ່ຜະລິດອອກມາແລ່ນດ້ວຍອາຍນ້ຳ, ບັນດາໂຮງງານຕ່າງໆ ຈຶ່ງຕັ້ງຢູ່ແຄມແມ່ນ້ຳເປັນສ່ວນໃຫຍ່. ມາເຖິງຕົ້ນສະຕະວັດທີ XIX, ເຄື່ອງຈັກອາຍນ້ຳໄດ້ມີບົດບາດສຳຄັນໃນທຸກຂະແໜງອຸດສາຫະກຳ ຈຶ່ງຖືກຫັນມາໃຊ້ເຂົ້າໃນຂະແໜງຄົມມະນາຄົມຂົນສົ່ງ, ຊົນລະປະທານ ແລະ ຂະແໜງຫຼອມໂລຫະ.

ສ່ວນປະເທດຝຣັ່ງ ເນື່ອງຈາກເກີດການປະຕິວັດນາຍທຶນໃນປີ ຄ.ສ 1789 ຈຶ່ງສົ່ງຜົນໃຫ້ການປະຕິວັດອຸດສາຫະກຳເກີດຊ້າກວ່າປະເທດອັງກິດ, ເມື່ອມາເຖິງປີ ຄ.ສ 1830 ຈຶ່ງເລີ່ມມີການຂະຫຍາຍຕົວ ໃນບາງຂະແໜງການໂດຍສະເພາະການປະດິດເຄື່ອງຈັກອາຍນ້ຳ, ການສ້າງທາງລົດໄຟ ແລະ ອື່ນໆ. ສຳລັບເຢຍລະມັນການປະຕິວັດອຸດສາຫະກຳ ຍັງຂະຫຍາຍຕົວຊ້າກວ່າຝຣັ່ງ ເນື່ອງຈາກສະພາບການເມືອງພາຍໃນປະເທດເຊັ່ນກັນ. ໃນປີ ຄ.ສ 1860–1870 ເຄື່ອງກົນຈັກທັງຫຼາຍ ຈຶ່ງໄດ້ຖືກນຳໃຊ້ເຂົ້າໃນທຸກໆຂະແໜງການອຸດສາຫະກຳເຊັ່ນ: ອຸດສາຫະກຳຂຸດຄົ້ນຖ່ານຫີນ, ເຫມືອງ ແລະ ອື່ນໆ.

ການປະຕິວັດອຸດສາຫະກຳໄດ້ປ່ຽນໂສມໜ້າຂອງບັນດາປະເທດນາຍທຶນທັງຫຼາຍຢ່າງຊັດເຈນ, ເມື່ອປຽບທຽບກັບໄລຍະກ່ອນການປະຕິວັດອຸດສາຫະກຳ, ເຮັດໃຫ້ສັງຄົມມີການແບ່ງແຍກກັນຢ່າງຂາດຂັ້ນ ລະຫວ່າງຜູ້ທຸກຍາກ ແລະ ຜູ້ຮັ່ງ, ເກີດມີຄວາມແຕກຕ່າງກັນລະຫວ່າງຊົນນະບົດກັບຕົວເມືອງ. ດັ່ງນັ້ນ, ຊາວນາຜູ້ທຸກຍາກ ຈຶ່ງພາກັນຫຼັ່ງໄຫຼເຂົ້າໃນເມືອງ ເພື່ອຫາວຽກເຮັດງານທຳ ຫຼື ຂາຍແຮງງານໃນລາຄາຖືກໃຫ້ເກັບນາຍທຶນ. ໂດຍສະເພາະໃນປີ ຄ.ສ 1870 ຊາວນາອັງກິດ 2/3 ຂອງພົນລະເມືອງທົ່ວປະເທດໄດ້ພາກັນເຂົ້າມາດຳລົງຊີວິດຢູ່ໃນຕົວເມືອງ ຈຶ່ງເຮັດໃຫ້ຊົນຊັ້ນກຳມະຊີບເພີ່ມຂຶ້ນຢ່າງກະໂດດຂັ້ນ ແລະ ເກີດມີຄວາມຂັດແຍ່ງລະຫວ່າງຊົນຊັ້ນນາຍທຶນກັບຊົນຊັ້ນກຳມະຊີບນັບມື້ນັບຮຸນແຮງຂຶ້ນ.

## 1.2. ລະບົບທຶນນິຍົມແຫ່ງໂລກ

ສະຕະວັດທີ XIX, ເປັນສະຕະວັດຂອງລະບົບທຶນນິຍົມຂະຫຍາຍຕົວ ເນື່ອງຈາກພາຍຫຼັງການ ປະຕິວັດອຸດສາຫະກຳ ຢູ່ປະເທດອັງກິດສຳເລັດຜົນໄດ້ເຮັດໃຫ້ລະບົບເສດຖະກິດຂອງທຶນນິຍົມມີຄວາມຈະເລີນຂະຫຍາຍຕົວຢ່າງແຂງແຮງ ເຊິ່ງໄດ້ສົ່ງຜົນກະທົບໃຫ້ບັນດາປະເທດຕ່າງໆໃນເອີຣົບມີຄວາມຈຳເປັນຕ້ອງມີການພັດທະນາເສດຖະກິດຂອງປະເທດຕົນ ເພື່ອກາຍເປັນຕົວແບບໃນການພັດທະນາລະບົບທຶນນິຍົມແຫ່ງໂລກ.

ໃນປີ ຄ ສ 1789 ການປະຕິວັດນາຍທຶນຝຣັ່ງໄດ້ປະສົບຜົນສຳເລັດ ແລະ ໄດ້ສົ່ງຜົນໃຫ້ປະຊາຊົນ ໃນປະເທດແບນຊິກ, ອີຕາລີ, ໂປໂລຍ, ແອັດສະປາຍ, ປອກຕຸຍການ ແລະ ປະເທດຕ່າງໆ ໃນອາເມຣິກາລາຕິນ ລຸກຂຶ້ນຕໍ່ສູ້ຕ້ານພວກຂຸນນາງ, ສັກດີນາ ແລະ ລະບົບການປົກຄອງຂອງພວກຕ່າງຊາດ. ສ່ວນປະຊາຊາດໃນມະຫາສະໝຸດອັດລັງຕິກ ກໍໄດ້ຮັບຜົນສະທ້ອນຈາກການປະຕິວັດນາຍທຶນຝຣັ່ງ ແລະ ອາເມຣິກາເຊັ່ນກັນ. ດັ່ງນັ້ນ, ບັນດາປະເທດທີ່ເປັນເມືອງຂຶ້ນຂອງແອັດສະປາຍ ແລະ ປອກຕຸຍການທັງຫຼາຍຈຶ່ງໄດ້ລຸກຂຶ້ນຕໍ່ສູ້ ເພື່ອກ້າວໄປເຖິງການລົບລ້າງລະບອບສັກດີນາ. ດ້ວຍເຫດນັ້ນຕົ້ນສະຕະວັດທີ XIX ບັນດາປະເທດນາຍທຶນໃຫມ່ຈຶ່ງກຳເນີດຂຶ້ນຢູ່ອາເມຣິກາລາຕິນ.

ໃນໄລຍະປີ ຄ.ສ 1848-1849 ຂະບວນການປະຕິວັດນາຍທຶນຢູ່ທະວີບເອີຣົບໄດ້ເກີດຂຶ້ນຢ່າງ ກວ້າງຂວາງ, ເຮັດໃຫ້ລະບອບສັກດີນາຖືກໂຄ່ນລົ້ມຢູ່ຫຼາຍປະເທດເຊັ່ນ: ເຢຍລະມັນ, ອີຕາລີ ແລະ ໂອຕຣິດ, ສ່ວນປະເທດຝຣັ່ງທີ່ເປັນຕົ້ນກຳເນີດຂອງການປະຕິວັດນັ້ນລະບອບນາຍທຶນໄດ້ຮັບການປັບປຸງໃຫ້ມີການຂະຫຍາຍຕົວຂຶ້ນເລື້ອຍໆ, ແຕ່ປີ ຄສ 1864- 1871 ເຢຍລະມັນສາມາດທ້ອນໂຮມ 38 ລັດເຂົ້າເປັນປະເທດເຢຍລະມັນເອກະພາບ ເຊິ່ງຜົນສຳເລັດດັ່ງກ່າວໄດ້ເປັນການບົ່ງຊີ້ໃຫ້ເຫັນການກຳເນີດລະບອບທຶນນິຍົມເຢຍລະມັນ.

ເມື່ອເຖິງຕອນທ້າຍສະຕະວັດທີ XIX, ບັນດາປະເທດທີ່ປະສົບຜົນສຳເລັດທາງດ້ານເສດຖະກິດ ໃນລະບົບທຶນນິຍົມ ໄດ້ກາຍເປັນປະເທດມະຫາອຳນາດ ເຊິ່ງສາມາດຈຳແນກເປັນ 2 ລະດັບຄື: ປະເທດມະຫາອຳນາດນາຍທຶນເກົ່າ (ປະເທດອັງກິດ ແລະ ຝຣັ່ງ) ແລະ ປະເທດມະຫາອຳນາດນາຍທຶນໃຫມ່ (ເຢຍລະມັນ, ໂອຕຣິດ, ອີຕາລີ, ອາເມຣິກາ ແລະ ຍີ່ປຸ່ນ). ປະເທດມະຫາອຳນາດນາຍທຶນເກົ່ານອກຈາກເປັນປະເທດທີ່ມີຄວາມເຂັ້ມແຂງທາງດ້ານເສດຖະກິດແລ້ວຍັງເປັນປະເທດທີ່ມີລະບົບຫົວເມືອງຂຶ້ນຢາງຫຼວງຫຼາຍທີ່ຢັ່ງຢາຍໄປທົ່ວທຸກມຸມໂລກຫມາຍເຖິງການມີກຳລັງແຮງໃນການຂະຫຍາຍດິນແດນ, ອິດທິພົນ, ຕະຫຼາດຈຳຫນ່າຍສິນຄ້າ, ແຫລ່ງຂຸດຄົ້ນວັດຖຸດິບ ແລະ ເກັບເກນແຮງງານ. ສ່ວນປະເທດມະຫາອຳນາດໃຫມ່ ກໍເປັນປະເທດທີ່ມີຄວາມເຂັ້ມແຂງທາງດ້ານເສດຖະກິດເຊັ່ນກັນ. ແຕ່ປະເທດເຫຼົ່ານີ້ ບໍ່ມີລະບົບຫົວເມືອງຂຶ້ນຫຼາຍ, ບໍ່ມີຕະຫຼາດ ເພື່ອຈຳຫນ່າຍສິນຄ້າ ແລະ ອື່ນໆເຫມືອນກັບປະເທດມະຫາອຳນາດເກົ່າ, ດັ່ງນັ້ນ, ປະເທດມະຫາອຳນາດທັງເກົ່າ ແລະ ໃຫມ່ຈິ່ງເກີດມີຂໍ້ຂັດແຍ່ງກັນຢ່າງເຄັ່ງຕຶງ ແລະ ຮຸນແຮງມາໂດຍຕະຫລອດ, ເຊິ່ງຂໍ້ຂັດແຍ່ງດັ່ງກ່າວບໍ່ສາມາດແກ້ໄຂກັນໄດ້ຢ່າງສັນຕິວິທີຈິ່ງກ້າວໄປ ເຖິງການກໍ່ໃຫ້ເກີດສົງຄາມໂລກຄັ້ງທີ I ແລະ ທີ II ໃນໄລຍະຕໍ່ມາ.

## 2. ຂະບວນກຳມະກອນໃນໄລຍະ ປີ ຄ. ສ 1760-1848

ຜົນສຳເລັດອັນໃຫຍ່ຫຼວງ ແລະ ສຳຄັນຂອງການດຳເນີນການປະຕິວັດອຸດສາຫະກຳຢູ່ບັນດາປະເທດເອີຣົບນັ້ນໄດ້ເຮັດໃຫ້ລະບົບເສດຖະກິດທຶນນິຍົມມີຄວາມເຂັ້ມແຂງ ແລະ ໄດ້ສ້າງຄວາມຮັ່ງມີ ໃຫ້ແກ່ຊົນຊັ້ນນາຍທຶນຢ່າງວ່ອງໄວທີ່ສຸດ, ເຊິ່ງທັງຫມົດນັ້ນໄດ້ມາຈາກການກົດຂີ່ຂູດຮີດແຮງງານຂອງກຳມະກອນ, ດັ່ງນັ້ນ, ນັບແຕ່ມື້ກຳເນີດການປະຕິວັດອຸດສາຫະກຳເປັນຕົ້ນມາ ຈິ່ງເກີດມີຂະບວນການຕໍ່ສູ້ຂອງຊົນຊັ້ນກຳມາຊີບ (ຊົນຊັ້ນກຳມະກອນ) ນັບມື້ມີການຂະຫຍາຍກວ້າງອອກ, ຂະບວນການຕໍ່ສູ້ດັ່ງກ່າວເກີດຂຶ້ນເປັນຄັ້ງທຳອິດ ໃນປີ ຄ.ສ 1760 ທີ່ປະເທດອັງກິດ, ຈາກນັ້ນ ຈິ່ງມີການແຜ່ລາມອອກໄປສູ່ ປະເທດອື່ນໆໃນເອີຣົບ, ເຊິ່ງເປັນຜົນມາຈາກກຳມະກອນທີ່ເຮັດວຽກຢູ່ໃນໂຮງງານຂອງນາຍທຶນ ໄດ້ກາຍເປັນທາດຂອງເຄື່ອງຈັກ, ເຮັດວຽກຫນັກຕັ້ງແຕ່ 14-16 ຊົ່ວໂມງຕໍ່ມື້, ເງື່ອນໄຂຂອງການອອກແຮງງານບໍ່ຮັບປະກັນ, ເງິນເດືອນຕໍ່າ ເຊິ່ງເຮັດໃຫ້ຊີວິດການເປັນຢູ່ມີຄວາມຝືດເຄືອງ ແລະ ສະພາບຄົນວ່າງານນັບມື້ເພີ່ມຂຶ້ນ.

ບັນຫາທັງຫມົດທີ່ໄດ້ກ່າວມາຂ້າງເທິງນັ້ນ, ໃນເບື້ອງຕົ້ນຊາວກຳມະກອນມີຄວາມເຂົ້າໃຈວ່າ ເຄື່ອງຈັກຕ່າງໆເຫຼົ່ານັ້ນເປັນຕົ້ນເຫດເຮັດໃຫ້ພວກເຂົາມີການຕົກງານ ແລະ ວ່າງງານທັງມີຄວາມທຸກຍາກລຳບາກແສນສາຫັດ ດັ່ງນັ້ນ, ຊາວກຳມະກອນຢູ່ປະເທດອັງກິດ, ຝຣັ່ງ, ເຢຍລະມັນ, ອາເມຣິກາ, ແບນຊິກ ແລະ ປະເທດອື່ນໆ ຈິ່ງພາກັນຈູດເຜົາ ແລະ ທຳລາຍມ້າງເພບັນດາ ໂຮງຈັກໂຮງງານຂອງພວກນາຍທຶນ. ນອກຈາກນັ້ນ ພວກເຂົາຍັງພາກັນນັດຢຸດງານ ເພື່ອປະທ້ວງໃຫ້ນາຍທຶນເພີ່ມເງິນເດືອນ, ສູດຜ່ອນເວລາຂອງການເຮັດວຽກລົງ ແລະ ອື່ນໆ. ທັງຫມົດນັ້ນເພື່ອສ້າງເງື່ອນໄຂອັນສະດວກໃຫ້ແກ່ການດຳລົງຊີວິດຂອງຕົນເອງ ແລະ ຍິ່ງໄປກວ່ານັ້ນເພື່ອເຮັດໃຫ້ຂະບວນການຕໍ່ສູ້ດຳເນີນ

ໄປ ຢ່າງມີເປົ້າຫມາຍ ແລະ ໄດ້ຮັບໄຊຊະນະພວກເຂົ້າໄດ້ສາມັກຄີກັນຈັດຕັ້ງອົງການກຳມະບານຂຶ້ນ ແຕ່ກໍຖືກຕໍ່ຕ້ານຄືນຈາກລັດຖະບານອັງກິດ ແລະ ຝຣັ່ງດ້ວຍການອອກກົດຫມາຍຫ້າມການນັດຢຸດງານ ແລະ ຫ້າມຈັດຕັ້ງອົງການກຳມະບານ ດ້ວຍເຫດນັ້ນຂະບວນນັດຢຸດງານກໍຍິ່ງສືບຕໍ່ປະທ້ວງຢ່າງດຸເດືອດ ແລະ ຮຸນແຮງ, ໃນທີ່ສຸດລັດຖະບານອັງກິດຈຳຕ້ອງຍອມຮັບຮອງເອົາສິດໃນການນັດຢຸດງານ ແລະ ການສ້າງຕັ້ງອົງການກຳມະບານຂອງກຳມະກອນຂຶ້ນໃນປີ ຄ.ສ 1824.

ຕໍ່ມາໃນລະຫວ່າງຊຸມປີ ຄ.ສ 1831-1834 ກຳມະກອນຢູ່ຕົວເມືອງລີອົງຂອງຝຣັ່ງກໍໄດ້ລຸກຂຶ້ນ ຕໍ່ສູ້ທວງເອົາສິດໃນການອອກແຮງງານ ແລະ ຮຽກຮ້ອງໃຫ້ສ້າງຕັ້ງລະບອບສາທາລະນະລັດຂຶ້ນ. ສ່ວນຂະບວນກຳມະກອນຢູ່ປະເທດເຢຍລະມັນກໍໄດ້ລຸກຂຶ້ນ ຕໍ່ສູ້ຕ້ານກັບເຈົ້າຂອງໂຮງງານໃນປີ ຄ.ສ 1844 ແຕ່ກໍຖືກພວກນາຍທຶນດຳເນີນການປາບປາມ. ເຖິງວ່າພວກນາຍທຶນຈະດຳເນີນການຕໍ່ຕ້ານການເຄື່ອນໄຫວ ຂອງຊົນຊັ້ນກຳມາຊີບໃນທຸກກໍລະນີ. ແຕ່ພວກເຂົາກໍຈຳຕ້ອງຍອມຮັບຮູ້ຊົນຊັ້ນກຳມາຊີບເປັນກຳລັງຫນຶ່ງ ທີ່ເປັນເອກະລາດໃນສັງຄົມທຶນນິຍົມ.

ຂະບວນການຕໍ່ສູ້ຂອງຊົນຊັ້ນກຳມະຊີບໃນປະເທດອັງກິດ, ຝຣັ່ງ ແລະ ເຢຍລະມັນໃນລະຫວ່າງປີ ຄສ 1830-1840 ໄດ້ກາຍເປັນຂີດຫມາຍອັນສຳຄັນທີ່ຍິ່ງໃຫຍ່ແຫ່ງການຈະເລີນເຕີບໂຕຂອງຂະບວນການກຳມະກອນສາກົນ, ເຊິ່ງຂະບວນການດັ່ງກ່າວໄດ້ເຮັດໃຫ້ຊົນຊັ້ນຜູ້ປົກຄອງ ຫຼື ຊົນຊັ້ນນາຍທຶນເກີດມີຄວາມຢ້ານກົວເປັນທີ່ສຸດ.

## 3.ການກຳເນີດລັດທິມາກ-ອັງແກນ

ກາກມາກ (Karl Marx, 1818-1883) ເປັນນັກປັດຊະຍາ, ນັກເສດຖະສາດ, ນັກປະຫວັດສາດ ແລະ ນັກທິດສະດີກອມມູນິດ ທີ່ມີຊື່ສຽງໂດ່ງດັງໃນສະຕະວັດທີ XIX ກຳເນີດໃນຂອບຄົວປັນຍາຊົນທີ່ກ້າວຫນ້າທີ່ເມືອງແຕຣເວີ (Treve). ສ່ວນຟຣິດຣິກ ອັງແກນ (Friedricls Engels, 1820=1895) ເປັນນັກຮຽນ, ນັກປັດຊະຍາ ແລະ ເພື່ອນຮ່ວມງານທີ່ດີຂອງມາດ, ກຳເນດຕໃນຄອບຄົວທີ່ເປັນເຈົ້າຂອງໂຮງງານທີ່ເມືອງບາກແມນ (Bakmand) ເມືອງແຕຣເວີ ແລະ ເມືອງບາກແມນເປັນສອງຕົວເມືອງທີ່ຕັ້ງຢູ່ທາງພາກຕາເວັນຕົກຂອງເຢຍລະມັນ ທັງເປັນເຂດອຸດສາຫະກຳທີ່ສຳຄັນຂອງປະເທດ.

ມາກ ແລະ ອັງແກນ ເປັນບຸກຄົນທີ່ສະຫຼຽວສະຫຼາດ, ມີຄວາມສາມາດພິເສດ ແລະ ເປັນຜູ້ທີ່ມີຄວາມເສຍສະຫຼະອັນສູງສົ່ງ ເພື່ອພາລະກິດປົດປ່ອຍຊົນຊັ້ນກຳມາຊີບ ແລະ ມວນມະນຸດທີ່ຖືກກົດຂີ່ຂູດຮີດ, ໃນຕະຫຼອດຊີວິດ, ມາກ ແລະ ອັງແກນໄດ້ພ້ອມກັນຕໍ່ສູ້, ແບ່ງທຸກແບ່ງສຸກ ແລະ ໃຫ້ກາ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ.

ໃນຊ່ວງໄລຍະປີ ຄ.ສ 1842-1847 ມາກ ແລະ ອັງແກນໄດ້ເອົາໃຈໃສ່ຄົ້ນຄວ້າ ແລະ ປະຕິດສ້າງທິດສະດີປະຕິວັດຂອງຊົນຊັ້ນກຳມາຊີບ ແລະ ເຂົ້າຮ່ວມຂະບວນການເຄື່ອນໄຫວຕໍ່ສູ້ຂອງກຳມະກອນ ໃນເອີຣົບຕາເວັນຕົກ ມາກ ແລະ ອັງແກນໄດ້ພ້ອມກັນສ້າງຕັ້ງພັກເອກະລາດທີ່ແທ້ຈິງຂອງຊົນຊັ້ນກຳມາຊີບ, ເຊິ່ງທັງສອງໄດ້ເນັ້ນຫນັກວ່າ: ຖ້າບໍ່ມີການນຳພາຂອງພັກປະຕິວັດ, ຂະບວນການຕໍ່ສູ້ຂອງຊົນຊັ້ນກຳມະຊີບກໍຈະບໍ່ໄດ້ຮັບໄຊ





ກາກມາກ                                        ອັງແກນ

ຊະນະຈາກການເຄື່ອນໄຫວຢ່າງຕັ້ງຫນ້າ ແລະ ຂະຫຍັນຫ້າວຫັນ, ການເສຍສະຫຼະອັນໃຫຍ່ຫຼວງ, ຄວາມມີລະບຽບວິໄນ, ຄວາມຊື່ສັດ ແລະ ຄວາມຈົ່ງຮັກພັກດີຂອງມາກ ແລະ ອັງແກນ ຈຶ່ງມີການສ້າງຕັ້ງພັກສະຫະພັນກອມມູນິດຂຶ້ນຢູ່ເອີຣົບຕາເວັນຕົກ, ເຊິ່ງເປັນການຈັດຕັ້ງການເມືອງ ທີ່ປິດລັບຂອງຊົນຊັ້ນກຳມາຊີບສາກົນ ໂດຍ ມາກ ແລະ ອັງແກນເປັນຜູ້ຮັບຜິດຊອບໃນການຂຽນ ແລະ ຮຽບຮຽງ ໂຄງການຂອງສະຫະພັນ.

ເດືອນກຸມພາ ປີ ຄສ 1848 ໂຄງການດັ່ງກ່າວຖືກປະກາດໃຊ້ພາຍໃຕ້ຖະແຫຼງການຂອງພັກຄອມມູນິດ. ໃນຖະແຫຼງການ ມາກ ແລະ ອັງແກນ ໄດ້ຊີ້ແຈງວ່າ: ປະຫວັດສາດແມ່ນປະຫວັດການຂະຫຍາຍຕົວຂອງການຜະລິດ ແລະ ການຕໍ່ສູ້ຂອງບັນດາຊົນຊັ້ນທີ່ປໍລະປັກກັນລະຫວ່າງຊົນຊັ້ນຂູດຮີດ ແລະ ຊົນຊັ້ນ ຖືກຂູດຮີດ.

ລັດມາກ ຫຼື ລັດທິສັງຄົມນິຍົມວິທະຍາສາດ ແມ່ນລະບົບທິດສະດີປະຕິວັດທີ່ສ່ອງແສງເຖິງຜົນປະໂຫຍດຂອງຊົນຊັ້ນກຳມາຊີບຢ່າງແທ້ຈິງ ແລະ ຄົບຖ້ວນ, ລັດທິມາກ ໄດ້ກາຍເປັນລະບົບແນວຄິດ ແລະ ອາວຸດທາງດ້ານທິດສະດີ ທີ່ແຫລມຄົມຂອງຊົນຊັ້ນກຳມາຊົນ.

**ການສ້າງຕັ້ງສາກົນ 1 (ຄ.ສ 1864-1869)**

ສາກົນທີ I ແມ່ນອົງກອນຫນຶ່ງທີ່ໄດ້ຮັບການສ້າງຕັ້ງຂຶ້ນເປັນຄັ້ງທຳອິດໃນປີ ຄ.ສ 1884 ໃນຂະນະທີ່ຄວາມຂັດແຍ່ງລະຫວ່າງຊົນຊັ້ນກຳມາຊີບກັບຊົນຊັ້ນນາຍທຶນນັບມື້ມີຄວາມເຄັ່ງຕຶງ, ສະຕິສາມັກຄີສາກົນຂອງຊົນຊັ້ນກຳມະຊີບນັບມື້ສູງຂຶ້ນ ແລະ ມີຄວາມກ້າວຫນ້າຢ່າງບໍ່ຢຸດຢັ້ງ. ສາກົນທີ 1 ຈຶ່ງຖືກຈັດຕັ້ງຂຶ້ນ ເພື່ອເຕົ້າໂຮມຄວາມສາມັກຄີຂອງຊົນຊັ້ນກຳມາຊີບ ໃນທົ່ວໂລກໂດຍມີວັດຖຸປະສົງ ເພື່ອຈັດຕັ້ງ ແລະ ນຳພາຊົນຊັ້ນກຳມາຊີບດຳເນີນການຕໍ່ຕ້ານກັບຊົນຊັ້ນນາຍທຶນ.

ຕໍ່ມາໃນໄລຍະກາງຫາທ້າຍສະຕະວັດທີ່ XIX, ຄວາມເຂົ້າໃຈເລິກເຊິ່ງຂອງຊາວຜູ້ອອກແຮງງານຕໍ່ການຂູດຮີດແຮງງານ ຈຶ່ງສ້າງຄວາມຂັດແຍ່ງລະຫວ່າງຊົນຊັ້ນນາຍທຶນກັບຊົນຊັ້ນກຳມະຊີບກຳລັງດຳເນີນໄປດ້ວຍຄວາມເຄັ່ງຕຶງ ແລະ ເພີ່ມທະວີຄວາມຮຸນແຮງຂຶ້ນ. ກົງກັນຂ້າມຂະບວນການນັດຢຸດງານຂອງຊົນຊັ້ນກຳມະຊີບໃນແຕ່ລະຄັ້ງລ້ວນແຕ່ຖືກປະລາໄຊ ຈຶ່ງເຮັດໃຫ້ຊົນຊັ້ນກຳມະຊີບມີສະຕິສາມັກຄີສາກົນ, ມີຄວາມຮັບຮູ້, ມີຄວາມເຂົ້າໃຈກ່ຽວກັບຄວາມສຳຄັນຂອງສາມັກຄີສາກົນ ແລະ ມີຄວາມຕ້ອງການການນຳພາທີ່ສະຫຼາດສ່ອງໃສຂອງພັກນັບມື້ຫຼາຍຂຶ້ນ. ດັ່ງນັ້ນ, ໃນວັນທີ 28 ກັນຍາ ປີ ຄ.ສ 1884, ກອງປະຊຸມໃຫຍ່ກຳມະກອນສາກົນໄດ້ໄຂຂຶ້ນ ຢູ່ລອນດອນ ປະເທດ

ອັງກິດ ໂດຍມີຜູ້ແທນກຳມະກອນມາຈາກຫຼາຍປະເທດເຂົ້າຮ່ວມ. ໃນກອງປະຊຸມໄດ້ລົງປະຊາມະຕິຮັບຮອງເອົາ ສະຫະພັນກຳມະກອນສາກົນ ແລະ ສ້າງຕັ້ງສາກົນທີ I ພາຍໃຕ້ ການນຳພາຂອງກາກມາກ.

ພາຍຫຼັງໄດ້ຮັບການສ້າງຕັ້ງ, ສາກົນທີ1 ໄດ້ກາຍເປັນເອທີສຳຄັນໃນການເຜີຍແຜ່ລັດທິມາກ ໃຫ້ເຂົ້າເຖິງ ຂະບວນການຂອງມະຫາຊົນ ແລະ ກຳມະກອນໃນຂອບເຂດທົ່ວໂລກ

# ບົດທີ6

# ການລ່າຫົວເມືອງຂຶ້ນຂອງຈັກກະພັດທ້າຍສະຕະວັດທີ 19ຫາ ຕົ້ນສະຕະວັດທີ 20

## 1.ການລ່າຫົວເມືອງຂຶ້ນຂອງພວກຈັກກະພັດຢູ່ອາຊີ

### 1.1. ການແຊກແຊງເຂົ້າຈີນ

ທ້າຍສະຕະວັດທີ XVIII ເປັນໄລຍະທີ່ອຳນາດສູນກາງຂອງສັກດີນາຈີນເກີດມີຄວາມອ່ອນເພຍ ແລະ ຊຸດໂຊມຫນັກໂດຍສະເພາະຢ່າງຍິ່ງແມ່ນໃນລາຊະວົງແມນຈູຈຶ່ງເປັນການສ້າງເງື່ອນໄຂໃຫ້ພວກຈັກກະພັດທັງຫຼາຍຊ່ວງຊີງ ແລະ ແຂ່ງຂັນກັນແຊກແຊງ-ຮຸກຮານປະເທດຈີນ ຢ່າງເປັນຂະບວນກວ້າງຂວາງ.

ພວກຈັກກະພັດໄດ້ນຳໃຊ້ຮູບການຊ້ຳເກົ່າ ທີ່ພວກເຂົ້າເຄີຍໃຊ້ມາເຂົ້າໃນການແຊກແຊງປະເທດຈີນນັ້ນແມ່ນຮູບການຄ້າຂາຍ ແລະ ເຜີຍແຜ່ສາສະຫນາກາໂຕລິກາເປັນຮູບການທຳອິດ. ຈາກນັ້ນ, ເມື່ອເຈົ້າຂອງປະເທດບໍ່ຍອມໃຫ້ການຮ່ວມມື ຫຼື ບໍ່ໄດ້ຜົນພວກເຂົາກໍ່ຈະໃຊ້ກຳລັງອາວຸດ ເຂົ້າມາປາບປາມຢ່າງປ່າເຖື່ອນ ຈັກກະພັດທີ່ເຂົ້າປະເທດຈີນກ່ອນຫມູ່ແມ່ນພວກປ໊ອກຕຸຍການ (Portugal) ເຊິ່ງມາຕັ້ງສູນການຄ້າຢູ່ທີ່ອາວເໝີນ ແລະ ກວາງຕຸ້ງ ແລະ ຕໍ່ມາກໍ່ມີ ແອັດສະປາຍ (Spain), ຝຣັ່ງ (France), ອັງກິດ (England), ໂຮນລັງ (Holland) ແລະ ສະຫະລັດອາເມຣິກາ (USA). ແຕ່ການເຂົ້າມາຄ້າຂາຍຂອງພວກຈັກກະພັດໄດ້ຖືກກີດຂວາງຈາກລັດຖະບານຈີນເນື່ອງຈາກໃນໄລຍະນັ້ນ ລາຊະວົງແມນຈູ ໄດ້ປິດປະຕູເພາະຢ້ານປະຊາຊົນນຳກຳລັງຈາກພາຍນອກມາຕ້ານຕົນເອງ.

ພໍ່ຄ້າອັງກິດ ແລະ ຝຣັ່ງຈຶ່ງໄດ້ແຕ່ງທູດມາເຈລະຈາການຄ້າກັບຈີນ ແຕ່ກໍ່ຖືກປະຕິເສດເຖິງຢ່າງໃດກໍ່ຕາມພໍ່ຄ້າອັງກິດ ແລະ ຝຣັ່ງກໍ່ໄດ້ພະຍາຍາມຫາທຸກວິທີທາງເພື່ອເຮັດການຄ້າກັບຈີນໃຫ້ໄດ້. ສິນຄ້າທີ່ນຳມາຂາຍໄດ້ກຳໄລມະຫາສານແມ່ນຢາຝິ່ນ ແລະ ຜູ້ທີ່ຂາຍຫຼາຍກວ່າຫມູ່ ແມ່ນອັງກິດສະເພາະແຕ່ປີ ຄ.ສ 1834 ນີ້ເຖິງ 21.000 ຫີບ (1 ຫີບປະມານ 72.5 ກິໂລກຼາມ) ແລະ ປີ ຄ.ສ 1839 ໄດ້ເພີ່ມຂຶ້ນເປັນ 40.000 ຫີບ. ບັນຫາຢາຝິ່ນທີ່ຫຼັ່ງໄຫຼເຂົ້າຈີນເປັນຈຳນວນຫຼວງຫຼາຍນຳໄປສູ່ການເກີດສົງຄາມລະຫວ່າງຈີນ-ອັງກິດໃນປີ ຄ.ສ 1940-1842 ເອີ້ນວ່າ: ສົງຄາມຢາຝິ່ນ.

ໃນໄລຍະທ້າຍສະຕະວັດທີ່ XIX ຫາຕົ້ນສະຕະວັດທີ XX ເປັນໄລຍະທີ່ຈັກກະພັດຕາເວັນຕົກໄດ້ດຳເນີນນະໂຍບາຍແຊກແຊງທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມເຂົ້າໃນປະເທດຈີນ ແລະ ພາຍຫຼັງສົງຄາມຈີນ-ຍີ່ປຸ່ນ (1894-1895) ເຊິ່ງແມ່ນຈີນຖືກປະລາໄຊຈຶ່ງເກີດມີຂະບວນຕັດແບ່ງດິນຈີນໃນປີ ຄ.ສ 1893-1901 ຂອງບັນດາຈັກກະພັດເຊັ່ນ: ຈັກກະພັດຣັດເຊຍ, ອັງກິດ, ຝຣັ່ງ, ຍີ່ປຸ່ນ, ເຢຍລະມັນ, ອີຕາລີ, ໂອຕຣິສ ແລະ ຈັກກະພັດອາເມຣິກາ, ດັ່ງນັ້ນ, ພວກຈັກກະພັດຈຶ່ງສາມາດຄວບຄຸມດ້ານເສດຖະກິດ-ການເງິນ ແລະ ສາມາດຊົມໃຊ້ສິດໃນຈີນຄືດັ່ງລຸ່ມນີ້:

- ຈັກກະພັດຣັດເຊຍ ມີສິດສ້າງທາງລົດໄຟຢູ່ແມນຈູລີ ແລະ ເຂົ້າທ່າກຳປັ່ນລູຊານ-ຕາແລນ.
- ໃນປີ ຄ.ສ 1897 ເຢຍລະມັນ ມີສິດເຂົ້າຕອນດິນຢູ່ເຂດເຈົ້າລວານ, ຂຸດຄົ້ນບໍ່ແຮ່ ແລະ ສ້າງທາງລົດໄຟຢູ່ແຂວງຊານຕຸງ.

- ອັງກິດ ເຊົ່າດິນເຂດອຸຍຮາຍຢຸ່ງ ແລະ ດຳເນີນການຄ້າຂາຍໃນເຂດແມ່ນ້ຳຢັງຊີກຽງ.
- ຝຣັ່ງ ເຊົ່າດິນໃນເຂດອ່າວເຈົາລວານ ແລະ ສ້າງທາງລົດໄຟຢູ່ເຂດຢູນານ, ຂຸດບໍ່ແຮ່ກວາງຕຸງ, ອູນານ ແລະ ກວາງຊີ
- ຍີ່ປຸ່ນ ຍຶດກາະລິວກິວ.
- ສ່ວນຈັກກະພັດອາເມຣິກາ ມາຍຶດຄອງປະເທດຈີນຊ້າກວ່າຈັກກະພັດອື່ນໆ ເນື່ອງຈາກວ່າຍັງມີການປັບປຸງຫົວເມືອງຂຶ້ນທີ່ຫາກໍ່ຍຶດໄດ້. ແຕ່ຈັກກະພັດອາເມຣິກາໄດ້ໃຊ້ນະໂຍບາຍໂນ້ມນ້າວເຂົ້າຂ້າງຈີນຄື: ສິນຄ້າຂອງອາເມຣິກາເກັບພາສີເອກະພາບກັບສິນຄ້າຈັກກະພັດອື່ນໆທີ່ຂາຍຢູ່ຈີນ, ຄົນຈີນເປັນຜູ້ເກັບພາສີທັງຫມົດ, ອາເມຣິກາຮັບຮູ້ສິດປົກຄອງຂອງຈັກກະພັດໃນຈີນ, ຈັກກະພັດອື່ນໆຕ້ອງບໍ່ເກັບພາສີສູງ ແລະ ມີສິດເທົ່າທຽມກັນໃນແຕ່ລະເຂດ. ຈາກນະໂຍບາຍດັ່ງກ່າວຈັກກະພັດອາເມຣິກາຈຶ່ງສາມາດຍຶດເອົາດິນສ່ວນຫຼາຍຂອງຈີນ ແລະ ກຽມທຸກເງື່ອນໄຂຍຶດຄອງປະເທດຈີນ, ຕໍ່ຫນ້າສະພາບການດັ່ງກ່າວເຮັດໃຫ້ປະຊາຊົນຈີນໄດ້ສູນເສຍຄວາມເປັນເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຕົນ. ນອກຈາກນັ້ນ, ຍັງຖືກພວກຈັກກະພັດກົດຂີ່ຂູດຮີດເຮັດໃຫ້ຊີວິດການເປັນຢູ່ຂອງເຂົາເຈົ້າພົບຄວາມທຸກຍາກລຳບາກຢ່າງຫນັກຫນ່ວງ ຈຶ່ງມີຂະບວນການຕໍ່ສູ້ປົດປ່ອຍຊາດເກີດຂຶ້ນ.

### 1.2. ການແຊກແຊງ ແລະ ຍຶດຄອງປະເທດອິນເດຍ

ໃນສະຕະວັດທີ່ XV ປັອກຕຸຍການ ເປັນປະເທດທຳອິດທີ່ເຂົ້າມາໃນປະເທດອິນເດຍ ໂດຍໄດ້ປັກຫຼັກຢູ່ທີ່ເມືອງກົວ (cau) ເພື່ອດຳເນີນການຄ້າ ແລະ ການເຜີຍແຜ່ສາສະຫນາ. ເມື່ອມາເຖິງສະຕະວັດທີ XVII ອຳນາດ ແລະ ອິດທິພົນຂອງ ປັອກຕຸຍການ ໃນອາຊີໄດ້ຫຼຸດລົງຕໍ່ຈາກນັ້ນຊາວຮໍລັນດາຈຶ່ງເຂົ້າມາມີອຳນາດໃນການທຳການຄ້າເຄື່ອງເທດ.

ໃນຕົ້ນສະຕະວັດທີ XVIII ຈັກກະພັດອັງກິດ ແລະ ຝຣັ່ງໄດ້ເຂົ້າມາຍາດແຍ່ງສິດເປັນເຈົ້າປົກຄອງອິນເດຍ, ການຍາດແຍ່ງດັ່ງກ່າວໄດ້ກາຍເປັນສົງຄາມ ແກ່ຍາວເປັນເວລາ 10 ປີ (17531763). ໃນທີ່ສຸດຝຣັ່ງຕ້ອງປະລາໄຊໃຫ້ອັງກິດເປັນຄັ້ງທີສອງ (ຄັ້ງທີ່ຫນຶ່ງຝຣັ່ງປະລາໄຊໃຫ້ອັງກິດ ຢູ່ການາດາ ປີ ຄ.ສ 1759) ແລະ ຝຣັ່ງຖືກປັດເຂ່ຍອອກຈາກອິນເດຍເກືອບຫມົດຍັງເຫຼືອພຽງແຕ່ ປ້ອມການຄ້າພຽງບາງບ່ອນເທົ່ານັ້ນເຊັ່ນ: ປົງດິເຊຣີ, ປານົງ, ກາຣິການ, ມາເລ ແລະ ຊັງແດກນາກໍ.

ແຕ່ກາງສະຕະວັດທີ່ XVIII ເຖິງຕົ້ນສະຕະວັດທີ່ XIX ອັງກິດສາມາດຍຶດເອົາອິນເດຍ ທີ່ມີອານາເຂດທີ່ກວ້າງໃຫຍ່ໄພສານ ແລະ ຍັງສາມາດຂະຫຍາຍອິດທິພົນໄປປະເທດເນປານ, ຕິເບດ ແລະ ອື່ນໆ ເຊິ່ງບໍລິສັດອິນເດຍຕາເວັນອອກ ເປັນຜູ້ຕາງຫນ້າລັດຖະບານອັງກິດປົກຄອງອິນເດຍ.

### 1.3. ການແຊກແຊງ ແລະ ຍຶດຄອງປະເທດຍີ່ປຸ່ນ

ໃນຄວາມເປັນຈິງ ຍີ່ປຸ່ນ ເປັນຊາວອາຊີພຽງຊາດດຽວທີ່ບໍ່ເຄີຍຖືກຄົນຜິວຂາວຂູດຮີດ ແລະ ຫມິ່ນປະຫມາດ ໃນທາງກົງກັນຂ້າມພວກເຂົາຍັງໃຫ້ຄວາມສະເຫມີພາບ ແລະ ນັບຖືຢຳເກງໃນຖານະມະຫາອຳນາດໂລກນັບຕັ້ງແຕ່ຕົ້ນສະຕະວັດທີ່ XX ເປັນຕົ້ນມາ.

ໃນສະຕະວັດທີ່ XVI ປ໋ອກຕຸຍການ (Portugal) ໄດ້ເຂົ້າມາເຜີຍແຜ່ສາສະໜາກາໂຕລິກ ເຊິ່ງໄດ້ສ້າງຄວາມແບ່ງແຍກໃນສັງຄົມ ຍີ່ປຸ່ນ ຈຶ່ງຖືກໂຊກຸນຂັບໄລ່ ແລະ ຫ້າມຄົນຕ່າງຊາ ເຂົ້າມາໃນປະເທດຍີ່ປຸ່ນ. ຕໍ່ມາຈັກກະພັດຈີນຊາວມົງໂກນ ກຸບລາຍຄານ ເຄີຍສົ່ງກອງທັບມາບຸກຕີຍີ່ປຸ່ນແຕ່ບໍ່ສຳເລັດ ຍີ່ປຸ່ນ ຈຶ່ງອັດປະຕູຕື່ມອີກ.

ໃນປີ ຄ.ສ 1853 ອາເມຣິກາເປັນຊາດທຳອິດທີ່ມາເຄາະປະຕູຍີ່ປຸ່ນໂດຍໃຊ້ເຮືອຮົບແລ່ນເຂົ້າອ່າວໂຕກີໂອ (ໂຕກຽວ) ບີບຍີ່ປຸ່ນໃຫ້ເລີກນະໂຍບາຍປິດປະເທດ ແລະ ປີຕໍ່ມາກໍ່ບີບບັງຄັບໃຫ້ເຊັນສົນຍາບໍ່ສະເໝີພາບ, ເມື່ອເຫັນເຮືອລົບຂອງອາເມຣິກາເຮັດດ້ວຍໂລຫະ ແລະ ແລ່ນດ້ວຍເຄື່ອງຈັກແທນເຮືອໄມ້ທີ່ແລ່ນດ້ວຍຜ້າໃບກໍ່ຮູ້ສຶກປະຫຼາດໃຈ ແລະ ຮູ້ສຶກວ່າໂຕເອງຫຼ້າຫຼັງ ແລະ ຍ້ອນຫວັ່ນເກງຄວາມເໜືອກວ່າດັ່ງກ່າວຍີ່ປຸ່ນຈຶ່ງຍອມເປີດປະເທດເພື່ອຕິດຕໍ່ຄ້າຂາຍກັບໂລກພາຍນອກ ໂດຍສະເພາະແມ່ນກັບອາເມຣິການັບຕັ້ງແຕ່ປີ ຄ.ສ 1860 ເປັນຕົ້ນມາ, ຈາກນັ້ນ, ປະເທດຕ່າງໆເຊັ່ນ: ຣັດເຊຍ, ອັງກິດ, ຝຣັ່ງ ແລະ ປະເທດອື່ນໆໄດ້ໃຊ້ກຳລັງນາບຂູ່ ໂຊກຸນ ໃຫ້ເປີດທ່າເຮືອ ແລະ ຫຼຸດພາສີສິນຄ້າຂາເຂົ້າ.



ທຸງອາເມຣິກາປັກສະບັດເທິງເກາະໂອກີນາວາ

ໃນສົງຄາມໂລກຄັ້ງທີ II ຈັກກະພັດອາເມຣິກາໄດ້ຍຶດເກາະໂອກີນາວາ (Okinawa) ໃນວັນທີ 1 ເດືອນເມສາ ປີ ຄ.ສ 1945 ແລະ ກາຍເປັນຖານທັບທາງການທະຫານທີ່ໃຫຍ່ ແລະ ສຳຄັນແຫ່ງໜຶ່ງໃນມະຫາສະໝຸດປາຊີຟິກຂອງສະຫະລັດອາເມຣິກາ ເມື່ອເກີດສົງຄາມ ແລະ ມີການຖິ້ມລະເບີດໃສ່ພາກເໜືອຫວຽດນາມໃນປີ ຄ.ສ 1965 ສະຫະລັດອາເມຣິກາໄດ້ໃຊ້ອຸປະກອນທາງການທະຫານທີ່ເກັບມ້ຽນຢູ່ໃນຍີ່ປຸ່ນເຂົ້າໃນສົງຄາມຫວຽດນາມ.

ໃນປີ ຄ.ສ 1969 ລັດຖະບານຂອງ ຊາໂຕ ແຫ່ງພັກລີເບຣານ ເດໂມກຣາຕິກ (Lilbral Democratic) ໄດ້ຮັບໄຊຊະນະຈາກການເລືອກຕັ້ງອີກຄັ້ງໜຶ່ງເນື່ອງຈາກດຳເນີນການຫາສຽງດ້ວຍ.

## 2.ການລ່າເມືອງຂຶ້ນຂອງຈັກກະພັດຢູ່ທະວີບອາຟຣິກາ

ອາຟຣິກາ ທາງພາກກາງ ແລະ ພາກໃຕ້ບາງສ່ວນຍັງຄົງເປັນອຸປະສັກຢ່າງໜັກສຳລັບ ຊາວເອີຣົບໂດຍສະເພາະແມ່ນອາກາດຮ້ອນອົບເອົ້າ, ປ່າດົງອັນຕຶບໜາ ແລະ ແມ່ນ້ຳທີ່ບໍ່ສາມາດໃຊ້ໃນການເດີນເຮືອ ຈຶ່ງເຮັດໃຫ້ຊາວເອີຣົບບໍ່ສາມາດເຂົ້າໄປໄດ້. ສ່ວນທາງພາກເໜືອຂອງ ອາຟຣິກາ ແມ່ນມີຄວາມສຳຄັນທາງປະຫວັດສາດມາຕັ້ງແຕ່

ສະໄຫມເອຢິບບູຮານ. ນອກຈາກນັ້ນ, ດິນແດນດັ່ງກ່າວຍັງມີຄວາມອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ທີ່ມີມູນຄ່າມະຫາສານເຊັ່ນ: ຄຳ, ທອງແດງ, ເພັດນິນຈິນດາ, ຢາງພາລາ, ຝ້າຍ, ງາຊ້າງ ແລະ ອື່ນໆ. ໃນຂະນະດຽວກັນປະຊາຊົນອາຟຣິກາຍັງປະສົບກັບຄວາມທຸກຍາກລຳບາກຢ່າງແສນສາຫັດ ທີ່ມີມາຕັ້ງແຕ່ສະ ໄຫມບັນພະບຸລຸດ, ພ້ອມກັນນັ້ນ, ຍັງຖືກພວກລ່າເມືອງຂຶ້ນທຳການກົດຂີ່ຂູດຮີດ ແລະ ກົດຫນ່ວງຢ່າງທໍລະມານມາເປັນເວລາຫຼາຍປີ ເຊັ່ນດຽວກັນ.

ຢ່າງໃດກໍ່ຕາມ, ໃນທ້າຍສະຕະວັດທີ XIX ຫາຕົ້ນສະຕະວັດທີ XX ອາຟຣິກາເປັນທະວີບຫນຶ່ງທີ່ບັນດາຈັກກະພັດໃຫ້ຄວາມສຳຄັນ ແລະ ສົນໃຈເປັນຢ່າງຍິ່ງ ພວກເຂົາຈິ່ງເຂົ້າໄປຕັດ ແບ່ງ ແລະ ຊ່ວງຊີງກັນແຊກແຊງ-ຮຸກຮານບັນດາປະເທດຕ່າງໆໃນທະວີບອາຟຣິກາຢ່າງເປັນຂະບວນກວ້າງຂວາງເຊັ່ນ: ຈັກກະພັດອັງກິດ, ຝຣັ່ງ, ເຢຍລະມັນ, ອີຕາລີ ແລະ ຈັກກະພັດອື່ນໆ.

**2.1. ຈັກກະພັດອັງກິດຍຶດຄອງອາຟຣິກາໃຕ້**

ໃນປີ ຄ.ສ 1815 ອັງກິດໄດ້ເຂົ້າຍຶດຄອງແຫຼມໂຄໂລນີ (Cape Colory) ຈາກຊາວໂຮນລັງພວກເຂົາເຈົ້າເກີດຄວາມບໍ່ພໍໃຈຕໍ່ການປົກຄອງຂອງອັງກິດ ຈິ່ງຍ້າຍຂຶ້ນໄປທາງເຫນືອ ແລະ ຈັດຕັ້ງລັດອິດສະຫລະ 2 ແຫ່ງຄື: ທຣານສະວານ (Transval) ແລະ ໂອເຣນ (Orange) ຢູ່ທີ່ນີ້ພວກເຂົາເຈົ້າໄດ້ຄົ້ນພົບຄຳເປັນຈຳນວນຫຼວງຫຼາຍຢູ່ທີ່ທຣານສະວານ. ໃນປີ ຄ.ສ 1886 ພວກອັງກິດຈິ່ງໄດ້ພາກັນຫຼັ່ງໄຫຼເຂົ້າມາພ້ອມທັງພະຍາຍາມທີ່ຈະຄອບຄອງດິນແດນແຫ່ງນີ້ໃຫ້ໄດ້, ເຫດການນີ້, ຍິ່ງເຮັດໃຫ້ພວກໂຮນລັງເກີດຄວາມບໍ່ພໍໃຈອີກ ດັ່ງນັ້ນ, ປີ ຄ.ສ 1895 ຈິ່ງເກີດສົງຄາມລະຫວ່າງພວກ ໂຮນລັງ-ອັງກິດ ເປັນເວລາ 3 ປີແຕ່ພວກໂຮນລັງຖືກປະລາໄຊ ແລະ ປີ ຄ.ສ 1910 ຈິ່ງໄດ້ຈັດຕັ້ງ ສະຫະພາບອາຟຣິກາໃຕ້ (Union of South Africa) ເຊິ່ງໄດ້ລວມເອົາອານານິຄົມແຫຼມນາຕານ (Natal), ທຣານສະວານ ແລະ ໂອເຫນ (Orange) ໂດຍໃຫ້ອຳນາດໃນການປົກຄອງຕົນເອງເປັນຂອງຊາວອາຟຣິກາໃຕ້.

**2.2. ຈັກກະພັດອັງກິດຍຶດຄອງອາຟຣິກາເຫນືອ**

ພາຍຫຼັງຍຶດຄອງອາຟຣິກາໃຕ້ໄດ້ແລ້ວ ຈັກກະພັດອັງກິດຍັງໄດ້ສືບຕໍ່ການຍຶດຄອງທາງພາກເຫນືອ ໂດຍສະເພາະແມ່ນເອຢິບໃນທ້າຍສະຕະວັດທີ່ XIX, ພາຍຫຼັງການເປີດຄອງຊູເອດ ໃນປີ ຄ.ສ 1860 ຍິ່ງເຮັດໃຫ້ອັງກິດໄດ້ຜົນປະໂຫຍດເພີ່ມຂຶ້ນ, ດັ່ງນັ້ນ, ອັງກິດ ແລະ ຝຣັ່ງກໍ່ໄດ້ລົງທຶນຢ່າງມະຫາສານໃນທຸລະກິດຕ່າງໆທັງທີ່ຮູ້ວ່າເອຢິບເປັນສ່ວນຫນຶ່ງຂອງຕວກກີ, ນອກຈາກນັ້ນ, ຈັກກະພັດທັງສອງໄດ້ເຂົ້າຄວບຄຸມການເງິນຂອງລັດຖະບານເອຢິບທີ່ກຳລັງລົ້ມລະລາຍ ແຕ່ມາ ໃນປີ ຄ.ສ 1882 ກຸ່ມຊາດນິຍົມເອຢິບໄດ້ທຳການຕໍ່ຕ້ານການຍຶດຄອງຂອງຈັກກະພັດ ຈິ່ງເຮັດໃຫ້ຝຣັ່ງຖອນໂຕອອກຈາກເອຢິບ, ໃນເມື່ອສະຖານະການເປັນຄືແນວນັ້ນໃນປີ ຄ.ສ 1914 ອັງກິດຈິ່ງໄດ້ມີການປະຕິຮູບຫຼາຍບັນຫາ ແລະ ພາຍຫຼັງສົງຄາມໂລກຄັ້ງທີ I ໄດ້ປະກາດໃຫ້ເອຢິບຢູ່ໃນອາລັກຂາຂອງຕົນ.

ເນື້ອທີ່ອັນກວ້າງໃຫຍ່ຢູ່ທາງໃຕ້ຂອງເອຢີ້ຍເອີ້ນວ່າ ຊູດານ ກໍ່ຖືກລວມເຂົ້າເປັນດິນແດນພາຍໃຕ້ການຄອບຄອງຂອງອັງກິດ ແລະ ເອຢິບ, ການເຊື່ອມດິນແດນພາກເຫນືອ ແລະ ໃຕ້ເຂົ້າກັນເປັນຄວາມຝັນຂອງລັດຖະບານອັງກິດມາດົນນານແລ້ວເພາະວ່າ ຈະເຮັດໃຫ້ອັງກິດມີຖານະສຳຄັນຕະຫຼອດພາກພື້ນທະວີບອາຟຣິກາ. ແຕ່ວ່າເມື່ອເຢຍລະມັນລວມອາຟຣິກາຕາເວັນອອກ ໄດ້ກ່ອນຈິ່ງເຮັດໃຫ້ແຜນການຂອງອັງກິດຖືກພັງທະລາຍ. ສະຫຼຸບແລ້ວ, ມາ

ເຖິງປີ ຄ.ສ 1914 ເມື່ອຮອບຮອມດິນແດນ ທີ່ຍຶດຄອງໄດ້ເຂົ້າກັນກໍ່ເຮັດໃຫ້ອັງກິດກາຍເປັນປະເທດທີ່ສາມາດຄອບຄອງດິນແດນໄດ້ຢ່າງກວ້າງຂວາງທີ່ສຸດໃນໂລກ.

**2.3. ຈັກກະພັດຝຣັ່ງເຂົ້າຍຶດຄອງອາຟຣິກາ**

ຝຣັ່ງເຂົ້າໄປໃນດິນແດນຂອງອາຟຣິກາ ດ້ວຍເຫດຜົນທາງລັດທິຊາດນິຍົມ ແລະ ລັດທິທາງການທະຫານ, ໃນ ປີ ຄ.ສ 1830 ຝຣັ່ງ ຮຸກຮານ ອານເຊຣີ ແລ້ວກໍ່ເອົາລວມເຂົ້າຢູ່ໃນດິນແດນຂອງຕົນຕໍ່ມາໄດ້ຂະຫຍາຍອານາ ເຂດໄປທາງພາກຕາເວັນອອກ. ສ່ວນທາງພາກຕາເວັນຕົກຝຣັ່ງໄດ້ເຂົ້າຍຶດຄອງມາຣົກ (Monaco) ເຖິງສອງຄັ້ງຄື: ປີ ຄ.ສ 1905 ແລະ ປີ ຄ.ສ 10. ດັ່ງນັ້ນ, ບັນຫາໂມຣົກໂຄເກືອບຈະເປັນເຫດເຮັດໃຫ້ເກີດສົງຄາມໃນເອີຣົບ ແຕ່ໃນໄລຍະຕໍ່ມາຝຣັ່ງກໍພະຍາຍາມເຂົ້າຍຶດຄອງອາຟຣິກາຕາເວັນຕົກເກືອບທັງຫມົດ.

ສ່ວນມາດາກັດສະກາ (Madagascar) ໄດ້ຕົກເປັນຂອງຝຣັ່ງໃນປີ ຄ.ສ 1890 ແລະ ບາງສ່ວນຂອງໂຊມາລີກໍ່ກາຍເປັນອານານິຄົມ ຂອງຝຣັ່ງໃນທົດສະວັດ 1880. ນອກຈາກນັ້ນ, ໃນປີ ຄ.ສ 1898 ຝຣັ່ງກໍ່ພະຍາຍາມຂະຫຍາຍການຄອບຄອງເຂົ້າໄປໃນຊູດານ ແຕ່ກໍ່ຕ້ອງປະເຊີນຫນ້າກັບອັງກິດຢ່າງຫນັກທັງສອງປະເທດຈໍາຕ້ອງໄດ້ເຮັດສັນຍາພັນທະມິດຮ່ວມກັນ.

ສະຫຼຸບລວມແລ້ວ, ມາເຖິງປີ ຄ.ສ 1914 ຝຣັ່ງສາມາດຄອບຄອງດິນແດນໃນອາຟຣິກາໄດ້ທັງຫມົດປະມານ 3 ລ້ານກວ່າຕາລາງໄມ" (ປະມານ 14 ເທົ່າຂອງປະເທດຝຣັ່ງ), ພົນລະເມືອງ 30 ລ້ານຄົນ (ປະມານ 3 ສ່ວນ 4 ຂອງພົນລະເມືອງຝຣັ່ງ).

**2.4. ຈັກແກະພັດອື່ນໆທີ່ເຂົ້າຍຶດຄອງອາຟຣິກາ**

ນອກຈາກຈັກກະພັດອັງກິດ ແລະ ຝຣັ່ງທີ່ຊ່ວງຊີງກັນເຂົ້າຍຶດຄອງໃນດິນແດນຂອງອາຟຣິກາ ແລ້ວຍັງມີຈັກກະພັດອື່ນໆອີກຈໍານວນຫນຶ່ງເຊັ່ນກັນ ໂດຍສະເພາະ ເຢຍລະມັນ (Gemany) ເຂົ້າຍຶດຄອງໂຕໂກ, ກາເມຣູນ, ອາຟຣິກາຕາເວັນຕົກສ່ຽງໃຕ້ ແລະ ອາຟຣິກາຕາເວັນອອກ. ສ່ວນອີຕາລີ (Italy) ເປັນປະເທດທີ່ເກີດລັດທິຈັກກະພັດນິຍົມນໍາຫຼັງໄດ້ເຂົ້າຍຶດຄອງແຄມຝັ່ງທະເລແດງ ແລະ ໂຊມາລີ, ແຄມຝັ່ງມະຫາສະຫມຸດອິນເດຍ ແລະ ພະຍາຍາມເຂົ້າຍຶດຄອງບິດສຊີເນຍ (ເອທີໂອປີ) ແຕ່ຕ້ອງປະລາໄຊໃນປີ ຄ.ສ 1896.

ຈົນມາເຖິງໃນປີ ຄ.ສ 1912 ອີຕາລີ ຈຶ່ງສາມາດຍຶດຄອງ ຕຣີໂປລີ ດ້ວຍການເຮັດສົງຄາມກັບຕວກກີ, ແບນຊິກຍຶດຄອງກົງໂກ, ປັອກຕຸຍການຍຶດຄອງອັງໂກລາ ແລະ ໂມຊໍາບິກ, ແອັດສະປາຍ ຍຶດຄອງດິນແດນສ່ວນຫນຶ່ງໃນຣີໂອເດີ, ໂອໂຣຣແລະ ຣີໂອມູນີ ດັ່ງນັ້ນ, ເມື່ອມາເຖິງປີ ຄ.ສ 1914 ທົ່ວທັງທະວີບອາຟຣິກາມີປະເທດເອກະລາດພຽງແຕ່ 2 ປະເທດຄື: ເອທີໂອປີ ແລະ ໄລບີເຣຍ

## 3.ການລ່າເມືອງຂຶ້ນຂອງຈັກກະພັດຢູ່ທະວີບອາເມລີກາລາຕິນ

**3.1. ການຮຸກຮານອາເມຣິກາລາຕິນຂອງແອັດສະປາຍ ແລະ ປັອກຕຸຍການ**

ພາຍຫຼັງການຄົ້ນພົບແຜນດິນໃຫມ່ຂອງໂຄລົມບັດໃນປີ ຄ.ສ 1492 ນັກລ່າອານານິຄົມ ແອັດສະປາຍ ແລະ ປັອກຕຸຍການ ກໍ່ດໍາເນີນການຮຸກຮານອາເມຣິກາລາຕິນຢ່າງບໍ່ຂາດສາຍ. ປີ ຄ.ສ 1493 ແອັດສະປາຍໄດຍຶດຄອງໄຮຕີຕໍ່ມາຍຶດກູບາ, ຈາໄມກາ ແລະ ປອກໂຕຣີໂກ ພວກເຂົ້າໄດ້ຂູດຣີດແຮງງານຊາວອິນເດຍແດງທີ່ເຮັດວຽກຢູ່ໃນສວນອ້ອຍ ແລະ ຝ້າຍຢ່າງໂຫດຮ້າຍ ປ່າເຖື່ອນ ເຊິ່ງຊາວອິນເດຍແດງຜູ້ທີ່ບໍ່ຖືກຂ້າໃນເວລາຕໍ່ສູ້ກໍ່ຈະຖືກທໍລະມານຈົນຕາຍ

ດ້ວຍການເຮັດວຽກຫນັກ, ຈາກນັ້ນໃນເດືອນ ພຶດສະພາ ປີ ຄ.ສ 1521 ໄດ້ຮຸກຮານເຂົ້າແມັກຊິກໂກ ຊາວອິນ ເດຍ ແດງໄດ້ທຳການຕໍ່ສູ້ຕິດຕໍ່ກັນເປັນເວລາ 18 ເດືອນ ແຕ່ສຸດທ້າຍກໍ່ບໍ່ຊະນະ. ໃນເດືອນພະຈິກ ປີ ຄ.ສ 1532 ໄດ້ຍຶດ ເປຣູ ຈັບກະສັດອາຕາຮວນປາ (Atahualpa) ເປັນສະເລີຍເສິກ ແລະ ຖືກສັງຫານໃນເວລາຕໍ່ມາ ແລ້ວສະຖາປະນາ ການປົກຄອງແບບອານານິຄົມໃນເປຣູ ແລະ ສາມາດຍຶດຄອງດິນແດນທີ່ກວ້າງໃຫຍ່ຂອງເອກົວາດໍ, ໂບລີເວຍ ແລະ ເປຣູ. ເມື່ອມາເຖິງປີ ຄ.ສ 1350 ທົ່ວທັງອາເມຣິກາລາຕິນ (ຍົກເວັ້ນເບລຊິນ) ໄດ້ຕົກຢູ່ໃຕ້ການປົກຄອງຂອງແອັດສະ ປາຍທັງຫມົດ.



ການຂູດຮີດແຮງງານໃນສວນອ້ອຍ

ສ່ວນປັອກຕຸຍການ ພາຍຫຼັງຄົ້ນພົບເບລຊິນໃນເດືອນ ເມສາ ປີ ຄ.ສ 1500 ກໍດຳເນີນການຮຸກຮານທັນທີ ແລະ ຫຼັງ ຈາກນັ້ນ 10 ປີ ຕໍ່ມາຊາວປັອກຕຸຍການກໍ່ໄດ້ນຳເອົາສິນຄ້າທີ່ເປັນໄມ້ແດງຊະນິດຫນຶ່ງທີ່ມີຊື່ວ່າ "ເບຣຊິນ ໄປຂາຍໃຫ້ ອັງກິດ ແລະ ປະເທດເບຣຊິນຈຶ່ງໄດ້ຊື່ມາເຖິງທຸກວັນນີ້. ໃນທົດສະວັດ 1520-1530 ເປົ້າຫມາຍຂອງປັອກຕຸຍການບໍ່ ພຽງສະເພາະແຕ່ຄອບຄອງປະເທດເບຣຊິນເທົ່ານັ້ນຫາກແມ່ນອາຟຣິກາ ແລະ ອິນເດຍ. ເພື່ອປ້ອງກັນບໍ່ໃຫ້ເບຣຊິນ ຕົກຢູ່ໃນມືຂອງ ປະເທດອື່ນ ລັດຖະບານໄດ້ສົ່ງກຳລັງ 400 ຄົນໄປເບຣຊິນໃນປີ ຄ.ສ 130, ດຳເນີນການປົກ ຄອງ ແບບອານານິຄົມໃນລະບອບຜະເດັດການສັກດິນານິຍົມ, ແບ່ງເປັນ 2 ເຂດຄື: ເບຣຊິນເຫນືອ ແລະ ໃຕ້, ຕໍ່ມາກະສັດ ໄດ້ແຕ່ງຕັ້ງຂ້າຫຼວງໃຫຍ່ ເປັນຜູ້ມີອຳນາດປົກຄອງທົ່ວເບຣຊິນ ແລະ ແບ່ງເຂດການປົກຄອງອອກເປັນຫຼາຍລັດ ໂດຍ ຂຸນນາງ ແລະ ເຈົ້າທີ່ດິນໃຫຍ່ຂອງປັອກຕຸຍການເປັນຜູ້ຖຸມອຳນາດໃນດ້ານບໍລິຫານ, ການທະຫານ ແລະ ສາສະຫນາ.

### 3.2. ການຮຸກຮານອາເມຣິກາລາຕິນຂອງໂຮນລັງ, ອັງກິດ ແລະ ຝຣັ່ງ

ໃນຂະນະທີ່ແອັດສະປາຍ ແລະ ປັອກຕຸຍການຮຸກຮານ ແລະ ຍຶດຄອງອາເມຣິກາລາຕິນ ໃນສະຕະວັດທີ XV-XVI ພວກເຂົາເຈົ້າຍັງເປັນມະຫາອຳນາດອານານິຄົມ ແຕ່ຫຼັງຈາກທີ່ໂຮນລັງ, ອັງກິດ ແລະ ຝຣັ່ງ ມີຄວາມ ຈະເລີນເຕີບໂຕຂຶ້ນ ອາເມຣິກາລາຕິນໄດ້ກາຍເປັນເປົ້າຫມາຍຍາດຊິງຂອງປະເທດເຫຼົ່ານີ້, ນາຍທຶນ ໂຮນລັງ, ອັງກິດ ແລະ ຝຣັ່ງ ໄດ້ທຳລາຍລະບົບຜູກຂາດ ທາງການຄ້າຂອງແອັດສະປາຍ ແລະ ປັອກຕຸຍການ, ນອກຈາກນັ້ນ, ຍັງເກີດ ສົງຄາມຍາດແຍ່ງອານານິຄົມຫຼາຍຄັ້ງ ເຊິ່ງແອັດສະປາຍ ແລະ ປັອກຕຸຍການເປັນຝ່າຍປະລາໄຊຕະຫຼອດມາ ຕ້ອງໄດ້ ສູນເສຍອານານິຄົມຈຳນວນຫນຶ່ງເຊັ່ນ: ໃນປີ ຄ.ສ 1635 ແອັດສະປາຍຖືກອັງກິດໄດ້ຍາດຊິງເອົາເກາະຈາໄມກາ ແລະ ປີ ຄ.ສ 197 ກໍ່ຖືກຝຣັ່ງເຂົ້າຍຶດຄອງພາກຕາເວັນຕົກເກາະໄຮຕີ.

ນັບຕັ້ງແຕ່ກາງສະຕະວັດທີ XVI ຫາກາງສະຕະວັດທີ່ XVII ໂຮນລັງ, ອັງກິດ ແລະ ຝຣັ່ງ ໄດ້ດຳເນີນສົງຄາມຍາດຊີງເບລຊິນກັບປັອກຕຸຍການຕາມລຳດັບ ແຕ່ພວກເຂົາພຽງສາມາດຍຶດ ໄດ້ເຂດຕອນເຫນືອ ແລະ ເມື່ອເຖິງປາຍສະຕະວັດທີ XVII ແອັດສະປາຍ ແລະ ປັອກຕຸຍການຍັງຄອບຄອງອານານິຄົມສ່ວນຫຼາຍໃນອາເມຣິກາລາຕິນໄວ້ໄດ້.

ໃນຕະຫຼອດ 300 ປີ ນັບແຕ່ທ້າຍສະຕະວັດທີ່ XV ຫາທ້າຍສະຕະວັດທີ່ XVIII ນັກລ່າອານານິຄົມເອີຣົບໄດ້ປຸ້ນສະດົມຢ່າງໂຫດຮ້າຍຕໍ່ປະຊາຊົນອາເມຣິກາລາຕິນ ເພື່ອກອບໂກຍເອົາໂລຫະທີ່ມີຄ່າເຊັ່ນ: ແອັດສະປາຍກອບໂກຍຄຳໄດ້ 2.500.000 ກິໂລກຣາມ ແລະ ເງິນຂາວ 100 ລ້ານກິໂລກຣາມ, ສ່ວນປັອກຕຸຍການ ກອບໂກຍຄຳຄິດເປັນມູນຄ່າ 600 ລ້ານຫຼຽນສະຫະລັດ ແລະ ເພັດເປັນມູນຄ່າ 300 ລ້ານຫຼຽນສະຫະລັດ, ການຂູດຮີດ ແລະ ປຸ້ນສະດົມຢ່າງໂຫດຮ້າຍປ່າເຖື່ອນຂອງນັກລ່າເມືອງຂຶ້ນດັ່ງກ່າວໄດ້ກໍ່ໃຫ້ເກີດການຕໍ່ສູ້ຂອງປະຊາຊົນອາເມຣິກາລາຕິນຢ່າງຕໍ່ເນື່ອງລຽນຕິດ.

# ບົດທີ 7

# ຂະບວນການປົດປ່ອຍຊາດໃນໂລກແຕ່ 1800-1914

## 1. ຂະບວນການປົດປ່ອຍຊາດຢູ່ອາຊີ

### 1.1 ຂະບວນການປົດປ່ອຍຊາດຢູ່ປະເທດອິນເດຍ

ພາຍໃຕ້ການປົກຄອງຂອງຈັກກະພັດອັງກິດ ໄດ້ເຮັດໃຫ້ສະພາບການໃນປະເທດອິນເດຍ ເກີດມີຄວາມຫຍຸ້ງຍາກສັບສົນທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມເປັນຢ່າງຍິ່ງ, ປະຊາຊົນຖືກກົດຂີ່ຂູດຮີດຢ່າງແສນທໍລະມານ, ຖືກຕັດສິດເສລີພາບ ແລະ ມີຊີວິດຢູ່ດ້ວຍຄວາມທຸກຍາກລຳບາກທີ່ສຸດ ເນື່ອງຈາກການກະສິກຳໄດ້ຊຸດໂຊມລົງຢ່າງຮ້າຍແຮງດ້ວຍເຫດຜົນຄື: ຊາວນາບໍ່ມີເງິນເສຍພາສີອາກອນ ຈຶ່ງປະຖິ້ມບ້ານເຮືອນ ແລະ ອຳນາດການປົກຄອງເມືອງຂຶ້ນບໍ່ໄດ້ປົວແປງລະບົບຊົນລະປະທານ ຈຶ່ງເຮັດໃຫ້ທົ່ງພຽງທີ່ກວ້າງຂວາງຕ້ອງກາຍເປັນເຂດຫວ່າງເປົ່າ. ດັ່ງນັ້ນ, ຄວາມທຸກຍາກ ແລະ ຄວາມອຶດຫິວໄດ້ລະບາດຂຶ້ນຢ່າງຮ້າຍແຮງໃນລະຫວ່າງປີ ຄ.ສ 1895-1900 ເຊິ່ງມັນໄດ້ສັງຫານຊີວິດປະຊາຊົນອິນເດຍໄປຫຼາຍລ້ານຄົນ ຈຶ່ງມີການລຸກຂຶ້ນຕໍ່ສູ້ ຢ່າງລຽນຕິດ.

ໃນລະຫວ່າງປີ ຄ.ສ 1875-1885 ໄດ້ເກີດມີຂະບວນການຕໍ່ສູ້ຄັ້ງໃຫຍ່ຂອງຊາວນາ ແລະ ກຳມະກອນຢ່າງເປັນຂະບວນກວ້າງຂວາງ ແລະ ຫຼາຍຮູບແບບອັນເປັນການສ້າງເງື່ອນໄຂເຮັດໃຫ້ຊົນຊັ້ນນາຍທຶນອິນເດຍກ້າຫານໃນການລຸກຂຶ້ນຕໍ່ສູ້ຕ້ານອັງກິດ ຈຶ່ງໄດ້ໄຂກອງປະຊຸມຂອງຕົນຂຶ້ນ ເພື່ອສ້າງຕັ້ງອົງການຈັດຕັ້ງທາງການເມືອງ ແລະ ວາງໂຄງການການເມືອງສຳລັບການເຄື່ອນໄຫວ ໃນຕໍ່ຫນ້າຢ່າງລະອຽດຈະແຈ້ງກວ່າເກົ່າ, ເມື່ອເຫັນຂະບວນການເຄື່ອນໄຫວຂອງຊົນຊັ້ນນາຍທຶນ ນັບມື້ມີຄວາມເຂັ້ມແຂງຂຶ້ນ ຈັກກະພັດອັງກິດຈຶ່ງຕ້ອງການແຍກນາຍທຶນອິນເດຍອອກຈາກຂະບວນການຕໍ່ສູ້ຂອງປະຊາຊົນ ແລ້ວນຳເຂົ້ານາຍທຶນມາເປັນເຄື່ອງມືຮັບໃຊ້ໃຫ້ແກ່ຕົນ ໂດຍໄດ້ອະນຸຍາດໃຫ້ນາຍທຶນອິນເດຍສ້າງຕັ້ງພັກກອງເກຣດ (Congres party).

ໃນລະຫວ່າງ ປີ ຄ.ສ 1885-1905 ພັກຄອງເກຣດ ໄດ້ດຳເນີນນະໂຍບາຍດ້ວຍສັນຕິວິທີ ເພື່ອທວງໃຫ້ມີການປັບປຸງລັດຖະບານລ່າເມືອງຂຶ້ນຂອງອັງກິດ, ຂະຫຍາຍຄະນະລັດຖະມົນຕີໃຫ້ນາຍທຶນອິນເດຍເຂົ້າຮ່ວມນຳ, ຍົກລະດັບວິທະຍາສາດ-ວິທະຍາການ, ດັດແປງການສຶກສາ-ວັດທະນະທຳ ແລະ ສັງຄົມ ແລະ ອື່ນໆ. ແຕ່ອັງກິດ ກໍ່ບໍ່ໄດ້ຕອບສະຫນອງຕາມຄຳຮ້ອງຂໍຂອງຊົນຊັ້ນ ນາຍທຶນ ກົງກັນຂ້າມພວກເຂົາຍັງຫາວິທີສະກັດກັ້ນອິດທິພົນຂອງພັກຄອງເກຣດ ຈຶ່ງເຮັດໃຫ້ພັກຖືກແຕກແຍກເປັນ 2 ຝ່າຍຄື: ຝ່າຍປະນີປະນອມ ແລະ ຝ່າຍຮຸນແຮງ ເຊິ່ງເອີ້ນວ່າພວກຊ້າຍຈັດ ໂດຍແມ່ນ ຕິລັກ (Tilac) ເປັນຫົວຫນ້າໄດ້ຄັດຄ້ານນະໂຍບາຍອ່ອນຍອມຕໍ່ຈັກກະພັດອັງກິດຂອງ ຝ່າຍປະນີປະນອມ ເຊິ່ງເຂົາໄດ້ສະແດງທ່າທີ່ຕໍ່ຕ້ານອັງກິດຢ່າງເດັດຂາດ.

ໃນປີ ຄ.ສ 1905 ອັງກິດໄດ້ຕັດແບ່ງແຄວ້ນບັງການອອກເປັນສອງເຂດຄື: ບັງການຕາເວັນອອກ (ອິດສະລາມ) ແລະ ບັງການຕາເວັນຕົກ (ຮິນດູ). ພາຍໃຕ້ການນຳພາຂອງຝ່າຍຮຸນແຮງ ປະຊາຊົນໄດ້ລຸກຂຶ້ນຕໍ່ສູ້ດ້ວຍການນັດຢຸດງານ, ປິດຮ້ານຄ້າ, ບໍ່ຍອມຊື້ສິນຄ້າອັງກິດ ແລະ ບຸກໂຈມຕີເຈົ້າທີ່ດິນຢູ່ຕາມຊົນນະບົດ.

ທ້າຍປີ ຄ.ສ 1906 ໂດຍໄດ້ຮັບແຮງກົດດັນຈາກຂະບວນການຕໍ່ສູ້ຂອງປະຊາຊົນ ແລະ ຝ່າຍຮຸນແຮງ ຈຶ່ງເຮັດໃຫ້ພັກກອງເກຣດ ຜ່ານໂຄງການການເມືອງຕໍ່ສູ້ທີ່ມີລັກສະນະກ້າວຫນ້າຄື: ຕໍ່ສູ້ເພື່ອຄວາມເອກະລາດ, ຂະຫຍາຍການສຶກສາແຫ່ງຊາດ ແລະ ອື່ນໆ ຈຶ່ງເຮັດໃຫ້ນະໂຍບາຍ ດັ່ງກ່າວໄດ້ຮັບການສະຫນັບສະຫນູນຢ່າງກວ້າງຂວາງຈາກປະຊາຊົນທຸກຊັ້ນຄົນໃນອິນເດຍ.

ຕໍ່ຫນ້າສະພາບການດັ່ງກ່າວ ອັງກິດໄດ້ອອກແຮງປາບປາມຂະບວນການຕໍ່ສູ້ຂອງປະຊາຊົນ ແລະ ຫາວິທີສ້າງຄວາມແຕກແຍກພາຍໃນພັກໂດຍເຮັດໃຫ້ຝ່າຍປະນີປະນອມຍອມຈຳນົນ ຕໍ່ອັງກິດ ແລະ ໃນປີ ຄ.ສ 1907 ພວກເຂົາໄດ້ໃຫ້ຕຳຫຼວດອັງກິດໄລ່ພວກຫົວຮຸນແຮງອອກຈາກກອງປະຊຸມໃຫຍ່ຂອງພັກ. ໃນເດືອນ ມິຖຸນາ ປີ ຄ.ສ 1908 ອຳນາດການປົກຄອງອັງກິດໄດ້ຈັບ ເອົາ ຕີລັກ ແລະ ນັກຮົບປະຕິວັດຫຼາຍຄົນ.

ເຖິງວ່າ ອັງກິດຈະໃຊ້ຄວາມຮຸນແຮງດຳເນີນການປາບປາມແຕ່ກໍ່ຍິ່ງເຮັດໃຫ້ຂະບວນການຕໍ່ສູ້ຂອງປະຊາຊົນອິນເດຍນັບມື້ກ້າວສູ່ລະດັບສູງຢ່າງລຽນຕິດໂດຍ ສະເພາະໃນເດືອນກໍລະກົດ ສິງຫາ ປີ ຄ.ສ 1908 ຢູ່ທີ່ເມືອງບອມເບກຳມະກອນໄດ້ຈັດຕັ້ງການນັດຢຸດງານ, ອິງການການເມືອງ ແລະ ກຳລັງປະກອບອາວຸດໄດ້ສ້າງປ້ອມສູ້ຮົບເພື່ອຕ້ານກັບອັງກິດ.

ເຖິງວ່າການຕໍ່ສູ້ປົດປ່ອຍຊາດຢູ່ອິນເດຍທີ່ໄດ້ລະເບີດຂຶ້ນຢ່າງດຸເດືອດແຕ່ປີ ຄ.ສ 1905-1910 ຈະບໍ່ໄດ້ຮັບໄຊຊະນະ ແຕ່ກໍ່ເປັນການສະແດງໃຫ້ເຫັນນໍ້າໃຈຮັກຊາດຂອງກຳມະກອນ ແລະ ປະຊາຊົນອິນເດຍ ໂດຍສະເພາະແມ່ນຂະບວນການຕໍ່ສູ້ຂອງກຳມະກອນບອມເບແມ່ນເຫດການທີ່ສຳຄັນກວ່າຫມູ່ໃນຂະບວນການຕໍ່ສູ້ຕ້ານອັງກິດຂອງປະຊາຊົນອິນເດຍໃນສະຕະວັດທີ XX.

### 1.2.ຂະບວນການປົດປ່ອຍຊາດຢູ່ປະເທດຈີນ

#### 1) ສົງຄາມຢາຝິ່ນ

ເຫດການເຜົາຝິ່ນປະມານ 2.000 ໂຕນທີ່ຫາດຊາຍທະເລ ຫູເໝີນ ເປັນໄຊຊະນະແຫ່ງການຫ້າມບໍ່ໃຫ້ຂາຍຝິ່ນຂອງປະຊາຊົນຈີນກົງກັນຂ້າມມັນເປັນການທຳລາຍແຫຼ່ງລາຍຮັບຢ່າງມະຫາສານຂອງນາຍທຶນອັງກິດ, ດັ່ງນັ້ນ, ຈາກຝິ່ນທີ່ຖືກເຜົາເປັນເຫດໃຫ້ຈັກກະພັດອັງກິດໂກດແຄ້ນທີ່ສຸດ "ສິນຄ້າ-ຝິ່ນ-ປືນໃຫຍ່" ຈຶ່ງເປັນສູດສຳລັບໃຊ້ເປີດປະຕູການຄ້າກັບຈີນຂອງຈັກກະ ພັດອັງກິດ.

ໃນເດືອນເມສາ ປີ ຄ.ສ 1840 ອັງກິດ ໄດ້ຈັດຕັ້ງກອງທະຫານຈຳນວນຫຼວງຫຼາຍ ເພື່ອບຸກລຸກເຂົ້າປະເທດຈີນ ເຊິ່ງປະກອບມີ: ເຮືອຮົບຈຳນວນ 17 ລຳ, ເຮືອລຳລຽງ 20 ລຳ, ເຮືອໄອຕິດອາວຸດ 4 ລຳ ພ້ອມດ້ວຍປືນໃຫຍ່ 540 ກະບອກ ແລະ ທະຫານ 4.OOO ຄົນ ເຊິ່ງບັນຊາການໂດຍ ຈອດ ເອນລີອອດ (George Elliot).

ຕົ້ນເດືອນມິຖຸນາ ປີ ຄ.ສ 1840 ກອງທະຫານອັງກິດ ໄດ້ຍົກພົນຂຶ້ນບົກທີ່ກວາງຕຸ້ງແຕ່ກໍ່ຖືກກອງທະຫານປະຊາຊົນຈີນທີ່ນຳໂດຍ ຫຼີນເຈີຊີ ປ້ອງກັນໄວ້ຢ່າງແຫນ້ນຫນາ ຈຶ່ງເຮັດໃຫ້ກອງທະຫານອັງກິດປ່ຽນທິດຂຶ້ນໄປທາງເຫນືອ. ໃນວັນທີ່ 30 ເດືອນມິຖຸນາ ປີ ຄ.ສ 1940 ກອງທະຫານອັງກິດ ໄດ້ຍົກພົ້ນຂຶ້ນບົກອີກຄັ້ງຫນຶ່ງທີ່ ເຫີເຫມີນ (ເອ້ໝຶງ) ແຕ່ກໍ່ຖືກກຳລັງຂອງເຕິ້ງຖິງເຈີນ ທີ່ປະຈຳການຢູ່ທີ່ມີນຫົນ ຮົກກ້ຽນ-ຈີກຽງ ຕີໃຫ້ລ່າຖອຍໄປ.

ວັນທີ 2 ເດືອນກໍລະກົດ ປີ ຄ.ສ 1840 ທະຫານເຮືອອັງກິດ ໄດ້ແລ່ນເຂົ້າທະເລ ຕິງໄຫ ມິນທົນຈີກຽງ ແລະ ມາເຖິງວັນທີ່ 5  ທະຫານອັງກິດ ສາມາດຍຶດຕິງໄຫໄດ້ ເພາະວ່າຕາມຝັ່ງທະເລ ນອກຈາກກວາງຕຸ້ງ ແລະ ຮົກກ້ຽນ ແລ້ວແມ່ນບໍ່ມີການປ້ອງກັນຂອງກອງທະຫານປະຊາຊົນຈີນ.

ພໍກ້າວເຂົ້າຢຽບດິນຈີນ ພວກທະຫານອັງກິດ ໄດ້ປຸ້ນສະດົມຊັບສິນຂອງປະຊາຊົນຢ່າງຫນ້າເວດທະນາ, ດັ່ງ ນາຍທະຫານອັງກິດຄົນຫນຶ່ງ ໄດ້ບັນຍາຍສະພາບການປຸ້ນສະດົມໄວ້ຕອນຫນຶ່ງວ່າ: “ພໍກອງທະຫານຍົກພົນຂຶ້ນບົກ ທຸງຊາດອັງກິດ ກໍ່ປິວສະບັດທັນທີ ແລະ ສະພາບການປຸ້ນສະດົມອັນຫນ້າຢ້ານກົວກໍ່ປາກົດຂຶ້ນເບື້ອງຫນ້າແຕ່ບັດນັ້ນ. ທະຫານບຸກເຂົ້າບ້ານທຸກຊ່ອງທຸກຫຼັງ ແລະ ຄົ້ນຫີບທັງຫີ້ງ, ຫນັງສື, ພາບແຕ້ມ, ໂຕະ, ຕັ່ງ, ເຄື່ອງໃຊ້ໄມ້ສອຍປະຈຳ ວັນ ແລະ ທັນຍາຫານກອງເຕັມຖະຫນົນ... ສິ່ງເຫຼົ່ານີ້ ຖືກກວາດເອົາໄປຫມົດຈົນບໍ່ມີຫຍັງເຫຼືອໃຫ້ປຸ້ນອີກແລ້ວ ການປຸ້ນຈຶ່ງໄດ້ ຢຸດຕິລົງ”.

ວັນທີ່ 11   ເດືອນສິງຫາ ປີ ຄ.ສ 1840   ທະຫານອັງກິດ ໄດ້ໄປເຖິງປາກນ້ຳເມືອງ ທຽນສິນ ແລ້ວຍື່ນຂໍ້ ສະເຫນີຕໍ່ລັດຖະບານແມນຈູ ໂດຍມີເນື້ອໃນວ່າ: ລັດຖະບານແມນຈູຕ້ອງໃຫ້ອັງກິດຄ້າ ຝິ່ນໃນຖານະຖືກຕ້ອງຕາມ ກົດຫມາຍ, ຊົດໃຊ້ຄ່າເສຍທັງຫມົດຈາກສົງຄາມ ແລະ ຍົກຕອນດິນໃຫ້ ອັງກິດ.

ຄວາມຂັດແຍ່ງລະຫວ່າງປະຊາຊົນຈີນກັບອັງກິດ ໄດ້ນັບມື້ເພີ່ມທະວີຄວາມຮຸນແຮງຂຶ້ນ ເລື້ອຍໆຈົນ ກາຍເປັນສົງຄາມລະຫວ່າງຊາດ. ດັ່ງນັ້ນ, ມວນຊົນຈຶ່ງໄດ້ຮຽກຮ້ອງໃຫ້ມີການຕໍ່ຕ້ານພວກຣຸກຮານ ຈົນເຮັດໃຫ້ພາຍ ໃນລັດຖະບານແມນຈຸແຕກເປັນ 2 ຝ່າຍ: ຝ່າຍຕໍ່ຕ້ານອັງກິດ ນຳ ໂດຍ ຫຼິນເຈີຊີ ແລະ ຝ່າຍປະນີປະນອມນຳໂດຍ ສີ ຊັ່ນ ແລະ ອີລີປູ. ສຸດທ້າຍ ສີຊັ່ນ ໄດ້ປະກາດ ຍອມຈຳນົນຕໍ່ອັງກິດ ແລະ ທຸກບັນຫາທີ່ອັງກິດສະເຫນີມາແມ່ນຮັບ ປາກທັງຫມົດຈົນເຮັດໃຫ້ ແມນ ຈຸ ຫຼົງເຊື່ອ ກົງກັນຂ້າມ ແມນຈຸ ທີ່ເຂົ້າໃຈຜິດຕໍ່ ຫຼິນເຈີຊີ ຢ່າງຮຸນແຮງ.

ຜົນຂອງສົງຄາມຄັ້ງນີ້ ເຮັດໃຫ້ລັດຖະບານແມນຈຸ ເກີດຄວາມຢ້ານກົວທີ່ສຸດ,  ດັ່ງນັ້ນ,  ວັນທ 29  ເດືອນ ສິງຫາ ປີ ຄ.ສ 1842 ລັດຖະບານແມນຈູ ໄດ້ຕົກລົງເຊັນສັນຍານານກິ່ງ ແລະ ຍອມເປີດທ່າເຮືອ 5 ແຫ່ງໃຫ້ອັງກິດຄື: ກວາງເຈົາ, ເຫົາເຫມີນ, ຕິງໄຫ, ຫນິງປາ, ອູສູງ. ນອກຈາກນັ້ນ, ຍັງ ຍອມມອບແສງກາງ, ເກາະຮົງກົງ ແລະ ຍອມຊົດ ໃຊ້ຄ່າເສຍຫາຍຈາກສົງຄາມທັງຫມົດ.

ສັນຍານານກິ່ງ ແມ່ນສັນຍາທີ່ບໍ່ສະເຫມີພາບຄັ້ງທຳອິດ ທີ່ແມນຈູໄດ້ຍອມມອບໃຫ້ຊາວຕ່າງດ້າວເຂົ້າສູ່ປະເທດຈີນ. ນອກຈາກສັນຍານີ້ແລ້ວ,  ແມນຈຸ ຍັງໄດ້ເຊັນສັນຍາບໍ່ສະເຫມີພາບກັບຈັກກະພັດອື່ນໆອີກເຊັ່ນ: ສັນຍາວັງເຊ່ຍກັບ ຈັກກະພັດອາເມຣິກາ ແລະ ຈັກສາສະພັດຝຣັ່ງ ປີ ຄ.ສ 184. ນອກນີ້, ປັອກຕຸຍການ, ແອັດສະປາຍ, ໂຮນລັງ, ແບນ ຊິກ ແລະ ອື່ນໆ ກໍມີການເຊັນສັນ ຍາຕາມໆກັນມາ.

**2) ຂະບວນໄຕຜິງທຽນກົວ**

ໃນປີ ຄ.ສ 1850  ໄດ້ເກີດມີຂະບວນການຕໍ່ສູ້ທີ່ຍິ່ງໃຫຍ່ເອີ້ນວ່າ: ສົງຄາມຊາວນາໄຕ່ຜິງທຽນກົວ ( 1850-1864) ເພື່ອຕ້ານສັກດີນາ ແລະ ການແຊກແຊງຈາກຕ່າງດ້າວ.

ມາເຖິງປີ ຄ.ສ 1831 ໄດ້ສ້າງຕັ້ງສະມາຄົມໄຕຜິງທຽນກົວ ຫຼື ປະເທດຂອງເທວະດາ ເຊິ່ງ ແມ່ນ ຮົງຮິວແຊນ ເປັນຫົວຫນ້າ ໂດຍມີຫນ້າທີ່ນຳພາປະຊາຊົນດຳເນີນການຕໍ່ສູ້ຕ້ານລາຊະວົງ ແມນຈູ ພາຍຫຼັງຍຶດກວາງຊີສຳເລັດ ຂະບວນກໍ່ສືບຕໍ່ບຸກຕີຫູນານ, ຫວູຫັນ ແລະ ເຂົ້າຍຶດນານກິ່ງ ໃນວັນທີ່ 18 ເດືອນມີນາ 1853. ໃນຕະຫຼອດເສັ້ນທາງ

ເຄື່ອນທັບກຳລັງປະຊາຊົນໄດ້ລົງໂທດ ພວກສັກດີນາ ແລະ ຍຶດເອົາດິນນາຂອງພວກເຂົາແບ່ງປັນໃຫ້ຊາວນາ, ດ້ວຍເຫດນັ້ນ, ຈຶ່ງໄດ້ຮັບການສະຫນັບສະຫນູນຈາກຊາວນານັບມື້ຫຼາຍຂຶ້ນຈາກ 10.000 ຄົນ ໃນປີ ຄ.ສ 1850 ມາເປັນ 50.000 7qບ ໃນປີ ຄ.ສ 1853.

ໃນປີ ຄ.ສ 1853 ກຳລັງຂອງປະຊາຊົນທີ່ນຳພາໂດຍ ຫຼົງຟາງຊານ ມີຄວາມສາມາດພຽງພໍ ໃນການບຸກຍຶດເອົາປັກກິ່ງໄດ້ແລ້ວ ແຕ່ຍ້ອນຜູ້ນຳວາງແຜນຜິດພາດ ໂດຍເອົາກຳລັງຫນ້ອຍບຸກຕີ ກຳລັງຫຼາຍ ສຸດທ້າຍຖືກພວກສັກດີນາບຸກຕີຄືນ ແລະ ຖືກປິດລ້ອມເປັນເວລາ 8 ເດືອນ

ຕົກມາເຖິງປີ ຄ.ສ 1854 ບັນດາຜູ້ນຳທີ່ ນານກິ່ງ ໄດ້ສະຖາປະນາຕົນເອງເປັນສັກດີນາ ແລະ ພາຍໃນເກີດມີຂໍ້ຂັດແຍ່ງໂດຍສະເພາະ ໄອສະວາຍ ໄດ້ແຍກເອົາພັກພວກຈຳນວນຫນຶ່ງທີ່ບໍ່ພໍໃຈຕໍ່ ແອງຊິວແຊນ ແລ້ວກໍ່ລອບຄາດຕະກຳທ່ານ ແຕ່ສຸດທ້າຍໄອສະວາຍ ຖືກ ຮົງຊິວແຊນປະຫານຊີວິດ.

ໃນຂະນະນັ້ນ, ແມນຈູ ໄດ້ຮັບການຊ່ວຍເຫຼືອຈາກຈັກກະພັດ ອັງກິດ ແລະ ຝຣັ່ງ ພວກເຂົາຈຶ່ງດຳເນີນການປາບປາມຂະບວນການຕໍ່ສູ້ຂອງປະຊາຊົນຢ່າງຮຸນແຮງ, ເຖິງວ່າກຳລັງຂອງໄຕພິງທຽນກົວ ຈະຕໍ່ສູ້ຢ່າງອາດຫານກໍ່ຕາມ ແຕ່ກໍ່ຖືກ 3 ກຳລັງຕີໃຫ້ປະລາໄຊ (ແມນຈູ-ສັກດີນາທ້ອງຖິ່ນ-ອັງກິດ, ຝຣັ່ງ). ດັ່ງນັ້ນ, ນັບແຕ່ປີ ຄ.ສ 1862 ເປັນຕົ້ນມາ ຂະບວນການຕໍ່ສູ້ຂອງໄຕພິງທຽນກົວ ໄດ້ຫັນປ່ຽນຈາກການຕໍ່ສູ້ກັບສັກດີນາກ້າວຂຶ້ນເປັນການຕໍ່ສູ້ປົດປ່ອຍຊາດອອກຈາກແອກຂອງພວກຕ່າງດ້າວ.

ໃນເດືອນກໍລະກົດ ປີ ຄ.ສ 1864 ທີ່ຫມັ້ນສຸດທ້າຍຂອງໄຕພິງທຽນກົວ ຖືກສັດຕູຍຶດໄດ້ ຫຼີຊິວເສັງ ຜູ້ບັນຊາການໄດ້ຮັບບາດເຈັບ ແລະ ຖືກຈັບ, ສ່ວນ ຮົງຊິວແຊນ ກິນຢາຂ້າຕົວຕາຍ, ປີ ຄ.ສ 1868 ຂະບວນຕໍ່ສູ້ໄດ້ຖືກດັບມອດ ເຖິງວ່າຂະບວນຕໍ່ສູ້ຖືກປະລາໄຊກໍ່ຕາມ, ແຕ່ຂະບວນການດັ່ງກ່າວໄດ້ເປັນບົດຮຽນອັນຍິ່ງໃຫຍ່ ໃຫ້ແກ່ປະຊາຊົນຈີນໃນການສືບຕໍ່ຕ້ານພວກຈັກກະພັດ ໂດຍສະເພາະແມ່ນຂະບວນການຕໍ່ສູ້ ອີເຮີທວານ ໄດ້ເກີດຂຶ້ນໃນປີ ຄ.ສ 1899.

**3) ຂະບວນສານອີເຮີທວານ**

ພາຍຫຼັງສົງຄາມຢາຝິ່ນເປັນຕົ້ນມາ ພວກຈັກກະພັດເຂົ້າຍຶດຄອງ ແລະ ຕັດແບ່ງປະເທດຈີນຕາມລຳດັບ ເຊິ່ງພວກເຂົາໄດ້ຊ່ວງເສັງກັນນຳເຂົ້າສິນຄ້າປະເພດຕ່າງໆມາຂາຍຢ່າງເສລີເຮັດໃຫ້ເສດຖະກິດຈີນຂຶ້ນກັບຈັກກະພັດ. ໃນຂະນະດຽວກັນລາຊະວົງແມນຈູ ໄດ້ກົດຂີ່ຂູດຮີດປະຊາຊົນຢ່າງຫນັກຫນ່ວງ, ນອກຈາກນັ້ນ, ຍັງປະສົບກັບບັນຫາໄພແຫ້ງແລ້ງ-ໄພນ້ຳຖ້ວມຢ່າງລຽນຕິດ ຈຶ່ງເຮັດໃຫ້ຊີວິດ ແລະ ຄວາມເປັນຢູ່ຂອງປະຊາຊົນທຸກຍາກລຳບາກທີ່ສຸດ.

ໃນລະຫວ່າງປີ ຄ.ສ 1898-1899 ປະຊາຊົນໃນເຂດຊານຕຸງ ຕາຍຍ້ອນອຶດຫິວປະມານ 170,000 ຄົນ ຕໍ່ສະພາບດັ່ງກ່າວ ຈຶ່ງເກີດມີຂະບວນການຕໍ່ສູ້ຂອງຊາວຜູ້ອອກແຮງງານທີ່ມີຊື່ວ່າ "ຂະບວນການອີເຮີທວານ" ພາຍໃຕ້ຄຳຂວັນ "ຊ່ວຍກະສັດແມນຈູ ດັບສູນຂາເສີກຕາເວັນຕົກ". ຂະບວນການດັ່ງກ່າວໄດ້ດຶງດູດເອົາເຈົ້າທີ່ດິນຈຳນວນຫນຶ່ງທີ່ມີນ້ຳໃຈຮັກຊາດເຂົ້າຮ່ວມ ແລະ ໄດ້ຊຸກຍູ້ໃຫ້ລາຊະວົງແມນຈູຕ້ານຈັກກະພັດ.

ໃນເດືອນສິງຫາ ປີ ຄ.ສ 1900 ກຳລັງລຸກຮື້ໄດ້ບຸກທຳລາຍສະຖານທູດຂອງພວກຈັກກະພັດຢູ່ທີ່ປັກກິ່ງ, ທຽນສິນ ແລະ ເມືອງໃຫຍ່ອື່ນໆ ເຮັດໃຫ້ຈັກກະພັດຕົກຢູ່ໃນທ່າອັນຕະລາຍ, ດັ່ງນັ້ນ, ພວກເຂົາ ຈຶ່ງຈັດຕັ້ງກອງທັບສຳພັນ 8 ປະເທດຂຶ້ນລວມມີ: ຝຣັ່ງ, ອັງກິດ, ຍີ່ປຸ່ນ, ອາເມຣິກາ, ເຢຍລະມັນ, ຣັດເຊຍ, ອີຕາລີ ແລະ

ໂອດຣ໌ດ ເຊິ່ງມີກຳລັງເຖິງ 3.000 ຄົນ ບັນຊາໂດຍຄົນຂອງ ອັງກິດ ໄດ້ບຸກຕີຂະບວນອີເຮີທວານ ດ້ວຍການປາບປາມເຂັ່ນຂ້າຜູ້ເຖົ້າ, ແມ່ຍິງ ແລະ ເດັກນ້ອຍ ຢ່າງປ່າເຖື່ອນ ແລະ ປຸ້ນເອົາຊັບສິນຂອງປະຊາຊົນ, ຂະບວນອີເຮີທວານ ໄດ້ສູ້ຮົບຢ່າງອາດຫານ ແລະ ແຂງແຮງ ແຕ່ໃນທີ່ສຸດຍ້ອນກຳລັງອ່ອນນ້ອຍຈຶ່ງປະລາໄຊ ສ່ວນແມນຈູ ເມື່ອເຫັນທ່າບໍ່ດີຈຳຕ້ອງຍອມຈຳນົນ ແລະ ເຊັນສັນຍາ ເຕີນຊິວ ປີ ຄ.ສ 1901 ເຊິ່ງມີເນື້ອໃນດັ່ງນີ້:

- ປະຊາຊົນຈີນ ແຕ່ລະຄົນຕ້ອງເສຍເງິນໃຫ້ຈັກກະພັດ 100 ກຣາມເງິນຂາວ ໃນໄລຍະ 39 ປີ (ແຕ່ປີ ຄ.ສ 1901-1940 ໃນເວລານັ້ນປະຊາຊົນຈີນມີ 450 ລ້ານຄົນ)
- ລາຊະວົງແມນຈູ ຕ້ອງແຕ່ງຕັ້ງມະຫາອຸປະຣາດຂອງຕົນໄປຂໍໂທດກັບຈັກກະພັດຍີ່ປຸ່ນ ແລະ ເຢຍລະມັນ (ສະຖານທູດ 2 ປະເທດນີ້ຖືກທຳລາຍຫນັກ), ລົງໂທດຜູ້ຕໍ່ຕ້ານຈັກກະພັດ, ຫ້າມຄົນຈີນແຕະຕ້ອງຈັກກະພັດ.
- ກຳນົດຂອບເຂດສຳລັບນັກທູດຂອງພວກຈັກກະພັດຢູ່ປັກກິ່ງ, ຄົນຈີນບໍ່ມີສິດຕັ້ງເຮືອນຢູ່ໃກ້ສະຖານທູດ.
- ຫ້າມບໍ່ໃຫ້ຈີນຊື້ໝົ້ປືນຈາກຕ່າງປະເທດເປັນເວລາ 2 ປີ.

ຜ່ານສັນຍາດັ່ງກ່າວ ສາມາດເຫັນໄດ້ທາດແທ້ປະຕິການຂອງສັກດີນາ ແລະ ນັບແຕ່ນັ້ນມາປະເທດຈີນໄດ້ກາຍເປັນເຄິ່ງເມືອງຂຶ້ນຂອງຈັກກະພັດສ່ວນລາຊະວົງແມນຈູ ກາຍເປັນເຄື່ອງມືຮັບໃຊ້ຂອງຈັກກະພັດ.

**4) ການປະຕິວັດຊິນເຫັຍ**

**ຂະບວນການປົກປັກຮັກສາທາງລົດໄຟ**

ຕົ້ນສະຕະວັດທີ XX ເກີດມີຂະບວນຕໍ່ສູ້ຂອງປະຊາຊົນ ເພື່ອທວງເອົາສິດຜົນປະໂຫຍດຂອງການກໍ່ສ້າງທາງລົດໄຟໃນປະເທດຈີນ ເຊິ່ງມີຜູ້ເຂົ້າຮ່ວມເປັນຈຳນວນຫຼາຍ, ໃນນັ້ນປະກອບມີນາຍທຶນນ້ອຍ ແລະ ນາຍທຶນກາງເຮັດໃຫ້ຈັກກະພັດບໍ່ສາມາດຜູກຂາດທາງດ້ານການຄົມມະນາຄົມ.

ໃນລະຫວ່າງປີ ຄ.ສ 1903-1911 ຈັກກະພັດຝຣັ່ງ, ອັງກິດ ແລະ ເຢຍລະມັນ ໄດ້ພະຍາຍາມຊອກທຸກວິທີເພື່ອຄວບຄຸມທາງລົດໄຟຢູ່ຈີນ ສ່ວນແມນຈູກໍໄດ້ປະກາດສິດຄຸ້ມຄອງທາງລົດໄຟໃຫ້ຂຶ້ນກັບລັດຖະບານ ແລ້ວກໍ່ມອບສິດນັ້ນໃຫ້ແກ່ຈັກກະພັດ.

ດ້ວຍເຫດຜົນດັ່ງກ່າວ, ຈຶ່ງພາໃຫ້ເກີດຂໍ້ຂັດແຍ່ງລະຫວ່າງນາຍທຶນແຫ່ງຊາດ ແລະ ຈັກກະພັດຈີນກ້າວໄປເຖິງເກີດມີຂະບວນການຕໍ່ສູ້ຂອງປະຊາຊົນທີ່ໄດ້ຮັບການສະຫນັບສະຫນູນຈາກສະມາຄົມຈີນ, ໃນນັ້ນຂະບວນທີ່ມີການຕໍ່ສູ້ດ້ວຍການປະກອບອາວຸດ ແລະ ແຂງແຮງກວ່າຫມູ່ແມ່ນ ຢູ່ທີ່ ຊື່ແຊນ. ເມື່ອສະຖານະການເປັນຄືແນວນັ້ນ, ແມນຈູ ໄດ້ຍົກກຳລັງມາປາບເຊິ່ງບັນຊາການ ໂດຍ ທ້າວທວານ ພໍ່ມາຮອດຊາຍແດນຊື່ແຊນ ຂະບວນປະຕິວັດໄດ້ລະເບີດຂຶ້ນຢູ່ອູຊາງທ້າວ ທວານ ຈຶ່ງໄດ້ນຳກຳລັງກັບຄືນເມືອປາບຂະບວນຢູ່ອູຊາງ ແຕ່ກໍຖືກລູກນ້ອງຈັບໄປລົງໂທດ.

**ຂະບວນລຸກຮືຢູ່ອູຊາງ**

ກຳລັງທະຫານທີ່ປະຈຳການຢູ່ທີ່ ຫູເປີຍ ແມ່ນກຳລັງທີ່ດີເດັ່ນຂອງແມນຈູ ເຊິ່ງສ່ວນໃຫຍ່ ມາຈາກນັກຮຽນຮູ້, ນາຍທຶນນ້ອຍ ແລະ ນາຍທຶນແຫ່ງຊາດ ເຊິ່ງມີການຈັດຕັ້ງການເຝິກແອບຍຸດທະວິທີແບບພວກເອີຣົບ ແລະ ມີການ

ປະກອບອາວຸດແບບໃຫມ່, ນອກນັ້ນ, ພວກເຂົາມີຄວາມຮັບຮູ້ຕໍ່ການປະຕິວັດໄວ ເພາະວ່າສະມາຄົມຈີນໄດ້ມີການເຄື່ອນໄຫວລັບພົວພັນກັບທະຫານພວກນີ້.

ສວຍໂອກາດທີ່ທະຫານຫູເປີຍ ກໍາລັງເຄື່ອນທັບໄປປາບຂະບວນລຸກຂຶ້ນຕໍ່ສູ້ຢູ່ ຊື່ແຊນໃນວັນທີ 10 ເດືອນຕຸລາ ປີ ຄ.ສ 1911 ປະຊາຊົນຫູເປີຍ ລຸກຮືຂຶ້ນຍຶດໄດ້ຫຼາຍຈຸດເຊັ່ນ: ອູຊາງ, ຮັນຊູ ແລະ ຮັນແສງ. ໃນເວລານີ້ຂະບວນການປະຕິວັດສາມາດຍາດໄດ້ໄຊຊະນະ ແຕ່ຜູ້ນໍາຂອງຂະບວນບໍ່ມີຫນ້າຢູ່ໃນປະເທດ ແລະ ຄະນະນໍາຂະບວນບໍ່ກ້າຮັບເອົາຕໍາແຫນ່ງຫົວຫນ້າ ຈຶ່ງມອບໃຫ້ເຈົ້ານາຍຂອງແມນຈູຄືນ.

ມາເຖິງວັນທີ 11 ເດືອນຕຸລາ ປີ ຄ.ສ 1911 ພວກນາຍທະຫານຊັ້ນຕໍ່າ ໄດ້ຮຽກປະຊຸມສະພາຂັ້ນແຂວ ເພື່ອປຶກສາຫາລືກ່ຽວກັບການຈັດຕັ້ງກໍາລັງທະຫານໃຫມ່ ແລະ ຜ່ານບາງນະໂຍບາຍໃຫມ່ຄື:

- ກໍານົດຊື່ປະເທດເປັນປະເທດປະຊາທິປະໄຕ ລວມມີ 5 ຊົນຊາດໃຫຍ່ຄື: ຊົນຊາດຊັ້ນຮັ່ນ, ແມນຈູ, ມົ້ງ, ຮຸງ ແລະ ຊົນຊາດຈັງ.
- ໂຄນລົ້ມລາຊະວົງແມນ, ຮຽກຮ້ອງປະຊາຊົນແຕ່ລະແຂວງລຸກຮືຂຶ້ນຍຶດອໍານາດ.
- ກໍານົດສີທຸງຊາດປະກອບດ້ວຍ 5 ສີ: ເຫຼືອງ, ແດງ, ຂຽວ, ຂາວ ແລະ ດໍາ.
- ປະກາດນະໂຍບາຍກັບຕ່າງປະເທດວ່າ: ກອງທະຫານໃຫມ່ຈະເຄົາລົບສິ້ຜົນປະໂຫຍດຂອງຄົນຕ່າງ ປະເທດຢ່າງເຕັມສ່ວນ.
- ຈັດຕັ້ງກອງທະຫານຢູ່ຫູເປີຍ.

ພາຍຫຼັງກອງປະຊຸມ ຂະບວນລຸກຮືໄດ້ບັງຄັບໃຫ້ ຣົວລີງ ແລະ ລີຢວນຮຸງ (ເຈົ້ານາຍລາຊະວົງແມນຈູຮັບເອົາຕໍາແຫນ່ງລັດຖະບານໃຫມ່ ແຕ່ເມື່ອຂຶ້ນກໍາອໍານາດພວກເຂົາຄ່ອຍໆປັດເຂ່ຍຄົນປະຕິວັດອອກແລ້ວເອົາຄົນພວກເຂົາເຂົ້າແທນ.

### ຂະບວນການລຸກຮືຂຶ້ນໃນແຂວງຕ່າງໆ

ເພື່ອຕອບສະຫນອງຄວາມຮຽກຮ້ອງຂອງກອງປະຊຸມສະພາແຂວງ ແຂວງຕ່າງໆໄດ້ລຸກຮືຂຶ້ນຍຶດອໍານາດໃນວັນທີ່ 12 ເດືອນຕຸລາ ປີ ຄ.ສ 1911 ໂດຍສະເພາະທີ່ ນານກິ່ງ, ພາກກາງ ແລະພາກໃຕ້, ສ່ວນແມນຈູ ຍັງຮັກສາບາງແຂວງທາງພາກເຫນືອ ແຕ່ຝ່າຍປະຕິວັດຕົກຢູ່ທ່າປ້ອງກັນຕົວ ເນື່ອງຈາກອໍານາດໄດ້ຕົກຢູ່ໃນກໍາມືຂອງຝ່າຍຕໍ່ຕ້ານເພາະໃນຂະນະນີ້ ລີຮຸງຈາງ(ຝ່າຍປະຕິວັດ)ໄດ້ເສຍຊີວິດ ຢວນເສຂາຍ (ຝ່າຍຕໍ່ຕ້ານ) ໄດ້ຂຶ້ນກໍາອໍານາດແທນ.

ພາຍຫຼັງ ຢວນເສຂາຍ ຂຶ້ນກໍາອໍານາດ ມັນໄດ້ສົ່ງກໍາລັງໄປປາບປາມຂະບວນການລຸກຮືຕໍ່ສູ້ໃນແຕ່ລະແຂວງ ແລະ ເມື່ອໄດ້ຮັບການສະຫນັບສະຫນູນຈາກຈັກກະພັດກໍ່ທໍາທ່າເຈລະຈາກັບຝ່າຍປະຕິວັດ.

### ການຈັດຕັ້ງລັດຖະບານນານກິ່ງ

ໃນຕົ້ນເດືອນພະຈິກ ປີ ຄ.ສ 1911 ບັນດາແຂວງພາກກາງ ແລະ ພາກໃຕ້ໄດ້ຮັບການປົດປ່ອຍ. ດັ່ງນັ້ນ, ໃນວັນທີ 9 ເດືອນພະຈິກ ປີ ຄ.ສ 1911 ລີຢວນຮຸງ ຜູ້ນໍາຂະບວນການປະຕິວັດໄດ້ຮຽກປະຊຸ ເພື່ອຈັດຕັ້ງລັດຖະບານສູນກາງຢູ່ທີ່ ອູຊາງ ສ່ວນສະມາຄົມຈີນກໍໄດ້ຮຽກປະຊຸມຜູ້ແທນຂອງຕົນຢູ່ ຊຽງໄຮ ເພື່ອຈັດຕັ້ງລັດຖະບານເຊັ່ນກັນ.

ວັນທີ 16 ເດືອນພະຈິກ ປີ ຄ.ສ 1911 ຜູ້ແທນສະມາຄົມຈີນທີ່ ຊຽງໄຮ ໄດ້ໄປຮ່ວມປະຊຸມກັບຜູ້ແທນທີ່ ອູຊາງ, ຜ່ານກອງປະຊຸມທັງສອງຝ່າຍໄດ້ພ້ອມກັນຈັດຕັ້ງຄະນະບໍລິຫານງານ ແລະ ນາຍົກໂດຍມີສິດປົກຄອງທົ່ວປະເທດ, ເມື່ອສະພາບເປັນແນວນັ້ນ, ຢວນເສຂາຍ ໄດ້ໃຊ້ກຳລັງບັງ ຄັບລາຊະວົງແມນຈູ ມອບສິດທັງຫມົດໃຫ້ແກ່ຕົນ ແລະ ເມື່ອໄດ້ສິດທັງຫມົດ ຈຶ່ງໄດ້ປະກາດຕໍ່ລັດຖະບານປະຕິວັດວ່າ: ຖ້າຫາກຝ່າຍປະຕິວັດຍອມມອບທີ່ນັ່ງປະທານາທິບໍດີໃຫ້ຈະເຫັນດີກັບການຈັດຕັ້ງປະເທດເປັນປະເທດປະຊາທິປະໄຕ.

ວັນທີ 29 ເດືອນທັນວາ ປີ ຄ.ສ 1911 ໃນກອງປະຊຸມສະພາສອງຝ່າຍໄດ້ຕົກລົງມອບຕຳແຫນ່ງປະທານາທິບໍດີໃຫ້ແກ່ ຊຸນຢັດເຊັນ. ແຕ່ເວລານີ້ອຳນາດການປົກຄອງບໍ່ທັນແຫນ້ນຫນາ ຢວນເສຂາຍ ຈຶ່ງຊອກຫາວິທີລົບລ້າງການປະຕິວັດ ດ້ວຍການໃສ່ຮ້າຍປ້າຍສີ ຊຸນຢັດເຊັນ ແລະ ອີກຢ່າງ ຊຸນຢັດເຊັນເອງກໍ່ຍັງອ່ອນທາງດ້ານທິດສະດີ ແລະ ປົດຮຽນໃນການນຳພາ, ດັ່ງນັ້ນ, ຊຸນຢັດເຊັນ ຈຶ່ງມອບທີ່ນັ່ງປະທານາທິບໍດີໃຫ້ແກ່ຢວນເສຂາຍ ແລະ ລີຢວນຮຸງເປັນຮອງ.

ສະຫຼຸບແລ້ວ, ຫມາກຜົນຂອງການປະຕິວັດ ຊິນເຫັຍ ໄດ້ຕົກຢູ່ໃນກຳມືຂອງພວກປະຕິການຢ່າງສິ້ນເຊີງຈຶ່ງເຮັດໃຫ້ການປະຕິວັດກ້າວສູ່ເສັ້ນທາງລົງຄ້ອຍ ແລະ ປະລາໄຊ.

**1.3 ຂະບວນການປົດປ່ອຍຊາດຢູ່ປະເທດຍີ່ປຸ່ນ**

ເມື່ອປຽບທຽບສະພາບທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມຂອງປະເທດຍີ່ປຸ່ນກັບບັນດາປະເທດອື່ນໆໃນທະວີບອາຊີ, ອາຟຣິກາ ແລະ ອາເມຣິກາລາຕິນແລ້ວເຫັນວ່າ ຍີ່ປຸ່ນ ໄດ້ປຽບໃນທຸກດ້ານ ເນື່ອງຈາກການພັດທະນາທາງດ້ານການເມືອງ ແລະ ເສດຖະກິດຂອງຍີ່ປຸ່ນ ຂະຫຍາຍຕົວໄປໄດ້ດີກວ່າ, ແຕ່ວ່າຄວາມຂັດແຍ່ງ ຫຼືການເອົາລັດເອົາປຽບກັນລະຫວ່າງປະຊາຊົນຍີ່ປຸ່ນກັບຈັກກະພັດເອີຣົບຊໍ້າພັດບໍ່ດຸເດືອດ ແລະ ຮຸນແຮງເຫມືອນກັບບັນດາປະເທດໃນທະວີບ ອາຊີ, ອາຟຣິກາ ແລະ ອາເມກາລາຕິນ. ແຕ່ເຖິງຢ່າງນັ້ນກໍ່ຕາມ, ທາດແທ້ຂອງລັດທິທຶນນິຍົມ ແມ່ນລັດທີ່ທີ່ຫາກິນດ້ວຍວິທີການຂູດຮີດແຮງງານ ແລະ ສະເຫວີຍສຸກບົນຄວາມທຸກຂອງຄົນອື່ນ.

ພາຍໃຕ້ແອກປົກຄອງຂອງພວກຈັກກະພັດ ປະຊາຊົນຍີ່ປຸ່ນ ໂດຍສະເພາະຢ່າງຍິ່ງແມ່ນຊາວກຳມະກອນຈຳຕ້ອງໄດ້ເຮັດວຽກຕັ້ງແຕ່ 12-14 ຊົ່ວໂມງ/ມື້, ເງິນເດືອນທີ່ໄດ້ຕໍ່າກວ່າກຳມະກອນໃນປະເທດອັງກິດ ແລະ ອາເມກາຫຼາຍເທົ່າ ເພາະບໍ່ມີກົດຫມາຍຮັບປະກັນຜົນປະໂຫຍດຂອງກຳມະກອນ. ດັ່ງນັ້ນ, ປະຊາຊົນຍີ່ປຸ່ນ ຈຶ່ງໄດ້ລຸກຂຶ້ນຕໍ່ສູ້ຕ້ານແຂກກົດຂີ່ຂູດຮີດຂອງພວກຈັກກະພັດ.

ໃນປີ ຄ.ສ 1880 ກຳມະກອນຍີ່ປຸ່ນ ໄດ້ຈັດຕັ້ງອົງການທາງການເມືອງຂຶ້ນຫຼາຍອົງການເພື່ອນຳພາຂະບວນການຕໍ່ສູ້ໃຫ້ເປັນຮູບປະທຳ ແລະ ມີບົດບາດກວ່າເກົ່າເຊັ່ນ: ອົງການກຳມະບານ, ສະ ຫະພັນແຮງງານ ແລະ ອື່ນໆ. ນັບແຕ່ປີ ຄ.ສ 1890 ເປັນຕົ້ນມາ ຈຶ່ງໄດ້ເກີດມີຂະບວນການນັດຢຸດງານ ແລະ ການປະທ້ວງແຜ່ຂະຫຍາຍອອກໄປທົ່ວປະເທດ. ໃນເວລານັ້ນກໍ່ເກີດມີນັກປະຕິວັດຂຶ້ນ ເຊັ່ນ: ແຊນາດາ ອິອາແມນກາ (Zenkada lamanca) ເປັນຜູ້ນຳເອົາລັດທິສັງຄົມນິຍົມວິທະຍາສາດ ເຂົ້າມາເຜີຍແຜ່ໃນຂະບວນຂອງກຳມະກອນຍີ່ປຸນ, ຈາກນັ້ນ, ຂະບວນການຕໍ່ສູ້ໄດ້ເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ຈຶ່ງໄດ້ສ້າງຕັ້ງພັກສັງຄົມປະຊາທິປະໄຕຍີ່ປຸ່ນ (Social-Democrat Party) ຂຶ້ນໃນປີ ຄ.ສ 1901. ນອກຈາກນັ້ນ, ຂະບວນການຕໍ່ສູ້ຂອງປະຊາຊົນຍີ່ປຸ່ນຍັງໄດ້ຮັບຜົນສະທ້ອນ ອັນໃຫຍ່ຫຼວງຈາກການປະຕິວັດຣັດເຊຍໃນປີ ຄ.ສ 1905 ຈຶ່ງເຮັດໃຫ້ຂະບວນກຳມະກອນນັບມື້ ຂະຫຍາຍຕົວ ແລະ ດຳເນີນ

ການເຄື່ອນໄຫວຢ່າງແຂງແຮງເຊັ່ນ: ພວກກຳມະກອນໄດ້ລຸກຂຶ້ນຕໍ່ສູ້ ຕ້ານການເກັບພາສີອາກອນ, ທວງໃຫ້ມີການແກ້ໄຂບັນຫາຄ່າຄອງຊີບແພງ ແລະ ອື່ນໆ.

ເຖິງວ່າຂະບວນການຕໍ່ສູ້ຂອງກຳມະກອນຍີ່ປຸ່ນຈະດຳເນີນໄປຢ່າງແຂງແຮງ ແລະ ກວ້າງຂວາງແຕ່ກໍບໍ່ສາມາດບັນລຸຕາມຈຸດປະສົງເປົ້າໝາຍຂອງຕົນ ເນື່ອງຈາກວ່າພວກເຂົາເຈົ້າຍັງບໍ່ມີຜູ້ນຳທີ່ເຂັ້ມແຂງພໍ ຈຶ່ງເຮັດໃຫ້ຂະບວນການຕໍ່ສູ້ຂອງກຳມະກອນຍີ່ປຸ່ນໄດ້ຢຸດຕິລົງ.

## 2. ຂະບວນການປົດປ່ອຍຊາດຢູ່ອາຟຣິກາ

### 2.1 ຂະບວນການຕໍ່ສູ້ຂອງປະຊາຊົນອານເຊຣີ

ໃນປີ ຄ.ສ 1830 ຈັກກະພັດຝຣັ່ງ ໄດ້ດຳເນີນການຮຸກຮານປະເທດອານເຊຣີ ຈົນມາເຖິງປີ ຄ.ສ 1872 ປະເທດອານເຊຣີ ຈຶ່ງຕົກເປັນຫົວເມືອງຂຶ້ນຂອງຝຣັ່ງຢ່າງສິ້ນເຊີງ. ໃນເມື່ອອານເຊຣີ ໄດ້ຕົກຢູ່ໃນກຳມືຂອງພວກເຂົ້າບັນດາບໍລິສັດນາຍທຶນ ແລະ ເຈົ້າທີ່ດິນຝຣັ່ງໄດ້ເຂົ້າມາຍຶດຄອງ ດິນແດນອັນອຸດົມສົມບູນ ແລະ ກວ້າງຂວາງຂອງປະຊາຊົນອານເຊຣີ ເຮັດໃຫ້ປະຊາຊົນບໍ່ມີທີ່ດິນທຳກິນຈົນກາຍເປັນຄົນທີ່ທຸກຍາກ ແລະ ຂາດສິດຜົນປະໂຫຍດທາງດ້ານເສດຖະກິດ

ດ້ວຍເຫດນັ້ນ, ນັບແຕ່ມື້ທີ່ຈັກກະພັດຝຣັ່ງເຂົ້າມາຮຸກຮານ ແລະ ຍຶດຄອງປະຊາຊົນອານເຊຣີ ຈຶ່ງໄດ້ລຸກຂຶ້ນຕໍ່ສູ້ຕ້ານກົດຂີ່ຂູດຮີດຂອງພວກຈັກກະພັດຢ່າງແຂງແຮງ ແລະ ລຽນຕິດເຊິ່ງຂະບວນດັ່ງກ່າວໄດ້ດຳເນີນໄປເປັນເວລາ 40 ກວ່າປີ ແຕ່ຍ້ອນກຳລັງຄົນ ແລະ ກຳລັງອາວຸດຍັງອ່ອນນ້ອຍຈຶ່ງຖືກຈັກກະພັດຝຣັ່ງທຳການປາບປາມລົງ.

### 2.2 ຂະບວນການຕໍ່ສູ້ຂອງປະຊາຊົນຊູດານ

ການຕໍ່ສູ້ຂອງປະຊາຊົນຊູດານກໍ່ເປັນຂະບວນໜຶ່ງທີ່ມີລັກສະນະກວ້າງຂວາງ ແລະ ແຂງ ແຮງໃນທະວີບອາ ຟຣິກາ ໂດຍສະເພາະນັບຕັ້ງແຕ່ປີ ຄ.ສ 1881-1900 ເປັນຕົ້ນມາໄດ້ເກີດມີ ຂະບວນການຕໍ່ສູ້ຕ້ານການຮຸກຮານ ແລະ ຍຶດຄອງຂອງຈັກກະພັດອັງກິດ ເຊິ່ງຂະບວນການຕໍ່ສູ້ ດັ່ງກ່າວມີຄວາມແຂງແກ່ນ ແລະ ພິລະອາດຫານ. ມາດີ (Madi) ຜູ້ນຳທີ່ອາດຫານຂອງຂະບວນການຕໍ່ສູ້ຂອງຊາວຊູດານ ໄດ້ເຕົ້າໂຮມປະຊາຊົນຈຳນວນຫຼວງຫຼາຍເຂົ້າຮ່ວມໃນພາລະກິດຕໍ່ຕ້ານຈັກກະພັດດ້ວຍການສ້າງຕັ້ງກຳລັງທະຫານຂຶ້ນ ເຊິ່ງປະກອບມີຊາວນາ ແລະ ຊາວລ້ຽງສັດ ແລ້ວສ້າງຕັ້ງອຳນາດການປົກຄອງເອກະລາດ ຈຶ່ງສາມາດຕໍ່ຕ້ານ ແລະ ດັບສູນກອງທະຫານອັງກິດໄດ້ເປັນຈຳນວນຫຼວງຫຼາຍເຊັ່ນ: ປີ ຄ.ສ 1881 ປະຊາຊົນຊູດານສາມາດດັບສູນທະຫານອັງກິດໄດ້ ຈຳນວນ 1.400 ຄົນ, ປີ ຄ.ສ 1882 ດັບສູນໄດ້ຈຳ ນວນ 4.000 ຄົນ, ປີ ຄ.ສ 1883 ດັບສູນໄດ້ ຈຳນວນ 9.500 ຄົນ ແລະ ປີ ຄ.ສ 18-190 ດັບສູນໄດ້ຫຼາຍພັນຄົນ, ເຖິງວ່າກຳລັງການຕໍ່ສູ້ຂອງປະຊາຊົນຊູດານຈະມີຄວາມເຂັ້ມແຂງ ແລະ ສາມາດດັບສູນທະຫານອັງກິດໄດ້ຫຼາຍພັນຄົນກໍ່ຕາມ ແຕ່ສຸດທ້າຍຂະບວນການຕໍ່ສູ້ດັ່ງກ່າວກໍ່ຖືກປະລາໄຊ.

ນອກຈາກຂະບວນການຕໍ່ສູ້ຂອງປະຊາຊົນອານເຊຣີ ແລະ ຊູດານແລ້ວຍັງມີຂະບວນການຕໍ່ສູ້ຂອງປະຊາຊົນໃນປະເທດຈາດທີ່ໄດ້ຕໍ່ສູ້ຕ້ານການຮຸກຮານຂອງຈັກກະພັດຝຣັ່ງໃນປີ ຄ.ສ 1891-1902 ແລະ ຂະບວນການຕໍ່ສູ້ຂອງປະຊາຊົນເອຢິບຕໍ່ສູ້ຕ້ານຈັກກະພັດອັງກິດໃນປີ ຄ.ສ 1882-1914 ແຕ່ທັງໝົດນັ້ນກໍ່ລ້ວນແຕ່ຖືກພວກຈັກກະພັດດຳເນີນການປາບປາມຢ່າງຮ້າຍແຮງ ຈຶ່ງເຮັດໃຫ້ຂະບວນການຕໍ່ສູ້ທັງໝົດຖືກປະລາໄຊເຊັ່ນກັນ.

## 3. ຂະບວນການປົດປ່ອຍຊາດໃນອາເມຣິກາລາຕິນ

ແອັດສະປາຍ ໄດ້ຄອບຄອງດິນແດນໃນອາເມຣິກາລາຕິນມາເປັນເວລາຫຼາຍກວ່າ 300 ປີ ພວກເຂົາຈຶ່ງທຸ້ມເທກຳລັງທັງຫມົດສ້າງຄວາມຈະເລີນໃຫ້ເທົ່າທຽມກັບເມືອງແມ່ໃນທຸກດ້ານ ແລະ ບໍ່ໄດ້ຖືດິນແດນໃຫມ່ໃນຖານະອານານິຄົມ. ສ່ວນຮູບແບບການປົກຄອງຖ້າຈະເບິ່ງໃນແງ່ຂອງຊາວອາເມຣິກາລາຕິນ ພວກເຂົາກໍ່ພໍໃຈທີ່ເປັນຄົນແອັດສະປາຍເຖິງວ່າຈະບໍ່ພໍໃຈໃນລະບົບສັງຄົມທີ່ບໍ່ສະເຫມີພາບ, ເຖິງຢ່າງໃດກໍ່ຕາມ ໂດຍສັນຊາດຕະຍານຂອງມະນຸດຍ່ອມຕ້ອງການຄວາມເປັນອິດສະຫຼະພາບຫຼາຍກວ່າການກິດຂີ່ຂູດຮີດ, ນອກຈາກນັ້ນ, ຍັງໄດ້ຮັບການສັ່ງສອນໃນສະຖານທີ່ສຶກສາວ່າ: "ປະຊາຊົນເທົ່ານັ້ນທີ່ເປັນຜູ້ກຳຈັດການປົກຄອງແບບຜະເດັດການໄດ້". ດ້ວຍເຫດນັ້ນ ໃນສະຕະວັດທີ XIX ຈຶ່ງເປັນສະຕະວັດແຫ່ງການຕໍ່ສູ້ເພື່ອຄວາມເປັນເອກະລາດແຫ່ງຊາດຂອງປະຊາຊົນອາເມຣິກາລາຕິນ.

ໃນເມື່ອກອງທັບຂອງ ນາໂປລີອົງ ເຂົ້າຍຶດ ແອັດສະປາຍ ໄດ້ປົດກະສັດອອກຈາກລາຊະບັນລັງແລ້ວແຕ່ງຕັ້ງໂຈເຊບ ຜູ້ເປັນນ້ອງຊາຍຂຶ້ນເປັນກະສັດແທນໃນປີ ຄ.ສ 1808 ຈຶ່ງເກີດການເຄື່ອນໄຫວຕໍ່ຕ້ານ ນາໂປລີອົງ ໃນເມືອງໃຫຍ່ເຊັ່ນ: ແມັກຊິກໂກ, ອາກຊັງຕິນ ແລະ ຊິລີ ດ້ວຍ ການກໍ່ຕັ້ງລັດຖະບານພັດຖິ່ນ ເພື່ອຮັກສາລາຊະບັນລັງຂອງກະສັດ ເຟີດີນານ VII (Ferdinand) ໃຫ້ຫມັ້ນຄົງໃນຕະຫຼອດໄລຍະທີ່ຝຣັ່ງປົກຄອງແອັດສະປາຍ, ແຕ່ເມື່ອເຟີດີນານກັບຄືນຄອງລາດ ໄດ້ປ່ຽນແປງນະໂຍບາຍໃນດິນແດນອາເມຣິກາລາຕິນ ຈຶ່ງເຮັດໃຫ້ຄວາມຄິດຂອງຊາວອາເມຣິກາລາຕິນປ່ຽນຈາກການປະກາດເອກະລາດມາເປັນການປະຕິວັດແທນ.

### 1) ການຕໍ່ສູ້ຢູ່ແມັກຊິກໂກ

ການເຂົ້າຄຸມອຳນາດໃນສະພາຂອງແອັດສະປາຍ ເປັນເຫດຜົນຫນຶ່ງທີ່ທຳໃຫ້ການປະຕິວັດ ແມັກຊິກໂກ ຕ່າງໄປຈາກການປະຕິວັດບ່ອນອື່ນຄື: ສູນກາງບັນຊາຕັ້ງຢູ່ເມືອງນ້ອຍໆໃນຊົນນະບົດທີ່ບໍ່ມີຄວາມສຳຄັນທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມ. ນອກຈາກນັ້ນ, ຜູ້ນຳການປະຕິວັດແມ່ນ ພະສົງ ທີ່ມີຊື່ວ່າ ມິເກນ ຮິເດນໂກ ອິດອດສະຕິອຢາ (1753-1811).

ໃນວັນທີ່ 16 ເດືອນກັນຍາ ປີ ຄ.ສ 1810 ເມື່ອໄດ້ຮັບຂ່າວວ່າ ແອັດສະປາຍ ສົ່ງກອງທັບມາປາບຮິເດລໂກໄດ້ສະແດງຕົວຕໍ່ຕ້ານແອັດສະປາຍ ເປັນຄັ້ງທຳອິດດ້ວຍການສັ່ນລະຄັງຮຽກຊາວບ້ານມາລວມກັນທີ່ວັດ ເພື່ອແຈກອາວຸດ ແລະ ຮຽກຮ້ອງໃຫ້ຕໍ່ສູ້ກັບ ແອັດສະປາຍ ເພື່ອຄວາມເອກະລາດຂອງແມັກຊິກໂກ ຊາວບ້ານຂານຕອບດ້ວຍຂໍ້ຄວາມວ່າ "ສາສະຫນາຈົ່ງຈະເລີນລັດຖະບານທີ່ໂຫດຮ້າຍ ແລະ ຊາວແອັດສະປາຍຈົ່ງຈິບຫາຍ".

ກອງທັບປະຕິວັດທີ່ນຳໂດຍ ຮິເດນໂກ ບໍ່ແມ່ນກອງທັບທີ່ທັນສະໄຫມເຊິ່ງປະກອບດ້ວຍຊາວອິນເດຍ, ເມັດສະຕິໂຊ ແລະ ດຣີໂອລວມແລ້ວປະມານ 50-60.000 ຄົນ, ອາວຸດປະກອບ ດ້ວຍທະນູ, ກ້ອນຫີນ, ຫອກ, ດາບ ແລະ ປືນ 2-3 ກະບອກ.

ຈຸດປະສົງທຳອິດຂອງການປະຕິວັດຄື: ທຳລາຍທຸກຢ່າງທີ່ເປັນສັນຍາລັກຂອງແອັດສະປາຍ, ເມືອງກົວນາຮົວໂຕ ສູນກາງຂຸດຄົ້ນຄຳ ແລະ ເງິນຂອງແອັດສະປາຍຖືກທຳລາຍເປັນແຫ່ງທຳອິດ. ຫຼັງຈາກນັ້ນ, ກໍ່ເດີນທາງເຂົ້າຍຶດເມືອງຫຼວງໄດ້ເປັນຜົນສຳເລັດ.

ກ່ອນການສູ້ຮົບຈະສິ້ນສຸດລົງສະພາແອັດສະປາຍ ຍິນດີອະໄພຍະໂທດໃຫ້ແກ່ຜູ້ປະຕິວັດ ພ້ອມທັງເຊີນ ຮິເດນໂກ ເຂົ້າພົບ. ແຕ່ໃນຈົດຫມາຍທີ່ຂຽນໄປຕອບ ຮິເດນໂກໄດ້ສະແດງໃຫ້ເຫັນຄວາມຕັ້ງໃຈຂອງຂະບວນການປະຕິວັດວ່າ "ການວາງອາວຸດຈະມີຂຶ້ນກໍ່ຕໍ່ເມື່ອຊັບສົມບັດ ຂອງແອັດສະປາຍທີ່ຍາດໄປຈາກແມັກຊີໂກ ຖືກຍຶດຄືນມາພ້ອມກັບອິດສະຫຼະພາບຂອງຊາດ"ປີເດນໂກຖືກຈັບ ແລະ ປະຫານຊີວິດໃນວັນທີ31 ເດືອນກໍລະກົດປີ ຄ.ສ 181 1.

ຜູ້ນໍາປະຕິວັດຕໍ່ຈາກ ຮິເດນໂກ ໄດ້ແກ່ພະສົງຊາວເມັດສະຕິໂຊ ຜູ້ຕິດຕາມຮັບໃຊ້ ຮິເດນໂກ ຕັ້ງແຕ່ເລີ່ມປະຕິວັດຊື່ ໂຮເຊ ມາເຣຍອາ ໂມເຣໂລດສ. ເມື່ອເຂົ້າຮັບຕໍາແຫນ່ງແທນ ຮິເດນໂກ ໂມເຣໂລດສ ປະກາດເອກະລາດໃຫ້ແກ່ ແມັກຊີໂກໃນປີ ຄ.ສ 18  14  ແລະ ຮຽກປະຊຸມສະພາປະກາດໃຊ້ລັດຖະທໍາມະນູນ ແຕ່ລັດຖະບານນີ້ຢູ່ບໍ່ນານລາວກໍ່ຖືກຈັບ ແລະ ປະຫານຊີວິດໃນວັນທີ 22 ເດືອນທັນວາ ປີ ຄ.ສ 1815.

ພາຍຫຼັງການຕາຍຂອງ ໂມເຣໂລດສ,  ເຫດການໃນແອັດສະປາຍ ຊ່ວຍໃຫ້ການປະຕິວັດຟື້ນຄືນຢ່າງເປັນລະບົບໂດຍປ່ຽນຈຸດປະສົງຈາກການຮັກສາລາຊະບັນລັງເພື່ອກະສັດມາເປັນການຕໍ່ສູ້ເພື່ອເອກະລາດອັນສົມບູນຂອງແມັກຊິກໂກ ພາຍໃຕ້ການນໍາພາຂອງ ອໍກຸດສຕິນ ເດີ ອີ ຕູບິເດ ເຊິ່ງເຂົາໄດ້ໃຊ້ນະໂຍບາຍໃນການດຶງດູດເອົາທຸກຊົ້ນຄົນ, ທຸກເຊື້ອຊາດທີ່ອາໄສ ແລະ ເກີດໃນອາເມຣິກາລາຕິນໃຫ້ມາສະຫນັບສະຫນູນກອງທັບປະຕິວັດໄດ້ເປັນຈໍານວນຫຼວງຫຼາຍ ຈຶ່ງ ສາມາດຍຶດແມັກຊິກໂກຊິຕີ ແລະ ປະກາດເອກະລາດໃຫ້ແກ ແມັກຊິກໂກ ສໍາເລັດໃນວັນທີ 27 ເດືອນກັນຍາ ປີ ຄ.ສ 1821

**2) ການຕໍ່ສູ້ຢູ່ພາກເຫນືອຂອງອາເມຣິກາລາຕິນ**

ການປະຕິວັດຮຽກຮ້ອງເອກະລາດໃນອາເມຣິກາລາຕິນເລີ່ມຕົ້ນ ແລະ ສິ້ນສຸດລົງໃນເວລາໃກ້ຄຽງກັບການປະຕິວັດແມັກຊິກໂກ (ຄ.ສ 1810-1824).  ຕະຫຼອດເວລາ 14  ປີຂອງການປະຕິວັດ ໄດ້ເກີດມີນັກປະຕິວັດທີ່ມີຊື່ສຽງຫຼາຍທ່ານໃຫ້ໂລກຮູ້ຈັກ. ໃນຈໍານວນເຫຼົ່ານີ້ມີຜູ້ທີ່ໄດ້ກ່າວເຖິງຄວາມສາມາດ ຫຼື ຄວາມສະຫຼາດພິເສດຂອງພວກເຂົາເລື້ອຍໆເຊັ່ນ: ຊີມອງ ໂບລິລາ  ຄ.ສ 1783-1 680 ຜູ່ປົດປ່ອຍດິນແດນພາກເຫນືອຂອງອາເມຣິກາລາຕິນ ແລະ ຊານມາຕິນ (San  Martin)  ປົດປ່ອຍພື້ນທີ່ທີ່ເຫຼືອ (ຍົກເວັ້ນເບຣຊິນ) ເຊິ່ງບຸກຄົນທັງສອງມີອຸດົມການຄ້າຍຄືກັນນັ້ນຄື: ຄວາມຕັ້ງໃຈທີ່ຈະປົດປ່ອຍປະຊາຊົນອາເມຣິກາລາຕິນໃຫ້ເປັນອິດສະຫຼະຈາກແອັດສະປາຍ.

ເມື່ອໄດ້ຮັບຂ່າວວ່າ ນາໂປລີອົງ ຍຶດລາຊະບັນລັງຂອງແອັດສະປາຍ ໃນອາເມຣິກາລາຕິນໄດ້ກໍ່ຕັ້ງລັດຖະບານພັດຖິ່ນຂຶ້ນ ແລະ ຂັບໄລ່ຂ້າລາຊະການແອັດສະປາຍອອກຈາກບໍລິເວນ ເວເນຊູເອລາ, ໂຄລົມເບຍ, ເອກວາດໍ, ເປຣູ ແລະ ໂບລີວີ. ການສູ້ຮົບຄັ້ງທໍາອິດໄດ້ເກີດຂຶ້ນທີ່ ເມືອງ ກາຣາກາດ (Caracas)   ໃນເວເນຊູເອລາ ໂດຍມີ ຊີມອນ ໂບລີວາ ເຊິ່ງເປັນຄົນຫົວຮຸນແຮງ ຮ່ວມຢູ່ນໍາ.

ພາຍຫຼັງມີການກະກຽມມາໄລຍະຫນຶ່ງແລ້ວ ຊີມອນ ໂບລີວາ ໄດ້ປະກາດເອກະລາດ ແລະ ໃນວັນທີ່ 5 ເດືອນກໍລະກົດ ປີ ຄ.ສ 1811 ກໍ່ປະກາດໃຊ້ລັດຖະທໍາມະນູນສະບັບທໍາອິດ. ແຕ່ຕໍ່ມາ ໄດ້ມີເຫດການຮ້າຍແຮງເກີດຂຶ້ນໃນປີ ຄ.ສ 1812    ຄື: ແຜ່ນດິນໄຫວຄັ້ງໃຫຍ່ໃນເມືອງ ກາຣາສາດ ໄດ້ສັງຫານຊີວິດນັກປະຕິວັດຫຼາຍກວ່າ 20.000 ຄົນ ແລະ ການປະລາໄຊຂອງກອງທັບປະຕິວັດທີ່ ເມືອງ ປໍໂຕ ແລະ ຄາເບລໂລ. ດັ່ງນັ້ນ, ໂບລີວາ ໄດ້ຫນີໄປລີ້ໄພຢູ່ເມືອງ ຄູຣາເຊົາ ເພື່ອກຽມການ ປົດປອຍຄັ້ງໃຫມ່ ໂດຍແມ່ນເຂົາເອງເປັນຜູ້ນໍາ.

ການປະລາໄຊໃນປີ ຄ.ສ 1812 ບໍ່ໄດ້ຍຸດຢັ້ງຄວາມຄິດທີ່ຈະປະຕິວັດຂອງ ໂບລີວາ ຈາກຄູລາເຊົາເດີນທາງໄປທີ່ ໂຄລົມເບຍ ເພື່ອເຂົ້າຮ່ວມຂະບວນປະຕິວັດຂອງກຸ່ມ ໂຕນີໂອ ນາຍີໂນ. ໂບລີວາ ຢູ່ ໂຄລົມເບຍ ບໍ່ດົນກໍ່ເດີນທາງກັບເວເນຊູເອລາ ລວບລວມພັກພວກເຂົ້າສູ່ສົງຄາມອີກຄັ້ງໜຶ່ງ. ການຕໍ່ສູ້ໃນຄັ້ງນີ້ມີຜູ້ເຂົ້າຮ່ວມໃນກອງທັບຢ່າງຫຼວງຫຼາຍ ໂບລີວາ ຈຶ່ງສາມາດເຂົ້າຍຶດເມືອງຫຼວງໄດ້ສໍາເລັດໃນເດືອນຕຸລາ ປີ ຄ.ສ 1813, ລາວໄດ້ຮັບການແຕ່ງຕັ້ງໃຫ້ດໍາລົງຕໍາແໜ່ງປົດປ່ອຍແຫ່ງຊາດ ແລະ ອີກໜຶ່ງປີຕໍ່ມາເປັນຜູ້ບັນຊາການສູງສຸດຂອງກອງທັບປະຕິວັດ.

ພາຍຫຼັງ ຝຣັ່ງຖອນທັບອອກຈາກ ແອັດສະປາຍ ເຟີດີນານ VII (ກະສັດແອັດສະປາຍ) ໄດ້ສົ່ງກໍາລັງເຂົ້າອາເມຣິກາລາຕິນ ເຮັດໃຫ້ຜູ້ນໍາປະຕິວັດປ່ຽນອຸດົມການຕໍ່ສູ້ນັ້ນກໍ່ຄື: ຈາກການຮັກສາລາຊະບັນລັງຂອງແອັດສະປາຍ ມາເປັນການຕໍ່ສູ້ເພື່ອເອກະລາດໂດຍສົມບູນຂອງອາເມຣິກາລາຕິນ. ແຕ່ເຖິງຢ່າງໃດກໍ່ຕາມຄວາມບໍ່ພ້ອມໆທາງດ້ານອາວຸດ ແລະ ກໍາລັງຄົນ ໂບລີວາ ຈໍາຕ້ອງໜີໄປ ຄູລາເຊົາ ເຂົ້າຮັບຕໍາແໜ່ງຜູ້ນໍາປະຕົວັດ ແຕ່ກໍ່ພົບກັບຄວາມປະລາໄຊສຸດທ້າຍເຂົ້ ໄດ້ໜີອອກນອກປະເທດລີ້ໄພຢູ່ທີ່ ຈາໄມກາ (Jamica) ເປັນເວລາ 6 ເດືອນ.

ທີ່ ຈາໄມກາ ໂບລີວາ ໄດ້ວາງແຜນກັບຄືນແຜ່ນດິນໃຫຍ່ ແລະ ໄດ້ຂຽນຈົດໝາຍຂໍຄວາມຮ່ວມມືຈາກນັກປະຕິວັດອື່ນໆຫຼາຍສະບັບ ໂດຍໄດ້ສະແດງຄວາມຄິດທີ່ຈະລວມໂລກໃໝ່ ພາຍໃຕ້ການປົກຄອງອັນດຽວກັນ, ໂຈມຕີລະບົບການປົກຄອງແບບລາຊາທິປະໄຕ ແລະ ອື່ນໆ.

ຄວາມພະຍາຍາມຂອງ ໂບລີວາ ໄດ້ຮັບຜົນສໍາເລັດ ເນື່ອງຈາກເຫດການ 3 ຢ່າງຄື: (1) ການໄດ້ພັນທະມິດໃໝ່ຜູ້ມີຄວາມຊໍານານການຂີ່ມ້າ ແລະ ບໍ່ຢ້ານຜູ້ໃດທັງໝົດ (ພວກນີ້ແຕ່ກ່ອນ ເປັນຝ່າຍແອັດສະປາຍປາບພວກປະຕິວັດ), (2) ການແກ່ຍາວເວລາເຂົ້າຍຶດ ກາຣາກາດ ແຕ່ມຸ້ງ ໄປເຂດລ້ອງແມ່ນໍ້າ ໂອຣີໂນໂກ ເປັນສະຖານທີ່ເໝາະສົມໃນການສູ້ຮົບ ແລະ ສາມາດໃຊ້ເປັນເສັ້ນທາງເຂົ້າໂຈມຕີ ແອັດສະປາຍ ຫຼື ຫຼົບໜີສູ່ມະຫາສະໝຸດ ແລະ (3) ການເຂົ້າເສີມກໍາລັງຈາກ ທັງພາຍໃນປະເທດ ແລະ ນອກປະເທດ ທີ່ເຫັນຄວາມສາມາດຂອງ ໂບລີວາ ນໍາໄປສູ່ການຈັດຕັ້ງລັດຖະບານກາງຄະນະປະຕິວັດຂຶ້ນທີ່ເມືອງ ຊິອູແດດ-ໂບລີວາ ທີ່ປາກແມ່ນໍ້າ ໂອຣີໂນໂກ ເຊິ່ງຄອບຄອງພື້ນທີ່ທັງໝົດທາງພາກຕາເວັນອອກ ແລະ ພາກໃຕ້.

ໄຊຊະນະຄັ້ງທໍາອິດໄດ້ເກີດຂຶ້ນໃນເຂດ ນິວກຣານາດາ ໂດຍສະເພາະແມ່ນການເຂົ້າທໍາລາຍກໍາລັງຂອງແອັດສະປາຍ ທີ່ເມືອງ ໂບຍາກາ ແລະ ໃນວັນທີ 1 ເດືອນສິງຫາ ປີ ຄ.ສ 1819 ໄດ້ເປັນຜູ້ປົດປ່ອຍ ນິວກຣານາດາ. ຫຼັງຈາກນັ້ນ, ໄດ້ກັບໄປ ເວເນຊູເອລາ ລວມເອົາເວເນຊູເອລາ ໃນເຂດ ນິວກຣານາດາ ແລະ ເອກວາດໍ (Ecuador) ເຂົ້າດ້ວຍກັນພາຍໃຕ້ຊື່ ສະຫະພັນລັດ ແກຣນ ໂຄລົມເບຍ (Federate State Grant of Colombia).

ຄວາມພ້ອມຂອງກອງທັບປະຕິວັດ ປະກອບກັບຄວາມອ່ອນແອຂອງກອງທັບ ແອັດສະປາຍ ນາຍພົນໂມຣິນໂຍ (Marily0) ຖືກບັງຄັບໃຫ້ລົງນາມສະຫງົບເສິກ. ຫຼັງຈາກນັ້ນ, ກໍາລັງ ຂອງແອັດສະປາຍເດີນທາງກັບປະເທດໃນປີ ຄ.ສ 1820 ແຕ່ ໂບລີວາ ຍັງຕ້ອງໃຊ້ເວລາອີກ 2 ປີ ເພື່ອປາບປາມພວກຈົງຮັກພັກດີຕໍ່ ແອັດສະປາຍ, ໃນວັນທີ່ 24 ເດືອນມິຖຸນາ ປີ ຄ.ສ 1821 ເວເນຊູເອລາ ໄດ້ຮັບເອກະລາດຢ່າງສົມບູນ ແຕ່ສະພາບສົງຄາມຍັງດໍາຕໍ່ໄປເຖິງປີ ຄ.ສ 1823 ຈຶ່ງສາມາດກໍາຈັດພວກກະບົດທັງໝົດ. ຈາກນັ້ນ, ເຂົາເດີນທາງລົງໃຕ້ປົດປ່ອຍ ເອກວາດໍ ແລະ ສຸດທ້າຍ ໄດ້ປົດປ່ອຍ ເປຣ ໄດ້ສໍາເລັດໃນປີ ຄ.ສ 1824

**3) ການຕໍ່ສູ້ຢູ່ພາກໃຕ້ອາເມຣິກາລາຕິນ**

ຊານ ມາຕິນ ເປັນຜູ້ນໍາທີ່ມີບົດບາດສໍາຄັນໃນການຈັດຕັ້ງ ແລະ ນໍາພາຂະບວນການຕໍ່ສູ້ ຕ້ານແອັດສະປາຍ ຢູ່ພາກໃຕ້ຂອງອາເມຣິກາລາຕິນ. ພາຍຫຼັງການເຂົ້າຮັບຕໍາແຫນ່ງແມ່ທັບ ຊານ ມາຕິນ ໄດ້ສຶກສາສາເຫດຂອງການປະລາໄຊຄັ້ງກ່ອນຂອງກໍາລັງປະຕິວັດ ແລະ ຄວາມເຂັ້ມແຂງ ຂອງແອັດສະປາຍ ລາວຈຶ່ງວາງແຜນດ້ວຍວິທີຂໍລາອອກຈາກຕໍາແຫນ່ງແມ່ທັບແລກກັບຕໍາແຫນ່ງວ່າການລັດແຫ່ງເມືອງຄູໂຍໃນນະຄອນຫຼວງບຸໂນດແອເຣດ (Buenos Aires) ປະເທດອາກຊັງຕິນເຊິ່ງມີຄວາມເຫມາະສົມທີ່ສຸດສໍາລັບການປະຕິວັດເພາະໃກ້ກັບ ເປຣູ. ຕາມແຜນການຊານມາຕິນຈະໃຊ້ພື້ນທີ່ຊາຍແດນຕາເວັນຕົກຂອງ ບຸໂນດ ແອເຣດ ເປັນທີ່ຫມັ້ນສະສົມກໍາລັງ ແລະ ອາວຸດ. ຈາກນັ້ນ , ຈຶ່ງເຂົ້າສົມທົບກັບກໍາລັງຂອງ ຊິລີ (Chile) ແລ້ວປົດປ່ອຍ ເປຣູ (Peru).

ໃນປີ ຄ.ສ 1817 ມາຕິນ ໄດ້ກຽມການປົດປ່ອຍ ຊິລີ ດ້ວຍການສົ່ງກໍາລັງເຂົ້າຍຶດທີ່ຫມັ້ນ ແອັດສະປາຍ ທີ່ເມືອງ ຊາຄາບູໂກ. ໃນ ຊິລີ ມາຕິນໄດ້ໃຊ້ເວລາອີກປີກວ່າເພື່ອທໍາສົງຄາມກັບ ແອັດສະປາຍ ໃນທີ່ສຸດ ຊິລີ ໄດ້ຮັບເອກະລາດໃນວັນທີ່ ເດືອນເມສາ ປີ ຄ.ສ 1818 ທີ່ເມືອງ ໄມປູ ເຊິ່ງເປັນທີ່ຫມັ້ນສຸດທ້າຍຂອງແອັດສະປາຍ.

ມາຕິນ ນອກຈາກໄດ້ຮັບການສະຫນັບສະຫນູນດ້ານອາວຸດ-ກໍາລັງຄົນຈາກ ຊິລີ ແລະ ບູໂນດ ແອເຣດ ແລ້ວຍັງໄດ້ຮັບການຮ່ວມມືຈາກຫຼາຍພາກສ່ວນ ແຕ່ວ່າທີ່ ເປຣູ ມາຕິນ ພົບບັນຫາເລື່ອງຄວາມບໍ່ເຂົ້າໃຈຂອງປະຊາຊົນກ່ຽວກັບສິດທິ, ເສລີພາບ ແລະ ເປັນຫຍັງຈຶ່ງຕ້ອງມີການປະຕິວັດ, ດັ່ງນັ້ນ, ມາຕິນ ຈໍາຕ້ອງໄດ້ລໍຖ້າການບຸກໂຈມຕີເປຣູ ໃນຂະນະດຽວກັນ ມາຕິນ ໄດ້ສະສົມ ກໍາລັງ ແລະ ປຸກລະດົມຊາວເມືອງຢູ່ທາງຕອນໃຕ້ຂອງເປຣູ.

ໃນລະຫວ່າງທີ ມາຕິນ ລໍຄວາມສຸກງອມເລື່ອງເສລີພາບຢູ່ນັ້ນ, ແອັດສະປາຍ ເກີດຄວາມວຸ້ນວາຍຈາກກຸ່ມເສລີນິຍົມໄດ້ບີບບັງຄັບໃຫ້ພະເຈົ້າເຟີດີນານ ນໍາລັດຖະທໍາມະນູນປີ ຄ.ສ 1812 ມາໃຊ້ຈຶ່ງເຮັດໃຫ້ອຸປະຣາດເມືອງ ລີມາ (Lirna) (ນະຄອນຫຼວງ ເປຣູ) ຫັນມາເຈລະຈາສະຫງົບເສິກກັບກອງທັບປະຕິວັດ ເຊິ່ງການເຈລະຈໄດ້ຮັບຜົນສໍາເລັດຕາມຄວາມຕ້ອງການຂອງມາຕິນ. ດັ່ງນັ້ນ, ຊານ ມາຕິນ ຈຶ່ງໄດ້ປະກາດອິດສະລະພາບໃຫ້ແກ່ ເປຣູ ໃນວັນທີ່ 25 ເດືອນກໍລະກົດ ປີ .ສ 1821

**4) ການຕໍ່ສູ້ຢູ່ເບຣຊິນ**

ເບຣຊິນ ກໍ່ເປັນສູນກາງການປະຕິວັດອີກແຫ່ງຫນຶ່ງໃນອາເມຣິກາລາຕິນ ທີ່ມີການຮຽກ ຮ້ອງອິດ ສະຫຼະພາບໃນດິນແດນທີ່ເປັນອານານິຄົມຂອງ ປັອກຕຸຍການ ໃນອາເມຣິກາລາຕິນ ແຕ່ການຕໍ່ສູ້ໃນເບຣຊິນບໍ່ດຸເດືອດ ແລະ ຮູນແຮງທີ່ກັບການຕໍ່ສູ້ຢູ່ບ່ອນອື່ນໆເພາະເປັນການຕໍ່ສູ້ທີ່ບໍ່ມີ ນັກປະຕິວັດທີ່ດີເດັ່ນ ແລະ ຜູ້ທີ່ທໍາການປະຕິວັດບໍ່ແມ່ນຊາວເບຣຊິນ ແຕ່ຫາກແມ່ນເຈົ້າຊາຍປັອກຕຸຍການ

ເນື່ອງຈາກວ່າ ໃນເວລາ ນາໂປລີອົງ ເຂົ້າຍຶດຄອງປັອກຕຸຍການ ໄດ້ສັ່ງໃຫ້ແອັດສະປາຍ ຕໍ່ຕ້ານກັບອັງກິດ ແຕ່ເຈົ້າຊາຍ ຈອນ (John) ອົງຣາຊະທາຍາດບໍ່ປະຕິບັດຕາມ ນາໂປລີອົງ ຈຶ່ງສັ່ງກໍາລັງບຸກຕີເມືອງ ລິດສະບອນ (lisbon) (ນະຄອນຫຼວງແອັດສະປາຍ). ກະສັດ ແລະ ເຊື້ອພະວົງ ຕ້ອງຫນີໄປເບຣຊິນ ເຊິ່ງໄດ້ຮັບການຕ້ອນຮັບເປັນຢ່າງດີຈາກຊາວເບຣຊິນ ແລະ 8 ປີຕໍ່ມາເຈົ້າ ຊາຍຈອນ ໄດ້ປະກາດໃຫ້ເມືອງ ຣີ ໂອ ເດີ ຈາເນໂຣ (Rio de Janeiro) ເປັນເມືອງຫຼວງຂອງອານາຈັກປັອກຕຸຍການ ແລະ ໃນປີ ຄ.ສ 1816 ເຈົ້າຊາຍຈອນ ໄດ້ຮັບການສະຖາປະນາຂຶ້ນເປັນກະສັດ ເຊິ່ງໃນໄລຍະທີ່ປົກຄອງນັ້ນລາວໄດ້ເຮັດໃຫ້ເບຣຊິນ ມີຄວາມເຂັ້ມແຂງຮັ່ງມີ. ໃນຂະນະທີ່ ປັອກຕຸຍການເກີດ

ມີຄວາມສັບສົນວຸ້ນວາຍຂາດສະຖຽນລະພາບ ຜູ້ນຳປ໊ອກຕຸຍການ ຈຶ່ງໄດ້ທູນ ພະເຈົ້າຈອນກັບຄືນປະເທດ ແລະ ຮຽກຮ້ອງໃຫ້ລັດຖານະເບຣຊິນ ເປັນອານານິຄົມເຊັ່ນເດີມ.

ໃນວັນທີ 21 ເມສາ ປີ ຄ.ສ 1821 ພະເຈົ້າຈອນ ໄດ້ຮຽກຕົວແທນຊາວເບຣຊິນມາປະຊຸມ ເຊິ່ງຜົນການປະຊຸມໄດ້ຕົກລົງໃຫ້ມີລັດຖະທຳມະນູນຂອງປະເທດເບຣຊິນ ຈຶ່ງເປັນເຫດໃຫ້ ປ໊ອກຕຸຍການ ສົ່ງທະຫານເຂົ້າທຳລາຍສະພາເບຣຊິນ ແລະ ບັງຄັບໃຫ້ພະເຈົ້າຈອນ ປະກາດຍົກເລີກລັດຖະທຳມະນູນ. ດັ່ງນັ້ນ, ເພື່ອແກ້ບັນຫາໃນວັນທີ 24 ເດືອນເມສາ ພະອົງໄດ້ຕັດສິນໃຈກັບປະເທດ ໂດຍມອບໃຫ້ເຈົ້າຊາຍ ເປໂດຣ ຜູ້ເປັນໂອລົດປົກຄອງເບຣຊິນໃນຖານະອຸປະຣາດ.

ຕໍ່ມາສະພາປ໊ອກຕຸຍການໄດ້ລະເມີດສັນຍາດ້ວຍການລົດຖານະ ເບຣຊິນ ໃຫ້ເປັນອານານິຄົມ ແລະ ບັງຄັບໃຫ້ເຈົ້າຊາຍ ເປໂດຣ ກັບຄືນປະເທດ, ດ້ວຍເຫດນັ້ນ, ວັນທີ 9 ເດືອນກໍລະກົດ ປີ ຄ.ສ 1822 ຊາວເບຣຊິນ ໃນເມືອງຕ່າງໆໄດ້ຂໍຮ້ອງເຈົ້າຊາຍ ບໍ່ໃຫ້ກັບປະເທດ ແລະ ໄດ້ຮັບການຕອບຮັບເປັນຢ່າງດີ. ຕໍ່ມາພະອົງໄດ້ປະກາດໃຫ້ສະພາເບຣຊິນຮ່າງລັດຖະທຳມະນູນ ເປັນເຫດໃຫ້ ປ໊ອກຕຸຍການ ບໍ່ພໍໃຈຈຶ່ງປະກາດການເປັນກະບົດຂອງເບຣຊິນ. ເມື່ອສະຖານະການ ເປັນຄືແນວນັ້ນ, ເຈົ້າຊາຍເປໂດຣ ຈຶ່ງຕັດສິນໃຈປະກາດເອກະລາດທັນທີ່ ໂດຍກ່າວວ່າ ເຖິງ ເວລາແລ້ວ ບໍ່ວ່າຈະເປັນສິດສະຫຼະພາບ ຫຼື ຄວາມຕາຍ ເຮົາຂໍແຍກປະເທດເປັນອິດສະຫຼະຈາກ ປ໊ອກຕຸຍການ". ວັນທີ 1 ເດືອນທັນວາ ປີ ຄສ 1822 ພະອົງໄດ້ຮັບການສະຖາປະນາຂຶ້ນເປັນຈັກກະພັດແຫ່ງເບຣຊິນ ຊົງພະນາມວ່າ ພະເຈົ້າເປໂດຣ I.

- .

# ບົດທີ 8

# ຂະບວນກຳມະກອນຢູ່ເອີຣົບ ແລະ ອາເມຣິກາໃນທ້າຍສະຕະວັດທີ 19 ຫາຕົ້ນສະຕະວັດທີ20

## 1.ຂະບວນກຳມະກອນເອີຣົບ

### 1.1. ຂະບວນກຳມະກອນຢູ່ອັງກິດ

ມາເຖິງຕອນທ້າຍຂອງສະຕະວັດທີ XIX ບັນຫາຂອງຊາວຜູ້ອອກແຮງງານໄດ້ປາກົດແຈ້ງຂຶ້ນ ເນື່ອງຈາກການນຳໃຊ້ອຸດສາຫະກຳທີ່ກ້າວໜ້າ ໄດ້ສົ່ງຜົນເຮັດໃຫ້ຄວາມຕ້ອງການແຮງງານ ບາງຂະແໜງການນັ້ນຫຼຸດລົງກໍ່ໃຫ້ເກີດໄພວ່າງງານໃນສັງຄົມເປັນຈຳນວນຫຼວງຫຼາຍ ໂດຍສະເພາະກຸ່ມຄົນທີ່ບໍ່ມີຄວາມຮູ້ແນ່ນອນ (ກຳມະກອນທົ່ວໄປ), ກຸ່ມຄົນເຫຼົ່ານີ້, ໄດ້ຮຽກຮ້ອງໃຫ້ລັດຖະບານອອກມາແກ້ໄຂຊີວິດການເປັນຢູ່ຂອງຊົນຊັ້ນກຳມາຊີບໃຫ້ດີຂຶ້ນດ້ວຍການໃຫ້ຫຼັກຄ້ຳປະກັນ ໃນວິຊາຊີບຂອງພວກເຂົາ, ຮຽກຮ້ອງເຖິງສະຫວັດດີການໃນເວລາເຈັບປ່ວຍ, ພວກເຂົາເຈົ້າໄດ້ ພ້ອມກັນນັດຢຸດງານ ໃນທົ່ວອັງກິດເປັນເວລາ 4 ອາທິດ ແລະ ສ້າງຕັ້ງອົງການຄຸ້ມຄອງຕົນເອງ ເພື່ອປົກປ້ອງສິດຜົນປະໂຫຍດຂອງຕົນເອີ້ນວ່າ "ຄະນະກຳມະການຜູ້ແທນກຳມະກອນ" ຂຶ້ນໃນປີ ຄ.ສ. 1889, ເນື່ອງຈາກວ່າ ສະພາບການການຂະຫຍາຍຕົວສູງຂອງນາຍທຶນຢູ່ອັງກິດ ປະກອບກັບຂະບວນການຈັດຕັ້ງຂອງກຳມະກອນເວລານັ້ນຍັງອ່ອນນ້ອຍ ຈຶ່ງບໍ່ເປັນຂະບວນຕໍ່ເນື່ອງເທົ່າທີ່ ຄວນ.

### 1.2 ຂະບວນກຳມະກອນຢູ່ຝຣັ່ງ

ໃນຕອນທ້າຍສະຕະວັດທີ XIX ຂະບວນຕໍ່ຕ້ານຂອງຊົນຊັ້ນກຳມະຊີບຢູ່ຝຣັ່ງໄດ້ຂະຫຍາຍ ຕົວຂຶ້ນສູ່ລະດັບສູງສາມາດສ້າງຕັ້ງອຳນາດການປົກຄອງຂອງຕົນຂຶ້ນ ໄດ້ສຳເລັດໂດຍປະຊາຊົນ ເມືອງປາຣີໄດ້ລຸກຂຶ້ນຍຶດອຳນາດ ໃນວັນທີ 18/3/1871 ແລ້ວສ້າງຕັ້ງອຳນາດການປົກຄອງຂອງຕົນຂຶ້ນ ເຊິ່ງເປັນອຳນາດການປົກຄອງທຳອິດຂອງຊົນຊັ້ນກຳມາຊີບ, ມາຮອດວັນທີ 28/3/1871 ໄດ້ມີການດຳເນີນການເລືອກຕັ້ງ, ຕໍ່ມາວັນທີ 28/3/1971 ໄດ້ປະກາດສ້າງຕັ້ງກອມມູນປາຣີຢາງ ເປັນທາງການ ແຕ່ກອມມູນປາຣີຖືກສ້າງຕັ້ງຂຶ້ນມາບໍ່ພໍເທົ່າໃດເດືອນກໍຖືກກອງທະຫານຂອງຊົນ ຊັ້ນນາຍທຶນປາບລົງຢ່າງໂຫດຮ້າຍປ່າເຖື່ອນ ແລະ ຈົບລົງໃນວັນທີ 28/5/1871. ເຖິງຈະເປັນໄລ ຍະເວລາທີ່ສັ້ນແຕ່ກໍ່ມີຄວາມໝາຍສຳຄັນທາງປະຫວັດສາດຂອງຊົນຊັ້ນກຳມາຊີບ.

ສະພາບການການເຄື່ອນໄຫວຂອງຊາວກຳມະກອນໄດ້ຟົດເດືອດຂຶ້ນອີກເທື່ອໜຶ່ງ ໃນປີ ຄ.ສ. 1875 ເນື່ອງຈາກແນວທາງທິດສະດີມາກຖືກເຜີຍແຜ່ຢ່າງກວ້າງຂວາງໂດຍທ່ານ ຈູເລດ ເກດ (Jules Guesde) ແລະ ຟີລິບ ລາຟາເກີ (P. Lafargue) ໄດ້ຕໍ່ຕ້ານກັບລັດທິປຣູດົງ ແລ້ວສ້າງຕັ້ງພັກ ກຳມາຊີບຂຶ້ນ. ໃນກອງປະຊຸມມາກໄຊ ປີ ຄ.ສ. 1879 ໄດ້ຕົກລົງສ້າງຕັ້ງພັກກຳມະກອນຝຣັ່ງຂຶ້ນ. ມາ ເຖິງປີ ຄ.ສ.1893 ຊົນຊັ້ນກຳມະກອນ ໄດ້ຮັບການເລືອກຕັ້ງເຂົ້າເປັນສະມາຊິກສະພາຜູ້ແທນ ລາສະດອນເປັນຜົນສຳເລັດເຊິ່ງສາມາດຕິດຕາມ ແລະ ຄັດຄ້ານພວກຫົວອານຸລັກທີ່ພະຍາຍາມ ຈະຟື້ນຟູລະບອບລາຊາທິປະໄຕໄດ້ສຳເລັດ.

ຂະບວນການຕໍ່ສູ້ຂອງຊົນຊັ້ນກຳມະກອນໄດ້ເຕີບໃຫຍ່ຂະຫຍາຍຕົວ ແລະ ຟົດເດືອດຂຶ້ນ ໃນປີ ຄ.ສ.1906 ກຳມະກອນບໍ່ຖ່ານຫີນ 50.00 ຄົນພ້ອມກັນປະທ້ວງ, ຮຽກຮ້ອງໃຫ້ມີການປະກັນຄວາມປອດໄພໃນເວລາເຮັດວຽກ, ຕໍ່ມາປີ ຄ.ສ. 1909 ພະນັກງານໄປສະນີຂອງປາຣີ ໄດ້ໂຮມຕົວກັນນັດຢຸດງານຮຽກຮ້ອງໃຫ້ມີການປັບປຸງຊີວິດການ

ເຮັດວຽກຂອງເຂົາເຈົ້າໃຫ້ດີຂຶ້ນ.. ແຕ່ເຖິງ ຢ່າງໃດກໍ່ຕາມ ຂະບວນຕໍ່ສູ້ຂອງຊາວກຳມະກອນຢູ່ຝຣັ່ງຍັງຂາດຄວາມເປັນເອກະພາບ, ດັ່ງນັ້ນ, ຈຶ່ງຖືກນາຍທຶນສະກັດກັ້ນ ແລະ ປາບປາມໄດ້.

**1.3 ຂະບວນກຳມະກອນຢູ່ເຢຍລະມັນ**

ພາຍຫຼັງສຳເລັດການທ້ອນໂຮມ ແລະ ກາຍເປັນປະເທດຈັກກະພັດໄດ້ສຳເລັດພາຍໃຕ້ການນຳພາຂອງ ບິດສະມາກ ໃນປີ ຄ.ສ. 1871 ຂະບວນການຮຽກຮ້ອງສິດ ແລະ ຜົນປະໂຫຍດຂອງຊາວ ກຳມະກອນກໍ່ຄ່ອຍໆມີບົດບາດຫຼາຍຂຶ້ນ ໃນປີຄ.ສ 1876 ພັກກຳມະກອນສັງຄົມປະຊາທິປະໄຕ ໄດ້ກຳເນີດຂຶ້ນພາຍໃຕ້ການນຳພາຂອງ ເບແບນ (Bebel) ແລະ ລິບນິກ (Licbknecht) ເພື່ອນຳພາຊາວກຳມະກອນເຢຍລະມັນຕໍ່ສູ້ກັບພວກນາຍທຶນ ເຊິ່ງໄດ້ຮັບການຊ່ວຍເຫຼືອ ແລະ ຊີ້ນຳຈາກ ທ່ານ ກາກມາກ ແລະ ທ່ານ ຟີເດຣິກ ອັງແກນ, ໃນປີ ຄ.ສ.1980 ພັກກຳມະກອນສັງ ຄົມປະຊາທິປະໄຕ ໄດ້ຮັບໄຊຊະນະໃນການເລືອກຕັ້ງຄັດເລືອກເຂົ້າເປັນສະມາຊິກລັດຖະສະພາ.ເຮັດໃຫ້ດຳລັດຂອງບິດສະມາກ ຕ້ານພັກສັງຄົມປະຊາທິປະໄຕ ແລະ ຂະບວນການຂອງກຳມະກອນທີ່ຢູ່ນອກກົດຫມາຍບໍ່ສາມາດນຳໃຊ້ໄດ້. ພາຍຫຼັງການເສຍຊີວິດຂອງ ທ່ານ ອັງແກນ ພັກສັງຄົມປະຊາທິປະໄຕກໍ່ກ້າວໄປສູ່ຄວາມຜິດພາດດ້ວຍການປະຕິເສດການຕໍ່ສູ້ແບບຜະເດັດການກຳ ມາຊີບ ແລ້ວຫັນໄປຮັບໃຊ້ລະບອບນາຍທຶນ ໃນທີ່ສຸດກໍເຮັດໃຫ້ຊາວກຳມະກອນໂດດດ່ຽວ ແລະ ຖືກພວກນາຍທຶນກົດຂີ່ຂູດຮີດ.

**1.4. ຂະບວນກຳມະກອນ ແລະ ການປະຕິວັດຣັດເຊຍ (1905–1907)**

ຣັດເຊຍ ເປັນປະເທດທີ່ຂະຫຍາຍຕົວຊ້າກວ່າຫມູ່ ຖ້າທຽບໃສ່ບັນດາປະເທດນາຍທຶນທັງຫຼາຍເຊັ່ນ: ອັງກິດ, ຝຣັ່ງ ແລະ ອາເມຣິກາ, ເນື່ອງຈາກວ່າ ພື້ນຖານເສດຖະກິດຂອງຣັດເຊຍສ່ວນໃຫຍ່ຍັງແມ່ນການກະສິກຳ ແລະ ຂຶ້ນກັບຕ່າງປະເທດ. ແຕ່ຊົນຊັ້ນກຳມະຊີບຣັດເຊຍມີລະບົບການຈັດຕັ້ງທີ່ເຂັ້ມແຂງ. ມີນໍ້າໃຈຮັກຊາດສູງ, ນໍ້າໃຈຕໍ່ສູ້ປະຕິວັດຢ່າງເດັດດ່ຽວຫນຽວແໜ້ນ ແລະ ມີຄວາມສາມັກຄີເປັນເລີດພາຍໃຕ້ການນຳພາຂອງພັກທີ່ເປັນເອກະພາບ ແລະ ກ້າແກ່ນ ໂດຍມີທ່ານເລນິ້ນເປັນຜູ້ນຳ.

ເລນິນ ເປັນຊື່ລັບໃນການເຄື່ອນໄຫວປະຕິວັດ, ຊື່ແທ້ຂອງທ່ານແມ່ນ ວາລາດີເມຍ ອີລິດ ອູລີຢານອບ. ທ່ານເກີດເມື່ອວັນທີ່ 22 ເມສາ ປີ ຄ.ສ 1870 ທີ່ເມືອງກາຊານ ລັດຣັດເຊຍ ໃນຄອບຄົວປັນຍາຊົນ ໂດຍພໍ່ເປັນຄູສອນ, ເລນິນ ໄດ້ເຂົ້າຮ່ວມການຈັດຕັ້ງຕໍ່ສູ້ທາງການເມືອງຂອງນັກສຶກສາ ແລະ ແລ້ວທ່ານຖືກຈັບ ແລະ ຖືກໄລ່ອອກຈາກໂຮງຮຽນ ໃນປີ ຄ.ສ 1887. ເນື່ອງຈາກເມືອງກາຊານເປັນເມືອງນ້ອຍຈຳນວນກຳມະກອນບໍ່ຫຼາຍໃນຂະນະທີ່ຢູ່ເມືອງແຊງເປແຕກບວກ ມີກຳມະກອນເປັນຈຳນວນຫຼວງຫຼາຍ ແລະ ມີການເຄື່ອນໄຫວຢ່າງແຂງແຮງ. ດັ່ງນັ້ນ, ໃນປີ ຄ.ສ 1893 ທ່ານຈຳຕ້ອງຍ້າຍໄປເມືອງດັ່ງກ່າວ ແລະ ດຳເນີນການເຄື່ອນໄຫວຮ່ວມກັບຈຸກຳມະກອນມາກຊິດ, ຮໍ່າຮຽນດ້ວຍຕົວເອງຈົນສາມາດເສັງຈົບມະຫາວິທະຍາໄລໄດ້ກຽດນິຍົມອັນດັບຫນຶ່ງ ໃນປີ ຄ.ສ 1896 ແລະ ໃນປີດຽວກັນທ່ານໄດ້ສ້າງຕັ້ງສະຫະພັນຕໍ່ສູ້ເພື່ອປົດປ່ອຍກຳມະກອນ. ຕໍ່ມາທ່ານຖືກຕຳຫຼວດຈັບເຂົ້າຄຸກ ແລະ ຖືກເນລະເທດໄປຢູ່ຊີເບຣີ (ທີ່ບ້ານ ຊູແຊບສະໂກແອ).

ພາຍຫຼັງໄດ້ຮັບອິດສະຫຼະພາບ ເລນິນ ບໍ່ສາມາດທີ່ຈະເຄື່ອນໄຫວຢູ່ຣັດເຊຍຕໍ່ໄປ, ເນື່ອງຈາກຕຳຫຼວດໄດ້ຕິດຕາມ ທ່ານທຸກບາດກ້າວ. ດັ່ງນັ້ນ, ທ່ານພ້ອມດ້ວຍຫມູ່ຄະນະຈຳນວນຫນຶ່ງໄດ້ຫນີໄປເຄື່ອນໄຫວຢູ່ຕ່າງປະເທດ ເຊັ່ນ: ປະເທດ ໂອຕຣິດ, ແບນຊິກ, ອັງກິດ. ທີ່ຕ່າງແດນ ທ່ານເລນິນ ໄດ້ຈັດຕັ້ງຫນັງສືພິມທີ່ມ ຊື່ວ່າ ອີສະກາລາ (ຫມັດໄຟ) ເປັນສື່ໂຄສະນາ ແລະ ເຜີຍແຜ່ແນວທາງນະໂຍບາຍ ແລະ ແຜນດຳເນີນງານຂອງພັກຫນັງສືພິມດັ່ງກ່າວຖືກ

ລັກລອບນໍາສິ່ງເຂົ້າໄປໃຫ້ກໍາມະກອນໃນຣັດເຊຍຢ່າງລັບ, ໃນປີ ຄສ 1903 ທ່ານໄດ້ເປີດກອງປະຊຸມຄັ້ງທີ 2 ຂອງພັກກໍາມະກອນສັງຄົມປະຊາທິປະໄຕຣັດເຊຍ ຢູ່ທີ່ນະຄອນ ບຣຸກແຊນ ປະເທດແບນຊິກ, ໃນກອງປະຊຸມ ທ່ານ ເລນິນ ໄດ້ສະເໜີແນວທາງນະໂຍບາຍ, ແຜນການ, ເງື່ອນໄຂ ການເຂົ້າເປັນສະມາຊິກຂອງພັກ ແລະ ອື່ນໆ ເຊິ່ງມີທັງຜູ້ສະໜັບສະໜູນ ແລະ ຜູ້ຄັດຄ້ານຕໍ່ແນວທາງດັ່ງກ່າວ, ແຕ່ຜູ້ແທນເຂົ້າຮ່ວມກອງປະຊຸມສ່ວນໃຫຍ່ເຫັນດີກັບແນວທາງການປະຕິວັດ ຂອງທ່ານເລນິນ ເອີ້ນວ່າ: ໂບນເຊວິກ ແລະ ອີກຈໍານວນໜ້ອຍທີ່ບໍ່ເຫັນດີເອີ້ນວ່າ: ແມນເຊວິກ. ກອງປະຊຸມຄັ້ງນີ້ພັກ ໂບນເຊວິກ ໄດ້ຮັບໄຊຊະນະ, ເຊິ່ງເປັນຂີດໝາຍແຫ່ງໄຊຊະນະຂອງລັດທິມາກຊິດ.

ການປະກາດຖະແຫຼງການຂອງພັກໂບນເຊວິກ ນັບວ່າເປັນໂຄງການການເມືອງຂອງພັກ ທີ່ມີການລະບຸແຈ້ງເຖິງວັດຖຸປະສົງຂອງການສ້າງຕັ້ງຜະເດັດການກໍາມະຊີບທີ່ແທ້ຈິງ ໃຫ້ຂະບວນການກໍາມະກອນໂລກ ໄດ້ຮັບຮູ້ເປັນຄັ້ງທໍາອິດໂດຍເອົາທິດສະດີຂອງມາກເປັນພື້ນຖານເພື່ອກໍ່ສ້າງສັງຄົມ.

ຕົ້ນສະຕະວັດທີ XX, ປະເທດຣັດເຊຍໄດ້ຕົກຢູ່ໃນສະພາບວິກິດການທາງດ້ານເສດຖະກິດຢ່າງຮ້າຍແຮງ, ປະຊາຊົນທຸກຍາກລໍາບາກ, ພວກນາຍທຶນກົດຂີ່ຂູດຮີດຢ່າງໜັກໜ່ວງໂດຍສະເພາະກໍາມະກອນ ເຮັດວຽກມື້ໜຶ່ງ 12-14 ຊົ່ວໂມງ, ສ່ວນຊາວນາຖືກພວກສັກດີນາຍຶດດິນນາໝົດ ແລະ ເກີດສົງຄາມຢ່າງຮ້າຍແຮງລະຫວ່າງຣັດເຊຍກັບຍີ່ປຸ່ນໃນປີ ຄ.ສ 1904.

ດ້ວຍເຫດຜົນດັ່ງກ່າວກໍາມະກອນ ແລະ ຊາວນາໄດ້ພາກັນລຸກຂຶ້ນຕໍ່ສູ້ຕ້ານລັດຖະບານພະເຈົ້າຊາ ພາຍໃຕ້ການນໍາພາຂອງພັກໂບນເຊວິກ, ຂະບວນການຕໍ່ສູ້ທີ່ເດັ່ນກວ່າໝູ່ ແມ່ນຂະບວນກໍາມະກອນຢູ່ເມືອງ ແຊັງເປແຕກສະບວກ. ໃນວັນທີ 9 ກັນຍາ 1905 ກໍາມະກອນຈໍານວນ 140.000 ຄົນໄດ້ພາກັນເອີ້ນຂະບວນມຸ່ງໜ້າໄປສູ່ວັງລະດູໜາວເພື່ອຍື່ນໃບສະເໜີຕໍ່ພະເຈົ້າຊາໃຫ້ດໍາເນີນການແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນ. ແຕ່ພະເຈົ້າຊາບໍ່ໄດ້ໃຫ້ຄວາມຮ່ວມມືໃນການແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນຊໍ້າບໍ່ໜໍາຍັງອອກຄໍາສັ່ງໃຫ້ທະຫານຍິງປືນສຸມໃສ່ຂະບວນປະທ້ວງຢ່າງນອງເລືອດ, ເຮັດໃຫ້ມີຜູ້ຕາຍ ແລະ ຖືກບາດເຈັບ 3.000 ກວ່າ ຄົນ. ວັນນີ້ນັກປະຫວັດສາດເອີ້ນວ່າ ວັນອາທິດນອງເລືອດ". ຕໍ່ມາໄດ້ມີຂະບວນປະທ້ວງເກີດຂຶ້ນອີກ ແລະ ມີຜູ້ເຂົ້າຮ່ວມຫຼາຍກວ່າເກົ່າເຖິງ 40,000 ຄົນອັນປະກອບມີກໍາມະກອນ, ຊາວນາ, ນາຍທຶນ ແລະ ທະຫານກອງທັບເຮືອເຂົ້າຮ່ວມ.

ເດືອນພະຈິກ ປີ ຄ.ສ 1906 ເລນິນ ໄດ້ກັບຄືນປະເທດຣັດເຊຍ, ເພື່ອນໍາພາຂະບວນການປະຕິວັດໂດຍສະເພາະ ແມ່ນການລຸກຂຶ້ນຕໍ່ສູ້ດ້ວຍກໍາລັງປະກອບອາວຸດ, ວັນທີ 5 ທັນວາ ໄດ້ມີຂະບວນນັດຢຸດງານຄັ້ງໃຫຍ່ ແລະການລຸກຂຶ້ນ ຍຶດອໍານາດຢູ່ນະຄອນຫຼວງມົດສະກູ ແລະ ເຂດແຂວງຕ່າງໆ. ໃນຂະນະດຽວກັນສະພາໂຊວຽດ ກໍໄດ້ຮັບການສ້າງຕັ້ງຂຶ້ນໃນຂອບເຂດທົ່ວປະເທດເຊັ່ນກັນ, ແຕ່ຂະບວນການນີ້ໄດ້ດໍາເນີນໄປພາຍໃຕ້ການປາບປາມຢ່າງໂຫດຮ້າຍປ່າເຖື່ອນຂອງທະຫານພະເຈົ້າຊາ ແລະ ສຸດທ້າຍຂະບວນການປະຕິວັດກໍໄດ້ຢຸດຕິລົງ ໃນປີຄ .ສ 1907

ເຖິງວ່າຂະບວນການປະຕິວັດຄັ້ງນີ້ຈະຖືກປະລາໄຊກໍຕາມ, ແຕ່ມັນໄດ້ສົ່ງຜົນສະທ້ອນອັນໃຫຍ່ຫຼວງ ຕໍ່ລະບອບພະເຈົ້າຊາ ໂດຍສະເພາະສາມາດເຂົ້າໃຫ້ລະບອບດັ່ງກ່າວນສະເທືອນໄປທັງລະບົບ, ການປະຕິວັດຄັ້ງນີ້ໄດ້ເປັນການປຸກລະດົມປະຊາຊົນຫຼາຍລ້ານຄົນໃຫ້ລຸກຂຶ້ນຕໍ່ດ້ວຍນໍ້າໃຈຮັກຊາດອັນສູງສົ່ງ ແລະ ຍັງເປັນການທົດສອບຄັ້ງທໍາອິດ ໃນການນໍາເອົາທິດສະດີປະຕິວັດຂອງເລນິນໄປນໍາໃຊ້ເຂົ້າໃນພາກປະຕິບັດຕົວຈິງ ທັງນີ້ເພື່ອເປັນການກະກຽມໃຫ້ແກ່ການປະຕິວັດໃນຄັ້ງຕໍ່ໄປໃຫ້ໄດ້ຮັບໄຊຊະນະ.

## 2. ຂະບວນກຳມະກອນຢູ່ອາເມຣິກາ

ອາເມຣິກາເປັນຊາດຫນຶ່ງທີ່ສ້າງຕັ້ງຂຶ້ນມາບົນພື້ນຖານຂອງທຶນນິຍົມ ເຮັດໃຫ້ອຸດສາຫະກຳກາຍເປັນພື້ນຖານຕົ້ນຕໍຂອງເສດຖະກິດ ແລະ ສັງຄົມ ໃນຕອນທ້າຍຂອງສະຕະວັດທີ XIX ອຸດສາຫະກຳຂອງອາເມຣິກາໄດ້ມີການຂະຫຍາຍຕົວສູງເຮັດໃຫ້ຊົນຊັ້ນກຳມາຊີບຕ້ອງໄດ້ອອກແຮງງານຢ່າງຫນັກ ເພື່ອສະຫນອງໃຫ້ການຂະຫຍາຍຕົວຂອງເສດຖະກິດພາໃຫ້ພວກເຂົາເຈົ້າອອກມາຕໍ່ ຕ້ານກັບຮູບແບບການເຮັດວຽກຕາມໂຮງຈັກ, ໂຮງງານ ແລະ ທວງໃຫ້ມີການກຳນົດເວລາອອກ ແຮງງານໃຫ້ເຫຼືອພຽງ 8 ຊົ່ວໂມງຕໍ່ວັນ, ໂດຍກຳມະກອນຊາວເມືອງຊິກາໂກໄດ້ຮ່ວມກັນນັດຢຸດ ງານມີເຖິງ 350,000 ຄົນ ໃນວັນທີ 1 ເດືອນພຶດສະພາ 1886. ການປະທ້ວງຄັ້ງນີ້ເຮັດໃຫກຳມະກອນ 50.000 ຄົນໄດ້ເຮັດວຽກ 8 ຊົ່ວໂມງຕໍ່ວັນ, ຕໍ່ມາໄດ້ກາຍເປັນມາດຕະຖານສຳລັບການເຮັດວຽກຂອງຊາວຜູ້ອອກແຮງງານໃນທົ່ວໂລກ ແລະ ວັນທີ 1 ເດືອນພຶດສະພາ ກໍ່ໄດ້ກາຍມາເປັນວັນ ກຳມະກອນສາກົນເທົ່າທຸກວັນນີ້.

## 3. ສາກົນທີ II

ເມື່ອສັງຄົມນາຍທຶນຂະຫຍາຍຕົວສູງຂຶ້ນຄວາມຂັດແຍ່ງລະຫວ່າງນາຍທຶນ ແລະ ຊາວກຳມະຊີບກໍສູງຂຶ້ນເຊັ່ນກັນ, ເຖິງແມ່ນວ່າສາກົນທີ 1 ໄດ້ພັງທະລາຍລົງໃນ ປີ ຄ.ສ 1&19 ກໍຕາມແຕ່ຂະບວນການເຄື່ອນໄຫວຂອງຊົນຊັ້ນກຳມະຊີບຍິ່ງນັບມື້ເຕີບໃຫຍ່ຂະຫຍາຍຕົວຢ່າງກວ້າງຂວາງ, ເນື່ອງນິດລຽນຕິດ ແລະ ສິ່ງທີ່ສຳຄັນນັ້ນຄື ມີທິດທາງການສ້າງຄວາມເປັນເອກະພາບໃນການຕໍ່ສູ້ຂອງຊາວກຳມາຊີບ, ໄດ້ຮຽກຮ້ອງໃຫ້ການຈັດຕັ້ງຂອງຊົນຊັ້ນກຳມະຊີບໃນເມື່ອກ່ອນນັ້ນໃຫ້ກັບຄືນມາມີບົດບາດ ແລະ ເປັນບ່ອນປະສານງານໃຫ້ກັບຂະບວນການຕໍ່ສູ້ອີກຄັ້ງໃຫມ່.

ມາຮອດວັນທີ 14 ເດືອນກໍລະກົດ 1889 ສາກົນທີ II ໄດ້ຮັບການສ້າງຕັ້ງຂຶ້ນທີ່ນະຄອນ ຫຼວງປາຣີ, ໂດຍມີຜູ້ແທນເຂົ້າຮ່ວມ 395 ຄົນ ທີ່ຕາງຫນ້າໃຫ້ກຳມະກອນປະເທດຕ່າງໆໃນທະວີບເອີຣົບ, ກອງປະຊຸມໄດ້ຕົກລົງເຫັນດີໃນບັນຫາຕ່າງໆດັ່ງນີ້:

- ໄດ້ຮັບຮອງເອົາຄວາມຈຳເປັນຂອງຂະບວນການກຳມະກອນ ແລະ ສ້າງຕັ້ງພັກສັງຄົມນິຍົມຂຶ້ນເພື່ອຕໍ່ສູ້ທາງການເມືອງ ແລະ ຍຶດອຳນາດມາໃຫ້ຊົນຊັ້ນກຳມະກອນ.
- ການຕໍ່ສູ້ທາງດ້ານເສດຖະກິດຕ້ອງຕິດພັນກັບການຕໍ່ສູ້ທາງດ້ານການເມືອງ.
- ເສັ້ນທາງເດີນຂອງລັດທິສັງຄົມນິຍົມແມ່ນເປົ້າຫມາຍສຸດທ້າຍຂອງຊົນຊັ້ນກຳມະກອນ.
- ໃຫ້ທຸກໆປະເທດສ້າງຕັ້ງກອງທັບປະກອບອາວຸດທີ່ມາຈາກປະຊາຊົນ.
- ຕົກລົງເອົາວັນທີ 1 ເດືອນພຶດສະພາເປັນວັນກຳມະກອນສາກົນ.

ພາຍຫຼັງການເສຍຊີວິດຂອງທ່ານ ອັງແກນ ໃນປີ ຄ.ສ 1895 ບັນດາປະເທດສະມາຊິກສາ ກົນທີ II ໄດ້ໄຂກອງປະຊຸມຂຶ້ນທີ່ ລອນດອນໃນປີ ຄ.ສ 1896 ເນື່ອງຈາກຂາດຜູ້ທີ່ເດັດດ່ຽວ ແລະ ຍຶດຫມັ້ນໃນເຈດຈຳນົງຂອງຊົນຊັ້ນກຳມະກອນ, ເຮັດໃຫ້ພວກທີ່ສວຍໂອກາດດຳເນີນການເຄື່ອນໄຫວທີ່ຮຸນແຮງເຮັດໃຫ້ລັດທິມາກ-ອັງແກນຖືກໃສ່ຮ້າຍປ້າຍສີ ແລະ ຜູ້ນຳສາກົນທີ່ II ຝ່າຍເປຍລະມັນກໍຖືເບົາຕໍ່ການຕ້ານລັດທິສວຍໂອກາດຄື: ກາວສະກີ ແລະ ແບກສະຕັງ ພວກນີ້ໄດ້ໂຈມຕີ ລັດທິມາກ ແລະ ບໍ່ຮັບຮູ້ການຕໍ່ສູ້ຂອງຊາວກຳມະກອນ. ເມື່ອລັດທິຈັກກະພັດນິຍົມຢູ່ເອີຣົບຂະຫຍາຍຕົວແຮງເຮັດໃຫ້ພາລະບົດບາດຂອງສາກົນທີ່ II ຄ່ອຍໆຫຼຸດຫນ້ອຍຖອຍລົງ, ມີທ່າອຽງໄປຮັບໃຊ້ສິດຜົນປະໂຫຍດຂອງຊົນຊັ້ນນາຍທຶນໃນທີ່ສຸດກໍແຕກມ້າງໃນປີ ຄ.ສ 1914.

ເຖິງແມ່ນວ່າສາກົນທີ່ II ຈະສິ້ນສຸດລົງແລ້ວກໍຕາມ, ແຕ່ກໍໄດ້ປະກອບສ່ວນອັນສຳຄັນໃນ ການເສີມສ້າງໃຫ້ສັງຄົມເຫັນໄດ້ເຖິງຄວາມສຳຄັນຂອງຊົນຊັ້ນຊາວຜູ້ອອກແຮງງານ. ນອກນີ້, ຍັງ ໄດ້ຊີ້ບອກແນວທາງເດີນໃຫ້ກຳມະກອນທົ່ວໂລກສຳພັນເຂົ້າກັນ ເພື່ອປົກປັກຮັກສາສິດຜົນປະ ໂຫຍດຂອງຊາວຜູ້ອອກແຮງງານ ແລະ ສິດເສລີພາບໃນສັງຄົມ, ສົ່ງເສີມຂະບວນການກຳມະກອນ ແລະ ຂະບວນການປົດປ່ອຍຊາດເພື່ອຕ້ານກັບແນວຄວາມຄິດຂອງລັດທິຈັກກະພັດນິຍົມ

# ບົດທີ9

# ທະວີບອາຊີໃນຕອນທ້າຍສະຕະວັດທີ XIX ຫາ ຕົ້ນສະຕະວັດທີ XX

## 1.ປະເທດຍີ່ປຸ່ນ

ໃນໄລຍະກາງສະຕະວັດທີ XX, ຍີ່ປຸ່ນເປັນປະເທດສັກດີນາທີ່ມີເສດຖະກິດຂະຫຍາຍຕົວໄວພໍສົມຄວນ ເມື່ອປຽບທຽບກັບບັນດາປະເທດຕ່າງໆໃນຂົງເຂດອາຊີ. ແຕ່ວ່າຊີວິດການເປັນຢູ່ຂອງຊາວນາ ແລະ ຊ່າງຫັດຖະກຳ ປະສົບກັບຄວາມທຸກຍາກລຳບາກທີ່ສຸດເນື່ອງຈາກພວກເຂົາເຫຼົ່ານັ້ນໄດ້ຕົກຢູ່ໃຕ້ກົດຫມາຍແຫ່ງການກົດຂີ່ຂູດຮີດ ຢ່າງຫນັກຫນ່ວງຂອງສັກດີນາ.

### 1.1 ການປະຮູບເມຈິ

ໃນປີ ຄ.ສ 1867-1868, ຍີ່ປຸ່ນ ໄດ້ເກີດມີກຳລັງຄົນໃຫມ່ໃນສັງຄົມພວກເຈົ້າທີ່ດິນໄດ້ກາຍມາເປັນຊົນຊັ້ນ ນາຍທຶນໃຫມ່. ເຈົ້າຈັກກະພັດເມຈິ ໄດ້ອີງໃສ່ກຳລັງດັ່ງກ່າວ ເພື່ອດຳເນີນການປະຕິຮູບລະບົບເສດຖະກິດ-ສັງຄົມ ພາຍໃນປະເທດ ເຊິ່ງເອີ້ນວ່າການປະຕິຮູບເມຈິ. ການປະຕິຮູບດັ່ງກ່າວໄດ້ມີການປ່ຽນແປງຫຼາຍດ້ານເຊັ່ນ: ມີການລົບ ລ້າງລະບອບຂ້າທາດ, ລັດໄດ້ສົ່ງເສີມນາຍທຶນໃຫມ່ຂະຫຍາຍອຸດສາຫະກຳ, ນຳເອົາວິທະຍາສາດ-ເຕັກນິກ ທີ່ ກ້າວຫນ້າຂອງເອີຣົບເຂົ້າມານຳໃຊ້, ອະນຸຍາດໃຫ້ອາເມຣິກາ ເຂົ້າມາລົງທຶນໃນປະເທດ ແລະ ການກໍ່ສ້າງກຳລັງ ທະຫານໃຫ້ມີຄວາມເຂັ້ມແຂງ.

ການປະຕິຮູບຄັ້ງນີ້ເປັນການນຳເອົາຜົນປະໂຫຍດອັນໃຫຍ່ຫຼວງມາໃຫ້ແຕ່ຊົນຊັ້ນເທິງເທົ່ານັ້ນ, ກົງກັນຂ້າມ ປະຊາຊົນຊາວຜູ້ອອກແຮງງານຈະບໍ່ໄດ້ຮັບຜົນປະໂຫຍດແຕ່ປະການໃດ, ສະນັ້ນ, ພວກເຂົາຈຳຕ້ອງຂາຍແຮງງານໃຫ້ ກັບເຈົ້າທີ່ດິນ ແລະ ຂາຍແຮງງານໃຫ້ກັບນາຍທຶນໃນເມືອງໃຫຍ່. ແຕ່ຊີວິດຄວາມເປັນຢູ່ຂອງພວກເຂົາກໍບໍ່ມີຫຍັງດີ ຂຶ້ນ.

ເຖິງວ່າການປະຕິຮູບໃນຄັ້ງນີ້ຍັງມີຫຼາຍຕ້ານຈຳກັດ ແຕ່ມັນກໍເປັນການເປີດເສັ້ນທາງ ໃຫ້ຍີ່ປຸ່ນສາມາດ ພັດທະນາເສດຖະກິດ-ສັງຄົມ ໃຫ້ຂະຫຍາຍຕົວກ້າວຂຶ້ນສູ່ລັດທິທຶນນິຍົມໄດ້ໃນລະດັບຫນຶ່ງທັງນີ້ກໍເພື່ອຫຼີກລ້ຽງ ການຕົກເປັນຫົວເມືອງຂຶ້ນຂອງເອີຣົບ ດັ່ງນັ້ນ, ຈຶ່ງເວົ້າໄດ້ວ່າ ທາດແທ້ຂອງການປະຕິຮູບເມຈິແມ່ນການປະຕິວັດຂອງ ນາຍທຶນຮູບແບບຫນຶ່ງຂອງປະເທດຍີ່ປຸ່ນ.

### 1.2 ຍີ່ປຸ່ນກ້າວຂຶ້ນເປັນລັດທິຈັກກະພັດ

ການປະຕິຮູບຂອງເມຈິ ໃນໄລຍະກາງສະຕະວັດທີ XIX, ໄດ້ສ້າງເງື່ອນໄຂໃຫ້ລັດທຶນນິຍົມມີການ ຂະຫຍາຍຕົວຢ່າງວອງໄວຢູ່ໃນປະເທດຍີ່ປຸ່ນ ແລະ ກາຍເປັນທ່າແຮງກ້າວສູ່ລັດທິຈັກກະພັດນິຍົມ ເນື່ອງຈາກພວກ ນາຍທຶນໄດ້ລົງທຶນເຂົ້າໃສ່ການກໍ່ສ້າງອຸດສາຫະກຳຫນັກ ເປັນຕົ້ນແມ່ນທາງດ້ານອຸດສາຫະກຳພະລັງງານໄຟຟ້າ ແລະ ອຸດສາຫະກຳລວມສູນໄດ້ແກ່ການຄ້າ ແລະ ການທະນາຄານ. ບໍລິສັດຜູກຂາດຂອງນາຍທຶນໄດ້ເກີດຂຶ້ນຫຼາຍບໍລິສັດ,

ໃນນັ້ນມີສອງບໍລິສັດ ໃຫຍ່ກວ່າຫມູ່ເຊັ່ນ ບໍລິສັດມິດຊູບິຊິ ແລະ ບໍລິສັດມິດຊູ ເຊິ່ງທັງສອງບໍລິສັດນີ້ໄດ້ດຳເນີນທຸລະກິດກວມເອົາການທະນາຄານ, ບໍ່ຖ່ານຫີນ, ໂຮງງານຕໍ່າແຜນ, ທາງລົດໄຟ ແລະ ໂຮງງານຜະລິດກຳປັ່ນ. ດັ່ງນັ້ນ, ທັງສອງບໍລິສັດ ຈຶ່ງມີບົດບາດ ສຳຄັນທັງທາງດ້ານເສດຖະກິດ ແລະ ການເມືອງໃນປະເທດຍີ່ປຸ່ນ.

ນອກຈາກນັ້ນ, ນາຍທຶນຍີ່ປຸ່ນຍັງດຳເນີນການບຽດຍຶດເອົາຕະຫຼາດຂອງຈີນ, ເກົາຫຼີ ແລະ ມີການປະທະກັບບັນດາປະເທດຈັກກະພັດອື່ນໆ ເປັນຕົ້ນແມ່ນກັບປະເທດຣັດເຊຍ ໃນປີ ຄ.ສ 1904-1905 ເຊິ່ງ ຍີ່ປຸ່ນເປັນຝ່າຍຊະນະຈຶ່ງເປັນການສ້າງທ່າແຮງ ຫຼື ອິດທິພົນໃຫ້ກັບປະເທດຍີ່ປຸ່ນໃນການທີ່ຈະດຳເນີນການຮຸກຮານບັນດາປະເທດຕ່າງໆ ດັ່ງນັ້ນ, ຈຶ່ງເວົ້າໄດ້ວ່າ ສົງຄາມຍີ່ປຸ່ນ-ຣັດເຊຍ ເປັນສົງຄາມລະຫວ່າງຈັກກະພັດຄັ້ງທຳອິດ ເພື່ອແຍ່ງດິນແດນລະຫວ່າງປະເທດມະຫາອຳນາດ.

**1.3.ການຕໍ່ສູ້ຂອງປະຊາຊົນຊາວຜູ້ອອກແຮງງານຍີ່ປຸ່ນ**

ເມື່ອລັດທິທຶນນິຍົມມີການຂະຫຍາຍຕົວໄວເທົ່າໃດ, ປະຊາຊົນຜູ້ອອກແຮງງານກໍຍິ່ງຖືກກົດຂີ່ຂູດຮີດຢ່າງຫນັກຫນ່ວງຫຼາຍເທົ່ານັ້ນ ໂດຍສະເພາະພວກເຂົາຕ້ອງເຮັດວຽກຫນັກຮອດມື້ຫນຶ່ງ 12-14 ຊົ່ວໂມງ. ເງິນເດືອນຕ່ຳກວ່າກຳມະກອນໃນປະເທດອັງກິດ ແລະ ອາເມຣິກາຫຼາຍເທົ່າເພາະບໍ່ມີກົດຫມາຍຮັບປະກັນຜົນປະໂຫຍດຂອງກຳມະກອນ. ດັ່ງນັ້ນ, ພວກເຂົາຈຶ່ງພ້ອມກັນລຸກຂຶ້ນຕໍ່ສູ້ກັບຊົນຊັ້ນນາຍທຶນຢ່າງແຂງແຮງ.

ໃນປີ ຄ.ສ 1880 ກຳມະກອນຍີ່ປຸ່ນ ໄດ້ຈັດຕັ້ງອົງການກຳມະບານ ແລະ ສະຫະພັນແຮງງານ ເພື່ອຈັດຕັ້ງແລະ ນຳພາຂະບວນການຕໍ່ສູ້ໃຫ້ເປັນຮູບປະທຳຂຶ້ນ, ດັ່ງນັ້ນ, ນັບແຕ່ປີ 1890 ເປັນຕົ້ນມາ ຈຶ່ງເກີດມີຂະບວນການນັດຢຸດງານ ແລະ ການປະທ້ວງຂອງກຳມະກອນໄດ້ແຜ່ລາມໄປທົ່ວປະເທດຢ່າງໄວວາ, ໃນຂະນະດຽວກັນນັກປະຕິວັດແຊນກາຕະອີອາມາໄດ້ນຳເອົາລັດທິສັງຄົມ ວິທະຍາສາດເຂົ້າມາເຜີຍແຜ່ໃນຂະບວນກຳມະກອນຍີ່ປຸ່ນປີ ຄ.ສ 1901 ພັກສັງຄົມປະຊາທິປະໄຕຍີ່ປຸ່ນ ໄດ້ຮັບການສ້າງຕັ້ງຂຶ້ນ.

ການປະຕິວັດຣັດເຊຍ ປີ ຄ.ສ 1905, ໄດ້ສົ່ງຜົນສະທ້ອນອັນໃຫຍ່ຫຼວງຕໍ່ຂະບວນກຳມະກອນຍີ່ປຸ່ນ ໂດຍສະເພາະໄດ້ເຮັດໃຫ້ຂະບວນຂອງກຳມະກອນມີການຂະຫຍາຍຕົວ ແລະ ມີການເຄື່ອນໄຫວຢ່າງແຂງແຮງເຊັ່ນ: ພວກເຂົາເຈົ້າໄດ້ຕໍ່ສູ້ຕ້ານການເກັບພາສີອາກອນ ແລະ ຄ່າຄອງຊີບແພງຢ່າງເປັນຂະບວນ, ແຕ່ຂະບວນດັ່ງກ່າວຖືກລັດຖະບານຂອງເຈົ້າຈັກກະພັກດຳເນີນການປາບປາມຢ່າງຫນັກຫນ່ວງ ຈຶ່ງເຮັດໃຫ້ຂະບວນການດັ່ງກ່າວໄດ້ຢຸດຕິລົງຊົ່ວຄາວ.

## 2. ປະເທດຈີນ

ໃນໄລຍະທ້າຍສະຕະວັດທີ XVII, ປະເທດຈີນພາຍໃຕ້ແອກປົກຄອງຂອງລາຊະວົງແມນຈູໄດ້ປະສົບກັບວິກິດການຢ່າງຮ້າຍແຮງໃນຫຼາຍດ້ານເຊັ່ນ: ອຳນາດສູນກາງມີຄວາມອ່ອນເພຍເປ້ຍລ່ອຍ, ຜົນຜະລິດທາງກະສິກຳຕົກຕໍ່າ, ຊາວນາຖືກຍຶດດິນນາ ແລະ ຖືກເກັບພາສີຢ່າງຫນັກຫນ່ວງ, ລັດຖະບານມີການຫ້າມການພົວພັນການຄ້າກັບຕ່າງປະເທດ ເຊິ່ງບັນຫາທີ່ຫນັກຫນ່ວງອີກຢ່າງຫນຶ່ງສຳລັບປະເທດຈີນ, ໃນຂະນະນັ້ນກໍຄືການເກີດສົງຄາມຢາຝິ່ນກັບອັງກິດໃນປີ ຄສ 1840, ຜ່ານສົງສາມຄັ້ງນີ້ ຈີນເປັນຝ່າຍປະລາໄຊ ຈຶ່ງຍອມເຊັນສັນຍາ ໂດຍການອະນຸຍາດໃຫ້ອັງກິດເຂົ້າມາທຳການຄ້າເສລີໃນຈີນ.

ເນື່ອງຈາກສະພາບພາຍໃນປະເທດມີຄວາມຫຍຸ້ງຍາກສັບສົນ, ປະຊາຊົນຖືກສັກດີນາພາຍໃນ ແລະ ນາຍທຶນຕ່າງດ້າວກົດຂີ່ຂູດຮີດຢ່າງໜັກໜ່ວງ. ດັ່ງນັ້ນ, ຊາວນາຈຶ່ງໄດ້ລຸກຂຶ້ນຕໍ່ສູ້ຢ່າງແຂງແຮງ ແລະ ລຽນຕິດ, ໃນນັ້ນ ຂະບວນການລຸກຂຶ້ນຕໍ່ສູ້ທີ່ເດັ່ນກວ່າໝູ່ແມ່ນຂະບວນຂອງຊາວນາຢູ່ແຂວງກວາງຊີໃນ ປີ ຄ.ສ 1850 ເຊິ່ງພວກເຂົາເຈົ້າສາມາດສ້າງຕັ້ງເປັນລັດເອກະລາດໜຶ່ງຂຶ້ນຢູ່ທາງພາກໃຕ້ຂອງຈີນ ໂດຍມີ ຊື່ວ່າ "ໄຕພິງທຽນກົວ". ການສ້າງຕັ້ງລັດເອກະລາດດັ່ງກ່າວນັ້ນຂຶ້ນມາກໍເພື່ອສ້າງຄວາມຢູ່ດີກິນດີໃຫ້ກັບປະຊາຊົນຈີນຜູ້ທຸກຍາກລຳບາກນັ້ນເອງ. ແຕ່ສຸດທ້າຍກໍຖືກພວກນາຍທຶນຕາເວັນຕົກສົມທົບກັບສັກດີນາ ດຳເນີນການປາບປາມຢ່າງໂຫດຮ້າຍປ່າເຖື່ອນເຮັດໃຫ້ຂະບວນການຕໍ່ສູ້ດັ່ງກ່າວຖືກດັບມອດລົງໃນປີ ຄ.ສ 1864.

ທ້າຍສະຕະວັດທີ XIX ຫາ ຕົ້ນສະຕະວັດທີ່ xx, ໄດ້ເກີດມີກຸ່ມນັກຮຽນຮູ້ປັນຍາຊົນກ້າວໜ້າທີ່ມີນ້ຳໃຈຮັກຊາດອັນສູງສົ່ງຫຼາຍຄົນເຊັ່ນ: ຄາງຫົວວີ, ເລື່ອງຄ້າຍຊຽວ ແລະ ຜູ້ອື່ນໆ ໄດ້ນຳພາຂະບວນປະຕິຮູບທາງດ້ານການທະຫານ, ການເມືອງ, ເສດຖະກິດ, ວັດທະນະທຳທາງສັງຄົມ. ໃນປີ ຄ.ສ 1900 ການຈັດຕັ້ງຂອງຊາວນາໄດ້ຮັບການກໍ່ຕັ້ງຂຶ້ນເອີ້ນວ່າ ອີ່ເຫື້ທວານ ເຊິ່ງອົງການນີ້ໄດ້ບຸກໂຈມຕີສະຖານທູດຕ່າງໆຂອງບັນດາປະເທດນາຍທຶນທີ່ນະຄອນຫຼວງປັກກິ່ງ ແຕ່ກໍຖືກກອງທະຫານຂອງພວກເຂົາ (ຣັດເຊຍ, ອັງກິດ, ຝຣັ່ງ, ຍີ່ປຸ່ນ, ເຢຍລະມັນ, ອີຕາລີ, ໂອຕຣິດ ແລະ ອາເມຣິກາ) ທີ່ເຂົ້າມາຍຶດຄອງ ຫຼື ຕັດແບ່ງປະເທດຈີນນັ້ນດຳເນີນການປາບປາມຢ່າງນອງເລືອດ.

ເນື່ອງຈາກໄດ້ຮັບຜົນສະທ້ອນຈາກການປະຕິວັດຣັດເຊຍ ປີ ຄ.ສ 1907 ຂະບວນຮັກຊາດຂອງ ປະຊາຊົນຈີນຍັງສືບຕໍ່ໃນການຕໍ່ສູ້ຕ້ານສັກດີນາ ແລະ ຈັກກະພັດຕ່າງດ້າວຢ່າງບໍ່ຢຸດຢັ້ງ. ໃນປີ ຄ.ສ 1905 ທ່ານ ຊຸນຍັດເຊັນໄດ້ສ້າງຕັ້ງສະມາຄົມຈີນຂຶ້ນເພື່ອໂຄ່ນລົ້ມລາຊະວົງແມນຈູ ແລະ ຟື້ນຟູປະເທດຈີນຄືນໃໝ່.

ໃນຊຸມປີ ຄ.ສ 1906-1908, ສະມາຄົມໄດ້ນຳພາ 10 ຂະບວນການລຸກຂຶ້ນຕ້ານລາຊະວົງແມນນູ ແຕ່ກໍຖືກປະລາໄຊ. ມາເຖິງປີ ຄ.ສ 1911, ສະມາຄົມຈີນ ໄດ້ປຸກລະດົມຂະບວນການຕໍ່ສູ້ຂອງປະຊາຊົນຂຶ້ນ ຢູ່ອູຊາງ ແລະ ສາມາດຍາດໄດ້ໄຊຊະນະ. ຈາກນັ້ນຂະບວນໄດ້ແຜ່ລາມໄປທົ່ວປະເທດ ແລະ ຕໍ່ມາລັດຖະບານຊົ່ວຄາວກໍໄດ້ຮັບການສ້າງຕັ້ງຂຶ້ນຢູ່ນານກິງ ເຊິ່ງທ່ານ ຊຸນຍັດເຊັນໄດ້ຖືກຄັດເລືອກເປັນ ປະທານາທິບໍດີ. ແຕ່ຜູ້ນຳພາການປະຕິວັດສ່ວນຫຼາຍແມ່ນພວກນາຍທຶນ ຈຶ່ງເກີດມີຄວາມຢ້ານວ່າຂະບວນການຕໍ່ສູ້ຂອງມະຫາຊົນຈະກ້າວຂຶ້ນສູ່ລະດັບສູງ ຈຶ່ງຟ້າວຟັ່ງເຈລະຈາກັບລາຊະສຳນັກແມນຢູ ໃນຂະນະດຽວກັນພວກຈັກກະພັດໄດ້ບັງຄັບໃຫ້ລັດຖະບານຊົ່ວຄາວ ຈຳຕ້ອງມີການປະນີປະນອມກັນລະຫວ່າງສາມຝ່າຍ (ລັດຖະບານຊົ່ວຄາວ, ລາຊະສຳນັກແມນຈຸ ແລະ ພວກຈັກກະພັດ). ຜົນສຸດທ້າຍ ກໍຍົກໃຫ້ຢວນຊືໄຂ່ (ຝ່າຍລາຊະສຳນັກແມນຈູ) ເປັນປະທານາທິບໍດີ, ສ່ວນຊຸນຍັດເຊັນຈຳຕ້ອງລາອອກຈາກຕຳແໜ່ງເປັນອັນວ່າຂະບວນການປະຕິວັດຊຽງໄຮໄດ້ສິ້ນສຸດລົງ, ອຳນາດ ແລະ ຫາດແທ້ຂອງການປະຕິວັດໃນໄລຍະນັ້ນ ກໍຄືການປະຕິວັດທຶນນິຍົມ ເຊິ່ງບໍ່ສາມາດແກ້ໄຂບັນຫາຂອງປະຊາຊົນຜູ້ອອກແຮງງານໄດ້ ແລະ ໃນທີ່ສຸດປະເທດຈີນກໍຍັງຕົກເປັນປະເທດເຄິ່ງເມືອງຂຶ້ນຂອງບັນດາປະເທດຈັກກະພັດຕ່າງດ້າວເພີ່ມເຕີມ.

## 3. ປະເທດອິນເດຍ

ອິນເດຍເປັນປະເທດໃຫຍ່ ແລະ ເປັນປະເທດທີ່ມີປະຊາກອນຫຼາຍເປັນອັນດັບ 2 ໃນໂລກ. ພາຍໃນປະເທດ ມີຄວາມອຸດົມ ຮັ່ງມີໄປດ້ວຍຊັບພະຍາກອນທຳມະຊາດ ແລະ ຮີດຄອງປະເພນີ-ວັດທະນະທຳ ມາຕັ້ງແຕ່ສະໄໝບູຮານ, ໃນກາງສະຕະວັດທີ XIX , ອິນເດຍ ໄດ້ຕົກຢູ່ໃຕ້ແອກປົກຄອງຂອງພວກລ່າເມືອງຂຶ້ນອັງກິດ, ປະຊາຊົນ ຈຶ່ງຖືກກົດຂີ່ຂູດຮີດຢ່າງໜັກໜ່ວງໃນທຸກດ້ານ.ດ້ວຍເຫດນັ້ນ, ປະຊາຊົນອິນເດຍ ຈຶ່ງໄດ້ລຸກຂຶ້ນຕໍ່ຕ້ານ

ກັບພວກເຂົາຕັ້ງແຕ່ເຫນືອເຖິງພາກກາງຂອງປະເທດ, ເຖິງວ່າຂະບວນການຕໍ່ສູ້ຂອງປະຊາຊົນອິນເດຍໃນໄລຍະນີ້ຈະຖືກປາບປາມຢ່າງຫນັກ ແລະ ຖືກປະລາໄຊກໍຕາມ ແຕ່ຂະບວນການກໍຍັງຄົງສືບຕໍ່ໃນການຕໍ່ສູ້ຕ້ານກັບຈັກກະພັດຢ່າງລຽນຕິດ




ແຜນທີ່ຂະບວນການລຸກຂຶ້ນຕໍ່ສູ້ໃນປີ 1857-1859 ຢູ່ອິນເດຍ

ທ້າຍສະຕະວັດທີ xxx ຫາຕົ້ນສະຕະວັດທີXX, ຈັກກະພັດອັງກິດ ໄດ້ເພີ່ມທະວີການກົດຂີ່ຂູດຮີດປະຊາຊົນອິນເດຍຢ່າງຫນັກຫນ່ວງ ໂດຍສະເພາະ ໃນປີ .ສ 1890, ປະຊາຊົນອິນເດຍຈຳຕ້ອງເສຍຊີວິດຈາກຄວາມອຶດຫິວເຖິງ 18 ລ້ານຄົນ ຕໍ່ເຫດການດັ່ງກ່າວຈຶ່ງໄດ້ເກີດມີຂະບວນການຕໍ່ສູ້ຂອງປະຊາຊົນ ອິນເດຍ ພາຍໃຕ້ການນຳພາຂອງຊົນຊັ້ນນາຍທຶນ, ປີ ຄ.ສ 1885 ໄດ້ສ້າງຕັ້ງພັກສະມັດຊາແຫ່ງຊາດ ຂຶ້ນເອີ້ນຫຍໍ້ວ່າ ພັກແຫ່ງຊາດ ເຊິ່ງເປັນພັກຂອງຊົນຊັ້ນນາຍທຶນອິນເດຍ ໂດຍພາຍໃນພັກໄດ້ແບ່ງເປັນ 2 ຝ່າຍທີ່ແຕກຕ່າງກັນຄື: ຝ່າຍປະຕິຮູບນິຍົມມີການປະນີປະນອມ ກັບອັງກິດ ແລະ ຝ່າຍຕໍ່ຕ້ານປະຕິຮູບນິຍົມນຳພາໂດຍຕີລັກ ທີ່ໄດ້ປຸກລະດົມ ແລະ ນຳພາຂະບວນກຳມະກອນ, ຊາວນາ ແລະ ປະຊາຊົນອິນເດຍ ລຸກຂຶ້ນຕໍ່ຕ້ານພວກລ່າເມືອງຂຶ້ນອັງກິດ.

ໃນປີ ຄ.ສ 1899, ຂະບວນການຕໍ່ສູ້ທາງດ້ານການເມືອງຄັ້ງທຳອິດຂອງຊົນຊັ້ນກຳມະຊົນ ໄດ້ເກີດຂຶ້ນ ທີ່ເມືອງ ບອມເບ. ມາເຖິງປີ ຄ.ສ 1906, ກຳມະກອນທາງລົດໄຟໃນເມືອງດັ່ງກ່າວໄດ້ນັດຢຸດງານຄັ້ງໃຫຍ່ ແລະ ຫຼັງຈາກນັ້ນ ກໍແຜ່ລາມໄປທົ່ວປະເທດ ເຊິ່ງຂະບວນການຕໍ່ສູ້ໄດ້ມີການປະທະກັບຕຳຫຼວດ ແລະ ທະຫານອັງກິດ, ຂະ

ບວນການທີ່ພົ້ນເດັ່ນກວ່າໝູ່ແມ່ນຂະບວນລຸກຮື້ຂຶ້ນຢູ່ ເປັນຈາບ ທີ່ສາມາດຍຶດໄດ້ສຳນັກງານຕ່າງໆທີ່ສຳຄັນຂອງລັດ , ແຕ່ວ່າໄຊຊະນະດັ່ງກ່າວນັ້ນ ບໍ່ສາມາດຄົງຕົວໄດ້ຕື່ມ ເນື່ອງຈາກ ຖືກພວກລ່າເມືອງຂຶ້ນອັງກິດດຳເນີນການປາບປາມ ຢ່າງປ່າເຖື່ອນທີ່ສຸດ. ປີ ຄ.ສ 1908, ຕີລັກ ຖືກກ່າວປະນາມໂທດ ແລະ ຖືກສົ່ງໄປບ່ອນທີ່ທຸລະກັນດານ, ແຕ່ກະແສ ຟອງປະຕິວັດຍັງຄົງສືບຕໍ່ແຜ່ລາມໄປໃນທົ່ວປະເທດ ແລະ ນ້ຳໃຈຮັກຊາດຂອງປະຊາຊົນອິນເດຍ ກໍຍັງລຸກໄຫມ້ເປັນ ແປວຢູ່ໃນຫົວໃຈຂອງຄົນຮັກຊາດອິນເດຍທຸກຄົນ.

## 4. ປະເທດຕ່າງໆໃນອາຊີອາຄະເນ

ອາຊີອາຄະເນເປັນຂົງເຂດທີ່ມີອະລິຍະທຳມາຕັ້ງແຕ່ສະໄຫມດຶກດຳບັນລວມທັງເປັນດິນແດນ ອຸດົມຮັ່ງມີທີ່ ເຕັມໄປດ້ວຍຊັບໃນດິນສິນໃນນ້ຳ ແລະ ມີທີ່ຕັ້ງທາງດ້ານຍຸດທະສາດທີ່ສຳຄັນອີກດ້ວຍ. ດ້ວຍເຫດຜົນດັ່ງກ່າວ ຂົງເຂດນີ້ຈຶ່ງກາຍເປັນທີ່ສົນໃຈຂອງພວກລ່າອານານິຄົມ (ລ່າເມືອງຂຶ້ນ) ຕາເວັນຕົກທັງຫຼາຍ ແລະ ພວກເຂົາໄດ້ພາກັນ ຫຼັ່ງໄຫຼເຂົ້າມາຮຸກຮານ ແລະ ຍຶດຄອງປະເທດເຫຼົ່ານັ້ນໃຫ້ກາຍເປັນຫົວເມືອງຂຶ້ນເພື່ອຫວັງຈະໄດ້ກອບໂກຍເອົາຊັບ ສິນບັດ, ແບ່ງເຂດການປົກຄອງ ແລະ ເປັນຕະຫຼາດ ເພື່ອຈຳໜ່າຍສິນຄ້າຂອງພວກເຂົາເຊັ່ນ:

ປະເທດອິນໂດເນເຊຍເປັນປະເທດທຳອິດ ໃນອາຊີອາຄະເນທີ່ໄດ້ຕົກເປັນຕົ້ນເມືອງຂຶ້ນຂອງໂຮນລັງ Hollande.ໃນທ້າຍສະຕະວັດທີ XIX ຫາຕົ້ນ ສະຕະວັດທີ XX , ເກີດມີຂະບວນການຕໍ່ສູ້ປົດປອຍຊາດຂອງ ປະຊາຊົນຜູ້ຮັກຊາຕຢູ່ບັນດາປະເທດຕ່າງໆ ໃນຂົງເຂດນີ້ຢ່າງຫຼວງຫຼາຍ. ໃນປີ ຄສ 1905, ຢູ່ປະເທດອິນໂດເນເຊຍ ໄດ້ສ້າງຕັ້ງອົງການກຳມະບານ ແລະ ໄດ້ນຳເອົາທິດສະດີມາກ-ເລນິນ ເຂົ້າມາເຜີຍແຜ່ຢ່າງກວ້າງຂວາງຢູ່ພາຍໃນ ປະເທດ.

ໃນປະເທດຟີລິບປິນ ໄດ້ເກີດມີຂະບວນການຕໍ່ສູ້ຕ້ານການປົກຄອງຂອງຈັກກະພັດອາເມຣິກາຢ່າງ ກວ້າງຂວາງ ແລະ ຂະບວນການນີ້ໄດ້ດຳເນີນໄປຢ່າງເຂັ້ມແຂງ ແລະ ດຸເດືອດ ເຊິ່ງມີຜູ້ຮັກຊາດຫຼາຍພັນຄົນເສຍສະຫຼະ ຊີວິດ ເພື່ອປະເທດຊາດຢ່າງພິລະອາດຫານ.

ບັນດາປະເທດໃນແຫຼມອິນດູຈີນ ໄດ້ເກີດມີຫຼາຍຂະບວນການຕໍ່ສູ້ ແລະ ອົງການຈັດຕັ້ງຮັກຊາດ ເພື່ອຈັດ ຕັ້ງ ແລະ ນຳພາຂະບວນການຕໍ່ສູ້ຕ້ານພວກຈັກກະພັດລ່າເມືອງຂຶ້ນທັງເກົ່າ ແລະ ໃຫມ່. ປະເທດຫວຽດນາມ ໄດ້ ສ້າງຕັ້ງພັກກອມມູນິດຫວຽດນາມ, ຕໍ່ມາປ່ຽນເປັນພັກກອມມູນິດອິນດູຈີນ (ລວມມີ ຫວຽດນາມ, ລາວ ແລະ ກຳປູ ເຈຍ) ພາຍໃຕ້ການນຳພາຂອງ ປະທານ ໂຮ່ຈິມິນ, ປະຊາຊົນ ຫວຽດນາມ ໄດ້ຍຶດອຳນາດ ແລະ ປະກາດສ້າງຕັ້ງ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມຂຶ້ນ ໃນວັນທີ 2.9.1945.

ປະເທດລາວ ໃນເບື້ອງຕົ້ນໄດ້ມີການສ້າງຕັ້ງພັກກອມມູນິດຮ່ວມກັບຫວຽດນາມ ແລະ ກຳປູເຈຍ. ຕໍ່ມາໄດ້ ແຍກອອກເປັນເອກະລາດໂດຍມີຊື່ວ່າ: ພັກປະຊາຊົນລາວ ( 1955) ແລະ ປ່ຽນມາເປັນພັກປະຊາຊົນ ປະຕິວັດລາວ ( 1972) ນອກນັ້ນ ຍັງມີອົງການຈັດຕັ້ງທາງດ້ານການເມືອງທີ່ຮັກຊາດອື່ນໆຄື: ແນວລາວ ອິດສະຫຼະຕໍ່ມາປ່ຽນເປັນ ແນວລາວຮັກຊາດ ແລະ ປັດຈຸບັນແມ່ນແນວລາວສ້າງຊາດ.

ພິເສດສຸດບັນດາປະເທດໃນແຫຼມອິນດູຈີນໄດ້ຜູກແໜ້ນຄວາມສາມັກຄີຄຽງບ່າຄຽງໄຫຼ່ກັນຕໍ່ສູ້ ເພື່ອຄວາມ ເປັນເອກະລາດ ແລະ ອິດສະລະພາບຂອງໃຜລາວຈົນໄດ້ຮັບໄຊຊະນະຢ່າງສົມບູນໃນຊຸມປີ ຄ.ສ 1975.

# ບົດທີ 10

# ສົງຄາມໂລກຄັ້ງທີ 1 ແລະ ການປະຕິວັດເດືອນຕຸລາຣັດເຊຍ

## 1. ສາເຫດ ແລະ ທາດແທ້ຂອງສົງຄາມໂລກຄັ້ງທີ1

ໃນໄລຍະທ້າຍສະຕະວັດທີ XIX ຫາຕົ້ນສະຕະວັດທີ່ XX, ລັດທິທຶນນິຍົມໄດ້ຂະຫຍາຍຕົວ ເຖິງຈຸດສູງສຸດຈົນກາຍເປັນຈັກກະພັດນິຍົມ. ແຕ່ການຂະຫຍາຍຕົວນັ້ນບໍ່ມີຄວາມດຸ່ນດ່ຽງກັນ (ບໍ່ເທົ່າທຽມກັນ, ຈຶ່ງເກີດມີຂໍ້ຂັດແຍ່ງທາງດ້ານສິດຜົນປະໂຫຍດລະຫວ່າງຈັກກະພັດດ້ວຍກັນ ໂດຍສະເພາະການຍາດຊີງລະບົບຫົວເມືອງຂຶ້ນເພື່ອຂຸດຄົ້ນເຂົ້າວັດຖຸດິບ, ຕະຫຼາດຈຳໜ່າຍສິນຄ້າ ແລະ ອື່ນໆ. ການຊ່ວງຊີງ ແລະ ແຂ່ງຂັນກັນທາງດ້ານອາວຸດ, ເຊິ່ງຂໍ້ຂັດແຍ່ງດັ່ງກ່າວບໍ່ສາມາດແກ້ໄຂກັນໄດ້ຢ່າງສັນຕິຈຶ່ງກ້າວໄປເຖິງການໃຊ້ກຳລັງເປັນເຄື່ອງມືໃນການແກ້ໄຂບັນຫາດ້ວຍການສ້າງຕັ້ງ 2 ກຸ່ມ ທາງການທະຫານເຊັ່ນ: ກຸ່ມສຳພັນທະມິດສ້າງຕັ້ງຂຶ້ນໃນປີ ຄ.ສ 1882, ປະກອບມີປະເທດເຢຍລະມັນ, ໂອຕຣິດ-ຮົງກາຣີ ແລະ ອີຕາລີ (1915 ອີຕາລີ ຍ້າຍໄປຢູ່ກຸ່ມສິນທິສັນຍາ), ກຸ່ມສິນທິສັນຍາສ້າງຕັ້ງຂຶ້ນ ໃນ ປີ ຄ.ສ 1907, ລວມມີ: ອັງກິດ, ຝຣັ່ງ ແລະ ຣັດເຊຍ.

ພາຍຫຼັງການສ້າງຕັ້ງສຳເລັດ, ທັງສອງກຸ່ມໄດ້ດຳເນີນການຕໍ່ສູ້ກັນຢ່າງດຸເດືອດທີ່ສຸດ ເພື່ອແບ່ງໂລກ ຄືນໃໝ່, ຊ່ວງຊີງ ແລະ ແຂ່ງຂັນກັນທາງດ້ານອາວຸດ.

ວັນທີ 28 ກໍລະກົດ ປີ ຄ.ສ 1914 ໂອຕຣິດ-ຮົງກາຣີ ໄດ້ບຸກໂຈມຕີແຊກບີ, ວັນທີ 1 ສິງຫາ ເຢຍລະມັນປະກາດສົງຄາມກັບລັດເຊຍ, ວັນທີ 3 ສິງຫາ ປະກາດສົງຄາມກັບຝຣັ່ງ ແລະ ວັນທີ 4 ອັງກິດ ປະກາດສົງຄາມກັບເຢຍລະມັນ, ໃນເບື້ອງຕົ້ນມີພຽງແຕ່ປະເທດມະຫາອຳນາດເທົ່ານັ້ນເຂົ້າຮ່ວມສົງຄາມ, ຕໍ່ມາມີຫຼາຍປະເທດ ແລະເມືອງຂຶ້ນຕ່າງໆຂອງບັນດາປະເທດຈັກກະພັດເຂົ້າຮ່ວມນຳ.

ສົງຄາມໂລກຄັ້ງທີ່ I ຂະຫຍາຍອອກໄປຫຼາຍທະວີບໃນໂລກ, ແຕ່ສະໜາມຣົບຕົ້ນຕໍ ແລະ ດຸເດືອດທີ່ສຸດແມ່ນເກີດຢູ່ທະວີບເອີຣົບ. ສົງຄາມຄັ້ງນີ້ເປັນສົງຄາມຈັກກະພັດຜູ້ຮຸກຮານ ຫຼື ສົງຄາມປຸ້ນສະດົມ, ເປັນສົງຄາມອະທຳສຳລັບຜູ້ທີ່ເຂົ້າຮ່ວມສົງຄາມ. ໃນບັນດາປະເທດຈັກກະພັດທີ່ເຂົ້າຮ່ວມສົງຄາມໂລກຄັ້ງນີ້, ຜູ້ຕົ້ນຕໍເປັນຫົວໜ້າໃນການກໍ່ສົງຄາມໄດ້ແກ່ອັງກິດ ແລະ ເຢຍລະມັນ.

## 2.ການຜັນແປຂອງສົງຄາມ

ສົງຄາມໂລກຄັ້ງທີ 1 ໄດ້ແບ່ງອອກເປັນສອງໄລຍະຄື: ໄລຍະທີ I ແຕ່ປີ ຄ.ສ 1914-1916 ແລະ ໄລຍະທີ II ແຕ່ປີ ຄ.ສ 1917-1918.

### 2.1 ໄລຍະທີ I ຂອງສົງຄາມໂລກຄັ້ງທີ1 ແຕ່ປີ ຄສ 1914-1916

ຈຸດເລີ່ມຕົ້ນຂອງສົງຄາມແມ່ນເຢຍລະມັນ ໃຊ້ກຳລັງບຸກຕີເຂົ້າປະເທດແບນຊິກ ແລະ ບຸກໂຈມຕີເຂົ້າຝຣັ່ງໂດຍສະເພາະແມ່ນຍຶດເອົາ 10 ຕົວເມືອງ ທີ່ເປັນແຫຼ່ງຊັບພະຍາກອນທີ່ອຸດົມຮັ່ງມີທີ່ສຸດຢູ່ທາງພາກຕາເວັນອອກສຽງເໜືອຂອງຝຣັ່ງ. ໃນຂະນະດຽວກັນຢູ່ສະໜາມຣົບເອີຣົບຕາເວັນອອກ, ກອງທະຫານຣັດເຊຍໄດ້ບຸກໂຈມຕີເຂົ້າພາກຕາເວັນອອກຂອງ ປຣັດເຊຍ (ລັດໜຶ່ງທີ່ລວມຕົວເຂົ້າເປັນເຢຍລະມັນ) ອັນໄດ້ເປັນການບັງຄັບໃຫ້ເຢຍລະມັນ

ຈຳຕ້ອງຖອນກອງທະຫານອອກຈາກສະໜາມເອີຣົບຕາເວັນຕົກ ເພື່ອນຳກຳລັງໄປຕ້ານກອງທະຫານຣັດເຊຍ. ດັ່ງນັ້ນ ອັງກິດ ແລະ ຝຣັ່ງໄດ້ຖືເອົາໂອກາດ ນີ້ຕ່າວໂຈມຕີ ເຢຍລະມັນຄືນ ຈຶ່ງເຮັດໃຫ້ສະພາວະຂອງສົງຄາມໃນສະໜາມຮົບເອີຣົບຕາເວັນຕົກມີການຢຸດຊົ່ວຄາວໃນຊ່ວງທ້າຍປີ ຄ.ສ 1914.



ແຜນທີ່ສົງຄາມໂລກຄັ້ງທີ 1

ໃນຕົ້ນປີ ຄ.ສ 1915, ເຢຍລະມັນ, ໂອຕຣິດ ແລະ ຮົງກາຣີ ໄດ້ນຳກຳລັງສຸມໃສ່ສະໜາມຮົບຕາເວັນອອກ ເພື່ອບຸກໂຈມຕີຣັດເຊຍ ໃຫ້ໄວທີ່ສຸດ ແຕ່ສຸດທ້າຍບໍ່ໄດ້ຮັບຜົນ. ປີ ຄ.ສ 1916 ເຢຍລະມັນໄດ້ກັບຄືນບຸກໂຈມຕີເຂົ້າເມືອງແວກດົງ ຂອງຝຣັ່ງ, ສະໜາມຮົບຄັ້ງນີ້ໄດ້ສ້າງຄວາມເສຍຫາຍຢ່າງໜັກໜ່ວງໃຫ້ແກ່ທັງສອງຝ່າຍ.

ທ້າຍປີ ຄ.ສ 1916, ກອງທະຫານອັງກິດ ໄດ້ເປີດສະໜາມຮົບຄັ້ງຍິ່ງໃຫຍ່ແມ່ນ້ຳຊອມ (Somme). ອັງກິດໄດ້ໃຊ້ລົດຖັງບຸກໂຈມຕີກອງທະຫານເຢຍລະມັນເປັນຄັ້ງທຳອິດໃນປະຫວັດສາດຂອງສົງຄາມ. ດັ່ງນັ້ນ, ສະໜາມຮົບນີ້ ຈຶ່ງໄດ້ເຮັດໃຫ້ກຳລັງຂອງທັງສອງຝ່າຍຖືກທຳລາຍເປັນຈຳນວນຫຼວງຫຼາຍ. ໃນໄລຍະເລີ່ມຕົ້ນຂອງສົງຄາມກອງທະຫານຂອງຝ່າຍສຳພັນທະມິດຢູ່ໃນທ່າເປັນເຈົ້າການໃນສະໜາມຮົບຕ່າງໆຫຼາຍກວ່າຝ່າຍສົນທິສັນຍາ ແຕ່ພໍມາເຖິງຕອນທ້າຍປີ ຄ.ສ 1916 ສະຖານະການ ໄດ້ປ່ຽນໄປຄືຝ່າຍສຳພັນທະມິດໄດ້ກາຍມາຢູ່ໃນທ່າປ້ອງກັນຕົວ.

- **ຂະບວນການຕໍ່ສູ້ຂອງປະຊາຊົນຕ້ານສົງຄາມ ແລະ ຕ້ານຈັກກະພັດໃນໄລຍະປີ1914-1916**

ສົງຄາມໄດ້ສ້າງຄວາມລ້ຳລວຍອັນໃຫຍ່ຫຼວງໃຫ້ແກ່ພວກນາຍທຶນ, ເນື່ອງຈາກພວກເຂົາໄດ້ເປັນຜູ້ຂາຍອາວຸດໃຫ້ກັບປະເທດຕ່າງໆທີ່ເຂົ້າຮ່ວມສົງຄາມເຊັ່ນ: ກ່ອນສົງຄາມໂລກຄັ້ງທີ 1, ສະຫະລັດອາເມຣິກາ ເປັນໜີ້ສິນ

ບັນດາປະເທດໃນເອີຣົບ ແຕ່ພາຍຫຼັງສົງຄາມສະຫະລັດອາເມຣິກາ ໄດ້ກາຍເປັນເຈົ້າຫນີ້. ສ່ວນປະຊາຊົນຜູ້ອອກແຮງງານທຸກໆປະເທດໃນໂລກລ້ວນແຕ່ໄດ້ຮັບຜົນສະທ້ອນຢ່າງຮ້າຍແຮງຈາກ ສົງຄາມຈຶ່ງເຮັດໃຫ້ພວກເຂົາມີບມື້ນັບທຸກຍາກລຳບາກເຊັ່ນ: ຜູ້ຊາຍເຢຍລະມັນທີ່ມີອາຍຸຕັ້ງແຕ່ 16 ປີ ເຖິງ 60 ປີ ຖືກສົ່ງໄປແນວຫນ້າ, ລັດຖະບານອັງກິດຫ້າມບໍ່ໃຫ້ກຳມະກອນມີການນັດຢຸດງານ. ສ່ວນບັນດາປະເທດນາຍທຶນ, ເມືອງຂຶ້ນຂອງພວກເຂົາ ແລະ ເຄິ່ງເມືອງຂຶ້ນເກີດມີການອຶດຫິວຢ່າງຮ້າຍແຮງ.

ຕໍ່ຫນ້າສະພາບການດັ່ງກ່າວຂະບວນການຕໍ່ຕ້ານສົງຄາມໄດ້ກ້າວຂຶ້ນສູ່ລະດັບສູງ ແລະ ໄດ້ແຜ່ລາມໄປທົ່ວປະເທດຈັກກະພັດເຊັ່ນ: ປະຊາຊົນເຢຍລະມັນໄດ້ແຫ່ຂະບວນປະທ້ວງພາຍໃຕ້ຄຳຂວັນທີ່ວ່າ: "ຄັດຄ້ານ ສົງຄາມ, ຕ້ອງການສັນຕິພາບ ແລະ ເຂົ້າຈີ່" ປີ ຄ.ສ 1916, ຂະບວນການນັດຢຸດງານຂອງກຳມະກອນ ຝຣັ່ງໄດ້ເພີ່ມຂຶ້ນເປັນ 3 ເທົ່າ ທຽບໃສ່ ປີ ຄ.ສ 1915. ຢູ່ປະເທດຣັດເຊຍ, ທ່ານເລນິນ ແລະ ສະມາຊິກ ພັກໂບນເຊວິກໄດ້ວາງຄຳຂວັນ "ຫັນສົງຄາມຈັກກະພັດເປັນສົງຄາມກາງເມືອງປະຕິວັດ, ນອກນັ້ນ ທ່ານເລນິນ ໄດ້ຮຽກຮ້ອງໃຫ້ບັນດາປະເທດຈັກກະພັດທີ່ເຂົ້າຮ່ວມສົງຄາມ, ຈົ່ງຢຸດຕິສົງຄາມໂດຍໄວ ພ້ອມກັນສ້າງສັນຕິພາບ ແລະ ພັດທະນາສັງຄົມ ເພື່ອຕອບສະຫນອງຄວາມຮຽກຮ້ອງຕ້ອງການ ແລະ ຄວາມມຸ້ງມາດປາຖະຫນາຂອງປະຊາຊົນໃນທົ່ວໂລກ.



ທ່ານເລນິນ ໄດ້ຮຽກຮ້ອງໃຫ້ບັນດາປະເທດຈັກກະພັດທີ່ເຂົ້າຮ່ວມສົງຄາມ, ຈົ່ງຢຸດຕິສົງຄາມໂດຍໄວ

### 2.2.ໄລຍະ II ຂອງສົງຄາມໂລກຄັ້ງທີ I ແຕ່ ປີ 1917-1918

ໃນໄລຍະຕົ້ນຂອງສົງຄາມ, ຈັກກະພັດອາເມຣິກາມົວເມົານຳແຕ່ການຂາຍອາວຸດສົງຄາມໃຫ້ແກ່ທັງສອງຝ່າຍຈຶ່ງບໍ່ສົນໃຈທີ່ຈະເຂົ້າຮ່ວມສົງສາມກັບຝ່າຍໃດຫນຶ່ງ ແຕ່ພໍສົງຄາມໃກ້ຈະສິ້ນສຸດ ແລະ ເຫັນວ່າເຢຍລະມັນຈະເປັນຝ່າຍປະລາໄຊ. ຈັກກະພັດອາເມຣິກາຈຶ່ງກະໂດດເຂົ້າຮ່ວມສົງຄາມກັບຝ່າຍອັງກິດ ແລະ ຝຣັ່ງເພື່ອຈະໄດ້ສ່ວນແບ່ງຈາກສົງຄາມ.

ນັບແຕ່ລະດູບານໃຫມ່ປີ ຄ.ສ 1917, ສະຫນາມຣົບຕົ້ນຕໍຍັງຢູ່ເອີຣົບຕາເວັນຕົກ ແລະ ໃນຂະນະດຽວກັນລັດຖະບານຊົ່ວຄາວຣັດເຊຍ (ລັດຖະບານນາຍທຶນບໍ່ໄດ້ເອົາຫົວຊາຕໍ່ການຄັດຄ້ານຂອງປະຊາຊົນຈຶ່ງສືບຕໍ່ເຂົ້າຮ່ວມ

ສົງຄາມ. ດັ່ງນັ້ນ, ສະໜາມຮົບພາກຕາເວັນອອກຈຶ່ງພົ້ນເດັ່ນຂຶ້ນອີກ, ເຖິງວ່າກຸ່ມສົນທິສັນຍາ ໄດ້ທຸ່ມເທກຳລັງເຂົ້າບຸກໂຈມຕີກອງທະຫານເຢຍລະມັນທັງສະໜາມຮົບຕາເວັນອອກ ແລະ ຕາເວັນຕົກກໍຕາມ ແຕ່ກໍເປັນການຍາກພໍສົມຄວນໃນການທີ່ຈະດັບສູນກອງທະຫານເຢຍລະມັນໄດ້ຢ່າງງ່າຍດາຍ.

ທ້າຍ ປີ ຄ.ສ 1917, ການປະຕິວັດ ເດືອນ ຕຸລາ ຣັດເຊຍ ໄດ້ປະສົບຜົນສຳເລັດ ມັນໄດ້ສົ່ງຜົນສະທ້ອນ ອັນໃຫຍ່ຫຼວງຕໍ່ຂະບວນການຕໍ່ຕ້ານສົງຄາມຢູ່ບັນດາປະເທດນາຍທຶນຢ່າງແຮງ. ໃນເດືອນມັງກອນ ປີ ຄ.ສ 1918 ກຳມະກອນ ໃນປະເທດເຢຍລະມັນ, ໂອຕຣິດ ແລະ ຮົງກາຣີ ໄດ້ນັດຢຸດງານປະທ້ວງພາຍໃຕ້ ຄຳຂວັນ "ຄັດຄ້ານສົງຄາມ, ຕ້ອງການສັນຕິພາບ ແລະ ເຂົ້າຈີ່". ສ່ວນກຳມະກອນໃນປະເທດຝຣັ່ງ, ອັງກິດ ໄດ້ມີການຢຸດງານຫຼາຍຄັ້ງຢູ່ຕາມໂຮງງານທາງການທະຫານ ໂດຍໄດ້ຮຽກຮ້ອງໃຫ້ມີສິດເສລີພາບແຫ່ງຊາດຫຼາຍຂຶ້ນ.

ໃນເດືອນມີນາ ປີ ຄ.ສ 1918, ຣັດເຊຍ ໄດ້ເຊັນສັນຍາສະຫງົບເສິກ ແລະ ໄດ້ຖອນຕົວອອກຈາກ ສົງຄາມຢ່າງສິ້ນເຊີງ, ດ້ວຍເຫດນັ້ນ, ເຢຍລະມັນ ຈຶ່ງໄດ້ເປີດສະໜາມຮົບຄັ້ງໃຫຍ່ຢູ່ເຂດຮົບຕາເວັນຕົກ ໂດຍຫວັງວ່າຈະຍາດເອົາໄຊຊະນະກ່ອນທີ່ທະຫານອາເມຣິກາຈະເຂົ້າຮ່ວມສົງຄາມ.

ເດືອນ ກັນຍາ ປີ ຄ.ສ 1918, ທະຫານອັງກິດ, ຝຣັ່ງ ແລະ ອາເມຣິກາໄດ້ເປີດບັ້ນຮົບບຸກໂຈມຕີຄັ້ງໃຫຍ່ໄປທົ່ວສະໜາມຮົບດ້ວຍເຫດນັ້ນ, ທະຫານເຢຍລະມັນຈຳຕ້ອງຖອນອອກຈາກຝຣັ່ງ ແລະ ແບນຊິກ. ສ່ວນບັນດາປະເທດສຳພັນທະມິດຂອງເຢຍລະມັນ ໄດ້ພາກັນອອກມາຍອມຈຳນົນ.

ໃນຕອນເຊົ້າຂອງວັນທີ່ 11 ພະຈິກ ປີ ຄ.ສ 1918, ລັດຖະບານໃໝ່ຂອງເຢຍລະມັນ ໄດ້ເຊັນສັນຍາຍອມຈຳນົນ ຢ່າງບໍ່ມີເງື່ອນໄຂ ແລະ ໃນຕອນທ່ຽງຂອງມື້ນັ້ນທຸກໆສະໜາມຮົບໄດ້ຢຸດຕິການເຄື່ອນໄຫວ ທາງດ້ານການທະຫານທັງເປັນການສະແດງໃຫ້ຮູ້ວ່າ ສົງຄາມໂລກຄັ້ງທີ I ໄດ້ຢຸດຕິລົງໂດຍຝ່າຍສຳພັນທະມິດ (ເຢຍລະມັນ, ໂອຕຣິດ, ຮົງກາຣີ ເປັນຝ່າຍປະລາໄຊຢ່າງສິ້ນເຊີງ.

**2.3. ຜົນສະທ້ອນຂອງສົງຄາມ**

ສົງຄາມໂລກຄັ້ງທີ1 ເປັນສົງຄາມໂລກຄັ້ງທຳອິດທີ່ເກີດຂຶ້ນໃນໂລກຂອງມະນຸດ ແລະ ສົງຄາມຄັ້ງນີ້ເກີດຂຶ້ນອັນເນື່ອງມາຈາກຄວາມກະຫາຍສົງຄາມຂອງພວກນາຍທຶນທີ່ສະແຫວງຫາຜົນປະໂຫຍດ ຫຼື ຄວາມລ້ຳລອຍດ້ວຍວິທີການແກງແຍ່ງແຂ່ງຂັນ ແລະ ຊ່ວງຊີງລະບົບຫົວເມືອງຂຶ້ນ ເຊິ່ງພວກນາຍທຶນ ໄດ້ຖືເອົາບັນດາປະເທດເມືອງຂຶ້ນເປັນແຫຼ່ງຕອບສະໜອງຄວາມຕ້ອງການໃນການຂຸດຄົ້ນເອົາວັດຖຸດິບ, ຕະຫຼາດຈຳໜ່າຍສິນຄ້າ ແລະ ອື່ນໆຂອງພວກເຂົາ, ແຕ່ວ່າສົງຄາມໂລກຄັ້ງທີ 1 ໄດ້ສ້າງຄວາມເສຍຫາຍຢ່າງໃຫຍ່ຫຼວງ ແລະ ໜັກໜ່ວງທີ່ສຸດໃຫ້ກັບມວນມະນຸດໃນໂລກຄື: ໃນສົງຄາມຄັ້ງນີ້ມີຜູ ເສຍຊີວິດເຖິງ 10 ລ້ານຄົນ, ຖືກບາດເຈັບ 20 ລ້ານຄົນ, ຊັບສົມບັດ ແລະ ວັດຖຸມີຄ່າເຊັ່ນ: ຕົວເມືອງ, ເຮືອນຊານ ບ້ານຊ່ອງ, ຖະໜົນຫົນທາງ, ໂຮງຈັກໂຮງງານ, ໂຮງຮຽນ, ໂຮງໝໍ ແລະ ອື່ນໆຖືກທຳລາຍ ແລະ ຖືກເສຍຫາຍ ຄິດເປັນມູນຄ່າ 360 ຕື້ໂດລາ

ສົງຄາມໂລກຄັ້ງນີ້ໄດ້ສົ່ງຜົນສະທ້ອນອັນໜັກໜ່ວງຕໍ່ຊີວິດຄວາມເປັນຢູ່ຂອງຊາວຜູ້ອອກແຮງງານ ໃນທົ່ວໂລກ ແລະ ຕໍ່ບັນດາປະເທດຈັກກະພັດທີ່ເຂົ້າຮ່ວມສົງຄາມເຊັ່ນກັນ. ແຕ່ຈັກກະພັດອາເມຣິກາຊ້ຳ ພັດເປັນປະເທດທີ່ມີຜົນກຳໄລຢ່າງມະຫາສານຈາກສົງຄາມຄັ້ງນີ້ ແລະ ກາຍເປັນປະເທດທີ່ຮັ່ງມີທີ່ສຸດໃນໂລກ.

ພາຍຫຼັງສົງຄາມຂະບວນການປະຕິວັດຂອງຊົນຊັ້ນກຳມະກອນ ແລະ ປະຊາຊົນບັນດາປະເທດຫົວເມືອງ ຂຶ້ນ ແລະ ເຄິ່ງເມືອງຂຶ້ນໄດ້ລະເບີດຂຶ້ນຢ່າງເນື່ອງນິດລຽນຕິດ ແລະ ຂະຫຍາຍເປັນວົງກວ້າງອອກຢ່າງກວ້າງຂວາງໃນ ຂອບເຂດທົ່ວໂລກ.

## 3. ສະພາບການໃນປະເທດຣັດເຊຍໃນໄລຍະສົງຄາໂລກຄັ້ງທີ1

ພາຍຫຼັງການປະຕິວັດ ປີ ຄ.ສ 1905-1907 ຖືກປະລາໄຊລົງ, ປະເທດຣັດເຊຍ ໄດ້ຕົກຢູ່ໃນສະພາບທີ່ ຫຍຸ້ງຍາກ ແລະ ສັບສົນເຊັ່ນ: ເສດຖະກິດຂອງປະເທດຊຸດໂຊມຢ່າງຫນັກ ເນື່ອງຈາກຖືກກົດຫນ່ວງ ຈາກລະບອບ ພະເຈົ້າຊາ, ຂຶ້ນກັບຕ່າງປະເທດ ແລະ ການເຂົ້າຮ່ວມສົງຄາມໂລກຄັ້ງທີ I ຈຶ່ງເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນ ປະຂຶ້ນກັບຄວາມທຸກຍາກລຳບາກ.

ດັ່ງນັ້ນ, ທ່ານເລນິນ ແລະ ພັກໂບນເຊວິກ ໄດ້ນຳພາຂະບວນກຳມະກອນ, ຊາວນາ ແລະ ທະຫານ ປະຕິວັດ ລຸກຂຶ້ນຕໍ່ສູ້ໂຄ່ນລົ້ມລະບອບພະເຈົ້າຊາ ໄດ້ຮັບຜົນສຳເລັດໃນເດືອນ ກຸມພາ ປີຄ.ສ 1917 ແລະ ສ້າງຕັ້ງສະພາ ໂຊວຽດຂຶ້ນຕາມແຫ່ງຕ່າງໆໃນທົ່ວປະເທດ, ເຖິງວ່າການປະຕິວັດໃນເດືອນກຸມພາ ສຳເລັດຜົນກໍຕາມ ແຕ່ປະເທດ ລັດເຊຍຍັງຕົກຢູ່ໃນສະພາບທີ່ມີສອງອຳນາດທາງການເມືອງຄວບຄູ່ກັນຄື: ສະພາໂຊວຽດທີ່ເປັນອຳນາດການປົກຄອງ ປະຕິວັດ ແລະ ລັດຖະບານຊົ່ວຄາວ ເຊິ່ງເປັນອຳນາດ ການປົກຄອງຂອງຊົນຊັ້ນນາຍທຶນ.

## 4. ການກະກຽມໃຫ້ແກ່ການປະຕິວັດສັງຄົມນິຍົມເດືອນ ຕຸລາ ປີ 1917

ຜົນສຳເລັດຂອງການປະຕິວັດເດືອນກຸມພາໄດ້ສ້າງເງື່ອນໄຂ ແລະ ທ່າແຮງທີ່ດີໃຫ້ແກ່ກຳລັງປະຕິວັດທີ່ມີ ການຂະຫຍາຍຕົວຢ່າງແຂງແຮງຢູ່ແລ້ວນັ້ນ ກໍສາມາດສືບຕໍ່ໃນການຈັດຕັ້ງ ແລະ ນຳພາການປະຕິວັດກ້າວໄປຂ້າງຫນ້າ ໄດ້ຢ່າງມີປະສິດຕິພາບ. ດ້ວຍເຫດນັ້ນ, ທ່ານເລນິນ ທີ່ກຳລັງເຄື່ອນໄຫວຊີ້ນຳ ແລະ ນຳພາຂະບວນການປະຕິວັດ ຕ່າງປະເທດ ທ່ານເລນິນກັບຈາກປະເທດສະວິດ)ຈຶ່ງມີຄວາມຈຳເປັນກັບຄືນປະເທດຣັດເຊຍຢ່າງຮີບດ່ວນ. ພໍມາ ເຖິງຣັດເຊຍ ທ່ານເລນິນ ໄດ້ວາງແນວທາງ ການປະຕິວັດອອກຄື: ຫັນປ່ຽນການປະຕິວັດປະຊາທິປະໄຕນາຍທຶນມາ ເປັນການປະຕິວັຕສັງຄົມນິຍົມ, ຍຶດອຳນາດການປົກຄອງມາໄວ້ໃນກຳມືຂອງຊົນຊັ້ນກຳມະຊີບ ແລະ ໂອນເອົາດິນນາ ຂອງເຈົ້າທີ່ດິນ ແລະ ໂຮງຈັກໂຮງງານມາເປັນຂອງລັດ.

ເດືອນກໍລະກົດ ປີ ຄ.ສ 1917, ກອງທັບຂອງຊົນຊັ້ນກຳມາຊີບໄດ້ຮັບໄຊຊະນະອັນໃຫຍ່ຫຼວງຢູ່ແນວຮົບ ທິດຕາເວັນຕົກຕິດກັບຊາຍແດນ ໂປໂລຍ, ຣູມານີ, ບຸນກາຣີ ແລະ ທີ່ສຳຄັນຢູ່ທີ່ນະຄອນຫຼວງເປໂຕກຣາດ (ແຊັງເປ ແຕັກສະບວກ) ໄດ້ເກີດມີຂະບວນການລຸກຂຶ້ນຕໍ່ສູ້ຂອງບທະຫານ ແລະ ກຳມະກອນຢ່າງແຂງແຮງ ເພື່ອຮຽກຮ້ອງ ໃຫ້ລັດຖະບານຊົ່ວຄາວ ມອບອຳນາດການປົກຄອງໃຫ້ສະພາໂຊວຽດໂດຍດ່ວນ. ແຕ່ກໍຖືກ ລັດຖະບານເຈົ້າຊາ (ນາຍທຶນ), ດຳເນີນການປາບປາມ ຂະບວນການປະຕິວັດຢ່າງໂຫດຮ້າຍປ່າເຖື່ອນ ທີ່ສຸດ. ເພື່ອຄວາມປອດໄພຂອງ ຜູ້ນຳ, ພັກໂບນເຊວິກ ຈຳເປັນຕ້ອງສົ່ງທ່ານເລນິນໄປລີ້ໄພຊົ່ວຄາວທີ່ຊາຍແດນລະຫວ່າງ ຣັດເຊຍ-ແຟັງລັງ ເພື່ອສືບຕໍ່ ໃນການນຳພາການປະຕິວັດຕໍ່ໄປ.

ດ້ວຍຄວາມກົດດັນຢ່າງແຂງແຮງຂອງກຳລັງມະຫາຊົນ, ພັກໂບນເຊວິກ ໄດ້ມີການຫັນທິດຈາກການ ຕໍ່ສູ້ ດ້ວຍການເມືອງມາເປັນການຕໍ່ສູ້ດ້ວຍກຳລັງອາວຸດພາຍໃຕ້ຄຳຂວັນອຳນາດທັງຫມົດຕ້ອງຢູ່ໃນກຳມື ຂອງສະພາໂຊ

ວຽດ". ໃນເດືອນຕຸລາ, ທ່ານເລນິນ ໄດ້ກັບຄືນປະເທດອີກຄັ້ງຫນຶ່ງ ເພື່ອກຳນົດແຜນການນຳພາການລຸກຮືຂຶ້ນຍຶດອຳນາດຍາດເອົາໄຊຊະນະຂັ້ນສຸດທ້າຍ.

## 5.ການປະຕິວັດສັງຄົມນິຍົມເດືອນ ຕຸລາ 1917

ພາຍຫຼັງການກັບມາຈາກແຟັງລັງ, ທ່ານເລນິນ ໄດ້ວາງແຜນການລຸກຂຶ້ນຍຶດອຳນາດການປົກຄອງ ໃນຕອນຄ່ຳຂອງວັນທີ 24 ຕຸລາ ປີ ຄ.ສ 1917 ແລະ ໄດ້ເອົາສະຖາບັນສະໂມສະນີ ເປັນທີ່ຕັ້ງຂອງກອງບັນຊາການສູງສຸດ ໂດຍແມ່ນທ່ານເລນິນ ເປັນຜູ້ບັນຊາການຢູ່ທີ່ນັ້ນທີ່ເດີ່ນສະໂມລະນີ ໄດ້ມີການກະກຽມການລຸກຮື້ຂຶ້ນດ້ວຍການແຈກຈ່າຍຟືນ, ລູກປືນ ລູກແຕກ ແລະ ອຸປະກອນອື່ນໆ. ສ່ວນທ່ານ ເລນິນ ແລະ ພັກພວກກໍກຳລັງຊີ້ນຳການປະຕິບັດແຜນການໃຫ້ແກ່ກອງທະຫານ ແລະ ກວດເບິ່ງແຜນການລຸກຮືຂຶ້ນຢ່າງຈິດຈໍ່.

ເມື່ອທຸກຢ່າງໆກຽມພ້ອມແລ້ວ ພໍມາເຖິງທ່ຽງຄືນຕາມການນັດຫມາຍ ທ່ານເລນິນ ໄດ້ອອກຄຳສັ່ງໃຫ້ທະຫານທຸກເລົ່າດຳເນີນການບຸກໂຈມຕີສັດຕູ. ຕອນຂ້ອນແຈ້ງຂອງວັນທີ່ 25, ກຳລັງປະຕິວັດສາມາດຍຶດສະຖານທີ່ທີ່ສຳຄັນໄດ້ຫຼາຍແຫ່ງເຊັ່ນ: ສູນກາງໂທລະສັບ, ສູນກາງໂທລະເລກ, ສະຖານີລົດໄຟ, ທະນາຄານ ແລະ ຕົວເມືອງສ່ວນໃຫຍ່ຕົກ ຢູ່ໃນກຳມືຂອງກຳລັງປະຕິວັດ. ຕອນເຊົ້າຂອງວັນທີ 25 ກຳລັງປະຕິວັດໄດ້ປິດລ້ອມວັງລະດູຫນາວເຊິ່ງຢູ່ທີ່ນັ້ນລັດຖະບານຊົ່ວຄາວກຳລັງດຳເນີນການປະຊຸມແຕ່ກໍຖືກຕັດຂາດຈາກໂລກພາຍນອກທັງຫມົດ. ກຳລັງປະຕິວັດໄດ້ຍື່ນຄຳຂາດໃຫ້ລັດຖະບານຊົ່ວຄາວຍອມຈຳນົນ ແຕ່ກໍບໍ່ໄດ້ຮັບຄຳຕອບ. ຄຳສັ່ງໃຫ້ບຸກໂຈມຕີພະລາຊະວັງລະດູຫນາວຈຶ່ງໄດ້ມີຂຶ້ນຕາມການຕົກລົງຂອງຄະນະກຳມະການປະຕິວັດຝ່າຍທະຫານ. ດັ່ງນັ້ນ, ສັນຍານສຽງປືນໃຫຍ່ຈາກເຮືອອາວະໂຣຣາກໍໄດ້ດັງຂຶ້ນ. ພວກຫນ່ວຍທະຫານແດງ, ທະຫາບົກ, ແລະ ທະຫານເຮືອກໍໄດ້ຕະລຸມບອນໃສ່ສັດຕູຢ່າງອົງອາດກ້າຫານ.

ການຕໍ່ສູ້ໄດ້ດຳເນີນໄປຈົນເຖິງວັນທີ 26 ຈຶ່ງໄດ້ສິ້ນສຸດລົງບັນດາລັດຖະມົນຕີຂອງລັດຖະບານຊົ່ວຄາວ ລ້ວນແຕ່ຖືກຈັບຍົກເວັ້ນແຕ່ເກເຣນສະກີ (ນາຍົກລັດຖະມົນຕີ) ທີ່ອາໄສຂີ່ລົດທູດອາເມຣິກາຫນີອອກໄປ ຕັ້ງແຕ່ຕອນເຊົ້າຂອງວັນທີ 25 ຕຸລາ. ໄປພ້ອມໆກັບຂະບວນການຕໍ່ສູ້ທີ່ດຸເດືອດນັ້ນ, ກອງປະຊຸມໃຫຍ່ຄັ້ງທີ 2 ຂອງສະພາ ໂຊວຽດທົ່ວ ຣັດເຊຍ ໄດ້ໄຂຂຶ້ນໃນຕອນເຊົ້າເວລາ 10 ໂມງຂອງວັນທີ່ 25 ຕຸລາ. ໃນກອງປະຊຸມທ່ານເລນິນ ໄດ້ປະກາດຖະແຫຼງການວ່າດ້ວຍການຍຸບ ລັດຖະບານຊົ່ວຄາວຢ່າງສິ້ນເຊີງ ແລະ ໄດ້ຜ່ານຕໍ່າລັດທີ່ສຳຄັນ 3 ຕໍ່ລັດຄື:

1) ດຳລັດກ່ຽວກັບສັນຕິພາບ ໄດ້ຮຽກຮ້ອງໄປຍັງຊາວຜູ້ອອກແຮງງານ ແລະ ລັດຖະບານຂອງປະເທດຕ່າງໆທີ່ເຂົ້າຮ່ວມສົງຄາມໃຫ້ຢຸດຕິສົງຄາມໂດຍໄວ ແລະ ເຊັນສັນຍາສັນຕິພາບທີ່ມີຄວາມຍຸດຕິທຳຕໍ່ບັນດາປະຊາຊາຕຕ່າງໆໃນໂລກ.

2) ດຳລັດກ່ຽວກັບທີ່ດິນ ຍົກເລີກກຳມະສິດທີ່ດິນຂອງເຈົ້າທີ່ດິນ ແລ້ວນຳມາແບ່ງປັນໃຫ້ຊາວນາ.

3) ດຳລັດກ່ຽວກັບການສ້າງຕັ້ງລັດຖະບານໂຊວຽດຊຸດທຳອິດ, ເຊິ່ງເອີ້ນວ່າຄະນະກຳມະການ, ປະຊາຊົນ ໂດຍແມ່ນທ່ານເລນິ ເປັນຫົວຫນ້າລັດຖະບານ.

ການປະກາດການສ້າງຕັ້ງອຳນາດໂຊວຽດ ໃນວັນທີ່ 25 ຕຸລາ ປີ 1917 ຈາກໄຊຊະນະທີ່ ເປໂຕຣກຣາດ ແລະ ມົດສະກູ ສົມທົບກັບຄຳຖະແຫຼງການຂອງທ່ານເລນິນ ກ່ຽວກັບສັນຕິພາບ, ທີ່ດິນ ແລະ ການສ້າງຕັ້ງລັດຖະບານ ໂຊວຽດໄດ້ເຮັດໃຫ້ປະຊາຊົນ ແລະ ທະຫານທີ່ຢູ່ທຸກແຫ່ງຫົນ ໃນປະເທດໄດ້ຕື່ນຕົວ ແລະ ສະຫມັກໃຈ

ເຂົ້າເປັນກໍາລັງປະຕິວັດຢ່າງຫຼວງຫຼາຍ. ດ້ວຍເຫດນັ້ນການປະຕິວັດຣັດເຊຍ ຈຶ່ງໄດ້ຮັບໄຊຊະນະ ຢ່າງສົມບູນ ແລະ ຣັດເຊຍໄດ້ກາຍເປັນລັດໜຶ່ງທີ່ມີລະບອບການເມືອງໃຫມ່ເດີນຕາມ ລັດທິມາກ-ເລນິນ.

❖ **ຄວາມໝາຍປະຫວັດສາດຂອງມະຫາປະຕິວັດສັງຄົມນິຍົມເດືອນຕຸລາຣັດເຊຍ**

- ໄຊຊະນະຂອງການປະຕິວັດສັງຄົມນິຍົມ ເດືອນຕຸລາຣັດເຊຍ ໄດ້ທັບມ້າງກົງຈັກການປົກຄອງແບບທຶນນິຍົມໃຫ້ພັງທະລາຍລົງ, ສ້າງຕັ້ງຜະເດັດການກຳມາຊີບຂຶ້ນ ແລະ ນໍາເອົາສິດເສລີພາບປະຊາທິປະໄຕອັນແທ້ຈິງມາໃຫ້ປະຊາຊົນ.
- ໄຊຊະນະຄັ້ງນີ້ເປັນການເປີດສັກກະລາດໃຫມ່ໃຫ້ແກ່ປະຫວັດສາດຂອງມວນມະນຸດ ເພື່ອກ້າວຈາກ ລະບອບທຶນນິຍົມໄປສູ່ລະບອບສັງຄົມນິຍົມ.
- ໄຊຊະນະຂອງການປະຕິວັດສັງຄົມນິຍົມເດືອນຕຸລາ ຍັງກາຍເປັນສິ່ງກະຕຸກຊຸກຍູ້ໃຫ້ຊົນຊັ້ນກຳມາຊີບ ກໍຄືຊາວຜູ້ອອກແຮງງານ ແລະ ຜູ້ທີ່ຖືກກົດຂີ່ຂູດຮີດທັງຫຼາຍໃນທົ່ວໂລກລຸກຂຶ້ນຕໍ່ສູ້ເພື່ອປົດປ່ອຍຕົນເອງ.

# ບົດທີ 11

## ສະພາບການຂອງໂລກແຕ່ປີ 1918-1939

### 1.ສະພາບການຂອງໂລກຫຼັງສົງຄາມໂລກຄັ້ງທີ 1

#### 1.1.ກອງປະຊຸມແວກໄຊ

ພາຍຫຼັງສົງຄາມໂລກຄັ້ງທີ 1 ໄດ້ສິ້ນສຸດລົງ, ບັນດາປະເທດທີ່ຊະນະສົງຄາມໄດ້ແກ່ອັງກິດ, ຝຣັ່ງ, ອາເມຣິກາ ແລະ ອີຕາລີ ໄດ້ດຳເນີນການປະຊຸມຮ່ວມກັນຢູ່ທີ່ນະຄອນຫຼວງປາຣີ ແລະ ຕໍ່ມາໄດ້ຍ້າຍໄປປະຊຸມທີ່ແວກໄຊ (ປະເທດຝຣັ່ງ) ໃນວັນທີ 18 ມັງກອນ ປີ ຄ.ສ 1919 ເພື່ອພ້ອມກັນຮ່າງສົນທິສັນຍາທີ່ຈະເຊັ່ນກັບຝ່າຍປະລາໄຊຄື: ເຢຍລະມັນ, ໂອຕຣິດ, ຮົງກາຣີ, ຕວກກີ, ບູນກາຣີ. ບັນດາປະເທດທີ່ຖືກຮັບເຊີນເຂົ້າຮ່ວມການປະຊຸມລວມມີ 27 ປະເທດທີ່ມາຈາກທະວີບເອີຣົບ, ອາເມຣິກາ, ອາຟຣິກາ ແລະ ອົດສະຕຣາລີ.

ຜູ້ນຳທີ່ມີບົດບາດສຳຄັນໃນກອງປະຊຸມຄັ້ງນີ້ ແມ່ນ ທ່ານ ຢອດຊ໌ ເກເມັນຊີອ George Clemen ceau ນາຍົກລັດຖະມົນຕີຝຣັ່ງ, ທ່ານ ເດວິດ ລອຍ ຢອດຊ໌ Davidloyd George ນາຍົກລັດຖະມົນຕີອັງກິດ, ວິກຕໍຣິໂອ ອໍຣັນໂດ VictorioOrando ນາຍົກລັດຖະມົນຕີອີຕາລີ ແລະ ວັດໂດຣວິນສັນ Woodro Winson ປະທານາທິບໍດີ ສະຫະລັດອາເມຣິກາ ເຊິ່ງໄດ້ສະເໜີຫຼັກການ 14 ຂໍ້ ກ່ຽວກັບບັນຫາການເມືອງ, ການທະຫານ, ຊາຍແດນ, ການເງິນ ແລະ ເສດຖະກິດ. ຂໍ້ສະເໜີດັ່ງກ່າວໄດ້ເປັນບ່ອນອີງໃຫ້ແກ່ການເຊັນສັນຍາລະຫວ່າງຝ່າຍຊະນະ ແລະ ຝ່າຍປະລາໄຊໃນສົງຄາມ. ພາຍຫຼັງສຳເລັດການຮ່າງສັນຍາ, ວັນທີ 28 ມິຖຸນາ ປີ ຄ.ສ 1919 ຝ່າຍຊະນະສົງຄາມກໍໄດ້ເຊີນເຢຍລະມັນມາລົງນາມເຊັນສັນຍາຢູ່ທີ່ແວກໄຊ.

#### 1.2. ການແບ່ງປັນໂລກຄືນໃຫມ່

ພາຍຫຼັງທີ່ສົງຄາມໄດ້ຢຸດຕິລົງຝ່າຍຊະນະສົງຄາມໄດ້ເຊັນສັນຍາກັບຝ່າຍປະລາໄຊ (ເຢຍລະມັນ) ຢູ່ທີ່ແວກໄຊ ໂດຍມີຈຸດປະສົງເພື່ອແກ້ໄຂບັນຫາການເມືອງ, ການທະຫານ, ຊາຍແດນ, ການເງິນ ແລະ ເສດຖະກິດ ເພື່ອເປັນການສະກັດກັ້ນການຮຸກຮານກັນອີກຄັ້ງໃຫມ່ ແລະ ສ້າງຂໍ້ບັນຍັດກ່ຽວກັບການສ້າງຕັ້ງສະມາຄົມນາໆຊາດ.

ນອກຈາກສັນຍາແວກໄຊແລ້ວຍັງມີສັນຍາອື່ນໆອີກຄື: ສັນຍາແຊັງແຊກແມັງກັບ ໂອຕຣິດ, ເນີຍຢີກັບ ບູນກາຣີ, ຕຣີອານົງກັບຮົງກາຣີ, ແຊວະເຣີກັບຕວກກີ້, ເນື້ອໃນຂອງສົນທິສັນຍາທັງ 5 ສະບັບນີ້ໄດ້ບັງຄັບໃຫ້ ຝ່າຍປະລາໄຊ ສົງຄາມຈຳຕ້ອງໃຊ້ຫນີ້ສົງຄາມ ແລະ ຍົກດິນແດນເມືອງຂຶ້ນໃຫ້ແກ່ບັນດາປະເທດທີ່ຊະນະ ສົງຄາມ, ລວມທັງຫລຸດກຳລັງທະຫານຂອງຕົນລົງເຊັ່ນ: ເຢຍລະມັນຈຳຕ້ອງສົ່ງເຂດອານຊັດສລໍແລນ Alsace-Lorraine (ເຢຍລະມັນຍຶດໄດ້ໃນສົງຄາມຝຣັ່ງ-ເຢຍລະມັນ 1870) ຄືນໃຫ້ຝຣັ່ງ, ມອບເຂດ ຊາຣ (Sar) ໃຫ້ສະມາຄົມນາໆຊາດປົກຄອງ, ມອບເອກະລາດໃຫ້ໂປໂລຍ ແລະ ໃຫ້ເຂດດານຊິກ ຂອງເຢຍລະມັນເປັນເຂດສາກົນ. ສ່ວນຕວກກີຕ້ອງມອບດິນແດນ 3/4 ໃຫ້ຝ່າຍທີ່ໄດ້ຮັບໄຊຊະນະ ແລະໃຫ້ອາກເມນີ, ລີບັງ, ຊີຣີ, ອາຣັບ, ຊອກດານີ້ ປາແລັດສະຕິນ ແລະ ປະເທດອື່ນໆເປັນອິດສະຫຼະ. ແຕ່ສຸດທ້າຍບັນດາປະເທດເຫຼົ່ານີ້ກໍກາຍເປັນປະເທດເມືອງຂຶ້ນ ແລະ ເຄິ່ງເມືອງຂຶ້ນ

ຂອງຝ່າຍຊະນະສົງຄາມ ທະວີບອາຟຣິກາທີ່ເປັນຫົວເມືອງຂຶ້ນຂອງເຢຍລະມັນ ຕ້ອງມອບໃຫ້ອັງກິດ ແລະ ຝຣັ່ງ. ສ່ວນແບນຊິກຕ້ອງມອບເກາະຕ່າງໆໃນມະຫາສະຫມຸດປາຊີຟິກໃຫ້ຍີ່ປຸ່ນ, ອິດສະຕຣາລີ ແລະ ນິວຊີແລນ.

ການປະລາໄຊຂອງເຢຍລະມັນ ແລະ ພັນທະມິດໄດ້ສ້າງເງື່ອນໄຂໃຫ້ນາຍທຶນອັງກິດ, ຝຣັ່ງ ແລະ ອາເມຣິກາ ໄດ້ແຜ່ອຳນາດອອກໄປທົ່ວໂລກແຂ່ງຂັນກັນຍຶດເອົາປະເທດຕ່າງໆເປັນຫົວເມືອງຂຶ້ນ ແລະ ຫາວິທີການຫຼອກລວງ ບັນດາປະເທດທີ່ເປັນເອກະລາດໃຫ້ຕົກຢູ່ໃຕ້ອິດທິພົນຂອງພວກເຂົາເຊິ່ງເຫດການດັ່ງກ່າວໄດ້ເປັນການສ້າງເງື່ອນໄຂ ໃຫ້ເກີດສົງຄາມໂລກຄັ້ງທີ II ໃນໄລຍະຕໍ່ມາ.

### 1.3. ການສ້າງຕັ້ງອົງການສັນນິບາດຊາດ

ພາຍຫຼັງສົງຄາມໂລກຄັ້ງທີ 1 ໄດ້ຢຸດຕິລົງ ແລະ ກ່ອນການລົງນາມເຊັນສັນຍາລະຫວ່າງຝ່າຍຊະນະ ແລະ ປະລາໄຊໃນສົງຄາມ, ບັນດາປະເທດທີ່ເປັນຝ່າຍຊະນະສົງຄາມ (ອັງກິດ, ຝຣັ່ງ, ຍີ່ປຸ່ນ, ອາເມຣິກາ, ອີຕາລີ) ໄດ້ພ້ອມ ກັນກໍ່ຕັ້ງສະມາຄົມນານາຊາດຂຶ້ນໃນວັນທີ 28 ເມສາ ປີ ຄ.ສ 1918 ໂດຍໃສ່ຊື່ວ່າ ອົງການ ສັນນິບາດຊາດ ເຊິ່ງ ປະກອບມີບັນດາປະເທດທີ່ຊະນະ ແລະ ປະລາໄຊໃນສົງຄາມຫຼາຍກວ່າ 20 ປະເທດເຂົ້າເປັນສະມາຊິກ.

ຈຸດປະສົງຂອງການສ້າງຕັ້ງອົງການສັນນິບາດຊາດ:

- ເພື່ອປົກປັກຮັກສາຄວາມປອດໄພ ແລະ ຄວາມຫມັ້ນຄົງລະຫວ່າງຊາດ.
- ເພື່ອຮັກສາຄວາມເປັນລະບຽບຮຽບຮ້ອຍຂອງສາກົນ.

ເຖິງວ່າ ອົງການສັນນິບາດຊາດໄດ້ຮັບການກໍ່ຕັ້ງຂຶ້ນຢ່າງເປັນທາງການ ແລະ ມີວັດຖຸປະສົງໃນການດຳເນີນ ງານຂອງຕົນຢ່າງຊັດເຈນກໍຕາມ, ແຕ່ປາກົດວ່າອົງການນີ້ຂາດປະສິດທິພາບໃນການປົກປັກຮັກສາສັນຕິພາບ ແລະ ຄວາມຫມັ້ນຄົງລະຫວ່າງຊາດເຊັ່ນ: ບໍ່ສາມາດຄວບຄຸມການຫຼຸດກຳລັງອາວຸດຂອງປະເທດຈັກກະພັດ, ບໍ່ສາມາດ ສະກັດກັ້ນການກໍ່ສົງຄາມໂລກຄັ້ງໃຫມ່ ແລະ ບໍ່ມີສະມາຊິກປະເທດໃດປະຕິບັດຕາມມະຕິຂອງອົງການສັນນິບາດ ຊາດຢ່າງເຂັ້ມງວດ.

ດ້ວຍເຫດນັ້ນ, ອົງການສັນນິບາດຊາດ ຈຶ່ງກາຍເປັນພຽງອົງການຈັດຕັ້ງຂອງຝ່າຍຊະນະສົງຄາມ ເພື່ອຄວບ ຄຸມຝ່າຍປະລາໄຊ, ຮັກສາຜົນປະໂຫຍດຂອງຕົນຈາກໄຊຊະນະຂອງສົງຄາມ ແລະ ເພື່ອທຳລາຍຂະບວນການ ປະຕິວັດໂລກໂດຍສະເພາະຕໍ່ຕ້ານປະເທດຣັດເຊຍ.

## 2.ສະຫະພາບໂຊວຽດແຕ່ປີ ຄ.ສ 1918-1939

### 2.1.ການສ້າງຕັ້ງສະຫະພາບໂຊວຽດ

#### 1) ສົງຄາມກາງເມືອງ (1918-1922)

ພາຍຫຼັງການປະຕິວັດເດືອນ ຕຸລາ ປີ ຄ.ສ 1917 ສຳເລັດຜົນ, ລັດຖະບານໂຊວຽດທີ່ຫາກໍໄດ້ຮັບການ ສ້າງຕັ້ງຂຶ້ນໃຫມ່ໆ ໄດ້ຮຽກຮ້ອງໄປຍັງລັດຖະບານຝຣັ່ງ, ອັງກິດ ແລະ ເຢຍລະມັນ ໃຫ້ພາກັນຢຸດຕິສົງຄາມ ໂດຍໄວ, ແຕ່ລັດຖະບານຂອງບັນດາປະເທດດັ່ງກ່າວບໍ່ໄດ້ໃສ່ໃຈຕໍ່ຄຳສະເຫນີຂອງທ່ານເລນິນ ກົງກັນຂ້າມ ເຢຍລະມັນຍັງ ຮຽກຮ້ອງເອົາດິນແດນທີ່ກອງທະຫານເຢຍລະມັນຍຶດໄດ້ໃນລະຫວ່າງສົງຄາມໂລກຄັ້ງທີ I ເຂົ້າເປັນສ່ວນຫນຶ່ງຂອງ ເຢຍລະມັນ. ຕໍ່ຫນ້າສະພາບການດັ່ງກ່າວ, ກອງທະຫານຣັດເຊຍທີ່ມີສະພາບຊຸດໂຊມ ຫຼື ເສດເຫຼືອມາຈາກສົງຄາມ

ໂລກຄັ້ງທີ 1 (ທະຫານຂອງພຣະເຈົ້າຊາ) ບໍ່ມີຄວາມສາມາດທີ່ຈະຮັບມື ຫຼື ຕ້ານທານການບຸກໂຈມຕີຂອງສັດຕູໄດ້, ດັ່ງນັ້ນ, ລັດຖະບານໂຊວຽດ ຈຶ່ງໄດ້ສ້າງຕັ້ງກອງທັບແດງປະຕິວັດຂຶ້ນຢ່າງຮີບດ່ວນ.

ໃນລະດູໃບໄມ້ປົ່ງ ປີ ຄ.ສ 1918, ຈັກກະພັດອາເມຣິກາ ແລະ ອັງກິດໄດ້ຍຶດທາງພາກເຫນືອຂອງ ຣັດເຊຍ ສ່ວນເຢຍລະມັນ ໄດ້ຍຶດເອົາເຂດເກາະກະຣີມເມ ທະເລດຳ ແລະ ເຂດແມ່ນ້ຳໂດນ, ກອງທະຫານ ອັງກິດອີກສ່ວນ ຫນຶ່ງໄດ້ບຸກຕີເຂົ້າເຂດພູ ໂກກາດ ແລະ ອາຊີກາງ. ໃນຂະນະດຽວກັນພາຍໃຕ້ການຊ່ວຍເຫຼືອຂອງພວກຈັກກະພັດ ຕ່າງດ້າວພວກນາຍທຶນ ແລະ ເຈົ້າທີ່ດິນໃນທ້ອງຖິ່ນຕ່າງໆໄດ້ດຳເນີນການໂຄ່ນລົ້ມອຳນາດໂຊວຽດ ແລະ ສ້າງຕັ້ງ ກອງທັບທີ່ໃຫຍ່ໂຕນັ້ນເອີ້ນວ່າ ຫນ່ວຍປ້ອງກັນຂາວ ບັນຊາ ໂດຍປັນດາ ນາຍພົນຂອງພຣະເຈົ້າຊາ ເຊິ່ງພວກເຂົາ ສາມາດຍຶດຄອງປະເທດໄດ້ເປັນສ່ວນໃຫຍ່ ແລະ ມີການຈັດຕັ້ງ ລະບອບການປົກຄອງເກົ່າຂຶ້ນ.

ພວກເຂົາໄດ້ປຸ້ນສະດົມເອົາວັດຖຸມີຄ່າເປັນຈຳນວນຫຼວງຫຼາຍໄປຍັງປະເທດຂອງພວກເຂົາເຊັ່ນ: ເຂົ້າ, ນ້ຳ ຕານ, ນ້ຳມັນເບີ, ຖ່ານຫີນ, ຄຳ, ໄມ້ ແລະ ອື່ນໆ. ນອກນັ້ນ, ພວກເຂົາຍັງດຳເນີນການປາບປາມຊາວ ຜູ້ອອກແຮງງານ ຢ່າງໂຫດຮ້າຍປ່າເຖື່ອນ, ຄຸກເຕັມໄປດ້ວຍຊະເລີຍ, ຊາວນາ ແລະ ກຳມະກອນຫຼາຍພັນຄົນຖືກປະຫານຊີວິດ, ພວກ ເຂົາໄດ້ກະທຳຕໍ່ຊາວກອມມູນິດຄື: ປາດຫນ້າເອິກເປັນຮູບທ້າແຈ, ເຈາະຕາທັງສອງ, ຕັດລີ້ນ, ເຜົາທັງເປັນໃນເຕົາ ລົດໄຟ, ຖືກຍິງເປົ້າໂດຍບໍ່ມີຄຳຕັດສິນຂອງສານຕະຫຼອດເຖິງການພະຍາຍາມລອບຄາດຕະກຳທ່ານເລນິນຫຼາຍຄັ້ງ. ໃນທີ່ສຸດເດືອນ ສິງຫາ ປີ ຄ.ສ 1918 ທ່ານຖືກລອບສັງຫານແຕ່ກໍ່ໄດ້ຮັບບາດເຈັບຢ່າງສາຫັດທີ່ບ່າໄຫຼ່ເບື້ອງຂວາ.

ຕໍ່ສະພາບການດັ່ງກ່າວພັກກອມມູນິດໄດ້ຮຽກຮ້ອງມາຍັງປະຊາຊົນຣັດເຊຍທຸກຄົນ ຈົ່ງພ້ອມກັນລຸກຮື້ຂຶ້ນ ເພື່ອປ້ອງກັນອຳນາດໂຊວຽດໄວ້ ຊາວນາ ແລະ ກຳມະກອນຣັດເຊຍຫຼາຍລ້ານຄົນໄດ້ສະຫມັກເຂົ້າເປັນກຳລັງປ້ອງ ກັນຊາດ ເພື່ອຕ້ານການຮຸກຮານຂອງສັດຕູ. ໃນກອງທັບມີການສ້າງຕັ້ງກອງພົນກອງພົນໃຫມ່ຂຶ້ນ, ສ່ວນຄະນະກຳມະ ການສູນກາງພັກກອມມູນິດທີ່ມີທ່ານເລນິນເປັນຫົວຫນ້າກໍໄດ້ຊີ້ນຳການປະຕິບັດການທະຫານທຸກຢ່າງ.

ລະດູໃບໄມ້ຫຼົ່ນ ປີ ຄ.ສ 1918 ອັງກິດ, ຝຣັ່ງ ແລະ ອາເມຣິກາ ໄດ້ເອົາຊະນະເຢຍລະມັນໃນ ສະຫນາມຣົບ ຕາເວັນຕົກ ແລະ ກອງທັບແດງບຸກຕີຢ່າງຫນັກເຮັດໃຫ້ເຢຍລະມັນຈຳຕ້ອງຖອນຕົວອອກ ຈາກດິນແດນຣັດເຊຍ. ໃນເດືອນ ພະຈິກ ເຖິງ ເດືອນ ທັນວາ ປີ ຄ.ສ 1918 ອັງກິດ, ຝຣັ່ງ ແລະ ອາເມຣິກາ ໄດ້ນຳກອງທະຫານຂອງຕົນເຂົ້າ ມາຄອບຄອງພື້ນທີ່ຂອງເຢຍລະມັນໃນ ອູແກຣນ ແລະ ເຂດພູໂກກາດ ດ້ວຍການຍົກພົນຂຶ້ນບົກທີ່ທ່າເຮືອ ໂອເດຊາ, ເຊວະສະຕາໂປນ ແລະ ທ່າເຮືອອື່ນໆທາງພາກໃຕ້ຣັດເຊຍ, ອັງກິດ ແລະ ອາເມຣິກາໄດ້ຍົກພົນຂຶ້ນບົກຢູ່ທາງພາກ ເຫນືອ ທີ່ມູລະມັນສະກະ ແລະ ອາລະອັງແກນ. ນອກຈາກນັ້ນ, ກອງທະຫານອາເມຣິກາ ແລະ ຍີ່ປຸ່ນຍັງໄດ້ຍົກພົນ ຂຶ້ນບົກຢູ່ທາງພາກຕາເວັນອອກໄກ.

ລະດູບານໃຫມ່ປີ ຄ.ສ 1919 ພວກຈັກກະພັດທັງຫຼາຍຖືກກອງທັບແດງບຸກຕີຢ່າງຫນັກອັນເປັນການບັງຄັບ ໃຫ້ພວກເຂົາຈຳຕ້ອງຖອນຕົວອອກຈາກດິນແດນຣັດເຊຍຫຼາຍແຫ່ງດ້ວຍເຫດນັ້ນ, ພວກເຂົາຈຶ່ງປ່ຽນແຜນໄປຢູ່ແນວ ຫຼັງເປັນຜູ້ຊ່ວຍ ຫຼື ໃຫ້ການສະຫນັບສະຫນູນພວກປ້ອງກັນຂາວ. ພວກເຂົາໄດ້ດຳເນີນການບຸກຕີໂຊວຽດໃນເຂດ ແມ່ນ້ຳໂວນກາ, ເມືອງອູຟາ, ເມືອງເປໂຕຣກຣາດ ແຕ່ກໍຖືກກອງທັບແດງທຳການຕໍ່ຕ້ານ ແລະ ດັບສູນພວກເຂົາຢ່າງ ຮາບຄາບ. ເຖິງຢ່າງນັ້ນພວກເຂົາຍັງບຸກຕີອີກຄັ້ງໃຫມ່ດ້ວຍການມຸ່ງຫນ້າເຂົ້າສູ່ນະຄອນມົດສະກູຢ່າງໄວວາດ້ວຍການ ສະຫນັບສະຫນູນອາວຸດ, ອຸປະກອນສິງຄາມ ແລະ ລົດຖັງຈາກອັງກິດ, ອາເມຣິກາ ແລະ ປະເທດອື່ນໆ.

ຄະນະກຳມະການສູນກາງພັກກອມມູນິດ ໄດ້ຮຽກຮ້ອງມາຍັງຊາວຜູ້ອອກແຮງງານ ໃຫ້ລະດົມທຸກໆ ກຳລັງເຂົ້າຮ່ວມການຕໍ່ຕ້ານສັດຕູ. ດັ່ງນັ້ນ, ພວກອາສາສະຫມັກໃຫມ່ ໄດ້ຫຼັ່ງໄຫຼເຂົ້າສູ່ກອງທັບແດງເປັນຈຳນວນຫຼວງຫຼາຍ. ສ່ວນທ່ານເລນິນ ໄດ້ວາງແຜນ ແລະ ຊີ້ນຳຢ່າງໃກ້ຊິດໃນການດັບສູນສັດຕູໃນຄັ້ງນີ້ ດ້ວຍຕົວຂອງທ່ານເອງ.

ເລີ່ມແຕ່ຕົ້ນປີ ຄ.ສ 1920 ເປັນຕົ້ນມາກອງທັບແດງໄດ້ດັບສູນພວກທະຫານຂາວໃນສະຫນາມຣິບ ບໍລິເວນແມ່ນ້ຳດະແນບ, ອາຊີກາງ, ເຂດພູ ໂກກາດ ແລະ ເຂດອື່ນໆຢ່າງຮາບກ້ຽງ ແລະ ດຳເນີນການໂຄ່ນລົ້ມພວກນາຍທຶນທ້ອງຖິ່ນແລ້ວສ້າງຕັ້ງອຳນາດໂຊວຽດຄືນໃຫມ່.

ໃນປີ ຄ.ສ 1922  ພວກຮຸກຮານຍີ່ປຸ່ນ ແລະ ພວກທະຫານຂາວຖືກທັບມ້າງ ແລະ ຖືກຂັບໄລ່ອອກຈາກພາກຕາເວັນອອກໄກ. ມາເຖິງເວລານີ້ດິນແດນໂຊວຽດທັງຫມົດໄດ້ຮັບການປົດປ່ອຍອອກຈາກພວກທະຫານຂາວ ແລະ ພວກຈັກກະພັດຕ່າງດ້າວຢ່າງຖາວອນ.

ປະຊາຊົນ ໂຊວຽດ ໄດ້ດຳເນີນການຕໍ່ສູ້ຕ້ານການຮຸກຮານຂອງພວກສັດຕູທີ່ມີຈຳນວນຫຼວງຫຼາຍ (14 ປະເທດ) ໃນເງື່ອນໄຂທີ່ມີຄວາມຫຍຸ້ງຍາກຫຼາຍປະການ ແລະ ສົງຄາມຄັ້ງນີ້ໄດ້ເຮັດໃຫ້ປະເທດໂຊວຽດທີ່ຫນຸ່ມນ້ອຍໄດ້ຮັບຄວາມເສຍຫາຍຢ່າງຫຼວງຫຼາຍ ແລະ ຂາດແຄນທາງດ້ານສະບຽງອາຫານ ໂດຍສະເພາະເຂົ້າຈີ່, ນ້ຳມັນເບີ, ນ້ຳມັນເຊື້ອໄຟ ແລະ ສິ່ງຈຳເປັນຫຼາຍຢ່າງ.

**2) ການຟື້ນຟູເສດຖະກິດຫຼັງສົງຄາມ (1921-1925)**

ສົງຄາມໂລກຄັ້ງທີ I ແລະ ສົງຄາມກາງເມືອງ ໄດ້ທຳລາຍພື້ນຖານເສດຖະກິດຂອງຊາດຢາງຮ້າຍແຮງ ໂດຍສະເພາະ ຂະແຫນງອຸດສາຫະກຳ ແລະ ກະສິກຳ, ໃນປີ ຄ.ສ 1920, ການຜະລິດຖ່ານຫີນ ໄດ້ຫຼຸດລົງ 3 ເທົ່າ, ນ້ຳມັນ 5  ເທົ່າ ເຊິ່ງຫນ້ອຍກວ່າທີ່ຜະລິດໄດ້ໃນປີ ຄ.ສ 1913,  ຜົນຜະລິດທາງດ້ານກະສິກຳ ຫນ້ອຍກວ່າໃນຊ່ວງສົງຄາມ 2 ເທົ່າ ໃນປີ ຄ.ສ 1921 ສະພາບຄວາມທຸກຍາກ ຫຼື ຄວາມອຶດຢາກເກີດຂຶ້ນຢ່າງຮ້າຍແຮງທີ່ບໍ່ເຄີຍມີມາກ່ອນ ອັນເປັນຜົນມາຈາກການເກັບກ່ຽວບໍ່ໄດ້ດີ, ຂາດນ້ຳມັນເຊື້ອໄຟ ແລະ ວັດຖຸດິບເຮັດໃຫ້ການສັນຈອນເປັນອຳມະພາດລວມທັງໂຮງຈັກໂຮງງານຫຼາຍແຫ່ງຖືກປິດກິດຈະການ.

ໃນເດືອນ ມີນາ ປີ ຄ.ສ 1921,   ໃນກອງປະຊຸມໃຫຍ່ຂອງພັກກອມມູນິດ ທ່ານ ເລນິນ ໄດ້ສະເຫນີແຜນການພັດທະນາເສດຖະກິດແບບໃຫມ່ທີ່ຮຽກວ່າ ນະໂຍບາຍເສດຖະກິດແຜນໃຫມ່ (The New Economic Policy-NEP) ຄື: ຟື້ນຟູເສດຖະກິດ, ຮັບຊື້ເຂົ້ານຳຊາວນາ, ວາງນະໂຍບາຍຄ້າຂາຍເສລີ, ອະນຸຍາດໃຫ້ເອກະຊົນເປີດໂຮງງານຂະຫນາດນ້ອຍ, ຊຸກຍູ້ໃຫ້ນາຍທຶນມີການລົງທຶນໃນປະເທດ ແລະ ອື່ນໆ. ໃນນັ້ນຫົວໃຈທີ່ສຳຄັນຂອງນະໂຍບາຍເສດຖະກິດແຜນໃຫມ່ຂອງທ່ານເລນິນແມ່ນ: ອຳນາດໂຊວຽດບວກກັບພະລັງງານ ໄຟຟ້າ,  ນະໂຍບາຍດັ່ງກ່າວ ໄດ້ເປັນການຊຸກຍູ້ໃຫ້ຊາວນາ ແລະ ກຳມະກອນມີຄວາມຕັ້ງຫນ້າໃນການຜະລິດທາງດ້ານກະສິກຳ ແລະ ອຸດສາຫະກຳ ມີທັງທາງດ້ານປະລິມານ ແລະ ປະສິດທິພາບ.

ພຽງແຕ່ການນຳໃຊ້ນະໂຍບາຍເສດຖະກິດແຜນໃຫມ່ໄດ້ 3  ປີ ພື້ນຖານເສດຖະກິດຂອງ ໂຊວຽດມີການປ່ຽນແປງໄປໃນທາງທີ່ດີຂຶ້ນເຊັ່ນ: ສາມາດຈັດຫາສະບຽງອາຫານໃຫ້ແກ່ຕົວເມືອງໄດ້ຢ່າງພຽງພໍ,  ໂຮງຈັກ ໂຮງງານສາມາດດຳເນີນການຜະລິດໄດ້ເປັນປົກກະຕິ, ສາຍທາງລົດໄຟສາມາດໃຫ້ບໍລິການໄດ້, ບັນດາຮ້ານຄ້າລັດຫຼາຍແຫ່ງໄດ້ເປີດໃຫ້ບໍລິການ. ນອກຈາກນັ້ນ, ເພື່ອຜະລິດເຫຼັກ, ຖ່ານຫີນ, ແລະ ກົນຈັກໃຫ້ຫຼາຍຂຶ້ນ ທ່ານ ເລນິນ ຈຶ່ງສະເຫນີໃຫ້

ມີການກໍ່ສ້າງສະຖານີພະລັງງານໄຟຟ້າ 30 ແຫ່ງໃນເຂດອຸດສາຫະກໍາໃຫຍ່. ດ້ວຍເຫດນັ້ນ, ສະຖານີໄຟຟ້າຂະໜາດນ້ອຍແຫ່ງທໍາອິດໄດ້ເກີດຂຶ້ນໃນຊົນນະບົດທີ່ບ້ານກາຊີໂນຢູ່ໃກ້ໆຕົວເມືອງມົດສະກູ.

**3)ການສ້າງຕັ້ງສະຫະພາບສາທາລະນະລັດສັງຄົມນິຍົມໂຊວຽດ**

ກ່ອນປີ ຄ.ສ 1917 ອູແກຣນ, ເບລາຣູດຊີ, ເຂດໃຕ້ພູໂກກາດ ແລະ ເຂດອື່ນໆ ເຄີຍຖືກຮຸກຮານຈາກສັກດີນາອ້ອມຂ້າງເປັນປະຈໍາ ຈຶ່ງໄດ້ຂໍຄວາມຊ່ວຍເຫຼືອຈາກຈັກກະພັດຣັດເຊຍເພື່ອຂັບໄລ່ສັກດີນາ ອອກຈາກປະເທດຂອງຕົນ ເປັນເຫດໃຫ້ບັນດາປະເທດເຫຼົ່ານັ້ນຕົກຢູ່ໃຕ້ອໍານາດຂອງຣັດເຊຍ, ພາຍຫຼັງການປະຕິວັດເດືອນຕຸລາ ປີ ຄ.ສ 1917. ຊາວຜູ້ອອກແຮງງານທຸກຄົນມີສິດໃນການຕັດສິນໂຊກຊະຕາກໍາ ແລະ ເລືອກເສັ້ນທາງເດີນຂອງຕົນ. ດັ່ງນັ້ນ, ຊາວນາ ແລະ ກໍາມະກອນຫຼາຍລ້ານຄົນໄດ້ສະໜັບສະໜູນ ແລະ ເຫັນພ້ອມກັບນະໂຍບາຍການກໍ່ຕັ້ງສະຫະພາບໂຊວຽດຂອງເລນິນ ບົນຫຼັກການຂອງການຢູ່ຮ່ວມກັນ ໂດຍສັນຕິ ແລະ ຄວາມສະໝັກໃຈ. ການຢູ່ຮ່ວມກັນໂດຍສັນຕິ ແລະ ຄວາມສະໝັກໃຈດັ່ງກ່າວໄດ້ສະແດງອອກໃຫ້ເຫັນຢ່າງຊັດເຈນທີ່ສຸດຄື: (1) ໃນປີແຫ່ງສົງຄາມກາງເມືອງ (1918-1922) ຊາວຜູ້ອອກແຮງງານທັງໝົດໄດ້ຮ່ວມມືກັນຕໍ່ສູ້ກັບພວກຮຸກຮານຕ່າງດ້າວ ແລະ ພວກທະຫານຂາວຈົນໄດ້ຮັບໄຊຊະນະ ແລະ (2) ໃນປີແຫ່ງການຟື້ນຟູເສດຖະກິດທີ່ຖືກທໍາລາຍຈາກສົງຄາມບັນດາປະຊາຊາດທັງຫຼາຍໄດ້ໃຫ້ຄວາມຊ່ວຍເຫຼືອເຊິ່ງກັນ ແລະ ກັນ. ດັ່ງນັ້ນ, ແນວຄິດກ່ຽວກັບການທ້ອນໂຮມກັນເຂົ້າເປັນລັດໜຶ່ງລັດດຽວຈຶ່ງເກີດມີຂຶ້ນຢູ່ໃນບັນດາຊົນຊາດຕ່າງໆ ເຊິ່ງແນວຄິດນີ້ໄດ້ຮັບການສະໜັບສະໜູນຈາກພັກກອມມູນິດໂຊວຽດຢ່າງສຸດຂີດ.

ໃນວັນທີ 20 ທັນວາ 1922 ຄະນະຜູ້ແທນຈາກສາທາລະນະລັດໂຊວຽດມາຮ່ວມກອງປະຊຸມໃຫຍ່ ສະພາໂຊວຽດທົ່ວຣັດເຊຍຄັ້ງທີ 1 ທີ່ນະຄອນມົດສະກູ ໃນກອງປະຊຸມຄະນະຜູ້ແທນໄດ້ເປັນເອກະສັນກັນ ຮັບຮອງເອົາມະຕິການເຕົ້າໂຮມສາທາລະນະລັດທັງໝົດເຂົ້າເປັນສະຫະພາບອັນດຽວກັນຄື: ສະຫະພາບ ສາທາລະນະລັດສັງຄົມນິຍົມໂຊວຽດ (ສ.ສ.ສ.ຊ). ການເຕົ້າໂຮມກັນເຂົ້າເປັນ ສ.ສ.ສ.ຊ ໄດ້ດໍາເນີນໄປ 3 ຄັ້ງຄື: ຄັ້ງທີ 1 ປີ ຄ.ສ 1922 ລວມມີ 4 ລັດ ໄດ້ແກ່ ສະຫະພາບ າທາລະນະລັດສັງຄົມນິຍົມໂຊວຽດຣັດເຊຍ, ສະຫະພາບສາທາລະນະລັດສັງຄົມນິຍົມໂຊວຽດອູແກຣນອິນາ, ສະຫະພາບສາທາລະນະລັດສັງຄົມນິຍົມ ໂຊວຽດເບລາຣຸດຊີ ແລະ ສະຫະພາບສາທາລະນະລັດສັງຄົມນິຍົມໂຊວຽດອູສະເບກິສະຖານ, ຄັ້ງທີ 2 ປີ ຄ.ສ 1936 ລວມມີ 11 ລັດ ແລະ ຄັ້ງທີ 3 ໃນປີ ຄ.ສ 1940 ລວມເປັນ 15 ລັດ.

**2.2. ການພັດທະນາເສດຖະກິດສັງຄົມໂຊຫວຽດກ່ອນສົງຄາມໂລກຄັ້ງທີ II**

**1) ແຜນການ 5 ປີ ຄັ້ງທີ 1 (1828-1933)**

ໃນໄລຍະການຟື້ນຟູເສດຖະກິດຫຼັງສົງຄາມບັນດາ ຮງຈັກໂຮງງານ, ບໍ່ແຮ່, ທາງລົດໄຟ ແລະ ກິດຈະການການກໍ່ສ້າງຕ່າງໆທີ່ນາຍທຶນປະໄວ້ລ້ວນແຕ່ໄດ້ຮັບການປັບປຸງ ແລະ ສ້ອມແປງຄືນໃຫມ່ໃຫ້ສາມາດໃຊ້ງານໄດ້ດີຂຶ້ນ ແຕ່ກໍຍັງຫນ້ອຍເກີນໄປສໍາລັບການກໍ່ສ້າງລະບອບສັງຄົມນິຍົມ ໂດຍສະເພາະ ໂຮງງານຜະລິດລົດຍົນ, ລົດໄຖນາ, ເຮືອບິນ ແລະ ກົນຈັກຕ່າງໆ ຍັງບໍ່ເຄີຍມີມາກ່ອນໃນດິນແດນແຫ່ງນີ້.

ໃນແຜນການ 5 ປີ ຄັ້ງທີ 1 (1928-1933) ມີເປົ້າຫມາຍເລັ່ງໃສ່ການກໍ່ສ້າງໂຮງງານຫຼອມເຫຼັກ, ການຂຸດຄົ້ນຖ່ານຫີນ, ທາງລົດໄຟ, ເຂື່ອນໄຟຟ້ານໍ້າຕົກ ແລະ ໂຮງງານຜະລິດເຄື່ອງກົນຈັກສໍາລັບກະສິກໍາ. ເມື່ອແຜນການ

ໄດ້ດຳເນີນການປະຕິບັດກິດຈະການຕ່າງໆລ້ວນແຕ່ໄດ້ຮັບການກໍ່ສ້າງຂຶ້ນໃນທຸກພູມີພາກຂອງປະເທດເຊັ່ນ: ໂຮງງານຫຼອມເຫຼັກ ແລະ ເຫຼັກກ້າ, ເປັນໂຮງງານທຳອິດ ແລະ ໃຫຍ່ທີ່ສຸດຢູ່ສາຍພູ ອູຣານ, ໂຮງງານທອງແດງ ແລະ ບໍ່ຖ່ານຫີນຢູ່ກາຊັກສະຖານ, ສາຍທາງລົດໄຟທີ່ມີຄວາມຍາວ 1.500 ກິໂລແມັດໄດ້ເຊື່ອມຕໍ່ລະຫວ່າງຊີເບຣີກັບສາທາລະນະລັດໃນອາຊີກາງ, ໂຮງງານຜະລິດເຄື່ອງກົນຈັກສຳລັບກະສິກຳ, ໂຮງງານຜະລິດລົດຍົນແຫ່ງທຳອິດຂອງປະເທດໄດ້ສ້າງຂຶ້ນຢູ່ນະຄອນມົດສະກູ

ໃນລະຫວ່າງການປະຕິບັດແຜນການ 5 ປີຊຸດທຳອິດ, ວິສາຫະກິດໃຫມ່ຫຼາຍກວ່າ 1.500 ແຫ່ງໄດ້ຮັບການສ້າງຕັ້ງຂຶ້ນ ແລະ ດຳເນີນການຜະລິດເຊັ່ນ: ເຮືອບິນ, ລົດຍົນ, ລົດໄຖນາ, ລົດຖັງ, ລົດກ່ຽວເຂົ້າ, ຫົວລົດໄຟແລ່ນດ້ວຍໄຟຟ້າ ແລະ ອຸປະກອນເຄື່ອງຈັກຕ່າງໆ. ໃນປີ ຄ.ສ 1992 ສະຫະພາບໂຊວຽດ ຜະລິດເຄື່ອງກົນຈັກໄດ້ຫຼາຍກວ່າສະໄຫມພະເຈົ້າຊາ ປີ ຄ.ສ 1913 ເຖິງ 10 ເທົ່າ.

ແຜນການຂອງເລນິນ ກ່ຽວກັບການຕິດຕັ້ງໄຟຟ້າ ໃນປະເທດໄດ້ດຳເນີນໄປຢ່າງມີຜົນສຳເລັດອັນໃຫຍ່ ຫຼວງເຊັ່ນ: ສະຖານີພະລັງງານໄຟຟ້າໃຫຍ່ທີ່ມີຄວາມແຮງສູງ ໄດ້ສ້າງຂຶ້ນໃນແມ່ນ້ຳດານູບ (ອູແກຣນ)ໂດຍໃສ່ຊື່ວ່າ: ສະຖານີພະລັງງານໄຟຟ້າ ວະລາດີເມຍ ອີລິດ ເລນິນ. ນອກຈາກນັ້ນ, ຍັງມີການກໍ່ສ້າງຂຶ້ນໃນບັນດາລັດຕ່າງໆເປັນຈຳນວນຫຼວງຫຼາຍອີກດ້ວຍ.

ແຜນການ 5 ປີຊຸດທຳອິດ ໄດ້ຮັບການປະຕິບັດສຳເລັດກ່ອນຄາດຫມາຍທີ່ກຳນົດໄວ້ ເຊິ່ງຜົນສຳເລັດດັ່ງກ່າວໄດ້ເຮັດໃຫ້ຊີວິດຄວາມເປັນຢູ່ຂອງປະຊາຊົນມີການປ່ຽນແປງໄປໃນທາງທີ່ດີຂຶ້ນເນື່ອງຈາກຜົນຜະລິດທາງດ້ານກະສິກຳ ແລະ ອຸດສາຫະກຳໄດ້ຫຼາຍ ແລະ ລາຍໄດ້ຂອງສະມາຊິກສະຫະກອນ ແລະ ກຳມະກອນເພີ່ມຂຶ້ນ.

**2) ແຜນການ 5 ປີຄັ້ງທີ 2 (1933-1938)**

ແຜນການ 5 ປີຄັ້ງທີ 2 ໄດ້ຖືກຮັບຮອງ ໂດຍມີເປົ້າຫມາຍການກໍ່ສ້າງໂຮງງານໃຫມ່ໃຫ້ຫຼາຍຂຶ້ນກວ່າ ເກົ່າ ແລະ ເລັ່ງໃສ່ການກໍ່ສ້າງໂຮງງານລົດທຣັກເຕີສຳລັບການກະສິກຳ ແລະ ດຳເນີນການຜະລິດສິນຄ້າ ທີ່ມີຄວາມຈຳເປັນແກ່ພົນລະເມືອງໃຫ້ຫຼາຍຂຶ້ນ.

ເພື່ອປະຕິບັດແຜນການນີ້ໃຫ້ສຳເລັດຜົນ ປະຊາຊົນໂຊວຽດໄດ້ສ້າງ ໂຮງງານໃຫມ່ຂະຫນາດໃຫຍ່ຂຶ້ນ ຫຼາຍຮ້ອຍແຫ່ງເຊັ່ນ: ໂຮງງານກົນຈັກ, ໂຮງງານລົດໄຖນາ, ໂຮງງານຫົວລົດໄຟ ແລະ ອື່ນໆ. ດ້ວຍການ ຊ່ວຍ ເຫຼືອຂອງກົນຈັກຕ່າງໆ ຈຶ່ງມີການສ້າງເສັ້ນທາງຄົມມະນາຄົມທາງນ້ຳໃຫ້ມີການເຊື່ອມຕໍ່ກັບຫຼາຍ ເຂດແຄວ້ນດ້ວຍການຂຸດຄອງເດີນເຮືອເຊື່ອມຈອດລະຫວ່າງທະເລຂາວກັບທະເລບານຕິກ ແລະ ແມ່ນ້ຳ ໂວນກາກັບແມ່ນ້ຳມົດສະກູ ພ້ອມນັ້ນໃນນະຄອນມົດສະກູມີການກໍ່ສ້າງທາງລົດໄຟໃຕ້ດິນຂຶ້ນເປັນຄັ້ງທຳອິດ.

ຜົນຂອງການປະຕິບັດແຜນການນີ້ສະຫະກອນກະເສດທົ່ວປະເທດໄດ້ຮັບລົດຂົນສົ່ງ 150.000 ຄັນ, ລົດກ່ຽວເຂົ້າ 33.000 ຄັນ, ລົດໄຖນາຫຼາຍພັນຄັນ. ໃນປີ ຄ.ສ 1934 ການແຈກຈາຍເຂົ້າຈີ່, ນ້ຳມັນເບີ ແລະ ຜະລິດຕະພັນອື່ນໆຕາມໃບບິງໃຫ້ແກ່ພົນລະເມືອງໄດ້ຖືກຍົກເລີກໄປ. ໃນປີ ຄ.ສ 1936 ສາມາດຜະລິດເຄື່ອງອຸປະໂພກ ແລະ ບໍລິໂພກທີ່ຈຳເປັນໄດ້ເພີ່ມຂຶ້ນ 2 ເທົ່າ, ອັດຕາເງິນເດືອນຂອງກຳມະກອນ ແລະ ພະນັກງານເພີ່ມຂຶ້ນຫຼາຍກວ່າ 2 ເທົ່າ. ສ່ວນລາຍໄດ້ຂອງສະມາຊິກສະຫະກອນເພີ່ມຂຶ້ນເກືອບ 3 ເທົ່າ.

ບັນດາຕົວເມືອງຕ່າງໆໄດ້ຮັບການພັດທະນາຢ່າງໄວວາເຊັ່ນ: ຖະໜົນຫົນທາງ, ອາຄານສະຖານທີ່. ເຮືອນໃຫມ່ໆຂະໜາດໃຫຍ່ຖືກສ້າງຂຶ້ນຢ່າງຫຼວງຫຼາຍ. ນະຄອນມົດສະກູທີ່ເກົ່າແກ່ໄດ້ຮັບການຟື້ນຟູຄືນໃຫມ່ ແລະ ກາຍເປັນນະຄອນຫຼວງທີ່ສວຍງາມ ແລະ ທັນສະໄຫມທີ່ສຸດແຫ່ງໜຶ່ງຂອງໂລກ, ການກືກໜັງສືຖືກລົບລ້າງ, ຕາໜ່າງການສຶກສາຂະຫຍາຍກວ້າງອອກ, ນັກຮຽນເພີ່ມຂຶ້ນ, ແບບແຜນການດໍາລົງຊີວິດ ຂອງປະຊາຊົນໂຊວຽດໃນທຸກໆຄອບຄົວໄດ້ຮັບສິ່ງອໍານວຍຄວາມສະດວກຫຼາຍຢ່າງ.

ບັນດານັກຂຽນໂຊວຽດທີ່ມີຊື່ສຽງໂດ່ງດັງ ໄດ້ແກ່ມາກຊິມກອກກີ້, ອາເລັກຊັງໂຕນສະໂຕຍ, ມີຄາອິນ ໂຊໂລໂຄບ, ນິໂກລາຍ ໂອສະຕະລົບສະກີ ແລະ ຜູ້ອື່ນໆ ໄດ້ແຕ່ງປຶ້ມສິລະປະອັນດີເດັ່ນ ເຊິ່ງໄດ້ເປີດເຜີຍຜົນງານ ວິລະກໍາຂອງປະຊາຊົນໂຊວຽດທັງໃນດ້ານການອອກແຮງງານ ແລະ ການສູ້ຮົບ. ໂຮງລະຄອນ, ໂຮງຮູບ ເງົາ, ພິພິທະພັນຫຼາຍຮ້ອຍແຫ່ງໄດ້ກໍ່ສ້າງຂຶ້ນ ແລະ ນັກວິທະຍາສາດໂຊວຽດໄດ້ປະສົບຜົນສໍາເລັດຫຼາຍຢ່າງ.

ໃນປີ ຄ.ສ 1936 ເປັນຊ່ວງໄລຍະຂອງການປະຕິບັດແຜນການ 5 ປີຄັ້ງທີ 2 ເຊິ່ງໄດ້ເປັນຜົນດີຕໍ່ການກໍ່ສ້າງສັງຄົມນິຍົມ ໂດຍສະເພາະທາງດ້ານເສດຖະກິດ, ການເມືອງ ແລະ ວັດທະນະທໍາຂອງປະຊາຊົນໂຊວຽດ ໄດ້ຮັບການປ່ຽນແປງໃນຂັ້ນພື້ນຖານ, ທີ່ດິນ, ຊັບໃນດິນສິນໃນນໍ້າ ແລະ ໂຮງຈັກໂຮງງານ ລ້ວນແຕ່ເປັນຊັບສິນບັດຂອງປະຊາຊົນທັງຊາດ, ຄວາມສາມັກຄີ ແລະ ມິດຕະພາບລະຫວ່າງຊົນຊາດຕ່າງໆໄດ້ຮັບການຈັດຕັ້ງຂຶ້ນ, ຄວາມສະເຫມີພາບ ແລະ ສິດທິຂອງບັນດາປະຊາຊາດຕ່າງໆໄດ້ຮັບການ ປົກປ້ອງຈາກສະພາ ໂຊວຽດທີ່ເປັນຕົວແທນຂອງຊາວຜູ້ອອກແຮງງານເປັນຢ່າງດີ.

ເມື່ອປະສົບຜົນສໍາເລັດອັນໃຫຍ່ຫຼວງໃນການປະຕິບັດແຜນການ 5 ປີຄັ້ງທີ 1 ແລະ ທີ 2, ມາເຖິງປີ ຄ.ສ 1937 ສະຫະພາບໂຊວຽດໄດ້ວາງ ໂຄງການໄລຍະໃຫມ່ ຫຼື ແຜນການ 5 ປີຄັ້ງທີ 3 (1938-1943) ເພື່ອພັດທະນາເສດຖະກິດໃຫ້ຂະຫຍາຍຕົວລື່ນປະເທດນາຍທຶນ. ແຕ່ພໍມາເຖິງເດືອນ ມິຖຸນາ ປີ ຄ.ສ 194 1, ຟາຊິດເຢຍລະມັນໄດ້ເປີດສາກບຸກໂຈມຕີສະຫະພາບໂຊວຽດຢ່າງຂະໜາດໃຫຍ່, ປະຊາຊົນໂຊວຽດຈໍາຕ້ອງ ຢຸດຕິການສ້າງສາປະເທດຊາດ ດໍາເນີນການຕໍ່ສູ້ກັບສັດຕູຜູ້ຮຸກຮານ ເພື່ອປົກປັກຮັກສາປະເທດຊາດ.

# ບົດທີ 12

# ຂະບວນການປະຕິວັດຢູ່ບັນດາປະເທດນາຍທຶນໃນເອີຣົບ, ອາເມຣິກາ, ການສ້າງຕັ້ງ ສາກົນທີ III ແລະ ຂະບວນການປະຕິວັດໂລກແຕ່ປີ 1918-1939

## 1. ຂະບວນການປະຕິວັດຢູ່ບັນດາປະເທດນາຍທຶນໃນເອີຣົບ ແລະ ອາເມຣິກາ

ການປະຕິວັດເດືອນ ຕຸລາ ຂອງປະຊາຊົນຣັດເຊຍ ໄດ້ກາຍເປັນພະລັງແຮງໃນການກະຕຸກຊຸກຍູ້ໃຫ້ ແກ່ ຂະບວນການປະຕິວັດຂອງຊົນຊັ້ນຊາວຜູ້ອອກແຮງງານໃນທົ່ວໂລກໄດ້ເກີດຂຶ້ນຢ່າງແຂງແຮງ ແລະ ລຽນຕິດ ເດັ່ນ ກວ່າໝູ່ແມ່ນນັບຕັ້ງແຕ່ສົງຄາມໂລກຄັ້ງທີ່ I ເປັນຕົ້ນມາ ໂດຍສະເພາະຂະບວນການປະຕິວັດປົດປ່ອຍຊາດໄດ້ເກີດ ຂຶ້ນຢູ່ບັນດາປະເທດນາຍທຶນເອີຣົບ ແລະ ອາເມຣິກາ.

ວັນທີ 9 ພະຈິກ ປີ ຄ.ສ 1918 ກຳມະກອນເຢຍລະມັນ ຫຼາຍພັນຄົນໄດ້ເດີນຂະບວນນັດຢຸດງານ ຢູ່ທີ່ນະ ຄອນແບັກແລັງ ເພື່ອທວງໃຫ້ຊົນຊັ້ນນາຍທຶນເພີ່ມເງິນເດືອນ, ຫຼຸດຜ່ອນໂມງເຮັດວຽກ ແລະ ສ້າງເງື່ອນໄຂ ການດຳລົງ ຊີວິດຂອງເຂົາເຈົ້າໃຫ້ດີຂຶ້ນຂະບວນນັດຢຸດງານດັ່ງກ່າວໄດ້ກາຍເປັນຂະບວນການຕໍ່ສູ້ດ້ວຍ ກຳລັງປະກອບອາວຸດຢ່າງ ແຂງແຮງ ເຮັດໃຫ້ເຈົ້າຈັກກະພັດວິນແຮມ II ຈຳຕ້ອງໄດ້ປົບໜີໄປປະເທດ ໂຮນລັງ ແລະ ລະບອບລາຊາທິປະໄຕ ຖືກໂຄ່ນລົ້ມ. ດັ່ງນັ້ນ, ຜູ້ນຳກຳມະກອນເຢຍລະມັນ ໄດ້ປະກາດສ້າງຕັ້ງອຳນາດການປົກຄອງໂຊວຽດຂຶ້ນຢູ່ຫຼາຍແຫ່ງ ໃນທົ່ວປະເທດ, ແຕ່ຜົນສຸດທ້າຍອຳນາດການປົກຄອງດັ່ງກ່າວໄດ້ຕົກຢູ່ໃນກຳມືຂອງຊົນຊັ້ນນາຍທຶນ, ການປະຕິວັດ ຄັ້ງນີ້ ເປັນພຽງການປະຕິວັດສ້າງຕັ້ງລະບອບສາທາລະນະລັດຂອງຊົນຊັ້ນນາຍທຶນ. ໃນເດືອນທັນວາ ປີ ຄ.ສ 1918 ພັກກອມມູນິດເຢຍລະມັນ ໄດ້ຮັບການສ້າງຕັ້ງຂຶ້ນ ແລະ ໄດ້ນຳພາຂະບວນການປະຕິວັດໃນໄລຍະໃໝ່.

ຂະບວນການຕໍ່ສູ້ຕ້ານຊົນຊັ້ນນາຍທຶນຂອງຊົນຊັ້ນກຳມະກອນຮົງກາຣີ ໄດ້ລຸກຂຶ້ນເປັນຂະບວນຢ່າງດຸເດືອດ ແລະ ນັບມື້ກ້າວຂຶ້ນສູ່ລະດັບສູງ ເຊິ່ງຊົນຊັ້ນກຳມະກອນສາມາດສ້າງຕັ້ງອຳນາດການປົກຄອງ ໃໝ່ຂຶ້ນ ແລະ ໃນ ຂະນະດຽວກັນພັກກອມມູນິດຮົງກາຣີກໍ່ໄດ້ຮັບການສ້າງຕັ້ງຂຶ້ນໃນເດືອນກຸມພາ ປີ ຄ.ສ 1018. ພາຍໃຕ້ການນຳພາ ຂອງພັກກອມມູນິດ, ກຳມະກອນ ແລະ ຊາວຜູ້ອອກແຮງງານ ກໍຍິ່ງລຸກຂຶ້ນຕໍ່ສູ້ຢ່າງໜັກຢູ່ທີ່ນະຄອນຫຼວງບູດາແປັດ. ດ້ວຍເຫດນັ້ນ, ວັນທີ 21 ມີນາ ປີ ຄ.ສ 1919 ໄດ້ມີການປະກາດສ້າງຕັ້ງເປັນປະເທດສາທາລະນະລັດຮົງກາຣີ.

ນອກຈາກບັນດາປະເທດທີ່ໄດ້ກ່າວມາແລ້ວນັ້ນ, ຂະບວນປະຕິວັດຂອງຊົນຊັ້ນຊາວຜູ້ອອກແຮງງານ ຍັງໄດ້ ເກີດຂຶ້ນຢູ່ຫຼາຍປະເທດໃນທະວີບເອີຣົບເຊັ່ນ: ປະເທດຝຣັ່ງ, ອີຕາລີ, ອັງກິດ, ອາເມຣິກາ ແລະ ປະເທດ ອື່ນໆຫຼາຍ ປະເທດ ພ້ອມນັ້ນ ພັກກອມມູນິດຂອງບັນດາປະເທດດັ່ງກ່າວກໍໄດ້ຮັບການສ້າງຕັ້ງຂຶ້ນ ພ້ອມໆກັນ.

ນັບແຕ່ປີ ຄ.ສ 1929 ເປັນຕົ້ນມາ, ຂະບວນການປະຕິວັດຍິ່ງເພີ່ມທະວີຄວາມດຸເດືອດຂຶ້ນອີກຄັ້ງໜຶ່ງ ເມື່ອ ລັດທິຟາຊິດໄດ້ແຜ່ກະຈາຍອອກ ໂດຍສະເພາະ ໄດ້ເກີດມີຂະບວນແນວໂຮມປະຊາຊົນຕໍ່ຕ້ານ ລັດທິຟາຊິດ ແລະ ຕໍ່ຕ້ານສົງຄາມຢ່າງແຂງແຮງ.

ໃນວັນທີ 6 ກຸມພາ ປີ ຄ.ສ 1934 ພວກຟາຊິດ ໄດ້ບຸກເຂົ້າສະພາແຫ່ງຊາດຂອງຝຣັ່ງ ເພື່ອໂຄ່ນລົ້ມລັດຖະບານ ແລະ ຈັດຕັ້ງລະບອບຟາຊິດຂຶ້ນ ໃນສະພາບການດັ່ງກ່າວ ພັກກອມມູນິດຝຣັ່ງໄດ້ປຸກລະດົມກຳມະກອນໃຫ້ລຸກຂຶ້ນຕໍ່ສູ້ຕ້ານກຳລັງຟາຊິດໃຫ້ປະລາໄຊລົງໄດ້ຢ່າງທັນການ ແລະ ໄດ້ສ້າງຕັ້ງແນວໂຮມປະຊາຊົນຕໍ່ຕ້ານລັດທິຟາຊິດຂຶ້ນໃນເດືອນມັງກອນ ປີ ຄ.ສ 1936. ໃນການເລືອກຕັ້ງລັດຖະບານຝຣັ່ງ ທີ່ມີຂຶ້ນໃນເດືອນ ພຶດສະພາ ປີ ຄ.ສ 1936 ແນວໂຮມປະຊາຊົນຕ້ານລັດທິຟາຊິດໄດ້ຮັບໄຊຊະນະ, ອັນເປັນ ການກີດກັ້ນບໍ່ໃຫ້ພວກຟາຊິດໄດ້ຂຶ້ນກຳອຳນາດໃນລັດຖະບານຝຣັ່ງ.

ສ່ວນປະເທດແອດສະປາຍ ກໍມີການເລືອກຕັ້ງລັດຖະບານຂຶ້ນໃນເດືອນ ກຸມພາ ປີ ຄ.ສ 1936 ໂດຍ ແມ່ນແນວໂຮມປະຊາຊົນຕໍ່ຕ້ານລັດທິຟາຊິດ ເປັນຜູ້ໄດ້ຮັບໄຊຊະນະໃນການເລືອກຕັ້ງເຊັ່ນກັນ ແລະ ຈາກນັ້ນ ລັດຖະບານແນວໂຮມປະຊາຊົນກໍ່ໄດ້ຮັບການສ້າງຕັ້ງຂຶ້ນ, ແຕ່ພວກຟາຊິດເຢຍລະມັນ ແລະ ອີຕາລີ ໄດ້ ຊ່ວຍເຫຼືອຟາຊິດແອັດສະປາຍ ຈຶ່ງມີການລັດຖະປະຫານເກີດຂຶ້ນຢູ່ຕົວເມືອງຕ່າງໆ. ສະນັ້ນ, ປະຊາຊົນ ແອັດສະປາຍໄດ້ພາກັນລຸກຂຶ້ນຕໍ່ສູ້ຕ້ານພວກຟາຊິດຢ່າງດຸເດືອດ ເຊິ່ງຂະບວນການຕໍ່ສູ້ດັ່ງກ່າວໄດ້ແກ່ ຍາວເຖິງປີ ຄ.ສ 1939 ແລະ ໃນທີ່ສຸດສົງຄາມຕ້ານຟາຊິດຂອງປະຊາຊົນແອັດສະປາຍ ກໍບໍ່ສາມາດ ຍາດໄດ້ໄຊຊະນະ.

ໃນທົດສະວັດທີ 8-9 ຂອງສະຕະວັດທີ່ 19 ຊາວກຳມະກອນອາເມຣິກາໄດ້ພາກັນລຸກຂຶ້ນຕໍ່ສູ້ຕ້ານ ຊົນຊັ້ນນາຍທຶນຢ່າງດຸເດືອດ ແລະ ຮຸນແຮງ. ຂະບວນນັດຢຸດງານຄັ້ງໃຫຍທີ່ເປັນປະຫວັດສາດນັ້ນ ແມ່ນການນັດຢຸດງານຂອງກຳມະກອນຢູຊິກາໂກ ທີ່ມີຈຳນວນ 350.000 ຄົນ ໃນວັນທີ 1 ພຶດສະພາ ປີ ຄ.ສ 1886 ເພື່ອສະໜັບສະໜູນຄຳຮຽກຮ້ອງໃຫ້ມີການເຮັດວຽກ 8 ຊົ່ວໂມງ/ມື້ ຜົນສຳເລັດຂອງການປະທ້ວງຄັ້ງນັ້ນ ເຮັດໃຫ້ກຳມະກອນ 50.000 ຄົນ ໄດ້ເຮັດວຽກມື້ລະ 8 ຊົ່ວໂມງ ຈາກນັ້ນມາວັນທີ 1 ພຶດສະພາກໍໄດ້ກາຍເປັນວັນກຳມະກອນສາກົນຈົນເທົ່າທຸກວັນນີ້. - ໃນປີ ຄ.ສ 1905-1907 ການຕໍ່ສູ້ຂອງຊົນຊັ້ນກຳມະກອນອາເມຣິກາຍິ່ງຂະຫຍາຍຕົວຂຶ້ນ

ກ້າວໄປເຖິງມີການຈັດຕັ້ງພັກຂອງຕົນຂຶ້ນເອີ້ນວ່າ: ສະມາຄົມກຳມະກອນອຸດສາຫະກຳສາກົນ" ແຕ່ວ່າການນຳພາຂອງພັກນີ້ບໍ່ເດັດຂາດ, ເຫັນແກ່ພັກພວກ ດັ່ງນັ້ນ, ຈຶ່ງເຮັດໃຫ້ເສັ້ນທາງກ້າວຂຶ້ນຂອງກຳມະກອນອາເມຣິກາຊັກຊ້າ ແລະ ຖືກກີດຂວາງຈາກພວກນາຍທຶນ.

## 2. ການສ້າງຕັ້ງສາກົນ III.

ເຖິງແມ່ນວ່າ ສາກົນທີ II ໄດ້ລົ້ມລະລາຍລົງໃນເວລາທີ່ສົງຄາມໂລກຄັ້ງທີ 1 (1914-1918) ໄດ້ລະເບີດຂຶ້ນກໍຕາມ ແຕ່ຂະບວນການປະຕິວັດຂອງຊົນຊັ້ນກຳມະຊີບໃນທົ່ວໂລກຍັງສືບຕໍ່ ແລະ ນັບມື້ເພີ່ມທະວີຄວາມຮຸນແຮງຂຶ້ນຢ່າງລຽນຕິດອັນເນື່ອງມາຈາກພັກກອມມູນິດໄດ້ຮັບການສ້າງຕັ້ງຂຶ້ນຢູ່ ບັນດາປະເທດນາຍທຶນ, ບັນດາປະເທດເມືອງຂຶ້ນ ແລະ ເຄິ່ງເມືອງຂຶ້ນ. ເຖິງຢ່າງນັ້ນກໍຕາມຂະບວນການ ປະຕິວັດຂອງຊົນຊັ້ນກຳມາຊີບໃນທົ່ວໂລກ ຍັງຮຽກຮ້ອງໃຫ້ມີອົງການຈັດຕັ້ງສາກົນ ເພື່ອນຳພາ ການປະຕິວັດໃຫ້ໄປເຖິງຈຸດມຸ່ງໝາຍ ຫຼື ໄຊຊະນະຂັ້ນສຸດທ້າຍຂອງຕົນ.

ໃນວັນທີ 2 ມີນາ ປີ ຄ.ສ 1919 ກອງປະຊຸມໃຫຍ່ສາກົນກອມມູນິດ ໄດ້ໄຂຂຶ້ນທີ່ນະຄອນຫຼວງມົດສະກູແຫ່ງປະເທດຣັດເຊຍ. ໃນກອງປະຊຸມມີຜູ້ແທນພັກກອມມູນິດທີ່ມາຈາກບັນດາປະເທດຕ່າງໆເຂົ້າຮ່ວມ ເປັນຈຳ

ນວນຫຼວງຫຼາຍ. ສາກົນກອມມູນິດ ເອີ້ນວ່າ ສາກົນທີ່ III ເຊິ່ງແມ່ນອົງການຈັດຕັ້ງຂອງຊົນຊັ້ນກຳມາຊີບ ແລະ ຊາວຜູ້ອອກແຮງງານຕ່າງໆຢູ່ໃນທົ່ວໂລກ.

 

ວາລາດີເມຍ ອີລິ້ສ ເລນິນປະກາດສ້າງຕັ້ງສາກົນທີ3

ສາກົນທີ່ III ຄົງຕົວຢູ່ໄດ້ເຖິງປີ ຄ.ສ 1943 ຕະຫຼອດໄລຍະເວລາດັ່ງກ່າວ ສາກົນທີ່ III ໄດ້ ດຳເນີນກອງປະຊຸມຂອງຕົນເຖິງ 7 ຄັ້ງ ເພື່ອວາງແນວທາງການປະຕິວັດໃຫ້ແທດເຫມາະກັບແຕ່ລະ ໄລຍະແຫ່ງການຂະ ຫຍາຍຕົວຂອງການປະຕິວັດ ໂລກ. ກອງປະຊຸມຄັ້ງທີ II ຂອງສາກົນທີ່ III ທີ່ຈັດຂຶ້ນ ໃນປີ ຄ.ສ 1920 ໄດ້ຜ່ານໂຄງການການແກ້ໄຂ ບັນຫາຊົນຊາດ ແລະ ຫົວເມືອງຂຶ້ນຕ່າງໆໂດຍແມ່ນ ທ່ານ ເລນິນ ເປັນຜູ້ວາງອອກ.

ພາຍໃຕ້ການນຳພາຂອງສາກົນກອມມູນິດ, ຂະບວນການປະຕິວັດໂລກ ໄດ້ມີບາດກ້າວການ ຂະຫຍາຍ ຕົວທີ່ເຂັ້ມແຂງ ແລະ ມີຄວາມເປັນເອກະພາບໃນການຕໍ່ຕ້ານລັດທິຈັກກະພັດ ແລະ ກຳລັງປະຕິການສາກົນ.ເນື່ອງຈາກຂະບວນການປະຕິວັດຂອງຊົນ ຊັ້ນກຳມາຊີບ ແລະ ພັກກອມມູນິດຂອງບັນດາປະເທດຕ່າງໆໃນທົ່ວໂລກ ໄດ້ມີຄວາມເຕີບໃຫຍ່ເຂັ້ມແຂງຢ່າງພຽງພໍ ແລະ ມີຄວາມສາມາດ ເພິ່ງຕົນເອງໄດ້ໃນການດຳເນີນການຕໍ່ສູ້ຕ້ານພວກນາຍທຶນ. ດັ່ງນັ້ນ, ການຄົງຕົວ ແລະ ການເຄື່ອນໄຫວຂອງສາກົນ ທີ່ III ມາເຖິງເວລານີ້ເຫັນວ່າບໍ່ມີຄວາມແທດເຫມາະກັບສະພາບການປ່ຽນແປງໃຫມ່ຂອງໂລກ, ມາເຖິງເດືອນ ພຶດສະພາ ປີ ຄ.ສ 1943 ສາກົນທີ່ III ຈຶ່ງໄດ້ປະກາດຍຸບເລີກຕົວເອງ. ເຖິງຢ່າງນັ້ນ ກໍຕາມສາກົນທີ່ III ໄດ້ມີຜົນງານອັນໃຫຍ່ຫຼວງຕໍ່ຂະບວນການປະຕິວັດຂອງຊົນຊັ້ນກຳມາຊີບໃນໂລກ.

## 3. ຂະບວນການປົດປ່ອຍຊາດແຕ່ປີ 1918-1939

### 3.1.ຂະບວນການຝົດປ່ອຍຊາດໃນທະວີບອາຊີ

ອາຊີເປັນດິນແດນທີ່ອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ແລະ ມີປະຊາກອນອາໄສຢ່າງຫຼວງຫຼາຍຈຶ່ງຕົກເປັນເປົ້າຫມາຍຮຸກຮານ ແລະ ຄອບຄອງຂອງປະເທດມະຫາອຳນາດຕາເວັນຕົກ ມາຕັ້ງແຕ່ສະຕະວັດທີ XVII. ເມື່ອມາຮອດສະຕະວັດທີ XIX ບັນດາປະເທດໃນທະວີບອາຊີສ່ວນໃຫຍ່ ໄດ້ຕົກເປັນເມືອງຂຶ້ນຂອງປະເທດມະຫາອຳນາດ ແລະ ຂະບວນການປົດປ່ອຍຊາດຂອງບັນດາປະເທດ ຕ່າງໆເຫຼົ່ານັ້ນກໍ່ເລີ່ມຕົ້ນຂຶ້ນເຊັ່ນ:

**1) ຂະບວນການຕໍ່ສູ້ຂອງປະຊາຊົນອິນເດຍ**

ປະເທດອິນເດຍຕັ້ງຢູ່ເຂດອາຊີໃຕ້ ເຊິ່ງເປັນດິນແດນທີ່ອຸດົມສົມບູນໄປດ້ວຍຊັບພະຍາກອນ ແລະ ເໝາະສົມແກ່ການກະສິກຳ, ໃນທ້າຍສະຕະວັດທີ XVIII – XIX ອິນເດຍໄດ້ກາຍເປັນອານານິຄົມຂອງຈັກກະພັດອັງກິດ ປະຊາຊົນຖືກກົດຂີ່ຂູດຮີດຢ່າງໜັກໜ່ວງ ແລະ ມີຊີວິດການເປັນຢູ່ທີ່ທຸກຍາກລຳບາກ.

ດັ່ງນັ້ນ, ດ້ວຍຈິດໃຈຮັກຊາດ ແລະ ຄວາມເປັນເອກະລາດແຫ່ງຊາດ ປະຊາຊົນອິນເດຍ ຈຶ່ງດຳເນີນ ການຕໍ່ຕ້ານພວກລ່າເມືອງຂຶ້ນ ນັບຕັ້ງແຕ່ມື້ທີ່ພວກເຂົາເລີ່ມແຊກແຊງເປັນຕົ້ນມາ, ໂດຍສະເພາະນັບຕັ້ງແຕ່ປີ ຄ.ສ 1923-1933 ຂະບວນການຕໍ່ຕ້ານອັງກິດຂອງປະຊາຊົນອິນເດຍໄດ້ລະເບີດຂຶ້ນຢ່າງແຮງເຊັ່ນ: ໃນປີ ຄສ 1930 ພັກຄອງເກຣດແຫ່ງອິນເດຍ ໄດ້ປະກາດນະໂຍບາຍຕ່າງໆອອກບໍ່ໃຫ້ປະຊາຊົນຮ່ວມມືທາງດ້ານການທະຫານ, ການເມືອງ ແລະ ເສດຖະກິດກັບຈັກກະພັດອັງກິດ ເຊິ່ງເປັນວິທີການຕໍ່ສູ້ແບບສັນຕິ ທີ່ທ່ານມະຫາຕະມະຄານທີ່ນຳມາໃຊ້ ເພື່ອຕໍ່ສູ້ກັບອັງກິດເອີ້ນວ່າ ການຕໍ່ສູ້ແບບອະຫິງສາ ຫຼື ແບບມິດງຽບ. ຮູບການຕໍ່ສູ້ດັ່ງກ່າວໄດ້ມີປະຊາຊົນທີ່ບໍ່ເຫັນດີ ຈຶ່ງໄດ້ຈັດຕັ້ງການຕໍ່ສູ້ດ້ວຍກຳລັງອາວຸດຂອງ ປະຊາຊົນຂຶ້ນ ແລະ ແຜ່ລາມໄປຢ່າງກວ້າງຂວາງ. ເຖິງແມ່ນວ່າ ຂະບວນການຕໍ່ສູ້ນີ້ບໍ່ໄດ້ຮັບໄຊຊະນະກໍຕາມ, ແຕ່ກໍ ເຮັດໃຫ້ພວກລ່າເມືອງຂຶ້ນ ອັງກິດມີຄວາມກະວົນກະວາຍ ແລະ ຢ້ານກົວ.

**2)ຂະບວນການຕໍ່ສູ້ຂອງປະຊາຊົນຈີນ**

ການປະລາໄຊໃນສົງຄາມຢາຝິ່ນ ປີ ຄ.ສ 1840-1842 ແລະ ການລົງນາມໃນສົນທິສັນຍານານກິງ ເມື່ອວັນທີ່ 29 ສິງຫາ 1842 ໄດ້ສົ່ງຜົນກະທົບອັນໃຫຍ່ຫຼວງຕໍ່ກັບປະເທດຈີນ, ໂດຍສະເພາະແມ່ນການສູນເສຍຄວາມເປັນເອກະລາດແຫ່ງຊາດ ເຊິ່ງເປັນການເປີດທາງໃຫ້ປະເທດມະຫາອຳນາດຕາເວັນຕົກ ຫັນເອົາຈີນເປັນຕະຫຼາດຈຳໜ່າຍສິນຄ້າ ແລະ ເປັນແຫຼ່ງຕອບສະໜອງວັດຖຸດິບໃຫ້ແກ່ພວກເຂົາ.

ດ້ວຍເຫດນັ້ນ, ປະຊາຊົນຈີນຜູ້ຮັກຊາດຈຶ່ງໄດ້ຈັດຕັ້ງກຳລັງປະກອບອາວຸດຂຶ້ນ ເພື່ອຕໍ່ຕ້ານກັບມະຫາອຳນາດຕາເວັນຕົກ ນັບແຕ່ສົງຄາມໂລກຄັ້ງທີ 1 ສິ້ນສຸດລົງ, ຂະບວນການປະຕິວັດຈີນໄດ້ເກີດຂຶ້ນໃນວັນທີ 4 ພຶດສະພາ ປີ ຄ.ສ 1919 ອັນມີສາເຫດມາຈາກ ຄວາມບໍ່ພໍໃຈໃນສົນທິສັນຍາແວກໄຊທີ່ກຳນົດໃຫ້ປະເທດ ມະຫາອຳນາດຕ່າງໆມີອະພິສິດເທິງດິນແດນຈີນ, ນັກສຶກສາ 5.000 ຄົນ ຢູ່ປັກກິ່ງສົມທົບກັບກຳມະກອນ ໃນຕົວເມືອງຕ່າງໆເຊັ່ນ: ຊຽງໄຮ , ນານກິ່ງ, ປັກກິ່ງ ແລະ ຕົວເມືອງອື່ນໆໄດ້ເດີນຂະບວນປະທ້ວງ ແລະ ແຜ່ລາມໄປຢ່າງກວ້າງຂວາງ ໃນຂອບເຂດທົ່ວປະເທດ ຈີນກ້າວໄປສູ່ການສ້າງຕັ້ງພັກກອມມູນິດຈີນຂຶ້ນ ໃນວັນທີ 1 ກໍລະກົດ ປີ ຄ.ສ 1921.

ພາຍໃຕ້ການນຳພາຂອງພັກກອມມູນິດ, ນັບແຕ່ປີ ຄ.ສ 1926-1927 ຂະບວນການຕໍ່ສູ້ຂອງປະຊາຊົນຈີນໄດ້ດຳເນີນການຕໍ່ຕ້ານລັດຖະບານ ແລະ ທວງໃຫ້ຈັກກະພັດຕ່າງດ້າວຕ້ອງຖອນອອກຈາກປະເທດຈີນ, ຂະບວນຮັກຊາດໄດ້ຈັດຕັ້ງແນວໂຮມເອກະພາບຂຶ້ນ ໂດຍມີ 2 ໜັກເຂົ້າຮ່ວມຄື: ພັກກອມມູນິດ ແລະ ພັກກົກມິນຕັງ ໂດຍມີທ່ານຊຸນຍັດເຊນ ເປັນຫົວໜ້າ, ໃນຂະນະທີ່ຂະບວນການຕໍ່ສູ້ປະຕິວັດກຳລັງໄດ້ຮັບໄຊຊະນະ, ຈຽງໄຄເຊັກຜູ້ນຳຂອງພັກຄະນະຊາດ ຫຼື ພັກກົກມິນຕັ້ງ ກໍໄດ້ດຳເນີນການທໍລະຍົດຕໍ່ຂະບວນ ການປະຕິວັດດ້ວຍການເຮັດລັດຖະປະຫານຂຶ້ນຢູ່ຊຽງໄຮ ໃນເດືອນ ກໍລະກົດ ປີ ຄ.ສ 1927 ແລະ ດຳເນີນການ ປາບປາມຂະບວນການປະຕິວັດຢາງນອງເລືອດ, ຈຶ່ງເຮັດໃຫ້ຂະບວນການປະຕິວັດຢຸດຕິລົງ.

ມາຮອດທ້າຍປີ ຄ.ສ 1927 - 1937 ພັກກອມມູນິດໄດ້ສືບຕໍ່ນໍາພາປະຊາຊົນຈີນ ດໍາເນີນການຕໍ່ສູ້ປະຕິວັດອີກຄັ້ງ ເພື່ອໂຄ່ນລົ້ມແອກປົກຄອງຂອງພວກລັດຖະບານຈຽງໄຄເຊັກ, ປີ ຄ.ສ 1933-1934 ພວກຈຽງໄຄເຊັກໄດ້ດໍາເນີນການປາບປາມ ແລະ ປິດລ້ອມກໍາລັງປະຕິວັດຈີນໄດ້ຮັບຄວາມເສຍຫາຍຢ່າງຫນັກຫນ່ວງ. ດັ່ງນັ້ນ, ເພື່ອຮັກສາກໍາລັງກອງທັບປະຕິວັດຈໍາຕ້ອງຕັດສິນໃຈບຸກໂຈມຕີຜ່າວົງ ປິດລ້ອມຖອນ ອອກຈາກຖານທີ່ຫມັ້ນ, ເຄື່ອນທັບທາງໄກໄປທາງພາກເຫນືອເຖິງ 12.500 ກິໂລແມັດ ເພື່ອປັບປຸງກໍາລັງ.

ປີ ຄ.ສ 1937 ສວຍໂອກາດທີ່ໂລກທຶນນິຍົມກໍາລັງປະສົບກັບວິກິດການທາງດ້ານເສດຖະກິດ, ຟາຊິດ ຍີ່ປຸ່ນໄດ້ບຸກຍຶດເອົາພາກຕາເວັນອອກສຽງເຫນືອຂອງຈີນ. ຕໍ່ຫນ້າສະພາບການນີ້, ພັກກອມມູນິດໄດ້ເປັນ ເຈົ້າການສະເຫນີກັບພັກຄະນະຊາດຢຸດຕິສົງຄາມກາງເມືອງພາຍໃນແລ້ວມາຮ່ວມມືກັນ ເພື່ອຕໍ່ຕ້ານຍີ່ປຸ່ນ. ດັ່ງນັ້ນ, ມາໃນເດືອນ ກັນຍາ ປີ ຄ.ສ 1937 ລັດຖະບານຈີນຄະນະຊາດຈໍາຕ້ອງຮ່ວມມືກັນກັບພັກກອມມູນິດ ສ້າງຕັ້ງແນວໂຮມຕໍ່ສູ້ກູ້ຊາດຕ້ານຟາຊິດຍີ່ປຸ່ນຢ່າງເປັນທາງການນັບແຕ່ນັ້ນເປັນຕົ້ນມາ.

**3)ຂະບວນການຕໍ່ສູ້ຂອງປະຊາຊົນໃນອາຊີຕາເວັນອອກສຽງໃຕ້**

ຄຽງຄູ່ກັບຂະບວນການຕໍ່ສູ້ປົດປ່ອຍຊາດໃນຂົງເຂດອື່ນໆນັ້ນ ບັນດາປະເທດໃນແຫຼມອິນດູຈີນ ເຊັ່ນ: ຫວຽດນາມ, ລາວ, ກໍາປູເຈຍ, ມຽນມາ, ອິນໂດເນເຊຍ ແລະ ມາເລເຊຍ ກໍພ້ອມພາກັນດໍາເນີນການຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຕາເວັນຕົກນັບແຕ່ມື້ທີ່ພວກມະຫາອໍານາດເຂົ້າມາຈົນຮອດມື້ທີ່ຖືກຍຶດຄອງ. ສ່ວນປະເທດສະຫຍາມ (ຣາຊະອານາຈັກໄທ) ເປັນປະເທດດຽວທີ່ລັດຖະບານຍອມປະນີປະນອມກັບພວກມະຫາອໍານາດຕາເວັນຕົກ ແລະ ຕໍ່ມາກໍຮ່ວມມືກັບຟາຊິດຍີ່ປຸ່ນ ເພື່ອສ້າງຄວາມຍິ່ງໃຫຍ່ໃນຂົງເຂດ. ແຕ່ໃນຂະນະດຽວກັນກໍມີຂະບວນການຕໍ່ຕ້ານຂອງປະຊາຊົນໄທຈໍານວນຫນຶ່ງ ແຕ່ກໍຖືກປາບປາມ.

ຂະບວນການຕໍ່ສູ້ດໍາເນີນໄປຢ່າງດຸເດືອດ ກ້າວໄປສູ່ການສ້າງຕັ້ງພັກຂອງຕົນຂຶ້ນເພື່ອນໍາພາການຕໍ່ສູ້ໃຫ້ໄປສູ່ຄວາມເປັນເອກະລາດແຫ່ງຊາດເຊັ່ນ: ປີ ຄ.ສ 1920 ອິນໂດເນເຊຍ ກໍໄດ້ສ້າງຕັ້ງພັກກອມມູນິດຂຶ້ນ ປີ ຄ.ສ 1930 ໂຮ່ຈິມິນ ໄດ້ສ້າງຕັ້ງພັກກອມມູນິດຫວຽດນາມຂຶ້ນ. ນອກຈາກນັ້ນ, ກໍຍັງມີຢູ່ໃນບັນດາປະເທດອື່ນໆອີກ.

**3.2.ຂະບວນການປົດປ່ອຍຊາດໃນທະວີບອາຟຣິກກາ**

ທະວີບອາຟຣິກາເປັນທະວີບໃຫຍ່ອັນດັບທີສອງຖັດຈາກທະວີບອາຊີ, ເປັນທະວີບທີ່ມີຊັບພະຍາກອນທີ່ມີຄ່າຢ່າງຫຼວງຫຼາຍ. ມາຮອດຕອນກາງສະຕະວັດທີ XIX ປະມານ ປີ ຄ.ສ 1870 ດິນແດນຂອງປະເທດຕ່າງໆໃນອາຟຣິກາໄດ້ຕົກເປັນເປົ້າຫມາຍຶດຄອງຂອງລັດທິອານານິຄົມ, ບັນດາປະເທດມະຫາອໍານາດຕາເວັນຕົກຕ່າງກໍພາກັນແຂ່ງຂັນກັນຂະຫຍາຍອໍານາດເຮັດໃຫ້ດິນແດນຂອງທະວີບນີ້ຕ້ອງຕົກເປັນອານານິຄົມຂອງມະຫາອໍານາດເກືອບຫມົດສິ້ນ. ປະເທດທີ່ມີຫົວເມືອງຂຶ້ນໃນແຖບນີ້ຫຼາຍກວ່າຫມູ່ແມ່ນ ຝຣັ່ງ ຖັດມາແມ່ນອັງກິດ, ປອກຕຸຍການ, ແບນຊິກ, ເຢຍລະມັນ ແລະ ແອັດສະປາຍ.

ຕະຫຼອດໄລຍະທີ່ຕົກເປັນອານານິຄົມນັ້ນ ປະຊາຊາດອາຟຣິກາໄດ້ຖືກກົດຂີ່ຂູດຮີດຢ່າງຫນັກຫນ່ວງ ປະຊາກອນສ່ວນໃຫຍ່ບໍ່ມີການສຶກສາ, ພວກເຂົາເຈົ້າດໍາລົງຊີວິດດ້ວຍຄວາມທຸກຍາກລໍາບາກ ແລະ ຜົດເຄື່ອງບໍ່ມີສ່ວນຮ່ວມໃນການປົກຄອງ ດັ່ງນັ້ນ, ມາໃນຕອນທ້າຍສະຕະວັດທີ XIX ຫາ ຕົ້ນສະຕະວັດ ທີ XX ຢູ່ທະວີບອາຟຣິກາໄດ້ເກີດມີຂະບວນການຕໍ່ຕ້ານຈັກກະພັດຂຶ້ນຢ່າງຫຼວງຫຼາຍເຊັ່ນ: ປີ ຄ.ສ 1930-1871 ຂະບວນການຕໍ່ສູ້ຕ້ານ

ຈັກກະພັດຝຣັ່ງຂອງປະຊາຊົນອານເຊຣີ ປີ ຄ.ສ 1981-1900 ຂະບວນການຕໍ່ສູ້ຕ້ານຈັກກະພັດອັງກິດຂອງປະຊາຊົນຊູດັງ, ປີ ຄ.ສ 1919-1929 ຂະບວນການຕໍ່ສູ້ຂອງປະຊາຊົນເອຢິບຕ້ານການປົກຄອງຂອງຈັກກະພັດອັງກິດ ແລະ ປີ ຄ.ສ 1801-1802 ຂະບວນການຕໍ່ສູ້ຂອງປະຊາຊົນຈາດ. ແຕ່ຂະບວນການຕໍ່ສູ້ທັງຫມົດຂອງປະເທດຕ່າງໆສ່ວນໃຫຍ່ໃນທະວີບອາຟຣິກາຊ່ວງນີ້ ບໍ່ປະສົບຜົນ ສໍາເລັດ ແລະ ຖືກຈັກກະພັດປາບປາມໃຫ້ປະລາໄຊລົງ.

### 1.3. ຂະບວນການປົດປ່ອຍຊາດໃນທະວີບອາເມກາລາຕິນ

ດິນແດນທີ່ເອີ້ນວ່າ ອາເມຣິກາລາຕິນ" ນັ້ນເພິ່ນໄດ້ກໍານົດເອົາຕັ້ງແຕ່ປະເທດເມັກຊິກໂກລົງໄປຈົນຮອດແຫຼມຮອນ, ເນື່ອງຈາກວ່າປະຊາຊົນສ່ວນໃຫຍ່ເວົ້າພາສາສະເປນ (ແອັດສະປາຍ) ແລະ ປອກຕຸຍການ ເຊິ່ງມີເຄົ້າຄໍາສັບມາຈາກພາສາລາຕິນ. ດັ່ງນັ້ນ, ເພິ່ນຈຶ່ງເອີ້ນວ່າ ອາເມຣິກາລາຕິນ. ດິນແດນແຫ່ງນີ້ກໍເປັນສ່ວນຫນຶ່ງທີ່ປະເທດມະຫາອໍານາດເຂົ້າມາຍຶດຄອງ ແລະ ກໍຖືກປະຊາຊົນຜູ້ທີ່ ເປັນເຈົ້າຂອງພື້ນທີ່ດໍາເນີນການຕໍ່ຕ້ານເຊັ່ນ:

- ໃນສະຕະວັດທີ XVI - XIX ເກີດມີຂະບວນການຕໍ່ສູ້ຂອງປະຊາຊົນອາເມຣິກາລາຕິນ ທີ່ດໍາເນີນການຕໍ່ຕ້ານພວກລ່າອານານິຄົມເອີຣົບຄື: ແອັດສະປາຍ ແລະ ປອກຕຸຍການຈົນໄດ້ ຮັບໄຊຊະນະ.
- ໃນທ້າຍສະຕະວັດທີ XIX - XX ນັບແຕ່ປີ ຄ.ສ 1870 ເປັນຕົ້ນມາບັນດາປະເທດໃນທະວີບອາເມຣິກາລາຕິນໄດ້ສໍາເລັດຂັ້ນພື້ນຖານໃນການຍາດເອົາຄວາມເປັນເອກະລາດທາງ ການເມືອງຈາກແອັດສະປາຍ. ແຕ່ເສດຖະກິດຂອງບັນດາປະເທດດັ່ງກ່າວ ຍັງອ່ອນນ້ອຍ ແລະ ກໍາລັງພັດທະນາໄປສູ່ທຶນນິຍົມ. ດັ່ງນັ້ນ, ມັນຈຶ່ງເປັນເງື່ອນໄຂສະດວກໃຫ້ແກ່ປະເທດທຶນນິຍົມ ທີ່ ກໍາລັງຂະຫຍາຍຕົວເຂົ້າໄປລົງທຶນໃນທະວີບດັ່ງກ່າວ ແຕ່ຖືກສະຫະລັດອາເມຣິກາກີດຂວາງ.

ດັ່ງນັ້ນ, ຂະບວນການຕໍ່ສູ້ຂອງປະຊາຊົນອາເມຣິກາລາຕິນໃນຕົ້ນສະຕະວັດທີ XX ຈຶ່ງເປັນຂະບວນການຕໍ່ສູ້ຕ້ານການແຊກແຊງຂອງຈັກກະພັດອາເມຣິກາ ທີ່ຕ້ອງການສ້າງ'' ວົງໄພບູນແຫ່ງສະຫະພາບອາເມຣິກາຕາມແຜນການຍຶດຄອງຂອງອາເມຣິກາ.

## 4. ຂະບວນການປະຊາທິປະໄຕ

ຂະບວນການປະຊາທິປະໄຕ ເປັນຂະບວນການຕໍ່ສູ້ຂອງປະຊາຊົນ ແລະ ກໍາມະກອນທີ່ເກີດຂຶ້ນຢູ່ໃນບັນດາປະເທດທຶນນິຍົມທີ່ຕໍ່ຕ້ານກັບການປົກຄອງຂອງຊົນຊັ້ນນາຍທຶນທີ່ກໍາອໍານາດເພື່ອຮຽກຮ້ອງເອົາສິດປະຊາທິປະໄຕ ແລະ ຄວາມເປັນເຈົ້າຂອງສັງຄົມ.

ຂະບວນການນີ້ເກີດຂຶ້ນໄປຄຽງຄູ່ກັບຂະບວນການຕໍ່ສູ້ປົດປ່ອຍຊາດຢູ່ໃນປະເທດຫົວເມືອງຂຶ້ນ, ເຄິ່ງເມືອງຂຶ້ນ ແລະ ບັນດາປະເທດທຶນນິຍົມຂະຫຍາຍຕົວ. ນັບແຕ່ປີ ຄ.ສ 1919 ເປັນຕົ້ນມາ, ຂະບວນການຕໍ່ສູ້ເພື່ອປະຊາທິປະໄຕໃນບັນດາປະເທດທຶນນິຍົມຂະຫຍາຍຕົວ (ນັບທັງປະເທດທີ່ໄດ້ຮັບໄຊຊະນະ ແລະ ປະລາໄຊໃນສົງຄາມ) ໄດ້ກ້າວຂຶ້ນສູ່ລະດັບສູງພາຍຫຼັງມະຫາປະຕິວັດ ເດືອນຕຸລາຣັດເຊຍ, ຂະບວນການດັ່ງກ່າວໄດ້ມີການຈັດຕັ້ງອໍານາດການປົກຄອງຂອງຕົນເອງຂຶ້ນ ເຖິງວ່າອໍານາດນັ້ນ ຈະບໍ່ຄົງຕົວດົນນານກໍຕາມແຕ່ກໍ່ເປັນສັນຍານເຕືອນໄພອັນຫນຶ່ງໃຫ້ພວກກໍາອໍານາດທຶນນິຍົມ ຕ້ອງມີການປັບປຸງ ແກ້ໄຂສັງຄົມຄືນໃຫມ່ເຊັ່ນ:

**4.1. ການປະຕິວັດເຢຍລະມັນ**

ການປະຕິວັດຢູ່ປະເທດເຢຍລະມັນເລີ່ມເກີດຂຶ້ນໃນຊ່ວງປີ ຄ.ສ 1918-1923 ຈາກຂະບວນການນັດ ຢຸດງານຂອງກຳມະກອນ 80.000 ຄົນທີ່ແບັກແລັງ ຈາກນັ້ນກໍແຜ່ລາມໄປໃນຂອບເຂດທົ່ວປະເທດພາຍໃຕ້ ການນຳພາຂອງ "ສະຫະພັນສະປາກຕາກຸດ". ວັນທີ່ 3 ພະຈິກ ຄ.ສ 1918 ກອງທະຫານເຮືອ ກີແອບໄດ້ ສົມທົບກັບຂະບວນກຳມະກອນຈັດຕັ້ງກອງທັບສຳພັນຂຶ້ນເອີ້ນວ່າ “ທະຫານ ໂຊວຽດ” ເພື່ອດຳເນີນການຂັບໄລ່ ພະເຈົ້າຈັກກະພັດວິນແຮມ 2.ຈາກນັ້ນດຳເນີນການຈັດຕັ້ງອຳນາດການປົກຄອງຕົນເອງຂຶ້ນ; ແຕ່ບົດຮຽນການນຳພາບໍ່ທັນສູງ, ສຸດທ້າຍກໍ່ຖືກພັກສັງຄົມປະຊາທິປະໄຕຄອບຄຸມ ເຮັດໃຫ້ການປະຕິວັດໃນຄັ້ງນີ້ກາຍມາເປັນການປະຕິວັດທຶນນິຍົມເຢຍລະມັນ.

**4.2. ການປະຕິວັດຮົງການ**

ການປະຕິວັດຮົງກາຣີ ເປັນຂະບວນການຕໍ່ສູ້ ເພື່ອປະຊາທິປະໄຕຂອງຊາວກຳມະກອນພາຍໃຕ້ການນຳພາຂອງພັກກອມມູນິດ ແລະ ພັກສັງຄົມປະຊາທິປະໄຕທີ່ມີຈຸດປະສົງເພື່ອຕໍ່ຕ້ານກັບພວກນາຍທຶນ. ຂະບວນການຕໍ່ສູ້ນີ້ສາມາດໂຄ່ນລົ້ມລັດຖະບານນາຍທຶນລົງໄດ້ ແລະ ສ້າງຕັ້ງອຳນາດການປົກຄອງຕົນເອງຂຶ້ນແທນເອີ້ນວ່າ: ລັດຖະບານໂຊວຽດຮົງກາຣີ". ແຕ່ສຸດທ້າຍສະມາຊິກພັກສັງຄົມປະຊາທິປະໄຕຈຳນວນໜຶ່ງກໍໄດ້ຫັກຫຼັງໄປສົມທົບກັບພວກນາຍທຶນແລ້ວດຳເນີນການເຄື່ອນໄຫວ ທຳລາຍລັດຖະບານໃຫມ່ຂອງຊາວກຳມະກອນລົງໃນວັນທີ 1 ສິງຫາ ປີ ຄ.ສ 1919.

**4.3 ການປະຕິວັດອີຕາລີ**

ການປະຕິວັດອີຕາລີ ເປັນຂະບວນການຕໍ່ສູ້ ເພື່ອຄວາມເປັນປະຊາທິປະໄຕຂອງຊາວກຳມະກອນ ດ້ວຍການທວງໃຫ້ຊົນຊັ້ນປົກຄອງແກ້ໄຂຊີວິດການເປັນຢູ່ ແລະ ເພີ່ມເງິນເດືອນ. ຂະບວນການຕໍ່ສູ້ໄດ້ແຜ່ຂະຫຍາຍໄປຢ່າງກວ້າງຂວາງຈາກຕົວເມືອງສູ່ຊົນນະບົດ ໂດຍໄດ້ຮັບການສົມທົບຈາກຊາວນາ. ເຖິງແມ່ນວ່າຂະບວນການຕໍ່ສູ້ບໍ່ສາມາດໂຄ່ນລົ້ມການປົກຄອງໄດ້ ແຕ່ກໍສາມາດສ້າງຕັ້ງພັກຂອງຕົນເອງ ຂຶ້ນຊື່ວ່າ: “ພັກກອມມູນິດອີຕາລີ" ໃນປີ ຄ.ສ 1921.ນອກຈາກຂະບວນການຕໍ່ສູ້ ເພື່ອປະຊາທິປະໄຕທີ່ກ່າວມາແລ້ວນັ້ນ, ຍັງມີຂະບວນການຕໍ່ສູ້ຂອງ ຊາວກຳມາຊີບຢູ່ໃນບັນດາປະເທດຕ່າງໆອີກເຊັ່ນ:

ປະເທດອັງກິດໃນປີ ຄ.ສ 1919-1921 ມີກຳມະກອນຈຳນວນ 6.500.000 ຄົນ ພາກັນນັດຢຸດງານ ຈົນສາມາດສ້າງຕັ້ງພັກກອມມູນິດຂຶ້ນ ໃນວັນທີ 30 ກໍລະກົດ ປີ ຄ.ສ 1920. ຢູ່ປະເທດຝຣັ່ງ ໃນປີ ຄ.ສ 1918 ກຳມະກອນໃນທົ່ວປະເທດໄດ້ພາກັນນັດຢຸດງານ ເພື່ອທວງ ໃຫ້ຊົນຊັ້ນປົກຄອງແກ້ໄຂຊີວິດການເປັນຢູ່ ຈົນກ້າວໄປສູ່ການສ້າງຕັ້ງພັກກອມມູນິດຝຣັ່ງຂຶ້ນໃນເດືອນທັນວາ ປີ ຄ.ສ 1920.

ສະຫຼຸບແລ້ວຂະບວນການຕໍ່ສູ້ ເພື່ອປະຊາທິປະໄຕຂອງປະຊາຊົນໃນບັນດາປະເທດທຶນນິຍົມຂະຫຍາຍຕົວເຖິງວ່າບໍ່ໄດ້ຮັບໄຊຊະນະເປັນສ່ວນໃຫຍ່ກໍຕາມ, ແຕ່ກໍເປັນການປະກອບສ່ວນໃນຂະບວນການປະຕິວັດໂລກ ທີ່ຕໍ່ສູ້ເພື່ອຄວາມເປັນທຳໃນຄວາມເປັນມະນຸດໃຫ້ເທົ່າທຽມກັນໃນສັງຄົມ

## 5.ສະພາບຂອງສັງຄົມນຍົມກ່ອນສົງຄາມໂລກຄັ້ງທີ II

### 5.1.ສັງຄົມທຶນນິຍົມໃນຊ່ວງປີ້ ຄ.ສ 1919-1929

ໃນລະຫວ່າງປີ ຄ.ສ 1919 - 1929 ເປັນຊ່ວງທີ່ສັງຄົມໂລກກໍຄືສັງຄົມທຶນນິຍົມຢູ່ໃນໄລຍະສັນຕິ, ເພາະຄວາມຂັດແຍ່ງລະຫວ່າງປະເທດສາມາດຕົກລົງກັນໄດ້ໂດຍສັນຕິວິທີ, ບັນດາປະເທດທຶນນິຍົມທັງເກົ່າ ແລະ ໃຫມ່ຕ່າງກໍດຳເນີນການປັບປຸງ ແລະ ຟື້ນຟູພັດທະນາປະເທດດ້ວຍການລົງທຶນໃສ່ການສ້າງສາ ເສດຖະກິດໃຫ້ມີຄວາມກ້າວຫນ້າ, ພະຍາຍາມຊອກຫາທຸກວິທີທາງເພື່ອແກ້ໄຂວິກິດການເສດຖະກິດທີ່ຕົກຕໍ່າດັ່ງກ່າວ.

ຈົນມາຮອດປີ ຄ.ສ 1924 ບັນດາປະເທດທຶນນິຍົມ ຈຶ່ງສາມາດຜ່ານພົ້ນໄປໄດ້ ເຊິ່ງນັກປະຫວັດສາດ ເອີ້ນໄລຍະນີ້ວ່າ: "ເປັນໄລຍະຂະຫຍາຍຕົວຢ່າງສັນຕິຂອງເສດຖະກິດທຶນນິຍົມ". ຕົວຢ່າງ: ສະຫະລັດ ອາເມຣິກາ ໃນປີ ຄ.ສ 1924-1829 ຜົນຜະລິດທາງອຸດສາຫະກຳໄດ້ລື່ນກາຍປັນດາປະເທດເອີຣົບເຖິງ 8 % ແລະ ການລົງທຶນຢູ່ຕ່າງປະເທດກວມເອົາ 8,5 ຕື້ ໂດລາສະຫະລັດ, ສ່ວນຍີ່ປຸ່ນກໍໄດ້ພັດທະນາປະເທດ ເປັນທຶນນິຍົມຢ່າງເຕັມຕົວເທົ່າກັນກັບອາເມຣິກາ, ເຢຍລະມັນກໍ່ໄດ້ມີການພັດທະນາຕົນເອງຈົນມາ ຢືນຢູ່ອັນດັບທີ່ 2 ຂອງໂລກທຶນນິຍົມ.

### 5.2.ສັງຄົມນິຍົມໃນຊ່ວງ ປີ ຄ ສ 1929-1939

ໄລຍະແຕ່ປີ ຄ.ສ 1929-1939 ເປັນຊ່ວງທີ່ສັງຄົມໂລກກໍຄືສັງຄົມທຶນນິຍົມຕ້ອງໄດ້ປະເຊີນຫນ້າກັບ ພາວະແຫ່ງການຕົກຕ່ຳຂອງເສດຖະກິດໂລກອີກຄັ້ງຫນຶ່ງ ໂດຍສະເພາະໃນຊ່ວງປີ ຄ.ສ 1929 - 1933 ບັນດາປະເທດທຶນນິຍົມຕ່າງກໍພາກັນແຂ່ງຂັນການຜະລິດຈົນເກີນຄວາມສາມາດຊື້ຂອງປະຊາຊົນ (ຜະລິດເກີນຄວາມຕ້ອງການ). ດັ່ງນັ້ນ, ພວກນາຍທຶນຕ້ອງພະຍາຍາມຊອກຫາທຸກວິທີທາງເພື່ອໃຫ້ພົ້ນຈາກໄພພິບັດດັ່ງກ່າວດ້ວຍການບັງຄັບໃຫ້ລັດຖະບານຕ້ອງຈ່າຍເງິນອຸດຫນູນເພື່ອກູ້ເອົາສະພາບເສດຖະກິດ ທີ່ກຳລັງຊຸດໂຊມຄືນມາ, ດຳເນີນການທຳລາຍສິນຄ້າຊະນິດຕ່າງໆ ແລະ ຫຼຸດຜ່ອນກຳລັງການຜະລິດລົງເຊິ່ງການກະທຳດັ່ງກ່າວໄດ້ເປັນການແຕະຕ້ອງເຖິງສິດຜົນປະໂຫຍດຂອງຊາວຜູ້ອອກແຮງງານ ເພາະ ຊາວກຳມະກອນຕ້ອງພົບກັບໄພວ່າງງານ ແລະ ບໍ່ໄດ້ຮັບຄ່າຕອບແທນ.

ສະພາບການດັ່ງກ່າວນີ້ ເຮັດໃຫ້ພັກການເມືອງຕ່າງໆທີ່ມີແນວຄວາມຄິດແຕກຕ່າງກັບລັດຖະບານ ດຳເນີນການເຄື່ອນໄຫວເພື່ອຫາຄວາມນິຍົມ ແລະ ກ້າວໄປສູ່ການຈັດຕັ້ງລັດຖະບານໃຫມ່ທີ່ເດີນຕາມກະແສ ແນວຄິດແບບຊາດນິຍົມຕາມລັກສະນະຂອງຟາຊິດ.

## 6. ການກຳເນີດລັດທິຟາຊິດ

ຟາຊິດອິຕາລີ ສາເຫດທີ່ພາໃຫ້ລະບອບຟາຊິດກຳເນີດຂຶ້ນໃນປະເທດອິຕາລີມາຈາກປັດໄຈດັ່ງລຸ່ມນີ້:

ສາເຫດທີ່ພາໃຫ້ລັດຖະບານນາຍທຶນອິຕາລີ ຂາດຄວາມເຊື່ອຫມັ້ນຕໍ່ກັບມະຫາຊົນນັ້ນແມ່ນນັບແຕ່ ສົງຄາມໂລກຄັ້ງທີ I ມາ ອິຕາລີມີລັດຖະບານປົກຄອງທີ່ອ່ອນແອ, ຂາດປະສິດທິພາບ, ບໍ່ສາມາດແກ້ໄຂ ບັນຫາຕ່າງໆໃນສັງຄົມໄດ້ເຖິງແມ່ນວ່າ ອິຕາລີຈະເປັນປະເທດຫນຶ່ງ ທີ່ໄດ້ຮັບໄຊຊະນະຈາກສົງຄາມໂລກ, ແຕ່ອິຕາລີກໍເປັນປະເທດຫນຶ່ງທີ່ຖືກສົງຄາມທຳລາຍຢ່າງຫນັກຫນ່ວງ. ພາຍຫຼັງສົງຄາມອິຕາລີຕ້ອງປະສົບ ກັບຄວາມຫາຍະນະຄື: ຕ້ອງພົບກັບໄພວ່າງງານ, ໄພເງິນເຟີ້, ປະຊາຊົນຂາດລາຍຮັບ, ທະນາຄານ ແລະ ໂຮງງານອຸດສາຫະກຳຫຼາຍແຫ່ງຕ້ອງຖືກປິດກິດຈະການ, ສະພາບການດັ່ງກ່າວນີ້ໄດ້ສ້າງຄວາມກະທົບ ກະເທືອນໃຫ້ແກ່ການດຳລົງຊີວິດຂອງປະຊາຊົນຈົນນຳໄປສູ່ການເກີດ

ຄວາມວຸ້ນວາຍໃນສັງຄົມ. ແຕ່ລັດຖະບານ ບໍ່ສາມາດແກ້ໄຂໄດ້ ດ້ວຍເຫດນັ້ນ, ພວກນາຍທຶນຈຶ່ງອີງໃສ່ກຳລັງຂອງປະຊາຊົນເປັນບ່ອນອີງ ແລ້ວຫັນໄປ ສະຫນັບສະຫນູນພັກການເມືອງໃຫມ່ທີ່ພັກຟາຊິດ.

ອີຕາລີເປັນປະເທດຫນຶ່ງ ທີ່ໄດ້ຮັບໄຊຊະນະໃນສົງຄາມໂລກຄັ້ງທີ່ 1. ດັ່ງນັ້ນ, ຄວາມຫວັງຂອງອີຕາລີ ແມ່ນການໄດ້ຮັບສິດຜົນປະໂຫຍດຈາກສ່ວນແບ່ງຂອງສົງຄາມຄືກັນກັບປະເທດມະຫາອຳນາດອື່ນໆ. ແຕ່ຜົນກອງປະຊຸມແວກໄຊ ເຮັດໃຫ້ອີຕາລີໄດ້ຮັບຜົນປະໂຫຍດຫນ້ອຍ.ດັ່ງນັ້ນ,ຜູ້ນຳອີຕາລີ ຈຶ່ງເກີດມີແນວຄິດ ເພື່ອປ່ຽນແປງໂຄງສ້າງສັງຄົມໂລກຄືນໃຫມ່, ໂດຍສະເພາະຫຼັງຈາກທີ່ມຸດໂຊລີນີ ຂຶ້ນດຳລົງຕຳແຫນ່ງ ເປັນນາຍົກລັດຖະມົນຕີ ໃນວັນທີ່ 29 ຕຸລາ ປີ ຄ.ສ 1922 ແລ້ວກໍປະກາດສ້າງຕັ້ງລະບອບຟາຊິດອີຕາລີ ຢ່າງເປັນທາງການໃນວັນທີ່ 30 ຕຸລາ ປີ ຄ.ສ 1922. ຈາກນັ້ນ, ກໍ່ດຳເນີນນະໂຍບາຍປົກຄອງປະເທດຕາມ ແບບຜະເດັດການ ດ້ວຍການດຳເນີນການປາບປາມຂະບວນການປະຕິວັດຢ່າງຮຸນແຮງ, ລົບລ້າງສິດ ເສລີພາບປະຊາທິປະໄຕຂອງປະຊາຊົນ ໃນດ້ານຕ່າງປະເທດກໍ່ດຳເນີນນະໂຍບາຍຂະຫຍາຍອຳນາດ ແລະ ດິນແດນດ້ວຍການກໍ່ສົງຄາມຮຸກຮານບຽດຍຶດເອົາດິນແດນຂອງປະເທດອື່ນ.




ຮິດເລີຜູ້ນຳ ຟາຊິດເຢຍລະມັນ ແລະ ມຸດໂຊລີນາ ຜູ້ນຳ ຟາຊິດອີຕາລີ

# ບົດທີ 13

# ສົງຄາມໂລກຄັ້ງທີ II ປີ ຄສ 1939-1945

## 1.ສາເຫດຂອງສົງຄາມ

ສົງຄາມໂລກຄັ້ງທີ II ເກີດຂຶ້ນມາຈາກຫຼາຍປັດໄຈທີ່ສຳຄັນດັ່ງນີ້:

### ກ. ລັດທິຊາດນິຍົມ

ຄວາມບໍ່ຍຸຕິທຳຂອງສົນທິສັນຍາແວກໄຊ-ວໍຊິງຕັນ ເຮັດໃຫ້ປະເທດທີ່ປະລາໄຊໃນສົງຄາມໂລກ ແລະ ປະເທດທຶນນິຍົມໃຫມ່ເກີດຄວາມບໍ່ພໍໃຈຕໍ່ກັບມະຫາອຳນາດເກົ່າ ເນື່ອງຈາກບັນດາປະເທດເຫຼົ່ານີ້ມີອານານິຄົມ ຫນ້ອຍກວ່າ ຈຶ່ງນຳໄປສູ່ການສ້າງກະແສແນວຄິດຄວາມເປັນຊາດນິຍົມ ເພື່ອຄວາມຍິ່ງໃຫຍ່ຂອງຊາດຕົນຂຶ້ນເຊັ່ນ:

- ຮິດເລີຜູ້ນຳເຢຍລະມັນຫັນໄປໃຊ້ລັດທິນາຊີເພື່ອສ້າງປະເທດໃຫ້ຍິ່ງໃຫຍ່ຕາມທິດສະດີຊາດນິຍົມ ວ່າດ້ວຍ ຄວາມເຫນືອກວ່າທາງດ້ານເຜົ່າພັນ”.
- ມຸດໂຊລີນີ ຜູ້ນຳອີຕາລີກໍຫັນໄປໃຊ້ລັດທິຟາຊິດເພື່ອສ້າງ “ຄວາມຍິ່ງໃຫຍ່ຄືໃນອະດີດ”.
- ສ່ວນຍີ່ປຸ່ນຕ້ອງການເປັນໃຫຍ່ໃນອາຊີດ້ວຍການສ້າງ ວົງໄພບູນມະຫາອາຊີບໍລະພາ".

ຜົນຂອງການສ້າງກະແສແນວຄິດຊາດນິຍົມນີ້ເຮັດໃຫ້ອີຕາລີຂະຫຍາຍອຳນາດເຂົ້າໄປຄອບຄຸມດິນແດນ ໃນແຖບທະເລເມດີແຕຣາເນ ແລະ ຄອບຄອງເອທິໂອປີໃນປີ ຄ.ສ 1935. ເຢຍລະມັນເຖິງວ່າຈະເປັນຜູ້ປະລາໄຊໃນສົງຄາມໂລກຄັ້ງທີ I ກໍໄດ້ຂະຫຍາຍອຳນາດເຂົ້າໄປຍຶດຄອງດິນແດນປະເທດໂອຕຣິດ (Autricho Austria) ແລະ ເຊັກໂກສະໂລວາກີ ໃນປີ 1938-1939, ສ່ວນຍີປຸ່ນກໍແຜ່ຂະຫຍາຍອຳນາດເຂົ້າຍຶດຄອງແມນຈູຣີ ໃນປີ ຄ.ສ 1931.

### ຂ. ລັດທິນິຍົມທາງການທະຫານ

ນັບແຕ່ປີ ຄ.ສ 1929 ເປັນຕົ້ນມາ ບັນດາປະເທດມະຫາອຳນາດໄດ້ພາກັນແຂ່ງຂັນກັນສະສົມກຳລັງພົນ ແລະ ອາວຸດ ເພື່ອສ້າງຄວາມເຂັ້ມແຂງທັງທາງບົກ, ທາງນ້ຳ ແລະ ທາງອາກາດມີຜົນເຮັດໃຫ້ມະຫາອຳນາດຕ່າງໆກໍບໍ່ມີຄວາມໄວ້ວາງໃຈເຊິ່ງກັນ ແລະ ກັນ, ຕົວຢ່າງ: ປີ ຄ.ສ 1933 ເຢຍລະມັນໄດ້ຍົກເລີກສົນທິສັນຍາແວກໄຊໃນຖານະ ປະເທດທີ່ປະລາໄຊສົງຄາມດ້ວຍການສ້າງກຳລັງທະຫານທຸກເຫຼົ່າທັບ, ມີການພັດທະນາເຕັກນິກໃຫມ່ເຂົ້າໃນການ ປະດິດອາວຸດທີ່ທັນສະໄຫມສິ່ງຜົນໃຫ້ເຢຍລະມັນມີກອງທັບ ທີ່ຍິ່ງໃຫຍ່ ທີ່ສຸດໃນໂລກ.

### ຄ. ຄວາມອ່ອນແອຂອງອົງການສັນບາດຊາດ

ນັບແຕ່ປີ ຄ.ສ 1929 ເປັນຕົ້ນມາອົງການສັນນິບາດຊາດເປັນອົງການທີ່ນາໆຊາດພາກັນສ້າງຕັ້ງຂຶ້ນ ເພື່ອຮັກສາສັນຕິພາບໂລກ ໄດ້ສະແດງຄວາມອ່ອນແອ ແລະ ຂາດປະສິດທິພາບໃນການແກ້ໄຂບັນຫາເພາະບໍ່ສາມາດຢັບຢັ້ງການຮຸກຮານຂອງບາງປະເທດມະຫາອຳນາດໄດ້. ຕົວຢ່າງ: ໃນກໍລະນີທີ່ຍີ່ປຸ່ນ ຍຶດຄອງແມນຈູຣີຂອງຈີນ, ອີຕາລີຍຶດຄອງເອທິໂອປີ ແລະ ເຢຍລະມັນຍຶດຄອງດິນແດນແຄວ້ນໄຣຂອງ ຝຣັ່ງ, ແຕ່ອົງການສັນນິບາດຊາດກໍບໍ່

ສາມາດຢັບຢັ້ງໄດ້, ຕໍ່ມາປະເທດດັ່ງກ່າວກໍລາອອກຈາກການເປັນສະມາຊິກຂອງອົງການນີ້ ຈຶ່ງເຮັດໃຫ້ອົງການນີ້ບໍ່ມີຄວາມເຂັ້ມແຂງເທົ່າທີ່ຄວນ.

**ງ. ຄວາມຂັດແຍ່ງຄອງມະຫາອຳນາດ**

ຫຼັງຈາກວິກິດການເສດຖະກິດໂລກໃນປີ ຄ.ສ 1929-1933 ບັນດາປະເທດມະຫາອຳນາດທຶນນິຍົມ ໄດ້ແບ່ງອອກເປັນສອງກຸມຄື:

- ກຸມນາຍທຶນປະຊາທິປະໄຕປະກອບມີ: ອັງກິດ, ຝຣັ່ງ ແລະ ອາເມຣິກາ ເປັນກຸ່ມທີ່ມີຫົວເມືອງຂຶ້ນຫຼາຍຈຶ່ງຕ້ອງການຢາກຮັກສາຫົວເມືອງຂຶ້ນຂອງຕົ້ນໄວ້ ກຸ່ມນີ້ເອີ້ນວ່າ "ສຳພັນທະມິດ".
- ກຸ່ມທີສອງເປັນກຸ່ມນາຍທຶນມະຫາອຳນາດໃຫມ່ປະກອບມີ ອີຕາລີ, ເຢຍລະມັນ ແລະ ຍີ່ປຸ່ນເປັນກຸ່ມທີ່ຕ້ອງການຫົວເມືອງຂຶ້ນ ແລະ ດຳເນີນນະໂຍບາຍການຕ່າງປະເທດໄປໃນລັກສະນະຮູບແບບດຽວກັນ ເພື່ອຈັດລະບົບການຄອບຄອງໂລກຄືນໃຫມ່ ກຸ່ມນີ້ເອີ້ນວ່າ ກຸ່ມສົນຍາ".

ຄວາມແຕກຕ່າງທາງດ້ານສິດຜົນປະໂຫຍດນີ້ ໄດ້ເຮັດໃຫ້ສອງກຸ່ມການເມືອງມີຄວາມຂັດແຍ່ງກັນ ນັບມື້ນັບຮຸນແຮງ ຈົນກ້າວໄປສູ່ການນຳໃຊ້ກຳລັງ ແລະ ອາວຸດເຂົ້າໃນການແກ້ໄຂບັນຫາອັນເປັນການຈູດ ຊະນວນສົງຄາມໂລກຄັ້ງທີ່ II ໃຫ້ລະເບີດຂຶ້ນໃນວັນທີ 1 ເດືອນກັນຍາ ປີ ຄ.ສ 1939.

## 2. ການດຳເນີນສົງຄາມ

ສົງຄາມໂລກຄັ້ງທີ II ເປັນສົງຄາມທີ່ຍິ່ງໃຫຍ່ດຸເດືອດ ແລະ ກວ້າງຂວາງແຜ່ລາມໄປຫຼາຍພາກສ່ວນ ຂອງໂລກ ທີ່ມີສະຫນາມຮົບທີ່ດເດືອດຢູ່ສາມເຂດໃຫຍ່ຄື:

**1) ສະໜາມຮົບເອີຣົບ**

ສະໜາມຮົບເອີຣົບ ເປັນສະໜາມຮົບແຫ່ງທຳອິດທີ່ເປີດສາກຈຸດຊະນວນສົງຄາມໂລກຄັ້ງທີ II ໂດຍເລີ່ມຈາກການບຸກຕີເຂົ້າດິນແດນປະເທດໂປໂລຍ ແບບສາຍຟ້າແມບຂອງກອງທະຫານຟາຊິດ ເຢຍລະມັນ 57 ກອງພົນ ພ້ອມດ້ວຍເຮືອບິນສູ້ຮົບ 3.000 ລຳ ແລະ ລົດຖັງໃນວັນທີ 1 ກັນຍາ ປີ ຄ.ສ 1939. ຈາກເຫດການນີ້ ຝຣັ່ງ ແລະ ອັງກິດ ທີ່ເປັນພັນທະມິດຂອງໂປໂລຍກໍໄດ້ປະກາດສົງຄາມກັບເຢຍລະມັນ.

ແຜນການຮົບໃນສະໜາມຮົບເອີຣົບ ຂອງເຢຍລະມັນໄດ້ດຳເນີນໄປຢ່າງວ່ອງໄວ. ມາຮອດເດືອນ ເມສາ ປີ ຄ.ສ 1940 ສາມາດຍຶດຄອງດິນແດນໃນຫຼາຍສ່ວນຂອງທະວີບເອີຣົບ, ວັນທີ 22 ມິຖຸນາ ປີ ຄ.ສ 1940 ຟາຊິດເຢຍລະມັນໄດ້ບັງຄັບໃຫ້ນາຍພົນເປແຕັງຂອງຝຣັ່ງຍອມຈຳນົນ. ຈາກນັ້ນ, ຟາຊິດເຢຍລະມັນ ກໍໄດ້ຮ່ວມມືກັນກັບຟາຊິດອີຕາລີເປີດກວ້າງຂະຫຍາຍສົງຄາມຢູ່ທາງພາກໃຕ້ ແລະ ຕາເວັນອອກສຽງໃຕ້ຂອງທະວີບເອີຣົບ.

ວັນທີ 22 ມິຖຸນາ ປີຄ.ສ 1941 ຟາຊິດເຢຍລະມັນ ໄດ້ບຸກໂຈມຕີເຂົ້າສະຫະພາບໂຊວຽດ ໂດຍບໍ່ປະກາດສົງຄາມທີ່ໃຊ້ກຳລັງພົນເຖິງ 190 ກອງພົນ ເພື່ອຍຶດເອົາຕົວເມືອງມົດສະກູ ແຕ່ພໍມາຮອດເດືອນ ກຸມພາ ປີ ຄ.ສ 1942 ກອງທັບເຢຍລະມັນ ໄດ້ຖືກກອງທັບແດງແຫ່ງສະຫະພາບໂຊວຽດບຸກໂຈມຕີຕໍ່ຕ້ານຄືນ ແລະ ຖືກດັບສູນເຖິງ 50 ກອງພົນ. ມາຮອດທ້າຍປີ ຄ.ສ 1943 ກອງທັບແດງໂຊວຽດໄດ້ດຳເນີນການບຸກໂຈມຕີກອງທະຫານຂອງຟາ

ຊິດເຢຍລະມັນ ໃຫ້ປະລາໄຊໃນບັ້ນຣົບ ສະຕາລິນກຣາດ ແລະ ເປັນເຈົ້າການໃນການບຸກຕີເຢຍລະມັນໃນທຸກ



ທະຫານເຢຍລະມັນບຸກຕີສະຫະພາບໂຊຫວຽດໃນປີ 1941

ສະໜາມຮົບ, ມາຮອດປີ ຄ.ສ 1944 ກອງທັບແດງໂຊວຽດສາມາດປົດປ່ອຍດິນແດນປະເທດຕ່າງໆ ໃນເອີຣົບອອກຈາກການຄອບຄອງຂອງຟາຊິດເຢຍລະມັນ ເຊັ່ນ: ຣູມານີ, ບຸນກາຣີ, ອານບານີ ແລະ ຢູໂກສະລາວີ.



ທະຫານເຢຍລະມັນຂ້າມເຂດແດນບຸກຕີໂປໂລຍ ໃນວັນທີ 1 ກັນຍາ 1939

ຂະບວນການຕໍ່ຕ້ານຟາຊິດເຢຍລະມັນໄດ້ມີຄວາມເຂັ້ມຂຸ້ນຂຶ້ນ ຫຼັງຈາກທີ່ອາເມຣິກາ ແລະ ອັງກິດໄດ້ຍົກກຳລັງມາສົມທົບກັບຝຣັ່ງທີ່ນອກມັງດີ (Normandie) ໃນວັນທີ 6 ມິຖຸນາ ປີ ຄ.ສ 1944. ຈາກນັ້ນກອງທັບສຳພັນທະມິດກໍດຳເນີນການປົດປ່ອຍຕົວເມືອງປາຣີສຳເລັດ ໃນວັນທີ 19 ສິງຫາ ປີ ຄ.ສ 1944. ໃນຂະນະດຽວກັນນັ້ນ ກອງທັບແດງໂຊວຽດກໍໄດ້ສົມທົບກັບກຳລັງປະກອບອາວຸດປະຕິວັດຕ່າງໆບຸກໂຈມຕີຟາຊິດ ປົດປ່ອຍດິນແດນ

ປະເທດໂປໂລຍ, ເຊັກໂກສະໂລວາກີ ແລະ ຍຶດເອົາແບັກແລັງ ໃນວັນທີ 2 ພຶດສະພາ ປີ ຄ.ສ 1945 ຢ່າງສະຫງ່າ ຜ່າເຜີຍ.

ວັນທີ 8 ພຶດສະພາ ປີ ຄ.ສ 1945 ນາຍພົນເຮືອ ກາກໂດນິກ ແຫ່ງເຢຍລະມັນໄດ້ປະກາດຍອມຈຳນົນຢ່າງບໍ່ມີເງື່ອນໄຂຕໍ່ຝ່າຍສຳພັນທະມິດ ເຮັດໃຫ້ສົງຄາມໂລກຄັ້ງທີ IIໃນສະໜາມຮົບເອີຣົບສິ້ນສຸດລົງ.




ສະໜາມຮົບບເອີຣົບ

**2)ສະໜາມຮົບອາຟຣິກາເໜືອ ແລະ ເອີຣົບໃຕ້**

ຫຼັງຈາກທີ່ຟາຊິດ ອີຕາລີປະກາດສົງຄາມກັບອັງກິດ ແລະ ຝຣັ່ງໃນວັນທີ 10 ມິຖຸນາ ປີ ຄ.ສ 1940 ແລ້ວ, ອີຕາລີກໍດຳເນີນການບຽດຍຶດເອົາປະເທດໂຊມາລີ ດ້ວຍການບຸກໂຈມຕີທະຫານອັງກິດທີ່ທະເລແດງ ແລະ ຍຶດເອົາປະເທດເອຢິບໃນເດືອນ ກັນຍາ ປີ ຄ.ສ 1940. ໄປພ້ອມໆກັບການຍຶດຄອງອາຟຣິກາຕາເວັນອອກອີຕາລີກໍໄດ້ດຳເນີນການບຸກຍຶດເອົາດິນແດນປະເທດຕ່າງໆ ໃນແຫຼມບານກັງເຂົ້າຄອບຄອງ ກະເຣັກໃນເດືອນ ຕຸລາ ປີ ຄ.ສ 1940. ນອກຈາກນັ້ນ, ຍັງຮ່ວມກັບຟາຊິດເຢຍລະມັນເປີດບັ້ນຮົບຂຶ້ນໃນຫຼາຍ ບ່ອນເພື່ອຍຶດຄອງຮົງກາຣີ ບູນກາຣີ ແລະ ຣູມານີ.

ສະຫມາມຮົບພາກໃຕ້ເອີຣົບ ແລະ ອາຟຣິກາໄດ້ດຸເດືອດຂຶ້ນຫຼັງຈາກກອງທະຫານຝ່າຍສຳພັນທະມິດ ເຊິ່ງປະກອບມີອາເມຣິກາ, ອັງກິດ ແລະ ຝຣັ່ງໄດ້ຍົກພົນຂຶ້ນບົກທີ່ ກາຊາບັງກາ" ໃນວັນ ທີ 8 ພະຈິກ ປີ ຄ.ສ 1942. ຈາກນັ້ນ ກໍບຸກຕີກອງທັບຟາຊິດໃຫ້ປະລາໄຊຢ່າງລຽນຕິດໃນທຸກສະຫນາມຮົບ. ເດືອນພຶດສະພາ ປີ ຄ.ສ 1943

ນາຍພົນຣອມແມນແຫ່ງເຢຍລະມັນໄດ້ຍອມຈຳນົນເຮັດໃຫ້ສະໜາມຮົບອາຟຣິກາ ແລະ ເອີຣົບໃຕ້ສິ້ນສຸດລົງ.



ສະໜາມຮົບອາຟຣິກາເໜືອ 1941

**3)ສະໜາມຮົບຕາເວັນອອກ ແລະ ມະຫາສະມຸດປາຊີຟິກ**

ໃນຂະນະທີ່ສົງຄາມກຳລັງດຳເນີນໃນທະວີບເອີຣົບນັ້ນ, ຍີ່ປຸ່ນ ເຊິ່ງເປັນພັນທະມິດຂອງເຢຍລະມັນ ແລະ ອິຕາລີ ກໍປະກາດເຂົ້າຮ່ວມສົງຄາມໃນເດືອນ ມິຖຸນາ ປີ ຄ.ສ 1940. ຈາກນັ້ນມາ ໃນເດືອນກໍລະກົດ ປີ ຄ.ສ 1941 ຍີ່ປຸ່ນເປີດສາກດ້ວຍການນຳເອົາກຳລັງທະຫານບຸກຍຶດເຂົ້າບັນດາປະເທດຕ່າງໆໃນແຫຼມ ອິນດູຈີນ, ອິນໂດເນເຊຍ ແລະ ຖານທັບອັງກິດທີ່ປະເທດສິງກະໂປ.



ເຮືອບຸນຂັບໄລ່ຂອງຢີປຸ່ນກ່ອນການບຸກໂຈມຕາອາເມຣິກາທີ່ເພີຮາວເບີ

ວັນທີ 7 ທັນວາ ປີ ຄ.ສ 1941 ຍີ່ປຸ່ນທຳການບຸກໂຈມຕີກອງທັບເຮືອສະຫະລັດອາເມຣິກາທີ່ອ່າວເພີຮາວເບີ (Pearl Harbor) ບໍລິເວນເກາະຮາວາຍ (Hawai) ແລະ ເກາະໂຮໂນລູລູ (HoNolulu) ເຮັດໃຫ້ກອງທັບເຮືອ ອາ

ເມຣິກາເສຍຫາຍຢ່າງຫນັກຫນ່ວງ. ແຕ່ມາຮອດທ້າຍປີ ຄ.ສ 1943 ຫາຕົ້ນປີ ຄ.ສ 1945 ກອງທັບຍີ່ປຸ່ນໄດ້ຖືກກອງທັບພັນທະມິດ ໂດຍສະເພາະກອງທະຫານອາເມຣິກາ ບຸກໂຈມຕີໃຫ້ປະລາໄຊລົງຢາງ ຫນັກຫນ່ວງ.

ວັນທີ 6 ສິງຫາ ປີ ຄ.ສ 1945 ອາເມຣິກາໄດ້ນຳເອົາລູກລະເບີດປະລາມະນຖິ້ມໃສ່ກາະຮິໂຣຊິມາ. ໃນຂະນະທີ່ກອງທັບຍີ່ປຸ່ນ ກຳລັງຖືກບຸກໂຈມຕີຈາກກອງທັບແດງສະຫະພາບໂຊວຽດຢ່າງຫນັກໃນເຂດແມນຈູຣີ ແລະ ເຂດກວາງຕຸງຂອງຈີນນັ້ນ, ມາໃນວັນທີ 9 ສິງຫາ ປີ ຄສ 1945 ອາເມຣິກາ ໄດ້ນຳເອົາລູກລະເບີດປະລາມະນູລູກທີສອງມາຖິ້ມໃສ່ເກາະນາກາຊະກິ ເຮັດໃຫ້ຍີ່ປຸ່ນສູນເສຍຊີວິດ ແລະ ຊັບສິນຢ່າງຫຼວງຫຼາຍ.



ອາເມຣິກາຖິ້ມລະເບີດປາລະມະນູໃສ່ເກາະນາກາຊະກິ

## 3. ຜົນຂອງສົງຄາມ

ສົງຄາມໂລກຄັ້ງທີ II ເປັນສົງຄາມທີ່ໃຊ້ເວລານານເຖິງ 6 ປີ ຕັ້ງແຕ່ ປີ ຄ.ສ 1939 ຫາ ຄ.ສ 1945 ຈຶ່ງສິ້ນສຸດລົງ. ສົງຄາມຄັ້ງນີ້ເປັນສົງຄາມທີ່ມີຄວາມຮ້າຍແຮງ ແລະ ກວ້າງຂວາງທີ່ສ້າງຄວາມເສຍຫາຍໃຫ້ແກ່ມວນມະນຸດຫຼາຍກວ່າສົງຄາມທີ່ຜ່ານມາ.

### ກ. ດ້ານສັງຄົມ

ສົງຄາມໂລກຄັ້ງທີ II ເຮັດໃຫ້ມີຄົນເສຍຊີວິດໂດຍແຍກອອກເປັນທະຫານ 32 ລ້ານຄົນ, ປະຊາຊົນ 26 ລ້ານຄົນ ໃນນັ້ນ, ສະຫະພາບໂຊວຽດເສຍຊີວິດປະມານ 20 ລ້ານຄົນ, ເຢຍລະມັນປະມານ 3 ລ້ານຄົນ. ຍີ່ປຸ່ນ 2 ລ້ານຄົນ, ຈີນ 1.3 ລ້ານຄົນ. ອັງກິດ, ອີຕາລີ, ໂປໂລຍ, ຝຣັ່ງ ແລະ ອາເມຣິກາ ປະເທດລະ 3-6 ແສນຄົນ. ນອກຈາກນັ້ນ, ຍັງມີຜູ້ເສຍຊີວິດໃນບັນດາປະເທດອື່ນໆອີກທົ່ວໂລກ ແລະ ຍັງມີຜູ້ປະສົບເຄາະຮ້າຍ ຈາກໄພສົງຄາມເປັນຈຳນວນຫຼວງຫຼາຍເຊັ່ນ: ເສຍອົງຄະ 30 ລ້ານຄົນ ແລະ ອີກຫຼາຍລ້ານຄົນຂາດທີ່ພັກ ພາອາໄສ. ບັນຫາດັ່ງກ່າວໄດ້ຕົກເປັນພາລະຂອງລັດຖະບານໃນປະເທດ ຕ່າງໆຕ້ອງໄດ້ຮັບຜິດຊອບຮັກສາ ແລະ ເບິ່ງແຍງ.

**ຂ. ດ້ານການເມືອງ**

ສົງຄາມສິ້ນສຸດລົງສົ່ງຜົນໃຫ້ປະເທດທີ່ປະລາໄຊສົງຄາມຕ້ອງສູນເສຍສິດທິຕ່າງໆເຊັ່ນ: ດິນແດນ, ກຽດສັກສີ, ຄວາມເປັນອິດສະຫຼະພາບ. ນອກຈາກນີ້, ຍັງຕ້ອງມີຖານະເປັນຜູ້ຈ່າຍຄ່າເສຍຫາຍສົງຄາມ ແລະ ຈຳຕ້ອງຍອມປະຕິບັດຕາມສັນຍາຕ່າງໆ ຕາມຝ່າຍທີ່ຊະນະສົງຄາມໂດຍບໍ່ມີເງື່ອນໄຂ. ຕົວຢ່າງ: ເຢຍລະມັນ ຕ້ອງແບ່ງດິນແດນອອກເປັນສອງສ່ວນຄື: ເຢຍລະມັນຕາເວັນຕົກ ແລະ ຕາເວັນອອກ. ຍີປຸ່ນ ກໍຕ້ອງຢູ່ໃຕ້ການບັນຊາການຂອງອາເມຣິກາ ໂດຍສະເພາະນະໂຍບາຍການຕ່າງປະເທດຕ້ອງຜ່ານ ການເຫັນດີຈາກອາເມຣິກາ, ອິຕາລີຕ້ອງເສຍດິນແດນບາງສ່ວນໃຫ້ສະຫະປະຊາຊາດດູແລເບິ່ງແຍງ. ຕ້ອງຈ່າຍ ຄ່າເສຍຫາຍສົງຄາມ ແລະ ຖືກຈຳກັດທາງດ້ານກຳລັງທະຫານເຫຼົ່ານີ້ເປັນຕົ້ນ.

**ຄ. ດ້ານເສດຖະກິດ**

ສົງຄາມຄັ້ງນີ້ເປັນການທຳລາຍເສດຖະກິດຢ່າງມະຫາສານທັງໃນສົງຄາມ ແລະ ຫຼັງສົງຄາມ. ສະເພາະໃນໄລຍະສົງຄາມດຳເນີນຢູ່ນັ້ນກ້ອນເງິນທີ່ຖືກນຳເຂົ້າໄປໃຊ້ໃນສົງຄາມ ຄາດວ່າມີ ເຖິງ 4.000 ຕື້ໂດລາ.

ນອກຈາກນີ້ຄວາມສູນເສຍທາງເສດຖະກິດທີ່ເກີດຈາກການສູ້ຣົບ ແລະ ແຮງລະເບີດທີ່ເຮັດໃຫ້ສິ່ງກໍ່ສ້າງ, ຕົວເມືອງໃຫຍ່ຖືກທຳລາຍລົງເປັນຈຳນວນຫຼວງຫຼາຍ ໂດຍສະເພາະຕົວເມືອງໃນສະຫະພາບໂຊວຽດຖືກທຳລາຍເຖິງ 17.000 ແຫ່ງ. ຜົນສະທ້ອນນີ້ ຍັງແກ່ຍາວມາຮອດຫຼັງຂອງສົງຄາມອີກ ເຊັ່ນ: ການລົງທຶນ ຫຼື ກ້ອນທຶນທີ່ຈະນຳມາໃຊ້ໃນການຟື້ນຟູປັບປຸງສະຖານທີ່, ການລົງທຶນໃສ່ການຜະລິດ. ບັນຫາການຂາດເຂີນແຮງງານ.

## 4.**ສະຫະພາບໂຊວຽດຄສ 1945-1970**

### 1) ການຟື້ນຟູເສດຖະກິດພາຍຫຼັງສົງຄາມໂລກຄັ້ງທີ II

ສົງຄາມໂລກຄັ້ງທີ່ II (1939-1945) ໄດ້ເຂັ່ນຂ້າມະນຸດນັບເປັນຫຼາຍສິບລ້ານຄົນ ແລະ ທຳລາຍ ລ້າງຜານພື້ນຖານ ເສດຖະກິດແຫ່ງຊາດຂອງປະຊາຊົນໃນໂລກ ນັບເປັນມູນຄ່າຫຼາຍຮ້ອຍຕື້ ໂດລາ ໃນນັ້ນ ຜູ້ທີ່ຖືກທຳລາຍ ແລະ ເສຍຫາຍຫຼາຍກວ່າໝູ່ແມ່ນປະຊາຊົນ ໂຊວຽດຄື: ທະຫານ ແລະ ປະຊາຊົນເສຍ ຊີວິດ 17 ລ້ານຄົນ (ບາງເອກະສານ 20 ລ້ານ), ຖັດມາແມ່ນໂປໂລຍ. - ພາຍຫຼັງສົງຄາມໄດ້ສິ້ນສຸດລົງ ສະພາແຫ່ງສະຫະພາບສາທາລະນະລັດສັງຄົມນິຍົມໂຊວຽດ (ສ.ສ.ສ.ຊ) ໄດ້ລົງມະຕິຮັບຮອງເອົາແຜນການ 5 ປີຄັ້ງທີ IV (1946-1950) ໂດຍເລັ່ງໃສ່ການຟື້ນຟູ ການກະສິກຳ ແລະ ອຸດສາຫະກຳເປັນຕົ້ນຕໍ ເພື່ອແກ້ໄຂບັນຫາຄວາມທຸກຍາກ ແລະ ຄວາມຫິວ ຂອງປະຊາຊົນ, ການປະຕິບັດແຜນການຄັ້ງນີ້ໃຊ້ເວລາພຽງ 4 ປີ 3 ເດືອນ. ໃນປີ ຄ.ສ 1948 ໄດ້ສຳເລັດ ການຟື້ນຟູ ແລະການກໍ່ສ້າງວິສາຫະກິດອຸດສາຫະກຳຕາໆໆ 5.200 ແຜງ, ປີ ຄ.ສ 1950 ຜົນຜະລິດ ອຸດສາຫະກຳຝົນກາຍປີ ຄສ 1940 ກອນສົງຄາມ 73%, ປີ ຄ.ສ 1950 ພົນລະເມືອງ ໄດ້ຮັບການແຈກຈ່າຍ ຜະລິດຕະພັນສະບຽງອາຫານຫຼາຍກວາ ຄສ 1940 ເຖິງ 50% ແລະ ລາຄາສິນຄ້າຫຼຸດລົງ 3 ເທື່ອ. ພາຍຫຼັງສຳເລັດການປະຕິບັດແຜນການ 5 ປີຄັ້ງນີ້, ປະຊາຊົນ ແລະ ລັດຖະບານ ໂຊວຽຕ ສາມາດຜ່ານຜ່າ ແລະ ແກ້ໄຂບັນຫາຄວາມທຸກຍາກ ແລະ ຄວາມອຶດຫິວຂອງປະຊາຊົນໄດ້ດວຍໄຊຊະນະ ອັນໃຜາຍຫຼວງ.

### 2) ການກໍ່ສ້າງລະບອບກອມມູນິດໃນສະຫະພາບໂຊວຽດ

ພາຍຫຼັງສຳເລັດການປະຕິບັດແຜນການ 5 ປີຄັ້ງທີ IV, ປະຊາຊົນ ແລະ ລັດຖະບານໂຊວຽດ ໄດ້ສືບຕໍ່ໃນການປະຕິບັດແຜນການ 5 ປີຄັ້ງ ຕໍ່ໆມາ ໂດຍໄດ້ມີການກຳນົດໄວ້ໃນມະຕິຂອງກອງປະຊຸມໃຫຍ່ ຄັ້ງຕ່າງໆ ຂອງພັກກອມມູນິດ ສະຫະພາບໂຊວຽດ. - ກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກກອມມູນິດ ສະຫະພາບໂຊວຽດ ( 1961) ໄດ້ຮັບຮອງເອົາໂຄງການໃຫມ່ຂອງພັກ ໂດຍໄດ້ບົ່ງຊີ້ໃຫ້ເຫັນເຖິງລັກສະນະອັນດີເດັ່ນຂອງສັງຄົມກອມມູນິດວິທະຍາສາດຄື:ລະບອບກອມມູນິດ ແມ່ນລະບອບສັງຄົມທີ່ບໍ່ມີຊົນຊັ້ນ ໃນການພັດທະນາສະຫະພາບໂຊວຽດໄປສູ່ລະບອບ ກອມມູນິດນັ້ນ ໄດ້ມີການກຳນົດອອກຢ່າງຈະແຈ້ງ ໃນກອງປະຊຸມໃຫຍຄັ້ງທີ່ XXIII ຂອງພັກກອມມູນິດແສງສະຫະພາບໂຊວຽດໄດ້ແກ: ສືບຕໍ່ໃນການພັດທະນາ ແລະ ກໍ່ສ້າງເສດຖະກິດໃຫ້ມີຄວາມ ເຂັ້ມແຂງ, ສ້າງການພົວພັນທາງດ້ານແນວຄິດ ແລະ ການເມືອງກັບບັນດາພັກກອມມູນິດາຂອງປະເທດ ສັງຄົມນິຍົມ, ສ້າງກຳລັງ ແລະ ອິດທິພົນຂອງຕົນໃນເວທີສາກົນໃຫ້ເຂັ້ມແຂງ. ດັ່ງນັ້ນ, ໃນນັ້ນຕແຜນການ 5 ປີ ຕັ້ງແຕ່ຄັ້ງທີ V-X ຈຶ່ງໄດ້ເລັ່ງໃສ່ບັນຫາທີ່ສຳຄັນໃນການພັດທະນາລະບອບກອມມູນິດ ໄດ້ແກ່: ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ເຕັກໂນໂລຊີທີ່ທັນສະໄຫມ.

#### ກ.ການພັດທະນາເສດຖະກິດ

ການພັດທະນາເສດຖະກິດແມ່ນໄດ້ເລັ່ງໃສ່ການຂະຫຍາຍອຸດສາຫະກຳໃຫ້ຈະເລີນເຕີບໂຕດ້ວຍ ຈັງຫວະທີ່ວ່ອງໄວ ໂດຍສະເພາະ ໃນ ປີ ຄ.ສ 1960 ສະຖານີໄຟຟ້າສາມາດຜະລິດກະແສໄຟຟ້າໄດ້ຫຼາຍກວ່າປີ ຄ.ສ 1945 ເຖິງ 7 ເທົ່າ, ກັ່ນນ້ຳມັນ 8 ເທົ່າ, ອາຍແກ๊ດທຳມະຊາດ 16 ເທົ່າ, ການຜະລິດຢາງປະລາສະຕິກ 15 ເທົ່າ ແລະ ການຜະລິດແຜ່ນທຽມດ້ວຍເຄມີ 200 ເທົ່າ.ລັກສະນະສຳຄັນຂອງແຜນການ 5 ປີຄັ້ງທີ VIII (1966-1970) ໄດ້ເນັ້ນໃສ່ການນຳໃຊ້ ເຕັກນິກໃຫມ່ເຂົ້າໃນການຂະຫຍາຍເສດຖະກິດແຫ່ງຊາດໃຫ້ດຳເນີນໄປຢ່າງວອງໄວ ແລະ ການຍົກປະສິດທິພາບຂອງການຜະລິດໃຫ້ສູງຂຶ້ນ, ໂດຍສະເພາະ ແມ່ນການນຳໃຊ້ເຄື່ອງຈັກທີ່ທັນສະໄຫມ ເພື່ອທົດແທນ ແຮງງານຂອງຄົນຢູ່ໃນທຸກໆຂະແຫນງການເຊັ່ນ: ການຂຸດຖານຫີນ ແລະ ນຳໃຊ້ເຄື່ອງຈັກຕັດຖານຫີນ ຢູ່ໃນບໍ່ແທນເຄື່ອງຕັດ ແລະ ຄ້ອນຕີດ້ວຍລົມ, ຊາງຫຼອມເຫຼັກ ຄວບຄຸມການຫຼອມເຫຼັກດ້ວຍອຸປະກອນພິເສດ, ໄດ້ມີການນຳໃຊ້ເຄື່ອງຈັກທາງການກະເສດມາຊ່ວຍເຊັ່ນ:ເຄື່ອງຈັກສຳລັບເກັບມັນຝຣັ່ງ, ຫົວຜັກກາດຂາວ, ຝ້າຍ ແລະ ເຂົ້າບະເລ, ສ່ວນອຸດສາຫະກຳພະລັງງານໄຟຟ້າ ນອກຈາກສ້າງສະຖານີໄຟຟ້ານ້ຳຕົກໃນ ທົ່ວປະເທດແລ້ວ ນັກວິສະວະກອນໂຊວຽດຍັງກໍ່ສ້າງສະຖານີໄຟຟ້າທີ່ໃຊ້ພະລັງງານຂອງບໍ່ນ້ຳຮ້ອນ ແລະ ໄຟະລັງງານຂອງແສງແດ່.

ເນື່ອງຈາກມີການຂະຫຍາຍຢ່າງແຂງແຮງຂອງການນຳໃຊ້ເຄື່ອງກົນຈັກ ແລະ ພະລັງງານໄຟຟ້າ ເຂົ້າໃນອຸດສາຫະກຳ ແລະ ກະສິກຳ ບວກກັບການເຮັດວຽກຢ່າງບໍ່ເຫັນແກ່ໂຕຂອງປະຊາຊົນໂຊວຽດ ຈຶ່ງເຮັດໃຫ້ອຸດສາຫະກຳຂອງສະຫະພາບໂຊວຽດເປັນອັນດັບທີ 2 (ຮອງຈາກອາເມຣິກາ) ກວມ 20% ຂອງຜົນຜະລິດທົ່ວໂລກ ສູນການຜະລິດນ້ຳມັນ, ຖ່ານຫີນ, ເຫຼັກກ້າ, ຝຸ່ນທຳມະຊາດ, ຊີມັງ ແລະ ຝ້າຍ ເປັນອັນດັບທີ່ 1 ຂອງໂລກ.

#### ຂ.ດ້ານວັດທະນະທຳ-ສັງຄົມ

ວັດທະນະທຳ-ສັງຄົມ ເປັນວຽກງານຫນຶ່ງທີ່ມີຄວາມສຳຄັນຢ່າງໃຫຍຫຼວງຕໍ່ກັບການກໍ່ສ້າງລະບອບກອມມູນິດ. ສະຫະພາບໂຊວຽດເປັນປະເທດທີ່ມີຄົນອ່ານຫນັງສືຫຼາຍເປັນອັນດັບຫນຶ່ງໃນໂລກ ແລະ ເປັນປະເທດທີ່ມີປຶ້ມພິມອອກເປັນຈຳນວນຫຼາຍທີ່ສຸດເຊັ່ນກັນ, ພົນລະເມືອງຫຼາຍກວ່າ 70 ລ້ານຄົນ ກຳລັງຮຽນຫນັງສື (ເດັກນ້ອຍ, ຊາວ

ໜຸ່ມ ແລະ ຜູ້ໃຫຍ່) ໂດຍບໍ່ຕ້ອງເສຍຄ່າຮຽນ. ສະຫະພາບໂຊວຽດເປັນປະເທດ ອັນດັບໜຶ່ງຂອງ ໂລກໃນການມີນັກວິສະວະກອນທີ່ໄດ້ຮັບປະລິນຍາ, ມີນັກສຶກສາ ແລະ ນາຍແພດເຖິງ 1/4 ຂອງນັກສຶກສາ ແລະ ແພດໃນ ໂລກ.

ການຮັກສາສຸຂະພາບຂອງປະຊາຊົນ ໂຊວຽດໄດ້ຮັບການເອົາໃຈໃສ່ເປັນພິເສດ ໂດຍສະເພາະການຮັກສາພະຍາບານບໍ່ໄດ້ເສຍຄ່າ, ມີການເພີ່ມເງິນເດືອນຂອງກຳມະກອນ ແລະ ພະນັກງານໃຫ້ສູງຂຶ້ນ, ຈຳນວນເຮືອນພັກຜ່ອນ ແລະ ບ່ອນປິ່ນປົວສຳລັບພົນລະເມືອງ ໄດ້ເພີ່ມຂຶ້ນທຸກໆປີ, ຄ່າເຊົ່າເຮືອນຖືກ ທີ່ສຸດໃນໂລກ, ຊາວຜູ້ອອກແຮງງານບໍ່ມີຄວາມເປັນຫ່ວງຕໍ່ຄວາມເຖົ້າແກ່ຊະລາຂອງຕົນ ເພາະວ່າ ລັດຈ່າຍເງິນເບັ້ຍບຳນານ ແລະ ມີບ້ານໃຫ້ຢູ່ເປັນຢ່າງດີ.

**ຄ.ດ້ານທະຍາສາດ-ເຕັກໂນໂລຊີ**

ປະຊາຊົນ ໂຊວຽດເຂົ້າໃຈວ່າ ການກ້າວເຂົ້າສູ່ລະບອບກອມມູນິດ ແມ່ນສາມາດເປັນໄປໄດ້ ພາຍໃຕ້ເງື່ອນໄຂທີ່ມີການຊ່ວຍເຫຼືອຂອງນັກວິທະຍາສາດ. ດັ່ງນັ້ນ, ນັກວິທະຍາສາດໂຊວຽດ ຈິ່ງໄດ້ຮັບຄວາມ ເຄົາລົບນັບຖື ແລະ ໄດ້ຮັບຄວາມສະດວກສະບາຍໃນການເຮັດວຽກຂອງພວກເຂົາເຈົ້າ.

ໃນເດືອນມິຖຸນາ ປີ ຄ.ສ 1954 ສະຖານີປະລະມານູແຫ່ງທຳອິດຂອງໂລກໄດ້ຮັບການກໍ່ສ້າງຂຶ້ນທີ່ ເມືອງ ໂອບິນສະກະ ແຂວງມົດສະກູ, ຈຸດປະສົງໃນການຄົ້ນຄວ້າຂອງນັກວິທະຍາສາດ ແມ່ນຢາກເຮັດໃຫ້ ພະລັງງານອັນມະຫາສານນີ້ຖືກນຳໃຊ້ໃນເປົ້າໝາຍທາງສັນຕິຢ່າງບໍ່ຢຸດຢັ້ງ. ໃນໄລຍະ 20 ປີ (19501 980) ສະຖານີປະລະມານູຊະນິດຕາງໆຫຼາຍສະຖານີຖືກສ້າງຂຶ້ນ ໃນ ສ.ສ.ສ.ຊ ຕາມໂຄງການຂອງນັກວິທະຍາສາດ.

ຊາວໂລກຮັບຮູ້ຜົນສຳເລັດອັນໃຫຍຫຼວງ ແລະ ມີຊື່ສຽງ ໂດ່ງດັງຂອງນັກວິທະຍາສາດໂຊວຽດ ໃນການຄົ້ນຄວ້າສະອະກາດ. ໃນວັນທີ 4 ຕຸລາ ປີ ຄ.ສ 1957 ສະຫະພາບໂຊວຽດເປັນປະເທດທຳອິດ ໃນໂລກທີ່ສາມາດສົ່ງດາວທຽມ ສະປຸດນິກ 1 (Sputnik 1) ໂຄຈອນອ້ອມໂລກ ໃນວັນທີ 12 ເມສາ ປີ ຄ.ສ 1961 ສະຫະພາບໂຊວຽດໄດ້ສົ່ງຍານອະວະກາດຊື່ ໂວສະຕົກ 1 (Mostok1) ບິນອ້ອມຈັກກະວານໂດຍແມ່ນນັກບິນອະວະກາດຊື່ ຢູຣີກາກາລິນ ເປັນຄົນທຳອິດຂອງໂລກທີ່ນັ່ງໃນຍານດັ່ງກ່າວ ແລະ ນັກອະວະກາດຍິງຄົນທຳອິດຂອງໂລກຊື່ ວາເລນຕີນາ ເຕເລສະໂກວາ. ຄະນະນັກອະວະກາດໄດ້ຈັດຕັ້ງ ຫ້ອງທົດລອງວິທະຍາສາດຂຶ້ນຢູ່ໃນອະວະກາດເປັນຄັ້ງທຳອິດ ແລະ ໃນປີ ຄ.ສ 1970 ສາມາດດຳເນີນການຄົ້ນຄວ້າຜິວໜ້າດວງຈັນ ໂດຍການຊ່ວຍເຫຼືອຂອງເຄື່ອງຈັກທີ່ຄວບຄຸມຢູ່ເທິງພື້ນໂລກ.

ນັກວິທະຍາສາດ ຈາກປະເທດຕ່າງໆຮູ້ສຶກເປັນໜີ້ບຸນຄຸນຕໍ່ຄະນະນັກວິທະຍາສາດໂຊວຽດຜູ້ ເຊິ່ງ ບຸກເບີກທາງສາຍໃໝ່ໄປສູ່ການຄົ້ນຄວ້າ ອະວະກາດໄວ້ໃຫ້ແກ່ມວນມະນຸດ ແລະ ພວກເຂົາເຈົ້າໄດ້ກາຍເປັນ 1/4 ຂອງນັກວິທະຍາສາດຂອງໂລກ.

**3)ສະຫະພາບໂຊວຽດ ແລະ ປັນດາປະເທດເອີຣົບຕາເວັນອອກ ແຕປີຄ.ສ 1970-1990**

**ກ. ສະຫະພາບໂຊວຽດ ແຕ່ປີ ແຕ່ 1970-1990**

**ດ້ານເສດຖະກິດ**

ໃນປີ ຄສ 1973 ໂລກໄດ້ເກີດວິກິດການທາງດ້ານການເມືອງ ແລະ ເສດຖະກິດຢ່າງຮ້າຍແຮງເຮັດໃຫ້ ມວນມະນຸດຕ້ອງປະເຊີນໜ້າກັບບັນຫາຕ່າງໆ ທີ່ຈະຕ້ອງໄດ້ແກ້ໄຂເຊັ່ນ: ປະຊາກອນໃນໂລກ ເພີ້ມຂຶ້ນໄວ ແລະ

ຊັບພະຍາກອນນັບມື້ບົກແຫ້ງ. ສະພາບການດັ່ງກ່າວໄດ້ຮຽກຮ້ອງໃຫ້ແຕ່ລະປະເທດຕ້ອງມີ ການປັບປຸງລະບົບເສດຖະກິດ ແລະ ການເມືອງເພື່ອໃຫ້ສອດຄອງກັບສະພາບການຂະຫຍາຍຕົວຂອງ ໂລກ. ແຕ່ຜູ້ນຳໂຊວຽດຖືວ່າ ວິກິດການດັ່ງກ່າວບໍ່ໄດ້ສົ່ງຜົນກະທົບຕໍ່ລະບອບສັງຄົມນິຍົມ ຈຶ່ງເຮັດໃຫ້ການຫັນ ປ່ຽນປະເທດຕົນໄປນຳທາງສຽງຂອງໂລກຊັກຊ້າ ເຊິ່ງເປັນການກີດຂວາງການຂະຫຍາຍຕົວໃນທຸກ ດ້ານຂອງສັງຄົມໂຊວຽດ.

ມາເຖິງປີ ຄ.ສ 1980 ລະບົບເສດຖະກິດໂຊວຽດ ໄດ້ປະສົບກັບຄວາມລົ້ມເຫຼວຢ່າງຮ້າຍແຮງ ເມື່ອປຽບທຽບກັບປະເທດທຶນນິຍົມ ໂດຍສະເພາະຜົນຜະລິດ ທາງດ້ານກະສິກຳ ບໍ່ພຽງພໍກັບການບໍລິໂພກຂອງປະຊາຊົນ, ສະຫະພາບໂຊວຽດ ຈຶ່ງປ່ຽນຖານະຈາກ ຜູ້ສົ່ງອອກເຂົ້າ, ສາລີ ກາຍມາເປັນຜູ້ຊື້ນັບມື້ຫຼາຍຂຶ້ນ, ການນຳເຂົ້າສິນຄ້າອາຫານເພີ່ມຂຶ້ນ ເຮັດໃຫ້ຂາດດຸນ ການຄ້າຢ່າງມະຫາສານສົ່ງຜົນໃຫ້ສະຫະພາບໂຊວຽດ ຈຳຕ້ອງຂາຍອາຍແກັດທຳມະຊາດຈາກຊີເບຣີ-ຍີ່ປຸ່ນ. ຊີເບຣີ-ເອີຣົບ ແລະ ຂາຍແຮ່ທາດ ທີ່ມີມູນຄ່າສູງເຊັ່ນ: ເພັດ, ຢູຣານຽມ ແລະ ອື່ນໆ. ແຕ່ວິທີການດັ່ງກ່າວ ກໍບໍ່ສາມາດແກ້ໄຂ ຫຼື ເຮັດໃຫ້ເສດຖະກິດຂອງສະຫະພາບ ໂຊວຽດຜ່ານພົ້ນສະພາບວິກິດການນັ້ນໄດ້.

**ດ້ານການເມືອງ**

ພັກກອມມູນິດໂຊວຽດ ເປັນອົງການຈັດຕັ້ງທາງການເມືອງສູງສຸດຂອງປະຊາຊົນໂຊວຽດ ເຊິ່ງເຄີຍມີບົດຮຽນ ແລະ ປະສົບການໃນການບໍລິຫານງານມາເປັນເວລານານກວ່າ 60 ປີ ແຕ່ການບໍລິຫານງານ ຂອງພັກກໍ່ປະສົບກັບບັນຫາຢ່າງຫນັກຫນ່ວງ ໂຍສະເພາະ ການກໍ່ສ້າງພະນັກງານສືບທອດບໍ່ມີຄຸນະພາບ, ການວາງແຜນການຈາກສູນກາງ ໂດຍໃຫ້ພັກຂອງຊົນຊັ້ນກຳມາຊີບເປັນຜູ້ນຳພາລັດນັ້ນ ເຮັດໃຫ້ອຳນາດການປົກຄອງເສື່ອມໂຊມ ສຸດທ້າຍກາຍເປັນຜະເດັດການທີ່ນຳໂດຍຜູ້ນຳຈຳນວນຫນ້ອຍ ໃນຄະນະກຳມະການ ກົມການເມືອງຂອງພັກກອມມູນິດ.

ສິດທິທາງການເມືອງ ແລະ ສິດເສລີພາບທາງຄວາມຄິດຂອງປະຊາຊົນສ່ວນຫຼາຍຖືກຈຳກັດ, ລະບົບການນຳທີ່ຕໍ່ເນື່ອງ ໂດຍບໍ່ມີການປ່ຽນແປງເປັນເຫດໃຫ້ກຸ່ມຜູ້ນຳຈຳນວນຫນຶ່ງມີອາຍສູງ, ເກີດມີ ຄວາມອິດເມື່ອຍ ແລະ ຫຼ້າຊ້າໃນການຕັດສິນໃຈ.

**ການປະຮູບ ແລະ ນະໂຍບາຍການຕ່າງປະເທດຂອງ ກອກບາຊອບ**

ມິຄາສິ້ນ ກ້ອກບາຊອບ ໄດ້ຮັບຕຳແຫນ່ງເລຂາທິການໃຫຍ່ພັກກອມມູນິດໂຊວຽດ ໃນວັນທີ 11 ເມສາ ປີ ຄ.ສ 1985 ໃນຂະນະທີ່ສະຫະພາບໂຊວຽດກຳລັງປະສົບບັນຫາຫຼາຍດ້ານທີ່ກ້ອກບາຊອບເຫັນວ່າ ມີ ຄວາມຈຳເປັນທີ່ຈະຕ້ອງໄດ້ດຳເນີນການແກ້ໄຂ. ດັ່ງນັ້ນ, ເມື່ອຂຶ້ນກຳອຳນາດ ກ້ອກບາຊອບ ຈຶ່ງຟ້າວຟັງໃນການດຳເນີນນະ ໂຍບາຍການປະຕິຮູບຢ່າງຮອບດ້ານ ໂຕຍມີຄວາມຫວັງວ່າ ຈະເຮັດໃຫ້ແຜະຫະພາບ ໂຊວຽດສາມາດຜ່ານພົ້ນຈາກສະພາບວິກິດການນີ້ໄປໄດ້ຢ່າງບໍ່ມີບັນຫາ. ໃນການດຳເນີນການປະຕິຮູບກ້ອກບາຊອບໄດ້ເລັ່ງໃສ່ການປະຕິວັດລະບົບການບໍລິຫານງານ ໂດຍມີຈຸດປະສົງປ່ຽນແປງ ແລະ ແກ້ໄຂບັນຫາການຂາດປະສິດທິພາບ, ຄວາມຫຼ້າຊ້າ ແລະ ການທຸຈະລິດຂອງສະມາຊິກພັກ, ລັດ ແລະ ວິສາຫະກິດຕ່າງໆ. ປົດບຸກຄະລາກອນເກົ່າ ທີ່ເມີນເສີຍບໍ່ເຮັດວຽກ, ແລ້ວສ້າງບຸກຄະລາກອນໃຫມ່ ທີ່ ມີຄວາມກະຕືລືລົ້ນ ແລະ ມີຄວາມຄິດສ້າງສັນ ເພື່ອທີ່ຈະສ້າງເສດຖະກິດ ແລະ ສັງຄົມໃຫມ່ໃຫ້ຫຼຸດພົ້ນຈາກ ພາວະຕົກຕໍ່າ. ເປີດກວ້າງຄວາມຄິດເຫັນ ເພື່ອໃຫ້ມີປະຊາທິປະໄຕຫຼາຍຂຶ້ນທັງໃນດ້ານການເມືອງ ແລະ ສັງຄົມເຊັ່ນ: ການໃຫ້ສິດປະຊາຊົນໄດ້ຮູ້ຂ່າວສານຕ່າງປະເທດ, ການໃຫ້ມີສິດເສລີພາບທາງຄວາມຄິດ ເພື່ອສ້າງຄວາມຄິດໃຫມ່ ທີ່ຈະພັດທະນາສະຫະພາບໂຊວຽດ.



ມິຄາອິນ ກອກບາຊອບ

**ນະໂຍບາຍການຕ່າງປະເທດ**

ພາຍຫຼັງການດຳເນີນນະໂຍບາຍການປະຕິຮູບຂອງ ກ້ອກບາຊອບ ໄດ້ກໍ່ໃຫ້ເກີດມີການປ່ຽນແປງຢ່າງກວ້າງຂວາງທັງໃນດ້ານການເມືອງ, ເສດຖະກິດ, ສັງຄົມ ແລະ ການຕ່າງປະເທດ. ໃນນີ້ນະໂຍບາຍ ການຕ່າງປະເທດໄດ້ເຮັດໃຫ້ສະຖານະການ ແລະ ລະບົບການເມືອງ ໂລກາ ມີການປ່ຽນແປງຢ່າງ ໃຫຍ່ຫລວງຄື:

ບັນຫາການປະເຊີນໜ້າກັບໂລກຕາເວັນຕົກ ແລະ ຈີນ, ກ້ອກບາຊອບ ຫັນມາໃຊ້ນະໂຍບາຍທາງການທູດ ແລະ ການເຈລະຈາ ຝຽນແທນການແຂ່ງຂັນດ້ອຍອາວຸດ, ດັ່ງນັ້ນ, ໃນເດືອນພະຈິກ ປີ ຄ.ສ 1905 ກ້ອກບາຊອບ ໄດ້ເດີນທາງໄປປະຊຸມສຸດຍອດກັບປະທານາທິບໍດີ ໂຣນາລ ຣີແກນ ທີ່ກຸງເຊີແນວ (ປະເທດໂອຕຣິຕ). ການປະຊຸມສຸດຍອດລະຫວ່າງຜູ້ນຳຂອງ 2 ປະເທດ ໄດ້ດຳເນີນໄປເຖິງ 3 ຄັ້ງ ຈຶ່ງກໍ່ໃຫ້ເກີດມີຄວາມຮ່ວມມື ແລະ ຄວາມເປັນປໍລະປັກກັນ. ໃນເດືອນ ພຶດສະພາ ປີ ຄ.ສ 1989 ກ້ອກບາຊອບ ໄດ້ເດີນທາງໄປນະຄອນຫຼວງປັກກິ່ງ ພົບປະເຈລະຈາກັບ ເຕີ້ງສຽວຜິງ ເພື່ອຢຸດຕິຄວາມຂັດແຍ່ງກັບຈີນ ໃນການປະຕິຮູບນະໂຍບາຍການຕ່າງປະເທດ ກ້ອກບາຊອບ ໄດ້ຕັ້ງເປົ້າໝາຍທີ່ສຳຄັນໄວ້ວ່າ:ການຍົກເລີກປະເຊີນໜ້າກັບໂລກຕາເວັນຕົກຈະເຮັດໃຫ້ສະຫະພາບໂຊວຽດສາມາດຮັບເອົາການລົງທຶນ ແລະ ເຕັກໂນໂລຊີຈາກຕ່າງປະເທດຫຼາຍຂຶ້ນ ເຊິ່ງຈະຊ່ວຍໃຫ້ສະຫະພາບໂຊວຽດສາມາດແກ້ໄຂບັນຫາເສດຖະກິດ ແລະ ສັງຄົມໄດ້ໄວຂຶ້ນ.

ການຫຼຸດການປະເຊີນໜ້າກັນ ຈະຊ່ວຍໃຫ້ງົບປະມານທາງການທະຫານ ເພື່ອຈະຊ່ວຍໃຫ້ສະຫະພາບໂຊວຽດ ສາມາດເພີ່ມງົບປະມານໃນດ້ານອື່ນຫຼາຍຂຶ້ນ. ສະຫະພາບ ໂຊວຽຕ ຈະບໍ່ນໍາໃຊ້ນະ ໂຍບາຍແຊກແຊງ ແລະ ປ່ອຍໃຫ້ບັນດາປະເທດເອີຣົບ ຕາເວັນອອກເປັນອິດສະຫຼະໃນການພັດທະນາຕົນເອງ ເຊິ່ງນະໂຍບາຍນີ້ ໄດ້ເປີດທາງໄປທ່ານລົ້ມລະລາຍຂອງລະບອບກອມມູນິດໃນເອີຣົບຕາເວັນອອກ.

**4) ການລົ້ມລະລາຍຂອງສະຫະພາບໂຊວຽດ**

ມາເຖິງຊຸມປີ 80-90 ສະພາບທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມຂອງສະຫະພາບ ໂຊວຽດ ຕົກຢູ່ໃນຊວງວິກິຕການຢ່າງຮ້າຍແຮງ ດ້ວຍເຫດນັ້ນ ວັນທີ 2 ກໍລະກົດ ປີ ຄ.ສ 1990, ກອງປະ ຊຸມ ໃຫຍ່ຄັ້ງທີ XXVIII ຂອງພັກກອມມູນິດໂຊວຽດ ຈຶ່ງເປີດຂຶ້ນກ່ອນກໍານົດ ເນື່ອງຈາກ ການດໍາເນີນການ ປ່ຽນແປງຢ່າງຮອບດ້ານຂອງເປເຣດສະໂຕຣຍກາ ມີຄວາມຊັກຊ້າ. ໃນກອງປະຊຸມຄັ້ງນີ້ ໄດ້ອະນຸຍາດ ໃຫ້ມີຫຼາຍພັກການເມືອງ ແລະ ມອບອໍານາດລັດທີ່ພັກເຄີຍກໍາມາແຕ່ກອນນັ້ນໃຫ້ແກ່ສະພາ. ວັນທີ 19 ສິງຫາ ປີ ຄ.ສ 1901 ຜູ້ນໍາພັກ-ລັດໂຊວຽດ ຈໍານວນໜຶ່ງ ທີ່ມີແນວຄິດຢາກຮັກສາລະບອບ ກອມມູນິດໄວ້ຈຶ່ງໄດ້ກໍ່ການລັດຖະປະຫານເພື່ອຍຶດອໍານາດ, ແຕ່ການລັດຖະປະຫານຄັ້ງນີ້ບໍ່ປະສົບຜົນສໍາເລັດ. ມາເຖິງວັນທີ 21 ສິງຫາ ປີ ຄສ 1991 ຄະນະລັດຖະປະຫານຖືກຈັບ ແລະ ອີກຈໍານວນໜຶ່ງໄດ້ຂ້າ ຕົວເອງຕາຍ.

ຈາກເຫດການດັ່ງກ່າວ ໄດ້ສົ່ງຜົນສະທ້ອນຢ່າງໜັກໜ່ວງຕໍ່ສະຫະພາບໂຊວຽດຄື: ພັກກອມ ມູນິດຖືກຢຸດຕິການເຄື່ອນໄຫວໃນທົ່ວສະຫະພາບໂຊວຽດ, ລັດຖະບານໂຊວຽດຖືກຍົກເລີກ, ບັນດາລັດຕ່າງໆ ທີ່ເມື່ອກ່ອນຮວມຕົວກັນເປັນສະຫະພາບໄດ້ປະກາດແຍກຕົວ. ຈາກນັ້ນ, ກະແສຟອງຕໍ່ຕ້ານກອມມູນິດ ແລະ ຕ້ານລະບອບສັງຄົມນິຍົມ ໄດ້ແຜ່ລາມໄປທົ່ວທຸກແຫ່ງຫົນ ວັນທີ 21 ທັນວາ ປີ ຄ.ສ 1991 ຜູ້ນໍາ 12 ລັດ ໄດ້ເຊັນສົນທິສັນຍາວ່າດ້ວຍການສ້າງຕັ້ງວົງຄະນາຍາຕປະເທດເອກະ ລາດຂຶ້ນ. ໃນທີ່ສຸດອາບາຊອບ ຈໍາຕ້ອງລາອອກຈາກຕໍາແໜ່ງປະທານາທິບໍ່ຕີໃນວັນທີ່ 25 ທັນວາ ປີ ຄ.ສ 1991 ແລະ ໃນວັນດຽວ ກັນຜືນທຸງຂອງ ສະຫະພາບໂຊວຽດ ກໍຖືກປົດອອກຈາກເສົາທີ່ວັງກະແລມແລັງ.

## 5.ບັນດາປະເທດເອີຣົບຕາເວັນອອກຫຼັງສົງຄາມໂລກຄັ້ງທີ 2

ເມື່ອສໍາເລັດການປະຕິວັດຊາດ, ປະຊາຊົນໃນບັນດາປະເທດເອີຣົບຕາເວັນອອກໄດ້ພ້ອມກັນປະຕິບັດແຜນການ 5 ປີ ຄັ້ງທີ I-V ເພື່ອກໍ່ສ້າງພື້ນຖານວັດຖຸເຕັກນິກໃຫ້ແກ່ລະບອບສັງຄົມນິຍົມ ພາຍໃຕ້ ສະພາບການທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມ ທີ່ມີຄວາມຫຍຸ້ງຍາກ ແລະ ສັບສົນທີ່ສູດ ໂດຍມີສາເຫດມາຈາກຫຼາຍຢ່າງຄື:

- ພື້ນຖານວັດຖຸເຕັກນິກຂອງບັນດາປະເທດເຫຼົ່ານີ້ຍັງຫຼ້າຫຼັງ.
- ບັນດາປະເທດຈັກກະພັດ ດໍາເນີນການປິດລ້ອມທາງດ້ານເສດຖະກິດ.
- ພວກຈັກກະພັດ ແລະ ພວກຝືນປະຕິວັດດໍາເນີນການແຊກແຊງເຂົ້າກິດຈະການພາຍໃນ ເພື່ອທໍາລາຍລະບອບໃຫມ່ຂອງປະເທດເຫຼົ່ານັ້ນ.

ແຕ່ວ່າບັນຫາຄວາມຫາຍຸ້ງຍາກທີ່ກ່າວມານັ້ນ ລ້ວນແຕ່ໄດ້ຖືກແກ້ໄຂຢ່າງໄວວາ ແລະ ມີປະສິດທິພາບ ເນື່ອງຈາກໄດ້ຮັບການຊ່ວຍເຫຼືອອັນໃຫຍ່ຫຼວງ ແລະ ບໍ່ຮູ້ອິດຮູ້ເມື່ອຍຈາກສະຫະພາບໂຊວຽດ. ດັ່ງນັ້ນ, ການກໍ່ສ້າງລະບອບ

ສັງຄົມນິຍົມຂອງບັນດາປະເທດເອີຣົບຕາເວັນອອກສາມາດດຳເນີນໄປໄດ້ດີ ແລະ ສາມາດຍາດໄດ້ຜົນງານອັນໃຫຍ່ຫຼວງ ຈຶ່ງເຮັດໃຫ້ພື້ນຖານເສດຖະກິດໄດ້ຮັບການປັບປຸງ, ແກ້ໄຂແລະມີການປ່ຽນແປງໄປໃນທາງທີ່ດີຂື້ນ.

ກ່ອນສົງຄາມໂລກຄັ້ງທີ II, ອານບານີ ເປັນປະເທດທີ່ມີການຂະຫຍາຍຕົວຊ້າກວ່າປະເທດອື່ນໆ ເນື່ອງຈາກ ບໍ່ມີເສັ້ນທາງລົດໄຟ, ບໍ່ມີການນຳໃຊ້ເຄື່ອງກົນຈັກເຂົ້າໃນການຜະລິດກະສິກຳ ແລະ ບໍ່ມີໂຮງງານອຸດສາຫະກຳ, ໃນ ຊຸມປີ 70, ອານບານີ ສາມາດສ້າງໂຮງງານອຸດສາຫະກຳໄດ້ຫຼາຍຮ້ອຍແຫ່ງເຊັ່ນ: ໂຮງງານໄຟຟ້າ, ຫຼອມເຫຼັກ, ເຄມີ, ຕໍ່າ ແຜນ ແລະ ອື່ນໆ. ເມື່ອມາເຖິງປີ ຄ.ສ 1970, ອານບານີ ປະສົບຜົນສຳເລັດໃນການນຳໃຊ້ໄຟຟ້າໃນທົ່ວປະເທດ ແລະ ສ່ວນທາງດ້ານການກະສິກຳສາມາດເພິ່ງ ຕົນເອງ ແລະ ລ້ຽງກຸ້ມຕົນເອງໄດ້ຢ່າງພຽງພໍ.

ສ່ວນປະເທດໂປໂລຍ, ປະລິມານການຜະລິດທາງດ້ານອຸດສາຫະກຳໃນຕົ້ນຊຸມປີ 70 ໄດ້ເພີ່ມຂຶ້ນເຖິງ 20 ເທື່ອເມື່ອປຽບທຽບກັບ ປີ ຄສ 1938 ປະລິມານການຜະລິດກະສິກຳເພີ່ມຂຶ້ນ 2 ເທື່ອ. ນອກຈາກນັ້ນ, ລັດໄດ້ກໍ່ສ້າງ ເຮືອນຊານອາຄານສະຖານທີ່ຂຶ້ນເປັນຈຳນວນຫຼວງຫຼາຍ ເຊິ່ງສາມາດຕອບສະໜອງ ຄວາມຕ້ອງການທາງດ້ານທີ່ພັກ ເຊົາໄດ້ເຖິງ 50% ຂອງຈຳນວນພົນລະເມືອງ ໃນທົ່ວປະເທດ.

ຢູ່ປະເທດບູນກາຣີ ຍອດປະລິມານການຜະລິດທາງດ້ານອຸດສາຫະກຳ ໃນປີ ຄ.ສ 1975 ໄດ້ເພີ່ມ ຂຶ້ນເປັນ 55 ເທື່ອ ເມື່ອທຽບກັບປີ ຄ.ສ 1939 ແລະ ພິເສດແມ່ນປະຊາຊົນໃນເຂດຊົນນະບົດມີໄຟຟ້າໃຊ້ທັງຫມົດ.

ໃນໄລຍະ 30 ປີທີ່ຜ່ານມາ, ສາທາລະນະລັດ ປະຊາທິປະໄຕເຢຍລະມັນ ໄດ້ປະສົບຜົນສຳເລັດ ອັນໃຫຍ່ ຫຼວງໃນການກໍ່ສ້າງລະບອບສັງຄົມນິຍົມ ໂດຍສະເພາະແມ່ນ ເມື່ອກ່ອນເປັນປະເທດທີ່ຜະລິດ ການກະສິກຳເປັນຕົ້ນ ຕໍ, ແຕ່ເມື່ອມາເຖິງຊຸມປີ 70 ລາຍໄດ້ແຫ່ງຊາດ 76% ແມ່ນໄດ້ມາຈາກຜົນຜະລິດ ໃນຂະແໜງອຸດສາຫະກຳ

ພຽງແຕ່ 20 ປີແຫ່ງການກໍ່ສ້າງລະບອບສັງຄົມໃຫມ່,ຮົງກາຣີໄດ້ກາຍເປັນປະເທດທີ່ມີພື້ນຖານທາງດ້ານອຸດ ສາຫະກຳ ແລະ ກະສິກຳທີ່ທັນສະໄຫມພໍສົມຄວນ. ສວນຣູມານີກໍກາຍເປັນປະເທດອຸດສາຫະກຳແລະ ກະສິກຳທີ່ ຂະຫຍາຍຕົວເຊັ່ນກັນ ເຊິ່ງມີປະລິມານການຜະລິດອຸດສາຫະກຳໃນແຕ່ລະປີ ກວມ 70% ຂອງລາຍໄດ້ແຜາງຊາຕ. ສຳລັບເຊັກໂກສະໂລວາກີໄດ້ກາຍເປັນປະເທດອຸດສາຫະກຳໃນໂລກໂດຍສະເພາະໃນປີ ຄ.ສ 1970ໄດ້ມີປະລິມານ ການຜະລິດກວມເຖິງ 1,75% ຂອງປະລິມານລວມຍອດທາງດ້ານອຸດສາຫະກຳໃນທົ່ວໂລກ.

ຜົນສຳເລັດໃນເບື້ອງຕົ້ນ ຂອງການກໍ່ສ້າງລະບອບສັງຄົມນິຍົມໃນບັນດາປະເທດເອີຣົບຕາເວັນອອກ ໄດ້ເຮັດ ໃຫ້ຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນໃນປະເທດດັ່ງກ່າວລ້ວນແຕ່ໄດ້ຮັບ ການປັບປຸງ ແລະ ການພັດທະນາໃຫ້ດີຂຶ້ນຢ່າງຕໍ່ເນື່ອງ ອັນເປັນການບົ່ງບອກເຖິງຄວາມກ້າວໜ້າຂອງ ລະບອບສັງຄົມນິຍົມ

ແຕ່ເຖິງວ່າປະຊາຊົນໃນບັນດາປະເທດເອີຣົບຕາເວັນອອກ ໄດ້ປະສົບຜົນສຳເລັດອັນໃຫຍ່ຫຼວງ ໃນການ ກໍ່ສ້າງລະບອບສັງຄົມມາເປັນເວລານານກໍຕາມ, ແຕ່ເມື່ອສັງລວມເຂົ້າແລ້ວເຫັນວ່າ ການກໍ່ສ້າງ ລະບອບດັ່ງກ່າວຍັງມີ ຈຸດດ້ອຍ ຫຼື ຈຸດຄົງຄ້າງຫຼາຍຢ່າງທີ່ຈະຕ້ອງໄດ້ແກ້ໄຂເຊັ່ນ:

- ການລອກແບບການກໍ່ສ້າງລະບອບສັງຄົມນິຍົມຕາມແບບສະຫະພາບ ໂຊວຽດ ໂດຍບໍ່ໄດ້ ຄຳນຶ່ງເຖິງ ສະພາບ ແລະ ເງື່ອນໄຂຕົວຈິງຂອງປະເທດຕົນ ໂດຍສະເພາະ ການໃຫ້ບຸລິມະສິດໃນການ ຂະຫຍາຍອຸດ ສາຫະກຳ, ການຫັນເປັນກະສິກຳລວມຫມູ່, ລັດເປັນຜູ້ຜູກຂາດທາງດ້ານເສດຖະກິດ ແລະ ອື່ນໆ.

- ການບໍລິຫານລັດ ທີ່ມີລັກສະນະເກື້ອກູນເຊິ່ງກັນ ແລະ ກັນ, ເກີດມີຊ່ອງວ່າງໃນສັງຄົມເຊິ່ງເປັນການຂັດກັບອຸດົມການຂອງລະບອບສັງຄົມນິຍົມ.

ຈາກບັນຫາດັ່ງກ່າວຂ້າງເທິງນັ້ນ ມັນໄດ້ສົ່ງຜົນກະທົບຕໍ່ພາບພົດ ແລະ ລັກສະນະອັນຕິເດັ່ນຂອງລະບອບສັງຄົມນິຍົມ, ປະຊາຊົນຂາດຄວາມເຊື່ອໝັ້ນຕໍ່ການນໍາພາຂອງພັກ ແລະ ລັດຖະບານທັງໝົດນັ້ນ ໄດ້ເປັນການເປີດຊ່ອງຕ່າງໆໃຫ້ແກ່ອິດທິກໍາລັງປໍລະປັກທີ່ຍາມໃດກໍ່ຫວັງທໍາລາຍລະບອບສັງຄົມນິຍົມນັ້ນ ສາມາດດໍາເນີນການແຊກແຊງ ອັນເປັນສາເຫດເຮັດໃຫ້ບັນດາປະເທດຕັ້ງການເກີດວິກິດການທາງ ການເມືອງໃນໄລຍະຕໍ່ມາ.

# ບົດທີ 14
# ສະພາບການຂອງໂລກຫຼັງສົງຄາມໂລກຄັ້ງທີ2

## 1.ສະພາບການຂອງໂລກຫຼັງສົງຄາມໂລກຄັ້ງທີ II

### 1.1.ສະພາບການຂອງໂລກແຕ່ປີ ຄ ສ 1945 – 1970

ເປັນການພົວພັນທີ່ມີທັງສັນຕິພາບ ແລະ ຂໍ້ຂັດແຍ່ງ. ໂດຍສະເພາະຫຼັງສົງຄາມໂລກຄັ້ງທີ II ສິ້ນສຸດລົງ ບັນດາປະເທດທີ່ຊະນະສົງຄາມໄດ້ ພ້ອມພາກັນຈັດຕັ້ງອົງການສາກົນຂຶ້ນຊື່ວ່າ ສະຫະປະຊາຊາດ ເພື່ອແກ້ໄຂຂໍ້ຂັດແຍ່ງ ແລະ ຮັກສາສັນຕິພາບໂລກ. ແຕ່ຄວາມບໍ່ໄວ້ວາງໃຈກັນລະຫວ່າງສະຫະລັດອາເມຣິກາກັບສະຫະພາບ ໂຊວຽດໄດ້ກໍ່ໃຫ້ເກີດການແຂ່ງຂັນທີ່ມີລັກສະນະເຄັ່ງຕຶງ ເຮັດໃຫ້ລະບົບການເມືອງແຫ່ງໂລກແບ່ງອອກເປັນສອງຂົ້ວມະຫາອຳນາດ ໂດຍມີສະຫະລັດອາເມຣິກາເປັນຜູ້ນຳໂລກເສລີ ແລະ ມີສະຫະພາບໂຊວຽດເປັນຜູ້ນຳໂລກສັງຄົມນິຍົມ.

### 1.2. ການພົວພັນສາກົນແຕ່ປີ ຄສ 1971 ສາ ຄສ 1985

ເປັນຊ່ວງຂອງການພົວພັນສາກົນກ້າວສູ່ໄລຍະສັນຕິ ເພາະເປັນຊ່ວງທີ່ ມະຫາອຳນາດໄດ້ມີການຫຼຸດຜ່ອນຄວາມເຄັ່ງຕຶງລົງ. ປັດໄຈທີ່ມີສ່ວນໃນການເຮັດໃຫ້ມີການຫຼຸດຜ່ອນຄວາມເຄັ່ງຕຶງນັ້ນ ມາຈາກການຕົກລົງເຈລະຈາ ແລະ ເຊັນສັນຍາກ່ຽວກັບການກຳຈັດອາວຸດຂອງມະຫາອຳນາດ, ໂດຍ ສະເພາະນັບແຕ່ສະຫະພາບໂຊວຽດ ແລະ ສະຫະລັດອາເມຣິກາ ສຳເລັດໃນການຕົກລົງເຈລະຈາຈໍ ກັດອາວຸດຍຸດທະສາດ ໃນສົນທິສັນຍາຊອນ1 ( SALT1 ) ໃນເດືອນພຶດສະພາ ປີ ຄ.ສ 1972 ແລະ ສັນຍາ ຊອນ 2 (SALT2) ກ່ຽວກັບການຈຳກັດຂີປະນາວຸດຍຸດທະສາດ ໃນວັນທີ 18 ມິຖຸນາ ຄ.ສ 1979 ລະຫວ່າງ ທ່ານ ເລໂອນິກເບຣຊະເນັບ ກັບທ່ານ ຈິມມີຄາເຕີ.

ປະກອບກັບການຕໍ່ສູ້ ແລະ ການກ່າວປະນາມໂຈມຕີຂອງກຸ່ມປະເທດໂລກທີສາມໃນການປະຊຸມ ສະເພາະກຸ່ມ, ທັງໃນລະດັບຂົງເຂດພາກພື້ນ ແລະ ໃນເວທີການເມືອງໂລກທີ່ອົງການສະຫະປະຊາຊາດ ແຕ່ລະຄັ້ງ, ບັນດາປະເທດສະມາຊິກໂລກທີສາມໄດ້ເປັນເອກະສັນກັນທວງໃຫ້ປະເທດມະຫາອຳນາດ ຕ້ອງຢຸດຕິການປະຕິຕອາວຸດ ແລະ ທຳລາຍອາວຸດທີ່ມີປະສິດທິພາບການທຳລາຍສູງ, ພ້ອມທັງບໍ່ອະນຸຍາດໃຫ້ມະຫາອຳນາດທັງສອງມາຕັ້ງຖານທັບໃສ່ບັນດາປະເທດທີ່ກຳລັງພັດທະນາ.

### 1.3. ສະພາບການຂອງໂລກແຕ່ປີ1985 ຫາ ປັດຈຸບັນ

ການພົວພັນສາກົນແຕ່ປີ ຄ.ສ 1985 ຫາປັດຈຸບັນເປັນຊ່ວງຂອງການພົວພັນທີມີລັກສະນະສັນຕິທີ່ ສະແດງອອກໃນ 2 ລັກສະນະຄື:

1) ການພົວພັນລະຫວ່າງພາກຕາເວັນຕົກກັບພາກຕາເວັນອອກ (West - East Relatiorls ) ເຊິ່ງ ເປັນການພົວພັນລະຫວ່າງປະເທດສະຫະພາບໂຊວຽດ ແລະ ພັນທະມິດກັບສະຫະລັດ ອາເມຣິກາ ແລະ ປະເທດທີ່ເປັນພັນທະມິດ, ການພົວພັນນີ້ສ່ວນຫຼາຍເປັນການພົວພັນທາງດ້ານຍຸດທະສາດການເມືອງ ແລະ ການທະຫານ, ການພົວພັນຂອງສອງພາກນີ້ມີທັງຂໍ້ຂັດແຍ່ງ ແລະ ການຮອມມື, ການພົວພັນລະຫວ່າງພາກຕາເວັນຕົກກັບພາກຕາເວັນອອກ ເລີ່ມຜ່ອນຄາຍຄວາມເຄັ່ງຕຶງລົງຫຼັງຈາກການຂຶ້ນກຳອຳນາດຂອງ ມິຄາຍອິນ ກ໊ອກບາຊອບ ຜູ້ນຳໂຊວຽດດຳເນີນການປະຕິຮູບເສດຖະກິດ, ສັງຄົມໄປຕາມ

ລະບົບ ຈິນຕະນາການໃຫມ່ທີ່ເອີ້ນວ່າ ເປເຣດສະໂຕຣຍກາ". ຜົນຂອງການດຳເນີນນີ້ ເຮັດໃຫ້ປະເທດສັງຄົມນິຍົມເອີຣົບຕາເວັນອອກລວມທັງສະຫະພາບໂຊວຽດພັງທະລາຍລົງ.

2) ການພົວພັນລະຫວ່າງພາກເຫນືອກັບພາກໃຕ້ (North-Soul Relations ) ເປັນການພົວພັນລະຫວ່າງປະເທດອຸດສາຫະກຳທີ່ພັດທະນາແລ້ວ ເຊິ່ງສ່ວນຫຼາຍເປັນປະເທດທີ່ເຕົ້າໂຮມ ຢູ່ທາງພາກເຫນືອກັບປະເທດທີ່ດ້ອຍພັດທະນາ ແລະ ກຳລັງພັດທະນາ ເຊິ່ງສ່ວນຫຼາຍ ເຕົ້າໂຮມຢູ່ທາງທິດໃຕ້, ບັນດາປະເທດດັ່ງກ່າວນີ້ ມີຄວາມບໍ່ພໍໃຈຕໍ່ກັບ ໂຄງສ້າງ ທີ່ມີຄວາມ ແຕກຕ່າງທາງເສດຖະກິດໃນສັງຄົມໂລກປັດຈຸບັນ ແລະ ຮູ້ສຶກວ່າເສຍປຽບຫຼາຍຢ່າງໃຫ້ແກ່ ປະເທດພັດທະນາທາງດ້ານອຸດສາຫະກຳ, ບັນດາປະເທດເຫຼົ່ານີ້ ຈຶ່ງຮຽກຮ້ອງໃຫ້ມີການຈັດລະບຽບເສດຖະກິດຄືນໃຫມ່ເພື່ອຄວາມສົມດຸນເຊິ່ງນັບວ່າເປັນຜົນກະທົບອັນຫນຶ່ງຕໍ່ກັບການພົວພັນສາກົນໃນປັດຈຸບັນ

## 2. ອົງການສະຫະປະຊາຊາດ

### 2.1 ຄວາມຫມາຍ

ອົງການສະຫະປະຊາຊາດ (United Nations Organization ) ຫມາຍເຖິງອົງການລະຫວ່າງປະເທດທີ່ຈັດຕັ້ງຂຶ້ນເພື່ອດຳລົງ ແລະ ຮັກສາໄວ້ເຊິ່ງສັນຕິພາບ ແລະ ຄວາມຫມັ້ນຄົງຂອງໂລກ ພ້ອມທັງສົ່ງເສີມຄວາມຮ່ວມມື ແລະ ຄຸນນະພາບຊີວິດທີ່ດີຂອງມວນມະນຸດໃນໂລກ, ອົງການນີ້ສ້າງຕັ້ງຂຶ້ນ ແລະ ຖືກຮັບຮອງຢ່າງເປັນທາງການໃນວັນທີ 24 ຕຸລາ ປີ ຄ.ສ 1945. ປີ ຄ.ສ 2006 ມີສະມາຊິກທັງຫມົດ 192 ປະເທດ.



ການລົງນາມກົດບັດສະຫະປະຊາຊາດປີ 1945



ທຸງສະຫະປະຊາຊາດ



ສັນຍາລັກສະຫະປະຊາຊາດ

**20.2 ຈຸດປະສົງການສ້າງຕັ້ງ**

ອົງການສະຫະປະຊາຊາດສ້າງຕັ້ງຂຶ້ນເພື່ອຈຸດປະສົງຫຼັກດັ່ງນີ້:

- ເພື່ອຮັກສາໄວ້ເຊິ່ງສັນຕິພາບ ແລະ ຄວາມຫມັ້ນຄົງຂອງໂລກດ້ວຍການຮ່ວມມືກັນ.
- ເພື່ອເສີມສ້າງຄວາມຮ່ວມມືລະຫວ່າງປະເທດ ໂດຍຍຶດຫຼັກການແຫ່ງຄວາມສະເຫມີພາບແລະສິດທິໃນການເລືອກວິທີການປົກຄອງຂອງຕົນເປັນຫຼັກ.
- ເພື່ອຊ່ວຍໃນການຫຼຸດຜ່ອນ, ແກ້ໄຂບັນຫາເສດຖະກິດ, ສັງຄົມ, ວັດທະນະທຳ ແລະ ສະຫນັບສະຫນູນໃນການເຄົາລົບສິດທິຂອງມະນຸດ ໂດຍປາສະຈາກຄວາມແຕກຕ່າງທາງດ້ານເຊື້ອຊາດ, ສາສະຫນາ ແລະ ພາສາ.
- ເພື່ອເປັນສູນກາງສຳລັບການປະສານງານຂອງນາໆຊາດທັງປວງໃນການດຳເນີນງານໃຫ້ບັນລຸຈຸດປະສົງເປົ້າຫມາຍ.

**2.3. ອົງກອນທີ່ສຳຄັນ**

ອົງການສະຫະປະຊາຊາດມີຫນ່ວຍງານ ຫຼື ອົງກອນຫຼັກຢູ່ 6 ອົງກອນຄື:

**1) ສະມັດຊາໃຫຍ່**

ສະມັດຊາໃຫຍ່ (General Assembly) ເປັນຫນ່ວຍງານ ຫຼື ອົງກອນຫຼັກ, ເປັນທີ່ປະຊຸມໃຫຍ່ຂອງສະຫະປະຊາຊາດ ແລະ ເປັນສູນກາງຂອງກິດຈະກຳທົ່ວໄປ. ປັດຈຸບັນຫນ່ວຍງານນີ້ມີສະມາຊິກທັງຫມົດ 188 ທ່ານ ເຊິ່ງສະມາຊິກແຕ່ລະປະເທດຈະສົ່ງຜູ້ແທນເຂົ້າຮ່ວມໃນສະມັດຊານີ້ຢ່າງເທົ່າທຽມກັນ.



ຫ້ອງປະຊຸມສະມັດຊາໃຫຍ່ ສະຫະປະຊາຊາດ

**2)ຄະນະມົນຕີຄວາມໝັ້ນຄົງ**

ຄະນະມົນຕີຄວາມໝັ້ນຄົງ (Security Council) ເປັນອົງກອນຫຼັກທີ່ເຮັດໜ້າທີ່ໃນການຈັດການ ກ່ຽວກັບຄວາມໝັ້ນຄົງ ແລະ ຕັດສິນໃຈວິນິດໄສກ່ຽວກັບຂໍ້ພິພາດ, ຂໍ້ຂັດແຍງຂອງປະເທດສະມາຊິກ.ພິເສດຖ້າຫາກວ່າປະເທດໃດໜຶ່ງກໍຕາມທີ່ບໍ່ໄດ້ສັງກັດເປັນສະມາຊິກຂອງສະຫະປະຊາຊາດມີຈຸດປະສົງທີ່ຈະນຳສະເໜີກ່ຽວກັບກໍລະນີຂໍ້ຜິດພາດທີ່ມີຜົນກະທົບຕໍ່ສັງຄົມໂລກຕໍ່ຄະນະມົນຕີຄວາມໝັ້ນຄົງ ສາມາດກະທຳໄດ້.

ຄະນະມົນຕີຄວາມໝັ້ນຄົງປະກອບມີສະມາຊິກຢູ່ 2 ປະເພດຄື: ສະມາຊິກຖາວອນ ແລະ ສະມາຊິກ ບໍ່ຖາວອນ ສະມາຊິກຖາວອນ ປະກອບມີ 5 ປະເທດໄດ້ແກ່: ສະຫະລັດອາເມຣິກາ, ຝຣັ່ງ, ອັງກິດ, ຈີນ ແລະ ຣັດເຊຍ, ສ່ວນສະມາຊິກບໍ່ຖາວອນປະກອບມີ 10 ປະເທດທີ່ຄັດເລືອກມາຈາກປະເທດສະມາຊິກ ສ.ປ.ຊ ໂດຍມີວາລະໃນການດຳລົງຕຳແໜ່ງບໍ່ເກີນ 2 ປີ .

**3) ຄະນະມົນຕີເສດຖະກິດ ແລະ ສັງຄົມ**

ຄະນະມົນຕີເສດຖະກິດ ແລະ ສັງຄົມ (Economic and Social Council ເປັນອົງກອນຫຼັກ ທີ່ແກ້ບັນຫາ ແລະ ຮັບຜິດຊອບທາງດ້ານເສດຖະກິດ, ສັງຄົມ, ວັດທະນະທຳ ແລະ ສິດທິມະນຸດຕະຫຼອດຮອດວຽກງານພັດທະນາໃນດ້ານຕ່າງໆທີ່ສະມັດຊາໃຫຍ່ມອບໝາຍໃຫ້.

**4) ຄະນະມົນຕີພິທັກ**

ຄະນະມົນຕີພິທັກ (TrusteeshippCouncil) ເປັນອົງກອນທີ່ເຮັດໜ້າທີ່ທາງດ້ານການປົກຄອງ. ເບິ່ງແຍງດິນແດນໃນການພິທັກ ກໍຄືປະເທດທີ່ຍັງບໍ່ທັນໄດ້ຮັບເອກະລາດທີ່ສົມບູນ. ດັ່ງນັ້ນ ອົງການສະຫະປະຊາຊາດຈຳເປັນຕ້ອງໃຫ້ຄວາມຄຸ້ມຄອງດູແລ. ສະມາຊິກຂອງອົງກອນນີ້ປະກອບດ້ວຍປະເທດທີ່ເຮັດໜ້າທີ່ໃນການຄຸ້ມຄອງບວກ

ກັບປະເທດທີ່ເປັນສະມາຊິກຖາວອນຂອງຄະນະມົນຕີຄວາມຫມັ້ນຄົງ ແລະ ປະເທດອື່ນໆອີກເທົ່າທີ່ຈຳເປັນ ເພື່ອໃຫ້ມີຈຳນວນເທົ່າກັນລະຫວ່າງປະເທດທີ່ປົກຄອງ ແລະ ບໍ່ປົກຄອງ.

**5) ສານຍຸດຕິທຳລະຫວ່າງປະເທດ**

ສານຍຸຕິທຳລະຫວ່າງປະເທດ International Court of Justice ເປັນອົງກອນຫນຶ່ງທີ່ເຮັດ ຫນ້າທີ່ທາງດ້ານຕຸລາການຂອງສະຫະປະຊາຊາດເຊິ່ງເອີ້ນວ່າ ສານໂລກ". ສະມາຊິກຂອງສານໂລກ ປະກອບດ້ວຍຜູ້ພິພາກສາຈຳນວນ 15 ທ່ານ ໂດຍແມ່ນສະມັດຊາໃຫຍ່ ແລະ ຄະນະມົນຕີຄວາມຫມັ້ນຄົງ ເປັນຜູ້ຄັດເລືອກມາ. ສຳນັກງານໃຫຍ່ຕັ້ງຢູ່ເມືອງ ເຮກ ປະເທດໂຮນລັງ.



ສານຍຸດຕິທຳລະຫວ່າງປະເທດຕັ້ງຢູ່ກຸງເຮັກ ປະເທດເນເທີແລນ

**6) ສຳນັກເລຂາທິການ**

ສຳນັກເລຂາທິການ (Secretariat ເປັນອົງກອນຫຼັກທີ່ມີພະນັກງານເຮັດຫນ້າທີ່ປະຈຳ, ມີເລຂາທິການເປັນຫົວຫນ້າຕັ້ງຢູ່ໃນສຳນັກງານໃຫຍ່ສະຫະປະຊາຊາດ



**7) ເລຂາທິການ**

ຜູ້ທີ່ເຂົ້າດໍາລົງຕໍາແໜ່ງນີ້ຖືກແຕ່ງຕັ້ງມາຈາກສະມັດຊາໂດຍຜ່ານການສະເໜີຂອງຄະນະມົນຕີຄວາມໝັ້ນຄົງ, ເລຂາທິການສະຫະປະຊາຊາດຈະດໍາລົງຕໍາແໜ່ງຄັ້ງລະ 5 ປີ. ນັບແຕ່ມື້ສ້າງຕັ້ງມາຮອດປີ ຄ.ສ 2009 ອົງການສະຫະປະຊາຊາດມີ ເລຂາທິການ 9 ທ່ານ ແລະ ເລຂາທິການ ສ.ປ.ຊ ຄົນປັດຈຸບັນ (2020) ມີຊື່ວ່າ ທ່ານ ອັງຕໍນີຢູ ກູແຕຣິສ

| ລ/ດ | ຊື່ນາມສະກຸນ | ປະເທດ | ຮັບຕໍາແໜ່ງ | ພົ້ນຕໍາແໜ່ງ |
|---|---|---|---|---|
| 1 | ທຣີກເວີລີ | ນໍເວ | 2.2.1946 | 10.11. 1952 |
| 2 | ດາກຮໍາມາເຮີລ | ສະວີເດັນ | 10.4.1953 | 18.9.1961 |
| 3 | ອູ້ຕັນ | ມຽນມ້າ | 30.11.1961 | 31.12.1971 |
| 4 | ຄວນວັນໄຮ | ໂອຕຣິດ | 1.1.1972 | 31.12.1981 |
| 5 | ຍາບີເອ ເປເຣສ ເດກູເອຍາ | ເປຣູ | 1. 1.1982 | 31. 12.1991 |
| 6 | ບູກູຣຸດ ບູກູຣຸດ ຍໍລີ | ເອຢິບ | 1.1.1992 | 3.12.1996 |

| | | | | |
|---|---|---|---|---|
| 7 | ໂຄຟີອານັນ | ການາ | 1.1.1997 | 31.12.2006 |
| 8 | ບັນຄີມູນ | ເກົາຫຼີໃຕ້ | 1.1.2007 | 31.12. 2016 |
| 9 | ອອງຕໍນີຢູ ກູແຕຣິສ | ປັອກຕຸຍການ | 1.1. 2017 | ປັດຈຸບັນ |



ອັງຕໍນີຢູ ກູແຕຣິສ

**2.4 ບົດບາດຫນ້າທີ່**

ອົງການສະຫະປະຊາຊາດມີບົດບາດຫນ້າທີ່ສຳຄັນໃນດ້ານຕ່າງໆດັ່ງນີ້ :

**1) ບົດບາດໃນການຮັກສາສັນຕິພາບ**

ຫນ້າທີ່ສຳຄັນໃນການຮັກສາສັນຕິພາບຂອງອົງການສະຫະປະຊາຊາດໄດ້ແກ່: ການລະງັບກໍລະນີພິດ ພາດລະຫວ່າງປະເທດ, ການກຳຈັດຄວາມຂັດແຍ່ງທັງທາງກົງ ແລະ ທາງອ້ອມ ດ້ວຍວິທີແບບສັນຕິ ເຊັ່ນ: ການເຈລະຈາທາງການທູດ, ການໄກ່ເກ່ຍ ແລະ ປະນີປະນອມ, ການຕັດສິນຂອງສານ ແລະ ການຮ້ອງຂໍການສອບສວນຂໍ້ມູນຄວາມຈິງ.

**2) ບົດບາດໃນການສົ່ງເສີມ ຄວາມຮ່ວມມືລະຫວ່າງປະເທດໃນການພັດທະນາເສດຖະກິດ- ສັງຄົມ**

ຫນ່ວຍງານທີ່ເຮັດຫນ້າທີ່ນີ້ ໂດຍກົງແມ່ນຄະນະມົນຕີເສດຖະກິດ ແລະ ສັງຄົມ ເຮັດຫນ້າທີ່ໃນການເຜີຍແຜ່ຂ່າວສານກ່ຽວກັບສະພາບເສດຖະກິດ, ຈັດກອງປະຊຸມປຶກສາຫາລື ເພື່ອສົ່ງເສີມການຄ້າ ແລະ ດໍາເນີນໂຄງການຕ່າງໆ

**3) ບົດບາດການສົ່ງເສີມສິດທິມະນຸດ**

ການສົ່ງເສີມສິດທິມະນຸດເປັນວຽກງານຫນຶ່ງທີ່ສະຫະປະຊາຊາຕໃຫ້ຄວາມສໍາຄັນ ໂດຍສະເພາະ ນັບແຕ່ວັນທີ່ 10 ທັນວາ ປີ ຄ.ສ 1948 ກອງປະຊຸມສະມັດຊາໃຫຍ ໄດ້ລົງມະຕິຮັບຮອງເອົາຄໍາປະກາດວ່າດ້ວຍສິດທິມະນຸດ ເຊິ່ງຕໍ່ມາເອີ້ນວ່າ ປະຕິຍານສາກົນ".ຕໍ່ມາອົງການສະຫະປະຊາຊາດໄດ້ກໍານົດເອົາວັນທີ່ 10 ທັນວາ ເປັນວັນສິດທິມະນຸດໂລກ.

**2.5 ສະມາຊິກ**

ປະເພດຂອງສະມາຊິກ ແລະ ເງື່ອນໄຂຂອງການເຂົ້າເປັນສະມາຊິກສະຫະປະຊາຊາດປະກອບ ມີດັ່ງນີ້:

**1) ປະເພດສະມາຊິກ**

ປະເພດຂອງສະມາຊິກອົງການສະພາະປະຊາຊາຕ ປະກອບມີ 2 ປະເພດຄື:

- ❖ ສະມາຊິກດັ້ງເດີມ ຫມາຍເຖິງບັນດາລັດທີ່ໄດ້ເຂົ້າຮ່ວມກອງປະຊຸມສະຫະປະຊາຊາດວ່າດ້ວຍອົງການລະຫວ່າງປະເທດທີ່ເມືອງຊານຟຣານຊິດສະໂກ ສະຫະລັດອາເມຣິກາ ເພື່ອຮ່ວມກັນລົງນາມໃນກົດບັດສະຫະປະຊາຊາດ ເມື່ອວັນທີ່ 25 ມິຖຸນາ ປີ ຄ.ສ 1945, ໂດຍມີຕາງຫນ້າລັດຕ່າງໆເຂົ້າຮ່ວມ 50 ປະເທດ. (ກົຕບັຕມີຜົນບັງຄັບໃຊ້ໃນວັນທີ 24 ຕຸລາ ປີ ຄ.ສ 1945) ແລະ ປະກາດໃຊ້ເປັນທາງການໃນວັນທີ 24 ຕຸລາ ປີ ຄ.ສ 1945 , ດັ່ງນັ້ນ, ວັນທີ 24 ຕຸລາ ຈຶ່ງຖືວ່າເປັນວັນແຫ່ງ ສ.ປ.ຊ.
- ❖ ສມາຊິກໃຫມ່ ຫມາຍເຖິງສະມາຊິກທີ່ມາຈາກປະເທດຕ່າງໆທີ່ມີຄຸນສົມບັດຕາມທີ່ກໍານົດໄວ້ໃນກົດບັດສະຫະປະຊາຊາດ ແລະ ສະຫມັກເຂົ້າເປັນສະມາຊິກາພາຍຫຼັງ.

**2) ເງື່ອນໄຂເຂົ້າເປັນສະມາຊິກສະຫະປະຊາຊາດ**

ເງື່ອນໄຂທີ່ຈະເຂົ້າເປັນສະມາຊິກຂອງສະຫະປະຊາຊາດ ຕ້ອງເປັນປະເທດທີ່ຮັກສັນຕິພາບ ແລະ ຍອມປະຕິບັດຕາມຂໍ້ຕົກລົງທີ່ສະຫະປະຊາຊາຕກໍານົດໄວ້, ຕ້ອງເປັນປະເທດທີ່ຍອມຮັບຟັງຄວາມຄິດເຫັນ ແລະ ຄໍາຕັດສິນຕ່າງໆຂອງສະຫະປະຊາຊາດໃນກໍລະນີເກີດຂໍ້ພິພາດ ຫຼື ມີການຂັດແຍ່ງກັນ, ຕ້ອງໄດ້ຮັບຄະແນນສຽງຈໍານວນ 2 ໃນ 3 ຂອງສະມັດຊາໃຫຍ່ໂດຍແມ່ນຄະນະມົນຕີຄວາມຫມັ້ນຄົງປະກາດຮັ ເປັນສະມາຊິກໃຫມ່.

## 3. ສົງຄາມເຢັນ

### 3.1 ລັກສະນະຂອງສົງຄາມເຢັນ

ຄຳວ່າ ສົງຄາມເຢັນ (Cold War) ໄດ້ນຳມາໃຊ້ເປັນຄັ້ງທຳອິດໃນ ປີ ຄສ 1947 ໂດຍທ່ານ ເບີນາດ ບາຣຸດ ( Bernard Baruch) ທີ່ປຶກສາຂອງປະທານາທິບໍດີ ແຮຣີ ທຣູແມນ (Harry S.Truman) ແຫ່ງ ສະຫະລັດອາເມຣິກາ.

ລັກສະນະຂອງສົງຄາມເຢັນເປັນສະພາບທີ່ເກີດຂຶ້ນໃນຊ່ວງຫຼັງສົງຄາມໂລກຄັ້ງທີ II ທີ່ບໍ່ມີທັງສົງຄາມ ແລະ ບໍ່ມີທັງສັນຕິພາບ, ເປັນການຊ່ວງຊີງ ແລະ ແຂ່ງຂັນກັນຂອງສອງອະພິມະຫາອຳນາດ ລະຫວ່າງສະຫະລັດອາເມຣິກາກັບສະຫະພາບໂຊວຽດ ພ້ອມດ້ວຍປະເທດທີ່ເປັນສະມາຊິກຂອງທັງສອງຝ່າຍ, ສົງຄາມເຢັນເປັນສະພາບທີ່ຄູ່ກໍລະນີ້ເຖິງວ່າຈະບໍ່ໃຊ້ວິທີການເຮັດສົງຄາມໃນການແກ້ໄຂບັນຫາ ແຕ່ຕ່າງຝ່າຍຕ່າງກໍພະຍາຍາມເອົາຊະນະກັນໃນທຸກວິທີທາງໃນດ້ານການເມືອງ, ເສດຖະກິດ- ສັງຄົມ ວັດທະນະທຳ ແລະ ການ ໂຄສະນາຊວນເຊື່ອເທົ່າທີ່ຈະເຮັດໄດ້ໂດຍບໍ່ຄຳນຶງເຖິງຄວາມປອງດອງກັນ.

### 3.2. ທີ່ມາຂອງສົງຄາມເຢັນ

ສົງຄາມເຢັນເກີດຂຶ້ນມາຈາກຄວາມບໍ່ໄວ້ວາງໃຈເຊິ່ງກັນ ແລະ ກັນ ຂອງປະເທດມະຫາອຳນາດ ລະຫວ່າງສະຫະລັດອາເມຣິກາກັບສະຫະພາບໂຊວຽດ, ຄວາມບໍ່ໄວ້ວາງໃຈນີ້ ເກີດມາຈາກຄວາມແຕກຕ່າງທາງດ້ານອຸດົມການດ້ານການເມືອງ ແລະ ລະບອບການປົກຄອງໃນການເບິ່ງບັນຫາ ທີ່ແຕກຕ່າງກັນເຊັ່ນ: ສະຫະລັດອາເມຣິກາເບິ່ງການພົວພັນຕ່າງປະເທດຂອງສະຫະພາບໂຊວຽດກັບ ບັນດາປະເທດຕ່າງໆໃນໂລກວ່າ ເປັນການເຜີຍແຜ່ ແລະ ຂະຫຍາຍລັດທິກອມມູນິດ, ນອກຈາກນີ້, ຍັງເຊື່ອວ່າຂະບວນການຕໍ່ສູ້ຂອງຊາວກຳມາຊີບໃນບັນດາປະເທດຕ່າງໆນັ້ນມີສາຍກ່ຽວພັນໂດຍກົງ ກັບການດຳເນີນນະໂຍບາຍຕ່າງປະເທດຂອງສະຫະພາບໂຊວຽດ ແລະ ຍັງກ່າວຫາວ່າສະບາະພາບໂຊວຽດ ເປັນຜູ້ໃຫ້ການສະໜັບສະໜູນ.

ທີ່ມາຂອງສົງຄາມເຢັນ ແມ່ນມາຈາກສະພາບຄວາມເຄັ່ງຕຶງໃນຄວາມສຳພັນລະຫວ່າງປະເທດຂອງກຸ່ມໂລກເສລີທີ່ມີສະຫະລັດອາເມຣິກາເປັນຜູ້ນຳ ແລະ ກຸ່ມປະເທດສັງຄົມນິຍົມທີ່ມີສະພາະພາບໂຊວຽດເປັນຜູ້ນຳ, ມະຫາອຳນາດທັງສອງຕ່າງກໍແຂ່ງຂັນກັນ ເພື່ອຄວາມເປັນໃຫຍ່ໃນໂລກ, ຕ່າງຝ່າຍຕ່າງພະຍາຍາມຕໍ່ສູ້ ເພື່ອຂັດຂວາງບໍ່ໃຫ້ຝ່າຍໃດຝ່າຍໜຶ່ງມີອຳນາດ ແລະ ອິດທິພົນເໜືອກວ່າກັນ ດ້ວຍການໃຊ້ວິທີການຕ່າງໆທີ່ບໍ່ແມ່ນອາວຸດເປັນພາຫານະສົງຄາມ.

### 3.3.ວິທີການຕ່າງໆໃນສົງຄາມເຢັນ

ວິທີການຕ່າງໆ ທີ່ມະຫາອຳນາດນຳເຂົ້າມາໃຊ້ເພື່ອເປັນເຄື່ອງມືໃນການເຮັດສົງຄາມເຢັນຄື: ວິທີການທາງຄວາມຄິດ ຫຼື ອຸດົມການ, ວິທີການທາງການເມືອງດ້ວຍການເຂົ້າແຊກແຊງທາງດ້ານການທູດ, ວິທີການທາງການທະຫານຄື ການສະສົມກຳລັງອາວຸດ, ວິທີການທາງເສດຖະກິດ, ວິທີການທາງວິທະຍາການ ແລະ ເຕັກໂນໂລຊີ, ຕະຫຼອດຮອດການສະແຫວງຫາພັນທະມິດ ເຊິ່ງຕ່າງຝ່າຍຕ່າງກພະຍາຍາມເຂົ້າໄປມີອິດທິພົນໃນດ້ານໃດດ້ານໜຶ່ງໃນດິນແດນປະເທດຕ່າງໆເພື່ອສ້າງຖານອຳນາດຈົນເຮັດ ຫ້ລັດຖະບານປະເທດນັ້ນໆ ຈຳຕ້ອງເຊື່ອຟັງ ແລະ ປະຕິບັດຕາມນະໂຍບາຍຂອງປະເທດມະຫາອຳນາດທີ່ໃຫ້ການຊ່ວຍເຫຼືອ

### 3.4 ການສິ້ນສຸດຂອງສົງຄາມເຢັນ

ກ້າວເຂົ້າຊຸມປີ 1960 ການປະຈັນໜ້າກັນລະຫວ່າງປະເທດມະຫາອຳນາດຄ້າຍສັງຄົມນິຍົມກັບ ຄ້າຍເສລີນິຍົມໄດ້ຫຼຸດຜ່ອນຄວາມຮຸນແຮງລົງເປັນຄັ້ງທຳອິດ. ເຫດຜົນມາຈາກມະຫາອຳນາດທັງສອງ ຝ່າຍຕ່າງກໍຄິດເຖິງຄວາມອັນຕະລາຍອັນອາດຈະເກີດຂຶ້ນມາຈາກການແຂ່ງຂັນກັນສ້າງ ແລະ ສະສົມອາວຸດນິວເຄຼຍ, ຫາກເກີດສົງຄາມນິວເຄຍຂຶ້ນ ກໍຍອມເປັນການທຳລາຍລ້າງໂລກ ແລະ ເປັນຄວາມພິນາດຂອງທັງສອງຝ່າຍ, ດັ່ງນັ້ນ, ມະຫາອຳນາດທັງສອງຝ່າຍຈຶ່ງປະກາດນະໂຍບາຍຢູ່ຮ່ວມກັນ ແລະ ແຂ່ງຂັນກັນໂດຍສັນຕິ".

ເຫດການສຳຄັນອີກຢ່າງໜຶ່ງ ທີ່ເປັນຕົວປະກອບໃນການຜ່ອນຄາຍຂອງສົງຄາມເຢັນແມ່ນການ ປ່ຽນແປງທີ່ໃຫຍ່ຫຼວງໃນລະບົບຄ້າຍສັງຄົມນິຍົມລະຫວ່າງຊຸມປີທີ 80 ຂອງສະຕະວັດທີ XX ນັ້ນແມ່ນການລົ້ມລະລາຍຂອງສະຫະພາບໂຊວຽດ ແລະ ບັນດາປະເທດສັງຄົມນິຍົມເອີຣົບຕາເວັນອອກ. ປະກອບກັບການຂັດແຍ່ງກັນພາຍໃນຂອງກຸ່ມໂລກເສລີ ໂດຍສະເພາະການຝຣັ່ງຖອນຕົວອອກຈາກກອງກຳລັງທະຫານນາໂຕໃນປີ ຄ.ສ 1966 ແລະ ສະແຫວງຫາຄວາມສຳພັນກັບສະຫະພາບໂຊວຽດ, ເຫດການດັ່ງກ່າວ ໄດ້ເປັນຂີດໝາຍແຫ່ງການປ່ຽນແປງ, ການຊັ່ງຊາກຳລັງທີ່ກ້ຳເກິ່ງກັນລະຫວ່າງສອງລະບົບການເມືອງ, ໄພຂົ່ມຂູ່ຂອງສົງຄາມຂະໜາດໃຫຍ່ໄດ້ຖືກຫຼຸດຜ່ອນລົງ ແລະ ໄດ້ຮັບການແກ້ໄຂເປັນລຳດັບ. ທ່າອ່ຽງການພົບປະເຈລະຈາ ເພື່ອຢູ່ຮ່ວມກັນ ໂດຍສັນຕິ ແລະ ການຮ່ວມມືກັນລະຫວ່າງນາໆຊາດໃນໂລກນັບມື້ນັບຂະຫຍາຍຕົວ.

## 4. ການພັດທະນາປະເທດຫຼັງສົງຄາມໂລກຄັ້ງທີ II

ນັບຕັ້ງແຕ່ຫຼັງສົງຄາມໂລກຄັ້ງທີ II ເປັນຕົ້ນມາ ກໍຄືໃນຊ່ວງສົງຄາມເຢັນ ອາດແບ່ງແນວທາງການພັດທະນາຂອງປະເທດຕ່າງໆໃນສັງຄົມ ໂລກາອອກເປັນ 3 ແບບຄື:

**41 ແບບທີໜຶ່ງ**

ການພັດທະນາປະເທດຕາມແບບທີ່ຫນຶ່ງ ເປັນກຸ່ມປະເທດທຶນນິຍົມເສລີ ເຊິ່ງປະກອບມີສະຫະລັດອາເມຣິກາ ແລະ ກຸ່ມປະເທດເອີຣົບຕາເວັນຕົກ ບັນດາປະເທດເຫຼົ່ານີ້ ໃນທາງເສຖະກິດແບ່ງອອກເປັນ 2 ລະບົບໄດ້ແກ່:

1) **ລະບົບເສດຖະກິດເອກະຊົນ**

ລະບົບເສດຖະກິດເອກະຊົນ ( Private Enterprise Ecotomy) ເປັນລະບົບເສດຖະກິດທີ່ລັດຖະບານປ່ອຍໃຫ້ເອກະຊົນມີອິດສະຫຼະໃນການເປັນເຈົ້າຂອງ ແລະ ດຳເນີນການຜະລິດ, ການບໍລິໂພກຕາມ ນະໂຍບາຍເສດຖະກິດທຶນນິຍົມແບບເສລີນິຍົມເຊັ່ນ: ສະຫະລັດອາເມຣິກາ ແລະ ຍີ່ປຸ່ນ ເປັນຕົ້ນ. ແຕ່ເຖິງ ຢ່າງໃດກໍຕາມ, ເຖິງແມ່ນວ່າລັດຖະບານຈະໃຫ້ເອກະຊົນມີອິດສະຫຼະທາງເສດຖະກິດ ແຕ່ລັດຖະບານຍັງເຂົ້າໄປກ່ຽວຂ້ອງ ແລະ ມີບົດບາດໃນການແກ້ໄຂບັນຫາທາງເສດຖະກິດເມື່ອເກີດວິກິດການເສດຖະກິດຢ່າງຮຸນແຮງ ໂດຍບໍ່ປ່ອຍໃຫ້ເສດຖະກິດເປັນໄປຕາມກົນໄກແຫ່ງລາຄາຂອງທ້ອງຕະຫຼາດຢ່າງເຄີຍເປັນມາຄືແຕ່ກ່ອນ.

**2) ລະບົບເສດຖະກິດແບບລັດສະຫວັດດີການ**

ລະບົບເສດຖະກິດແບບລັດສະຫວັດດີການ (Welfare State} ເປັນລະບົບເສດຖະກິດແບບທຶນນິຍົມ ທີ່ລັດເຂົ້າໄປມີສ່ວນກ່ຽວຂ້ອງກັບກິດຈະການຕ່າງໆ ຂອງເອກະຊົນຫຼາຍຂຶ້ນ, ເຫດຜົນທີ່ລັດເຂົ້າໄປຄວບຄຸມ ເພື່ອບໍ່ໃຫ້ເກີດຄວາມເອົາລັດເອົາປຽບກັນທາງດ້ານເສດຖະກິດເກີນໄປ. ດ້ວຍເຫດນັ້ນ, ລັດຄວນເປັນຜູ້ດຳເນີນການໃນກິດຈະການສາທາລະນຸປະໂພກເຊັ່ນ: ໄຟຟ້າ, ນໍ້າປະປາ, ການຂົນສົ່ງ ແລະ ອຸດສາຫະກຳ ໃຫຍ່ໆ ລວມໄປເຖິງການອອກກົດຫມາຍຄວບຄຸມການຈ້າງແຮງງານ ແລະ ການຈັດເກັບພາສີຢ່າງເປັນທຳ. ປະເທດທຶນນິຍົມ ໃນຄ້າຍເສລີປະຊາທິປະໄຕທີ່ຫນ້າເດີ່ນນະໂຍບາຍການພັດທະນາປະເທດຕາມຮູບແບບນີ້ ເຊັ່ນ: ອັງກິດ, ຝຣັ່ງ ແລະ ບັນດາປະເທດເອີຣົບໃນເຂດສະກັງດິນາວີ.

**4.2 ແບບທີສອງ**

ການພັດທະນາປະເທດຕາມແບບທີສອງ ເປັນກຸ່ມປະເທດທີ່ເຄີຍສັງກັດຢູ່ໃນກຸ່ມລະບົບສັງຄົມນິຍົມ ເຊິ່ງປະກອບມີ: ຣັດເຊຍ, ຈີນ, ຫວຽດນາມ ແລະ ອື່ນໆເຫຼົ່ານີ້ເປັນຕົ້ນ. ປະເທດເຫຼົ່ານີ້ຈະເຫັນຄວາມສຳຄັນ ຂອງຄວາມສະເຫມີພາບຂອງບຸກຄົນຫຼາຍກວ່າ. ໂດຍສະເພາະທາງເສດຖະກິດແລ້ວຈະເປັນເຈົ້າຂອງປັດໄຈ ໃນການຜະລິດ ແລະ ເປັນຜູ້ກຳນົດການແຈກຈາຍການຜະລິດ ຜ່ານລະບົບການວາງແຜນເສດຖະກິດ ຢ່າງຄັກແນ່, ບັນດາປະເທດເຫຼົ່ານີ້ຈະມີການວາງແຜນຮ່ວມກັນ ເພື່ອຊ່ວຍເຫຼືອກັນໃນການພັດທະນາ ເສດຖະກິດ.

### 4.3 ແບບທີສາມ

ການພັດທະນາປະເທດຕາມແບບທີສາມ ເປັນກຸ່ມປະເທດທີ່ມີເສດຖະກິດບໍ່ທັນຂະຫຍາຍຕົວ ຫຼື ເວົ້າວ່າ: ເປັນກຸ່ມປະເທດກຳລັງພັດທະນາ ແລະ ດ້ອຍພັດທະນາ. ໂດຍສ່ວນຫຼາຍແລ້ວປະເທດດັ່ງກ່າວ ເຄີຍເປັນອານານິຄົມຂອງປະເທດໃຫຍ່ໆມາກ່ອນ, ດັ່ງນັ້ນ, ເມື່ອໄດ້ຮັບເອກະລາດແລ້ວຍັງຕ້ອງເພິ່ງພາການເງິນ, ການລົງທຶນ ແລະ ເຕັກໂນໂລຊີຈາກປະເທດທີ່ພັດທະນາແລ້ວ. ຕົວຢ່າງ: ປະເທດຟີລິບປິນ, ອິນໂດເນເຊຍ, ປະເທດຕ່າງໆໃນອາຟຣິກາໃຕ້ ແລະ ອາເມຣິກາລາຕິນ, ປະເທດເຫຼົ່ານີ້, ເບິ່ງຄ້າຍຄືວ່າ ມີອິດສະຫຼະພາບໃນການດຳເນີນນະໂຍບາຍດ້ວຍຕົນເອງແຕ່ໃນສ່ວນລາຍລະອຽດແລ້ວ ຍັງຂຶ້ນກັບປະເທດນາຍທຶນໃຫຍ່ໆ ເຊິ່ງຕົນເອງໄດ້ເຂົ້າໄປພົວພັນທັງໃນແງ່ຂອງການເງິນ ແລະ ເຕັກໂນ ໂລຊີ. ຫາກເມື່ອໃດ ສະກຸນເງິນໂດລາ, ປອນ ແລະ ເຢັນ ຕົກຕ່ຳ ເງິນຕາຂອງປະເທດນັ້ນກໍຕົກຕ່ຳຕາມກັນລົງໄປອີກດ້ວຍ.

ຄວາມສຳພັນຂອງປະເທດດ້ອຍພັດທະນາ ຫຼື ໂລກທີສາມໃນທາງເສດຖະກິດນັ້ນ ມີລັກສະນະການເພິ່ງພາກັບປະເທດທີ່ໃຫ້ການຊ່ວຍເຫຼືອໃນສອງລັກສະນະຄື: ສ່ວນຫນຶ່ງກໍມີແຜນພັດທະນາປະເທດໄປຕາມເສດຖະກິດລະບົບເສລີ, ອີກສ່ວນຫນຶ່ງກໍບໍລິໂພກ ແລະ ພັດທະນາປະເທດໄປຕາມແບບສັງຄົມນິຍົມໃນລັກສະນະປະສົມປະສານກັນ.

ສຳລັບແນວທາງການພັດທະນາປະເທດ ເພື່ອຫຼີກລ້ຽງຈາກການຢູ່ໂດດດ່ຽວຂອງກຸ່ມປະເທດ ໂລກທີ່ສາມອັນທີ່ຈະສ້າງຄວາມສະດວກໃຫ້ແກ່ການແຊກແຊງຂອງປະເທດມະຫາອຳນາດ, ບັນດາປະເທດໂລກທີສາມໄດ້ຈັດຕັ້ງການຮ່ວມກຸ່ມກັນຂຶ້ນ ເພື່ອໃຫ້ເກີດພະລັງ ໃນການຕໍ່ລອງໃຫ້ມະຫາອຳນາດ ຍອມຮັບຮູ້ຖານະບົດບາດໃນເວທີເສດຖະກິດການເມືອງໂລກເຊັ່ນ: ການຮ່ວມກຸ່ມທາງການເມືອງທີ່ເອີ້ນວ່າຂະບວນການບໍ່ຮ່ວມກຸ່ມ ສ້າງຕັ້ງຂຶ້ນ ທີ່ເມືອງບັນດຸງປະເທດອິນໂດເນເຊຍ ໃນເດືອນ ເມສາ ປີ ຄ.ສ 1955. ສ່ວນໃນອາຊີຕາເວັນອອກສ່ຽງໃຕ້ກໍເອີ້ນວ່າ ສະມາຄົມບັນດາປະຊາຊາດອາຊີຕາເວັນອອກສຽງໃຕ້" ຫຼື ເອີ້ນຫຍໍ້ວ່າ" ກຸ່ມອາຊຽນ" (Association of South East Asian Nations – ASEAN) ທີ່ສ້າງຕັ້ງຂຶ້ນ ໃນວັນທີ່ 8 ສິງຫາ ປີ ຄ.ສ 1967 ມີ 5 ປະເທດເຂົ້າຮ່ວມ ຈັດຕັ້ງຂຶ້ນໄດ້ແກ່ ໄທ, ອິນໂດເນເຊຍ, ສິງກະໂປ, ມາເລເຊຍ ແລະ ຟີລິບປິນ ປັດຈຸບັນໄດ້ມີອີກ 5 ປະເທດເຂົ້າຮ່ວມເປັນ 11 ປະເທດຄື: ລາວ, ຫວຽດນາມ, ກຳປູເຈຍ, ມຽນມາ, ບຣູໄນ. ລາວເຮົາໄດ້ເຂົ້າເປັນສະມາຊິກ ໃນວັນທີ 23 ກໍລະກົດ ປີ ຄ.ສ 1997.

# ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, 2010, ແບບຮຽນປະຫວັດສາດຊັ້ນມັດທະຍົມສຶກສາປີທີ 1

ກະຊວງສຶກສາທິການ ແລະ ກິລາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, 2011, ແບບຮຽນປະຫວັດສາດຊັ້ນມັດທະຍົມສຶກສາປີທີ 2

ກະຊວງສຶກສາທິການ ແລະ ກິລາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, 2012, ແບບຮຽນປະຫວັດສາດຊັ້ນມັດທະຍົມສຶກສາປີທີ 3

ກະຊວງສຶກສາທິການ ແລະ ກິລາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, 2013, ແບບຮຽນປະຫວັດສາດຊັ້ນມັດທະຍົມສຶກສາປີທີ 4

ກະຊວງສຶກສາທິການ ແລະ ກິລາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, 2014, ແບບຮຽນປະຫວັດສາດຊັ້ນມັດທະຍົມສຶກສາປີທີ 5

ກະຊວງສຶກສາທິການ ແລະ ກິລາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, 2015, ແບບຮຽນປະຫວັດສາດຊັ້ນມັດທະຍົມສຶກສາປີທີ 6

ກະຊວງສຶກສາທິການ ແລະ ກິລາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, 2016, ແບບຮຽນປະຫວັດສາດຊັ້ນມັດທະຍົມສຶກສາປີທີ 7

ກະຊວງສຶກສາທິການ, 2008, ແບບຮຽນປະຫວັດສາດ1 ສໍາລັບນັກສຶກສາຄູລະບົບ 2 ປີ ແລະ ລະບົບ 3 ປີ (ຊັ້ນກາງ ແລະ ອະນຸປະລິນຍາ)

ກະຊວງສຶກສາທິການ, 2008, ແບບຮຽນປະຫວັດສາດ2 ສໍາລັບນັກສຶກສາຄູລະບົບ 2 ປີ ແລະ ລະບົບ 3 ປີ (ຊັ້ນກາງ ແລະ ອະນຸປະລິນຍາ)

ກະຊວງສຶກສາທິການ, 2008, ແບບຮຽນປະຫວັດສາດ3 ສໍາລັບນັກສຶກສາຄູລະບົບ 2 ປີ ແລະ ລະບົບ 3 ປີ (ຊັ້ນກາງ ແລະ ອະນຸປະລິນຍາ)

ກະຊວງສຶກສາທິການ, 2008, ແບບຮຽນປະຫວັດສາດ4 ສໍາລັບນັກສຶກສາຄູລະບົບ 2 ປີ ແລະ ລະບົບ 3 ປີ (ຊັ້ນກາງ ແລະ ອະນຸປະລິນຍາ)

ກະຊວງສຶກສາທິການ, 1998, ແບບຮຽນວິຊາປະຫວັດສາດໂລກສະໄໝບູຮານ-ສະໄໝກາງ

ກະຊວງສຶກສາທິການ, 1998, ແບບຮຽນວິຊາປະຫວັດສາດໂລກສະໄໝໃໝ່

ກະຊວງສຶກສາທິການ, 1998, ແບບຮຽນວິຊາປະຫວັດສາດໂລກສະໄໝປັດຈຸບັນ

ອິນປອນ, ເພັງສຸວັນ, ວຄ ສາລະວັນ, ເອກະສານປະກອບການສອນວິຊາປະຫວັດສາດອິນເດຍ ສໍາລັບນັກສຶກສາຄູປະຫວັດສາດສອນໄດ້ແຕ່ ມ1- ມ7

ລັດສະໝີ ພົນທິສານ, ວຄ ສາລະວັນ, ເອກະສານປະກອບການສອນວິຊາພືວພັນສາກົນ 1 ສໍາລັບນັກສຶກສາຄູປະຫວັດສາດສອນໄດ້ແຕ່ ມ1- ມ7

ລັດຕະນາ ຈັນມະນີວົງ, ວຄ ສາລະວັນ, ເອກະສານປະກອບການສອນວິຊາປະຫວັດສາດ ແຫຼ່ງອະລິຍະທໍາ ສໍາລັບນັກສຶກສາຄູປະຫວັດສາດສອນໄດ້ແຕ່ ມ1- ມ7